# ໜໍຊັນນະສູດສິບ

# ໝໍຊັນນະສູດສົບ

## ຄໍລິນ ຄັອດເທີຣິນ

ແປເປັນພາສາລາວໂດຍ

**ໄພບູນ ທະນະບົວສີ**

# THE CORONER'S LUNCH

by

**Colin Cotterill**

Lao translation by

**Phayboune Thanabouasy**

Silkworm Books

ISBN:

© 2004 Colin Cotterill
All rights reserved

No part of this publication may be reproduced, stored in a retrieval system, or transmitted, in any form or by any means, electronic, mechanical, photocopying, recording or otherwise, without the prior permission in writing of the publisher.

Lao translation copyright © 2020 Phayboune Thanabouasy
ສະຫງວນລິຂະສິດສະບັບແປເປັນພາສາລາວໂດຍ: ໄພບູນ ທະນະບົວສີ

First published in 2022 by
Silkworm Books
430/58 M. 7, T. Mae Hia, Chiang Mai 50100, Thailand
info@silkwormbooks.com
www.silkwormbooks.com

Front cover design and author's photograph by the author
Typeset in BoonHome 11 pt.
Printed and bound in xxx

For more copies or trade enquiries please email
colincot@gmail.com – the author is keen to supply bulk copies to educational institutions in Laos.

# ສາລະບານ


ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ເດືອນຕຸລາ 1976 ..... vii
ວຽງຈັນ, ສອງອາທິດຕໍ່ມາ ..... 1
ເມຍສະຫາຍຄໍາ ..... 27
ພິທີສົ່ງດວງວິນຍານຄົນຂັບເຮືອ ..... 68
ຫຣັນຜູ້ເປັນອ້າຍໃຫຍ່ ..... 78
ຄືນນັບໄກ່ ..... 87
ເລື່ອງວຸ້ນໆ ຂອງການຊັນນະສູດສົບ ..... 105
ພະຍາດນອກຮີດ ..... 111
ໄປຕຶກເບັດ ..... 116
ລອບສັງຫານ ..... 125
ຂີ່ແຢັກໄປຄໍາມ່ວນ ..... 136
ຜູ້ຊ່ວຍໝໍຜີ ..... 162
ຢ້ານຕອນຍົນແຕະພື້ນ ..... 179
ເຖິງເວລາຂ້າ ..... 183
ຮອຍຂຽວຊໍ້າເທິງຮ່າງຊ່າງເຮັດຜົມ ..... 199
ຜີສາດຜູ້ຍົ້ວຍວນແຫ່ງຄວາມຝັນ ..... 213
ຕາຍຍ້ອນສໍາພັນສະຫວາດ ..... 217
ຫ້ອງທີ່ຫາຍໄປ ..... 227
ໂຮງໝໍບໍ່ມີແພດ ..... 236
ລົມກັບຄົນຕາຍ ..... 244
ພາດໂອກາດໃນງານບຸນທາດຫຼວງ ..... 252
ອີກໜຶ່ງຄະດີ ..... 265
ຕາຍຄັ້ງທີສາມ ..... 271

ອາຫານທ່ຽງສະດຸດີທ່ານໝໍຊັນນະສູດສົບຜູ້ລອດຕາຍ ..... 275
ເມື່ອຄິດວ່າມັນຈົບແລ້ວ... ..... 285

Message from the Author: ຈັກກະວານແຫ່ງຄວາມຢາກຮູ້ຢາກເຫັນ ..... 289
ປະຫວັດຂອງ ຄໍລິນ ຄັອດເທີຣິນ ..... 293
ໜັງສືເຫລົ້ມອື່ນໆ ໂດຍ ຄໍລິນ ຄັອດເທີຣິນ ..... 295

# ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ເດືອນຕຸລາ ໑໙໗໖

ທຣັນ, ທຣັນ, ແລະຣັອກ ໄດ້ທະລຸຜ່ານກ້ອນເມກອັນໜາຄຶ້ມຂອງຊ່ວງທ້າຍລະດູຝົນ. ອາກາດອັນອົບອຸ່ນໃນຍາມຄ່ຳຄືນ ໄດ້ພຸ່ງເຂົ້າມາໃສ່ຮ່າງຄີງຂອງຊາຍທັງສາມ ເຮັດໃຫ້ພວກເຂົາຕ້ອງຄືບຄານໄປແບບອືລາກອືເລືອພ້ອມກັດແຂ້ວສູ້ຢ່າງລຳບາກຍາກຊາ ສ່ວນເສັ້ນຜົມຂອງພວກເຂົາກໍຊີ້ຂຶ້ນເປັນເກ່ເດ່. ສະພາບຂອງພວກເຂົາຍັງປົກກະຕິດີບໍ່ຕ່າງຫຍັງກັບລູກໝາກເຫັບ ທີ່ຕົກລົງມາຈາກທ້ອງຟ້າ. ແຕ່ກໍຍັງບໍ່ມີເວລາພໍສຳລັບການຈັດແຈງ ຫຼືປັດແປງໃຫ້ຕົນເອງເບິ່ງເປັນຜູ້ເປັນຄົນເລີຍ; ພວກເຂົາພຽງແຕ່ລົ້ມຕົວລົງໝູບໃສ່ແປະກັບພື້ນດິນ ແລ້ວເກືອກລີເລືອໄປຕາມແຮງໂນ້ມຖ່ວງຂອງລູກລະເບີດທີ່ປົດຊະນວນແລ້ວ ເຊິ່ງຖືກຜູກຕິດໃສ່ກັບຕົນທັງສາມດ້ວຍເຊືອກນິລົງສີບົວ.

ທຣັນ ເຊິ່ງເປັນຜູ້ທີ່ມີອາຍຸອ່າວສູງກວ່າທຸກຄົນໃນນັ້ນຕົກລົງມາກ່ອນ, ເຂົາເປັນຜູ້ທີ່ມີນ້ຳໜັກຫຼາຍກວ່າໝູ່ໃນສາມຄົນນັ້ນ. ພໍແຕ່ຮ່າງຂອງເຂົາປົວວ່ອນລົງໃສ່ໜ້າອ່າງນ້ຳງື່ມ ມັນກໍກະເດັນໄປຂ້າງໜ້າເຖິງສອງກ້າວ. ຫາກສິ່ງນີ້ເປັນການແຂ່ງຂັນກິລາໂອແລັມປິກ, ທຣັນອາດຈະເກັບຄະແນນໄດ້ຮອດ ໙.໙໕ ຄະແນນ ຫຼືສູສີກັນໜ້ອຍໜຶ່ງ. ໜ້ານ້ຳຮອດບໍ່ສະເທືອນຕິງແຕ່ຢ່າງໃດ. ທຣັນ ອີກຄົນໜຶ່ງເຊິ່ງເປັນຜູ້ອ່າວນ້ອຍກວ່າ ແລະຮອງລົງມາກໍແມ່ນ ຣັອກ ຊາຍໜຸ່ມທັງສອງຕ່າງກໍພະ ຍາຍາມລອຍຜ່ານໜ້ານ້ຳຢ່າງບໍ່ຄິດຊີວິດຕາມຫຼັງກັນໄປເປັນລຳດັບ.

ລູກລະເບີດທີ່ຖືກປົດຊະນວນອອກແລ້ວແຕ່ໜັກເຖິງ ໑/໔ ໂຕນ ໄດ້ລາກດຶງເອົາຊາຍທັງສາມຈົມດິ່ງລົງສູ່ພື້ນນ້ຳທີ່ເຕັມແຕ່ຂີ້ຕົມ ແລະຈ່ອງຕົວພວກເຂົາເອົາໄວ້ ເພື່ອບໍ່ໃຫ້ຄົນໃດຄົນໜຶ່ງມີໂອກາດຫຼຸດລອຍອອກໄປໄດ້ງ່າຍໆ. ເວລາຜ່ານໄປຮອດສອງອາທິດ, ຮ່າງຄີງອັນໄຮ້ວິນຍານຂອງ ທຣັນ, ທຣັນ, ແລະຣັອກໄດ້ສ່າຍຕົວໄປມາເປັນຈັງຫວະຊ້າໆ ຕາມແຮງດັນໃນພື້ນນ້ຳ ແລະໄດ້ສ້າງຄວາມເພີດເພີນແກ່ຝູງປາ ແລະເທົາຫຸ້ມແຫ້ນກິນເນື້ອໜັງຂອງພວກເຂົາຢ່າງອີ່ມໜຳສຳລານ.

1

# ວຽງຈັນ, ສອງອາທິດຕໍ່ມາ

ຖືໄດ້ວ່າເປັນການພົບປະກັນທີ່ເຕັມໄປດ້ວຍຄວາມຕຶງຄຽດ, ແລະມັນກໍຈະເປັນແບບນີ້ອີກຫຼາຍໆ ຄັ້ງ. ຂະນະນີ້ໃບໜ້າຂອງແຫງເຊິ່ງເຕັມໄປດ້ວຍຮອຍຂຸມສິວເປັນຈຸດເປັນຈຸດ ໃນຖານະຜູ້ພິພາກສາເຈົ້າຜະເດັດການກໍໄດ້ປາກົດຂຶ້ນມາໃຫ້ເຫັນອີກ, ໃນທຸກໆວັນສຸກທີ່ໜ້າເບື່ອນັ້ນ ສີຣິຕ້ອງໄດ້ເຂົ້າໄປຊີ້ແຈງເຫດຜົນດ້ວຍຕົນເອງ ທັງຈຳເປັນຕ້ອງໄດ້ກົ້ມຄຳນັບໃຫ້ຊາຍໜຸ່ມຜູ້ທີ່ມີອາຍຸຮຸ່ນຮາວຄາວດຽວກັບຫຼານຂອງເຂົາທຸກຄັ້ງ.

ຖ້າເວົ້າຕາມແບບສະບັບຂອງລັດທິມາກ-ເລນິນແລ້ວ, ການປະຊຸມລັກສະ ນະນີ້ຖືກເອີ້ນວ່າ "ການແບ່ງປັນຄວາມຮັບຜິດຊອບຕາມໜ້າທີ່". ແຕ່ພາຍຫຼັງທີ່ໄດ້ມາຢືນຢູ່ໜ້າໂຕະເຮັດວຽກທີ່ເຮັດດ້ວຍໄມ້ອັດອັນບິດບ້ຽວ ຂອງຜູ້ພິພາກສາແຫງເຖິງໜຶ່ງຊົ່ວໂມງແລ້ວ, ພາລະໜ້າທີ່ຂອງທ່ານໝໍສີຣິກໍກັບກາຍເປັນຄວາມໜັກໜ່ວງອັນແສນສາຫັດເພີ່ມຂຶ້ນ. ຜູ້ພິພາກສາທີ່ຫາກໍຮຽນຈົບໃໝ່ໆ ໝາດໆ ຊ້ຳພັດສະແດງຕົວເປັນຄົນເຈົ້າກີ້ເຈົ້າການແບບໂງ່ງ່າວໃນການຊອກຈັບຜິດ ແລະມຸ່ງໃສ່ແຕ່ຢາກແກ້ໄຂການສະກົດຄຳໃນບົດລາຍງານຂອງສີຣິພຽງຢ່າງດຽວ.

"ເຈົ້າຊິຊີ້ແຈງເຖິງສາເຫດທີ່ເຮັດໃຫ້ເກີດການເສຍເລືອດແນວໃດ?" ຜູ້ພິພາກສາແຫງຖາມຂຶ້ນ.

ສີຣິຄິດຫຼໍ່າໄປຫຼໍ່າມາຫຼາຍເທື່ອ ພ້ອມສົງໄສວ່າຄຳຖາມຂໍ້ນີ້ມັນເປັນພຽງກົນອຸບາຍໃດໜຶ່ງທີ່ຢາກລ້ວງເອົາຄວາມລັບທີ່ມີໃນຫົວຂອງເຂົາຫຼືແນວໃດ "ແບບວ່າ" ເຂົາຄິດທົບທວນຄຳຖາມຄືນຄາວໜຶ່ງຈິ່ງເວົ້າຕໍ່ "ຄົງຈະເປັນຍ້ອນຮ່າງກາຍບໍ່ສາມາດເກັບເລືອດໄວ້ໃນຕົວແມ່ນບໍລະ?" ຄຳຕອບຂອງເຂົາເຮັດໃຫ້ຜູ້ພິພາກສາແຫງງຶງປານໄກ່ຖືກຄ້ອນແລ້ວທຳທ່າກົ້ມໜ້າເບິ່ງບົດລາຍງານຕໍ່. ທ້າວຄົງບໍ່ສະຫຼາດພໍທີ່ຈະຮູ້ຊ້ຳວ່າມັນເປັນຄຳຕອບແບບເຊືອດໄກ່ໃຫ້ລີງເບິ່ງ. "ແນ່ນອນ, ຄວາມຈິງທີ່ຂາຂອງຊາຍຜູ້ໜ້າສົງສານຄົນນັ້ນຖືກຕັດອອກຈົນກາຍຫົວເຂົ່າ ອາດມີບາງຢ່າງເກີດຂຶ້ນຈິ່ງເປັນແນວນັ້ນ. ທັງໝົດໄດ້ບັນທຶກໄວ້ຢູ່ໃນບົດລາຍງານແລ້ວ."

"ເຈົ້າອາດເຊື່ອວ່າທັງໝົດນີ້ມັນຢູ່ໃນບົດລາຍງານຊີ້ຫວາ, ສະຫາຍສີຣິ, ແຕ່ເບິ່ງຄື

ວ່າ ເຈົ້າໄດ້ຄັດເລືອກເອົາສະເພາະຂໍ້ມູນທີ່ຕົນຄິດວ່າຈຳເປັນຕ້ອງຊີ້ແຈງໃຫ້ຜູ້ອ່ານຮູ້ນຳ. ຂ້ອຍຢາກເຫັນລາຍລະອຽດຫຼາຍກວ່ານີ້ໃນເທື່ອໜ້າ, ຖ້າເຈົ້າບໍ່ວ່າຫຍັງ ເວົ້າຄວາມຊື່ເທາະຂ້ອຍຍັງງົງຢູ່ວ່າ ເຈົ້າໝັ້ນໃຈແນວໃດວ່າສາເຫດການຕາຍຂອງຜູ້ຊາຍຄົນນັ້ນແມ່ນຍ້ອນເສຍເລືອດຫຼາຍ, ແທນທີ່ຈະບອກວ່າ ...”

“ຫົວໃຈຫຼົ້ມເຫຼວແມ່ນບໍ່?”

“ແມ່ນອນ, ເຂົາອາດຈະຕົກໃຈກັບສະພາບຂາທີ່ຖືກຕັດ. ຊັ້ນເຈົ້າຮູ້ແນວໃດວ່າສາເຫດການຕາຍຂອງຊາຍຄົນນັ້ນບໍ່ໄດ້ເກີດຈາກຫົວໃຈຫຼົ້ມເຫຼວ? ເຂົາເຖົ້າແລ້ວເດ.”

ດັ່ງດຽວກັບຄະດີສາມກໍລະນີທີ່ເຄີຍເກີດຂຶ້ນກ່ອນໜ້ານີ້, ຄ້າຍກັບວ່າ ແທງ ມີທ່າທີ່ບິດເບືອນຂໍ້ເທັດຈິງໂດຍອ້າງວ່າມັນເປັນການຕາຍໂດຍທຳມະຊາດ, ແຕ່ກໍເປັນພຽງການໃຫ້ຂໍ້ອ້າງທີ່ໄຮ້ເຫດຜົນ ເຊິ່ງເຂົາພຽງແຕ່ຈິນຕະນາການຂຶ້ນມາເອງເທົ່ານັ້ນ. ຜູ້ພິພາກສາໜຸ່ມຄົງຈະປີ້ມປິຕິເປັນຢ່າງຍິ່ງ ຖ້າຫາກບົດລາຍງານທີ່ສີຣິນຳມາ ສະເໜີໃຫ້ເຂົາຈົນຮອດຫ້ອງການນັ້ນໄດ້ລະບຸຢູ່ໃນຫົວຂໍ້ໄວ້ວ່າ ຫົວໃຈຫຼົ້ມເຫຼວ.

ກໍຖືກຢູ່ດອກທີ່ວ່າຫົວໃຈຂອງຊາຍຫາປາຄົນນັ້ນໄດ້ຢຸດເຕັ້ນ ກ່ອນຈະເສຍຊີວິດ, ແຕ່ກໍຍັງມີສັນຍານທີ່ບົ່ງບອກຢູ່ໃນຕົວຂອງມັນເອງກ່ຽວກັບສາເຫດການຕາຍເຊິ່ງອາດມີເງື່ອນງຳຫຼາຍກວ່ານັ້ນ. ເຮືອຫຸ້ມເກາະຂອງທະຫານລຳໃໝ່ທີ່ກຽມອອກປະຕິບັດການໄດ້ເກີດອຸບັດຕິເຫດ ໂດຍໄປຕຳກັບທ່າເຮືອຄອນກຣິດທີ່ທ່າເດື່ອ ຍ້ອນບັນທຸກໜັກເກີນເຫດ ກ່ອນຈະຄ່ອຍຈົມລົງສູ່ພື້ນນ້ຳ. ແຕ່ກໍຍັງໂຊກດີທີ່ບັນດາລູກເຮືອທັງໝົດປອດໄພ. ເຫດການຄັ້ງນີ້ແມ່ນເກີດຈາກການປະທະຂອງເຮືອຫາງຍາວ ໂດຍມີຊາຍຂັບເຮືອທີ່ຢືນຈ່ອງກັບຝາກຳແພງເທິງເຮືອໄມ້ນ້ອຍໆ ດ້ວຍຄວາມຕື່ນຕົກ ໃຈແຕ່ກໍບໍ່ຮູ້ຈະໜີເອົາຕົວລອດແນວໃດ. ບໍ່ຕ່າງຫຍັງກັບຄົນຫາປາຕາມແມ່ນ້ຳຂອງທີ່ມີປະສົບການຫາປາຫຼາຍປີແຕ່ລອຍນ້ຳບໍ່ເປັນ.

ແຜ່ນໂລຫະທີ່ກອງຢູ່ເທິງດາດຟ້າໄດ້ຫຼຸຫຼົ່ງລົງມາ ພ້ອມຕັດອະໄວຍະວະບາງສ່ວນຂອງເຂົາອອກເປັນຊິ້ນເປັນຕ່ອນ ຄືກັບກ່ຽວຕັດເຂົ້າກໍບໍ່ປານ, ແລະບ່ອນທີ່ເຂົາຢືນຢູ່ຊ້ຳພັດມີຮາວຂັ້ນໄດຂວາງທາງເອົາໄວ້. ນາຍທະຫານ ແລະລູກເຮືອຮູ້ສຶກສັງເວດໃຈກັບເຫດການທີ່ເກີດຂຶ້ນ ຈິ່ງພາກັນດຶງເອົາຮ່າງຂອງຊາຍຄົນນັ້ນຂຶ້ນໄປໄວ້ຢູ່ເທິງດາດຟ້າ, ຂະນະທີ່ຮ່າງຂອງເຂົາຖືກວາງລົງເທິງພື້ນເຮືອດ້ວຍຄວາມມຶນງົງ, ເຂົາຊ້ຳພັດໄປ່ແວັບໆທັງຍິ້ມຫົວ ເບິ່ງຄືວ່າເຂົາເອງກໍຍັງບໍ່ຮູ້ສຶກຕົວວ່າຂາທັງສອງຂ້າງຂອງຕົນຖືກຕັດຂາດອອກແລ້ວ.

ເຮືອຄ່ອຍໆ ເຄື່ອນທີ່ອອກຈາກທ່າ ແລະຜູ້ຄົນທີ່ຢືນເບິ່ງເຫດການເທິງຕາຝັ່ງຕ່າງກໍເຫັນຂາທັງສອງຂ້າງຂຸຫຼົ່ນລົງໄປໃນນ້ຳ ແລະຈົມຫາຍໄປໃນທີ່ສຸດ. ພວກມັນອາດຈະ

ພອງຕົວຂຶ້ນໃນອີກບໍ່ເທົ່າໃດຊົ່ວໂມງ ແລະຟູຂຶ້ນມາລອຍຢູ່ເທິງໜ້ານໍ້າ ໂດຍທີ່ຍັງມີເກັບແຕະສີແປກຕາຕິດຢູ່ຕີນ, ແຕ່ກໍຄົງບໍ່ມີໂອກາດໄດ້ໄປຮ່ວມງານສົບເຈົ້າຂອງຮ່າງຄົງອັນໄຮ້ວິນຍານຂອງຊາຍຜູ້ໜ້າສົງສານນັ້ນອີກ.

"ສະຫາຍເອີຍ, ຖ້າສະຫາຍຕັ້ງໃຈຢາກຈະອ້າງວ່າຫົວໃຈຫຼົ້ມເຫຼວເປັນສາເຫດການຕາຍສຳລັບທຸກໆ ກໍລະນີແລ້ວ, ເຮົາກໍບໍ່ເຫັນວ່າຈະມີຄວາມຈຳເປັນອັນໃດ ທີ່ພວກເຮົາຈະຕ້ອງຈ້າງໝໍຊັ້ນນະສູດສົບມາເຮັດວຽກນີ້." ສີຣິເລີ່ມໝົດຄວາມອົດທົນ, ມັນເປັນຄວາມອົດທົນທີ່ຖືກປ່ອຍໃຫ້ລ່ອງລອຍຢູ່ໃນຫ້ວງນຶກ ຂອງບັນຍາກາດອັນກວ້າງໃຫຍ່ໄພສານທີ່ໄຮ້ຂອບເຂດ. ຕະຫຼອດ ໗໔ ປີຜ່ານມາ ສີຣິໄດ້ຜ່ານຜ່າກັບຄວາມຍາກລຳບາກມາຫຼາຍຕໍ່ຫຼາຍທີ່ຈົນນັບບໍ່ຖ້ວນ ຈົນເຂົາໄດ້ບັນລຸເຂົ້າສູ່ຄວາມສະຫງົບນີ້ງ ເຊິ່ງບໍ່ຕ່າງຫຍັງກັບນັກບິນອາວະກາດ ທີ່ໄດ້ປ່ອຍຕົວໃຫ້ລ່ອງລອຍໄປຕາມອາກາດກາງຫາວ. ເຖິງແມ່ນເຂົາຈະບໍ່ຮູ້ເລິກເຊິ່ງໃນເລື່ອງສາສະໜາພຸດ ຫຼືເລື່ອງຄອມມູຍນິດຢ່າງຖ່ອງແທ້, ເຂົາກໍຍັງມີຄວາມສາມາດພໍທີ່ຈະລະງັບໂທສະແຫ່ງຄວາມໂກດເຄືອງຂອງຕົນເອົາໄວ້ໄດ້. ເຊິ່ງກໍບໍ່ມີໃຜເຄີຍເຫັນເຂົາສະຕິແຕກຈັກເທື່ອ.

ຫຼາຍຄົນມັກເວົ້າເຖິງທ່ານໝໍ ສີຣິວ່າເຂົາເປັນຄົນເຕ້ຍຕໍ່າດຳເກີງ. ຮ່າງກາຍຂອງເຂົາເບິ່ງຄືຜິດຮູບຜິດຮອຍຄ້າຍກັບນັກມວຍປໍ້າຫຼັງກົ່ງ. ເວລາຍ່າງ, ຮ່າງກາຍເຄິ່ງທ່ອນທາງລຸ່ມຂອງເຂົາ ຊ່າງປະສານກົມກຽວກັນດີກັບສ່ວນທີ່ເປັນເຄິ່ງທ່ອນຂ້າງເທິງ. ເສັ້ນຜົມຂອງເຂົາຖືກຕັດສັ້ນເປັນລະບຽບ ແຕ່ກໍຍັງປ່ອຍໃຫ້ເຫັນເປັນສີຂາວດອກເລົາຊອມຊໍ່ທີ່ໄດ້ບຸໜົ້ນອອກມາຈາກໜັງຫົວ. ຂະນະທີ່ຜູ້ຊາຍອາວຸໂສລາວຫຼາຍຄົນປາຖະໜາທີ່ຈະຕື່ນຂຶ້ນມາ ແລ້ວໄດ້ຮັບພອນວິເສດຈາກສິ່ງສັກສິດເບື້ອງບົນສະຫວັນເພື່ອເນລະມິດໃຫ້ສີຜົມຂອງພວກເຂົາດົກດຳເໝືອນເຍົາໄວ. ສີຣິຊໍ້າພັດໃຊ້ເງິນເດືອນຂອງຕົນຢ່າງສົມເຫດສົມຜົນແທນທີ່ຈະສິ້ນເປືອງຍ້ອນນໍ້າຢາຍ້ອມຜົມຈີນ. ໃນຕົວຂອງເຂົານັ້ນແມ່ນບໍ່ມີຄຳວ່າປອມ, ຕື່ມແຕ້ມ ຫຼືຕັດອອກ ທັງໝົດນັ້ນລ້ວນແຕ່ແມ່ນຕົວຕົນຂອງເຂົາ.

ເຂົາບໍ່ເຄີຍປະສົບຜົນສຳເລັດໃນເລື່ອງການຈິ່ງໜວດເຄົາ, ເວັ້ນແຕ່ວ່າຈະນັບຂົນຄິ້ວເປັນເສັ້ນໜວດ. ສີຣິມີຂົນຄິ້ວດົກໜາຍາວເປັນຍ່ອມເຍາະ ຈົນຄົນແປກໜ້າຍາກທີ່ຈະຈ້ອງມອງດວງຕາແປກປະຫຼາດຄູ່ນັ້ນໄດ້. ແມ່ນແຕ່ຜູ້ທີ່ເຄີຍເດີນທາງຮອບໂລກເປັນສິບຄັ້ງກໍຍັງບໍ່ເຄີຍເຫັນດວງຕາແບບນັ້ນມາກ່ອນ. ພວກມັນມີສີຂຽວສົດໃສເປັນປະກາຍຄ້າຍຄືແຜ່ນຄຸມໂຕະສະໜຸກເກີ້ກໍປານນັ້ນ ແລະພວກມັນກໍເຮັດໃຫ້ເຂົາເພິ່ງພໍໃຈທຸກຄັ້ງໃນເວລາທີ່ຈ້ອງມອງເບິ່ງມັນຢູ່ຕໍ່ໜ້າແວ່ນ. ເຂົາບໍ່ຮູ້ດີປານໃດດອກເລື່ອງພໍ່ແມ່ຜູ້ບັງເກີດເກົ້າ, ແຕ່ກໍຍັງບໍ່ມີຂ່າວຄາວຫຍັງເພື່ອຈະໃຫ້ເຂົາໄດ້ສືບທາວຫາ. ຍ້ອນບໍ່ຮູ້ທີ່ໄປທີ່ມາຄືແນວນັ້ນແຫຼະ ເຂົາຈິ່ງບໍ່ສາມາດອະທິບາຍເລື່ອງນີ້ໃຫ້ໃຜຟັງໄດ້.

ສີ່ສິບນາທີຜ່ານໄປກັບຄຳວ່າ ການແບ່ງປັນຄວາມຮັບຜິດຊອບຕາມໜ້າທີ່, ຜູ້ພິພາກສາແທງຍັງບໍ່ສາມາດເຈາະເລິກເຂົ້າໄປຂ້າງໃນຂອງສາຍຕາຄູ່ນັ້ນໄດ້. ທ້າວໄດ້ແຕ່ເຫຼືອບຕາເບິ່ງປາຍສີດຳໃນມືຕົນເອງ ພ້ອມໃຊ້ນິ້ວມືດີດດັນຕ໊ອກແຕັກໄປມາພໍ ເໜັງຕີງມຸບມິບ. ບໍ່ພໍຄາວກໍຈ້ອງໄປເບິ່ງປຸ່ມທີ່ຫ້ອຍຕ່ອງແຕ່ງຢູ່ຂໍ້ມືຂອງທ່ານໝໍຜູ້ນຸ່ງເສື້ອສີຂາວທີ່ກຳລັງນັ່ງຢູ່ຕໍ່ໜ້າດ້ວຍທ່າທາງບໍ່ຮ້ອນບໍ່ເຄືອງຫຍັງ. ທ້າວສົ່ງແສງຕາຜ່ານປະຕູປ່ອງຢ້ຽມບານເກັດ ຄ້າຍກັບວ່າມີດວງດາວສີແດງສົ່ງແສງເຫຼື້ອມລະຍິບລະຍັບໃນຍາມຄ່ຳຄືນອັນມືດມິດ ຢູ່ຂ້າງນອກຫ້ອງພັກຂອງຜູ້ພິພາກສາຈັ່ງຊັ້ນແຫຼະ, ແຕ່ທ້າວກໍຍັງບໍ່ກ້າຈ້ອງມອງເຂົ້າສູ່ດວງຕາສີຂຽວອັນແຫຼມຄົມຂອງສີຣິແມ່ນແຕ່ຄັ້ງດຽວ.

"ແມ່ນຢູ່ດອກສະຫາຍສີຣິ, ພວກເຮົາຈຳເປັນຕ້ອງມີທ່ານໝໍຊັ້ນນະສູດສືບ ກໍຄືເຈົ້າຮູ້ຫັ້ນແຫຼ້ວ, ການຈັດລະບຽບຂອງລະບອບສັງຄົມນິຍົມ ຕ້ອງໄດ້ຮັບຜິດຊອບອ້າຍນ້ອງສະມາຊິກຂອງຕົນ. ຈິດວິນຍານແຫ່ງການປະຕິວັດ ແມ່ນຖືກປົກປັກຮັກສາພາຍໃຕ້ຂອບຂອງແສງສະຫວ່າງຈາກເຮືອນໄຟຍາມຝັ່ງ ຂອງລະບອບສັງຄົມນິຍົມ. ແຕ່ປະຊາຊົນກໍມີສິດທີ່ຈະເຫັນຄວາມໂປ່ງໃສ ຂອງຜູ້ດູແລເຮືອນໄຟຍາມຝັ່ງເຊັ່ນກັນ."

ບ້າໄປແລ້ວ, ໝໍນ້ອຍນີ້ຈັ່ງແມ່ນມັນເກັ່ງ ໂດຍສະເພາະກໍແມ່ນ: ເຂົາຖະໜັດໃນເລື່ອງການຍົກເອົາຄຳສຸພາສິດແບບຜິດໆ ສຳລັບແກ້ໄຂສະຖານະການລ່ວງໜ້າ. ແຕ່ພໍເມື່ອທຸກຄົນກັບເມືອເຮືອນໃຜລາວ ພ້ອມນຳເອົາສຸພາສິດຂອງພວກຕົນໄປວິເຄາະ, ກ່ອນຈະເຂົ້າໃຈແຈ້ງໃນຕອນທ້າຍວ່າມັນບໍ່ໄດ້ກ່ຽວຂ້ອງຫຍັງເລີຍ. ສີຣິແນມເບິ່ງເດັກຊາຍຜູ້ບ້າຄັ່ງພ້ອມຮູ້ສຶກສັງເວດໃຈແບບບອກບໍ່ຖືກ.

ສິ່ງທີ່ເຮັດໃຫ້ຜູ້ຄົນເຄົາລົບຢຳເກງຕໍ່ຜູ້ພິພາກສາແທງກໍຄືງແມ່ນ ໃບປະກາດລະດັບປະລິນຍາສາຂາກົດໝາຍ ທີ່ຈົບມາຈາກສະຫະພາບໂຊວຽດໄດ້ສະຫຼັກເທິງແຜ່ນເຈ້ຍບາງໆ ເຊິ່ງຈະເຫັນມັນຫ້ອຍໄວ້ຕິດກັບຝາຫ້ອງ. ເຂົາໄດ້ຜ່ານການຝຶກອົບຮົມແບບເລັ່ງລັດ ເພື່ອຕື່ມເຕັມຊ່ອງວ່າງໃຫ້ແກ່ພວກຊົນຊັ້ນຂຸນນາງທີ່ປົບໜີອອກນອກປະເທດ. ເຂົາສຶກສາຢູ່ຄະນະພາສາສາດ ທີ່ກະໂຕແທງເອງຍັງບໍ່ເຂົ້າໃຈທ່ຽງແທ້ໃນສາຂາທີ່ຕົນຮຽນ ພ້ອມຍັງໄດ້ຮັບໃບປະກາດແບບພໍເປັນພິທີຊື່ໆ. ສະຫະພາບໂຊວຽດໄດ້ເອົາຊື່ຂອງເຂົາເຂົ້າໃນບັນຊີລາຍຊື່ຂອງກຸ່ມນັກສຶກສາຄອມມູຍນິດອາຊີ ທີ່ສຳເລັດຊັ້ນການສຶກສາອັນຍິ່ງໃຫຍ່ ແລະຊົງກຽດ ເຊິ່ງໄດ້ກາຍເປັນທີ່ຮັບຮູ້ກັນດີໃນລະບອບສັງຄົມນິຍົມດິນແດນແຫ່ງມາຕຸພູມ.

ສີຣິເຊື່ອວ່າຕຳແໜ່ງຜູ້ພິພາກສາຄວນຈະແມ່ນຜູ້ທີ່ມີຄວາມຮູ້ ແລະເຕັມປ່ຽມໄປດ້ວຍພູມປັນຍາອັນສູງສົ່ງໂດຍຜ່ານການຝຶກຝົນຫຼໍ່ຫຼອມຜ່ານຫຼາຍຂັ້ນຕອນ ເປັນເວລາຫຼາຍປີຕະຫຼອດຊີວິດອັນຍາວນານ, ແລ້ວກໍຄ່ອຍເພີ່ມພູນຂຶ້ນ ຄ້າຍຄືກັບເສັ້ນວົງກົມ

ຂອງຕົ້ນໄມ້ແຫ່ງຄວາມຮູ້, ເຊື່ອວ່າຜູ້ທີ່ໄດ້ຕຳແໜ່ງມາຄອງ ບໍ່ແມ່ນຈະໄດ້ມາໂດຍການຄາດເດົາຄຳຕອບທີ່ເຫັນວ່າຖືກຕ້ອງຈາກການສອບເສັງ ພາກປະລາໄນພາສາຣັດເຊຍ.

"ຂ້ອຍຄວນໄປໄດ້ແລ້ວແມ່ນບໍ່?" ສີຣິຢືນຂຶ້ນ ພ້ອມກ້າວບາດຍ່າງໄປທາງປະຕູໂດຍບໍ່ລໍຖ້າຄຳອະນຸຍາດຈາກໃຜ.

ແຫງແນມຕາມຫຼັງເຂົາພ້ອມສົ່ງສາຍຕາແບບດູຖູກຄ້າຍກັບວ່າສີຣິເປັນຄົນຕ່ຳຕ້ອຍດ້ອຍກວ່າຝຸ່ນຕົມ.

"ຂ້ອຍຄິດວ່າພວກເຮົາຕ້ອງໄດ້ປຶກສາຫາລືດ້ານທັດສະນະຄະຕິໃນການພົບປະກັນເທື່ອໜ້າ. ເຈົ້າຄິດວ່າແນວໃດ?"

ສີຣິຍິ້ມແທນການປະຕິເສດທີ່ຈະອອກຄຳເຫັນໃດໆ.

"ອືມ! ທ່ານໝໍ," ທ່ານໝໍຊຸ້ນນະສູດສືບຢຸດຈົກ ຮູດັງຂອງເຂົາເກືອບຈຸຮອດປະຕູ, "ທ່ານບໍ່ສົງໄສເລີຍບໍວ່າຍ້ອນຫຍັງສາທາລະນະລັດ ປະຊາທິປະໄຕຂອງພວກເຮົາຈິ່ງໄດ້ແຈກເກີບຫຸ້ມສົ້ນສີດຳຄຸນນະພາບດີໃຫ້ແກ່ພະນັກງານລັດແບບບໍ່ຫັກເອົາເງິນນຳຈັກກີບ?"

ສີຣິເຫຼືອບຕາລົງເບິ່ງເກີບແຕະສີນ້ຳຕານອັນເກົ່າໝອງຂອງຕົນ. "ກິດຈະການໂຮງງານຜະລິດເກີບໃນຈີນຄົງຈະຍັງເປີດຢູ່ຕິເບາະ?"

ຜູ້ພິພາກສາແຫງກົ້ມຫົວລົງ ພ້ອມສ່າຍຫົວໄປມາແບບຊ້າໆ. ມັນຄືທ່າທີທີ່ເຂົາຮຽນແບບຈາກຄົນສູງອາຍຸ, ແຕ່ມັນກໍຍັງບໍ່ເໝາະກັບທ້າວພໍເທົ່າໃດ.

"ສະຫາຍ! ພວກເຮົາອອກຈາກປ່າມາດົນແລ້ວໃດ ພວກເຮົາບໍ່ໄດ້ລີ້ຢູ່ຖ້ຳຢູ່ຮູຄືແຕ່ກ່ອນ ຕອນນີ້ພວກເຮົາໄດ້ຮັບຄວາມເຄົາລົບນັບຖືຈາກຜູ້ບັງຄັບບັນຊາທັງຫຼາຍ ແລະການແຕ່ງກາຍຂອງພວກເຮົາກໍໄດ້ສະທ້ອນໃຫ້ເຫັນເຖິງຈຸດຢືນຂອງພວກເຮົາໃນສັງຄົມຍຸກໃໝ່. ຄົນທັນສະໄໝຈະໃສ່ເກີບຫຸ້ມສົ້ນ ຈິ່ງຈະໄດ້ຮັບຄວາມໜ້າເຊື່ອຖືຈາກມິດສະຫາຍຂອງພວກເຮົາ. ເຂົ້າໃຈໃນສິ່ງທີ່ຂ້ອຍກຳລັງບອກ ຫຼືບໍ່?" ຕອນນີ້ທ້າວຜ່ອນສຽງລົງອ່າວຊ້າແດ່ຄືກັບນາງພະຍາບານເວົ້າກັບຄົນປ່ວຍໄວຊະລາ.

ສີຣິຫັນໜ້າກັບມາ ໂດຍບໍ່ໄດ້ສະແດງອາການນ້ອຍອົກນ້ອຍໃຈຈາກການຖືກດູຖູກດູໝິ່ນແຕ່ຢ່າງໃດ.

"ຂ້ອຍເຊື່ອວ່າແມ່ນແນວນັ້ນສະຫາຍ. ແຕ່ຂ້ອຍຄິດວ່າຖ້າມີກຳມາຊີບຄົນໃດໜຶ່ງຄິດຢາກຈະຈູບຕີນຂ້ອຍ, ຢ່າງໜ້ອຍພວກເຂົາກໍຈະໄດ້ອິມຫົວໂປ້ຕີນຂ້ອຍງ່າຍຂຶ້ນ."

ເວົ້າສຸດສີຣິກໍໃຊ້ມືດຶງປະຕູອັນຝືດແສນຝືດນັ້ນໃຫ້ເປີດກວ້າງຂຶ້ນ ກ່ອນຈະຍ່າງອອກໄປ.

ມື້ນັ້ນເປັນວັນສຸກປາກົດວ່າເປັນມື້ທີ່ຍາວນານອີ່ຫຼີ, ສີຣິກ້າວບາດຍ່າງເພື່ອມຸ່ງໜ້າ

ກັບເຮືອນຂອງຕົນ ໂດຍຜ່ານເສັ້ນທາງດິນແດງໃນນະຄອນຫຼວງວຽງຈັນ. ປົກກະຕິເຂົາມັກເກັບເອົາຮອຍຍິ້ມແຫ່ງຄວາມເບີກບານໃຈ ເຊິ່ງປາກົດອອກຜ່ານໃບໜ້າຂອງຕົນແລ້ວມອບໃຫ້ແກ່ຜູ້ຄົນທີ່ຕ້ອງການມັນ ແຕ່ເຂົາກໍສັງເກດເຫັນວ່າມີບໍ່ພໍເທົ່າໃດຄົນທີ່ຍິ້ມຕອບກັບຄືນມາ. ພວກພໍ່ຄ້າຊາວຂາຍທີ່ຕັ້ງຮ້ານຢູ່ຕາມເສັ້ນທາງທີ່ສິຣິຍ່າງຜ່ານຕ່າງກໍຮູ້ຈັກເຂົາເປັນຢ່າງດີ ພ້ອມກ່າວທັກທາຍແບບເປັນກັນເອງ, ແຕ່ຄົນແປກໜ້າຊໍ້າພັດບໍ່ເຂົ້າໃຈກັບສິ່ງທີ່ເຂົາສະແດງອອກ ແລ້ວກໍເກີດມີຄໍາຖາມຕ່າງໆ ນາໆ ປາກົດຂຶ້ນຢູ່ໃນຫົວຂອງພວກເຂົາ. “ເຂົາຮູ້ຫຍັງແດ່ເລື່ອງຊາຍໜຸ່ມຄົນນີ້? ແມ່ນເຂົາຍິ້ມເອົາວິມານຫຍັງຫວາ?”

ເຂົາຍ່າງຜ່ານກຸ່ມລັດຖະກອນເຊິ່ງເປັນພະນັກງານຍິງ ທີ່ກໍາລັງກັບຈາກວຽກງານໃນມື້ສຸດທ້າຍຂອງອາທິດ. ພວກເຂົານຸ່ງເສື້ອສຸພາບສີກາກີ ພ້ອມສິ້ນສີດໍາຕໍ່ຕີນລ່າມລົງຈົນກາຍຫົວເຂົ່າປົກຄຸມຮອດປາຍຕີນ. ທຸກໆ ຄົນແມ່ນຈະມີເຄື່ອງແບບທີ່ເປັນເອກະລັກຂອງໃຜລາວເຊັ່ນມີສາຍແອວ, ແຖບຄໍເສື້ອທີ່ມີລວດລາຍຕ່າງໆ, ເອົາເສື້ອເຂົ້າໃນສິ້ນຕາມແບບຂອງຕົນເອງ.

ສິຣິຍ່າງຜ່ານກຸ່ມເດັກນ້ອຍນັກຮຽນ ທີ່ຢູ່ໃນຊຸດເສື້ອສີຂາວສະອາດຈົບງາມ ແລະມີຜ້າພັນຄໍສີແດງຜູກຕິດຢູ່ຄໍ ເດັກນ້ອຍເຫຼົ່ານັ້ນເບິ່ງຄືກໍາລັງຫຍຸ້ງເຫຍີງທັງມຶນງົງເກີນກວ່າຈະສົ່ງສຽງຫົວຢອກໄຍກັນ ບໍ່ຕ່າງຫຍັງກັບຄວາມຮູ້ສຶກຂອງສິຣິໃນຕອນນັ້ນ.

ເຂົາຍ່າງຜ່ານຄວາມມືດມິດທີ່ມີແຕ່ຮ້ານຄ້າເປົ່າວ່າງຕັ້ງລຽນລາຍກັນຢູ່ສອງຂ້າງຂອງຟາກທາງ ເບິ່ງຄືວ່າເປັນຮ້ານຂາຍເຄື່ອງປະເພດດຽວກັນໝົດ. ເຂົາຍ່າງຜ່ານນໍ້າພຸເຊິ່ງບ່ອນທີ່ນໍ້າພຸ່ງອອກມານັ້ນຊໍ້າພັດກາຍເປັນເຮືອນຮັງຂອງພວກແມງໄມ້ນາໆ ຊະນິດໄປແລ້ວ ກັບຕຶກອາຄານຫຼາຍແຫ່ງທີ່ຍັງສ້າງບໍ່ແລ້ວປະຄ້າງໄວ້ເປັນເຕ່ງເຊ່ງຢູ່ ແມ່ນແຕ່ຮ້ານນັ່ງໄມ້ໄຜ່ກໍຍັງກາຍເປັນສີຂຽວຍ້ອນມີເຄືອໄມ້ທີ່ເກີດຂຶ້ນມາກ້ຽວກອດເອົາໄວ້.

ສິຣິໃຊ້ເວລາຍ່າງກັບເຮືອນພຽງ ໔໐ ນາທີ ແຕ່ມັນກໍພຽງພໍທີ່ຈະຂັດເກົາພາບອັນໜ້າຫງຸດຫງິດຂອງຜູ້ພິພາກສາແຫງ ອອກຈາກຫົວຂອງຕົນໄດ້. ສິຣິອາໄສຢູ່ເຮືອນເກົ່າແກ່ສອງຊັ້ນສະຕາຍແບບຝຣັ່ງ ເຊິ່ງມີສວນໜ້າບ້ານທີ່ເຕັມໄປດ້ວຍພືດຜັກນາໆຊະນິດ. ຖ້າຈະວ່າໄປແລ້ວ, ຕຶກຫຼັງນັ້ນຍັງມີຫຼາຍສິ່ງຢ່າງທີ່ຕ້ອງໄດ້ຕື່ມເຕັມບໍ່ວ່າຈະເປັນການທາສີ, ການສາບປູນ, ໃສ່ແວ່ນ ລວມທັງກະເບື້ອງທີ່ແຕກແຫງ, ແຕ່ເບິ່ງຄືວ່າສິ່ງເຫຼົ່ານັ້ນຈະຖືກປະຖິ້ມໄວ້ຈັ່ງຊັ້ນອີກດົນນານສົມຄວນ.

ຊາລູບ ກົ້ງເກືອກລີເລືອອອກມາຈາກພຸ່ມກະລໍ່າປີຄືກັບໂຕແຂ້ຄານຂຶ້ນຈາກອ່າງນໍ້າເຖິງແມ່ນຍັງບໍ່ທັນຕັ້ງສະຕິໄດ້ດີ ມັນກໍເລີ່ມເຫົ່າສິຣິທັນທີ. ໝາໂຕນີ້ມັກເຫົ່າສິຣິທຸກຄັ້ງແລະກໍເຫົ່າແຕ່ເຂົາພຽງຄົນດຽວຕະຫຼອດ ໑໐ ເດືອນທີ່ສິຣິອາໄສຢູ່ທີ່ນັ້ນ. ບໍ່ມີໃຜ

ສາມາດອະທິບາຍໄດ້ວ່າ ແມ່ນຫຍັງທີ່ເປັນແຮງຈູງໃຈໃຫ້ໝາຜີບ້າໂຕນັ້ນ ເລືອກທີ່ຈະເຫົ່າທ່ານໝໍພຽງຄົນດຽວ ແຕ່ມັນກໍເປັນສິ່ງທີ່ເກີດຂຶ້ນໃນຫົວສະໝອງຂອງໝາ ເຊິ່ງຍາກທີ່ຄົນທຳມະດາຈະເຂົ້າໃຈໄດ້.

ດັ່ງດຽວກັບທຸກວັນ, ຄືກັບວ່າມີຫຍັງມາດົນບັນດານໃຫ້ຊາລູບສົ່ງສຽງເຫົ່າຫອນຄວນຄາງຈົນຂົນໝາວລຸກເພືອບໆ ສຽງຂອງມັນມີພະລັງຈົນເຮັດໃຫ້ໝາໂຕອື່ນໆພາກັນເຫົ່າຫອນປະສານກັນດັງກ້ອງກັງວານອອກໄປຊອດຮອດຖະໜົນ ແລະໄກອອກໄປເລື້ອຍໆ. ສີຣິໃຊ້ຄວາມແຮງດຶງປະຕູໜ້າບ້ານດັງອອດແອດ! ປະສານກັບສຽງໝາເຫົ່າເຊັ່ນເຄີຍ. ບໍ່ມີຈັກມື້ທີ່ເຂົາຈະຍ່າງເຂົ້າເຮືອນແບບບໍ່ມີໃຜສັງເກດເຫັນ. ແມ່ນແຕ່ຂັ້ນໄດກໍຍັງເປັນເລື່ອງ ເພາະມັນເໜັງຕີງໂຍກເຍກພາຍໃຕ້ບາດຕີນຂອງສີຣິ ແມ່ນແຕ່ເວລາຍ່າງຜ່ານຫ້ອງໂຖງອັນເປົ່າວ່າງຍັງບໍ່ເວັ້ນກັບສຽງສະເທືອນດັງເອືອດອາດຂອງພື້ນເຮືອນ ຄ້າຍກັບວ່າພວກມັນຢາກເຕືອນກັນວ່າ ສີຣິມາຮອດໜ້າລະບຽງແລ້ວ.

ທັງປະຕູໜ້າບ້ານ ແລະໃນເຮືອນແມ່ນບໍ່ໄດ້ລ໋ອກໄວ້ ເຊິ່ງເຫັນວ່າບໍ່ຈຳເປັນຕ້ອງລ໋ອກເພາະເລື່ອງຮ້າຍໆ ກໍໄດ້ງຽບສະຫງົບລົງ. ທີ່ພັກຂອງເຂົາຕັ້ງຢູ່ດ້ານຫຼັງທີ່ສາມາດເບິ່ງຜ່ານເຫັນສິ້ນໜຶ່ງຂອງວັດຫາຍໂສກ. ເຂົາຖີກຕີນອອກຈາກເກີບອີ່ແຕະເທື່ອລະຂ້າງແລ້ວກໍຄ່ອຍໆ ເຂ່ຍມັນເຂົ້າໄວ້ຂ້າງໃນ. ພາຍໃນຫ້ອງມີໂຕະປຶ້ມທີ່ກຳລັງລໍຖ້າເຂົາໄປນັ່ງອ່ານ ເຊິ່ງຕັ້ງໄວ້ຢູ່ຂ້າງປະຕູປ່ອງຢ້ຽມ. ເສື່ອນອນນ້ອຍໆ ອັນໜຶ່ງໄດ້ຖືກພັບໄວ້ຢູ່ກ້ອງຂອບມຸ້ງຂ້າງຝາ. ຕັ່ງອີ້ຢາງສາມໜ່ວຍທີ່ພື້ນຜິວໄດ້ຊຸຫຼຸ່ນອອກເປັນບາງບ່ອນຖືກຕັ້ງໄວ້ອ້ອມໂຕະກາເຟທີ່ເຮັດດ້ວຍຂີ້ກົ່ວ ພ້ອມອ່າງລ້າງມືອັນດ່າງດຳຕັ້ງຢູ່ທາງເທິງຂອງທໍ່ໂລຫະຂະໜາດໃຫຍ່.

ຫ້ອງນ້ຳແມ່ນຢູ່ຊັ້ນລຸ່ມ ເຊິ່ງໃຊ້ຮ່ວມກັນກັບຜົວເມຍສອງຄູ່, ມີເດັກນ້ອຍ ມີ ຄົນ, ກັບແມ່ຍິງຄົນໜຶ່ງຊຶ່ງແມ່ນຜູ້ຮັກສາການຫົວໜ້າໜ່ວຍງານຝຶກອົບຮົມຄູ, ພະແນກສຶກສາ ສິ່ງເຫຼົ່ານີ້ຄືສົມບັດຂອງຝ່າຍຄອມມູຍນິດທີ່ໄດ້ມາຄອບຄອງພ້ອມກັບໄຊຊະນະ. ແຕ່ສະພາບການບໍ່ໄດ້ຮ້າຍແຮງຄືແຕ່ກ່ອນ ຈິ່ງບໍ່ມີໃຜຈົ່ມວ່າຫຍັງເລີຍ. ສີຣິຕິດໄຟໃສ່ບ່ອນເປັນວົງແຫວນເທິງເຕົາແກັສ ແລ້ວກໍຕັ້ງກາຕົ້ມນ້ຳໃສ່ເພື່ອຈະເຮັດກາເຟ ຖືເປັນວິຖີແຫ່ງຄວາມສຸກຂອງເຂົາອີກແບບໜຶ່ງໃນເວລາທີ່ຢູ່ບ້ານເຮືອນ.

ແຕ່ນີ້ເປັນວັນທ້າຍອາທິດຂອງການຕື່ນຂຶ້ນມາພ້ອມກັບຄວາມແປກປະຫຼາດຂອງສີຣິ. ຕອນແລງວັນສຸກ ເຂົານັ່ງຢູ່ໂຕະເຮັດວຽກພ້ອມອ່ານປຶ້ມ ໂດຍອາໄສແສງຣິບຣີ່ຈາກໄຟຕະກຽງນ້ຳມັນກາດ ຈົນກວ່າຈະທົນກັບພວກແມງເມົ່າເປັນຝູງຈຳນວນຫຼາຍບິນຕອມບໍ່ໄຫວ. ເຂົາຈິ່ງຈັດແຈງບ່ອນນອນໃຫ້ຢູ່ທີ່ໂລ່ງພໍຈະໄດ້ແນມເຫັນດວງເດືອນທີ່ໂຜ່ອອກມາຈາກກ້ອນຂີ້ເຝື້ອທີ່ລອຍບົດບັງເປັນຊ່ອງໆ ຈົນກວ່າເຂົາເອງກ້າວເຂົ້າສູ່

ວັງວົນແຫ່ງຄວາມຫຼັບໄຫຼໃນຄືນລາຕີການອັນງຽບສະຫງົບ.

ໃນໂລກແຫ່ງຄວາມຝັນ ສີຣິມັກພົບກັບເລື່ອງລາວອັນແປກປະຫຼາດ. ໃນສະໄໝທີ່ເຂົາຍັງເປັນເດັກນ້ອຍ, ພາບອັນຊໍ້າຊ້ອນໄດ້ຄອຍວົນວຽນລົບກວນເວລານອນຂອງເຂົາ ຈົນເຮັດໃຫ້ເຂົາຈຳເປັນຕ້ອງຕື່ນຂຶ້ນມາກາງເດິກຕະຫຼອດ. ແຕ່ກໍມີແມ່ຍິງຜູ້ມີສິນທຳຄົນໜຶ່ງເຊິ່ງເປັນຜູ້ລ້ຽງດູສີຣິ ຈຳຕ້ອງເຂົ້າໄປໃນຫ້ອງຂອງເຂົາ ແລ້ວບອກເຕືອນເຂົາວ່າ ທັງໝົດນັ້ນເປັນພຽງຄວາມຝັນທີ່ເກີດຂຶ້ນໃນຫົວຂອງເຂົາ, ແລະບໍ່ມີໃຜຢູ່ບ່ອນນັ້ນນອກຈາກເຂົາພຽງຄົນດຽວ. ເຂົາໄດ້ຮຽນຮູ້ເພື່ອເອົາຊະນະອາການຝັນຮ້າຍຂອງຕົນພ້ອມບໍ່ຢ້ານກົວກັບສິ່ງທີ່ເກີດຂຶ້ນໃນຄວາມຝັນອີກຕໍ່ໄປ.

ເຖິງແມ່ນວ່າເຂົາຈະເຊົາຢ້ານກົວແລ້ວ, ແຕ່ກໍຍັງຄວບຄຸມມັນບໍ່ໄດ້. ມີສິ່ງໜຶ່ງທີ່ສີຣິຍັງບໍ່ສາມາດກີດກັ້ນບັນດາແຂກບໍ່ໄດ້ເຊີນພວກນັ້ນໄດ້. ໃນຄວາມຝັນຂອງເຂົາ ໄດ້ເຫັນຄົນແປກໜ້າເປັນຈຳນວນຫຼາຍພາກັນຍ່າງໂຊເຊຄືຄົນເມົາເຫຼົ້າ ໂດຍບໍ່ມີທ່າທີທີ່ຈະສ້າງຄວາມເບີກບານໃຈໃຫ້ກັບເຂົາເລີຍແມ່ນແຕ່ໜ້ອຍດຽວ. ຜູ້ຄົນເຫຼົ່ານັ້ນປາກົດຕົວແບບລັບໆ ລໍ້ໆ, ຢັ່ງຢາຍໄປທົ່ວ, ທັງນິ້ງເສີຍ ຄ້າຍກັບວ່າສະໝອງຂອງເຂົາເປັນບ່ອນຮອງຮັບແຂກຄົນຈັ່ງຊັ້ນແຫຼະ. ຫຼາຍຄັ້ງທີ່ເຂົາຄິດວ່າຕົນເອງເປັນພຽງຜູ້ຢູ່ເບື້ອງຫຼັງເວທີສຳລັບຄວາມຝັນຂອງຄົນອື່ນໄປແລ້ວ.

ແຕ່ວ່າບັນດາແຂກທີ່ມີຮູບຮ່າງແປກປະຫຼາດ ທີ່ເຂົ້າໄປຢູ່ໃນຈິດໃຕ້ສຳນຶກຂອງສີຣິທັງໝົດເຫຼົ່ານັ້ນພັດແມ່ນຄົນທີ່ຕາຍໄປແລ້ວ. ມັນເລີ່ມຂຶ້ນແຕ່ຕອນທີ່ພົບກັບຄວາມຕາຍຄັ້ງທຳອິດ ເຊິ່ງແມ່ນຊາຍທີ່ຖືກຍິງດ້ວຍກະສຸນລູກປືນກ່ອນຈະຂາດໃຈຕາຍຢູ່ໂຕະຜ່າຕັດຂອງເຂົາ, ທຸກຊີວິດທີ່ເຄີຍຈາກໄປຕໍ່ໜ້າຕໍ່ຕາເຂົາ ລ້ວນແຕ່ກັບມາຢ້ຽມຢາມເຂົາໃນຄວາມຝັນເປັນປະຈຳ.

ແຕ່ຄາວທີ່ເຂົາເປັນທ່ານໝໍໜຸ່ມ, ເຂົາເອງກໍຍັງສົງໄສວ່າ ຕົນເອງອາດຖືກລົງໂທດເນື່ອງຈາກບໍ່ສາມາດຊ່ວຍຊີວິດຜູ້ຄົນເຫຼົ່ານັ້ນໄວ້ໄດ້. ບໍ່ມີເພື່ອນຮ່ວມງານຄົນໃດເລີຍທີ່ຈະກ້າບອກເລົ່າກ່ຽວກັບເລື່ອງຫຼອນເຫຼົ່ານີ້. ພ້ອມກັນນັ້ນ, ນັກຈິດຕະວິທະຍາຜູ້ທີ່ເຄີຍເຮັດວຽກຮ່ວມກັບເຂົາຕອນຢູ່ຫວຽດນາມ ກໍໄດ້ແນະນຳພວກເຂົາວ່າ ທັງໝົດນັ້ນເປັນພຽງອາການສຳນຶກຜິດໃນຕົວຂອງເຂົາເອງ. ທ່ານໝໍທຸກຄົນຕ່າງກໍແປກໃຈວ່າ ພວກເຂົາຈະສາມາດເຮັດໜ້າທີ່ຕໍ່ຄົນເຈັບໄດ້ດີຂຶ້ນ ຫຼືບໍ່. ໃນກໍລະນີຂອງສີຣິ ມີແຕ່ຜູ້ທີ່ປ່ຽມລົ້ນໄປດ້ວຍຄວາມຮູ້ເທົ່ານັ້ນເຊື່ອວ່າ ຂໍ້ສົງໄສເຫຼົ່ານີ້ໄດ້ແຝງຊ້ອນມາໃນຮູບແບບທີ່ປາກົດເປັນພາບໃຫ້ເຂົາເຫັນ. ສີຣິໄດ້ຄ່ອຍລະຫາຍຈາກຄວາມກັງວົນລົງແດ່ເມື່ອຮູ້ຄວາມຈິງທີ່ວ່າ ໃນຄວາມຝັນນັ້ນ, ວິນຍານຂອງຄົນທີ່ຕາຍໄປກໍບໍ່ມີທ່າທີວ່າຈະສະແດງອາການໂມໂຫຮ້າຍໃຫ້ເຂົາ. ຄວາມຈິງແລ້ວ ສີຣິກໍບໍ່ເຄີຍຖືກພວກເຂົາຄຸກ

ຄວາມໃຫ້ຮູ້ສຶກຢ້ານກົວແຕ່ຢ່າງໃດ ເຊິ່ງນັກຈິດຕະວິທະຍາກໍໄດ້ຢືນຢັນວ່າ ສິ່ງນີ້ເປັນສັນຍານທີ່ດີ.

ນັບແຕ່ສີຣິເລີ່ມເຂົ້າເຮັດວຽກໃນຕຳແໜ່ງທ່ານໝໍຊັນນະສູດສົບ, ເຂົາກໍໄດ້ຮັບການຕິດຕໍ່ທຳການຊັນນະສູດບັນດາຮ່າງຄີງທີ່ໄຮ້ວິນຍານເປັນຈຳນວນຫຼາຍ ທັງທີ່ບໍ່ເຄີຍຮູ້ກັບພວກເຂົາຄາວຍັງມີຊີວິດ, ການພົບເຫັນເຊັ່ນນີ້ຍິ່ງກາຍເປັນຄວາມຜູກພັນອັນເລິກເຊິ່ງ, ເຂົາສາມາດສຳຜັດໄດ້ເຖິງຄວາມຮູ້ສຶກ ແລະຕົວຕົນຂອງບັນດາຮ່າງທີ່ໄຮ້ວິນຍານເຫຼົ່ານັ້ນໄດ້. ສັງເກດເບິ່ງແລ້ວ ມັນບໍ່ຄືກັບວ່າວິນຍານເຫຼົ່ານັ້ນໄດ້ຫຼຸດລອຍອອກຈາກຮ່າງຄີງຂອງຄົນພວກນັ້ນເປັນເວລາດົນນານແຕ່ຢ່າງໃດ. ເພາະໃນໂລກແຫ່ງຄວາມຝັນຂອງເຂົານັ້ນ, ວິນຍານຂອງແຕ່ລະດວງຊໍ້າພັດມີສ່ວນປະກອບຄົບຖ້ວນທັງສາມສິບສອງປະການ ແລະໃນຄວາມຝັນນັ້ນ ເຂົາໄດ້ໂອ້ລົມສົນທະນາກັບຄົນພວກນັ້ນທັງໝົດ ແລະຮູ້ສຶກໄດ້ເຖິງທາດແທ້ຂອງບຸກຄົນເຫຼົ່ານັ້ນໃນຊີວິດຈິງ.

ແນ່ນອນ, ສີຣິບໍ່ສາມາດເວົ້າເຖິງເລື່ອງການກັບຄືນມາຂອງຜູ້ຕາຍໃຫ້ໝູ່ຄູ່ ຫຼືເພື່ອນຮ່ວມງານຂອງຕົນຮູ້ໄດ້. ເພາະເຂົາບໍ່ເຫັນວ່າຈະມີໃຜເຊື່ອຕົນໃນເລື່ອງນີ້ ນອກຈາກຈະຫາວ່າເຂົາເປັນບ້າລະເມີກັບເລື່ອງໄຮ້ສາລະ ທັງງົມງວາຍຢູ່ກັບມົນຂັງຂອງຄວາມມືດມົນ. ສະພາບຂອງເຂົາກໍບໍ່ໄດ້ຮ້າຍແຮງຢູ່ແລ້ວ ແຖມຍັງເປັນກຳລັງໃຈໃຫ້ເຂົາໄດ້ສະແດງຄວາມເຄົາລົບຕໍ່ບັນດາສົບເຫຼົ່ານັ້ນເພີ່ມຂຶ້ນ ຄືກັບຢາກຈະບອກວ່າ ຈັກມື້ໃດມື້ໜຶ່ງເຈົ້າຂອງສົບເຫຼົ່ານັ້ນອາດຈະຟື້ນຄືນມາມີຊີວິດຢູ່ຕໍ່ໄດ້ອີກ.

ດັ່ງດຽວກັບເຄີຍມີເລື່ອງລາວລຶກລັບ ໄດ້ປາກົດຢູ່ໃນຄວາມຝັນຂອງສີຣິ, ມັນເປັນຄວາມຝັນທີ່ມາພ້ອມກັບຄວາມແປກປະຫຼາດທີ່ຍາກຈະເຊື່ອໄດ້ ເປັນເຫດເຮັດໃຫ້ເຂົາສະເດີດຕື່ນຂຶ້ນມາພ້ອມກັບຄວາມງຸນງົງ. ໂດຍສະເພາະໃນຕອນເຊົ້າຂອງວັນເສົານີ້ ເຂົາໄດ້ພົບວ່າຕົນເອງຢູ່ອີກມິຕິໜຶ່ງຂອງຊີກໂລກ ທັງທີ່ເຂົາເອງກໍຮູ້ວ່າຕົນຍັງຢູ່ໃນຫ້ອງບໍ່ໄດ້ອອກໄປໃສ ແລະນິ້ວມືທັງສອງຂ້າງກໍຖືກແມງໄມ້ນ້ອຍໆ ກັດຢູ່, ຫູຂອງເຂົາສຳຜັດໄດ້ກັບສຽງຢອດນໍ້າໄຫຼປົ໋ອກແປ໊ກ! ປົ໋ອກແປ໊ກ! ເປັນຢົດໆ ອອກມາຈາກຮູກອັກນໍ້າ, ເຂົາສາມາດສຳຜັດກິ່ນອາຍຂອງໃບໄມ້ທີ່ກຳລັງຖືກເຜົາໄໝ້ຢູ່ເດີ່ນວັດ, ແຕ່ວ່າເຂົາຍັງຖືກຄວາມຝັນຄວບຄຸມເອົາໄວ້.

ຕັ່ງຢາງອີກໜ່ວຍປາກົດມີຮ່າງຄີງຂອງຊາຍຄົນໜຶ່ງນັ່ງຢູ່. ແສງໄຟຍາມເຊົ້າໄດ້ສາດສ່ອງຜ່ານຜ້າກັ້ງ ກ່ອນເປັ່ງແສງພໍຣິບຣີ່ໃຫ້ປາກົດເຫັນເບື້ອງຫຼັງທາງຫົວຂອງເຂົາ. ເມື່ອເບິ່ງຜ່ານຈາກທາງໃນມຸ້ງແລ້ວ, ສີຣິບໍ່ສາມາດເບິ່ງໜ້າຂອງຊາຍຄົນນັ້ນໄດ້ຈະແຈ້ງ, ແຕ່ກໍພໍສັງເກດໄດ້ວ່າຊາຍຄົນນັ້ນແມ່ນໃຜ. ເຂົາບໍ່ໄດ້ນຸ່ງເສື້ອ ແລະຮ່າງຄີງອັນຈ່ອຍຜອມທີ່ກໍ່າດຳມີຮອຍສັກຍັນບູຮານສະຫຼັກຢູ່. ເຂົານຸ່ງຜ້າແພຂາວມ້າຕາກະໂລ ຂາທັງສອງ

ຂ້າງຖືກຕັດຂາດພາດໄວ້ຢູ່ບ່ອນນັ່ງ ພ້ອມມີເລືອດແດງຊຸ່ມໄຫຼຍ້ອຍປໍ໊ອກ!ປໍ໊ອກລົງໃສ່ແຜ່ນຢາງ.

"ເປັນແນວໃດແລ້ວ?" ສີຣິເອີ່ຍປາກຖາມເຂົາ. ມັນເປັນຄໍາຖາມຂ້ອນຂ້າງແປກປະຫຼາດສໍາລັບຄົນທີ່ຕາຍໄປແລ້ວ ແຕ່ນີ້ຄືຄວາມຝັນທັງມວນ. ສີຣິເລີ່ມເຂົ້າໃຈຕໍ່ກັບສຽງເຫົ່າຫອນຂອງຝູງໝາທີ່ສະທ້ອນອອກໄປຂ້າງໜ້າ ທັງໝົດເປັນສັນຍານແຫ່ງການລວມຕົວກັນເພື່ອເປັນການເຕືອນສະຕິ ແຕ່ຊາຍຄົນຂັບເຮືອຫາງຍາວຜູ້ນັ້ນກໍຍັງປະຕິເສດບໍ່ຍອມໜີໄປ.

ຊາຍຄົນນັ້ນນັ່ງເສີຍຢູ່, ທັງສາຍຕາກໍຈ້ອງມອງມາທາງສີຣິ ພ້ອມຮອຍຍິ້ມທີ່ເຫັນແຕ່ເຫືອກສີກກວ້າງເກືອບຈໍາຫູສອງຂ້າງ ຈາກນັ້ນເຂົາກໍເຫຼືອບຕາໄປທາງອື່ນ ພ້ອມໃຊ້ນິ້ວມືຍາວໆ ທີ່ເຫຼືອແຕ່ກະດູກຊີ້ໄປທາງໜ້າ. ສີຣິລຸກນັ່ງພ້ອມໃຊ້ໝອນອີງຝາເພື່ອຈະເບິ່ງຕາມສັນຍານນັ້ນ ແລ້ວເຂົາຈິ່ງແນມເຫັນຂວດເຫຼົ້າແມ່ຂອງເທິງໂຕະກາເຟທີ່ເຮັດດ້ວຍຂີ້ກົ່ວ ມັນບໍ່ພຽງແຕ່ເປັນຂວດເຫຼົ້າແມ່ຂອງເທົ່ານັ້ນແຕ່ມັນໄດ້ມີບາງຢ່າງທາງໃນທີ່ດໍາກໍ່າ ແລະໜາຊຸ່ມກວ່ານໍ້າເຫຼົ້າທໍາມະດາ. ມັນອາດຈະແມ່ນເລືອດຫຼາຍກວ່າ ແຕ່ມັນຄົງເປັນພຽງຈິນຕະນາການທີ່ຜິດປົກກະຕິຂອງສີຣິທີ່ນໍາມາຫຼອກຫຼອນຈາກບ່ອນເຮັດວຽກເທົ່ານັ້ນແຫຼະ.

ສີຣິລົ້ມນອນທັບໝອນຄືນ ພ້ອມສົງໄສວ່າຕົນເອງເຂົ້າໃຈກັບສະພາບແວດລ້ອມຫຼາຍໜ້ອຍພຽງໃດກ່ອນທີ່ຊາຍຜູ້ນັ້ນຈະຈາກໄປ. ຈາກນັ້ນຜ້າກັ້ງກໍເໜັງຕີງຄ່ອຍໆ ສາຍລົມໄດ້ນໍາເອົາກິ່ນຄວັນມາແຕ່ວັດພັດອູ້ມເຂົ້າມາຂ້າງໃນຫຼາຍຂຶ້ນ. ແລະລາວກໍຮູ້ສຶກເມື່ລອຍເປັນເທື່ອທີສອງ, ທັງເກີດມີຄວາມຫວາດລະແວງ. ຫົວຂອງຊາຍຫາປາອາດຈະແມ່ນແຜ່ນມ້ວນຜ້າກັ້ງ ຮ່າງກາຍຂອງເຂົາກໍອາດຈະແມ່ນຮອຍບິດບ້ຽວຂອງຕັ່ງຢາງທີ່ເກີດຂຶ້ນມາແຕ່ດົນນານ ເຊິ່ງເຄີຍມີຜູ້ຄົນນັ່ງຢູ່ບ່ອນນັ້ນມາຫຼາຍຕໍ່ຫຼາຍທີຈົນນັບບໍ່ຖ້ວນ.

ຄ້າຍກັບວ່າສຽງເມືອງນັບວ່າງກີ້ນີ້ ໄດ້ມະຫັບມະຫາຍໄປນໍາອາກາດ, ສຽງເຫົ່າຫອນຂອງຝູງໝາກໍພອຍວ່າງຽບສະຫງົບລົງ ສີຣິໄດ້ຍິນພຽງສຽງຢອດນໍ້າຍ້ອຍປໍ໊ອກແປ໊ກ! ປໍ໊ອກແປ໊ກ! ອອກມາຈາກກອັກນໍ້າ. ບໍ່ມີຂໍ້ສົງໄສໃດໆ ອີກແລ້ວ ແລະຕອນນີ້ເຂົາເອງກໍຕື່ນນອນແລ້ວ. ແຕ່ເຂົາກໍຍັງຮູ້ສຶກປະຫຼາດໃຈກັບພາບໃນຄວາມຝັນອີກຄັ້ງ, ມັນເປັນຄວາມຝັນຂອງເຂົາເອງ ເຂົາຫົວຄ່ອຍໆ ໃນຮູຄໍເມື່ອຮູ້ວ່າຄວາມຄິດທີ່ຖືກສະສົມໄວ້ຂ້າງໃນກໍາລັງພະຍາຍາມທີ່ຈະໜີອອກມາ.

ສີຣິຮູ້ສຶກສົດຊື່ນ ແລະອີ່ມເອີບໃຈແບບບອກບໍ່ຖືກ, ເຂົາດຶງສິ້ນຂ້າງຂອງມຸ້ງຂຶ້ນແລ້ວໝົ້ນອອກມາ ແລ້ວຈິ່ງເຫັນແມງໄມ້ນ້ອຍໆ ເກາະຕິດຢູ່ ພ້ອມດີ່ມດໍາກັບການດູດ

ກິນເລືອດຢູ່ນີ້ວມືຂອງເຂົາຢ່າງອີ່ມໜຳສຳລານກ່ອນຈະບິນໜີອອກໄປທາງປະຕູປ່ອງຢ້ຽມ ເພື່ອຈະໄປໂອ້ອວດກັບເພື່ອນຝູງຂອງມັນ.

ສີຣິຄ້າງໝໍ້ເຕົ້າກາປະໄວ້, ແລ້ວດຶງເອົາຜ້າກັ້ງອັນຍັບຍູ່ໃຫ້ເປີດອອກເພື່ອປ່ອຍໃຫ້ແສງສະຫວ່າງທີ່ຢູ່ຂ້າງນອກເລັດລອດເຂົ້າມາທາງໃນ, ພ້ອມໃຊ້ມືຈັບເອົາວິທະຍຸທຣານຊິສເຕີໄປທີ່ໂຕະກາເຟ. ມັນເປັນຕັນຫາ ຫຼືຕາບາບຢ່າງໜຶ່ງແຕ່ມັນກໍເປັນຕັນຫາ ຫຼືຕາບາບທີ່ສາມາດສ້າງຄວາມສຸກໃຫ້ກັບເຂົາໄດ້.

ສຽງຈາກລາຍການສະຖານີວິທະຍຸແຫ່ງຊາດລາວ ໄດ້ດັງກ້ອງກັງວານອອກມາຈາກໂທລະໂຄ່ງຊຸມຊົນ ກ່ອນກະຈາຍໄປທົ່ວຕົວເມືອງ ໂດຍເລີ່ມແຕ່ຫ້າໂມງເຊົ້າ ເຊິ່ງກໍໂຊກດີສະເພາະກັບປະຊາຊົນບາງກຸ່ມທີ່ຕ້ອງອາໄສສຽງປ່າວປະກາດນີ້ເປັນໂມງປຸກເພື່ອຈະໄດ້ຕື່ນນອນໃນຕອນເຊົ້າ ພ້ອມຟັງຂ່າວກ່ຽວກັບສະຖິຕິຜົນການເກັບກ່ຽວເຂົ້າຂອງກຸ່ມສະຫະກອນແຫ່ງຊາດທີ່ສະທ້ອນສຽງຜ່ານໜ້າປະຕູປ່ອງຢ້ຽມຂອງພວກເຂົາ ຂະນະທີ່ເຮືອນຫຼັງອື່ນໆ ກໍໄດ້ຍິນຂ່າວປະກາດໂປ້ງໆ ເປັນສຽງເຕືອນວ່າ ການໂຮຍເກືອຕາມຂອບໜານຜັກສາມາດກຳຈັດທາກໃຫ້ໜີຫ່າງຈາກສວນຜັກຂອງພວກເຂົາໄດ້.

ແຕ່ວ່າສີຣິຊ້ຳພັດຮູ້ສຶກສະບາຍຈິດສະບາຍໃຈ ກັບການທີ່ໄດ້ໃຊ້ເວລາຢູ່ໃນໂລກສ່ວນຕົວຂອງຕົນ ເຊິ່ງຕັ້ງຢູ່ຫ່າງໄກພໍສົມຄວນທີ່ຈະໄດ້ຍິນສຽງຂໍ້ຄວາມຈາກໂທລະໂຄ່ງຊຸມຊົນໜ່ວຍນັ້ນ ເຂົາຟັງຂ່າວຈາກວິທະຍຸທຣານຊິສເຕີຄູ່ໃຈແທນ. ໂດຍຜ່ອນສຽງລົງຄ່ອຍໆ ພໍໄດ້ຍິນແຕ່ຜູ້ດຽວ ເຊິ່ງສາມາດປັບປຸ່ມໄປຟັງຂ່າວໂລກຈາກຊ່ອງທະຫານໄທເນື່ອງຈາກໃນບໍ່ດົນມານີ້ ວິທະຍຸແຫ່ງຊາດລາວໄດ້ມີການນຳສະເໜີຂ່າວໂລກໜ້ອຍລົງ.

ຕາມທຳມະດາແລ້ວ, ວິທະຍຸ ແລະໂທລະພາບຂອງໄທ ແມ່ນຖືກສັ່ງຫ້າມສຳລັບປະເທດລາວໃນສະໄໝນັ້ນ. ອາດບໍ່ເຖິງຂັ້ນຖືກຈັບກຸມຄຸມຂັງເມື່ອໄດ້ເບິ່ງໄດ້ຟັງ ແຕ່ໜ່ວຍງານປ້ອງກັນຄວາມສະຫງົບຂັ້ນເມືອງພຸ້ນແຫຼະ ຈະມາເຄາະປະຕູເຕັ້ງຕ້າງ ແລ້ວກໍຮ້ອງດັງໆ ເພື່ອໃຫ້ບ້ານໃກ້ຄຽງໄດ້ຍິນນຳວ່າ, “ສະຫາຍ, ບໍ່ເຂົ້າໃຈບໍວ່າການຟັງຂ່າວໂຄສະນາຊວນເຊື່ອແບບຜິດໆ ນັ້ນ ມັນພຽງແຕ່ຈະເກັ່ຍກ່ອມສະໝອງຂອງຕົນໃຫ້ຫຼົງເຊື່ອຊື່ໆ? ສິ່ງທີ່ພວກເຮົາມີຢູ່ມັນຍັງບໍ່ພຽງພໍຊັ້ນບໍ? ເປັນຫຍັງພວກເຮົາຈິ່ງປ່ອຍໃຫ້ພວກໝູ່ຕ່າງຊາດເພິ່ງພໍໃຈທີ່ພວກເຮົາໄປຟັງຂ່າວບິດເບືອນຂອງພວກມັນ?”

ຕອນນັ້ນແຫຼະຊື່ຂອງເຈົ້າຈະຖືກເພີ່ມເຂົ້າໃນລາຍຊື່ບຸກຄົນອັນຕະລາຍອັນດັບສີ່ ແລະຕາມຫຼັກການແລ້ວ ແມ່ນແຕ່ເພື່ອນຮ່ວມງານຂອງເຈົ້າກໍຍັງໝົດຄວາມເຊື່ອໝັ້ນໃນຕົວເຈົ້າໄປນຳ ເທົ່າທີ່ສີຣິສັງເກດເຫັນຄຳປະກາດນີ້ປະສົບຜົນສຳເລັດຢ່າງດຽວນັ້ນກໍຄື ການພັດພາກເອົາຄວາມບັນເທີງອັນຄຶກຄື້ນອອກໄປຈາກຈິດໃຈຂອງປະຊາຊົນລາວບາງສ່ວນ.

ຄົນໄທຈຳນວນໜຶ່ງ ຮູ້ສຶກແປກໃຈທີ່ປະເທດເພື່ອນບ້ານຂອງພວກຕົນໄດ້ກາຍເປັນປະເທດຄອມມູຍນິດໄປແລ້ວ. ແລະມັນກໍບໍ່ໄດ້ຜິດກັບກອງທັບໄທທີ່ອ່ອນໄຫວໃນເລື່ອງນີ້. ສີຣິ ມັກຟັງຂ່າວອອກອາກາດຂອງພວກເຂົາ ທັງເຊື່ອໝັ້ນຢ່າງເຕັມປ່ຽມວ່າ ຖ້າກົມການເມືອງສູນກາງພັກອະນຸຍາດໃຫ້ເຂົ້າເຖິງວິທະຍຸແຫ່ງປະເທດໄທໄດ້ຢ່າງເສລີ ປະຊາຊົນຈະຕັດສິນໃຈເອງວ່າຄວນຈະຢູ່ຂ້າງລະບອບການປົກຄອງໃດ.

ເຂົາໄດ້ຟັງຄຳເຫັນຂອງຜູ້ຊ່ຽວຊານກ່ຽວກັບລັດທິນິຍົມມາແຕ່ດຶກດຳບັນເລື່ອງການໃຊ້ເມຍຮ່ວມກັນຂອງອ້າຍນ້ອງຮ່ວມອຸທອນ ເຊິ່ງເປັນສິ່ງເສື່ອມເສຍທີ່ເຮັດໃຫ້ເກີດຄວາມສັບສົນໃນສັງຄົມກັບຄຳທີ່ວ່າ "ຫຼີກລ່ຽງການຮ່ວມປະເວນີລະຫວ່າງພີ່ນ້ອງຮ່ວມສາຍເລືອດ" ເຊິ່ງເຂົາກໍແປກໃຈວ່າ ເຫດໃດພັກຄອມມູຍນິດຈຶ່ງມີເດັກນ້ອຍສອງຫົວເກີດມາເປັນຈຳນວນຫຼາຍ, ແຕ່ວ່າວິທະຍຸແຫ່ງປະເທດໄທຊ້ຳພັດມີຕົວເລກທີ່ຊັດເຈນເພື່ອພິສູດເລື່ອງນີ້.

ຕອນເຊົ້າວັນເສົາຊ່າງເປັນວັນທີ່ສີຣິປະທັບໃຈຫຼາຍກວ່າວັນອື່ນໆ ເນື່ອງຈາກເປັນວັນທີ່ປະຊາຊົນລາວຈັບກຸ່ມກັນນັ່ງອ້ອມວິທະຍຸຂອງພວກຕົນໃນວັນພັກທ້າຍອາທິດພ້ອມຟັງຂ່າວໂຄສະນາຊວນເຊື່ອດ້ວຍຄວາມຢາກຮູ້ຢາກເຫັນ. ແຕ່ມື້ນີ້ສີຣິຊ້ຳພັດຮູ້ສຶກວຸ້ນວາຍໃຈ ເຂົາຮອດບໍ່ຄິດຈະເປີດວິທະຍຸຟັງເລີຍ. ເຂົາຈັບເອົາຂວດກາເຟຫວຽດນາມສີນ້ຳຕານຂະໜາດໃຫຍ່ໄປທີ່ໂຕະ ກ່ອນປ້າຍກົ້ນລົງໃສ່ຕັ່ງທີ່ເຄີຍນັ່ງປະຈຳ ພ້ອມສູດດົມເອົາກິ່ນຫອມອັນຊວນຊີມຂອງນ້ຳກາເຟ ເຊິ່ງກິ່ນຫອມຂອງມັນຍົ້ວ ຍວນໃຈຫຼາຍກວ່າຕອນດື່ມລົງຄໍຊ້ຳອີກ.

**********

ສີຣິຈັບເອົາຈອກທີ່ມີນ້ຳກາເຟຂຶ້ນມາຈິບໃສ່ປາກ ແຕ່ກໍຕ້ອງຢຸດສະຫງັກ ເມື່ອແສງທີ່ສາດສ່ອງຜ່ານປະຕູປ່ອງຢ້ຽມ ໄດ້ສະທ້ອນໃຫ້ເຫັນບາງສິ່ງກະທົບໃສ່ເທິງພື້ນຜິວຂອງໂຕະກາເຟທີ່ເຮັດດ້ວຍຂີ້ກົ່ວຢູ່ຕໍ່ໜ້າເຂົາ. ມັນແມ່ນວົງກົມຮອຍປຽກຂອງ ນ້ຳທີ່ຊຶມອອກມາຜ່ານທາງກົ້ນຈອກ. ເຖິງແມ່ນວ່າວົງກົມນີ້ຈະບໍ່ແມ່ນເລື່ອງແປກປະ ຫຼາດກໍຕາມ ແຕ່ວ່າເຊົ້າມື້ນັ້ນສີຣິຍັງບໍ່ໄດ້ວາງຫຍັງໄວ້ເທິງໂຕະ. ຈອກກາເຟຂອງເຂົາຍັງແຫ້ງດີ ແລະມັນກໍບໍ່ໄດ້ຟົ້ງ ຫຼືລົ້ນອອກແຕ່ຢ່າງໃດ ແລະໃນສະພາບອາ ກາດຂອງເມືອງວຽງຈັນຕອນນີ້ແລ້ວ ແນ່ນອນຄວາມປຽກຊຸ່ມນີ້ມັນອາດຈະບໍ່ຕົກຄ້າງ ຫຼືຫຼົງເຫຼືອມາຈາກຄ່ຳຄືນທີ່ຜ່ານມາແນ່ນອນ.

ເຂົາທັງດື່ມກາເຟ ທັງສົ່ງສາຍຕາໄປທີ່ວົງແຫວນຂອງຮອຍນ້ຳຢ່າງໃຈຈົດຈໍ່, ຄ້າຍຄືວ່າກຳລັງລໍຄອຍຄຳຕອບທີ່ຈະໄດ້ຮັບຈາກຫ້ວງນຶກຂອງຕົນ. ເຂົາເງີຍໜ້າຂຶ້ນເບິ່ງ

ຕັ່ງອີ້ທີ່ແຝງຊ້ອນເອົາເງົາໃດໜຶ່ງທີ່ເຄີຍຫຼອກຫຼອນເຂົາໃນຍາມເຊົ້າ, ຈາກນັ້ນກໍຫັນໜ້າກັບມາເບິ່ງທີ່ໂຕະຄືເກົ່າ. ຖ້າຫາກເຂົາຕ້ອງການຢາກບອກວ່າມັນເປັນເລື່ອງຜິດປົກກະຕິ, ກໍສາມາດບອກໄດ້ເລີຍວ່າວົງແຫວນນັ້ນແມ່ນຮອຍຕັ້ງແກ້ວເຫຼົ້າຂອງຊາຍຂັບເຮືອຫາງຍາວ. ເຂົາຫັນໄປທີ່ຊັ້ນວາງເຄື່ອງເທິງຝາດ້ານຫຼັງ ແລ້ວໃຊ້ມືຈີກເອົາເຈ້ຍທິດຊູອອກຈາກມ້ວນກະດາດໜຶ່ງແຜ່ນ.

ແຕ່ພໍເມື່ອຫັນກັບຄືນໄປທີ່ໂຕະປາກົດວ່າວົງແຫວນນໍ້ານັ້ນໄດ້ຫາຍໄປແລ້ວ.

ໃນວັນພັກທ້າຍສັບປະດາ ຄວາມແປກປະຫຼາດນັ້ນໄດ້ປຸກກະແສຈິດຂອງເຂົາໃຫ້ແຕກຕື່ນເປັນຄັ້ງທີສອງ ເຊິ່ງມັນບໍ່ແມ່ນຄວາມລຶກລັບທາງໄສຍະສາດແຕ່ຢ່າງໃດ. ນາງວົງ, ພະນັກງານຈາກກົມສາມັນສຶກສາ ເຊິ່ງມີນິດໄສບໍ່ມັກເຄາະປະຕູຈົນກວ່ານາງຈະຍ່າງຜ່ານຫ້ອງເຂົ້າໄປ. ນາງມັກຈະພົບກັບສີຣິ ທັງໃນເວລາທີ່ກຳລັງນຸ່ງເຄື່ອງ ຫຼືແກ້ເຄື່ອງອອກ ແຕ່ນາງມັກຈະສັກສາຍຕາຈ້ອງມອງເບິ່ງສີຣິ ຄ້າຍກັບວ່າມັນເປັນຄວາມຜິດຂອງລາວ. ຖ້າຫາກສີຣິເຮັດແບບດຽວກັນໃນຫ້ອງພັກຂອງນາງແລ້ວ, ມີຫວັງທີ່ເຂົາຈະຕ້ອງໄດ້ຮັບໜັງສືໝາຍຮຽກຈາກສານແນ່ນອນ.

ແຕ່ຕອນເຊົ້າຂອງວັນອາທິດນີ້, ຕອນທີ່ນາງເຂົ້າໄປໃນຫ້ອງນັ້ນ ສີຣິຍັງຄົງນອນຫຼັບສະບາຍ ສະນັ້ນເຂົາຈຶ່ງຮູ້ວ່າມັນຍັງເຊົ້າຢູ່. ກິ່ນທູບທີ່ປິ່ວວ່ອນມາແຕ່ທາງຕ້າຍວັດໄດ້ຖືກສາຍລົມພັດເຂົ້າມາຈົນເຕັມຫ້ອງ, ແຕ່ໄກ່ຜູ້ໂອກຫຼາຍໂຕຄົງຈະຍັງນອນຫຼັບໄຫຼພ້ອມຝັນຫວານວ່າພວກຕົນກຳລັງບິນຜ່ານພູເຂົາ ແລະທະເລສາບຢ່າງເພີດເພີນໃຈ.

“ຕື່ນໆ! ພໍ່ເຖົ້າຂີ້ຄ້ານແອວຍາວ ຮອດຍາມຕື່ນໄດ້ແລ້ວ.”

ເນື່ອງຈາກນາງບໍ່ມີລູກເປັນຂອງຕົນເອງ ແມ່ຍິງທີ່ໜ້າລຳຄານຜູ້ນີ້ຈຶ່ງສະແດງຕົນເປັນແມ່ສຳລັບທຸກຄົນພາຍໃນເຮືອນ. ນາງເບັດໜ້າໄປທີ່ຜ້າກັ້ງຜືນດຽວທີ່ມີແລ້ວດຶງມັນໃຫ້ເປີດອອກຢ່າງແຮງ. ແສງສະຫວ່າງບໍ່ໄດ້ສາດສ່ອງເຂົ້າມາແຕ່ສ່ອງແສງພໍເປັນສະຫຼົວ. ມັນຍັງເປັນຍາມເຊົ້າມືດອີ່ຫຼື. ນາງຢືນເປ່ງເປະພ້ອມເອົາມືທັງສອງຂ້າງຄໍ້າແອວທາງປາກກໍເປັ່ງສຽງອອກມາວ່າ: “ພວກເຮົາມີວຽກຕ້ອງໄດ້ຊຸດຄອງຊິນລະປະທານເດີ.”

ສີຣິຈົ່ມຄວນຄາງໃນໃຈ ມັນເກີດຫຍັງຂຶ້ນກັບວັນພັກທ້າຍອາທິດ? ມັນແມ່ນເວລາວ່າງ, ທັງເປັນວັນພັກບໍ່ແມ່ນຫວາ? ເຂົາໄດ້ເຮັດວຽກເຕັມເວລາໃນທຸກໆ ເຊົ້າຂອງມື້ວັນເສົາກ່ອນຈະເລີຍກາຍໄປຈົນໝົດມື້ ແລະມາບ່ອນນີ້ພວກເຂົາຊໍ້າພັດມາລັກເອົາວັນອາທິດຂອງເຂົາໄປອີກ. ສີຣິພະຍາຍາມຫຼີ່ຕາຂ້າງໜຶ່ງໃຫ້ເປີດອອກ.

ນາງວົງໃນຊຸດໂສ້ງຜ້າເນື້ອໜາອ່ອນມີລີ້ວ ສຳລັບນຸ່ງອອກແຮງງານ ແລະເສື້ອເຊີດແຂນຍາວຕິດກະດຸມຈຳຮອດຄໍ ແລະແຂນສອງຂ້າງ. ນາງຈັດແຈງຜົມອັນບອບບາງ

ຂອງຕົນດ້ວຍການຖັກເປຍເປັນຄືຫາງມ້າ ແລະເຕືອນໃຫ້ສີຣິລະນຶກເຖິງພາບຂອງຊາວນາຈີນໃນແຜ່ນໂພສເຕີຂອງເໝົາ. ຕາມທຳມະດາແລ້ວ, ໂຄສະນາຊວນເຊື່ອຂອງຈີນແມ່ນມີລັກສະນະໜ້າຕາທີ່ບໍ່ເປັນທຳມະຊາດພໍປານໃດ ເຊິ່ງກໍບໍ່ຕ່າງຫຍັງກັບນາງວິງ. ອັນເປັນເຫດເຮັດໃຫ້ເບິ່ງຄືວ່ານາງກຳລັງຢູ່ໃນຊ່ວງໄວອາຍຸລະຫວ່າງສາມສິບກັບຫົກສິບ ແລະຫຸ່ນຂອງນາງກໍບໍ່ຕ່າງຫຍັງກັບເດັກນ້ອຍຜູ້ຊາຍທີ່ຂາດສານອາຫານ.

"ຊິມາວິນວາຍເອົາວິມານຫຍັງແຕ່ເຊົ້າແນວນີ້ເກາະ? ປ່ອຍຂ້ອຍຢູ່ຄົນດຽວເທາະ."

"ຂ້ອຍບໍ່ໄດ້ວິນວາຍໃຜ. ແຕ່ເດືອນແລ້ວນີ້ ເຈົ້າຕັ້ງໃຈອູ້ງານທາສີຊຸມຊົນຂອງສູນກາງຊາວໜຸ່ມ. ເທື່ອນີ້ຂ້ອຍຈະບໍ່ປ່ອຍໃຫ້ເຈົ້າພາດໂອກາດມາຂຸດຄອງຊົນ ລະປະທານແນ່ນອນ."

ການເຮັດວຽກບໍລິການຊຸມຊົນໃນຕົວເມືອງວຽງຈັນບໍ່ແມ່ນການລົງໂທດແຕ່ຢ່າງໃດມັນຖືເປັນລາງວັນຕອບແທນສຳລັບການເປັນພົນລະເມືອງທີ່ດີ. ເປັນຂອງຂວັນທີ່ທາງການໄດ້ມອບໃຫ້ແກ່ປະຊາຊົນ. ພວກເຂົາຕ້ອງການໃຫ້ທຸກຄົນບໍ່ວ່າຈະເປັນຊາຍ, ຍິງ, ຫຼືແມ່ນແຕ່ເດັກນ້ອຍ ຕ້ອງມີຄວາມອີ່ມເອີບໃຈ ແລະພາກພູມໃຈທີ່ໄດ້ປະກອບສ່ວນໃນການປັບປຸງສະພາບຖະໜົນຫົນທາງ ຫຼືຂຸດຄອງຮ່ອງນ້ຳ. ລັດຖະບານຮູ້ວ່າປະຊາຊົນຍິນດີທີ່ຈະສະຫຼະວັນພັກຂອງຕົນພຽງວັນດຽວຂອງພວກເຂົາເພື່ອຜົນຕອບແທນເຫຼົ່ານີ້.

"ຂ້ອຍເປັນຫວັດ," ສີຣິເວົ້າພ້ອມກັບດຶງຜ້າຫົ່ມຂຶ້ນຄຸມຫົວເອົາໄວ້. ສຽງກຸກກິກຂອງນ້ຳປະທະໃສ່ກັບໝໍ້ກາຕົ້ມນ້ຳບວກກັບສຽງຕິດໄຟໃສ່ເທິງເຕົາແກັດໄດ້ກະທົບເຂົ້າໃສ່ໂສດປະສາດຫູຂອງສີຣິ. ເຂົາຮູ້ສຶກເຖິງແຮງສຳຜັດ ພ້ອມກັບສຽງຄ້ອບແຄັບຂອງມຸ້ງທີ່ຜູກຕິດກັບຂອບແຈຝາ. ເຂົາໄດ້ຍິນສຽງຄືກັບມີຝອຍຖູໄຖໄປມາຕາມພື້ນເຮືອນ.

"ຊັ້ນແຫຼະຂ້ອຍຈິ່ງປຸງຊາບຳລຸງປະສົມນ້ຳໝາກນາວໃຫ້ເຈົ້າ."

"ຂ້ອຍບໍ່ມັກຊາ."

"ບໍ່, ເຈົ້າຕ້ອງດື່ມ."

ສີຣິຫົວຂຶ້ນ. "ຂ້ອຍຄິດວ່າອາຍຸຂ້ອຍກໍໄດ້ເຈັດສິບສອງປີແລ້ວ ທັງຮູ້ດີວ່າບໍ່ມັກຫຍັງແລະບໍ່ຢາກເຮັດຫຍັງ."

"ເຈົ້າຕ້ອງບຳລຸງຮ່າງກາຍເພື່ອກຽມພ້ອມສຳລັບການຂຸດຫັ້ນເດ."

"ແລ້ວພວກນັກໂທດໃນຄຸກທຸກຄົນເດລະ? ພວກເຂົາຄືວ່າເຄີຍເຮັດວຽກເຫຼົ່ານີ້ຢູ່. ບໍ່ວ່າຈະເປັນຂຸດຄອງ, ຫຼືຖອດທໍ່ລະບາຍນ້ຳກໍເຮັດໄດ້ໝົດ."

"ທ່ານໝໍສີຣິ, ຂ້ອຍຄືມາປະຫຼາດໃຈກັບເຈົ້າແທ້. ບາງເທື່ອຂ້ອຍກໍສົງໄສວ່າເຈົ້າໄດ້ຕໍ່ສູ້ເພື່ອຊາດແທ້ຈິງ ຫຼືບໍ່. ມັນບໍ່ມີຂໍ້ອ້າງໃດເລີຍທີ່ຈະໃຫ້ພວກບໍ່ມີການສຶກສາ ຫຼືບໍ່ມີ

ຄວາມຮູ້ມາເຮັດວຽກຕ່ຳໆ ຂອງພວກເຮົາອີກແລ້ວ. ພວກເຮົາທຸກຄົນສາ ມາດຍົກຊວ້ານ ແລະຍົກຂວານໄດ້ເອງແບບສະບາຍ.”

“... ແລະຜ່າຕັດໂລກມະເຮັງໃນຕັບ,” ເຂົາຈົ່ມພຶມພຳຢູ່ໃຕ້ຜ້າຫົ່ມ.

“ພວກອາຊະຍາກອນທີ່ປະພຶດຜິດທຸກຄົນໄດ້ຖືກສົ່ງຕົວໄປສຳມະນາຢູ່ດອນພຸ້ນໝົດແລ້ວ ເຈົ້າກໍໜ້າຈະຮູ້ດີຕິເບາະ. ແຕ່ຕອນນີ້ເຈົ້າຈະລຸກຂຶ້ນມາດີໆ ຫຼືຈະໃຫ້ຂ້ອຍລາກເຈົ້າອອກມາ?”

ສິຣິຕັດສິນໃຈທີ່ຈະແກ້ເຂັດນາງສຳລັບການສະແດງຕົວແບບຄົນບໍ່ມີສຳມາຄາລະວະ.

“ຢ່າຟ້າວ! ຂ້ອຍລຸກເອງກໍໄດ້ ແຕ່ຂ້ອຍຢາກບອກເຈົ້າຢ່າງໜຶ່ງ ຂ້ອຍຍັງປະໂປ້ຢູ່ ແລະນ້ອງຊາຍຂອງຂ້ອຍກໍມັກແຂງຕົວໃນຍາມເຊົ້າ. ມັນບໍ່ກ່ຽວກັບເລື່ອງຄວາມຢາກມີພິດສະຫວາດອີ່ຫຍັງດອກ ເຈົ້າຄົງຈະເຂົ້າໃຈຕິເນາະ. ມັນເກີດປະຕິ ກິລິຍາຈາກແຮງດັນທີ່ ...”

ທັນໃດນັ້ນກໍໄດ້ຍິນສຽງຄຶກຄັກເບົາໆ ແລະສຽງດີດຕົວຂອງແຜ່ນກະດານ ຫຼວມໆຢູ່ລະບຽງໜ້າຫ້ອງ. ເຂົາເປີດຜ້າຫົ່ມອອກຈາກຫົວພ້ອມກວາດສາຍຕາໄປທົ່ວຫ້ອງກໍພົບກັບຄວາມວ່າງເປົ່າໂດຍບໍ່ມີໃຜຢູ່ເລີຍ.

ເມື່ອຍ່າງລົງໄປຮອດຊັ້ນລຸ່ມ ສິຣິກໍເຫັນລົດບັນທຸກສອງຄັນຈອດຖ້າຢູ່ ພາຍໃນລົດຄັນນັ້ນເຕັມໄປດ້ວຍພວກເພື່ອນບ້ານ ທີ່ກຳລັງນັ່ງເຫງົານອນແບບງຽບຂຶມງຸນງົງແທນທີ່ຈະສະແດງອອກດ້ວຍຄວາມປິ້ມປິຕິຍິນດີ. ເຂດ ໔໙ ຊີ ເຊິ່ງເປັນເຂດສຳລັບການສົ່ງແຮງງານໄປຂຸດຄອງຊົນລະປະທານໃນພື້ນທີ່ ໑໘໙. ການເຮັດວຽກໄດ້ໃຊ້ເວລາລ່ວງເລີຍໄປຈົນໝົດມື້ ແຕ່ຜູ້ອອກແຮງງານໃນມື້ນັ້ນກໍໄດ້ຮັບຄ່າແຮງລ້ຽງດູແບບບໍ່ເສຍຄ່າເປັນເຂົ້າໜຽວກັບປາເຄັມແຖມລວກຜັກຕຳນິນສຳລັບອາຫານທ່ຽງ.

ສິຣິພິກຕົວອອກຫ່າງຈາກຊາລູບ ເຊິ່ງກຳລັງໂດດເຂົ້າມາແບບຫງອຍເຫງົາ ແລ້ວປີນຂຶ້ນໄປທາງທ້າຍລົດບັນທຸກ. ເຂົາແນມເຫັນນາງວົງນັ່ງຢູ່ທາງໜ້າໂດຍມີອີກຄົນນັ່ງຂັ້ນກາງ ເຊິ່ງນາງກຳລັງສຶກສາອົບຮົມສອງຜົວເມຍທີ່ອາໄສຢູ່ຫ້ອງກົງກັນຂ້າມກັບສິຣິ. ເມື່ອຂະບວນລົດເລີ່ມເຄື່ອນທີ່ສິຣິກໍສ່າຍໜ້າ ພ້ອມໂອ້ລົມຢອກໄຍກັບພວກເພື່ອນບ້ານ. ພວກເຂົາກໍຕອບຮັບ ທັງເວົ້າຢອກໂຕ້ຕອບກັບຢ່າງເມົາມັນ. ແຕ່ອາລົມຄວາມຮູ້ສຶກດີໆເຫຼົ່ານີ້ບໍ່ໄດ້ສະແດງອອກເຖິງຄວາມຈິງໃຈຕໍ່ກັນແຕ່ຢ່າງໃດເລີຍ.

ເຖິງແມ່ນຈະເຂົ້າຮ່ວມລະບອບຄອມມູຍນິດດ້ວຍເຫດຜົນໃດໜຶ່ງ ທີ່ບໍ່ສອດຄ່ອງກັບອຸດົມການຂອງຕົນກໍຕາມ, ສິຣິກໍເປັນສະມາຊິກພັກທີ່ດີມາຫຼາຍກວ່າ ໔໗ ປີ. ຖ້າຈະເວົ້າຄວາມຈິງແລ້ວ, ເຂົາກໍແມ່ນຜູ້ໜຶ່ງທີ່ບໍ່ເຫັນດີເຫັນພ້ອມປານໃດກັບແນວທາງຄອມມູຍນິດ. ເຂົາຈະເຊື່ອໝັ້ນໃນອຸດົມການທີ່ຂັດແຍ່ງກັນສອງປະການທີ່ເທົ່າທຽມກັນ

ໂດຍເຊື່ອວ່າລັດທິຄອມມູຍນິດ ແມ່ນເປັນວິທີດຽວທີ່ຈະເຮັດໃຫ້ມະນຸດມີຄວາມເພິ່ງພໍໃຈໃນສະພາບຄວາມເປັນຢູ່ຂອງຕົນຢ່າງແທ້ຈິງ; ແລະເຂົາຍັງເຊື່ອວ່າ ການຍຶດຖືຕາມຫຼັກປະຕິບັດຂອງລັດທິຄອມມູຍນິດແມ່ນບໍ່ສາມາດປະສົບຜົນສຳເລັດໄດ້ ເນື່ອງຈາກຈິດໃຈມະນຸດຍັງມີຄວາມເຫັນແກ່ຕົວເຊື່ອງຊ້ອນຢູ່. ເມື່ອສັງເກດຜົນຈາກວິໄສທັດຂອງສອງມູມມອງນີ້ໄດ້ຊີ້ໃຫ້ເຫັນວ່າ ມະນຸດບໍ່ສາມາດບັນລຸຈຸດທີ່ເອີ້ນວ່າຄວາມເພິ່ງພໍໃຈໄດ້. ຄວາມຂັດຂ້ອງໝອງໃຈຂອງນັກອຸດົມການທາງການເມືອງໃນປະຫວັດສາດໄດ້ພິສູດໃຫ້ເຫັນວ່າຄຳເວົ້າຂອງສີຣິນັ້ນຖືກຕ້ອງ.

ພາຍຫຼັງທີ່ໄດ້ດີ້ນຣົນເພື່ອນຳພາຕົນເອງໃຫ້ກ້າວຜ່ານລະບົບການສຶກສາອັນເຄັ່ງຄັດຈາກປະເທດຝຣັ່ງເສດເຊິ່ງເຕັມໄປດ້ວຍຂໍ້ຫ້າມອັນຫຼວງຫຼາຍພາຍມາກຕໍ່ຜູ້ຄົນທີ່ທຸກຍາກ, ໃນທີ່ສຸດສີຣິກໍພິສູດໃຫ້ເຫັນໄດ້ວ່າເດັກນ້ອຍບ້ານນອກແບບເຂົາກໍສາມາດເຮັດໃຫ້ຄວາມຝັນປະສົບຜົນສຳເລັດດ້ວຍຕົນເອງໄດ້ເຊັ່ນກັນ. ເຂົາໄດ້ພົບກັບຄົນຝຣັ່ງຜູ້ທີ່ມີຈິດໃຈເມດຕາປານີຄົນໜຶ່ງເຊິ່ງເປັນຜູ້ທີ່ສົ່ງເຂົາໄປປາຣີ. ຈາກນັ້ນເຂົາຈິ່ງໄດ້ກາຍເປັນນັກສຶກສາແພດສາດທີ່ມີຄວາມສາມາດແຕ່ບໍ່ເຖິງຂັ້ນເກັ່ງທີ່ສຸດ. ການດຳລົງຊີວິດໃນປະເທດຝຣັ່ງເສດບໍ່ໄດ້ງ່າຍຄືຄິດເອົາໄວ້ສຳລັບກຸ່ມຄົນທີ່ທຸກຍາກທີ່ມາຈາກນອກເຂດແດນຂອງປະເທດຝຣັ່ງເສດ ມັນເປັນການດີ້ນຣົນກັດແຂ້ວສູ້ເພື່ອຄວາມຢູ່ລອດຂອງເຂົາເອງ.

ແຕ່ສີຣິຄຸ້ນເຄີຍກັບການດີ້ນຣົນຕໍ່ສູ້ເພື່ອເອົາຕົວລອດມາແລ້ວໃນສອງປີທຳອິດໃນມະຫາວິທະຍາໄລອອງຊຽນໂດຍທີ່ບໍ່ມີຫຍັງມາກະທົບກະເທືອນກັບຈິດໃຈຂອງເຂົາແຕ່ຢ່າງໃດ, ເຂົາຢູ່ໃນກຸ່ມສາມສິບເປີເຊັນຂອງນັກສຶກສາທີ່ຮຽນເກັ່ງໃນຫ້ອງຮຽນ. ອາຈານສອນຂອງເຂົາເຫັນວ່າສີຣິມີອະນາຄົດໄກສຳລັບຄົນອາຊີ. ແຕ່ກໍບໍ່ຕ່າງຫຍັງກັບຜູ້ຊາຍຄົນດີໆ ທີ່ຄືກັນກັບເຂົາໃນຮຸ່ນກ່ອນໆ, ໃນບໍ່ດົນເຂົາກໍໄດ້ຄົ້ນພົບວ່າອ້ອມອົກຂອງແມ່ຍິງມີສັກກາຍະພາບສຳຄັນກວ່າສິ່ງອື່ນທັງປວງໃນໂລກນີ້.

ສີຣິມາຄົ້ນພົບຄຳຕອບຂອງຕົນເອງຕອນຮຽນວິຊາພະຍາດວິທະຍາໃນປີທີສາມ, ຈຸດສົນໃຈຂອງເຂົາບໍ່ໄດ້ເນັ້ນໄປທີ່ແຜ່ນກະດານດຳຂະໜາດມະຫຶມາທີ່ເຕັມໄປດ້ວຍແຜ່ນພາບຕິດຢູ່, ແຕ່ມັນພັດໄປກະທົບໃສ່ກັບເສື້ອກັນໜາວສະເວດເຕີຣ໌ຜືນໜຶ່ງທີ່ກຳລັງພຸ່ງຂຶ້ນພຸ່ງລົງແບບຊ້າໆ ຕາມຈັງຫວະການຫັນໃຈຂອງບົວ. ນາງແມ່ນນັກສຶກສາແພດລາວ ທີ່ມີຜິວໜ້າແດງເຮືອງເຮື່ອຄືກັບໝາກເຜັດສຸກ ເຊິ່ງນັ່ງຢູ່ໃກ້ທາງປ່ອງຢ້ຽມໂດຍບໍ່ສົນໃຈກັບສະພາບອາກາດແຕ່ຢ່າງໃດເລີຍ. ສີຣິພໍຈະເດົາອອກໄດ້ວ່າສະພາບອາກາດຢູ່ຂ້າງນອກຕອນນັ້ນໜາວເຢັນຫຼາຍໜ້ອຍພຽງໃດ. ຖ້າເປັນຊ່ວງຍາມຮ້ອນແລ້ວ, ເສື້ອສະເວດເຕີຣ໌ຜືນນັ້ນກໍຖືກແທນທີ່ດ້ວຍເສື້ອຜືນບາງໆ ທີ່ປົດກະດຸມລົງຕ່ຳເກີນຄວາມ

ຈຳເປັນພ້ອມພຸ່ງຂຶ້ນພຸ່ງລົງຊ້າໆ ຕາມຈັງຫວະຂອງການທັນໃຈ. ເຂົາສອບຜ່ານວິຊາພະຍາດວິທະຍາໄດ້ແບບຖູໄຖ ພ້ອມກັບຕົກລົງຢູ່ໃນກຸ່ມສີ່ສິບເປີເຊັນສຸດທ້າຍຂອງຊັ້ນຮຽນທັງໝົດ.

ພໍມາຮອດປີທີສີ່, ສິຣິແລະບົວກໍໄດ້ໝັ້ນໝາຍກັນພ້ອມຍ້າຍມາຢູ່ຫ້ອງ ນ້ອຍໆນຳກັນ, ສ່ວນຕຽງກໍຖືກເລື່ອຍໃຫ້ສັ້ນລົງເພື່ອໃຫ້ມີຊ່ອງວ່າງໃນຍາມເປີດປະຕູອອກ-ເຂົ້າໄດ້. ບົວເປັນຍິງສາວທີ່ມີສຸຂະພາບແຂງແຮງ, ສຳນຽງສຽງປາກຂອງນາງບົ່ງບອກໄດ້ວ່າແມ່ນລູກຫຼານຊາວຫຼວງພະບາງ ເຊິ່ງເປັນເມືອງຫຼວງເກົ່າແກ່ຂອງປະເທດລາວ. ຄອບຄົວຂອງນາງມີສາຍເລືອດແຫ່ງຄວາມເທີດທູນບູຊາແກ່ເຈົ້າມະຫາກະສັດສືບທອດມາແຕ່ສະໄໝປູ່ຍ່າຕາຍາຍ ແຕ່ໃນຂະນະທີ່ພໍ່ແມ່ຂອງນາງກຳລັງຄູ້ເຂົ່າ ແລະກົ້ມຂາບທີ່ຕີນເຈົ້າຊີວິດ ພ້ອມໂຍນກັບດອກກ້ວຍໄມ້ໄປຕາມທາງທີ່ເຈົ້າຊີວິດເດີນຜ່ານ, ນາງຊໍ້າພັດຢູ່ໃນຫ້ອງຂອງຕົນພ້ອມຄົ້ນຄິດໃນການວາງແຜນເພື່ອລອບປົງພະຊົນ.

ນາງໄດ້ຮຽນຮູ້ກ່ຽວກັບພັກຄອມມູຍນິດຝຣັ່ງຈາກອະດີດຄົນຮັກເກົ່າຂອງນາງ ເຊິ່ງແມ່ນຊາຍໜຸ່ມຜູ້ມີຮ່າງກາຍຈ່ອຍຜອມທີ່ເປັນອາຈານສອນຈາກລີຍົງ. ໃນເມື່ອໂອກາດທຳອິດມາເຖິງ, ນາງຈິ່ງບໍ່ລໍຊ້າຟ້າວອອກເດີນທາງໄປຕາມເປົ້າໝາຍຂອງຕົນທັນທີ. ໃນຂະນະທີ່ສິຣິເດີນທາງມາທີ່ປາຣີພຽງເພື່ອຕ້ອງການຢາກເປັນທ່ານໝໍ, ບົວອາໄສການຮຽນພະຍາບານເປັນພຽງຂໍ້ອ້າງເພື່ອປົກປິດບາງສິ່ງຢ່າງເອົາໄວ້, ຄວາມຈິງແລ້ວນາງອາໄສຢູ່ປາຣີກໍພຽງເພື່ອຈະເປັນຄອມມູຍນິດທີ່ດີເທົ່າທີ່ນາງເຮັດໄດ້ ເພື່ອຈະໄດ້ກັບຄືນມາຊ່ວຍຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນໃນບ້ານເກີດຂອງນາງໃຫ້ຫຼຸດພົ້ນອອກຈາກການກົດຂີ່ຂູດຮີດ.

ນາງບອກກັບສິຣິແບບຈະແຈ້ງເລີຍວ່າຖ້າເຂົາຕ້ອງການນາງເປັນຄູ່ຊີວິດເຂົາຕ້ອງຍອມຮັບທຸງສີແດງແຫ່ງການປະຕິວັດນຳໄດ້. ຄວາມຈິງສິຣິກໍຢາກສ້າງຄອບ ຄົວກັບນາງແທ້ ພ້ອມຢາກໃຊ້ຊີວິດທີ່ເຫຼືອຢູ່ກັບນາງ, ລາວຈິ່ງເຫັນວ່າການສະຫຼະຊ່ວງເວລາຍາມແລງໃນສີ່ວັນຕໍ່ອາທິດ ພ້ອມກັບວັນອາທິດທີ່ແປກປະຫຼາດ, ແລະເງິນຫ້າຟຣັງຕໍ່ເດືອນ ຖືໄດ້ວ່າເປັນການລົງທຶນທີ່ຖືກຫຼາຍເປັນທົບເຄົ່າ. ໃນຕອນຕົ້ນ, ເຂົາຮູ້ສຶກບໍ່ສະບາຍໃຈພໍສົມຄວນກັບຄວາມຄິດໃນການເຂົ້າຮ່ວມກອງປະຊຸມວ່າດ້ວຍການສະໜັບສະໜູນເພື່ອໂຄ່ນລົ້ມລະບອບຈັກກະພັບທຶນນິຍົມອັນຍິ່ງໃຫຍ່. ເຂົາມັກເພງຂອງລະບອບຈັກກະພັບທຶນນິຍົມ ທັງຫວັງວ່າຈະໄດ້ເຕັ້ນໄປຕາມຈັງຫວະຂອງສຽງເພງໄດ້ຢ່າງເຕັມທີ່ເມື່ອມີໂອກາດ. ເຂົາເປັນຄົນທຸກຍາກອະນາຖາມາແຕ່ຄາວຍັງນ້ອຍ ເຊິ່ງເຂົາເອງກໍເຄີຍຕັ້ງຄວາມຫວັງໄວ້ວ່າ ການເປັນທ່ານໝໍຈະຊ່ວຍຍົກລະດັບສະພາບການດຳລົງຊີວິດຂອງຕົນໃຫ້ດີຂຶ້ນໄດ້. ແຕ່ໃນທີ່ສຸດກໍພົບກັບຄວາມຮູ້ສຶກຜິດທີ່ຄິດແບບນັ້ນ.

ດັ່ງນັ້ນລັດທິຄອມມູຍນິດ ກັບບົວຈິ່ງຮ່ວມມືກັນທຳລາຍຄວາມຝັນແລະຄວາມຫວັງຂອງສີຣິຈົນໝົດສິ້ນ. ຍ້ອນການຍອມຮັບເອົາຄູ່ໝັ້ນແລະທຸງແດງຂອງນາງເຂົ້າມາໃນອ້ອມແຂນ ເຂົາຄ່ອຍໆ ຖອຍຫ່າງອອກຈາກການຮຽນຮູ້ກ່ຽວກັບການຢາເທື່ອລະໜ້ອຍ. ໃນການສອບຜ່ານປີທີຫ້າ, ເຂົາຕ້ອງໄດ້ທຳການສອບເສັງຫຼາຍຄັ້ງກວ່າຈະຜ່ານ. ພໍມາເຖິງຊ່ວງໄລຍະຂອງການຝຶກງານ ກໍປາກົດເຫັນດາວສີດຳສອງດວງວາງໄວ້ດ້ານໜ້າຂອງແຟ້ມເອກະສານສ່ວນຕົວຂອງເຂົາ. ເຊິ່ງທາງໂຮງ ຮຽນໄດ້ລະບຸໄວ້ວ່າຖ້າຫາກເຂົາບໍ່ຢາກຖືກສົ່ງກັບດ້ວຍຖ້ຽວບິນແອໂຣໂປສຕານກ່ອນກຳນົດເວລາ ພ້ອມຈ່າຍຄ່າທຳນຽມໃຫ້ແກ່ຜູ້ສະໜັບສະໜູນຂອງຕົນ ເຂົາຕ້ອງໄດ້ທຸ້ມເທໃສ່ການຝຶກງານໃຫ້ໜັກເພື່ອກາຍເປັນຜູ້ຝຶກງານທີ່ດີເລີດ.

ໂຊກດີທີ່ສີຣິມີຄວາມເປັນທຳມະຊາດຂອງການເປັນທ່ານໝໍໃນຕົວຢູ່ແລ້ວ. ພວກຄົນເຈັບຈິ່ງຊື່ນຊົມເຂົາແລະພະນັກງານໃນໂຮງໝໍໂຮເທລດີເຍີຕ່າງກໍມັກນິດໄສຂອງເຂົາພໍສົມຄວນ ພວກເຂົາຈິ່ງຂໍໃຫ້ສີຣິພິຈາລະນາເພື່ອຈະໄດ້ຢູ່ຝຣັ່ງເສດຕໍ່ໄປອີກ ແລະເຮັດວຽກຢູ່ທີ່ນັ້ນແບບພະນັກງານເຕັມເວລາ ແຕ່ຫົວໃຈຂອງເຂົາຊ້ຳພັດຢູ່ກັບບົວແລ້ວພໍແຕ່ນາງເດີນທາງກັບຄືນບ້ານເກີດເມືອງນອນ ເພື່ອສານຕໍ່ອຸດົມການຂອງຕົນ ເຂົາຈິ່ງຕ້ອງເດີນທາງກັບນຳນາງພ້ອມຢູ່ຄຽງຂ້າງນາງມາຕະຫຼອດ.

ໃນມື້ວັນຈັນ, ສີຣິຍ່າງລົງໄປທີ່ແຄມຝັ່ງແມ່ນ້ຳຂອງ ແລະຢືນຢູ່ບ່ອນນັ້ນຂະນະໜຶ່ງ. ປີນັ້ນຝົນຕົກລົນແບບບໍ່ມີມື້ຢຸດຢ່ອນ, ແຕ່ເຂົາກໍຍັງໝັ້ນໃຈວ່າຝົນເຫຼົ່ານີ້ຈະເຊົາຕົກໃນອີກຫ້າເດືອນ. ມັນແມ່ນຊ່ວງຕອນເຊົ້າຂອງເດືອນພະຈິກ ແລະດວງຕາເວັນກໍຍັງບໍ່ທັນເປັ່ງແສງລັດສະໝີອັນແຮງກ້າອອກມາເພື່ອຈະເຮັດໃຫ້ນ້ຳຄ້າງເທິງຕົ້ນຫຍ້າທີ່ເກີດຕາມແຄມຝັ່ງແຫ້ງຫາຍໄປກັບແສງແດດໄດ້. ເຂົາປ່ອຍໃຫ້ຕີນທັງສອງລົງແຊ່ຢູ່ເທິງນ້ຳຄ້າງອັນເຢືອກເຢັນ ພ້ອມກົ້ມເບິ່ງເກີບຢາງຫຸ້ມສົ້ນທີ່ມີສີສັນເງົາງາມທີ່ພົກມອບໃຫ້ ທັງສົງໄສວ່າມັນຈະຢູ່ລອດຮອດຍາມຝົນປີໜ້າ ຫຼືບໍ່.

ເຂົາສືບຕໍ່ຍ່າງແບບບໍ່ຟ້າວບໍ່ຟັ່ງໄປຕາມຂອບຄັນຄູແຄມຝັ່ງ ພໍແຕ່ຕີນຂອງເຂົາໄປຕ້ອງກັບດອກຂີ້ກາເຊິ່ງລຳຕົ້ນຂອງມັນເກີດຂຶ້ນເອງຕາມທຳມະຊາດ ກິ່ນ ອ່ອນໆ ກໍພຸ່ງເຂົ້າໃສ່ຮູດັງທັນທີ. ຢູ່ໄກຈາກຕາຝັ່ງທາງພຸ້ນແມ່ນປະເທດເພື່ອນບ້ານທີ່ກຳລັງປິ່ນໜ້າມາຈ້ອງເບິ່ງເຂົາແບບບໍ່ເກງອົກເກງໃຈກັນຈັກດີ້, ເຮືອຂອງຄົນໄທຫຼາຍລຳໄດ້ລອຍລ່ອງຢູ່ເທິງໜ້ານ້ຳໃກ້ແຄມຝັ່ງເບື້ອງນັ້ນ. ສາຍນ້ຳເຊິ່ງຄັ້ງໜຶ່ງເຄີຍເປັນຊ່ອງທາງຂອງສອງຊາດ ບັດນີ້ຊ້ຳພັດກາຍເປັນອຸປະສັກຂວາງກັ້ນການໄປມາຫາສູ່ກັນລະຫວ່າງປະຊາຊົນສອງປະເທດໄປແລ້ວ.

ສີຣິປ້າຍກົ້ນລົງນັ່ງຢູ່ເທິງຕັ່ງມ້າອັນກະໂດກກະເດກຂ້າງທາງຕໍ່ໜ້າໂຮງໝໍມະໂຫສົດ

ພ້ອມກົ້ມກິນເຝີທີ່ຊື້ມາແຕ່ຮ້ານລໍ້. ບໍ່ມີຫຍັງສິດໃໝ່ແລະມີລົດຊາດແຊບຖືກໃຈ. ແຕ່ຍ້ອນພະຍາດໂລຄາທັງໝົດທີ່ໄດ້ຄຸກຄາມເຂົ້າສູ່ຮ່າງກາຍຂອງເຂົາໃນຊ່ວງຫຼາຍປີຜ່ານມາ ໄດ້ຝາກຄວາມຜິດປົກກະຕິໄວ້ໃຫ້ກັບສຸຂະພາບຂອງເຂົາ. ເຖິງແມ່ນເຂົາຈະສີດເຊື້ອໂລກແຊັລເມີເນັລລະເຂົ້າໄປໃນຮ່າງກາຍ ມັນກໍຈະຕ້ອງຜ່ານອອກໄປເອງໂດຍທີ່ບໍ່ມີປະຕິກິລິຍາຫຍັງເກີດຂຶ້ນ.

ບໍ່ມີຂໍ້ອ້າງຫຍັງເລີຍທີ່ຈະເປັນຕົວຖ່ວງເວລາໃຫ້ເຂົາມາຮອດບ່ອນເຮັດວຽກຊ້າ, ເຂົາຈິ່ງຍ່າງຜ່ານບັນດາຕຶກແຖວຍາວເປັນຮູບສີ່ຫຼ່ຽມນ້ອຍໆ ສອງສາມຫຼັງພ້ອມມຸ່ງໜ້າໄປທາງຫ້ອງການ. ໂຮງໝໍທີ່ຄົນຝຣັ່ງສ້າງຂຶ້ນກໍບໍ່ມີແບບ ຫຼືຄວາມສະຫງ່າງາມແຕ່ຢ່າງໃດ ໂດຍທົ່ວໄປແລ້ວມັນກໍບໍ່ຕ່າງຫຍັງກັບຄ້າຍທະຫານເກົ່າທີ່ສ້າງດ້ວຍຄອນກຣີດແຕ່ຖືກຖິ້ມຮ້າງນານຫຼາຍປີ. ເຂົາຢືນລັ່ງເລຢູ່ຕໍ່ໜ້າຕຶກຫ້ອງ ການຂອງຕົນຄາວໜຶ່ງ ກ່ອນຈະຖົກບາດຕີນກ້າວເຂົ້າໄປຂ້າງໃນ. ໂດຍມີປ້າຍຕິດຢູ່ໜ້າປະຕູທາງເຂົ້າຂຽນເປັນພາສາຝຣັ່ງວ່າ "ຫ້ອງເກັບສົບ". ແລະສ່ວນແຜ່ນຜ້າຖັດລົງມາທາງລຸ່ມແມ່ນຕົວອັກສອນທີ່ເຂົາຄິດຂຶ້ນເອງເຊິ່ງຂຽນໄວ້ເປັນພາສາອັງກິດວ່າ "ຍິນດີຕ້ອນຮັບ".

ເຮືອນກໍ່ດິນຈີ່ຫຼັງນີ້ມີພຽງສອງຫ້ອງເທົ່ານັ້ນທີ່ໄດ້ຮັບແສງສະຫວ່າງຈາກທຳມະຊາດ. ອີກໜຶ່ງຫ້ອງແມ່ນບ່ອນເຮັດວຽກຂອງສີຣິທີ່ເຂົາໃຊ້ຮ່ວມກັນກັບພະນັກ ງານສອງຄົນເຊິ່ງຜູ້ພິພາກສາແຫງເວົ້າເຢາະເຍີ້ຍແບບສຽດສີວ່າ ໜຶ່ງຄົນເຄິ່ງ.

"ສະບາຍດີຕອນເຊົ້າສະຫາຍ." ລາວເວົ້າພ້ອມຍ່າງເຂົ້າໄປໃນຫ້ອງຊີເມັນສີເທົາພ້ອມເລັ່ງບາດຕີນໄປທີ່ໂຕະເຮັດວຽກຂອງຕົນ.

ຕຸ້ຍເງີຍໜ້າຂຶ້ນຈາກວາລະສານດາຣາໄທພ້ອມແນມເບິ່ງລາວ.

"ສະບາຍດີທ່ານໝໍ." ນາງແມ່ນພະຍາບານສາວຫຸ່ນຈໍ່າມໍ່າຜູ້ທີ່ມີອາຍຸນ້ອຍ ໃບໜ້າຂອງນາງເບິ່ງສະອາດສະອ້ານແຕ່ກໍຂ້ອນຂ້າງບໍ່ລຽບນຽນ ນາງມີຮອຍຍິ້ມປະດັບໄວ້ເທິງຮີມສົບຕະຫຼອດເວລາ. ປະຕິກິລິຍາຂອງນາງແມ່ນຕ້ອງຍິ້ມໄວ້ກ່ອນບໍ່ວ່າຈະມີເລື່ອງໃດເກີດຂຶ້ນກໍຕາມ ແລະເທວະດາເທົ່ານັ້ນທີ່ຮູ້ວ່າໃນຊີວິດຂອງນາງອາດບໍ່ມີຫຍັງທີ່ຈະຕ້ອງເຮັດໃຫ້ນາງຍິ້ມອອກເລີຍ.

"ຂ້ອຍຄິດວ່າ ພະແນກຖະແຫຼງຂ່າວ ແລະວັດທະນະທຳຄົງຈະບໍ່ພໍໃຈເປັນແນ່ແທ້ຖ້າເຫັນເຈົ້າກຳລັງອ່ານເລື່ອງບິດເບືອນຂອງພວກນາຍທຶນຊຸມນັ້ນ."

ນາງຍິ້ມຕອບຮັບຄຳຕຳນິຂອງທ່ານໝໍແບບຝືນໃຈ. "ຂ້ອຍພຽງແຕ່ຢາກເຕືອນໃຈຕົວເອງວ່າ ລະບອບທຶນນິຍົມນັ້ນເປັນເລື່ອງທີ່ໜ້າລັງກຽດແນວໃດເທົ່ານັ້ນດອກທ່ານໝໍ." ນາງຍົກຮູບພິມສາມສີອັນຂ້ອນຂ້າງລາມົກຂອງນັກສະແດງໂທລະ ພາບທີ່ນຸ່ງກະໂປ່ງສັ້ນໆ ຂຶ້ນ. "ຄັນຊັ້ນທ່ານໝໍເຫັນຂ້ອຍນຸ່ງເຄື່ອງແບບນີ້ຊັ້ນຫວາ?"

ສິຣິຍິ້ມໃຫ້ຕົນເອງພ້ອມເຮັດຄິ້ວສິ້ນຂຶ້ນ ພໍເມື່ອສາຍຕາຂອງລາວໄປສະດຸດກັບຮ່າງຄົງຂອງຊາຍຄົນໜຶ່ງທີ່ສ່າຍຕົວໂຍກເຍກໄປມາຢູ່ໃນຫ້ອງເຮັດວຽກ "ເອີ, ສະບາຍດີຕອນເຊົ້ານ້ອງກິ່ງ."

ຊາຍທີ່ສ່າຍຕົວໂຍກເຍກໄປມາເຜີຍຮອຍຍິ້ມກວ້າງອອກ ເມື່ອໄດ້ຍິນສຽງເອີ້ນຊື່ຂອງເຂົາພ້ອມເງີຍໜ້າຂຶ້ນ "ສະບາຍດີຕອນເຊົ້າ, ສະຫາຍທ່ານໝໍ. ມື້ ... ມື້ນີ້ຕ້ອງຮ້ອນແທ້ແຫຼະ." ເຂົາເວົ້າພ້ອມທັງງຶກຫົວຄືກັບເຫັນດີໃນຄວາມຄິດຂອງຕົນເອງ.

"ແມ່ນແລ້ວນ້ອງກິ່ງ. ຂ້ອຍເຊື່ອວ່າເຈົ້າເວົ້າຖືກ. ມື້ນີ້ພວກເຮົາມີລູກຄ້າບໍ່?"

ກິ່ງຫົວຂຶ້ນຢ່າງແຮງດັ່ງທີ່ເຂົາເຄີຍເຮັດເປັນປະຈຳ ເຊິ່ງຖືເປັນຄຳເວົ້າຫຼິ້ນຕະຫຼົກຂອງສິຣິ. "ບໍ່ມີລູກຄ້າຈັກຄົນເລີຍມື້ນີ້ສະຫາຍທ່ານໝໍ."

ຈັ່ງຊັ້ນແຫຼະ. ນີ້ຈຶ່ງແມ່ນທີມງານທີ່ສິຣິເປັນຄົນປັ້ນຂຶ້ນມາເອງກັບມື, ມັນເປັນໜ້າວຽກທີ່ເຂົາບໍ່ຢາກເຮັດຊ້ຳດອກ, ແຕ່ມັນກໍເປັນຊີວິດທີ່ເຂົາຍັງຄິດບໍ່ເຖິງຊ້ຳວ່າຈະໄດ້ເປັນຜູ້ນຳເຊັ່ນນີ້. ເກືອບໜຶ່ງປີແລ້ວທີ່ເຂົາເຂົ້າມາຮັບຕຳແໜ່ງຫົວໜ້າໜ່ວຍງານຊັນນະສູດສົບ ທັງເປັນໝໍຊັນນະສູດສົບພຽງໜຶ່ງດຽວຂອງປະເທດ. ໃນເບື້ອງຕົ້ນເຂົາເອງກໍຍອມຮັບວ່າ ຕົນຍັງຂາດຄຸນສົມບັດ ທັງຂາດຄວາມກະຕືລືລົ້ນກັບໜ້າວຽກທີ່ເຂົາຕັດສິນໃຈອ້າແຂນຮັບເອົາມັນມາເປັນໜ້າທີ່.

ໃນເດືອນທຳອິດຂອງການຝຶກອົບຮົມພາກປະຕິບັດຕົວຈິງ ສິຣິຄິດວ່າມັນເປັນເລື່ອງໄຮ້ສາລະ ເພາະກ່ອນທີ່ສິຣິຈະມາຮັບຕຳແໜ່ງຢູ່ທີ່ນັ້ນ ກໍເຄີຍມີທ່ານໝໍຊັນນະສູດສົບຄົນລາວຜູ້ໜຶ່ງທີ່ເຮັດວຽກນີ້ ແຕ່ທ່ານໝໍຄົນນັ້ນຊ້ຳພັດໂຕນຂ້າມຂອງໄປທາງຝັ່ງຊ້າຍດ້ວຍການໃຊ້ຢາງຕົນລົດເປັນຕົວຊ່ວຍ. ດັ່ງນັ້ນ, ຈຶ່ງບໍ່ມີໃຜເປັນຜູ້ແນະ ນຳນອກຈາກທ້າວກິ່ງ ໃນນາມຜູ້ຊ່ວຍທ່ານໝໍ ທັງເປັນຜູ້ທີ່ຮັບຮູ້ຂໍ້ມູນຈຳນວນມະຫາ ສານແຕ່ສາມາດປົກປິດເປັນຄວາມລັບໄດ້ດີ ຈຶ່ງພໍເຮັດໃຫ້ສິຣິເຂົ້າໃຈໜ້າວຽກໃໝ່ຂອງຕົນໄດ້ເລັກໜ້ອຍເຖິງຈະບໍ່ມີໃຜສິດສອນເຂົາກໍຕາມ. ສ່ວນຕຸ້ຍຊ້ຳພັດຫາກໍມາປະຈຳການຢູ່ທີ່ນັ້ນໄດ້ພຽງເດືອນດຽວ.

ສະນັ້ນ, ພໍເມື່ອເຂົາເຫັນດີທີ່ຈະເລື່ອນມື້ບຳນານຂອງຕົນອອກໄປແບບບໍ່ມີກຳນົດ, ເຂົາຈຶ່ງຕ້ອງໄດ້ເລີ່ມສຶກສາຮຽນຮູ້ດ້ານວິຊາສະເພາະຂອງຕົນຈາກປຶ້ມຕຳລາພາສາຝຣັ່ງທີ່ມີຮອຍເຜົາໄໝ້ຕາມຂອບປຶ້ມເລັກໜ້ອຍ. ເຂົານຳເອົາຂາຕັ້ງໂນດເພງເກົ່າແກ່ມາແຕ່ໂຮງຮຽນອາເມລິກາທີ່ຖືກປະປ່ອຍໃຫ້ກາຍເປັນໂຮງຮຽນຮ້າງໄປແລ້ວ ເພື່ອເອົາມາໃຊ້ເປັນແນວຄ້ຳໃນເວລາເປີດໜັງສືຕຳລາຕອນກຳລັງຫັ່ນສົບ ຫຼືຕັດບາງສ່ວນຂອງສົບຜູ້ທຳອິດ. ໂດຍການໃຊ້ຕາຂ້າງໜຶ່ງຫຼິ່ວໄປທາງຂາຕັ້ງໂນດເພງ, ສິຣິເຮັດຄືກັບວ່າເຈົ້າໜ້າທີ່ຊັນນະສູດສົບກຳລັງບັນເລງເພງໃຫ້ກັບອະໄວຍະວະພາຍໃນຂອງສົບຈັ່ງຊັ້ນແຫຼະ.

"ພິກຂຶ້ນ," ເຂົາຈະບອກແບບນີ້ ແລ້ວຕຸ້ຍກໍເປີດຕຳລາໄປໜ້າໃໝ່, ຖ້າຈະວ່າໄປແລ້ວ ສີຣິເຮັດວຽກຜ່ານຕົວເລກຄຳແນະນຳຂອງຊ່ຽວຊານພະຍາດວິທະຍາຊາວຝຣັ່ງໃນຊຸມປີ ໑໙໔໗.

ຫຼາຍປີຜ່ານມາ ເຂົາເຄີຍທຳການຜ່າຕັດໃຫ້ທະຫານຢູ່ສະໜາມຮົບຈົນນັບບໍ່ຖ້ວນ, ແຕ່ການດູແລຮັກສາຊີວິດກໍເປັນສາດຢ່າງໜຶ່ງທີ່ແຕກຕ່າງກັນຫຼາຍກັບການຊັນນະສູດສົບຂອງຜູ້ຕາຍ ເຊິ່ງມັນມີຂັ້ນຕອນທີ່ຈຳເປັນຕ້ອງໄດ້ປະຕິບັດຕາມ ໂດຍຜ່ານການຕິດຕາມສັງເກດໃນສິ່ງທີ່ຈຳເປັນຕ້ອງເຮັດ. ເຂົາເອງກໍບໍ່ໄດ້ຄາດຄິດມາກ່ອນວ່າຈະຕ້ອງໄດ້ມາຮຽນຮູ້ກັບອາຊີບໃໝ່ໃນໄວເຈັດສິບສອງປີແບບນີ້. ໃນຊ່ວງທຳອິດທີ່ເດີນທາງມາເຖິງເມືອງວຽງຈັນ ພ້ອມກັບໄຊຊະນະຂອງປະເທດລາວໃນວັນທີ ໒໓ ພະຈິກ ໑໙໗໕ ຈິດໃຈຂອງເຂົາປ່ຽມລົ້ນໄປດ້ວຍໜ້າວຽກບາງຢ່າງທີ່ເຂົາເພິ່ງພໍໃຈກັບມັນຫຼາຍກວ່າວຽກນີ້ອີກ.

ພາຍຫຼັງກອງປະຊຸມຄັ້ງປະຖົມມະລຶກຂອງພັກ ໃນວັນທີ ໕ ທັນວາ ເຊິ່ງຖືເປັນເຫດການສຳຄັນທາງປະຫວັດສາດທີ່ປ່ຽມລົ້ນໄປດ້ວຍຄວາມຫວັງທີ່ພຸ່ງສູງຂຶ້ນຖ້າທຽບໃສ່ຈະຫຼວດກໍບໍ່ປານ. ມີການສະເຫຼີມສະຫຼອງອັນຍິ່ງໃຫຍ່ດ້ວຍການດື່ມເຫຼົ້າສາ ໂທທີ່ບັນຈຸຂວດຂະໜາດໃຫຍ່ເຊິ່ງຫາກໍເຮັດແລ້ວແບບສົດໆ ໃໝ່ໆ ແລະສອງພວງແກ້ມຂອງແຕ່ລະຄົນກໍແດງຊ້ຳຈາກຮອຍຈູບແຫ່ງຄວາມປິຕິຍິນດີ.

ສົມເດັດອົງມົງກຸດຣາຊະກຸມມານທາຍາດຮຸ່ນສຸດທ້າຍຂອງພຣະເຈົ້າແຜ່ນດິນແຫ່ງລາຊະອານາຈັກລາວ ເບິ່ງຈາກຊຸດສູດເຄື່ອງແຕ່ງກາຍກຳລັງອອກສຽງອ່ານຜ່ານຕົວອັກສອນໃນບົດປະກາດວ່າດ້ວຍການສະຫຼະບັນລັງຂອງພະບິດາດ້ວຍສີໜ້າອັນໝອງໝົ່ນທ່າມກາງບັນຍາກາດອັນແສນວ່າເວ່ ແລະຕາມທຳມະດາແລ້ວພະອົງຊົງປະຕິເສດຄຳເຊີນ ທີ່ຈະເຂົ້າຮ່ວມໃນງານບຸນສະເຫຼີມສະຫຼອງຂອງຝ່າຍປະເທດລາວ ພາຍຫຼັງໄດ້ພະຍາຍາມທຳການຕໍ່ສູ້ຕ້ານຈັກກະພັດຜູ້ຮຸກຮານໂດຍອາໄສຢູ່ໃນຖ້ຳມາຫຼາຍທົດສະວັດ ບັດນີ້ຂະບວນການປະຕິວັດກໍໄດ້ກາຍເປັນຜູ້ປົກຄອງປະເທດລາວຢ່າງສິ້ນເຊີງ. ໝາຍຄວາມວ່າລະບອບລາຊະອານາຈັກໄດ້ສິ້ນສຸດລົງປ່ຽນແທນດ້ວຍລະບອບສາທາລະນະລັດ ເຊິ່ງຖືເປັນຄວາມຝັນຂອງອ້າຍນ້ອງທະຫານຮຸ່ນເກົ່າຫຼາຍຄົນ ເຊິ່ງພາຍໃນຈິດໃຈຂອງພວກເຂົາແລ້ວ ບໍ່ມີໃຜຈະນຶກຈະຝັນວ່າຄວາມເຊື່ອຂອງພວກເຂົາຈະກາຍເປັນຈິງໄດ້.

ດ້ວຍຈິດວິນຍານທີ່ເຄີຍເປັນນັກຮົບອາໄສຢູ່ໃນປ່າ, ພວກອ້າຍນ້ອງທະຫານກໍພາກັນຍ້າຍໂຕະຂາຕັ້ງອອກຈາກຫ້ອງຈັດງານລ້ຽງຈົນໝົດ ແລ້ວປູສາດຕ່ຳດ້ວຍຜືແທນ. ພວກເຂົາພາກັນນັ່ງອ້ອມເປັນວົງເພື່ອສະຫຼອງໄຊຊະນະ ພ້ອມມີທະຫານສາວຜູ້ໜ້າ

ຮັກໃນຊຸດເຄື່ອງແບບສີຂຽວ ທີ່ມີໃບໜ້າອັນຂາວນວນພ້ອມທາລິບສະຕິກໝາໆ ຄອຍເສີບອາຫານ ແລະເຄື່ອງດື່ມຕະຫຼອດໃນຊ່ວງຕອນແລງ.

ສິຣິມີຄວາມລຶ້ງເຄີຍກັບການນັ່ງຂັດຕະໝາດຢູ່ເທິງພື້ນຫຼາຍກວ່ານັ່ງຕິດກັບຕັ່ງອີ້. ມື້ນັ້ນເຂົາກໍອາລົມດີເປັນພິເສດດັ່ງດຽວກັບພວກອ້າຍນ້ອງທະຫານທຸກຄົນ ແຕ່ຫາກບໍ່ແມ່ນຍ້ອນເຫດຜົນອັນດຽວກັນກັບເພື່ອນສະຫາຍຂອງເຂົາ. ສິຣິຄົງຈະກັບໄປຫ້ອງພັກຂອງຕົນ ພ້ອມນອນຫຼັບສະບາຍຢ່າງຜູ້ມີໄຊແລ້ວແຫຼະ ຖ້າບໍ່ແມ່ນຍ້ອນສະຫາຍຄຳເຊິ່ງແມ່ນເພື່ອນຮ່ວມຮຸ່ນອາວຸໂສກັບເຂົາ.

ສະມາຊິກພັກຜູ້ອາວຸໂສທີ່ມີຮ່າງກາຍຈ່ອຍຜອມຄືຄົນປ່ວຍ ໄດ້ໝົ້ນເຂົ້າມາໃນບ່ອນວ່າງອ້ອມວົງຊຸມແຊວກ່ອນຈະປ້າຍກົ້ນລົງນັ່ງຂ້າງໆ ກັບສິຣິ.

“ສະຫາຍສິຣິເປັນແນວໃດພວກເຮົາເຮັດໄດ້ແທ້ບໍ.”

“ອືມ ກໍໜ້າຈະແມ່ນແນວນັ້ນແຫຼະ.” ປົກກະຕິສິຣິບໍ່ເຄີຍດື່ມເຫຼົ້າຂາວໃນປະລິມານຫຼາຍຊ່ຳນີ້ມາກ່ອນ ອັນເປັນເຫດເຮັດໃຫ້ລາວບໍ່ສາມາດຄວບຄຸມປາກ ຫຼືລີ້ນຂອງຕົນໄດ້ຢ່າງເຕັມທີ່. “ແຕ່ເຮົາພັດຮູ້ສຶກຄືວ່າ ພວກເຮົາຢູ່ຈຸດນີ້ເພື່ອສະເຫຼີມສະ ຫຼອງການສິ້ນສຸດຂອງບາງຢ່າງຫຼາຍກວ່າການເລີ່ມຕົ້ນຊ້ຳອີກ.”

“ມາກບອກພວກເຮົາວ່າ ຈຸດເລີ່ມຕົ້ນທັງໝົດຍ່ອມພົບຄວາມຫຍຸ້ງຍາກເປັນທຳມະດາ.”

“ບໍ່ສຳຄັນດອກວ່າເຈົ້າກັບມາກຈະຮູ້ຈັກກັນມາກ່ອນ ແຕ່ມັນສຳຄັນທີ່ວ່າເຈົ້າສາມາດກຽມຄວາມພ້ອມເພື່ອຕອບຮັບປັນຫາທີ່ກຳລັງຈະປະເຊີນໜ້າໄດ້ ຫຼືບໍ່. ແຕ່ຢ່າມັນເທາະຄຳເອີຍ, ຢ່າງໜ້ອຍເຈົ້າເອງອາດປິດຄວາມສົງໄສອອກໄປຢ່າງແນ່ນອນ.” ເວົ້າສຸດເຂົາກໍຈັບຈອກເຫຼົ້າຂອງຕົນຂຶ້ນມາຕຳໃສ່ກັບຈອກເຫຼົ້າຂອງຄຳດັງຕຸບ! ບາດໜຶ່ງ ແຕ່ໃນຂະນະນັ້ນສາຍຕາຂອງສະຫາຍທີ່ຫຼົບຊ້ອນໄວ້ຂ້າງໃນກໍແດງເຣື່ອອອກຄ້າຍຄືກັບງູພິດທີ່ກຳລັງຈ້ອງສາຍຕາມອງເບິ່ງໂລກດ້ວຍຄວາມຮ້າຍກາດ.

“ສະຫາຍໃຊ້ຄຳວ່າ ‘ເຈົ້າ’ ຄ້າຍກັບວ່າສະຫາຍຍັງບໍ່ໄດ້ວາງແຜນຊ່ວຍພວກເຮົາເພື່ອຈັດການກັບປັນຫາຫຍັງເລີຍນີ້ແຫຼະ.”

ສິຣິຫົວຂຶ້ນແບບພໍໃຈ.

“ສະຫາຍຄຳ, ເຮົາເຖົ້າເກືອບຮອດໜຶ່ງສະຕະວັດແລ້ວໃດ. ເຮົາເມື່ອຍຫຼາຍແລ້ວເຮົາຄິດວ່າຮອດເວລາທີ່ຈະໄດ້ພັກຜ່ອນໃນສວນນ້ອຍໆ ຂອງຕົນ ພ້ອມດື່ມດຳກັບການຈິບກາເຟຫອມໆ ໃນຊ່ວງຍາມເຊົ້າ, ໃຊ້ເວລາອ່ານປຶ້ມໃນຕອນບ່າຍຢ່າງມີຄວາມສຸກ, ພ້ອມດື່ມເຫຼົ້າໂກຫຍັກລົດຫວານເບົາໆ ກ່ອນເຂົ້ານອນແຕ່ຫົວຄ່ຳ ເພື່ອຊ່ວຍໃຫ້ນອນຫຼັບສະບາຍຂຶ້ນ.”

ຄຳຍົກຈອກເຫຼົ້າຂອງຕົນພ້ອມຫັນໄປຂໍຕຳຈອກກັບທ່ານນາຍົກລັດຖະມົນຕີ ທີ່ສີໜ້າກຳລັງແດງເພາະອີ່ມເອີບໄປດ້ວຍຄວາມສຸກໃຈທັງນັ່ງຮ່ວມກັບອ້າຍນ້ອງທະຫານໃນວົງດຽວກັນ. ທັງຄູ່ດື່ມດຳກັບແກ້ວເກົ່າຈົນໝົດກ່ອນຈະເອີ່ຍປາກຮ້ອງສັ່ງໃຫ້ເອົາແກ້ວໃໝ່ມາຕໍ່.

"ມັນກໍແປກອີ່ຫຼີ. ຕາມທີ່ເຮົາຮູ້, ສະມາຊິກຄອບຄົວສະຫາຍກໍເສຍຊີວິດໝົດແລ້ວບໍ່ແມ່ນຫວາ? ແລ້ວເຫດໃດສະຫາຍຈິ່ງວາງແຜນແບບບໍ່ມີຫຍັງມາຄ້ຳຈູນຊີວິດໃນໄວທີ່ຊຸດໂຊມແບບນີ້?"

"ເຮົາຄິດວ່າຕົນເອງກໍເປັນສະມາຊິກພັກມາໄດ້ສີ່ສິບຫົກປີ ເຮົາຄວນຈະໄດ້ຮັບສິດ ..."

"ເງິນບຳນານຫັ້ນຫວາ?" ຄຳຫົວຂຶ້ນແບບເຢາະເຍີ້ຍ.

"ແລ້ວເປັນຫຍັງລະ?"

ສີຣິມີຄວາມເຊື່ອໝັ້ນທັງຄິດສະເໝີວ່າ ຖ້າຫາກຝ່າຍປະຕິວັດຊະນະການຕໍ່ສູ້ແລ້ວເຂົາຈະໄດ້ຮັບກະສຽນບຳນານທັນທີ. ມັນເປັນຄວາມຝັນຂອງເຂົາທ່າມກາງຄ່ຳຄືນທີ່ປຽກຊຸ່ມຢູ່ກາງປ່າແຫ່ງໜຶ່ງທາງພາກເໜືອ. ມັນທັງເປັນຄຳອະທິຖານຂອງເຂົາທີ່ໄດ້ຂໍຢູ່ຕໍ່ໜ້າຮ່າງຄີງທີ່ໄຮ້ວິນຍານທັງເດັກຊາຍ ແລະເດັກຍິງທຸກຄົນທີ່ໄດ້ເສຍຊີວິດໄປຕໍ່ໜ້າຕໍ່ຕາໂດຍທີ່ສີຣິບໍ່ສາມາດຢື້ເອົາຊີວິດຂອງພວກເຂົາໄວ້ໄດ້, ເຂົາເຊື່ອມາດົນແລ້ວວ່າມັນຕ້ອງເກີດຂຶ້ນເຊິ່ງຜູ້ອື່ນໆ ກໍຕ້ອງຮູ້ເຊັ່ນກັນ.

ຄຳຍັງບໍ່ຢຸດທີ່ຈະເວົ້າເຍີ້ຍສຽດສີກັບແຜນການຂອງເຂົາ.

"ສະຫາຍຮັກ, ເຮົາຄິດວ່າສະຫາຍຢູ່ມາຕັ້ງສີ່ສິບຫົກປີ ກໍຄົງຈະຮູ້ເຫັນຫຼາຍສິ່ງຢ່າງດ້ວຍຕົນເອງມາແລ້ວ. ສັງຄົມນິຍົມ ໝາຍເຖິງການມີສ່ວນຮ່ວມນຳກັນຕາບໃດທີ່ສະຫາຍຍັງສາມາດປະກອບສ່ວນອຸທິດເຫື່ອແຮງຂອງຕົນໄດ້. ແຕ່ຮອດເວລາທີ່ສະຫາຍຫາກຊອກຫາຣີມສືບຕົນເອງບໍ່ເຫັນເມື່ອໃດ ແລະຕອນທີ່ສະຫາຍປ່ອຍໃຫ້ນ້ຳໄຂ່ໄຫຼຍ້ອຍລົງມາເປື້ອນເສື້ອ, ຫຼືແມ່ນແຕ່ຍາມທີ່ຕ້ອງໄດ້ຊ້ອນຜ້າຂົນໝູໄວ້ຢູ່ໂສ້ງຊ້ອນໃນກໍຖືວ່າເມື່ອນັ້ນແຫຼະສະຫາຍຈິ່ງຈະໄດ້ຮັບຜົນຕອບແທນຈາກລັດ. ຄອມມູຍນິດຈະເປັນຜູ້ດູແລເບິ່ງແຍງສະເພາະຄົນທີ່ອ່ອນແອເທົ່ານັ້ນ ...

"ແຕ່ເບິ່ງສະຫາຍແລ້ວ ກໍຍັງມີສຸຂະພາບແຂງແຮງ ພ້ອມກັບມີມັນສະໝອງທີ່ສະຫຼຽວສະຫຼາດ 'ອຸທິດຕົນເພື່ອສັງຄົມຕາມຄວາມສາມາດແລະຮັບຜົນຕອບແທນຈາກສັງຄົມຕາມຄວາມຕ້ອງການ' ການປະຕິເສດທີ່ຈະບໍ່ຍອມຮັບໃຊ້ຊາດ ທີ່ພວກເຮົາອົດສາຕໍ່ສູ້ເພື່ອກອບກູ້ເອກະລາດຈາກລະບອບການປົກຄອງແບບຜະເດັດການນັ້ນຖືວ່າເປັນຄວາມເຫັນແກ່ຕົວທີ່ສຸດ."

ສີຣິແນມເບິ່ງການນຳລະດັບສູງແບບຮອບໆ. ມີທ່ານປະທານປະເທດເຊິ່ງເປັນ

ອະດີດທາຍາດລາຊະວົງຣຸ່ນສຸດທ້າຍທັງເປັນສະມາຊິກພັກຄອມມູຍນິດ ໂດຍມີທະຫານສາວໜ້າຮັກ ພ້ອມຂຽນຄິ້ວແຕ້ມຕາສອງຄົນນັ່ງທາງຂ້າງ, ເພິ່ນເລີ່ມຮ້ອງເພງການປະຕິວັດຫວຽດນາມ ອັນໄດ້ສ້າງຄວາມສົນໃຈໃຫ້ແກ່ບັນດາອ້າຍນ້ອງທະຫານ ລວມທັງການນຳຄົນອື່ນໆ ແຕ່ເປັນໜ້າເສຍດາຍທີ່ເພງໄດ້ຈົບລົງຮອດພຽງແຕ່ເຄິ່ງທ່ອນຍ້ອນເພິ່ນລືມເນື້ອເພງ ແຕ່ແລ້ວສຽງຕົບມືໂຮ່ຮ້ອງກໍດັງກ້ອງສະໜັ່ນຂຶ້ນຈົນທົ່ວຫ້ອງ. ວົງດົນຕີມະໂຫລານຂະໜາດນ້ອຍທີ່ເຮັດດ້ວຍໄມ້ໃຜ່ແລະໄມ້ແກ່ນ ໄດ້ເລີ່ມບັນເລງສຽງດົນຕີທີ່ໜ້າອອນຊອນສ້າງບັນຍາກາດແຫ່ງຄວາມມ່ວນຊື່ນ ແຕ່ການສົນທະນາກໍຍັງສືບຕໍ່ດຳເນີນໄປຢ່າງຕໍ່ເນື່ອງ. ສີຣິບໍ່ສາມາດຫຼີກໃຫ້ຫວິດພົ້ນຈາກຄວາມຮູ້ສຶກຜິດຫວັງຂອງຕົນໄດ້ ເຂົາໄດ້ແຕ່ລໍຖ້າໃຫ້ຄຳໄບ່ຜູ້ດຽວແບັບໆ ໃນທາງທີ່ເປັນການເຢາະເຍີ້ຍສຽດສີຕໍ່ສິດທິຂອງເຂົາຈົນຈົບ ຈາກນັ້ນ ສີຣິຈິ່ງໂຕ້ຕອບຄືນດ້ວຍນ້ຳສຽງອັນຊີງພະລັງເໜືອກວ່າສິ່ງທີ່ຜູ້ຊາຍຄົນໜຶ່ງເຄີຍເປັນ.

"ເຮົາຄິດວ່າເລື່ອງຂອງເຮົາໄດ້ຮັບການພິຈາລະນາໂດຍກົມການເມືອງສູນກາງພັກແລ້ວບໍ່ແມ່ນຫວາ."

"ກະແມ່ນ ... ເພາະພວກເຮົາຂ້ອນຂ້າງປະທັບໃຈທີ່ສະຫາຍໄດ້ອຸທິດເຫື່ອແຮງທັງສະຕິປັນຍາຕະຫຼອດຫຼາຍປີຜ່ານມາ."

ຄຳວ່າ 'ຂ້ອນຂ້າງ' ສີຣິເຂົ້າໃຈວ່າມັນໝາຍເຖິງ 'ບໍ່ມີຫຍັງດີເລີຍ.' ໃນຊ່ວງສິບປີຜ່ານມາ ເຂົາໄດ້ຢຸດກັບຄວາມຄັ່ງໄຄ້ໃນການປະຕິວັດທີ່ຕົນເຄີຍຄາດຫວັງຈະໄດ້ເພິ່ງພາແລ້ວໃນທີ່ສຸດເຂົາກໍຖືກສົ່ງຕົວໄປເຮືອນຮັບແຂກຂອງສູນກາງພັກໝາຍເລກສາມ, ເຊິ່ງຕັ້ງຢູ່ຫ່າງຈາກເຂດສູນກາງຈັດຕັ້ງນະໂຍບາຍໃນຊຳເໜືອອັນແສນໄກພໍສົມຄວນ. ຢູ່ທີ່ນັ້ນເຂົາເຮັດໜ້າທີ່ເປັນຜູ້ດູແລທະຫານບາດເຈັບທີ່ຖືກສົ່ງກັບມາແຕ່ສະໜາມຮົບທັງຕັດຂາດການຕິດຕໍ່ກັບມິດສະຫາຍພ້ອມຢຸດຕິການພົວພັນກັບທາງການເມືອງຢ່າງຈິງຈັງ.

ຄຳຫຍັບກົ້ນເຂົ້າມາໃກ້ຂຶ້ນຈົນຕິດກັບສີຣິພ້ອມໃຊ້ມືຂ້າງໜຶ່ງໂອບຂຶ້ນທີ່ບ່າໄຫຼ່ຂອງເຂົາ. ທຳມະດາແລ້ວທ່ານໝໍຜູ້ນີ້ຈະເປັນຄົນວາງຕົວງ່າຍໆ ທັງເປັນກັນເອງກັບທຸກຄົນແຕ່ການສະແດງອອກດ້ານທ່າທາງ ບວກກັບສະຖານະການເຊັ່ນນີ້ ເຂົາຜັດບໍ່ມັກປານໃດ.

"ພວກເຮົາໄດ້ກຳນົດໜ້າທີ່ຄວາມຮັບຜິດຊອບອັນຍິ່ງໃຫຍ່ມາໃຫ້ສະຫາຍ."

ຄຳເວົ້າຂອງຄຳອາດຈະຢາກບອກວ່າເປັນຜົນຕອບແທນທີ່ຄຸ້ມຄ່າ ແຕ່ສຳລັບສີຣິແລ້ວກໍຄືກັບກຳລັງຖືກໄມ້ແສ້ນ້ອຍໆ ຟາດລົງໃສ່ທີ່ໃບໜ້າ. ເຂົາບໍ່ຕ້ອງການຄວາມຮັບຜິດຊອບໃດໆ ທັງນັ້ນ

"ເປັນຫຍັງຄືວ່າແນວນັ້ນ?"

"ກໍຍ້ອນສະຫາຍແມ່ນຄົນເກັ່ງທີ່ສຸດສຳລັບໜ້າວຽກນີ້."

"ເຮົາບໍ່ເຄີຍເປັນຄົນເກັ່ງທີ່ສຸດບໍ່ວ່າວຽກນີ້ ຫຼືວຽກຫຍັງທັງນັ້ນ."

"ໂອຍຢ່າສູ່ຖ່ອມໂຕຫຼາຍເທາະ. ແນວໃດສະຫາຍກໍຍັງແມ່ນທ່ານໝໍຜ່າຕັດທີ່ມີຄວາມຊຳນານ. ສະຫາຍເປັນຄົນມັກຢາກຮູ້ຢາກເຫັນ ທັງເປັນຄົນຊ່າງສັງເກດບໍ່ເບິ່ງຂ້າມແບບຜິວເຜີນ. ພວກເຮົາຈິ່ງຕັດສິນໃຈມອບຕຳແໜ່ງໃຫ້ສະຫາຍເປັນຫົວໜ້າໜ່ວຍງານຊັນນະສູດສົບຂອງກົມຕຳຫຼວດ." ຄຳທັງເວົ້າທັງພະຍາຍາມຈ້ອງມອງເບິ່ງດວງຕາສີຂຽວຄູ່ນັ້ນ ຄືກັບຢາກຮູ້ວ່າສີຣິມີຄວາມເພິ່ງພໍໃຈກັບຄຳເວົ້າຂອງຕົນ ຫຼືບໍ່ ແຕ່ເຂົາກໍພົບແຕ່ຄວາມສັບສົນມຶນງົງເທົ່ານັ້ນ ຄ້າຍກັບວ່າເຂົາກຳລັງບອກໃຫ້ສີຣິໄປເຮັດໜ້າທີ່ເປັນນັກດັດແປງປູມເປົ້າ ຫຼືເປັນນັກຂີ່ລົດຖີບຕີນດ່ຽວຄົນໃໝ່ແຫ່ງປະເທດສາທາລະນະລັດ.

"ໃນຊີວິດເຮົາບໍ່ເຄີຍທຳການຊັນນະສູດສົບມາກ່ອນ."

"ໂອຍ. ມັນກໍຄືກັນຫັ້ນແຫຼະ ພຽງແຕ່ເອົາເອົາສິ້ນສ່ວນມາຫຍິບເຂົ້າໃສ່ກັນ ຫຼືບໍ່ກໍຜ່າຊຳແຫຼະອອກ."

"ມັນບໍ່ຄືກັນແນ່ນອນ."

ຄຳເວົ້າຂອງສີຣິບໍ່ໄດ້ສະແດງເຖິງຄວາມແຂງກະດ້າງໃດໆ ແຕ່ຄຳຕ່າງຫາກທີ່ຕ້ອງຕົກຕະລຶງກັບຄຳເວົ້າຂອງເຂົາເຊິ່ງແຕກຕ່າງກັນຢ່າງເຫັນໄດ້ຊັດເຈນ. ສະມາຊິກພັກຜູ້ອາວຸໂສບາງຄົນ ແມ່ນເຄີຍຊິນແຕ່ກັບຄວາມອ່ອນນ້ອມຖ່ອມຕົນ. ເຖິງແມ່ນສີຣິຈະເປັນຄົນສຸຂຸມເຢືອກເຢັນ ທັງການເວົ້າການຈາກໍນິ້ມນວນຢູ່ສະເໝີ ແຕ່ເຂົາກໍມີນິດໄສມັກບອກກັນແບບຕົງໆ ເມື່ອເພື່ອນສະຫາຍປະພຶດບໍ່ຖືກຕ້ອງ ນັ້ນອາດຈະເປັນອີກເຫດຜົນໜຶ່ງທີ່ເຂົາຕ້ອງຖືກສົ່ງເຂົ້າໄປປະຈຳການຢູ່ປ່າ.

"ຂໍໂທດ ສະຫາຍໝາຍຄວາມວ່າແນວໃດ?"

"ຂ້ອຍຍັງບໍ່ຮູ້ຈະເລີ່ມຕົ້ນຈາກຈຸດໃດດີ. ຂ້ອຍຮູ້ແຕ່ວ່າ ຂ້ອຍເຮັດບໍ່ໄດ້ແນ່ ນອນມັນເປັນວຽກໃຫຍ່ພິລຶກ ເຈົ້າຍັງຄິດວ່າຂ້ອຍຈະເຮັດໄດ້ຊັ້ນບໍ?"

ຄຳເວົ້າຂອງສີຣິຍິ່ງເຮັດໃຫ້ແສງຕາຂອງຄຳກ່ຳແດງຂຶ້ນປານຕາງູພິດ. ເພາະສະຫາຍຄຳຄິດວ່າສີຣິໄຮ້ຄວາມກະຕັນຍູຕໍ່ຕົນ. ເຂົາເນັ້ນມືລົງໃສ່ບ່າຂອງຊາຍຊະລາພ້ອມກຳແໜ້ນເຂົ້າ ກ່ອນຈະແຂກຮ້ອງໃສ່ຫູຂອງລາວວ່າ.

"ເຮົາຄິດວ່າສະຫາຍເປັນແຂ້ວເຟືອງໃນເຄື່ອງຈັກທີ່ເຕັມໄປດ້ວຍກຳລັງອັນຍິ່ງໃຫຍ່ເພື່ອຊ່ວຍຂັບເຄື່ອນປະເທດຊາດຂອງພວກເຮົາ ໃຫ້ກ້າວເດີນໄປຂ້າງໜ້າ. ສະຫາຍກັບເຮົາຕ່າງຄົນຕ່າງກໍແມ່ນແຂ້ວເຟືອງຄືກັນ ລວມທັງທ່ານປະທານປະເທດກໍແມ່ນແຂ້ວເຟືອງ. ເຊິ່ງແຂ້ວເຟືອງແຕ່ລະອັນແມ່ນສາມາດຊ່ວຍເຮັດໃຫ້ເຄື່ອງຈັກຂອງພວກ

ເຮົາເຮັດວຽກໄດ້ແບບບໍ່ມີຫຍັງຂ້ອງຄາ. ແຕ່ໃນທຳນອງດຽວກັນ, ຖ້າເກີດມີແຂ້ວເຟືອງໃດໜຶ່ງແຕກຫັກຂຶ້ນມາ ກໍເຮັດໃຫ້ເຄື່ອງຈັກຕິດຂັດ ແລະຢຸດເຮັດວຽກໄດ້. ໃນຊ່ວງເວລາອັນຫົວລ້ຽວຫົວຕໍ່ທີ່ສຳຄັນໃນການກໍ່ສ້າງປະເທດຊາດຂອງພວກເຮົານີ້, ພວກເຮົາຕ້ອງການແຂ້ວເຟືອງ ແລະການປະສານງານກັນທັງໝົດຂອງພວກເຮົາ. ຢ່າໄດ້ເຮັດໃຫ້ພວກເຮົາຜິດຫວັງ ແລະຢ່າໄດ້ຢຸດເຄື່ອງຈັກເດີສະຫາຍສີຣິ.”

ເວົ້າສຸດ ຄຳກໍເນັ້ນມືລົງບີບບ່າຂອງສີຣິແຮງຂຶ້ນຈົນເຂົາຮູ້ສຶກເຈັບ ທັງຕອດຫົວຄ່ອຍໆກ່ອນຈະລຸກຢືນຂຶ້ນ ແລ້ວຍ່າງໜີໄປເຂົ້າຮ່ວມກັບວົງອື່ນ. ສີຣິສົ່ງສາຍຕາໄປທີ່ບັນດາລະບົບເຄື່ອງຈັກຕົວໃໝ່ອ້ອມຮອບແບບງົງໆ, ລໍ້ໝູນຂອງເຄື່ອງຈັກເຫຼົ່ານີ້ເລີ່ມຜິດຮູບຜິດຮອຍຍ້ອນມັນຖືກຫູ່ລື່ນໂດຍທາດເຫຼົ້າ. ພໍມາເຖິງຈຸດໜຶ່ງ, ຕົນລໍ້ສອງອັນກໍໂຄ້ງເຂົ້າຫາກັນຈົນບິດບ້ຽວກາຍເປັນຮູບເລກແປດ. ຢູ່ທີ່ນັ້ນປາກົດມີແຂ້ວເຟືອງໃຫຍ່ໆ ແລະສຳຄັນ ພ້ອມກັບບັນດາແຂ້ວເຟືອງເລັກໆ ນ້ອຍໆ ທີ່ບໍ່ຈັດວ່າສຳຄັນຢັ່ງຢາຍໄປທົ່ວບໍ່ເປັນລະບຽບ ເຊິ່ງແຂ້ວເຟືອງບາງອັນກໍລຸກໜີ ຫຼືແຍກຍ້າຍໄປເຂົ້າຫ້ອງນ້ຳແລ້ວບໍ່ກັບມາອີກ. ອັນເປັນເຫດເຮັດໃຫ້ເກີດຊ່ອງວ່າງຂະໜາດໃຫຍ່ຢູ່ໃນລໍ້ ສ່ວນແຂ້ວເຟືອງອື່ນໆກໍມາຮວມຕົວກັນໃນກຸ່ມຂອງລໍ້ນ້ອຍໆ ຫຼາຍກຸ່ມ ໂດຍບໍ່ມີໃຜສົນໃຈເຄື່ອງຈັກໃຫຍ່ທີ່ຄິດວ່າສຳຄັນເລີຍ.

ທັນໃດນັ້ນ ສີຣິກໍຮູ້ສຶກທຶດທູ່ໃຈຂຶ້ນມາທັນທີ, ເຂົາບອກກັບວົງລໍ້ຂອງຕົນວ່າຈະໄປຖ່າຍເບົາ. ເຂົາຈິ່ງຍ່າງໂຊເຊໄປທາງຫ້ອງນ້ຳ ແຕ່ກໍຍ່າງກາຍມັນ ພ້ອມຜ່ານໄປສູ່ທາງເຂົ້າສາລາກາງ. ທະຫານຍາມປະຕູຍົກປືນຂຶ້ນເພື່ອສະແດງເຖິງການຄຳນັບ ເຂົາກໍຄຳນັບຕອບພ້ອມໃຊ້ມືປົດເນັກໄທສີດຳຂຶ້ນຈົນຫວິດຫົວ ແລ້ວຍ່າງໄປຫາທະຫານຍາມປະຕູອີກຄົນໜຶ່ງ ກ່ອນຈະຈັບເອົາເນັກໄທໄປພາດໄວ້ທີ່ປາຍປືນທີ່ກຳລັງເປ່ງແສງເຫຼື້ອມເປັນເງົາເມື່ອຕ້ອງກັບແສງໄຟ ພ້ອມປ່ອຍໃຫ້ມັນປິ່ວວ່ອນໄປມາຕາມແຮງພັດຂອງສາຍລົມ.

ສີຣິກ່າວຄຳຂອບໃຈພ້ອມຍິ້ມຕອບ, ເຂົາໂບກມືໄປມາໃສ່ຄົນຂັບລົດລີມູຊິນມືສອງສີດຳຍີ່ຫໍ້ຊິລຈາກຣັດເຊຍ ທີ່ກຳລັງລໍຖ້າຮັບໃຊ້ບັນດາສະຫາຍທັງຫຼາຍໄປຍັງຄ້າຍພັກຊົ່ວຄາວ. ມັນເປັນຊ່ວງເຊົ້າມືດຂອງເດືອນທັນວາທີ່ປົກຄຸມດ້ວຍອາກາດເຢັນສະບາຍ. ເທິງທ້ອງນະພາບໍ່ມີດາວຈັກດວງທ່າມກາງທາງກັບບ່ອນພັກທີ່ເປັນເສັ້ນຊື່ຕົງ. ສີຣິຍ່າງແບບບໍ່ຝ້າວບໍ່ຟັ່ງໄປຕາມຖະໜົນລ້ານຊ້າງທີ່ອ້າງວ່າງເປົ່າປ່ຽວ ທາງໜ້າຂອງເຂົາແມ່ນທຳຄຳ ແລະອະນາຄົດທີ່ໃຈຂອງເຂົາບໍ່ຕ້ອງການ.

2

# ເນຍສະຫາຍຄຳ

ເຖິງແມ່ນຕອນນັ້ນຈະເປັນຊ່ວງເວລາທີ່ຍາກລຳບາກລະອິດລະອ້ຽວໃນຕົວເມືອງວຽງຈັນ, ເຕົາອົບຫີນຮຸ່ນເກົ່າແກ່ທີ່ຕັ້ງຢູ່ໃກ້ກັບໂບດອິດສະລາມຍັງຄົງພຸ່ງຄວັນກະຈາຍຕັ້ງແຕ່ຕອນສາມໂມງເຊົ້າເພື່ອຜະລິດເຂົ້າຈີ່ທີ່ຈັດໄດ້ວ່າເປັນອາຫານຊັ້ນຍອດທີ່ດີທີ່ສຸດລະດັບປະເທດເລີຍກໍວ່າໄດ້. ຊາຍສະກັນສາມຄົນທີ່ປາສະຈາກເສື້ອປົກຫຸ້ມຮ່າງກາຍກຳລັງຂະມຸກຂະມຸ້ຍກັບການໃຊ້ໄມ້ນວດແປ້ງໃຫ້ເປັນລວງຍາວ ແລ້ວວາງຮຽງກັນເປັນແຖວເທິງຖາດໂລຫະສີດຳຈົນອອກໝ້ຽງ.

ບໍ່ມີຫຍັງຈະເປັນສິ່ງຢືນຢັນໄດ້ວ່າ ເຂົ້າຈີ່ເຫຼົ່ານີ້ສະອາດຖືກຫຼັກອະນາໄມ. ແຕ່ຄົນສ່ວນຫຼາຍກໍມັກຈະເວົ້າແບບຢິກແກມຢອກວ່າ ເຂົ້າຈີ່ຝຣັ່ງຂອງປ້າຫຼ້າແຊບຫອມຫວານທີ່ສຸດໃນເມືອງວຽງຈັນ ກໍຍ້ອນຂີ້ຝຸ່ນ, ຂີ້ເຖົ່າ, ນ້ຳເຫື່ອ ລວມທັງຂີ້ໝ້ຽງນີ້ແຫຼະ. ລູກຊາຍຂອງປ້າຫຼ້າທັງສາມຄົນໃຊ້ຜ້າແພຂົນໜູສີເທົາອັນເກົ່າໝອງດຶງເອົາກ້ອນເຂົ້າຈີ່ທີ່ກຳລັງຮ້ອນໆ ອອກຈາກເຕົາພ້ອມວາງລົງໂດຍກົງໃສ່ລໍ້ຍູ້ຂອງລາວ.

ແຕ່ລະມື້ພໍເຖິງຫົກໂມງເຊົ້າ ປ້າຫຼ້າຈະຍູ້ລໍ້ເຂົ້າຈີ່ອັນຫອມຫວານຂອງລາວອອກມາຈອດໄວ້ຢູ່ມຸມຖະໜົນຂ້າງທາດດຳ. ເຂົ້າໜົມປັງຊຸດທຳອິດຂອງລາວມັກຂາຍໝົດຕອນເຈັດໂມງເຄິ່ງ ແລ້ວລາວກໍກັບຄືນໄປເອົາຊຸດໃໝ່ຢູ່ຮ້ານມາຂາຍຕໍ່. ລາວຍູ້ລໍ້ເຂົ້າຈີ່ຂອງຕົນເດີນໄປຕາມຖະໜົນເສດຖາທິລາດ ຕັດເຂົ້າສູ່ເສັ້ນທາງໜອງບອນ ເຊິ່ງເຂດນັ້ນແມ່ນເປັນທີ່ຕັ້ງຂອງສຳນັກງານລັດຫຼາຍແຫ່ງ. ບັດນີ້ລໍ້ເຂົ້າຈີ່ຝຣັ່ງ ກໍໄດ້ກາຍມາເປັນຮ້ານຂາຍແຊນວິດຕາມສັ່ງໃນແບບທີ່ລູກຄ້າຕ້ອງການ. ບັນດາພະນັກງານລັດທີ່ເດີນທາງໄປຫ້ອງການທີ່ຜ່ານກາຍແຖວນັ້ນ ສາມາດເລືອກລາຍການອາຫານໄດ້ຕາມໃຈບໍ່ວ່າຈະເປັນເຂົ້າຈີ່ນົມຊຸ່ມຫວານ, ຊີ້ນປາຊາດິນ, ຫຼືຊີ້ນຄວາຍເຄັມ ເຊິ່ງປ້າຫຼ້າໄດ້ຈັດກຽມໄວ້ແລ້ວ ພ້ອມທັງຈັດແຈງປຸງແຕ່ງດ້ວຍຄວາມພາກພຽນຂະນະທີ່ລູກຄ້າພວມລໍຖ້າ.

ແຕ່ມີແຊນວິດພິເສດອັນໜຶ່ງທີ່ປ້າຫຼ້າໄດ້ຈັດກຽມໄວ້ ພ້ອມໃຊ້ເຈ້ຍຊັບນ້ຳມັນຈັດຫໍ່ໃຫ້ເປັນລະບຽບ ເພື່ອລໍຖ້າລູກຄ້າຄົນພິເສດຂອງລາວມາຮັບເອົາໃນທຸກໆ ວັນ. ສີຣິບໍ່ຈຳເປັນຕ້ອງສັ່ງພິເສດໃນແບບທີ່ຕົນຕ້ອງການ ເຂົາຈະກິນສະເພາະສິ່ງທີ່ປ້າຫຼ້າ

ເຮັດໃຫ້ດ້ວຍຄວາມຈິງໃຈ ເຊິ່ງເຫັນວ່າມັນຈະແຕກຕ່າງກັນຕະຫຼອດ ແລະກໍມີລົດຊາດແຊບທຸກຄັ້ງ. ເຂົາມັກຈ່າຍເງິນໃຫ້ປ້າຫຼ້າໃນຊ່ວງທ້າຍອາທິດ ແລະປ້າເອງກໍບໍ່ເຄີຍຂໍເພີ່ມເກີນອັດຕາມາດຕະຖານຂອງເຂົາ.

ເມື່ອໃດທີ່ສີຣິວຽກຫຼາຍ ຈົນບໍ່ສາມາດອອກໄປເອົາແຊນວິດດ້ວຍຕົນເອງ, ເຂົາມັກສົ່ງຕຸ້ຍໄປເອົາແທນ ແຕ່ຕຸ້ຍກໍຍັງຢືນຢັນແບບຫົວຊົນຝາໄດ້ວ່ານາງສາມາດຈັບພິລຸດແຫ່ງຄວາມຜິດຫວັງຂອງຍິງຊະລາຕັ້ງແຕ່ຕອນທີ່ນາງຍັງບໍ່ທັນໄດ້ຍ່າງຂ້າມທາງຊໍ້າ.

"ຢ່າມາເວົ້າເປັນຕາໜ່າຍຫຼາຍເທາະ."

"ຂ້ອຍເວົ້າແທ້ໃດ. ລາວສົນໃຈທ່ານໝໍແລ້ວຕິຫັ້ນ." ປະລິມານເລືອດເຈັດໃນແປດສ່ວນໄດ້ພຸ່ງຂຶ້ນສູ່ໃບໜ້າຂອງສີຣິຈົນແດງສ່າ. ຕຸ້ຍຫົວຂຶ້ນຄ່ອຍໆ ພ້ອມຍື່ນອາຫານທ່ຽງໃຫ້ເຂົາ.

"ບໍ່ດອກເຖົ້າປານນີ້ແລ້ວ ... ອືມ, ພວກເຮົາບໍ່ໄດ້ຄິດເລື່ອງແບບນີ້ແລ້ວລະ."

"ເວົ້າເລື່ອງຄວາມຮັກຫັ້ນຫວາ?"

"ອື ແນ່ນອນ."

"ນໍ້າເນົ່າ."

"ອີ່ຫຍັງເກາະເວົ້າໃໝ່ເບິ່ງດູ."

"ສົມຊາຍ ອັດຊະນະຈິນດາກ່າວໄວ້ວ່າ ຕາບໃດທີ່ຫົວໃຈຂ້າງໜຶ່ງຂອງເຈົ້າຍັງເຕັ້ນໄດ້ຢູ່ ກໍບໍ່ແປກດອກທີ່ຫົວໃຈມັນຈະເຕັ້ນນຳກັນທັງສອງຂ້າງ."

"ຊັ້ນ ສົມຊາຍ ອັດຊະນະຈິນດາ ກໍບໍ່ແມ່ນທ່ານໝໍຕິລະ."

"ສະແດງວ່າເຈົ້າບໍ່ໄດ້ເບິ່ງໜັງຢູ່ໃນຖໍ້າແມ່ນບໍແບບນີ້? ເຂົາແມ່ນນັກສະແດງໄທທີ່ມີຊື່ສຽງທີ່ສຸດໃດຫັ້ນ."

"ໂອແມ່ນຫວາ? ແລ້ວປະເທດທີ່ບໍ່ເຄີຍມີຮອດໜັງຊື່ດັງເປັນຂອງຕົນພັດຈະມີນັກສະແດງທີ່ມີຊື່ສຽງແນວໃດ?"

"ພວກເຂົາມີໜັງຍອດນິຍົມຕັ້ງຫຼາຍເລື່ອງ. ຢ່າງໜ້ອຍພວກເຂົາກໍມີຊື່ສຽງຢູ່ປະເທດໄທ ພວກເຂົາຍັງສ້າງໜັງມ່ວນໆ ອອກສາຍນຳອີກ."

"ມັນກໍເປັນພຽງພວກໜັງຍິງກັນສະໜັ່ນ ຫຼືບໍ່ກໍແມ່ນໜັງຮັກໆ ໃຄ່ໆ ນໍ້າເນົ່າ."

"ຫັ້ນແນ. ຂ້ອຍຮູ້ເດີວ່າທ່ານໝໍລັກເບິ່ງຜູ້ດຽວນະ. ສົມຊາຍເຖິງແມ່ນເຂົາຈະມີອາຍຸແກ່ ແຕ່ເຂົາກໍເວົ້າເຖິງຄວາມຮັກອັນແສນຫວານຢູ່ໃດ."

"ເຂົາໄດ້ຈັກປີລະ, ຫ້າສິບບໍ?"

"ກາຍຫ້າສິບແລ້ວ."

"ໂອວ້າວ. ເຂົາຢູ່ຍືນຈົນຢູ່ຮອດພຸ້ນໄດ້ແນວໃດ?"

“ແລະເລື່ອງຄວາມຮັກກໍບໍ່ແມ່ນເລື່ອງນ້ຳເນົ່າຄືທ່ານໝໍເວົ້າອີກ. ເພາະແມ່ນແຕ່ເງິນທັງໂລກກໍຍັງຊື້ຄວາມຮັກບໍ່ໄດ້.”

ສິຣິກົ້ມໜ້າລົງອ່ານບົດລາຍງານ ທີ່ມີການສະກົດຄຳຜິດຕັ້ງຫຼາຍບ່ອນ ສ່ວນຕຸ້ຍກໍຢືນຫັນຫຼັງໃສ່ເຂົາພ້ອມສົ່ງສາຍຕາເລັດລອດຜ່ານແຜ່ນໄມ້ທີ່ເຫຼືອຄ້າງສອງບານຂອງປະຕູປ່ອງຢ້ຽມ. ເຖິງແມ່ນວ່າມັນຈະເປັນການຍາກທີ່ຈະຕັດສິນຈາກດ້ານຫຼັງຂອງນາງແຕ່ກໍພໍຮູ້ໄດ້ວ່ານາງກຳລັງບໍ່ພໍໃຈໃນເລື່ອງໃດໜຶ່ງ. ເທົ່າທີ່ສິຣິຮູ້ ນາງບໍ່ເຄີຍໃຊ້ຊີວິດຮ່ວມກັບຜູ້ຊາຍຄົນໃດມາກ່ອນ ຍ້ອນນາງວາງມາດຕະຖານໄວ້ໃນລະ ດັບສູງນັ້ນເອງຈິ່ງເຮັດໃຫ້ນາງຂາຍບໍ່ອອກຈັກເທື່ອ.

ຖືເປັນເລື່ອງຍາກທີ່ນາງຈະພົບຮັກໄດ້ໃນຫ້ອງເກັບສົບບ່ອນທີ່ນາງເຮັດວຽກຢູ່ບ່ອນນີ້ແຕ່ກໍຍາກຍິ່ງຂຶ້ນອີກທີ່ຈະພົບຮັກໃນຫ້ອງນ້ອຍໆ ທີ່ນາງອາໄສຢູ່ກັບແມ່ທີ່ກຳລັງປ່ວຍໂຊແລະອາດຈະບໍ່ມີຜູ້ຊາຍຈັກຄົນຢູ່ໃນເມືອງລາວອີກເລີຍທີ່ຈະເກີດມາເປັນຄູ່ຊີວິດກັບນາງ. ຜູ້ຊາຍກໍແມ່ນມະນຸດທີ່ຂາດຄວາມສົມບູນແບບ ແຕ່ກໍມີລົດນິຍົມໃນການເລືອກຄູ່ຄອງທີ່ດີທີ່ສຸດ.

ໃນຊ່ວງຫຼາຍສິບປີກ່ອນ ຜູ້ຄົນນິຍົມຄົນອວບອ້ວນຈົນກາຍເປັນແຟຊັ່ນລະດັບສູງເຊິ່ງສະແດງອອກເຖິງການມີຖານະທີ່ລ້ຳລວຍທັງມີແນວກິນດີໆ ລົດນິຍົມດັ່ງກ່າວໄດ້ແກ່ຍາວມາເປັນເວລາຫຼາຍປີ ແຕ່ພໍມາເຖິງຊ່ວງສະຕະວັດທີຊາວຜູ້ຄົນຊ້ຳພັດນິຍົມຮ່າງກາຍຜອມແຫ້ງຄືຄົນຂາດທາດອາຫານ. ຮ່າງຄີງອັນອວບອ້ວນຂອງຕຸ້ຍເຊິ່ງບໍ່ຕ່າງຫຍັງກັບກະຕ່າຊັກຜ້າຂອງນາງເອງ ຈິ່ງຖືວ່າໝົດສິດທີ່ຈະລຸ້ນອີກຕໍ່ໄປ. ບໍ່ເຄີຍມີຜູ້ຊາຍຄົນໃດທີ່ຈະເຂົ້າມາກ້ຽວພາລາສີນາງຢູ່ແຖວປະຕູໜ້າເຮືອນ ທັງທີ່ພວກເຂົາຮອດບໍ່ໄດ້ອອກແຮງຂຸດກົ່ນຄົ້ນຫາຄວາມເມດຕາປານີ ລວມທັງຄວາມຕະຫຼົກຂົບຂັນຂອງນາງໃຫ້ເສຍແຮງເມື່ອຍເລີຍ ແຕ່ພວກເຂົາກໍບໍ່ຄິດຢາກຈະຖືສຽມຊວ້ານຕິດມານຳ.

ເມື່ອບົດລາຍງານໃໝ່ຂອງສິຣິສຳເລັດ, ເຂົາກໍຈັບເອົາແຊນວິດ ພ້ອມໝາກກ້ວຍສອງສາມໜ່ວຍ ແລະຂວດນ້ຳຊາ ແລ້ວຍ່າງລົງໄປທີ່ແຄມຝັ່ງແມ່ນ້ຳ ເຊິ່ງມີສະຫາຍສີວິໄລນັ່ງຖ້າຢູ່ເທິງຂອນໄມ້ທີ່ທັງສອງເຄີຍນັ່ງເປັນປະຈຳກ່ອນແລ້ວ ພໍດີສິຣິແນມເຫັນສະຫາຍຂອງຕົນກຳລັງໃຊ້ມີດພັບຫັ່ນເຂົ້າຈີ່ຝຣັ່ງທີ່ເຮັດມາແຕ່ເຮືອນກໍຫິວຂຶ້ນ ພ້ອມປ້າຍກົ້ນລົງນັ່ງທາງຂ້າງສະຫາຍຂອງຕົນ ແຕ່ແລ້ວສີວິໄລກໍສູບລົມຫັນໃຈເຂົ້າປອດພ້ອມກົ້ມດັງເພື່ອສືບຫາກິ່ນໃດໜຶ່ງ.

“ອື່ມມມ. ເຮົາໄດ້ກິ່ນຫຍັງຫວາແປກໆ? ຕັບອ່ອນເນົ່າ? ຫຼືວ່າໄຕເນົ່າບໍ?”

“ຖ້າສະຫາຍໄດ້ກິ່ນແປກໆ ເໝັນຕຸ ຕ້ອງແມ່ນກິ່ນໂຕເອງຫັ້ນແຫຼະທ້າວບ້າ, ມື້ເຊົ້ານີ້ເຮົາຍັງບໍ່ໄດ້ຕ້ອງຮອດກະດຸມເສື້ອຂອງສົບເລີຍ.”

"ອາຣາ, ຊ່າງເປັນນໍຄົນເຮົາ." ສີວິໄລທັງເວົ້າທັງຫັ່ນເຂົ້າຈີ່ຕໍ່. "ພັກປະຊາຊົນປະຕິວັດລາວຈ້າງໃຫ້ສະຫາຍເຮັດວຽກແບບນັ້ນຊັ້ນບໍ? ຫຼືວ່າໃຫ້ມານັ່ງຢູ່ຫ້ອງການລ້າໆ? ຫຼືບໍ່ກໍຈ້າງໃຫ້ມາຊອກຈີບສາວແພດຜູ້ຊ່ວຍຢູ່ຫ້ອງການ? ພ້ອມສອນໃຫ້ຍັກກຸມພົນນ້ອຍຕົບມືພ້ອມໆ ກັນທັງສອງຂ້າງຊື່ຫວາ? ບ້າໄປແລ້ວ." ທັນໃດນັ້ນແຊນວິດກ້ອນໜຶ່ງຂອງສີວິໄລກໍຫຼຸດອອກຈາກຕັກກ່ອນມັນຈະກິ້ງຕ້ອກແຕ້ກລົງໄປທາງຕາຝັ່ງທີ່ເຕັມແຕ່ຂີ້ຝຸ່ນ. ສີວິໄລຮີບຫໍ່ອາຫານສ່ວນທີ່ເຫຼືອຂອງຕົນໄວ້ໃນໜັງສືພິມອີກຄັ້ງ ກ່ອນຈະແລ່ນລົງໄປເກັບເອົາແຊນວິດກ້ອນນັ້ນຂຶ້ນມາຄືນ.

ເມື່ອລະດູຝົນຫວນກັບຄືນມາອີກຄັ້ງໃນປີໜ້າ, ລະດັບນ້ຳກໍຈະເພີ່ມສູງຂຶ້ນຫ່າງຈາກຂອນໄມ້ຂອງທັງສອງປະມານສອງສາມແມັດ ແຕ່ຕອນນີ້ ລະດັບນ້ຳໄດ້ຫຼຸດລົງໄປປະມານ ໓໐ ແມັດຈາກຂອບຕາຝັ່ງ, ແລະຈຸດທີ່ນ້ຳບົກລົງໄດ້ເຮັດໃຫ້ແຜ່ນດິນແຫ້ງໄປພ້ອມກັບນ້ຳກາຍເປັນສວນປູກພືດຜັກ ເຊິ່ງຈັດໄດ້ວ່າຜືນດິນຕົກຄ້າງອັນເປິະເປື້ອນຢູ່ຈຸດນີ້ແມ່ນເໝາະສົມສຳລັບການປູກຜັກເປັນທີ່ສຸດ.

ສີວິໄລຄ່ອຍປ່າຍປີນກັບຄືນມາແບບເຊື່ອງຊ້າທັງມຸ່ງໜ້າມາທາງຂອນໄມ້ທີ່ພວກເຂົານັ່ງຢູ່ພ້ອມຫອບອູ້ມເອົາແຊນວິດຂອງຕົນຂຶ້ນມານຳແບບອີລາກອີເລືອ. ເຂົາມີຜັກສະຫຼັດຫຼາຍໃບຕິດມາກັບຖົງເສື້ອດ້ານເທິງ ຕົນຕົວຂອງເຂົາເຕັມແຕ່ຂີ້ຝຸ່ນຕິດຢູ່ ແລະນ້ຳເຫື່ອໄຫຼຍ້ອຍເປັນຊິດໆ ເຂົາຫັ່ງລົມຫັນໃຈອອກ-ເຂົ້າແຮງໆ ເປັນບາດຖີ່ໆ.

"ເຮົາບໍ່ຮູ້ວ່າເປັນຫຍັງໂຕບໍ່ກັດກິນໝົດກ້ອນຄືກັບຄົນທົ່ວໄປເຮັດ", ສີຣິເອີ່ຍປາກຂຶ້ນ.

ສີວິໄລຕອບກັບແບບຫອບຫືດ "ຍ້ອນ..." ເຂົາສູບລົມຫັນໃຈເຂົ້າປອດແບບແຮງໆ, "ກໍຍ້ອນເຮົາເປັນຄົນທີ່ຖືກສອນມາດີນັ້ນແຫຼະ." ເວົ້າສຸດເຂົາກໍໃຊ້ປາກເປົ່າຂີ້ດິນສີແດງອອກຈາກກ້ອນເຂົ້າຈີ່ຂອງຕົນ. "ຍ້ອນເຮົາບໍ່ຢາກຝືນໂຕເອງມາກັດກ້ອນເຂົ້າຈີ່ແຂງໆຄືກັບມະນຸດຖ້ຳບາງຄົນ ແລະອີກຢ່າງໜຶ່ງກໍຍ້ອນປາກຂອງເຮົາບໍ່ໃຫຍ່ເທົ່າປາກໂຕ." ຫຼັງຈາກໃຫ້ເຫດຜົນສິ້ນສຸດລົງເຂົາກໍຄ່ອຍກັດກິນເຂົ້າຈີ່ຢ່າງສຸພາບ.

ສີວິໄລແມ່ນເພື່ອນສະໜິດທີ່ດີຂອງສີຣິໃນເມືອງໂປລິດບູໂຣ, ແລະນັ້ນອາດເປັນຄວາມຈິງທີ່ວ່າກະໂຕສີວິໄລເອງຈິ່ງເປັນຄົນບ້າຄັ່ງທີ່ສືບແນວມາຈາກສີຣິ ແຕ່ວ່າສີຣິເປັນຄົນບ້າຄັ່ງແບບດຶ້ງຽບຜູ້ດຽວ ສ່ວນສີວິໄລຊ້ຳພັດບ້າຄັ່ງແບບຫົວຊົນຝາ. ເຂົາເປັນຄົນສະຫຼຽວສະຫຼາດ ທັງມັກສ້າງແຮງບັນດານໃຈຕະຫຼອດ ເຂົາຍັງເປັນຄົນທີ່ມີແນວຄິດສ້າງສັນທີ່ໜ້າຕື່ນເຕັ້ນຂອງພັກກໍວ່າໄດ້.

ຢ່າງໃດກໍຕາມ, ເຫັນວ່າຄວາມຄິດຂອງເຂົາກ້າວໄກເກີນໄປເລັກໜ້ອຍເມື່ອທຽບກັບລະບົບສັງຄົມນິຍົມທີ່ກຳລັງຄືບຄານໄປຢ່າງເຊື່ອງຊ້າຢູ່ອ້ອມຮອບກະໂຕຂອງເຂົາ.

ເຂົາກະຕຸກຂ້າງສິຣິໃຫ້ເບິ່ງໝາທີ່ກຳລັງຕື່ນເຕັ້ນຢ່າງມີຊີວິດຊີວາ ຂະນະທີ່ທາງຂ້າງຂອງມັນແມ່ນແມ່ຍິງຄົນຝຣັ່ງເສດ ທີ່ເປັນພະຍາດຂໍ້ກະດູກເຊິ່ງເປັນຜູ້ພາມັນອອກມາຢ່າງຫຼິ້ນ. ໝາໂຕນັ້ນແລ່ນກັບໄປກັບມາ ພ້ອມນ້ຳລາຍໄຫຼຍ້ອຍເປັນສາຍທັງກະໂດດໂລດເຕັ້ນຈົນເຊືອກທີ່ຢູ່ຄ້ອງຄໍຂອງມັນເໜັງຕີງເພືອບໆ ໄປຕາມແຮງດຶງຂອງໝາ ແຕ່ບໍ່ມີຫຍັງມາກະທົບກະເທືອນໃຫ້ແມ່ຍິງຄົນນັ້ນຕ້ອງຍ່າງໄວຂຶ້ນ ຫຼືປ່ຽນຈຸດເດີນໄປທາງອື່ນ. ສີວິໄລຮູ້ສຶກອຶດອັດໃຈແທນທັງຂີ້ນຫູຂີ້ນຕາແບບບອກບໍ່ຖືກ.

ສີວິໄລເປັນຄົນເຕັ້ຍຕ່ຳ ໜ້າຕາທ່າທີຂອງເຂົາຄືກັບຄົນຖືບລົດສາມລໍ້ຮັບຈ້າງ, ຫົວຂອງເຂົາບໍ່ງໍ້ບໍ່ສົນກັບເສັ້ນຜົມທີ່ມັນຫາຍໄປຕັ້ງແຕ່ດົນນານມາແລ້ວ, ຕາຂອງເຂົາປົກຄຸມດ້ວຍແວ່ນທີ່ມີຂອບຂະໜາດໃຫຍ່ ຍິ່ງເຮັດໃຫ້ເບິ່ງຄືກັບໂຕຈິ່ນາຍຕາໃຫຍ່ໆ. ເຂົາເກີດກ່ອນສິຣິພຽງແຕ່ສອງວັນ ຈຶ່ງບໍ່ເໝາະທີ່ຈະຮ້ອງເຂົາວ່າອ້າຍ ຫຼືຜູ້ອາວຸໂສກວ່າ.

“ປາກຂອງໂຕນະກວ້າງໆ ພໍກັບຂອງເຮົານັ້ນແຫຼະອ້າຍ ຖ້າໂຕໝັ່ນໃຊ້ມັນໃຫ້ຫຼາຍຂຶ້ນກວ່ານີ້.”

“ໂອເປັນແລ້ວເຮົາ. ມາຫຼິ້ນໄມ້ນີ້ອີກແລ້ວບໍນີ.”

“ເຮົາປ່ວຍ. ເຮົາຄິດວ່າຄືຊິຢູ່ໄດ້ອີກບໍ່ດົນ.” ສິຣິທັງເວົ້າທັງໃຊ້ແຂ້ວຈົກກັດເຂົ້າຈີ່ຝຣັ່ງກ່ອນຈະຫຍໍ້າຕ້ອຍໆ. “ເຮົາໝາຍຄວາມວ່າມັນເປັນທຳມະຊາດຂອງຊີວິດ. ເມື່ອໃດທີ່ຕົ້ນໝາກຫຸ່ງເຖົ້າຢຸດເຊົາຜະລິດໝາກອັນແຊບຊ້ອຍ, ຈາກນັ້ນເຈົ້າກໍຈະປູກຕົ້ນນ້ອຍຂຶ້ນແທນທີ່. ເຈົ້າຈະບໍ່ລໍຖ້າໃຫ້ມັນຕາຍກ່ອນແນ່ນອນ. ພັກໄດ້ສົ່ງນັກ ສຶກສາຫົກຄົນໄປເອີຣົບຕາເວັນອອກທຸກໆ ສາມເດືອນເພື່ອຝຶກອົບຮົມທາງການແພດ. ແນ່ນອນໃນບັນດານັກສຶກສາທັງໝົດນັ້ນ ອາດມີພຽງຄົນໃດຄົນໜຶ່ງທີ່ຕ້ອງການຢາກເປັນໝໍຊັນນະສູດສົບແທ້ໆ ໃນອະນາຄົດ.

“ເຮົາບໍ່ແມ່ນຕົວແທນບໍລິການທາງການແພດໃດ” ສີວິໄລໂຕ້ກັບຄືນ.

“ບໍ່ດອກ, ແຕ່ວ່າໂຕເປັນໃຫຍ່ກວ່ານັ້ນ. ພວກເຂົາຈະປະຕິບັດຕາມຄຳເວົ້າຂອງໂຕທັງໝົດ.” ເຂົາຢິບຂວດຊາຂະໜາດໃຫຍ່ຂຶ້ນມາດື່ມພ້ອມກັບສົ່ງຂວດໄປທາງສີວິໄລ. “ເຮົາບໍ່ຢາກຈະຕັດຫັ່ນສົບຈົນກວ່າເຮົາເອງຈະກາຍເປັນສົບຄືພວກເຂົາ. ເຮົາຢາກຮູ້ເລື່ອງນີ້ອີ່ຫຼີ ຢາກຮູ້ວ່າເມື່ອໃດຈຶ່ງຈະມີຄົນມາຮັບໜ້າທີ່ນີ້ແທນເຮົາ ... ເມື່ອໃດເຮົາຈະໄດ້ຢຸດເຮັດວຽກນີ້ ມີແຕ່ເທວະດາຟ້າແຖນເທົ່ານັ້ນຮູ້ວ່າເຮົາຈະຕາຍໄດ້ເມື່ອໃດ. ແລ້ວສະຫາຍຈະເຮັດແນວໃດຕໍ່?”

“ຮີບກິນແຊນວິດໂຕເຫຼືອໃຫ້ໝົດຫັ້ນນະ.”

“ມັນຊິມີປະໂຫຍດວິມານຫຍັງທີ່ຕ້ອງມາທຳທ່າເປັນມິດກັບເຈົ້າໜ້າທີ່ໂປລິດບູໂຣຖ້າເຮົາບໍ່ສາມາດຂໍຄວາມຊ່ວຍເຫຼືອຈາກພວກເຂົາແມ່ນແຕ່ໜ້ອຍດຽວ?”

"ສະຫາຍກໍເຮັດທຳທ່າລອງເບິ່ງແຫຼະ ໂຕຮູ້ດີຢູ່ນາ ອາດຈະອ້າງວ່າເປັນ ຄວາມຜິດພາດຊິບໍ່ໄດ້ຫວາ?"

"ແມ່ນຫຍັງເກາະ?"

"ຕາບໃດທີ່ພວກເຂົາພໍໃຈຕໍ່ການເຮັດວຽກຂອງສະຫາຍ ພວກເຂົາຍັງຈະໃຫ້ສະຫາຍເຮັດວຽກນີ້ສືບຕໍ່ໄປ. ແຕ່ຖ້າເລີ່ມແບບວ່າ ... ໂອຍຊິວ່າແນວໃດດີຫວາ ... ລອງແຍກສິ້ນສ່ວນແບບຜິດໆ ຖືກໆ, ແລ້ວພວກເຂົາກໍຈະຄຳນຶງເຖິງຄວາມຈຳເປັນອັນຮີບດ່ວນທີ່ຈະຕ້ອງຫາຄົນໃໝ່ມາປ່ຽນແທນສະຫາຍແນ່ນອນ."

"ແຍກສິ້ນສ່ວນແບບຜິດໆ ຖືກໆ ຫວາ?"

"ແມ່ນແລ້ວ. ພຽງແຕ່ລອງສິ່ງຮູບສະໝອງໄປໃຫ້ສະຫາຍພິພາກສາຂອງໂຕພ້ອມລາຍງານບອກວ່າມັນແມ່ນຕັບ."

"ໝໍນັ້ນບໍ່ມີທາງຮູ້ວ່າມັນຜິດດອກ. ເພາະຕັບຂອງເຂົາອາດຈະໄປຢູ່ແທນທີ່ສະໝອງຂອງເຂົາແລ້ວແຫຼະ." ເວົ້າສຸດທັງສອງກໍຫົວຂຶ້ນພ້ອມກັນ.

"ເຮົາຫວັງວ່າສະຫາຍບໍ່ໄດ້ດູຖູກດູໝິ່ນຜົນການຕັດສິນຂອງສານ. ເພາະເຮົາອາດຈະຟ້ອງສະຫາຍໄດ້ໃດ."

"ເຮົາບໍ່ມີຫຍັງຈະມາຕໍ່ຕ້ານເລື່ອງການຕັດສິນຂອງສານ."

"ເອີດີ,"

"ເຮົາພຽງເວົ້າເຖິງທ້າວຈ້າຜູ້ໜຶ່ງທີ່ເປັນຕົວແທນຂອງລະບົບເທົ່ານັ້ນດອກ. ແລ້ວວັນພັກທ້າຍອາທິດຂອງສະຫາຍເປັນແນວໃດ?"

"ດີຫຼາຍເຕີບຢູ່. ເຮົາໃຊ້ເວລາທັງສອງວັນຢູ່ວັງວຽງໃນງານສຳມະນາທາງການເມືອງ. ສະຫາຍເດລະ?"

"ຂຸດຄົນຄູ."

"ມັນເປັນແນວໃດລະ?"

"ຄັກເຕີບຢູ່. ກຸ່ມຂອງເຮົາໄດ້ລາງວັນປະກວດແຂ່ງຂັນ 'ເພງປຸກລະດົມການອອກແຮງງານ'."

"ດີຫຼາຍ. ໄດ້ລາງວັນຫຍັງຕິດມືມານຳ?"

"ຊວ້ານອັນໜຶ່ງ."

"ອັນດຽວຫັ້ນຫວາ?"

"ພວກເຮົາຜັດປ່ຽນກັນໃຊ້ໃນໃນແຕ່ລະອາທິດ ໂດຍຈັດລຳດັບຕາມຕົວອັກສອນ. ເດືອນນີ້ມີຂ່າວຄາວໃຫຍ່ຫຍັງເກີດຂຶ້ນອ້ອມແອ້ມເຂດນີ້ ຫຼືບໍ່?"

“ຂ່າວໃຫຍ່ຫວາ? ຫວ່າງອາທິດແລ້ວນີ້ພວກເຮົາກໍມີຂ່າວໃຫຍ່ເປັນອັນດັບຕົ້ນຂອງໂລກພຸ້ນແຫຼະ.”

“ມີອາຊະຍາກຳເກີດຂຶ້ນໜ້ອຍທີ່ສຸດແມ່ນບໍ?”

“ອັດຕາເງິນເຟີ້ສູງທີ່ສຸດພັ້ນຕິ.”

“ສູງທີ່ສຸດໃນໂລກຫວາ? ວ້າວ! ຊັ້ນພວກເຮົາໜ້າຈະສະຫຼອງກັນ ຫຼືເຮັດຫຍັງຈັກຢ່າງແລ້ວແຫຼະ.”

“ນອກຈາກນັ້ນກໍຍັງມີເລື່ອງເລົ່າລືກ່ຽວກັບພວກທຸ່ນເຊີດນຳອີກ.”

“ເລົ່າໃຫ້ຟັງແດ່ດູຊັ້ນ.”

“ພັກໄດ້ສັ່ງໃຫ້ພວກທຸ່ນເຊີດທີ່ວັດຊຽງທອງໃນຫຼວງພະບາງຢຸດຕິການນຳໃຊ້ພາສາເຈົ້າ ພ້ອມສັ່ງໃຫ້ພວກເຂົາເລີ່ມຮ້ອງກັນເອງວ່າ ‘ສະຫາຍ’ ແທນ.”

“ມັນກໍຖືກແລ້ວເດທີ່ເອີ້ນກັນແບບນີ້. ພວກເຮົາຕ້ອງສະແດງໃຫ້ພວກທຸ່ນເຊີດເຫັນວ່າ ແມ່ນໃຜທີ່ຄອຍດຶງເຊືອກຢູ່ຂ້າງຫຼັງ.” ສີວິໄລທັງເວົ້າທັງໃຊ້ໃບຜັກສະຫຼັດຕີໃສ່ສີຣິເບົາໆ. “ແລ້ວເປັນແນວໃດຕໍ່?”

“ພວກທຸ່ນເຊີດປະຕິເສດພັ້ນຕິ.”

“ຕ້ອງໂຄ່ນລົ້ມພວກຊາດຊົ່ວນີ້.”

“ສະມາຊິກພັກຂອງທ້ອງຖິ່ນໄດ້ທຳການກັກບໍລິເວນພວກເຂົາໄວ້ ພ້ອມທັງບໍ່ອະນຸຍາດໃຫ້ອອກໄປທາງໃດຈົນກວ່າພວກເຂົາຈະຍອມ.”

“ແບບນັ້ນແຫຼະຈິ່ງຈະໃຫ້ບົດຮຽນພວກເຂົາແດ່.”

ທັງສອງຍືດເວລາການຮັບປະທານອາຫານທ່ຽງອອກໄປໃຫ້ດົນທີ່ສຸດເທົ່າທີ່ຈະເຮັດໄດ້ ພວກເຂົາເກາະແຂນກັນຍ່າງຂ້າມໄປທີ່ໂຮງໝໍຄ້າຍຄືຄົນເມົາເຫຼົ້າ. ພໍມາຮອດເສົາປະຕູຄອນກຣິດ ສີວິໄລໄດ້ຢ້ຳໃຫ້ສີຣິຮູ້ວ່າຕົນຈະອອກໄປວຽກທາງພາກໃຕ້ເປັນເວລາໜຶ່ງອາທິດ ແລະເຂົາຄວນຈະເກັບຮັກສາຂອນໄມ້ໄວ້ໃນວັນຈັນໜ້າ ທັງສອງກ່າວອຳລາກັນຢູ່ບ່ອນນັ້ນ ແລ້ວສີຣິກໍກັບຄືນມາທີ່ທາງເຂົ້າໂຮງໝໍ.

ພໍແຕ່ເຂົາຍ່າງໄປໄດ້ຫ້າແມັດ ກໍແນມເຫັນກິ່ງກ້າວບາດຕີນແບບເຄິ່ງຍ່າງເຄິ່ງແລ່ນມາທາງຕົນ. ຜູ້ຊ່ວຍໃນໂຮງເກັບສົບຢຸດເບກຕີນຫ່າງຈາກໜ້າຂອງສີຣິເກືອບບໍ່ຮອດສອງຊັງຕີແມັດ. ກິ່ງທັງຕື່ນເຕັ້ນ ແລະຄວາມຕື່ນເຕັ້ນມັກຈະປົກປິດເອົາຄຳເວົ້າຂອງເຂົາໄວ້ໃນປາກ ເຂົາພະຍາຍາມອ້າມັນຂຶ້ນເພື່ອຈະເວົ້າສິ່ງໃດໜຶ່ງອອກມາ ແລະກໍເວົ້າຫຍັງບໍ່ໄດ້ ໃບໜ້າຂອງກິ່ງເລີຍກາຍເປັນສີຂຽວ.

ສີຣິຖອຍກັບຄືນມາກ້າວໜຶ່ງ ພ້ອມວາງມືສອງເບື້ອງໃສ່ເທິງບ່າໄຫຼ່ຂອງກິ່ງທັງສອງຂ້າງທັງບີບຄັ້ນຢ່າງແຮງ. “ບໍ່ຟ້າວກໍໄດ້ ທັນໃຈເລີກໆ ຈັກສອງສາມບາດກ່ອນນ້ອງກິ່ງ.

ບໍ່ມີຫຍັງສຳຄັນຈົນເຈົ້າຕ້ອງຫັນໃຈບໍ່ອອກດອກ." ກິ່ງເຮັດຕາມທີ່ສິຣິບອກ.

"ເອົາລະບັດນີ້, ຕອນທີ່ອ້າຍອອກໄປກິນເຂົ້າທ່ຽງນັ້ນ ມີຫຍັງເກີດຂຶ້ນຈົນໂລກສັ່ນສະເທືອນ ຫຼືບໍ່?"

"ສະຫາຍ ຄາ ... ຄາ ... ຄາ ..."

"ຄຳບໍ?"

"... ຂອງສະຫາຍຄຳ"

"ລາວຢູ່ພີ້ບໍ?"

"... ເມຍລາວ."

"ເມຍຂອງລາວຢູ່ພີ້." ກິ່ງດີໃຈທີ່ສາມາດສື່ສານໄດ້ແຈ້ງຂຶ້ນ. ເຂົາຫັ່ງລົມຫັນໃຈອອກຮູດໃຫຍ່ ກ່ອນຈະຕົບມືສຽງດັງ ພ້ອມກະທືບຕີນໃສ່ເທິງພື້ນດິນ. ຂະນະນັ້ນມີຜູ້ສອດຮູ້ສອດເຫັນສອງຄົນຍ່າງຜ່ານໄປ ພວກເຂົາກໍຢຸດເບິ່ງທ່າທາງການປະພຶດຂອງກິ່ງ. ຄົນລາວທີ່ມາຈາກບ້ານນອກທົ່ວໄປບໍ່ຄິດຈຽມເນື້ອຈຽມຕົວຈັກດີ້ທີ່ຈະເຮັດໃຫ້ຄົນອື່ນອັບອາຍຂາຍໜ້າຍ້ອນ ຈາກນັ້ນອີກຄົນກໍຫັນໄປທາງຜູ້ທີ່ຍ່າງນຳກັນ ພ້ອມເວົ້າອອກມາໝົດແຮງວ່າ,

"ປັນຍາອ່ອນ"

ກິ່ງຟ້າວຫັນໜ້າມາທາງພວກເຂົາທັນທີ.

"ຕ້ອງແມ່ນພວກດຽວກັນຫັ້ນແຫຼະ ... ຈິ່ງເບິ່ງອອກໄດ້."

ສິຣິຮູ້ສຶກສະໃຈເມື່ອຜູ້ຊົມບໍ່ໄດ້ຖືກເຊີນສອງຄົນນັ້ນໜ້າຫຼ່າລົງກັບບາດ. ເຂົາຫົວຂວັນຄົນພວກນັ້ນແລ້ວກໍໃຊ້ແຂນໂອບບ່າກິ່ງ ກ່ອນຈະພາເຂົາຍ່າງອອກໄປ.

"ດີແລ້ວນ້ອງກິ່ງ ແມ່ນໃຜສອນໃຫ້ນ້ອງແອບເວົ້າແນວຫຍາບຄາຍແບບນັ້ນ?"

ກິ່ງຫົວຂຶ້ນ ກ່ອນຈະຕອບ.

"ທ່ານໝໍຫັ້ນແຫຼະ."

ທັງສອງພາກັນຍ່າງຜ່ານຕຶກບໍລິຫານ ສ່ວນກິ່ງຄືກັບວ່າກຳລັງຄົ້ນຄິດບາງຢ່າງທີ່ອັດອັ້ນໄວ້ໃນຫົວຂອງຕົນ ໃນທີ່ສຸດເຂົາກໍເວົ້າອອກມາ.

"ແຕ່ຄວາມຈິງແລ້ວຂ້ອຍກໍແມ່ນ ... ແມ່ນຄົນປັນຍາອ່ອນແທ້."

ສິຣິຢຸດ ແລ້ວຫັນໜ້າໄປທາງກິ່ງ.

"ນ້ອງກິ່ງເອີຍ ເມື່ອໃດນ້ອງຈິ່ງຊິເຊື່ອຟັງອ້າຍຈັກເທື່ອ? ນ້ອງບໍ່ແມ່ນຄົນປັນຍາອ່ອນດອກ. ພໍ່ຂອງນ້ອງພຸ້ນເປັນຄົນຜິດນະ ຍ້ອນລາວບໍ່ເຂົ້າໃຈຫຍັງທັງໝົດ. ຈື່ໄດ້ບໍວ່າອ້າຍເຄີຍບອກຫຍັງເຈົ້າແດ່?"

"ຂ້ອຍ ... ຂ້ອຍເປັນ ..."

"ອາການທາງພັນທຸກຳປະເພດໜຶ່ງ."

"ເອີ້ນວ່າ ດາວຊິນໂດມ." ກົ່ງທ່ອງຄຳເວົ້າຈາກລາຍການໜຶ່ງທີ່ຍຶດຍາວເຊິ່ງໄດ້ສະສົມໄວ້ໃນຄວາມຈຳຂອງເຂົາ. "ໃນບາງມູມມອງພັດທະນາການຂອງຂ້ອຍກໍຊ້າກວ່າຄົນອື່ນ, ແຕ່ໃນບາງອັນຂ້ອຍກໍສະຫຼາດກວ່າ." ເວົ້າສຸດພວກເຂົາກໍຍ່າງຕໍ່.

"ຖືກຕ້ອງ ແລະອີກດ້ານໜຶ່ງທີ່ນ້ອງມີເໜືອກວ່ານັ້ນກໍຄື ການຈົດຈຳສິ່ງຕ່າງໆ ໄດ້ເປັນຢ່າງດີ ຈາກສິ່ງທີ່ໄດ້ຮຽນຮູ້ເມື່ອດົນນານມາແລ້ວ. ນ້ອງສາມາດຈົດຈຳສິ່ງຕ່າງໆໄດ້ດີກວ່າອ້າຍອີກ."

ກົ່ງສິ່ງສຽງອຶດໆ ຄືໝູດ້ວຍຄວາມຍິນດີ.

"ແມ່ນໃດເນາະ."

"ແມ່ນຫັນແຫຼະ. ອີກຢ່າງທີ່ສິ່ງເຈົ້າເກັ່ງກວ່າອ້າຍກໍແມ່ນເລື່ອງນ້ຳເຢັນປະສົມນ້ຳກ້ອນ."

"ແມ່ນ, ຂ້ອຍເກັ່ງແທ້ເລື່ອງນັ້ນ." ນັບແຕ່ຜູ້ອຳນວຍການສັ່ງຫ້າມບໍ່ໃຫ້ພະນັກງານນຳເອົາເຄື່ອງດື່ມສ່ວນຕົວໄປເກັບໄວ້ໃນຕູ້ແຊ່ແຂງຂອງຫ້ອງເກັບສົບ, ຕູ້ເຢັນທີ່ໃກ້ທີ່ສຸດຈິ່ງແມ່ນໃນໂຮງອາຫານຂອງພະນັກງານ. ກົ່ງມັກໄປບ່ອນນັ້ນປະຈຳ ເພື່ອເສີບນ້ຳໃຫ້ແຂກດື່ມ ເນື່ອງຈາກພວກຜູ້ສາວຫຼາຍຄົນມັກໃສ່ຄາລົມຢອກເຂົາ.

"ເມຍຂອງສະຫາຍຄຳມາພີ້ຄົນດຽວບໍ?"

"ໂດຍ."

"ແລ້ວເຈົ້າກໍຄວນຈະຫານ້ຳເຢັນໆ ຈັກຈອກມາເສີບໃຫ້ລາວນຳໄດ້ບໍ? ມື້ນີ້ກໍຂ້ອນຂ້າງຮ້ອນ."

"ໂດຍ ໄດ້ຂ້ານ້ອຍ."

ກົ່ງຟ້າວມຸ່ງໜ້າໄປທາງໂຮງອາຫານ ແລ້ວສີຣິກໍຊະລໍຄວາມໄວຂອງບາດຍ່າງລົງ. ເຂົາຕ້ອງການຄາດເດົາຈຸດປະສົງຂອງທ່ານນາງນິດນ້ອຍທີ່ມາບ່ອນນີ້ ເພາະທຸກຄັ້ງທີ່ນາງມາ ນາງມັກຈະນຳເອົາຄວາມເດືອດຮ້ອນມາມອບໃຫ້ສີຣິເປັນປະຈຳ ເຖິງແມ່ນຫວ່າງບໍ່ດົນມານີ້ສີຣິບໍ່ໄດ້ເຮັດຫຍັງຜິດພາດກໍຕາມ.

ແມ່ນິດນ້ອຍເປັນແມ່ຍິງທີ່ແຂງແຮງ, ເວົ້າສຽງດັງ ແລະໜ້າອົກຂອງນາງໃຫຍ່ກັບກົ້ນສະໂພກກໍແບນເຫັ່ເລ້ ທັງເປັນຕາຢ້ານຄ້າຍກັບວ່າມັນຈະກິ້ງໃສ່ຜູ້ຄົນປານລົດຖັງ. ນາງແມ່ນເຈົ້າໜ້າທີ່ພັກຄອມມູຍນິດອາວຸໂສປະຈຳສູນກາງສະຫະພັນແມ່ຍິງລາວເຊິ່ງຖືເປັນອີກບຸກຄົນໜຶ່ງທີ່ມີບົດບາດທາງການເມືອງໜັກແໜ້ນພໍເທົ່າໆ ກັບນ້ຳໜັກຂອງນາງ. ນອກເໜືອຈາກສິ່ງອື່ນທັງໝົດກໍແມ່ນນາງເປັນຄົນເຈົ້າກີ້ເຈົ້າ ການເກີນໄປ.

"ມັນຕ້ອງແມ່ນເລື່ອງເກີບແທ້ໆ," ສີຣິຄິດຜູ້ດຽວ. ຜູ້ພິພາກສາແຫງຄົງຈະໄປ

ລາຍງານເລື່ອງຄວາມຫົວດື້ບໍ່ຟັງຄວາມຂອງເຂົາ ພ້ອມຮ້ອງຮຽກເອົາບຸກຄົນທີ່ມີອິດທິພົນມາຈັດການ. ນາງອາດມາທີ່ນີ້ເພື່ອບັງຄັບໃຫ້ເຂົາຍອມໃສ່ເກີບຢາງທີ່ຮ້ອນເອົ້າ ເຊິ່ງຈະເຮັດໃຫ້ພົບແຕ່ຄວາມຫງຸດຫງິດໃຈ. ນາງອາດກຳລັງນັ່ງຖ້າຢູ່ໂຕະເຮັດວຽກຂອງເຂົາ ພ້ອມຈັບໂມງຂຶ້ນມາເບິ່ງແບບຮ້ອນຮົນຕະຫຼອດເພື່ອຈ້ອງຈັບຜິດວ່າສີຣິຈະກັບຈາກກິນເຂົ້າທ່ຽງໄດ້ຊ້າພຽງໃດ. ນາງຈະທຳທ່າສະແດງສີໜ້າທ່າທາງແບບລ່າເລີງ ພ້ອມຈັບມື ແລະທັກທາຍຖາມຂ່າວກ່ຽວກັບສຸຂະພາບຂອງເຂົາ ຈາກນັ້ນກໍໃຊ້ວາຈາສຽບແທງເພື່ອຂາຍໜ້າເຂົາ.

ທ້ອງໄສ້ຂອງສີຣິຮູ້ສຶກປັ່ນປວນຂຶ້ນມາທັນທີ ເມື່ອຍ່າງຜ່ານປ້າຍ **ຫ້ອງເກັບສົບ**. ເຂົາຢຸດຈົ້ງຢູ່ປະຕູຕໍ່ໜ້າຫ້ອງການຕົນ ພ້ອມເລີ່ມນັບ ໜຶ່ງ, ສອງ, ສາມ ກ່ອນຈະຖີກບາດຕົນເຂົ້າມາທາງໃນຢ່າງໝັ້ນໃຈ. ຕຸ້ຍນັ່ງຢູ່ຫັ້ນພຽງຄົນດຽວ ສາຍຕາຂອງນາງຈັບຈ້ອງໃສ່ຕົວອັກສອນບາງຢ່າງ ກ່ອນທີ່ຈະຮີບຈັບມັນຍັດເຂົ້າໄປໄວ້ໃນລິ້ນຊັກທັນທີທີ່ເຫັນໜ້າສີຣິ.

"ທ່ານນາງນິດນ້ອຍເດ?"

"ໃນຕູ້ແຊ່ແຂງ."

ໃບໜ້າຂອງສີຣິຈິດຊີດເຂົ້າ ແລະໂສດປະສາດຂອງເຂົາກໍສະແດງອາການຢາກຮູ້ຢາກເຫັນທັນທີ.

"ວ່າຫຍັງເກາະ ...?"

"ມີຄົນເອົາສົບຂອງລາວມາພີ້ ຫຼັງຈາກທີ່ທ່ານໝໍອອກໄປກິນເຂົ້າທ່ຽງ."

"ເກີດຫຍັງຂຶ້ນກັບລາວ?" ເຂົາໂຍບຕົວທົ້ມລົງເທິງຕັ່ງຈົນມັນສົ່ງສຽງດັງອອດແອດ.

"ລາວຕາຍແລ້ວ."

"ເອົາລະ, ຂ້ອຍກໍຫວັງວ່າລາວຕາຍນັ້ນລະບໍ່ຊັ້ນລາວຄົງບໍ່ຢູ່ໃນຕູ້ແຊ່ແຂງດອກ. ແຕ່ລາວເປັນຫຍັງຈິ່ງຕາຍ?"

ຕຸ້ຍແຫງນໜ້າຂຶ້ນເບິ່ງສີຣິໂດຍປາສາຈາກຄຳຕອບ ແຕ່ແທນດ້ວຍຮອຍຍິ້ມຈືດໆ.

"ຂ້ອຍເປັນນາງພະຍາບານ. ສ່ວນທ່ານເປັນໝໍຊັນນະສູດສົບ. ບໍ່ແມ່ນທ່ານເອງບໍຈະເປັນຄົນບອກພວກເຮົາ?"

"ເຈົ້າພໍຈະບອກຂ້ອຍແບບຄາວໆ ຕັ້ງແຕ່ຕົ້ນໄດ້ບໍ? ໃຜເປັນຜູ້ເອົາສົບລາວມາພີ້? ພວກເຂົາບອກແນວໃດແດ່?"

"ມີຄົນຂັບລົດສອງຄົນມາຈາກສູນກາງສະຫະພັນແມ່ຍິງ ພວກເຂົາບອກວ່າລາວນັ່ງກິນເຂົ້າທ່ຽງຢູ່ດີໆ ແລ້ວນ້ຳລາຍກໍໄຫຼຟູມປາກອອກມາ ຈາກນັ້ນລາວກໍລົ້ມຟຸບລົງແລ້ວໝົດສະຕິ. ພວກເຂົາຮີບພາກັນກວດເຊັກເບິ່ງຊີບພະຈອນຂອງລາວ ແລ້ວຈິ່ງຮູ້

ວ່າຫົວໃຈຂອງລາວຢຸດເຕັ້ນແລ້ວ. ທ່ານໝໍປະຈຳສູນກາງສະຫະພັນແມ່ຍິງຈິ່ງບອກພວກເຂົານຳສົບລາວມາໄວ້ບ່ອນນີ້ ເພາະມັນເປັນ ... ທ່ານໝໍເອີ້ນແນວໃດ? ແບບວ່າມັນເປັນການຕາຍທີ່ຜິດປົກກະຕິຫັ້ນນະ."

ສິຣິຮູ້ສຶກບໍ່ສະບາຍໃຈທີ່ພົບວ່າຄວາມຮູ້ສຶກທຳອິດຂອງຕົນບໍ່ແມ່ນຄວາມເຫັນອົກເຫັນໃຈຕໍ່ຜູ້ຍິງທີ່ໜ້າສົງສານຄົນນີ້, ແຕ່ຊ້ຳພັດຮູ້ສຶກໂລ່ງໃຈທີ່ເຂົາຈະບໍ່ຖືກບັງຄັບໃຫ້ໃສ່ເກີບຢາງພວກນັ້ນ. ຈາກນັ້ນຄວາມຮູ້ສຶກທີສອງກໍເກີດຂຶ້ນ. ນັບແຕ່ມີເລີ່ມເປັນເຈົ້າໜ້າທີ່ຊັນນະສູດສົບໃນສິບເດືອນຜ່ານມາ ເລື່ອງນີ້ມັນຈະກາຍເປັນຄະດີທຳອິດຂອງເຂົາທີ່ໂດ່ງດັງທັງຊ່າລືກັນຈົນໝາຫູ. ບັນດາພະນັກງານອາວຸໂສຂອງພັກຫຼາຍທ່ານຈະຕ້ອງພາກັນຕິດຕາມຜົນການເຮັດວຽກຂອງເຂົາ. ເຂົາຍັງຄິດໄຕ່ຕອງເຖິງຜົນທີ່ຈະຕາມມານຳອີກ.

"ສະຫາຍຄຳຮູ້ເລື່ອງນີ້ແລ້ວ ຫຼືຍັງ?"

"ລາວຍັງຢູ່ຊຽງຂວາງຕອນນີ້ ມີຄົນໂທບອກລາວແລ້ວ ແລະລາວກໍບອກໃຫ້ລົງມືທຳການຊັນນະສູດສົບໄດ້ເລີຍ. ລາວຈະບິນກັບຕອນແລງມື້ນີ້."

"ຂ້ອຍຄິດວ່າພວກເຮົາຄວນເລີ່ມຈັດການໄດ້ແລ້ວ." ເຂົາລຸກຢືນຂຶ້ນ, ສູບລົມຫັນໃຈເຂົ້າປອດບາດໜຶ່ງ ພ້ອມຍ່າງເບັດໜ້າໄປທີ່ຫ້ອງຊັນນະສູດສົບ ເຊິ່ງມີກິ່ງຢືນໂຍກຕົວກະສັບກະສ່າຍໄປມາຢູ່ຕໍ່ໜ້າຕູ້ແຊ່ແຂງ ມືໜຶ່ງຂອງກິ່ງຖືຈອກນ້ຳເຢັນ ສ່ວນອີກມືໜຶ່ງຖືເຈ້ຍທິດຊູຄ້າງໄວ້ເຕິ່ງເຊິ່ງຢູ່.

**********

ຂັ້ນຕອນການປະຕິບັດຕາມຫຼັກສູດກຳນົດສິ້ນສຸດລົງ ຈົນຮອດສີ່ໂມງຄໍ່າພໍດີ. ສົບຂອງນາງນິດນ້ອຍໄດ້ຮັບການວັດແທກຊິ້ນສ່ວນແລ້ວຮຽບຮ້ອຍ ຍັງແຕ່ບໍ່ໄດ້ວັດນ້ຳໜັກເນື່ອງຈາກພວກເຂົາບໍ່ມີຊິງຊັ່ງ. ໃນຕອນຕົ້ນປີ ພວກເຂົາທົດລອງໃຊ້ຕາຊິງປະເພດດຽວກັບທີ່ເຄີຍໃຊ້ໃນຫ້ອງນ້ຳສອງເຄື່ອງ. ສິຣິກັບກິ່ງ ພາກັນຊັ່ງນ້ຳໜັກຂອງພວກຕົນກ່ອນຈາກນັ້ນກໍພາກັນອູ້ມສົບຂຶ້ນຕັ້ງໄວ້ຢູ່ລະຫວ່າງກາງຂອງທັງສອງ. ເນື່ອງຈາກຄວາມຜິດພາດທີ່ຍາກຈະເຂົ້າໃຈໄດ້ໃນທາງຟີຊິກສາດ ເຮັດໃຫ້ຜົນຊັ່ງນ້ຳໜັກມີພຽງເຄິ່ງໜຶ່ງເຊິ່ງບໍ່ຕົງກັບສິ່ງທີ່ມັນຄວນຈະເປັນ. ທັງສອງຈິ່ງພາກັນຢຸດໃຊ້ຊິງຊັ່ງນ້ຳໜັກນັບແຕ່ມື້ນັ້ນເປັນຕົ້ນມາ.

ມາຮອດຈຸດໜຶ່ງ, ສິຣິກົ້ມລົງຊື່ໜ້າສົບຂອງແມ່ຍິງເຄາະຮ້າຍຜູ້ນັ້ນ ເຂົາກໍຮ້ອງກິ່ງມາເບິ່ງນຳ.

"ນ້ອງກິ່ງ, ດັງເຈົ້າໄດ້ກິ່ນດີກວ່າຂອງຂ້ອຍ. ເຈົ້າໄດ້ກິ່ນຍັງບໍນີ?

ກົ່ງບໍ່ຈຳເປັນຕ້ອງກົ້ມໜ້າລົງ ເພາະເຂົາໄດ້ກິ່ນແລ້ວ.

"ຢາມ່ອງ."

"ດີຫຼາຍ, ບັດນີ້ພວກເຮົາພາກັນຖອດດຸມເສື້ອຂອງສິບນີ້ຊ່ວຍກັນ ໄດ້ບໍ່?"

"ກັບຖົ່ວ."

"ຫະ! ອີ່ຫຍັງເກາະ?"

"ຢາມ່ອງກັບຖົ່ວ. ຂ້ອຍ ... ຂ້ອຍໄດ້ກິ່ນຖົ່ວ."

ສີຣິບໍ່ພຽງແຕ່ບໍ່ໄດ້ກິ່ນຖົ່ວ ຫຼືແມ່ນແຕ່ຍັງບໍ່ເຂົ້າໃຈໃນສິ່ງທີ່ກົ່ງເວົ້າເຖິງ, ແຕ່ເຂົາກໍບອກໃຫ້ຕຸ້ຍຣີບຈົດບັນທຶກໄວ້ກ່ອນ.

ເມື່ອເສື້ອຜ້າຂອງນາງນິດນ້ອຍໄດ້ຮັບການກວດສອບຄັກແນ່ ແລະເກັບເຂົ້າໄວ້ໃນຖົງຮຽບຮ້ອຍແລ້ວຮ່າງກາຍຂອງນາງກໍຖືກຖ່າຍພາບໄວ້ເພື່ອເກັບເປັນຫຼັກຖານ. ອາດແມ່ນຍ້ອນງົບປະມານຂອງໂຮງໝໍມີຈຳກັດ ພວກເຂົາຈິ່ງໄດ້ຮັບອະນຸຍາດໃຫ້ໃຊ້ຟິມສີພຽງໜຶ່ງກໍ້ໃນການຖ່າຍພາບຈຳນວນເຈັດສິບ, ເຊິ່ງໝາຍເຖິງຖ່າຍພາບເຕັມຕົວດ້ານໜ້າໜຶ່ງຮູບ, ພາບເຕັມຕົວດ້ານຫຼັງໜຶ່ງຮູບ, ລວມເຖິງຈຸດສະເພາະເຈາະຈົງທີ່ໃຊ້ເປັນຮູບຄະດີອີກໜຶ່ງຮູບ. ແລະຍັງສາມາດໃຊ້ຖ່າຍພາບອີກປະມານໜຶ່ງ ຫຼືສອງຮູບໂດຍສະເພາະໃຊ້ໃນທາງເຕັກນິກສຳລັບຈຸດທີ່ມີການຖົກຖຽງກັນທາງກາຍຍະວິພາກສາດ, ແຕ່ພວກນາງພະຍາບານມັກພາກັນນຳໄປໃຊ້ຖ່າຍຮູບລວມຫຼາຍຄັ້ງເພື່ອສົ່ງຮູບຂອງພວກຕົນໄປໃຫ້ຄອບຄົວທີ່ອາໄສຢູ່ເຂດຊົນນະບົດ.

ທ່ານໝໍສີຣິໃຊ້ມີດກົດຜ່າໜ້າອົກອັນເຕັ່ງຕຶງ ເຊິ່ງເປັນທີ່ເກາງຂາມທັງສອງຂ້າງຂອງນາງນິດນ້ອຍ ແລ້ວມາປະຄົບກັນທີ່ຖານຂອງກະດູກໜ້າອົກ ແລ້ວແຫກຜ່ານລົງມາຈົນຈຳກະດູກຂະໂມມຂອງນາງ. ການສັນລະສູດສົບໄດ້ເລີ່ມຂຶ້ນແຕ່ບັດນັ້ນ. ເຂົາຕ້ອງໄດ້ອະທິບາຍຢ່າງຊ້າໆ ໃນທຸກໆ ອະລິຍະບົດທີ່ຕົນລົງມືທຳ, ເພາະຕຸ້ຍຕ້ອງໄດ້ຈົດເອົາລາຍລະອຽດທຸກຕົວລົງໃນປຶ້ມບັນທຶກ ແລະນາງເອງກໍຈົດຕົວອັກສອນຫຍໍ້ບໍ່ເປັນ.

ສີຣິໃຊ້ເຄື່ອງຕັດກະດູກແບບເກົ່າເພື່ອຜ່າໂຄງກະດູກຂ້າງຂອງສົບ ທັງມີການອະທິບາຍກ່ຽວກັບອະໄວຍະວະຕ່າງໆ ຢູ່ຂ້າງໃນ ພ້ອມຊັ່ງນໍ້າໜັກ ແລະຕິດປ້າຍໃສ່ອະໄວຍະວະຕ່າງໆ ເທື່ອລະຊິ້ນ ສ່ວນຕຸ້ຍກໍທຳໜ້າທີ່ໃນການຈົດເອົາສິ່ງທີ່ເຫັນວ່າຜິດປົກກະຕິລົງໃນປຶ້ມບັນທຶກຂອງຕົນ. ຈາກນັ້ນສີຣິກໍໃຊ້ມີດຜ່າຕັດອັນສຽບຄົມເພື່ອກົດໜັງຫົວ ແລ້ວແຫກຜ່ານລົງມາທາງໃບໜ້າຂອງນາງນິດນ້ອຍຜູ້ໜ້າສົງສານ. ໃນຂະນະທີ່ເຂົາເລີ່ມທຳການກວດສອບບັນດາອະໄວຍະວະຕ່າງໆ ແບບລະອຽດລະອໍທີ່ໂຕະຊັນນະສູດສົບ, ກົ່ງກໍລໍຖ້າຈັດການທີ່ຫົວກະໂຫຼກຂອງສົບ.

ເຖິງແມ່ນຈະມີການນຳສະເໜີເພື່ອຂໍເລື່ອຍຕັດໄຟຟ້າໄປແລ້ວ ແຕ່ທາງຄະນະ

ກຳມະການປະຈຳໂຮງໝໍກຳລັງພິນິດພິຈາລະນາຢູ່, ໃນເວລາດຽວກັນພວກເຂົາກໍບໍ່ມີທາງເລືອກອື່ນນອກຈາກໃຊ້ເລື່ອຍຕັດເຫຼັກທຳມະດາ. ແຕ່ທາງພະແນກກໍຍັງໂຊກດີທີ່ມີກິ່ງເຊິ່ງຖືເປັນຜູ້ໜຶ່ງທີ່ມີທັກສະທີ່ເໜືອກວ່າໃນການໃຊ້ເລື່ອຍ. ລີ້ນຂອງກິ່ງໂຜ່ອອກມາຈາກມູມປາກຂະນະທີ່ເຂົາກຳລັງພະຍາຍາມເລື່ອຍຜ່າຫົວກະໂຫຼກຢ່າງລະມັດລະວັງ ແລະພິຖີພິຖັນ ທັງເລິກພໍທີ່ຈະເຈາະຜ່າກະໂຫຼກ ແຕ່ກໍບໍ່ເລິກເກີນໄປຈົນທຳລາຍສະໝອງໃຫ້ເສຍຫາຍໄດ້. ຖືເປັນທັກສະຢ່າງໜຶ່ງທີ່ສີຣິເອງກໍຍັງບໍ່ສາມາດເຮັດໄດ້.

ສະພາບເຄື່ອງໃຊ້ຕ່າງໆ ຂອງໂຮງເກັບສົບໃນທ້າຍປີ ໑໙໗໖ ກໍບໍ່ຕ່າງຫຍັງກັບໂຮງຂ້າສັດທີ່ຕັ້ງຢູ່ດ້ານຫຼັງຂອງຕະຫຼາດເຊົ້າພໍເທົ່າໃດ. ສຳລັບສະຖານທີ່ຊຳແຫຼະຂອງສີຣິ, ເຂົາມີເລື່ອຍແລະມີດອັນຫຍາບໆ ສອງສາມອັນ, ເລື່ອຍຕັດກະດູກໜຶ່ງອັນ, ແລະເຫຼັກຊີຈຳນວນໜຶ່ງທີ່ເປັນມໍລະດົກຕົກທອດມາແຕ່ສະໄໝຝຣັ່ງເສດ. ເຂົາຍັງມີຂອງສະສົມສ່ວນຕົວ ໂດຍສະເພາະມີດຜ່າຕັດອັນລະອຽດອ່ອນ ແລະເຄື່ອງມືອື່ນໆ ບໍ່ວ່າຈະເປັນພວກເຄື່ອງວັດ, ອຸປະກອນໃຫ້ຢາທາງເສັ້ນເລືອດ, ສາຍຢາງຖ່າຍຂອງແຫຼວ ແລະບາງສິ່ງທີ່ຄ້າຍຄືກັນຢ່າງລະໜຶ່ງ ຫຼືສອງອັນ ແຕ່ກໍຍັງບໍ່ທັນມີຫ້ອງທົດລອງ. ສຳລັບຫ້ອງທົດລອງທີ່ໃກ້ສຸດແມ່ນຢູ່ຫ່າງອອກໄປປະມານສີ່ສິບກິໂລແມັດ ໂດຍໄດ້ຂ້າມຊາຍແດນໄປທາງຈັງຫວັດອຸດອນທານີ, ແຕ່ເວລານັ້ນຊາຍແດນໄດ້ຖືກປິດກັ້ນໄວ້ເນື່ອງຈາກທັງສອງປະເທດລາວ-ໄທຍັງມີຄວາມຂັດແຍ່ງທາງດ້ານການເມືອງຢູ່

ນອກຈາກນີ້ ສີຣິກໍຍັງມີກ້ອງຈຸລະທັດເກົ່າແກ່ເຄື່ອງໜຶ່ງ ເຊິ່ງຢຶດມາຈາກຫ້ອງເກັບຂອງໃນສະຖາບັນສ້າງຄູດົງໂດກ. ຖ້າພວກເຂົາເປີດສອນພາກວິຊາວິທະຍາສາດຄືນໃໝ່ອີກຄັ້ງຈິ່ງຈະຮູ້ວ່າມັນເສຍໄປ. ເຖິງແມ່ນກ້ອງຈຸລະທັດໜ່ວຍນີ້ຈະເຄີຍເປັນຊັບສົມບັດອັນເກົ່າແກ່ຂອງນັກຊີວະວິທະຍາໃນອະດີດ ທັງສົມຄວນຈະຖືກນຳໄປວາງສະແດງໄວ້ຢູ່ຫໍພິພິທະພັນກໍຕາມ ແຕ່ມັນກໍຍັງສາມາດຂະຫຍາຍພາບໄດ້ແບບສົມບູນພຽງແຕ່ວ່າພາບຖ່າຍສະໄລດ໌ໃນປຶ້ມຕຳລາຮຽນອັນເກົ່າໝອງຂອງເຂົາມັນມົວຈົນກະໂຕສີຣິເອງກໍຍັງບໍ່ສາມາດເບິ່ງອອກແບບຈະແຈ້ງໄດ້.

ຜົນຈາກການທົດລອງໃນຫ້ອງເກັບສົບຂອງສີຣິສ່ວນໃຫຍ່ ແມ່ນອາໄສວິທີການທົດສອບສີແບບບູຮານ ດ້ວຍການປະສົມສານເຄມີ ຫຼືໃຊ້ເຈ້ຍຕວກເນີໂຊນເປັນຕົວທົດລອງ. ການທົດລອງລັກສະນະນີ້ແມ່ນເໝາະສຳລັບການກ່າວຫາແບບລອຍໆ ທີ່ວ່າປະເດັນທີ່ສົງໄສນັ້ນບໍ່ຖືກຕ້ອງ ຫຼາຍກວ່າທີ່ຈະລະບຸວ່າມີຫຍັງແດ່ທີ່ຖືກຕ້ອງ. ໃນຄວາມເປັນຈິງ, ຢູ່ພະແນກເຄມີຂອງລີເຊວຽງຈັນກໍມີສານເຄມີໃຫ້ນຳໃຊ້ຢູ່ແລ້ວ ສີຣິຈິ່ງສາມາດກຳຈັດສາເຫດຂອງການເສຍຊີວິດໄດ້ເຖິງຫ້າສິບຄັ້ງ ແຕ່ກໍຍັງມີອີກປະມານຮ້ອຍຫ້າສິບຄັ້ງທີ່ຫຼົງເຫຼືອໄວ້ເພື່ອໃຫ້ເຂົາໄດ້ຄົ້ນຄິດ.

ສະນັ້ນຈຶ່ງບໍ່ໜ້າແປກໃຈທີ່ສິຣິຍັງບໍ່ກ້າລະບຸໄດ້ເລີຍວ່າສາເຫດການເສຍຊີວິດຂອງນາງນິດນ້ອຍເກີດຈາກຫຍັງແທ້ ເມື່ອເວລາລ່ວງເລີຍຈົນຮອດສີ່ໂມງເຄິ່ງ. ຄວາມຈິງແລ້ວເຂົາສາມາດໃຫ້ລາຍການອັນຍືດຍາວເທົ່າໜ້າແຂ່ງວ່າແມ່ນຫຍັງທີ່ບໍ່ແມ່ນສາເຫດຂອງການຕາຍ ເພາະນາງນິດນ້ອຍບໍ່ໄດ້ຖືກລົດໄຟຕຳ (ເພາະເມືອງລາວສະໄໝນັ້ນຍັງບໍ່ມີລົດໄຟ). ນາງບໍ່ໄດ້ຖືກຍິງ, ຖືກແທງ, ຫຼືຫັນໃຈບໍ່ອອກ ຫຼືແມ່ນແຕ່ແຂນຂາຖືກຕັດຍ້ອນລູກລະເບີດຂອງທະຫານ. ແຕ່ນາງສິ້ນລົມຫັນໃຈຢູ່ໃນຫ້ອງທີ່ມີຜູ້ຄົນໜາແໜ້ນສວ່ານສິນໄປມາ ເຖິງປານນັ້ນກໍຍັງບໍ່ແມ່ນການຄົ້ນພົບອັນຍິ່ງໃຫຍ່.

ມີພະຍານຜູ້ເຫັນເຫດການບາງຄົນໃຫ້ການວ່າ ນາງສະມັກເຂົ້າຕາຍ ແຕ່ໃນຫຼອດອາຫານຂອງນາງຊ້ຳພັດປາສາຈາກສິ່ງຕົກຄ້າງໃດໆ ແລະການຕາຍກໍເກີດຂຶ້ນແບບກະທັນຫັນ ເຊິ່ງເປັນການບົ່ງຊີ້ໄປໃນທາງກົງກັນຂ້າມກັບສິ່ງທີ່ຜູ້ເຫັນເຫດການບອກ. ຖ້າຫາກບໍ່ມີຫ້ອງທົດລອງ, ກໍເປັນໄປບໍ່ໄດ້ເລີຍທີ່ຈະກວດຫາສານພິດ ເວັ້ນເສຍແຕ່ຮູ້ວ່າມັນແມ່ນສານພິດຊະນິດໃດ, ແລະເນື່ອງຈາກແມ່ຍິງຄົນນັ້ນກິນເຂົ້າຮ່ວມໂຕະກັບຫຼາຍຄົນ ຈຶ່ງບໍ່ໜ້າເປັນໄປໄດ້ວ່າຈະມີແຕ່ນາງຄົນດຽວທີ່ເສຍຊີວິດ.

ໃນກໍລະນີຫາກບໍ່ມີຜູ້ພິພາກສາແຫງ ຈຶ່ງບໍ່ມີຄຳແນະນຳທີ່ເປັນປະໂຫຍດຈາກເຂົາ, ສິຣິກໍຍັງລຳບາກໃຈເປັນພິເສດທີ່ຈະຢືນຢັນວ່າ ນາງນິດນ້ອຍບໍ່ໄດ້ເສຍຊີວິດຈາກອາການຫົວໃຈວາຍ ເພາະບໍ່ມີຫຼັກຖານບົ່ງຊີ້ວ່າເກີດການອຸດຕັນ ຫຼືໂລກເສັ້ນເລືອດອຸດຕັນ.

ສິຣິເຄີຍໄດ້ອ່ານກ່ຽວກັບນັກວິທະຍາສາດດ້ານນິຕິວິທະຍາທົ່ວໂລກ ຜູ້ທີ່ມັກໃນຄວາມລຶກລັບເຊັ່ນນີ້ ແຕ່ເຂົາກໍຍັງບໍ່ໄດ້ຖືວ່າຕົນເອງແມ່ນໜຶ່ງໃນນັ້ນ.

ຂະນະທີ່ຕຸ້ຍແລະກຶ່ງກຳລັງຈະອອກໄປທົດນ້ຳພວນດິນໃສ່ສວນຜັກຂອງໂຮງໝໍເພື່ອໃຊ້ເວລາວ່າງຂອງພວກຕົນໃນການເພີ່ມພູນອອກແຮງງານ, ສະໝຽນທີ່ມາຈາກຫ້ອງການຜູ້ອຳນວຍການກໍຍ່າງເຂົ້າມາບອກພວກເຂົາວ່າ ສະຫາຍຄຳຈະເດີນທາງມາເຖິງສະໜາມບິນວັດໄຕຕອນຫົກໂມງແລງ ແລະພວກເຂົາກໍຕ້ອງໄດ້ພາກັນລໍຖ້າກ່ອນ. ສິຣິບອກກັບເພື່ອນຮ່ວມງານໃຫ້ອອກໄປເຮັດທຸລະຂອງໃຜລາວ ເພາະເຂົາເອງຈະເປັນຄົນຢູ່ລໍຖ້າ.

ສິຣິນັ່ງຢູ່ໂຕະເຮັດວຽກ ທັງສາຍຕາກໍພາດໃສ່ບົດບັນທຶກທີ່ຕຸ້ຍຈົດໄວ້. ຕົວໜັງສືຂອງນາງນ້ອຍຫຼາຍ ຈົນເຂົາພໍຢາກອ່ານຜ່ານກ້ອງຈຸລະທັດພຸ້ນລະ. ແຕ່ແທນທີ່ຈະເຮັດແບບນັ້ນ ສິຣິຊ້ຳພັດໃຊ້ເວລາຂະນະໜຶ່ງຂະຫຍັບແວ່ນຕາເຂົ້າໆ ອອກໆ ເພື່ອຈະໄດ້ອ່ານໃຫ້ຄັກໆ ທັງເພັ່ງເລັ່ງສາຍຕາໄປທີ່ຕົວໜັງສືແຕ່ລະຕົວ ໃນທີ່ສຸດກໍບໍ່ສຳເລັດ ຊ້ຳບໍ່ພໍຍັງເຮັດໃຫ້ເຂົາເຈັບຫົວນຳອີກ ສຸດທ້າຍເຂົາກໍຕັດສິນໃຈລົງມືຂຽນບົດລາຍງານໃສ່ເພີ່ມຕື່ມໂດຍອາໄສຄວາມຊົງຈຳທີ່ຍັງເຫຼືອຄ້າງຢູ່.

ເວລາລ່ວງເລີຍໄປຈົນເຖິງເກົ້າໂມງແລງ ກ່ອນທີ່ສະຫາຍຄຳຈະໂຜ່ໜ້າໄປເຖິງ ພ້ອມກັບມີກິ່ນເຫຼົ້າວິສກີພຸ່ງອອກມາຜ່ານທາງລົມຫັນໃຈທີ່ໂຜ່ອອກທາງຮູດັງ ແລະຄຳເວົ້າແຕ່ລະຄຳ. ສີໜ້າທ່າທາງຂອງຄຳບໍ່ໄດ້ບົ່ງບອກເຖິງຄວາມໂສກເສົ້າອາໄລອາວອນແຕ່ຢ່າງໃດ ມີພຽງຄຳເວົ້າເທົ່ານັ້ນທີ່ເຂົາບອກວ່າເສຍໃຈ ແລະເບິ່ງຄືກັບວ່າ ສີຣິຮູ້ສຶກຝືນໃຈເມື່ອຕ້ອງຍິ້ມຕອບກັບ.

"ເສຍໃຈນຳສະຫາຍສຳລັບຄວາມສູນເສຍຄັ້ງນີ້."

"ນາງຢູ່ໃສ?"

"ໃນຕູ້ແຊ່ແຂງ." ສີຣິຢືນຂຶ້ນ ພ້ອມສະແດງທ່າທາງຄ້າຍກັບບອກໃຫ້ຊາຍຄົນນັ້ນຍ່າງຕາມເຂົາໄປທາງຫ້ອງຊັນນະສູດສົບ.

"ຊິໄປໃສ?"

"ຄິດວ່າເຈົ້າຢາກໄປເບິ່ງສົບ."

"ບໍ່ດອກ. ນາງກະຕາຍໄປແລ້ວ ບໍ່ແມ່ນຫວາ?"

"ແມ່ນແລ້ວ."

ຄຳຍ່າງຜ່ານໜ້າສີຣິ ພ້ອມໄປນັ່ງທີ່ໂຕະເຮັດວຽກຂອງເຂົາ ເຊິ່ງເປັນການບັງຄັບໃຫ້ສີຣິຈຳຕ້ອງໄດ້ໄປນັ່ງທີ່ໂຕະເຮັດວຽກຂອງຕຸ້ຍແທນ. ພະນັກງານພັກຄົນນັ້ນໃຊ້ນິ້ວໂປ້ມືເປີດຜ່ານໜ້າເອກະສານທີ່ຢູ່ຕໍ່ໜ້າຂອງຕົນແບບບໍ່ຮູ້ສຶກຮ້ອນເຄືອງຫຍັງ.

"ສະຫາຍ ... ເອີ, ໄດ້ຜ່າສົບເບິ່ງແລ້ວບໍ?

"ອືມ–ອື."

"ຂໍໂທດນຳເນີສະຫາຍທີ່ເຮັດໃຫ້ຕ້ອງເສຍເວລາໄປລ້າໆ. ເຮົາຮູ້ແລ້ວວ່າສາເຫດການຕາຍຂອງນາງແມ່ນຫຍັງ."

"ສະຫາຍຮູ້ຫວາ? ດີແລ້ວຊັ້ນ, ຂອບໃຈຝ້າສຳລັບສິ່ງນັ້ນ. ຂ້ອຍເອງຍັງບໍ່ຮູ້ຊໍ້າ."

"ເຮົາບອກເຕືອນອີ່ນາຍຫົວດື້ຜູ້ນັ້ນມາຫຼາຍປີແລ້ວວ່າມັນຈະເຮັດໃຫ້ນາງຕາຍໃນອີກບໍ່ດົນ. ແຕ່ເຮົາເຊື່ອວ່າອັນໃດທີ່ເຄີຍຊິນຈົນຕິດເປັນນິດໄສແລ້ວ ຄົນເຮົາກໍມີສາມັນສຳນຶກທີ່ຈະບໍ່ຍອມຮັບຟັງໃຜອີກເລີຍ, ສະຫາຍວ່າແມ່ນບໍ ສີຣິ?"

"ແມ່ນຫຍັງທີ່ນາງເສບຕິດຈົນເປັນນິດໄສລະ?" ເຂົາບໍ່ພົບແມ່ນແຕ່ຮອຍເຂັມສີດຢາທີ່ແຂນຂອງນາງ ແລະຕັບຂອງນາງກໍກ້ຽງງາມຄືພາບວາດ.

"ລາບ."

"ລາບຫັ້ນວາ? ໂອຍບ້າລະ." ມັນຄວນຈະເປັນເຫດຜົນທີ່ຊັດເຈນກວ່ານີ້ ແຕ່ກໍເປັນເຫດຜົນທີ່ເປັນໜ້າອັບອາຍ. ໃນນາມທ່ານໝໍທີເຄີຍເຮັດວຽກຢູ່ໃນປ່າ ເຂົາກໍເຄີຍເຫັນຄວາມຕາຍມາຫຼາຍຈົນນັບບໍ່ຖ້ວນທີ່ເປັນຜົນມາຈາກລາບ ຫຼືປາແດກ ຫຼືຊີ້ນດິບ ຫຼື

ແມ່ນແຕ່ການປຸງແຕ່ງປາໃນແບບອື່ນໆ ທີ່ຂາດຄວາມລະມັດລະວັງເຊິ່ງພວກຊາວໄຮ່ນາ ພາກັນກິນເຂົ້າໄປຢ່າງແຊບຊ້ອຍ.

"ຊີ້ນດິບສາມາດນຳມາປຸງແຕ່ງເປັນອາຫານທີ່ບໍ່ເປັນອັນຕະລາຍຕໍ່ສຸຂະພາບໄດ້ ສະເພາະໃນກໍລະນີທີ່ມັນສົດໃໝ່ຢູ່ ແຕ່ເຊື້ອແບັດທີເຣຍມັກຈະເຂົ້າໄປປົນເປື້ອນຢູ່ໃນອາຫານປະເພດນີ້ໄດ້ໄວທີ່ສຸດ ແລະພວກແມ່ທ້ອງທັງຫຼາຍກໍຈະພາກັນເຄື່ອນຕົວໄປຢູ່ອ້ອມຮອບຂອງຮ່າງກາຍ ຖ້າໂຊກດີ ຜູ້ທີ່ບໍລິໂພກກໍຈະເປັນພຽງຝີ, ກ້າມຊີ້ນປັ້ນ ແລະເຈັບທ້ອງຊໍາເຮື້ອໄປຕະຫຼອດຊີວິດ.

"ແຕ່ກໍມັກຈະມີແມ່ທ້ອງສາຍພັນຊະນິດໜຶ່ງທີ່ມັກບຸໝົ້ນໄປທົ່ວ ແລະມັກຈະອອກໄຂ່ໄວ້ໃນຊ່ອງທາງໜ້າຂອງມ່ານຕາ ຈາກນັ້ນມັນກໍຈະເຄື່ອນຍ້າຍຜ່ານຈໍປະສາດຕາ ຫຼືເຄື່ອນທີ່ເຂົ້າໄປລີ້ຕົວຢູ່ໃນສະໝອງ. ໃນໜຶ່ງນາທີເຈົ້າອາດຈະບໍ່ຮູ້ສຶກມີອາການຫຍັງປາກົດຂຶ້ນ ແຕ່ພໍມື້ຕໍ່ມາເຈົ້າອາດຈະໄດ້ມານອນເທິງໂຕະຢູ່ຫ້ອງຊັນນະສູດສົບກໍເປັນໄດ້ ..." ສີຣິສັງເກດເຫັນວ່າ ສະຫາຍຄໍາຍັງຄົງຈະໄບ່ແບັບໆ ແບບນັ້ນອີກດົນ.

"... ກິນລາບໝູດິບມາຕັ້ງແຕ່ຄາວລາວເປັນເດັກນ້ອຍພຸ້ນໃດເພາະລາວມັກກິນແບບນີ້ອີ່ຫຼີ ມັນກໍມັກເຮັດໃຫ້ລາວເຈັບກະເພາະຕະຫຼອດ ແຕ່ລາວກໍຍັງຊູຊີສາບານວ່າຮ່າງກາຍຂອງລາວຈະສາມາດສ້າງພູມຕ້ານທານໃຫ້ກັບເຊື້ອໂລກໄດ້ໃນທີ່ສຸດ. ຂ້ອຍໂລດຮູ້ສຶກຂະຫຍະຂະແຫຍງ ແຕ່ນາງກໍຍັງກິນແບບບໍ່ເບິ່ງສິບເບິ່ງປາກ ເພື່ອນຂອງພວກເຮົາທຸກຄົນສາມາດຢືນຢັນກັບເລື່ອງນີ້ໄດ້."

"ໃນລະຫວ່າງທາງທີ່ກໍາລັງມາບ່ອນນີ້ ຂ້ອຍໄດ້ຢຸດແວ່ທີ່ພະແນກຕໍາຫຼວດ ພ້ອມໃຫ້ປາກຄໍາຕໍ່ພວກເຂົາໃນເລື່ອງທີ່ເກີດຂຶ້ນແລ້ວ. ສະນັ້ນຈິ່ງບໍ່ຈໍາເປັນຕ້ອງລະບຸການຕາຍທີ່ຜິດປົກກະຕິໄວ້ໃນໃບຢັ້ງຢືນການຕາຍສໍາລັບກໍລະນີນີ້."

ສີຣິຍັງຄົງແກວ່ງຫົວໄປມາແບບສັງເວດໃຈ.

"ຂ້ອຍເອງກະຈັ່ງແມ່ນປົກທີ່ຍັງບໍ່ທັນຄິດເຖິງເລື່ອງນີ້. ຂ້ອຍຮອດບໍ່ຄິດຊໍ້າວ່ານາງນິດນ້ອຍລາວຊິກິນຊີ້ນໝູດິບ."

"ເປັນຫຍັງຊິບໍ່ກິນລະ? ລາວເປັນຄົນບ້ານນອກຂອກນາທໍາມະດາ ເຖິງແມ່ນເຈົ້າຈະຈັບນາງມາໃສ່ເສື້ອຜ້າໃໝ່ໆ ແຕ່ງໂຕງາມໆ ແຕ່ກໍຍັງກໍາຈັດກິ່ນເໝັນສາບຂອງຂີ້ຕົມຕິດຄວາຍອອກໄປບໍ່ໝົດດອກ." ສີຣິບໍ່ເຂົ້າໃຈເລີຍວ່າເປັນຫຍັງ ຄໍາຈິ່ງເວົ້າເຖິງເມຍຂອງຕົນເອງແບບນີ້. ແລ້ວເຂົາກໍສະຫຼຸບແບບເປັນກາງເພາະຄິດວ່າຄໍາກໍາລັງກະທົບກະເທືອນທາງຈິດໃຈ.

"ດີເລີຍ ຄັນຊັ້ນຂ້ອຍກໍຈະກວດເບິ່ງຄືນເປັນຄັ້ງສຸດທ້າຍຈັກໜຶ່ງ ຫຼືສອງຈຸດ ແລ້ວຈິ່ງຈະສະຫຼຸບໃນບົດລາຍງານ ແລະ ..."

“ໂອ, ຂ້ອຍຄິດວ່າສະຫາຍສາມາດເຮັດລາຍງານໃຫ້ແລ້ວໂດຍບໍ່ຈຳເປັນແຕະຕ້ອງສົບຂອງນາງເລີຍດີກວ່າ ພວກເຮົາຢາກເຜົາສົບໃຫ້ໄວທີ່ສຸດ. ຄອບຄົວ ແລະໝູ່ເພື່ອນຂອງນາງຢາກພາກັນປະກອບພິທີທາງສາສະໜາໃຫ້ແກ່ນາງເປັນຄັ້ງສຸດທ້າຍ ຕອນນີ້ພວກເຂົາກຳລັງລໍຖ້ານາງຢູ່ວັດ.”

“ແຕ່ຂ້ອຍຈຳເປັນຕ້ອງ ...”

“ສະຫາຍສິຣິ! ເພື່ອນຍາກ.” ຄຳລຸກຢືນຂຶ້ນ ທັງຍ່າງມານັ່ງທີ່ໂຕະເຮັດວຽກຂອງຕຸ້ຍພ້ອມກົ້ມໜ້າລົງເບິ່ງທ່ານໝໍ. “ສະຫາຍແມ່ນນັກວິທະຍາສາດ ເພາະສະຫາຍເປັນໝໍແມ່ນແຕ່ນັກວິທະຍາສາດ ກໍຍັງຕ້ອງໄດ້ສະແດງຄວາມເຄົາລົບ ແລະເຂົ້າໃຈຕໍ່ວັດທະນະທຳປະເພນີ ແລະສາສະໜາ. ສະຫາຍເຂົ້າໃຈ ຫຼືບໍ່?”

ນີ້ແມ່ນຄຳເວົ້າດີໆ ທີ່ພົ້ນອອກມາຈາກປາກຂອງສະມາຊິກພັກຄົນໜຶ່ງທີ່ເຄີຍປະກາດຍົກເລີກສາສະໜາພຸດຈາກການເປັນສາສະໜາປະຈຳຊາດ ພ້ອມທັງເກືອດຫ້າມບໍ່ໃຫ້ມີການຕັກບາດຖວາຍທານຕໍ່ພະສົງ.

“ຂ້ອຍ ...”

“ມື້ນີ້ນາງຖືກລົບກວນມາຫຼາຍແລ້ວ ລອງປ່ອຍໃຫ້ນາງໄດ້ພັກຜ່ອນແບບສະຫງົບດີກວ່າບໍ?”

“ສະຫາຍຄຳ, ຂ້ອຍບໍ່ໄດ້ເປັນຄົນສ້າງກົດໝາຍຂຶ້ນມາເອງໃດ. ຂ້ອຍຈະອອກໃບຢັ້ງຢືນການຕາຍໃຫ້ຈົນກວ່າຂ້ອຍຈະຢືນຢັນໄດ້ດ້ວຍຕົນເອງວ່າ ການເສຍຊີວິດຂອງນາງນິດນ້ອຍເກີດຈາກພວກແມ່ທ້ອງແທ້.”

ຄຳຢືນຂຶ້ນ ແລະຍິ້ມແບບເປັນມິດ. “ແນ່ນອນເລື່ອງນັ້ນຂ້ອຍເຂົ້າໃຈຢູ່ແລ້ວ. ຂ້ອຍຈະເຮັດແນວໃດໄດ້ຖ້າຂ້ອຍຫາກເມີນເສີຍຕໍ່ລະບຽບກົດໝາຍແລ້ວ ຂ້ອຍຄວນຈະຍັງເປັນສະມາຊິກຂອງພັກຄອມມູຍນິດໄດ້ແນວໃດ?” ເວົ້າສຸດຄຳກໍຍ່າງໄປຢຸດຢືນທີ່ຂອບປະຕູປ່ອງຢ້ຽມ. “ນັ້ນແມ່ນເຫດຜົນທີ່ຂ້ອຍຕັດສິນໃຈໃຫ້ໝໍຜ່າຕັດຂອງນາງເຊັນໃບຢັ້ງຢືນການຕາຍໃຫ້.”

“ແມ່ນຫຍັງເກາະ?”

“ຂໍໂທດທີ່ມາລົບກວນໃຫ້ຫຍຸ້ງຍາກໃນມື້ນີ້ ສະຫາຍສິຣິ. ແຕ່ເນື່ອງຈາກບໍ່ມີການລະບຸວ່າມີການຫຼິ້ນແບບສົກກະປົກຢູ່ເບື້ອງຫຼັງການຕາຍ ຈິ່ງບໍ່ຈຳເປັນຕ້ອງມີການຊັນນະສູດສົບ. ສິ່ງໜຶ່ງທີ່ຂ້ອຍຢາກບອກກໍຄື ສຳລັບຄົນໆ ໜຶ່ງທີ່ບໍ່ມັກອາຊີບຂອງຕົນເປັນທີ່ສຸດນັ້ນ ແຕ່ສະຫາຍກໍຍັງເຮັດໜ້າທີ່ຂອງຕົນໄດ້ລະອຽດຮອບຄອບ ຂ້ອຍໂລດປະທັບໃຈອີ່ຫຼີ.”

ເວົ້າສຸດ ຄຳກໍຍ່າງອອກຈາກຫ້ອງໜີໄປ ປ່ອຍໃຫ້ສິຣິສືບຕໍ່ນັ່ງຄິດຄົນດຽວທີ່ໂຕະ

ເຮັດວຽກຂອງຕຸ້ຍ ແຕ່ແລ້ວກໍມີຫຼາຍສິ່ງຢ່າງກັບຄືນມາລົບກວນໂສດປະສາດຂອງເຂົາ. ຄໍາຮູ້ແລ້ວວ່າຕ້ອງມີການຊັນນະສູດສົບ ເຂົາຍັງສັ່ງຄວາມຜ່ານທາງໂທລະສັບວ່າໃຫ້ດໍາເນີນການໄດ້. ມາບັດນີ້ເຂົາພັດປີ້ນຄວາມຄືນວ່າບໍ່ຈໍາເປັນ. ສິຣິໃຊ້ເວລາຕັ້ງສາມຊົ່ວໂມງໃນການຊອກຫາສາເຫດການຕາຍ ເຂົາອາດຈະປະຢັດເວລາໄດ້ຕັ້ງເຄິ່ງໜຶ່ງຖ້າຮູ້ວ່າຕົວເອງກໍາລັງຊອກຫາຫຍັງ.

ສິຣິເພັ່ງເລັ່ງສາຍຕາໄປທີ່ໂຕະເຮັດວຽກຂອງຕົນ ຢູ່ບ່ອນນັ້ນປາກົດມີບາງຢ່າງຖືກວາງໄວ້ແບບບໍ່ເປັນລະບຽບ. ແຕ່ກ່ອນທີ່ເຂົາຈະຈັດຮຽງຄວາມຄິດໄດ້ ຊໍ້າພັດມີສຽງອຶກກະທຶກຄຶກໂຄມດັງຂຶ້ນຢູ່ຂ້າງນອກ. ເຂົາຟ້າວແນມໄປເບິ່ງທີ່ໂຕະເຮັດວຽກຂອງຕົນອີກຄັ້ງ ກ່ອນຈະຍ່າງອອກໄປຂ້າງນອກເພື່ອເບິ່ງວ່າມີຫຍັງເກີດຂຶ້ນ.

ສິຣິພົບກັບຜູ້ຊາຍກຸ່ມໜຶ່ງກໍາລັງຍູ້ລໍ້ໃສ່ຄົນເຈັບຂອງໂຮງໝໍເຂົ້າມາ ເຊິ່ງລໍ້ລົດນັ້ນບັນຈຸໂລງສົບໄມ້ທໍາມະດາແຕ່ມີຂະໜາດໃຫຍ່ກວ່າປົກກະຕິ. ຄໍາຍ່າງຕາມພວກເຂົາເຂົ້າໄປທາງຫຼັງໃນເງົາມືດ.

"ຈະເອົາສົບໄປຕອນນີ້ເລີຍແມ່ນບໍ?"

ພວກຜູ້ຊາຍກຸ່ມນັ້ນພາກັນເຄື່ອນໂລງສົບຜ່ານໜ້າຂອງສິຣິ ແລ້ວຍ່າງເຂົ້າໄປທາງຫ້ອງຊັນນະສູດສົບ ສ່ວນຄໍາກໍຍັງຄົງຕິດຕາມໄປຈົນຮອດໜ້າຫ້ອງເຊິ່ງອ່າວມືດແດ່.

"ຄົນໃນເຮືອນກໍາລັງຖ້າຢູ່."

ສາຍຕາຂອງສິຣິໄດ້ຈ້ອງມອງໄປທີ່ຊາຍຮ່າງສູງ ແລ້ວເຂົາກໍປາກົດເຫັນພາບໜຶ່ງທີ່ເປັນເງົາດໍາໆ ຢູ່ຫ່າງຈາກເບື້ອງຫຼັງຂອງຊາຍຄົນນັ້ນປະມານສາມແມັດ. ແຕ່ບໍ່ຮູ້ວ່າຍ້ອນຫຍັງ ຈິ່ງເຮັດໃຫ້ເຂົາຮູ້ສຶກຄິດຢ້ານຂຶ້ນມາແບບໄຮ້ສາເຫດ. ບ່ອນນັ້ນກໍຍັງບໍ່ມີແສງສະຫວ່າງພຽງພໍທີ່ຈະສາມາດແຍກແຍະເຖິງຄຸນລັກສະນະຕ່າງໆ ໄດ້ຢ່າງຊັດເຈນແຕ່ຮູບຮ່າງຂອງມັນກໍສາມາດບອກໃຫ້ເຂົາຮູ້ໄດ້ເລີຍວ່າແມ່ນນາງນິດນ້ອຍ.

ເຫດການນີ້ເຮັດໃຫ້ເຂົາລະນຶກເຖິງຜູ້ຊາຍຂັບເຮືອຫາງຍາວທີ່ຕົນເຫັນແບບເຄິ່ງຫຼັບເຄິ່ງຝັນໃນຕອນເຊົ້າ ແຕ່ສິ່ງນັ້ນກໍເປັນຕາຢ້ານພໍສົມຄວນ ແຕ່ເຂົາກໍຍັງມີຂໍ້ອ້າງໄດ້ວ່າຍ້ອນເຂົານອນຝັນເອງ. ແຕ່ມາທີ່ນີ້ເຂົາຍັງບໍ່ທັນໄດ້ນອນເພາະສະຕິສໍາປະຊັນຍະຂອງເຂົາກໍຍັງຕື່ນຕົວຢູ່ ມັນຈິ່ງບໍ່ແມ່ນຄວາມຝັນໃດໆ ທັງຊິ້ນ. ເຂົາເຫັນຮ່າງຂອງຜູ້ຍິງທີ່ນອນຕາຍຢູໃນຕູ້ແຊ່ແຂງຢູ່ຫ້ອງຖັດໄປ, ນາງກໍາລັງຢືນຕົວສັ່ນຢູ່ບ່ອນນັ້ນ ກ່ອນທີ່ນາງຈະເລີ່ມເຄັ່ງຄຽດ ພ້ອມຕັ້ງທ່າກຽມພ້ອມຄືກັບຄວາຍປ່າ ເພື່ອທີ່ຈະພຸ່ງຕົວເຂົ້າໄປໃສ່ຂ້າງຫຼັງຂອງສະຫາຍຄໍາດ້ວຍຄວາມດຸຮ້າຍເພື່ອໝາຍຈະດູດກິນເລືອດຂອງເຂົາແບບສະໃຈ.

ນາງແລ່ນເຂົ້າໃສ່ເຂົາຈົນສຸດກໍາລັງ ແລະຖ້ານາງຍັງມີຕົວຕົນແທ້ນາງອາດຈະນ້ອກຄໍາໃຫ້ລົ້ມຟຸບລົງປາຍຕີນແນ່ນອນ. ພຽງສ້ຽວວິນາທີນັ້ນເອງແສງໄຟຈາກຫ້ອງ

ຊັນນະສູດສົບກໍໄດ້ພຸ່ງເຂົ້າໃສ່ໃບໜ້າຂອງຮ່າງປົດສະໜາຜູ້ນັ້ນ ຍິ່ງເຮັດໃຫ້ສິຣິໝັ້ນໃຈໄດ້ເລີຍວ່າແມ່ນນາງນິດນ້ອຍ ແຕ່ເຂົາກໍເຫັນໄດ້ວ່າທີ່ໃບໜ້າຂອງນາງແມ່ນເຕັມໄປດ້ວຍຄວາມກຽດຊັງທີ່ຝັງແໜ້ນໄວ້ໃນໃຈ. ແຕ່ພໍປະທະກັບຕົວຂອງຜູ້ເປັນສາມີ ນາງກໍມະຫັບມະຫາຍໄປໃນທັນທີ.

ສະຫາຍຄໍາທໍາທ່າຂົນໜາວລຸກ.

"ພວກເຈົ້າພາກັນຢູ່ຕຶກຫຼັງນີ້ໄດ້ແນວໃດ? ເບິ່ງແຕ່ຮ່າງມັນຊື່ໆ ກໍຍັງເຮັດໃຫ້ຂົນໜາວຂ້ອຍລຸກແຫຼະ." ເວົ້າສຸດເຂົາກໍຫັນໜ້າໄປບ່ອນວ່າງຊ່ອງໜຶ່ງທີ່ຢູ່ທາງຫຼັງ ສ່ວນສິຣິຍັງຄົງຈັບຈ້ອງກັບສິ່ງໜຶ່ງຢ່າງບໍ່ພັບຕາ. "ບ່ອນນັ້ນມີຕູ້ແຊ່ແຂງແມ່ນບໍ?"

ຫົວໃຈອັນຫ່ຽວແຫ້ງຂອງສິຣິກໍາລັງເຕັ້ນໄວ. ເຂົາປາກບໍ່ອອກຈັກຄໍາ ສິ່ງທີ່ເຂົາເຮັດໄດ້ດີທີ່ສຸດກໍພຽງແຕ່ຍ່າງໂຊເຊຜ່ານຄໍາເຂົ້າໄປໃນຫ້ອງຊັນນະສູດສົບ ບ່ອນທີ່ພວກຊ່ວຍແບກຫາບສົບລໍຖ້າຢູ່ດ້ວຍຄວາມອຶດທົນ. ສິຣິເບັດໜ້າໄປທາງຕູ້ແຊ່ແຂງ ພ້ອມໃຊ້ມືອັນສັ່ນເຊັນເພື່ອດຶງຄັນໂຍກບ່ອນເປີດປະຕູໃຫ້ໄຂອອກຢ່າງເຊື່ອງຊ້າ.

ນາງຍັງນອນຢູ່ບ່ອນນັ້ນ, ແຕ່ກໍຍັງເປັນຮ່າງຄືງທີ່ໄຮ້ວິນຍານເຊິ່ງບໍ່ຕ່າງຫຍັງກັບຕອນກາງເວັນ. ສິຣິບໍ່ຄິດບໍ່ຝັນວ່າ ເຂົາຈະພົບຮ່າງຂອງນາງຢູ່ບ່ອນນັ້ນ ເຂົາເອື້ອມມືເຂົ້າໄປໃນຕູ້ແຊ່ແຂງ ທັງຕົນຕົວກໍສັ່ນເຊັນ ໃນຂະນະທີ່ເຂົາດຶງເອົາແຜ່ນສີຟ້າທີ່ປົກຄຸມເບື້ອງເທິງຫົວອອກ ໃບໜ້າອັນຫ່ຽວຍານຂອງນາງທີ່ຕິດຢູ່ກະໂຫຼກກໍຍັງມີທ່າທີເສີຍເມີຍ, ມັນບໍ່ໄດ້ເໜັງຕີງພິບພັບ ຫຼືມີສັນຍານໃດໆ ວ່າເຄີຍອອກໄປຫຼອກຫຼອນໃຜ.

ສິຣິສອດແຜ່ນຜ້າເຂົ້າໄປທາງກ້ອງຂອງຮ່າງນາງນິດນ້ອຍ ຄ້າຍກັບເປັນຜ້າຫົ່ມສົບເພື່ອປົກປ້ອງນາງໃຫ້ພົ້ນຈາກຝ່າມືອັນຫຍາບກະດ້າງ ແລະສາຍຕາຂອງພວກທີ່ມາຫານາງ. ເຂົາດຶງເອົາແທ່ນຕິດລໍ້ເລື່ອນອອກ ແລ້ວຖອຍຫ່າງອອກມາເລັກໜ້ອຍ ພ້ອມປ່ອຍໃຫ້ຄົນພວກນັ້ນນໍາຮ່າງຂອງນາງອອກໄປ. ຕົນຂະໜາດໃຫຍ່ຄືກັບຕົນເປັດຂອງນາງໂຜ່ອອກມາ ພວກຜູ້ຊາຍຊຸມນັ້ນພາກັນຍົກຮ່າງຂອງນາງຂຶ້ນເບົາໆ ເບິ່ງຄືວ່າພວກເຂົາຈະສາມາດເຮັດໄດ້ງ່າຍໆ ພ້ອມວາງນາງລົງໃສ່ໃນຫີບ.

"ຮ່າງຂອງນາງ ... ເອົາມາຕໍ່ເຂົ້າໃສ່ກັນຄືນຄົບໝົດແລ້ວບໍ່?" ຄໍາຖາມ. "ພວກເຮົາບໍ່ຢາກໃຫ້ສິ້ນສ່ວນໃນຮ່າງກາຍຂອງນາງຊຸຫຼົ່ນອອກແມ່ນແຕ່ອັນດຽວໃນລະຫວ່າງເດີນທາງກັບບ້ານ, ແມ່ນບໍ່ນ້ອງໆ?" ພວກຜູ້ຊາຍທີ່ມານໍາກັນຫົວຂຶ້ນແບບໜ້າຫຼ່າໆ, ພວກເຂົາຄົງເກງອົກເກງໃຈຜູ້ທີ່ກໍາລັງເວົ້າຫຼາຍກວ່າຖືເປັນເລື່ອງຕະຫຼົກ. ຖ້າຫາກສະຫາຍຄໍາບໍ່ຄໍານຶງຖືງຄວາມຮູ້ສຶກຂອງຜູ້ອື່ນ ເນື່ອງຈາກກໍາລັງຕົກໃຈກັບເຫດການທີ່ເກີດຂຶ້ນ ແນ່ນອນວ່າເຂົາຈະຕ້ອງຖືກລົບກວນຫຼາຍສົມຄວນຈາກການເສຍຊີວິດຂອງຜູ້ເປັນເມຍ.

ແຕ່ສີຣິບໍ່ຢາກຈະປັກໃຈເຊື່ອກັບສິ່ງນີ້ອີກຕໍ່ໄປ. ເຂົາຈ້ອງມອງເບິ່ງຄຳພ້ອມເຈາະເລິກເຂົ້າໄປໃນດວງຕາຂອງເຂົາແບບຢາກຮູ້ຄຳຕອບບາງຢ່າງ ແຕ່ແລ້ວສະຫາຍອາວຸໂສກໍຟ້າວຫຼົບໜ້າໜີ ເຊິ່ງແຝງຊ້ອນໄປດ້ວຍທ່າທີແຫ່ງຄວາມລະອາຍໃຈ ແລະອາດມີບາງຢ່າງຫຼາຍກວ່ານີ້. ເມື່ອຄຳຍ່າງອອກໄປຂ້າງນອກ ສີຣິກໍບໍ່ເວົ້າບໍ່ຈາຫຍັງຈັກຄຳ.

ຄົນງານຍັງຄົງໃຫ້ຄວາມເຄົາລົບແກ່ຜູ້ຕາຍດ້ວຍການບໍ່ໂອ້ລົມສົນທະນາກັນ ທັງພາກັນໃຊ້ຄ້ອນຕອກຝາປິດໂລງສົບຄ່ອຍໆ ຢ່າງລະມັດລະວັງ. ພວກເຂົາພະຍາຍາມອອກແຮງກັນເພື່ອຍູ້ເອົາລໍ້ລົດເຂັນທີ່ບັນຈຸສົບຂອງເມຍສະຫາຍຄຳອອກໄປທາງປະຕູ ແຕ່ເນື່ອງຈາກນໍ້າໜັກເພີ່ມຂຶ້ນຫຼາຍກວ່າປົກກະຕິ ຕົນລໍ້ຈິ່ງດຶງເອົາຮ່າງລົດເຂັນເຈີດອອກໄປທາງຂວາ ພ້ອມທັງຕຳເຂົ້າໃສ່ກັບຂອບປະຕູ. ພວກຄົນງານແບກຫາມພະຍາຍາມດຶງລໍ້ລົດຖອຍກັບຫຼັງຄືນອີກກ້າວໜຶ່ງ ແຕ່ລໍ້ລົດກໍຍັງເຈືອກອອກໄປທາງຂວາຄືເກົ່າ ຄ້າຍກັບວ່າມັນປະຕິເສດບໍ່ຢາກອອກໄປທີ່ເດີ່ນຂ້າງນອກ.

ເນື່ອງຈາກບໍ່ມີທາງເລືອກອື່ນໃດ, ບັນດາຄົນງານເຫຼົ່ານັ້ນຈິ່ງຕັດສິນໃຈອອກແຮງໜັກຂຶ້ນດ້ວຍການຍົກລົດລໍ້ທີ່ບັນຈຸໂຮງສົບນັ້ນຂຶ້ນ ພ້ອມຊ່ວຍກັນຫາມອອກຈົນຜ່ານປະຕູ. ສະຫາຍຄຳເຊິ່ງກຳລັງລໍຖ້າຢູ່ຂ້າງນອກ ໃນປາກຂອງເຂົາຄາບກອກຢາລາຄາຖືກທີ່ກຳລັງເຜົາໄໝ້ຢ່າງໄວວາ ເຂົາເອງກໍບໍ່ມີຫຍັງຈະເວົ້າເຊັ່ນກັນ. ເຂົາຍ່າງຮຽງຂ້າງລົດລໍ້ ທັງຮູ້ສຶກຫງຸດຫງິດກັບຄວາມຍາກຫຍຸ້ງຂອງມັນ ກ່ອນຈະຫາຍແວັບເຂົ້າໄປເບື້ອງຫຼັງຂອງຕຶກພ້ອມກັນທັງໝົດ.

ສີຣິຢືນຢູ່ຊື່ກ້ອງປ້າຍຫ້ອງເກັບສົບ, ຄ້າຍຄືກັບໝາທີ່ກຳລັງງ່ຽງຫູຟັງບາງສິ່ງຢ່າງ. ແຕ່ໝາຊະລາໂຕນີ້ກຳລັງໃຫ້ຄວາມສົນໃຈກັບສຽງໂຕ້ແຍ່ງທີ່ເກີດຂຶ້ນໃນຫົວຂອງເຂົາ. ລາວສູບລົມຫັນໃຈເຂົ້າປອດບາດເລິກໆ ເພື່ອລະງັບຄວາມສັບສົນທີ່ໄດ້ລົບກວນໂສດປະສາດຂອງຕົນ ແຕ່ຊີບພະຈອນຂອງເຂົາຍັງຄົງເຕັ້ນແຮງຢູ່ຄືເກົ່າ.

ໃຈໜຶ່ງກໍບອກໃຫ້ເຂົາຍ່າງໜີຈາກທີ່ນັ້ນ ແລ້ວກັບບ້ານ ພ້ອມເປີດປະຕູປະໄວ້ທັງບໍ່ປິດໄຟ. ພຽງແຕ່ອອກໄປຈາກບ່ອນນັ້ນໂດຍບໍ່ຕ້ອງກັບຄືນມາອີກ. ແຕ່ອີກໃຈໜຶ່ງເຊິ່ງເຕັມໄປດ້ວຍເຫດຜົນຄວບຄຸມເອົາໄວ້ໄດ້ບອກໃຫ້ເຂົາຢ່າເຮັດແນວໂງ່ໆ ທີ່ໄຮ້ປະໂຫຍດ, ເຂົາຫັນໜ້າກັບຄືນ ພ້ອມຖີກບາດຕີນຍ່າງຜ່ານຫ້ອງໂຖງນ້ອຍໆ ກ່ອນຈະມຸ່ງໜ້າໄປທາງຫ້ອງຊັນນະສູດສົບ.

ພາຍໃນຫ້ອງຖືກສາດສ່ອງດ້ວຍແສງໄຟນີອອນແຈ້ງພໍເປັນຮິບຮີ່. ເຂົາຢືນຢູ່ກ້ອງດອກໄຟກາງຫ້ອງ ພ້ອມດັກຟັງສຽງບາງຢ່າງ. ເຂົາໄດ້ຍິນສຽງແມງເມົ່າບິນຕຳກັບມຸ້ງລວດຢູ່ໜ້າປະຕູປ່ອງຢ້ຽມ, ພ້ອມທັງສຽງດັງອອດແອດຂອງດອກໄຟທີ່ຕັ້ງຢູ່ຊື່ກັບເທິງຫົວ. ເຂົາຍັງໄດ້ຍິນສຽງໂອ້ລົມສົນທະນາເປັນຮີ່ມໆ ທີ່ຢູ່ຫ່າງໄກຈາກໂຮງໝໍ ພ້ອມ

ທັງສຽງໄກ່ກຳລັງຝຶກຊ້ອມຂັນ ແຕ່ນັ້ນຄືສິ່ງທີ່ເຂົາໄດ້ຍິນທັງໝົດ.

ແມງສາບໂຕໜຶ່ງໄຕ່ຂຶ້ນເທິງຫຼັງຕີນຂອງສີຣິ ກ່ອນທີ່ມັນຈະຜ່ານເຂົ້າໄປໃນຫ້ອງເກັບເຄື່ອງ. ເນື່ອງຈາກຢາຂ້າແມງໄມ້ທັງໂລກກໍຍັງບໍ່ພຽງພໍທີ່ຈະເຮັດໃຫ້ໂຮງໝໍໃນອາຊີຕາເວັນອອກສ່ຽງໃຕ້ຈັກແຫ່ງປອດຈາກແມງສາບ. ຕຸ້ຍ ແລະກິ່ງພາກັນປັດກວາດ ແລະຂັດຖູພື້ນເຖິງສີ່ຄັ້ງຕໍ່ວັນ ພ້ອມທັງໂຮຍຢາຂ້າແມງໄມ້ ແລະວາງກັບດັກໄປທົ່ວ ແຕ່ແມງສາບທີ່ຂຶ້ນຊື່ວ່າເຄີຍລອດຊີວິດມາຈາກຍຸກນ້ຳແຂງ ແລະຍຸກອຸກາບາດຖະຫຼົ່ມໂລກກໍສະຫຼາດພໍທີ່ຈະພາກັນຢູ່ລອດໄດ້ໃນຫ້ອງເກັບສົບຂອງສີຣິ.

ສີຣິຕິດຕາມແມງສາບໂຕນັ້ນເຂົ້າໄປທາງໃນຫ້ອງເກັບເຄື່ອງ ພ້ອມໃຊ້ມືກົດປຸ່ມສະວິດພໍແຕ່ໄຟຮຸ່ງຂຶ້ນ ບັນດາພັກພວກເປັນສິບລວມທັງແມງສາບໂຕເກົ່າກໍພາກັນແຕກຕື່ນພ້ອມແລ່ນເຂົ້າໄປລີ້ຢູ່ຕາມຊ່ອງວ່າງ ແລະເງົາມືດໂດຍໄວ. ທຸກສິ່ງຢ່າງຢູ່ໃນຫ້ອງລ້ວນແຕ່ຖືກຫໍ່ໄວ້ເປັນສອງຊັ້ນ ຫຼືບາງອັນກໍຖືກເກັບໄວ້ໃນຂວດແກ້ວປິດຝາອັດແຈບດີ ດັ່ງນັ້ນພວກແມງໄມ້ທີ່ໜ້າລັງກຽດຊຸມນັ້ນຈຶ່ງໝົດຫວັງທີ່ຈະໄດ້ຊີມລົດຊາດຂອງຕົວຢ່າງທີ່ວາງລຽນກັນຊ້າຍລ້າຍຢູ່ຕາມຊັ້ນວາງເຄື່ອງ. ແຕ່ກິ່ນຂອງຄວາມຕາຍກໍຍັງແຜ່ກະຈາຍໄປທົ່ວຫ້ອງ, ສຳລັບແມງສາບແລ້ວ ກິ່ນເຫຼົ່ານັ້ນຊ້ຳພັດບໍ່ຕ່າງຫຍັງກັບກິ່ນຫອມຫວນຂອງດອກມະລິເມື່ອຕ້ອງກັບສາຍລົມພັດອ່ອນໆ ໃນຍາມຄ້າຍແລງ.

ຊັ້ນວາງຕົວຢ່າງເຫຼົ່ານີ້ ຖືກຈັດຄ້າຍຄືກັບຊັ້ນວາງປຶ້ມໃນຫ້ອງສະໝຸດ ເຊິ່ງມີທີ່ວ່າງພຽງພໍທີ່ຈະຍ່າງຜ່ານເຂົ້າໄປດ້ານໃນໄດ້. ສີຣິບຽດຕົວເຂົ້າໄປລະຫວ່າງແຖວທີ່ສາມແລະທີສີ່ ທັງກົ້ມຕົວລົງພ້ອມສິ່ງສາຍຕາໄປຕາມຂວດຕົວຢ່າງແຕ່ລະອັນ. ສະໝອງຂອງນາງນົດນ້ອຍທີ່ຖືກຫໍ່ໃນບ້ວງຜ້າຝ້າຍແຊ່ຢູ່ກັບນ້ຳຢາຟໍມາລິນທີ່ບັນຈຸໄວ້ໃນຂວດຂະໜາດນ້ອຍ ເຊິ່ງຕັ້ງຢູ່ຊື່ກັບເທິງຫົວຂອງສີຣິ. ຄວາມຈິງແລ້ວຜ້າຝ້າຍສາມາດປ້ອງກັນບໍ່ໃຫ້ສະໝອງເກີດຄວາມເສຍຫາຍເມື່ອມັນກະທົບກັບກົ້ນຂວດ ແຕ່ພໍຮອດຕອນເຊົ້າຂອງວັນຖັດໄປ ມັນກໍຍັງບໍ່ທັນແຂງຕົວພໍທີ່ຈະທຳການຜ່າຊຳແຫຼະໄດ້. ແຕ່ໃນອີກບໍ່ເທົ່າໃດວັນຂ້າງໜ້າ ເນຍຂອງສະຫາຍຄຳອາດມີເລື່ອງລາວບາງຢ່າງເພື່ອບອກໃຫ້ຮູ້ນຳກັນກໍເປັນໄດ້.

ໃນຕອນເຊົ້າຂອງວັນອັງຄານເມື່ອກິ່ງມາຮອດຫ້ອງເກັບສົບ. ທ່ານໝໍສີຣິໄດ້ຢູ່ໜ້າໂຕະຜ່າຕັດກ່ອນແລ້ວ ໂດຍມີຂວດຕົວຢ່າງໜຶ່ງອັນໃນສະພາບວ່າງເປົ່າຖືກວາງໄວ້ຢູ່ຕໍ່ໜ້າ ແລະເຂົາກຳລັງຈະທຳການຜ່າຕັດສະໝອງຂອງທ່ານນາງນົດນ້ອຍ.

"ສະ ... ສະບາຍດີສະຫາຍທ່ານໝໍ."

ສີຣິເງີຍໜ້າຂຶ້ນເບິ່ງຕາມທີ່ມາຂອງສຽງ.

"ສະບາຍດີຕອນເຊົ້ານ້ອງກິ່ງ."

ກິ່ງຍັງຢືນແນມເບິ່ງທັງຕົນຕົວສັ່ນສາຍໄປມາ.

"ສະຫາຍມາແລ້ວ."

"ແມ່ນຂ້ອຍຮູ້ວ່າຂ້ອຍມາແລ້ວ." ສິຣິເຂົ້າໃຈເລື່ອງລາວເປັນຢ່າງດີ. ປົກກະຕິກິ່ງມັກຈະເປັນຜູ້ທຳອິດທີ່ມາຮອດຫ້ອງການໄວກວ່າໝູ່ ແລະເຂົາບໍ່ເຄີຍຍ່າງເຂົ້າມາແລ້ວພົບທ່ານໝໍທີ່ກຳລັງເຮັດວຽກໃນຫ້ອງເກັບສິບຕັ້ງແຕ່ເຊົ້າໆ ແບບນີ້ເລີຍແມ່ນແຕ່ຄັ້ງດຽວ ເຂົາຈິ່ງຮູ້ສຶກແປກໃຈ. ເຂົາຕ້ອງການຄວາມເປັນລະບຽບ ແລະຄວາມໝັ້ນຄົງສະເໝີ ເຖິງແມ່ນຈະເປັນເລື່ອງໄຮ້ເຫດຜົນກໍຕາມ. ແຕ່ສິຣິກໍຍັງຖາມເຂົາຄືກັບເຄີຍຖາມຜ່ານມາ, "ມື້ນີ້ມີລູກຄ້າບໍນ້ອງກິ່ງ."

ກິ່ງຫົວຂຶ້ນທັງຕົບມືແບບພໍໃຈ.

"ບໍ່ມີລູກຄ້າເລີຍມື້ນີ້ທ່ານໝໍ." ເມື່ອໂອ້ລົມເຂົ້າໃຈກັນຮຽບຮ້ອຍແລ້ວ, ກິ່ງກໍວາງຕົບເຂົ້າຂອງຕົນໄວ້ເທິງໂຕະເຮັດວຽກ ກ່ອນຈະເລີ່ມທຳຄວາມສະອາດໃນຊ່ວງຕອນເຊົ້າ ສ່ວນສິຣິກໍກົ້ມໜ້າເຮັດວຽກຕໍ່.

"ອ້າວ! ມື້ຄືນນີ້ທ່ານໝໍຂັງໂຕເອງໄວ້ໃນຫ້ອງເກັບສິບໝົດຄືນເລີຍແມ່ນບໍ?" ຕຸ້ຍຢືນຢູ່ໜ້າປະຕູທັງຍິ້ມໃສ່ສິຣິ.

"ເຮັດຄືກັບວ່າຂ້ອຍບໍ່ເຄີຍມາເຮັດວຽກແຕ່ເຊົ້ານີ້ແຫຼະເນາະນາງໝໍ."

"ແມ່ນຫັ້ນແຫຼະ. ມັນກໍຄືກັບຫິມະທີ່ບໍ່ເຄີຍຕົກໃນຫວຽດນາມ ແຕ່ມັນກໍຍັງກາຍເປັນຂ່າວໜ້າໜຶ່ງໃນໜັງສືພິມຫັ້ນເດ." ນາງທັງເວົ້າທັງສັງເກດເຫັນປະຕູຕູ້ແຊ່ແຂງເປີດໄວ້. "ແມ່ນິດນ້ອຍໄປແລ່ນອອກກຳລັງກາຍບໍ?"

ສິຣິຫົວຂຶ້ນ.

"ຖ້າຂ້ອຍຮູ້ວ່າເຈົ້າກໍຫຼິ້ນຕະຫຼົກເປັນໃນຍາມເຊົ້າຄືຈັ່ງຊີ້, ຂ້ອຍຕ້ອງມາວຽກແຕ່ເຊົ້າໆ ທຸກມື້ແຫຼະ. ຜົວຂອງນາງມາຮັບກັບບ້ານແຕ່ມື້ຄືນນີ້ພຸ້ນ."

"ຈັ່ງແມ່ນໂຣແມນຕິກ."

ຕຸ້ຍຍ່າງເຂົ້າໄປທີ່ຫ້ອງການເພື່ອຈັດມ້ຽນອາຫານທ່ຽງໄວ້ທີ່ໂຕະເຮັດວຽກຂອງຕົນຕາມເຄີຍ. ທັນໃດນັ້ນນາງກໍໄປຕຳກັບກິ່ງຢູ່ທາງເຂົ້າປະຕູ.

"ສະບາຍດີຕອນເຊົ້າຄົນຫຼໍ່," ກິ່ງເຕືອນໃຫ້ຕຸ້ຍເວົ້າຕາມ.

"ສະບາຍດີຕອນເຊົ້າຄົນຫຼໍ່," ນາງເວົ້າຕາມ.

"ສະບາຍດີຕອນເຊົ້າຄົນງາມ. ມີຕະຫຼົກຢູ່ຫວາ?"

"ແມ່ນຫຍັງມີສອງລໍ້ມັກກິນຄົນ?"

"ບໍ່ຮູ້."

"ສິງຂີ່ລົດຖີບ." ກິ່ງຫົວຂຶ້ນແບບຖືກອົກຖືກໃຈ, ຕຸ້ຍເອງກໍຫົວສະອຶກສະອື້ນໄປ

ຕາມກັນ. ສ່ວນສິຣິໄດ້ແຕ່ອົມຍິ້ມຢູ່ໃນຫ້ອງຖັດໄປຢ່າງມີຄວາມສຸກ ເຂົາຮູ້ສຶກພາກພູມໃຈບໍ່ຕ່າງຫຍັງກັບຄົນເປັນພໍ່ ທີ່ພະນັກງານຂອງຕົນເຂົ້າກັນໄດ້ດີ ເຫັນໄດ້ວ່ານີ້ເປັນການທັກທາຍເລີ່ມຕົ້ນຂອງວັນເຮັດວຽກໃນຕອນເຊົ້າທີ່ເຂົາເອງຫາກໍເຄີຍເຫັນ. ສິຣິບໍ່ໝັ້ນໃຈວ່າກິ່ງຈະເຂົ້າໃຈວິທີການຫຼີ້ນມຸກຂອງຕຸ້ຍໄດ້ໝົດທຸກຄຳ ຫຼືບໍ່ ແຕ່ເຂົາຮູ້ວ່າກິ່ງຍັງຄົງສາມາດທ່ອງຄຳເຫຼົ່ານັ້ນໄດ້ໃນອີກຫົກເດືອນຕໍ່ມາ.

ສິຣິຈ້ອງມອງເບິ່ງສະໝອງທີ່ວາງໄວ້ຢູ່ຖາດແກ້ວທີ່ຕັ້ງຢູ່ຕໍ່ໜ້າ. ເຂົາບໍ່ໄດ້ໃຊ້ເວລາຫຼາຍພໍຈະປ່ອຍໃຫ້ມັນແຂງຕົວ, ມັນກະແຈກກະຈາຍຄືກັບເຂົ້າໜົມວຸ້ນ ແຕ່ເຂົາກໍບໍ່ຕ້ອງການລໍຖ້າໃຫ້ມັນແຂງຕົວອີກຕໍ່ໄປ; ເພື່ອຄວາມສະບາຍໃຈຕໍ່ຕົວເອງເຊິ່ງຕ້ອງໄດ້ຮຽນຮູ້ມັນ. ເຂົາໃຊ້ມີດຜ່າຕັດທີ່ຍາວທີ່ສຸດຂອງຕົນ ແລະໃຊ້ມືຈັບມີດເນັ້ນລົງໃສ່ສະໝອງເພື່ອກົດຊໍາແຫຼະຢ່າງລະມັດລະວັງ ສິຣິໃຊ້ຄວາມບັນຈົງປານີດແຫກຜ່າຊໍ້າໄປມາຫຼາຍຄັ້ງຈົນກວ່າສະໝອງຖືກແບ່ງອອກເປັນຊິ້ນຄືກັບກ້ອນເຂົ້າໜົມປັງປຽກ ແລ້ວຈິ່ງຄ່ອຍແຍກແຕ່ລະຊິ້ນສ່ວນອອກຈາກກັນເບົາໆ ພ້ອມໃຊ້ແວ່ນຂະຫຍາຍຂະໜາດໃຫຍ່ ເພື່ອກວດສອບແຕ່ລະຊິ້ນສ່ວນເຫຼົ່ານັ້ນ.

ຕຸ້ຍ ເຊິ່ງກໍາລັງທໍາການປັດກວາດໄປທີ່ຫ້ອງເກັບຂອງນາງໃຊ້ໜ້າກາກປິດປາກເພື່ອກັນຝຸ່ນເປັນຢ່າງດີ.

"ຕຸ້ຍເອົາກ້ອງຖ່າຍຮູບມາໃຫ້ແດ່ໄດ້ບໍ່?" ນາງແນມເບິ່ງເຂົາພ້ອມທັງຂະ ໝວດຄິ້ວເຂົ້າຫາກັນ.

"ກ້ອງຖ່າຍຮູບບໍທ່ານໝໍ?"

"ແມ່ນ ເອົາມາໃຫ້ແດ່."

"ໂດຍ ..."

"ມີຫຍັງຜິດປົກກະຕິ ຫຼືບໍ່?"

"ມີຟິມເຫຼືອຖ່າຍໄດ້ແຕ່ສາມຮູບເທົ່ານັ້ນ."

"ຊໍ່ານັ້ນກໍພຽງພໍແລ້ວ."

"ທ່ານໝໍ, ມື້ແລງມີງານດອງຂອງເອື້ອຍບຸນຫຼານ. ຂ້ອຍກໍເລີຍວ່າ ..."

"ຂ້ອຍກໍເຫັນໃຈລາວຢູ່ດອກແຕ່ເຊື່ອຂ້ອຍເທາະວ່າເລື່ອງນີ້ສໍາຄັນກວ່າ."

ພໍແຕ່ທໍາການຈົດບັນທຶກ ພ້ອມຕິດປ້າຍໃສ່ບັນດາຕົວຢ່າງຮຽບຮ້ອຍແລ້ວ, ສິຣິກໍປະກາດວ່າຈະອອກຂ້າງນອກຄາວໜຶ່ງ. ເຂົາເກັບເອົາຖົງຢາງທີ່ເຕັມໄປດ້ວຍຂອງແຫຼວພ້ອມຂວດນ້ອຍສອງສາມອັນແລ້ວກໍອອກໄປ ແຕ່ບໍ່ໄດ້ບອກວ່າຈະໄປໃສ.

ເຂົາຍ່າງອອກມາຈາກຫ້ອງເກັບສົບ ແລ້ວຍ່າງຜ່ານລົດຈັກຄັນເກົ່າໆ ທັງຮ້າງຂອງຕົນເອງ ລົດຄັນນັ້ນໄດ້ກັກເກັບຂີ້ຝຸ່ນ ແລະໃຍແມງມຸມຫຸ້ມຫໍ່ເອົາໄວ້ໄດ້ສາມເດືອນແລ້ວ.

ເຂົາບໍ່ມີເງິນຊື້ຄາບູເຣເຕີໃໝ່ມາປ່ຽນໃສ່ຕາມທີ່ຕ້ອງການໄດ້. ເຂົາເຮັດໄດ້ພຽງກວດສອບເບິ່ງຍອດເງິນທີ່ມີໃນກະເປົາເພື່ອຈະໄດ້ຈ້າງລົດສອງແຖວ ແຕ່ພໍຄິດເຖິງສິ່ງໃດໜຶ່ງອອກມາ ສິຣິກໍຫັນໜ້າກັບຄືນໄປທີ່ຫ້ອງເກັບສິບ ເຊິ່ງເຮັດໃຫ້ຕຸ້ຍທີ່ກຳລັງອ່ານໜັງສືຢູ່ຕ້ອງຕົກໃຈ.

"ຕຸ້ຍ!"

"ໂອ! ມາເຢີຂວັນເອີຍ. ຢ່າເຮັດແບບນີ້ເດີທ່ານໝໍ. ຂ້ອຍຕົກໃຈຈົນຂວັນໜີໝົດລະ."

"ຊັ້ນກໍຢ່າເຮັດຫຍັງກໍຕາມທີ່ເຈົ້າຢ້ານວ່າຈະຖືກຈັບໄດ້ຕິລະ. ມື້ນີ້ເຈົ້າມາວຽກແນວໃດ?"

"ເອ໋? ກໍຂີ່ລົດຖີບມາຄືທຸກໆ ມື້ນັ້ນແຫຼະ."

"ດີໆ ຊັ້ນນະ ຂ້ອຍຢາກຢືມລົດຖີບເຈົ້າ."

"ຢືມໄປເຮັດຫຍັງ?"

"ຢືມໄປເຮັດຫຍັງຊື້ຫວາ? ແລ້ວຄົນໃຊ້ລົດຖີບເພື່ອຫຍັງລະ?"

"ທ່ານໝໍຈະຂີ່ລົດຖີບຂອງຂ້ອຍບໍ່ໄດ້ໃດ."

"ແລ້ວເປັນຫຍັງ?"

"ຂ້ອຍຄືງຈະບໍ່ມີວັນໃຫ້ອະໄພຕົນເອງຖ້າທ່ານໝໍ ... ອືມດີ, ທ່ານໝໍຮູ້ແລ້ວນະ."

"ບໍ່ນາ, ຂ້ອຍບໍ່ເປັນຫຍັງດອກ."

"ຟັງເດີ ທ່ານໝໍບໍ່ແມ່ນຊາຍໜຸ່ມໃດ."

"ເຈົ້າກຳລັງຢາກບອກວ່າຂ້ອຍແກ່ເກີນໄປທີ່ຈະຂີ່ລົດຖີບໄດ້ແມ່ນບໍ?"

"ບໍ່."

"ຊັ້ນເຈົ້າຢາກຈະບອກຫຍັງລະ?"

"ຂ້ອຍຢາກບອກວ່າຄົນທີ່ມີອາຍຸເຈັດສິບປີຂຶ້ນໄປມີໂອກາດສ່ຽງທີ່ຈະເກີດຫົວໃຈວາຍເຖິງສີ່ສິບເປີເຊັນໃນແຕ່ລະປີ."

"ໂອຍ, ຊັ້ນຂ້ອຍກໍສ່ຽງທີ່ຈະຫົວໃຈວາຍຮອດ ໑໒໐% ລະຕິນີ. ມີໂອກາດທີ່ຈະເປັນໄດ້ສູງພໍສົມຄວນ."

"ເອົາລະ. ບາງທີຂ້ອຍອາດຄິດຜິດ ແຕ່ແນວໃດຂ້ອຍກໍບໍ່ຢາກໃຫ້ລົດຖີບຂອງຂ້ອຍເປັນຕົ້ນເຫດການຕາຍຂອງທ່ານໝໍ."

"ຕຸ້ຍ ຢ່າຄິດແນວບໍ່ເປັນມຸງຄຸນເລີຍເທາະ. ຂ້ອຍສາບານວ່າຂ້ອຍຈະບໍ່ເປັນຫົວໃຈວາຍແນ່ນອນ. ພຽງແຕ່ເອົາລົດຖີບໃຫ້ຂ້ອຍຢືມຊື່ໆ."

"ບໍ່ໃຫ້."

“ຂໍນຳເທາະຕຸ້ຍ.” ດວງຕາສີຂຽວຂອງເຂົາປາກົດມີນ້ຳໃສໆ ຊຶມອອກມາ ອັນເປັນເຫດເຮັດໃຫ້ຕຸ້ຍຮູ້ສຶກໃຈອ່ອນທຸກຄັ້ງ.

“ກະໄດ້ຊັ້ນນະ ແຕ່ມີເງື່ອນໄຂສອງຢ່າງ.”

“ວ່າແລ້ວ ຂ້ອຍຈະຕ້ອງເສຍໃຈທີ່ຂໍຮ້ອງເຈົ້າ, ແຕ່ວ່າເງື່ອນໄຂນັ້ນແມ່ນຫຍັງ?”

“ໜຶ່ງ, ເຈົ້າຕ້ອງຖີບລົດຊ້າໆ ພ້ອມຢຸດພັກທັນທີຖ້າຮູ້ສຶກເມື່ອຍ.”

“ໄດ້ແນ່ນອນ.”

“ແລະສອງ, ເຈົ້າຕ້ອງຝຶກໃຫ້ຂ້ອຍກາຍເປັນໝໍຊັນນະສູດສົບຄົນຕໍ່ໄປ.”

“ແມ່ນຫຍັງເກາະ?”

“ທ່ານໝໍສີຣິ. ທ່ານໝໍໄດ້ຂໍຮ້ອງໃຫ້ພະແນກສາທາລະນະສຸກສົ່ງຄົນໄປຝຶກງານຢູ່ເອີຣົບຕາເວັນອອກ ແລ້ວກະຄືວ່າຍັງບໍ່ໄປບໍ່ມາແນວໃດບໍ່ແມ່ນຫວາ?”

“ບໍ່.”

“ໃນຂະນະທີ່ທ່ານໝໍກໍມີນາງແພດອັດສະລິຍະທີ່ຍັງໜຸ່ມນ້ອຍຄົນໜຶ່ງ ເຊິ່ງສາມາດຊຶມຊັບບົດຮຽນໄດ້ງ່າຍພໍເທົ່າກັບເຈ້ຍດູດຊັບ, ທັງມີຄວາມກະຕືລືລົ້ນຄືກັບລູກໝານ້ອຍ ແລະແຂງແຮງທົນທານຄືກັບ ... ຄືກັບ ... ກ້ອນດິນຈີ່, ເຊິ່ງຕອນນີ້ແມ່ນມີຢູ່ບ່ອນນີ້ແລ້ວ ທັງພ້ອມທີ່ຈະໃຫ້ທ່ານໝໍຝຶກໄດ້ທຸກເມື່ອ.”

“ບໍ່.”

“ແລ້ວອີກຢ່າງທ່ານໝໍກໍສາມາດເວົ້າໄດ້ເຕັມສົບເຕັມປາກວ່າ ທ່ານໝໍມີນາງແພດຜູ້ທີ່ສະຫຼຽວສະຫຼາດທີ່ຜ່ານການຝຶກງານເປັນໝໍຊັນນະສູດສົບມາແລ້ວຮຽບຮ້ອຍ ແລະນາງກໍພ້ອມທີ່ຈະອອກເດີນທາງໄປສຶກສາຕໍ່ທີ່ບັນເກເຣຍ ຫຼືຢູ່ໃສກໍໄດ້.”

“ບໍ່ໄດ້.”

“ເປັນຫຍັງຈິ່ງບໍ່ໄດ້?”

“ເຈົ້າບໍ່ເໝາະກັບວຽກນີ້ດອກ.”

“ຍ້ອນຂ້ອຍເປັນແມ່ຍິງຊີ້ຫວາ?”

“ຍ້ອນເຈົ້າມັກອ່ານແຕ່ພວກກາຕູນ ກັບວາລະສານດາຣາ.”

“ຂ້ອຍພຽງຕ້ອງການແຮງບັນດານໃຈຊື່ໆ.”

“ຂ້ອຍບໍ່ຢາກຈະເຊື່ອເລີຍວ່າເຈົ້າຈະຂໍໃນເລື່ອງແບບນີ້. ປົກກະຕິເຈົ້າເປັນຄົນບໍ່ຫົວໃສ່ໃຈຊາກັບຫຍັງຢູ່ແລ້ວ ຢູ່ບໍ່ຢູ່ພັດວ່າມາສົນໃຈເລື່ອງພະຍາດວິທະຍາ ຄວາມຄິດນີ້ເກີດຂຶ້ນຕັ້ງແຕ່ຕອນໃດ?”

“ຂ້ອຍສົນໃຈມາຕະຫຼອດຢູ່ແລ້ວ ແຕ່ທ່ານໝໍພຸ້ນບໍ່ໃຫ້ໂອກາດຂ້ອຍໄດ້ລອງເຮັດໃນສິ່ງທີ່ຕົນສົນໃຈ. ທ່ານໝໍປະຕິບັດຕໍ່ຂ້ອຍຄືກັບເລຂາຜູ້ໜຶ່ງ.”

ຂະນະທີ່ທັງສອງກຳລັງຖົກຖຽງກັນຢູ່ ກິ່ງກໍມາປາກົດຢູ່ໃນວົງສົນທະນາ ມືເບື້ອງໜຶ່ງຂອງເຂົາຖືຄຸນ້ຳ ສ່ວນອີກມືໜຶ່ງຖືໄມ້ຖູພື້ນ.

"ພວກເຈົ້າກະ ... ກຳລັງຖຽງກັນຢູ່ແມ່ນບໍ?" ກິ່ງທັງເວົ້າທັງຍິ້ມ.

ສີຣິຄວ້າມືໄປຈັບເອົາກະແຈລົດຖີບທີ່ວາງໄວ້ຢູ່ໜ້າໂຕະຂອງຕຸ້ຍ.

"ບໍ່ດອກ. ພວກເຮົາບໍ່ໄດ້ຖຽງກັນ. ນາງໝໍຕຸ້ຍພະຍາຍາມຂົ່ມຂູ່ໃຫ້ຂ້ອຍຂໍທຶນການສຶກສາ ພ້ອມທ່ອງທ່ຽວເອີຣົບແບບບໍ່ເສຍຄ່າເປັນເວລາສາມປີ ເພື່ອແລກກັບລົດຖີບຂອງນາງພຽງຊາວນາທີ, ນ້ອງຄິດວ່າມັນຍຸຕິທຳແລ້ວບໍ?"

ຕຸ້ຍຍ່າງໄປທາງປະຕູດ້ວຍບາດຕີນໜັກໆ ແບບບໍ່ພໍໃຈ. "ເຊີນເອົາລົດຖີບຜີບ້າຄັນນັ້ນໄປເລີຍ."

ໃນອີກຊາວກວ່ານາທີຕໍ່ມາ, ສີຣິກໍພາຕົນເອງມາຢຸດຢູ່ຕໍ່ໜ້າເຮືອນນ້ອຍໆ ຫຼັງໜຶ່ງທີ່ປິ່ນໜ້າໄປທາງພະທາດສີເຫຼືອງອັນຍິ່ງໃຫຍ່. ເຂົາບໍ່ໄດ້ຂີ່ລົດຖີບມາດົນເປັນເວລາສາມສິບປີແລ້ວ ຮອດຕອນນັ້ນເຂົາຄວນລົງຈາກລົດພ້ອມຢຸດພັກຜ່ອນ ພາຍຫຼັງຂີ່ມາຮອດເຄິ່ງທາງຕາມເສັ້ນທາງຫາດຫຼວງ ຂະນະທີ່ຕົວເຂົາເອງກໍຍັງຫັນໃຈຫອບຫືດ ສ່ວນຂາທັງສອງຂ້າງກໍສັ່ນເຊັນໄປໝົດ. ແຕ່ຍ້ອນເຂົາຢາກສະແດງໃຫ້ຕຸ້ຍເຫັນວ່າຄົນອາຍຸເຈັດສິບກວ່າຍັງມີຄວາມແຂງແຮງປິ່ງປັ່ງບໍ່ນ້ອຍໜ້າຄົນໜຸ່ມ.

"ສະບາຍດີລຸງ."

ອາຈານອູ້ມຢືນຢູ່ຂະນະທີ່ບານປະຕູເປີດກວ້າງອອກ ພ້ອມສົ່ງສາຍຕາແນມໄປທີ່ທ່ານໝໍຊະລາ ທີ່ຍັງຫັນໃຈເຊົ່າຫອບເປັນຮູດໃຫຍ່ ທັງສົງໄສວ່າເປັນຫຍັງລາວຈິ່ງຍັງບໍ່ຍອມເວົ້າຫຍັງອອກມາ. ນາງເອງກໍບໍ່ຮູ້ອີ່ຫຼືວ່າຈະຊ່ວຍໃຫ້ລາວຫັນໃຈໄດ້ງ່າຍຂຶ້ນແນວໃດ ເພາະນາງເປັນນັກວິທະຍາສາດ ບໍ່ແມ່ນນາງພະຍາບານ ຍ້ອນຈັ່ງຊັ້ນແຫຼະນາງຈິ່ງບໍ່ເຮັດຫຍັງເລີຍດີກວ່າ

ອູ້ມເປັນອາຈານສອນຢູ່ສະຖາບັນລີເຊວຽງຈັນ ເຊິ່ງມີໃບໜ້າມົນກົມເປັນຮູບໜ່ວຍໄຂ່. ນາງໄດ້ກາຍເປັນຈຸດດຶງດູດໃຈຫຼາຍເປັນພິເສດສຳລັບຜູ້ຊາຍແບບສີຣິ ຜູ້ເຊິ່ງເກືອບຮອດຈະຂ້າຄົນໄດ້ພຽງເພື່ອໄດ້ຮູ້ຈັກກັບນາງ ຍ້ອນເຫດຜົນສອງຂໍ້.

ເຫດຜົນໜຶ່ງ, ນາງເປັນອາຈານສອນວິຊາເຄມີພາກປະຕິບັດຕົວຈິງທີ່ຫຼົງເຫຼືອຢູ່ພຽງຄົນດຽວໃນປະເທດລາວ ຂະນະທີ່ສີຣິຂາດແຄນພວກສານເຄມີຫຼາຍຊະນິດ ແຕ່ນາງຊ້ຳພັດມີຫຼາຍເຫຼືອເຟືອຢູ່ໃນມື. ຂໍພຽງມີຄູ່ມື, ສີທີ່ເກີດຈາກການປະສົມກັບຂອງແຫຼວໃນຮ່າງກາຍບວກກັບສານເຄມີ ກໍສາມາດຕອບໂຈດຄຳຖາມທີ່ຕ້ອງການຄຳຕອບໄດ້ຫຼາກຫຼາຍ.

ອູ້ມຫາກໍກັບມາຈາກອິດສະຕາລີເມື່ອບໍ່ດົນມານີ້ ບ່ອນທີ່ນາງສຳເລັດການສຶກສາ

ປະລິນຍາສາຂາວິສາວະກຳເຄມີ ເຊິ່ງໃຊ້ຊີວິດຮ່ວມກັບຊາຍຄົນຊິດນີເຊິ່ງເປັນຜູ້ທີ່ເສບຕິດການມີເພດສຳພັນຊື່ວ່າ ແກຣີ. ດ້ວຍເຫດນີ້ຈິ່ງເຮັດໃຫ້ນາງມີຄວາມຮູ້ກ່ຽວກັບສານປະກອບທາງເຄມີດີເລີດແບບບໍ່ມີຜູ້ໃດທຽມທັນໃນລາວ, ອີກດ້ານໜຶ່ງ ນາງກໍຍັງສາມາດເຂົ້າໃຈພາສາອັງກິດໄດ້ຢ່າງຄ່ອງແຄ້ວ ພ້ອມມີລູກຊາຍອາຍຸໜຶ່ງປີທີ່ມີຜົມສີແດງອີກໜຶ່ງຄົນ.

ພາສາອັງກິດກໍແມ່ນເຫດຜົນທີ່ສອງທີ່ເຮັດໃຫ້ສີຣິເກີດຄວາມສົນໃຈໃນຕົວຂອງນາງ. ລາວມີປຶ້ມຄູ່ມືຈາກມະຫາວິທະຍາໄລຊຽງໃໝ່ ທີ່ໄຂປິດສະໜາກ່ຽວກັບການທົດສອບສີເປັນຈຳນວນຫຼາຍ. ຖ້າຄູ່ມືເຫຼັ້ມນັ້ນເປັນພາສາໄທ, ຝຣັ່ງ ຫຼືພາສາຫວຽດນາມ ມັນຈະມີຄ່າມະຫາສານສຳລັບໜ້າວຽກຂອງເຂົາ. ແຕ່ມັນກໍເປັນເລື່ອງເສົ້າໃຈເນື່ອງຈາກທັງເຫຼັ້ມນັ້ນຊ້ຳພັດຂຽນເປັນພາສາອັງກິດ. ທ່ານໝໍຜູ້ໜ້າສົງສານສາມາດອວດຄຳສັບທີ່ເປັນພາສາອັງກິດໄດ້ປະມານສິບເອັດຄຳ ທັງອອກສຽງໄດ້ຂີ້ຮ້າຍຫຼາຍຈົນບໍ່ມີໃຜຮູ້ເລີຍວ່າເຂົາກຳລັງເວົ້າຫຍັງ.

ຍ້ອນແນວນັ້ນ ສີຣິຈິ່ງຕ້ອງໄດ້ອາໄສອາຈານອູ້ມ ບໍ່ສະເພາະແຕ່ສຳລັບສານເຄມີຂອງນາງເທົ່ານັ້ນ ແຕ່ຍັງຕ້ອງໄດ້ແປຂໍ້ຄວາມທີ່ສະແດງວິທີການນຳໃຊ້ສານເຄມີນຳອີກ.

"ແມ່ນຫຍັງຢູ່ໃນຖົງຢາງ?"

ສີຣິຍັງຄົງຖືຖົງຢາງຂະໜາດນ້ອຍທີ່ປິດປາກຖົງດ້ວຍໜັງຢາງໄວ້ໃນມື. ຈັງຫວະການຫັນໃຈ ແລະຄຳເວົ້າຂອງເຂົາເລີ່ມກັບມາເປັນປົກກະຕິຄືເກົ່າ.

"ເຄື່ອງໃນ."

"ອືມ ຄັກແທ້ແນວນີ້. ຄົນອື່ນໆ ມີແຕ່ເອົາເຕົ້າຮູ້ ກັບກາເຟນົມເຢັນມາໃຫ້."

"ຂໍໂທດ."

"ລຸງກິນເຂົ້າເຊົ້າແລ້ວ ຫຼືຍັງ?"

"ຍັງເທື່ອ."

ໜຶ່ງຊົ່ວໂມງຕໍ່ມາ ທັງສອງກໍພາກັນມາຮອດໂຮງຮຽນ. ມື້ນັ້ນເປັນວັນຄານນາງບໍ່ມີຊົ່ວໂມງສອນຈົນຮອດສິບໂມງເຊົ້າ. ຂະນະທີ່ສີຣິຂຶ້ນນັ່ງເທິງລົດຖີບ, ນາງກໍຈັບແຂນເຂົາພ້ອມລາກເຂົາແນບຂ້າງກັບລົດຈັກຂອງຕົນ. ສີຣິເຄັ່ງຄຽດເລັກໜ້ອຍທີ່ຕ້ອງພະຍາຍາມຄົງລົດບໍ່ໃຫ້ຕີນມັນເຈືອກເຂົ້າໃສ່ລົດຈັກຂອງນາງ ຫຼືບໍ່ໃຫ້ກິ້ງໄປຕົກຂຸມ.

ທີ່ຫ້ອງທົດລອງວິທະຍາສາດເຊິ່ງຂ້ອນຂ້າງມີເຄື່ອງມືໜ້ອຍຫຼາຍ. ຫ້ອງເຮັດວຽກຂອງອູ້ມມີລັກສະນະຄ້າຍຄືກັບຕູ້ທີ່ສາມາດຍ່າງເຂົ້າໄປໄດ້ ຢູ່ຂ້າງໃນມີຊັ້ນລຽນລາຍກັນຈົນຈຳເພດານ, ມີຕັ່ງມ້າຂະໜາດນ້ອຍໜຶ່ງໜ່ວຍ ພ້ອມກັບຕັ່ງນັ່ງສອງໜ່ວຍ. ຕາມຊັ້ນວາງເຄື່ອງເຕັມໄປດ້ວຍຂວດເປັນຈຳນວນຫຼາຍຮ້ອຍໜ່ວຍຕັ້ງຢັ່ງຢາຍຢ່າງເປັນ

ລະບຽບ ພ້ອມມີປ້າຍກຳກັບທີ່ຂຽນດ້ວຍລາຍມື ເຊິ່ງມີທັງສານຊັນເຟດ ແລະໄນເຕຣດທຸກຊະນິດ. ແຕ່ໜ້າເສຍດາຍທີ່ປ້າຍສ່ວນໃຫຍ່ວ່າງເປົ່າຄືກັບຂວດບັນຈຸທີ່ປາສະຈາກສານເຄມີ. ບັນດາເຄື່ອງບໍລິຈາກທີ່ທາງອາເມລິກາເຄີຍສົ່ງມາໃຫ້ແຕ່ກ່ອນນັ້ນກໍແຫ້ງໝົດແຕ່ດົນແລ້ວ ສ່ວນທີ່ຍັງໃຫ້ເຫັນພາຍໃນຫ້ອງສ່ວນໃຫຍ່ກໍແມ່ນສິ່ງຂອງທີ່ຫາໄດ້ຕາມທ້ອງຖິ່ນ ເຊິ່ງກໍມີບໍ່ຫຼາຍພໍເທົ່າໃດ. ອູ້ມພະຍາຍາມເກັບທ້ອນສິ່ງຂອງເລັກໆ ນ້ອຍໆເອົາໄວ້ເພື່ອໃຊ້ເປັນປະໂຫຍດແກ່ຕົນເອງ ແຕ່ການທີ່ສີຣິທຽວໄປຫ້ອງການຂອງນາງຕັ້ງຫຼາຍເທື່ອ ເຮັດໃຫ້ບັນດາສິ່ງຂອງເຫຼົ່ານັ້ນກໍພອຍວ່າບົກແຫ້ງລົງ.

ທັງສອງພາກັນຂຽນຄຳຮ້ອງເພື່ອສະເໜີຂໍຄວາມຊ່ວຍເຫຼືອໄປຍັງພະແນກຊ່ວຍເຫຼືອແກ່ຕ່າງປະເທດ ແຕ່ພວກເຂົາກໍຮູ້ດີວ່າຄຳຮ້ອງຂອງພວກຕົນຖືກຈັດຢູ່ໃນອັນດັບຕໍ່າໆ. ທຸກສິ່ງຢ່າງຍັງຖືວ່າຂາດແຄນບໍ່ມີໃຫ້ໃຊ້ເລີຍ. ສະນັ້ນມາມື້ໜຶ່ງເຊິ່ງແມ່ນວັນອາທິດ, ພວກເຂົາຈິ່ງພາກັນນັ່ງກ່າຍຈົດໝາຍເປັນພາສາຣັດເຊຍ ແລະເຢຍລະມັນດ້ວຍຄວາມພາກພຽນ ເຊິ່ງພວກເຂົາໄດ້ສົ່ງຕໍ່ໄປຍັງບັນດາໂຮງຮຽນ ແລະມະຫາວິທະຍາໄລຕ່າງໆໃນກຸ່ມປະເທດສະຫະພາບໂຊວຽດ ແຕ່ເຖິງປານນັ້ນກໍຍັງບໍ່ມີວີ່ແວວວ່າຈະມີພາກສ່ວນໃດທີ່ຈະອົດສາຕອບກັບຈົດໝາຍຂອງພວກເຂົາ.

ສີຣິຢິບເອົາຄູ່ມືປະຕິບັດການກ່ຽວກັບສານເຄມີ ແລະພິດວິທະຍາທີ່ຂາດຍັບຍໍ່ເປັນບາງບ່ອນອອກມາຈາກກະເປົາພາຍຜ້າຂອງຕົນ. ມັນເປັນເອກະສານສີນ້ຳຕານທີ່ກັອບປີດ້ວຍເຄື່ອງໂຣນຽວໂດຍຫຍິບເຈ້ຍແບບຍິງລວດໃສ່ທີ່ເຂົານຳມາແຕ່ຊຽງໃໝ່. ມັນຖືກພິມໄວ້ພຽງເຈ້ຍດ້ານດຽວ ແລະມີລາຍລະອຽດຈາກການແປຂອງອາຈານອູ້ມທີ່ລາວຈົດບັນທຶກໄວ້ເຕັມຊ່ອງວ່າງດ້ານຫຼັງ.

“ມື້ນີ້ພວກເຮົາຈະສຶກສາຫາຫຍັງລຸງ?”

“ເລີ່ມຈາກໄຊຢາໄນດ໌ກ່ອນເນາະ.”

“ໂອ! ຢາພິດຊ້ຳໃດຫັ້ນ.” ນາງເປີດໜ້າປຶ້ມເພື່ອຊອກຫາໄຊຢາໄນດ໌ ແລະເບິ່ງຄູ່ມືວິທີການທົດລອງຕ່າງໆ ຫຼາຍຢ່າງ. “ພວກເຮົາຍັງບໍ່ທັນເຄີຍທົດລອງເລື່ອງຢາພິດຈັກເທື່ອ ແຕ່ເບິ່ງແລ້ວລຸງເອງຄືວ່າຍັງບໍ່ທັນໝັ້ນໃຈປານໃດ.”

“ຫຼານກໍຮູ້ຈັກລຸງດີຢູ່ແລ້ວອູ້ມ. ລຸງບໍ່ເຄີຍໝັ້ນໃຈກັບອັນໃດດອກ. ນີ້ກໍເປັນອີກສິ່ງໜຶ່ງທີ່ລຸງເດົາເອົາ ແຕ່ກໍມີເງື່ອນງຳຢູ່ສອງສາມຂໍ້.”

“ເລົ່າໃຫ້ຟັງແດ່ລຸງ.” ນາງດຶງຂວດລົງມາຈາກຊັ້ນວາງເຄື່ອງ ແລະທຳການກວດສອບເພື່ອຈະໄດ້ຮູ້ວ່າຍັງມີສານເຄມີຊະນິດໃດແດ່ທີ່ນາງຕ້ອງການໃຊ້ຫຼົງເຫຼືອຢູ່.

“ຄືວ່າ, ທຳອິດນັ້ນນາງຜູ້ເປັນເຫຍື່ອເກີດເສຍຊີວິດແບບກະທັນຫັນ ໂດຍປາສາຈາກອາການເຈັບປວດທໍລະມານທາງຮ່າງກາຍໃດໆ ປາກົດອອກທາງພາຍນອກ. ອັນທີ

ສອງກໍແມ່ນ ອະໄວຍະວະພາຍໃນຂອງນາງປາກົດມີສີແດງເຂັ້ມຜິດປົກກະຕິ. ອ້າວຫຼານໄປດົມມັນເຮັດຫຍັງ? ມັນຍັງບໍ່ທັນເໝັນເນົ່າແມ່ນບໍ?”

“ບໍ່ດອກ, ຫຼານກໍດົມເຜີນໆ ໄປຊື່ໆ. ຢາກລອງດົມເບິ່ງບໍ?”

“ຢ່າແຫຼະ ຂອບໃຈ. ອັນທີສາມ ກໍແມ່ນນ້ອງກິ່ງຂອງລຸງນັ້ນແຫຼະທີ່ສັງເກດເຫັນບາງຢ່າງແປກໆ ໃນຂະນະທີ່ລຸງກຳລັງທຳການຜ່າຊຳແຫຼະສົບ ເຊິ່ງເຂົາບອກວ່າໄດ້ກິ່ນຖົ່ວ.”

“ຖົ່ວຫວາ?”

“ກິ່ງອາດລະບຸບໍ່ໄດ້ແບບແນ່ນອນວ່າແມ່ນຖົ່ວຊະນິດໃດ ແຕ່ລຸງເດົາວ່າແມ່ນໝາກກໍ່ຊະນິດໜຶ່ງ. ມີຖົ່ວປະມານສອງສາມຊະນິດເທົ່ານັ້ນດອກ ທີ່ມີກິ່ນສະເພາະຕົວ.”

“ຖ້າເປັນແນວນັ້ນແນ່ນອນວ່າລຸງກັບນາງພະຍາບານກໍຕ້ອງໄດ້ກິ່ນຖົ່ວຄືກັນ.”

“ບໍ່ຈຳເປັນ. ມີຜູ້ຄົນຫຼາກຫຼາຍທີ່ຍັງບໍ່ສາມາດແຍກແຍະກິ່ນນັ້ນນີ້ໄດ້. ປະສາດສຳຜັດບາງຢ່າງຂອງນ້ອງກິ່ງມີພັດທະນາການຂ້ອນຂ້າງດີກວ່າຄົນປົກກະຕິທົ່ວໄປ. ລຸງກຳລັງສົງໄສວ່າ ອາດຈະມີຄົນແອບລັກເອົາຢາຊະນິດໃດໜຶ່ງໃຫ້ນາງກິນ ແລະຢາທີ່ມັກພົບເຫັນທັງຫາງ່າຍທີ່ສຸດກໍຄົງແມ່ນໄຊຢາໄນດ໌. ຖ້າສົບນັ້ນຍັງຢູ່ໂຮງເກັບສົບອາດຈະຕ້ອງມີສັນຍານອື່ນໆ ປະຮ່ອງຮອຍໄວ້ພໍຈະເຮັດໃຫ້ລຸງຊອກຫາຄຳຕອບໄດ້.”

“ໝາຍຄວາມວ່າສົບບໍ່ໄດ້ຢູ່ຫັ້ນແລ້ວແມ່ນບໍ?”

“ຄອບຄົວຂອງນາງມາຮັບເອົາໄປແລ້ວ.”

ອູ້ມໄດ້ແຕ່ແນມເບິ່ງໜ້າສີຣິ.

“ມັນຄືວ່າເປັນເລື່ອງບັງເອີນແທ້ເນາະ.”

“ບັງເອີນແນວໃດ?”

“ຫຼານໄດ້ຍິນຂ່າວວ່າເມຍຂອງສະຫາຍຄຳເສຍຊີວິດກະທັນຫັນມື້ວານນີ້ ແລ້ວລາວກໍໄປໂຮງເກັບສົບ ພ້ອມລັກເອົາສົບເມຍລາວອອກມາ.”

“ເວົ້າແທ້ຫວາ? ຫຼານໄປໄດ້ຍິນຂ່າວນັ້ນມາແຕ່ທາງໃດ?”

“ນີ້ແມ່ນເມືອງວຽງຈັນໃດລຸງ ບໍ່ແມ່ນປາຣີ.”

ແນ່ນອນນາງເວົ້າຖືກ. ໃນປະເທດລາວ ຖ້າຈະເວົ້າເຖິງທິດສະດີຫົກຊ່ວງຄົນແລ້ວຍັງຖືເປັນສິ່ງໃຫຍ່ຫຼາຍ ເຊິ່ງສາມາດຫຼຸດລົງເປັນສາມຊ່ວງຄົນແບບງ່າຍໆ ຫຼືອາດຈະຫຼຸດລົງເຫຼືອພຽງແຕ່ສອງຊ່ວງຄົນກໍສາມາດນຳເອົາຂ່າວລື ຫຼືເລື່ອງລາວໄປບອກເລົ່າຕໍ່ກັນໃຫ້ຮັບຮູ້ທົ່ວບ້ານທົ່ວເມືອງໄດ້. ພົນລະເມືອງລາວຄາວນັ້ນກໍຄ່ອຍໆ ຫຼຸດລົງເກືອບບໍ່ຮອດສາມລ້ານຄົນ ແລະສະເພາະເມືອງວຽງຈັນກໍອາດໜ້ອຍກວ່າ ໑໕໐,໐໐໐ ຄົນ. ສະນັ້ນ, ໂອກາດທີ່ຈະຮັບຮູ້ເລື່ອງລາວຂອງກັນແລະກັນຈິ່ງຖືວ່າຂ້ອນຂ້າງແຜ່ກະຈາຍໄວສົມຄວນ.

"ແມ່ນໃດເນາະ. ໃນປາຣີ ຈະບໍ່ມີຂ່າວລື ຫຼືເລື່ອງນິນທາກ່າວຂວັນທີ່ຄານອອກມາຈາກຖົງຂີ້ເຫຍື້ອ ຫຼືທໍ່ລະບາຍນ້ຳໃຫ້ໄດ້ຍິນໄດ້ຟັງກັນ. ສ່ວນຢູ່ເມືອງວຽງຈັນຂໍພຽງແຕ່ບໍ່ໄດ້ຍິນຂ່າວລືພຽງແຕ່ສອງວັນເທົ່ານັ້ນແຫຼະ ຜູ້ຄົນກໍຈະພາກັນສ້າງເລື່ອງຂຶ້ນເອງເພື່ອໃຫ້ມັນໂດ່ງດັງຈົນເປັນຂ່າວລືກ້ອງໄປທົ່ວເມືອງ."

"ສະນັ້ນ ລຸງກຳລັງຈະບອກວ່າ ເຄື່ອງໃນທີ່ລຸງເອົາມາຕ້ອນຫຼານສຳລັບອາຫານເຊົ້າບໍ່ມີຫຍັງທີ່ກ່ຽວຂ້ອງກັບ.. ."

"ອູ້ມ, ຫຼານຮັກ. ລຸງສັນຍາວ່າ ຖ້າຫຼານບໍ່ຖາມກ່ຽວກັບເລື່ອງນັ້ນ, ລຸງກໍຈະບໍ່ຕົວະຫຼານ."

"ຊັ້ນຫຼານຊິບໍ່ຖາມອີກ. ເອົາລະມາສືບຕໍ່ວຽກຂອງພວກເຮົາເລີຍ. ໃນປື້ມວິເສດເຫຼັ້ມນີ້ມີການທົດລອງສີເພື່ອຄົ້ນຫາໄຊຢາໄນດ໌ໄດ້ສາມວິທີ. ຫຼານມີສານເຄມີສຳລັບທຳການທົດລອງໃນສອງຢ່າງນີ້."

ສິຣິດຶງເອົາກ່ອງບັນຈຸຝົມຢາງສອງອັນອອກມາຈາກກະເປົາຂອງຕົນ.

"ລຸງເກັບນ້ຳຢ່ຽວ ກັບເລືອດຂອງນາງມານຳ ສະນັ້ນພວກເຮົາຈະຕ້ອງເຮັດທັງສາມຕົວຢ່າງສຳລັບການທົດລອງແຕ່ລະຄັ້ງ."

"ໂດຍຂ້ານ້ອຍ. ລຸງຍັງມີຊີ້ນສ່ວນຂອງເມຍສະຫາຍຕິດມາໃນກະເປົາຕື່ມອີກ ຫຼືບໍ່?"

ລາວແນມເບິ່ງໜ້ານາງແບບສີໜ້າຢາກຮ້າຍ ແຕ່ກໍບໍ່ເປັນຕາຢ້ານຈັກໜ່ອຍ.

"ອູ້ມ. ຖ້າລຸງເວົ້າຖືກກ່ຽວກັບນາງ ຄົງຈະເປັນການດີຖ້າຄົນອື່ນຈະຕ້ອງຮູ້ເລື່ອງນີ້ໜ້ອຍທີ່ສຸດ. ຫຼານເຂົ້າໃຈໃນສິ່ງທີ່ລຸງກຳລັງເວົ້າ ຫຼືບໍ່?"

"ໂດຍ ຫຼານເຂົ້າໃຈແລ້ວ. ເວົ້າແທ້ໃດນິ ລຸງບໍ່ຕ້ອງຫ່ວງດອກ."

ເມື່ອສິຣິກັບໄປທີ່ໂຮງເກັບສົບກໍພໍດີແມ່ນຊ່ວງເວລາອາຫານທ່ຽງ. ປ້າຫຼ້າກັບບ້ານແລ້ວເພາະລາວຂາຍເຂົ້າຈີ່ຝຣັ່ງໝົດກ່ອນ, ແຕ່ຖ້ຽວນີ້ແມ່ນນ້ອງກິ່ງເປັນຄົນໄປຮັບເອົາອາຫານທ່ຽງນຳປ້າຫຼ້າແທນ ພ້ອມເອົາມັນມາວາງໄວ້ຢູ່ໜ້າໂຕະເຮັດວຽກຂອງທ່ານໝໍຊັນນະສູດສົບ. ໃນຫ້ອງການບໍ່ມີໃຜຢູ່ຈັກຄົນ ສິຣິຈິ່ງຈັບເອົາເຂົ້າຈີ່ຢູ່ໜ້າໂຕະແລ້ວຍ່າງລົງໄປນັ່ງຢູ່ຂອນໄມ້ ເຊິ່ງເປັນບ່ອນທີ່ລາວມັກນັ່ງກິນເຂົ້າທ່ຽງເປັນປະຈຳ ລາວທັງຫຍ້ຳເຂົ້າຈີ່ທັງປ່ອຍໃຫ້ຄວາມຄິດສົນລະວົນຢູ່ໃນຫົວຜູ້ດຽວ. ແຕ່ແລ້ວລາວກໍຮູ້ສຶກປະຫຼາດໃຈເມື່ອສຽງຂອງກິ່ງດັງປາກົດຢູ່ໃກ້ໆ ກັບຕົນ.

"ຕຸ້ຍ. ລາວ ... ລາວກັບບ້ານແລ້ວ." ສິຣິຫັນຫຼັງໄປຫາທີ່ມາຂອງສຽງ. ຜູ້ຊ່ວຍຫ້ອງຊັນນະສູດຂອງເຂົາເອນຕົວເຂົ້າໄປຈົນເກືອບຈຳກັບສິຣິພ້ອມໃຊ້ມືຊີ້ໜ້າໃສ່ເຂົາຄືກັບຄູຢູ່ໂຮງຮຽນທີ່ກຳລັງສອນເດັກນ້ອຍ.

"ໂອ ສະບາຍດີນ້ອງກິ່ງ. ຂອບໃຈທີ່ໃຈດີໄປຮັບເອົາ ..."

"ເຈົ້າຄືມາເປັນຄົນບໍ່ດີແນວນີ້."

"ວ່າຫຍັງເກາະ?"

"ເຈົ້າຫັ້ນມັນຄົນບໍ່ດີ."

"ຂ້ອຍເຮັດຫຍັງຜິດ?" ລາວຮູ້ສຶກຕົກປະມ່າ ທັງເກີດຄວາມສົງໄສໄປພ້ອມກັນ.

"ນາງບໍ່ ... ບໍ່ແມ່ນ ... ບໍ່ແມ່ນຄົນບໍ່ຫົວໃສ່ໃຈຊາກັບຫຍັງ. ນາງນິດໄສດີ."

"ຂ້ອຍ ..."

"ມັນບໍ່ຄັກໃດທີ່ເຈົ້າເວົ້າແບບ ... ແບບ ... ເລື່ອງແບບນີ້ກັບນາງ."

ຄຳເວົ້າຂອງກິ່ງ ເຮັດໃຫ້ສິຣິຈຳຕ້ອງຢ້ອນຄິດຄືນວ່າຕົນເອງເວົ້າຫຍັງອອກໄປ ທັງບໍ່ຄິດວ່າມັນຈະເຮັດໃຫ້ນາງຮູ້ສຶກໂກດເຄືອງຍ້ອນ. ເຂົາບໍ່ເຄີຍຄິດມາກ່ອນວ່ານາງຈະເປັນຄົນໃຈນ້ອຍຂະໜາດນັ້ນ.

"ນີ້ນ້ອງບອກວ່ານາງກັບບ້ານແລ້ວແມ່ນບໍ?"

"ແມ່ນຫັ້ນແຫຼະ."

"ແຕ່ນາງບໍ່ເຄີຍກັບໄປກິນເຂົ້າທ່ຽງຢູ່ເຮືອນຈັກເທື່ອ ແລະລົດຖີບຂອງນາງກໍຍັງຢູ່ນຳອ້າຍ."

"ນາງກັບບ້ານຍ້ອນນາງບໍ່ສະບາຍໃຈ. ເຈົ້າຫັ້ນລະເຮັດໃຫ້ນາງເສຍໃຈ."

"ຂ້ອຍ ..."

ກິ່ງບໍ່ລໍຖ້າຟັງຕໍ່ ພໍເວົ້າຈົບເຂົາກໍຫັນໜ້າໜີແລ້ວຍ່າງກັບຄືນໄປທີ່ໂຮງໝໍ.

"ນ້ອງກິ່ງລົມກັນດີໆ ກ່ອນໄດ້ບໍ?"

ເຂົາຍັງບໍ່ຍອມແມ່ນແຕ່ຈະຫຼຽວຫຼັງກັບຄືນມາເລີຍ.

ສິຣິບໍ່ເຄີຍໄປເຮືອນຂອງຕຸ້ຍມາກ່ອນ ຮູ້ແຕ່ວ່າເຮືອນຂອງນາງລີ້ຊ້ອນໄວ້ຢູ່ຂ້າງຫຼັງສະໜາມກິລາແຫ່ງຊາດ ມັນແມ່ນໜຶ່ງໃນຫ້ອງແຖວທີ່ສ້າງຂຶ້ນສຳລັບເປັນບ່ອນອາໄສຂອງປະຊາຊົນທີ່ຍ້າຍມາແຕ່ທາງພາກເໜືອ ເພື່ອເຮັດໜ້າທີ່ຊ່ວຍໃນການສ້າງສາພັດທະນາປະເທດຊາດ.

ຕູບແຖວເຫຼົ່ານີ້ໝ້າຈະສ້າງໃຫ້ເປັນທີ່ຢູ່ຊົ່ວຄາວ ແຕ່ເວລາຜ່ານໄປໜຶ່ງປີແລ້ວກໍບໍ່ເຫັນມີໃຜໄດ້ຮັບການຍົກຍ້າຍໄປຢູ່ເຮືອນຫຼັງໃໝ່. ສຳລັບອາຄານຫຼັງໃໝ່ທີ່ໄດ້ຮັບການກໍ່ສ້າງໃນຕົວເມືອງແມ່ນມອບໃຫ້ເຈົ້າໜ້າທີ່ອາວຸໂສຜູ້ທີ່ມີຄວາມສຳຄັນໄດ້ຢູ່ກ່ອນ. ສ່ວນບັນດາແຂ້ວເຟືອງນ້ອຍໆ ຕ້ອງລໍຖ້າອີກຕໍ່ໄປ.

ຍ້ອນບໍ່ຮູ້ຮອດເລກທີເຮືອນ ຫຼືແມ່ນແຕ່ຊື່ຂອງເຈົ້າຂອງເຮືອນທີ່ຈະໄປຫາ ຈຶ່ງເຮັດໃຫ້ສິຣິເສຍເວລາໄປດົນເຕີບກວ່າຈະຊອກຫາຕູບຂອງຕຸ້ຍພົບ. ມັນຄືຕູບເພິງໝາແຫງນທີ່ເອົາໃບໄມ້ມາສານເປັນແຕະເພື່ອແອ້ມຝາ ພ້ອມມີຊ່ອງວ່າງເມື່ອແນມຜ່ານແຜ່ນໃບໄມ້

ເຊິ່ງແຮງງານລາວລ້ວນແຕ່ມີຫົວຄິດ ແລະຄວາມສາມາດພິເສດໃນການກໍ່ສ້າງທີ່ພັກຊົ່ວຄາວເຊິ່ງມັນກໍເປັນບ່ອນພັກຊົ່ວຄາວອີ່ຫຼີ. ໂດຍມີຫ້ອງນ້ຳລວມຕັ້ງຢູ່ສົ້ນສຸດອີກດ້ານໜຶ່ງຂອງເຮືອນແຖວ.

ພື້ນເຮືອນທີ່ຢູ່ໃຈກາງຫ້ອງຂອງຕູບຫຼັງນັ້ນປູດ້ວຍເສື່ອສອງເຄືອ ເຊິ່ງມີແມ່ຍິງຮ່າງໃຫຍ່ສອງຄົນນອນຫຼົ້ນຢູ່ ໜຶ່ງໃນນັ້ນກໍແມ່ນຕຸ້ຍທີ່ກຳລັງນອນອ່ານວາລະສານດາຣາໄທຢ່າງເພີດເພີນ.

"ຂ້ອຍຫວັງວ່າຄົງຈະບໍ່ລົບກວນພວກເຈົ້າຕິນໍ."

ຕຸ້ຍກັບແມ່ຂອງນາງຫັນມາແນມເບິ່ງເຈົ້າຂອງສຽງພ້ອມທັງປະຫຼາດໃຈເມື່ອຮູ້ວ່າແຂກທີ່ບໍ່ໄດ້ເຊີນຜູ້ກຳລັງຢືນຢູ່ປະຕູທາງເຂົ້ານັ້ນແມ່ນທ່ານໝໍ ແຕ່ຕຸ້ຍຄົນດຽວເທົ່ານັ້ນທີ່ຟ້າວລຸກພວດພາດຢືນຂຶ້ນ. ເບິ່ງສີໜ້າຂອງນາງແລ້ວຄົງຈະເສຍໃຈບໍ່ໜ້ອຍທີ່ສີຣິໄດ້ມາເຫັນສະພາບບ່ອນທີ່ນາງອາໄສຢູ່. ທຳອິດນາງຍັງບໍ່ຍອມເວົ້າຈາຫຍັງອອກມາ ອາດຈະເປັນຍ້ອນນາງລໍຖ້າໃຫ້ຜູ້ເປັນຫົວໜ້າຂອງຕົນຕຳນິໃນເລື່ອງການຂາດການຂອງຕົນ ແຕ່ສີຣິກໍຍັງບໍ່ເວົ້າຫຍັງຈັກຄຳ.

"ແມ່, ນີ້ແມ່ນທ່ານໝໍສີຣິ."

ຍິງຊະລາທີ່ມີທ່າທາງເຊື່ອງຊຶມຫັນໜ້າມາແນມເບິ່ງສີຣິຊ້າໆ ເຊິ່ງເຫັນໄດ້ຊັດເຈນວ່າ ນາງບໍ່ສາມາດຍ້າຍອອກຈາກບ່ອນນອນໄດ້.

"ຢູ່ດີມີແຮງເດີທ່ານໝໍ, ຂໍໂທດທີ່ຂ້ອຍລຸກບໍ່ໄດ້."

"ແມ່ເປັນໂລກຕັບແຂງ, ຂ້ອຍເຄີຍບອກທ່ານໝໍແລ້ວ."

"ແມ່ນ ເຄີຍບອກແລ້ວ, ຢູ່ດີມີແຮງເດີແມ່ວົງເຮືອນ." ເບິ່ງຄືວ່າເປັນເລື່ອງແປກທີ່ອວຍພອນໃຫ້ແມ່ຍິງທີ່ເຫັນວ່າກຳລັງປ່ວຍໃຫ້ມີສຸຂະພາບດີ ແຕ່ນັ້ນກໍຄືຄຳທັກທາຍປະຈຳຊາດ. ແມ່ຍິງຜູ້ນັ້ນປ່ວຍມາຫຼາຍປີຍ້ອນເປັນໂລກພະຍາດໃບໄມ້ໃນຕັບ ທີ່ນາງໄດ້ຮັບມາແຕ່ທາງພາກເໜືອ.

ຕຸ້ຍໃຊ້ມືໄປຄວ້າຈັບເອົາແຂນສີຣິ ແລ້ວພາເຂົາຍ່າງອອກໄປຂ້າງນອກ ໂດຍຜ່ານພວກເດັກນ້ອຍໄວກຳລັງຮຽນຍ່າງທີ່ເປືອຍກາຍທາງລຸ່ມພ້ອມແລ່ນຫຼິ້ນເຕາະແຕະທັງກິ້ງເກືອກລີເລືອໄປກັບຂີ້ຝຸ່ນ, ໝາໂຕໜຶ່ງຄາງຂຶ້ນເຮັດສຽງຂູ່ຕາມສັນຊາດຕະຍານເມື່ອເຫັນສີຣິຍ່າງຜ່ານໜ້າ. ຕຸ້ຍພາເຂົາຂຶ້ນໄປທາງກຳແພງຮົ້ວສະໜາມກິລາ ເພື່ອໝັ້ນໃຈວ່າພວກເພື່ອນບ້ານຈະບໍ່ໄດ້ຍິນໃນສິ່ງທີ່ທັງສອງສົນທະນາກັນ. ສີຣິກຳລັງຈະກ່າວຄຳຂໍໂທດ ແຕ່ຕຸ້ຍຕັດບົດຂຶ້ນກ່ອນ.

"ຂ້ອຍຂໍໂທດເດີທ່ານໝໍ. ມື້ຄືນນີ້ຂ້ອຍຢູ່ເຝົ້າແມ່ໝົດຄືນຈົນບໍ່ໄດ້ນອນ. ຂ້ອຍບໍ່ໄດ້ຕັ້ງໃຈເຮັດໃຫ້ມັນເປັນແບບນັ້ນ. ຂ້ອຍ ..."

"ຂ້ອຍພຽງແຕ່ຈະມາຖາມວ່າ ເຈົ້າຈະໃຫ້ກຽດເປັນແພດຝຶກຫັດຂອງຂ້ອຍຢູ່ໂຮງເກັບສົບຈະໄດ້ບໍ່."

"ໂອ ຢ່າເລີຍ! ທີ່ທ່ານໝໍເວົ້າແນວນັ້ນກໍຍ້ອນຂ້ອຍໄດ້ເຮັດແນວໂງ່ໆ ໄປແລ້ວ. ທ່ານໝໍບໍ່ຈຳເປັນຕ້ອງ ..."

"ຂ້ອຍເວົ້າແທ້ໃດ ... ຂ້ອຍຄິດກ່ຽວກັບເລື່ອງນີ້ ກ່ອນທີ່ຂ້ອຍຈະຂີ່ລົດຖີບຂອງເຈົ້າໄປຕຳກຳແພງຮົ້ວຫໍຄຳ."

"ທ່ານໝໍ ...?"

"ຂ້ອຍຄິດວ່າເຈົ້າຄວນຈະເອົາລົດໄປໃຫ້ຊ່າງກວາດເບກກ່ອນເທາະ."

"ຂ້ອຍບໍ່ເຄີຍຖີບລົດໄວເກີນໄປຈົນຕ້ອງຢຽບເບກບໍ່ທັນ. ທ່ານໝໍຂີ່ລົດຕຳກຳແພງແທ້ຫວາ ...?"

"ເລີ່ມແຕ່ທາດຫຼວງ ທາງມັນເປັນຄ້ອຍຕໍ່າລົງໄປ ແລະມັນກໍຈະບໍ່ເກີດຂຶ້ນດອກຖ້າຂ້ອຍກວາດເບິ່ງເບກລົດກ່ອນທີ່ຈະຂີ່ອອກໄປ. ຂ້ອຍພຸ່ງເຂົ້າໄປໃສ່ກັບໜ້າປະຕູອະນຸສາວະລີ ແລະຕອນທີ່ຂ້ອຍຂີ່ລົດຜ່ານຫ້ອງການໄປສະນີຂ້ອຍກໍເລັ່ງຄວາມໄວປະມານ ໑໘໐ ກິໂລແມັດຕໍ່ຊົ່ວໂມງພຸ້ນແຫຼະ ຈົນຮູ້ສຶກມຶນຊາເລັກໜ້ອຍ."

"ທ່ານໝໍ."

"ເອີາລະ ຂ້ອຍຂໍສາລະພາບແບບຕົງໆ ເລີຍວ່າ ຂ້ອຍບໍ່ໄດ້ຂີ່ລົດໄປຕຳກຳແພງຮົ້ວຫໍຄຳດອກ ແຕ່ນັ້ນຂ້ອຍກໍຢາກຈະຂອບໃຈຊາຍຂາຍຟອຍ ແລະແປງຖູຜູ້ໜ້າສົງສານຄົນໜຶ່ງທີ່ນັ່ງຢູ່ແຄມທາງ ຂ້ອຍເລີຍຢາກລອງເບິ່ງວ່າເຂົາອາດຈະນຸ້ມກວ່າກຳແພງພວກເຮົາສອງຄົນຜ່ານພົ້ນເຫດຮ້າຍມານຳກັນດ້ວຍດີພໍສົມຄວນ, ກະດູກທຸກສ່ວນຂອງຂ້ອຍບໍ່ໄດ້ແຕກຫັກຈັກບ່ອນ ສ່ວນຊາຍຄົນນັ້ນກໍຍັງໄດ້ຂາຍໄມ້ຟອຍຕັ້ງສາມກ້ານໃຫ້ໂຮງເກັບສົບ."

"ແລ້ວລົດຖີບເດລະ?"

"ຄົນຈີນບໍ່ໄດ້ເກັ່ງເລື່ອງການຜະລິດເກີບ ແຕ່ພວກເຂົາສາມາດປະກອບລົດຖີບໄດ້ເປັນຢ່າງດີ ແມ່ນແຕ່ປືນຄົກກໍຍັງຍິງທຳລາຍບໍ່ໄດ້. ສະນັ້ນເຈົ້າຈະເຫັນດີກັບຂໍ້ສະເໜີຂອງຂ້ອຍບໍ່?"

"ໃຫ້ຂ້ອຍຍອມຮັບຂໍ້ສະເໜີເລື່ອງຫຍັງ?"

"ເປັນເດັກຝຶກງານຂອງຂ້ອຍ."

"ເວົ້າໄດ້ຖືກໃຈເລີຍທ່ານໝໍ ຂ້ອຍຕົກລົງແທ້."

"ດີແຫຼະຊັ້ນ ແຕ່ກ່ອນຂ້ອຍຈະອອກໄປ ຂ້ອຍຢາກຈະໄປເບິ່ງແມ່ຂອງເຈົ້າອີກກ່ອນ."

"ເຈົ້າສົນໃຈແມ່ຂ້ອຍຫວາ?"

“ຂ້ອຍໝາຍເຖິງໂລກຕັບແຂງເດັກນ້ອຍເອີຍ, ໂລກຕັບແຂງຢ່າງດຽວເທົ່ານັ້ນ.”

**********

ວັນພຸດ, ສິຣິມາຮອດຫ້ອງການກ່ອນໝູ່ອີກຄັ້ງ. ກິ່ງຍິ່ງງຶງຕື່ມຂຶ້ນ ເມື່ອຍ່າງອອກໄປທີ່ເບື້ອງຫຼັງຂອງເຕົາເຜົາແລ້ວພົບກັບຫົວໜ້າຂອງເຂົາກຳລັງກົ້ມໆ ເງີຍໆ ເພື່ອເກັບແມງສາບທີ່ຕາຍແລ້ວຢູ່ຮາງນໍ້າຄອນກຣີດ ກ່ອນຈະຈັບພວກມັນເຂົ້າໃສ່ໄວ້ໃນຂວດ.

“ສະບາຍດີຕອນເຊົ້ານ້ອງກິ່ງ. ມື້ນີ້ມີລູກຄ້າມາໃໝ່ບໍ່?”

“ບໍ່ມີລູກຄ້າໃໝ່ດອກມື້ນີ້ ສະຫາຍທ່ານໝໍ.” ກິ່ງຫົວຂຶ້ນ ແຕ່ກໍຍັງຢືນຈ້ອງເບິ່ງສິຣິ. “ນັ້ນ ... ມັນເປື້ອນໃດ໋. ທ່ານໝໍຢ່າໄປຫຼິ້ນຢູ່ຫັ້ນ.”

“ນ້ອງກິ່ງ ເຈົ້າເວົ້າຖືກໃດ໋ຫັ້ນ. ບ່ອນນີ້ແມ່ນຈຸດທີ່ເຈົ້າເກັບກະເປົາໄດ້ ກ່ອນທີ່ພວກເຂົາຈະໂຍນມັນເຂົ້າໃສ່ເຕົາຫຼໍ່ ແມ່ນບໍ່?”

“ໂດຍແມ່ນແລ້ວ.”

“ແລ້ວຜູ້ດູແລອາຄານຄົງຈະບໍ່ໄດ້ຢູ່ແຖວນີ້ເນາະ. ເຈົ້າຮູ້ຫຼືບໍ່ວ່າມື້ວານນີ້ລາວເຜົາຂີ້ເຫຍື້ອຂອງພວກເຮົາໝົດແລ້ວ?”

“ລາວຄົງເຜົາ. ລາວຕ້ອງເຜົາແລ້ວແຫຼະ ເພາະມັນເປັນລະບຽບເດ. ລາວຈະຕ້ອງເຜົາທຳລາຍຂີ້ເຫຍື້ອຂອງໂຮງໝໍທັງໝົດທີ່ຂົນມາໄວ້ບ່ອນນີ້ໃຫ້ແລ້ວພາຍໃນສິບສອງຊົ່ວໂມງ. ລາວຕ້ອງເຜົາແລ້ວແຫຼະ.”

“ສິບສອງຊົ່ວໂມງຫວາ, ຊັ້ນຂີ້ເຫຍື້ອທີ່ພວກເຮົາເອົາມາຖິ້ມຫວ່າງຕອນແລງວັນຈັນ ມັນກໍຍັງກອງຄ້າງຄືນຢູ່ນີ້ຕິຊັ້ນ?”

“ແມ່ນ.”

“ດີໆ. ຫາແດ່ນ້ອງກິ່ງ ເອົາເພື່ອນຕົວນ້ອຍຂຸມນີ້ໄປມ້ຽນໄວ້ໃນຕູ້ເຢັນໃຫ້ແດ່ ອ້າຍຈະໄປອາບນໍ້າລ້າງຕົນໂຕໜ້ອຍໜຶ່ງ.”

“ຮາຮາ. ເພື່ອນຕົວນ້ອຍ.” ກິ່ງຫົວຂຶ້ນອີກ ພ້ອມຈັບເອົາຂວດແມງສາບແລ່ນເຂົ້າໄປຂ້າງໃນ.

ສິຣິອາບນໍ້າຜັດປ່ຽນເຄື່ອງນຸ່ງ ແລ້ວກໍອອກໄປຂ້າງນອກອີກໃນຊ່ວງປະມານສິບໂມງເຊົ້າໂດຍບໍ່ໄດ້ບອກໃຜວ່າເຂົາກຳລັງຈະໄປໃສ.

ເຂົາຍ່າງຂ້າມທາງທີ່ຢູ່ຕໍ່ໜ້າໂຮງໝໍ ພ້ອມໄປຮັບເອົາອາຫານທ່ຽງນຳປ້າຫຼ້າ. ຈາກຄຳເວົ້າຂອງຕຸ້ຍໃນມື້ວັນຈັນຜ່ານມາ, ລາວເລີຍລອງສັງເກດດ້ວຍຕົນເອງຈຶ່ງເຫັນພວງແກ້ມສີແດງອ່ອງຕ່ອງທີ່ປາກົດຢູ່ໃບໜ້າຂອງແມ່ຍິງຜູ້ນັ້ນ. ໃນວິນາທີນັ້ນເອງລາວຈຶ່ງເຊື່ອວ່າ ສິ່ງທີ່ຕຸ້ຍເວົ້ານັ້ນອາດຈະແມ່ນຄວາມຈິງ. ທັງສອງໂອ້ລົມສົນທະນາກັນຢ່າງ

ສຸພາບປະມານສອງສາມນາທີ ຈາກນັ້ນສິຣິກໍເວົ້າຂຶ້ນວ່າ "ຢູ່ດີມີແຮງເດີ" ແລ້ວຍ່າງອອກໄປ.

"ໂຮງໝໍຢູ່ທາງນັ້ນໃດອ້າຍສິຣິ," ນາງຮ້ອງເຕືອນເຂົາ.

"ຂ້ອຍກຳລັງອູ້ງານ ຢ່າບອກຜູ້ອຳນວຍການເດີ."

"ເຈົ້າຄວນຈະອູ້ງານກັບຂ້ອຍຈັກມື້ໜຶ່ງ."

ສິຣິຫົວຂຶ້ນ.

ປ້າຫຼ້າກໍຫົວຂຶ້ນເຊັ່ນກັນ.

ມັນຕ້ອງມີຫຍັງບາງຢ່າງແທ້ແຫຼະ.

**********

ສິຣິຍ່າງໄປຕາມແຄມແມ່ນໍ້າ ແລ້ວລ້ຽວຕົວເຂົ້າໄປຮ່ອມທາງດິນແດງຂະໜາດນ້ອຍແຫ່ງໜຶ່ງ. ສູນກາງສະຫະພັນແມ່ຍິງລາວຕັ້ງຢູ່ໃນອາຄານທີ່ເປັນຕຶກສອງຊັ້ນເຊິ່ງດ້ານໜ້າຂອງຕຶກຖືກຄຸມຄາມດ້ວຍພຸ່ມດອກໄມ້ຈົນໝາຕາ. ພວກເຂົາຄືງຈະຕົກແຕ່ງໃຫ້ມັນມີແນວໂນ້ມທີ່ເປັນທຳມະຊາດຫຼາຍກວ່າ ຈິ່ງວ່າພາກັນເອົາໃຈໃສ່ບົວລະບັດໃຫ້ມັນເປັນລະບຽບຈົບງາມ. ໜ້າປ້າຍຂອງສະຫະພັນແມ່ຍິງໄດ້ຮັບການທາສີໃໝ່ໆ ໝາດໆ ເຊິ່ງມີຮອຍສີຂາວໄຫຼຍ້ອຍເປັນທາງເລັກໜ້ອຍລົງມາຈາກຕົວໜັງສືໂຕໜຶ່ງ.

ເຂົາຍ່າງເຂົ້າໄປໃນຫ້ອງໂຖງອັນວຸ້ນວາຍ ເຊິ່ງເຕັມໄປດ້ວຍຜູ້ຄົນສວ່ານສິນໄປມາຄືກັບວ່າພວກເຂົາມີວຽກງານອັນເລັ່ງດ່ວນ ສ່ວນສິຣິຊໍ້າພັດບໍ່ມີສ່ວນກ່ຽວຂ້ອງຫຍັງເລີຍ. ເຂົາຮີບຍ່າງໄປຢືນລັດໜ້າແມ່ຍິງຄົນໜຶ່ງທີ່ກຳລັງຍ່າງແບບຟ້າວຟັ່ງກ່ອນຈະລັ່ນຄຳເວົ້າອອກມາເພື່ອຖາມບາງສິ່ງ.

"ເຈົ້າພໍຈະຮູ້ບໍວ່າ ຂ້ອຍຄວນຈະພົບທ່ານໝໍພອນສະຫວັນໄດ້ຢູ່ໃສ?"

ນາງສະແດງທ່າທີຕື່ນເຕັ້ນສັບສົນ ກ່ອນຈະຕອບວ່າ: "ໂອ! ລາວຄືງຈະຢູ່ແຖວໆນີ້ແຫຼະ. ທ່ານໄດ້ນັດພົບລາວກ່ອນລ່ວງໜ້າແລ້ວບໍ?"

"ບໍ່ເລີຍ, ຕ້ອງໄດ້ນັດກ່ອນບໍ?"

"ທ່ານຄວນຈະໂທຫາລາວ ອີກຢ່າງໜຶ່ງມື້ນີ້ກໍຂ້ອນຂ້າງຫຍຸ້ງ ເພາະພັນລະຍາຂອງທ່ານປະທານປະເທດມົງໂກເລຍກຳລັງເດີນທາງມາ."

ສິຣິຮູ້ສຶກຄືກັບວ່າຕົນເອງໄດ້ມາຢູ່ເຂດຕ່າງແດນແປກໆ ທີ່ທຸກສິ່ງຢ່າງເຕັມໄປດ້ວຍຄວາມຟັ່ງຟ້າວ, ມີວຽກຫຼາຍແນວໃຫ້ເຮັດ ລວມທັງເລື່ອງການນັດໝາຍ, ເລື່ອງໂທລະສັບ ທັງໝົດນັ້ນເຮັດໃຫ້ສິຣິຮູ້ສຶກວ່າຕົນເອງບໍ່ໄດ້ຢູ່ປະເທດລາວກໍປານນັ້ນ.

ວັດທະນະທຳລາວທີ່ເຂົາເຄີຍຮູ້ຈັກ ແມ່ນບໍ່ມີການນັດໝາຍ ເຊິ່ງສາມາດໄປ-ມາຫາກັນໄດ້ທຸກເມື່ອ, ເຈົ້າສາມາດຖາມໃຜກໍໄດ້ວ່າບຸກຄົນທີ່ເຈົ້າຕ້ອງການພົບຢູ່ ຫຼືບໍ່ ... ຖ້າຢູ່, ເຈົ້າອາດຈະນັ່ງລໍຖ້າປະມານໜຶ່ງຊົ່ວໂມງ, ແຕ່ຖ້າບໍ່ຢູ່ ເຈົ້າກໍກັບບ້ານກ່ອນແລ້ວມາໃໝ່ໃນມື້ໜ້າ.

ແລ້ວພວກເຂົາ ... ພວກແມ່ຍິງປະຈຳສະຫະພັນແມ່ຍິງທີ່ມີແນວຄິດແປກປະຫຼາດເຫຼົ່ານີ້ແມ່ນໃຜ? ເປັນຫຍັງຈິ່ງວ່າພາກັນຕື່ນເຕັ້ນເປັນພິເສດກ່ຽວກັບພັນລະຍາຂອງທ່ານປະທານປະເທດມົງໂກເລຍ?

ພາຍຫຼັງປະຈັນໜ້າກັບແມ່ຍິງທີ່ຢູ່ໃນຄວາມໂກລາຫົນສອງຄົນ ໃນທີ່ສຸດສີຣິກໍພົບທ່ານໝໍພອນສະຫວັນຢູ່ໃນໂຮງອາຫານ ທີ່ກຳລັງທຳການຕົກແຕ່ງຫ້ອງດ້ວຍງານສີມືຫັດຖະກຳທີ່ເຮັດຈາກທໍ່ດູດຢາງ. ຢູ່ດ້ານຫຼັງຂອງຫ້ອງອາຫານມີປ້າຍຂະໜາດໃຫຍ່ຕິດຢູ່ **ຍິນດີຕ້ອນຮັບສະຫາຍຂອງພວກເຮົາຈາກມົງໂກເລຍ** ໂດຍຂຽນເປັນພາສາລາວ ແລະພາສາຝຣັ່ງ ແຕ່ພັນລະຍາທ່ານປະທານປະເທດມົງໂກເລຍຄົງຈະອ່ານບໍ່ອອກທັງສອງພາສາ.

ພອນສະຫວັນມີທ່າທີແບບບໍ່ຟ້າວບໍ່ຟັ່ງ ທັງມັກໃຫ້ຄວາມຊ່ວຍເຫຼືອແກ່ຜູ້ອື່ນຫຼາຍກວ່າບັນດາເອື້ອຍນ້ອງແມ່ຍິງໃນຫ້ອງການ. ນາງເຄີຍໄດ້ຍິນກ່ຽວກັບຊື່ສຽງຮຽງນາມຂອງທ່ານໝໍສີຣິມາກ່ອນ ແລະມີຄວາມເຄົາລົບນັບຖືໃນສາຂາອາຊີບທີ່ບໍ່ອາດປະຕິເສດໄດ້ສຳລັບເຂົາ. ແຕ່ໃນລະຫວ່າງການສົນທະນາກັນຢູ່ນັ້ນ ນາງຍັງຄຸມໃຫ້ສີຣິຮ້ອຍເສັ້ນຝ້າຍໃສ່ກັບທໍ່ດູດສີຟ້າແລະສີແດງ. ນາງເປັນແມ່ຍິງທີ່ມີຮູບຮ່າງຜອມພຽວໃນຊ່ວງໄວສາມສິບ ແລະນາງກໍບໍ່ມີຄິ້ວຈັກເສັ້ນ. ນາງເຄີຍບວດເປັນແມ່ຊີໃນເວລາອັນສັ້ນ ເຊິ່ງພວກເຂົາໄດ້ແຖຄິ້ວຂອງນາງອອກໝົດ ແລ້ວມັນກໍບໍ່ຍອມກັບມາປົ່ງຄືນອີກເລີຍ ແຕ່ນາງກໍບໍ່ໄດ້ສົນໃຈໃຍດີກັບມັນພໍເທົ່າໃດ ທັງບໍ່ສົນໃຈທີ່ຈະສັກ ຫຼືແຕ່ງແຕ້ມໃຫ້ມັນສວຍງາມ ເຮັດໃຫ້ໃບໜ້າຂອງນາງເບິ່ງຄືວ່າແປນເອີດເຕີດ.

"ທ່ານໝໍມາຍ້ອນເລື່ອງທ່ານນາງບິດນ້ອຍຫັ້ນຕິ."

"ແມ່ນ, ເຈົ້າກິນເຂົ້າຮ່ວມກັບນາງຕອນນາງເສຍຊີວິດບໍ?"

"ຢູ່ກົງກັນຂ້າມກັບນາງເລີຍ."

"ແລ້ວນາງກິນອາຫານຊະນິດດຽວກັບທຸກຄົນບໍ່?"

"ອາ! ອັນນີ້ກໍໜ້າສົນໃຈຢູ່ໃດ໋ເນາະ."

"ແມ່ນຫຍັງລະ?"

ທ່ານໝໍໄດ້ທຳການຊັນນະສູດສົບຂອງນາງແລ້ວ ແລະທ່ານຍັງຄິດວ່ານາງຖືກວາງຢາພິດ."

ແກ້ມທັງສອງຂ້າງຂອງສີຣີເລີ່ມແດງຂຶ້ນຫຼາຍກວ່າປົກກະຕິເລັກໜ້ອຍ.

"ຂ້ອຍຍັງບໍ່ຮູ້ເລື່ອງຫຍັງເລີຍ."

"ແມ່ນໃດເນາະ ຂໍໂທດເດີທ່ານໝໍ." ນາງກົ້ມໜ້າໃສ່ເຊືອກຟາງທີ່ຢູ່ໃນມືພ້ອມຍິ້ມແບບອາຍໆ. "ນາງກໍກິນອາຫານຊະນິດດຽວກັບພວກເຮົາທຸກຄົນ ອີກຢ່າງຂ້ອຍກໍລົງມືກິນກ່ອນທີ່ນາງຈະມາຮອດຫ້ອງອາຫານອີກຊ້ຳ. ນາງຈໍ້າເຂົ້າໜຽວກັບແຈ່ວນ້ຳປາໃສ່ປາກໄດ້ສອງສາມຄຳ ກ່ອນທີ່ນາງຈະທັນໄດ້ກືນລົງທ້ອງ ແຕ່ແລ້ວຕາຂອງນາງກໍທັງເຫຼືອກທັງປີ້ນ, ນາງຄາຍຄຳເຂົ້າອອກຈາກປາກ ທັງນ້ຳລາຍກໍໄຫຼເລັກໜ້ອຍ ແລະແລ້ວກໍລົ້ມຟຸບລົງຄາໂຕະອາຫານ ...

"ຂ້ອຍພະຍາຍາມຊ່ວຍຍື້ຊີວິດນາງໄວ້ ແຕ່ກໍເຊື່ອວ່ານາງເສຍຊີວິດແບບກະທັນຫັນໂພດ. ນາງບໍ່ໄດ້ແຄ້ນເຂົ້າ ຫຼືມີໃບໜ້າກ່ຳຂຽວ ແຕ່ນາງກໍຕາຍແບບບໍ່ມີອາການຫຍັງ. ຂ້ອຍພະຍາຍາມປ້ຳຫົວໃຈໃຫ້ນາງ ທັງເປົ່າປາກໃຫ້ແຕ່ກໍຮູ້ສຶກວ່າຄວາມຫວັງທີ່ນາງຈະລອດນັ້ນເຫຼືອໜ້ອຍເຕັມທີ."

"ເຈົ້າຮູ້ເລື່ອງພວກແມ່ທ້ອງປາກຂໍບໍ?"

"ຮູ້. ຕະຫຼອດຫຼາຍປີຜ່ານມາ ຄົນເຈັບຂອງຂ້ອຍຫຼາຍຄົນກໍເສຍຊີວິດຍ້ອນແມ່ທ້ອງພວກນີ້. ແຕ່ກໍບໍ່ແມ່ນພວກມັນທີ່ເຮັດໃຫ້ທ່ານນາງນິດນ້ອຍຕາຍ."

"ເປັນຫຍັງຈິ່ງວ່າແນວນັ້ນ?"

"ມັນເປັນການຕາຍທີ່ເຈັບປວດທໍລະມານ ເຊິ່ງກໍເກີດຂຶ້ນແບບກະທັນຫັນ ໂດຍສະເພາະໃນຊ່ວງສອງສາມນາທີສຸດທ້າຍ ມັນເປັນຊ່ວງທີ່ນາງເຈັບປວດທໍລະມານຫຼາຍ. ສະພາບຮ່າງກາຍຂອງທ່ານນາງນິດນ້ອຍປົກກະຕິທຸກຢ່າງ ຈົນມາຮອດຊ່ວງບໍ່ພໍເທົ່າໃດວິນາທີກ່ອນທີ່ນາງຈະເສຍຊີວິດ."

"ຖືກຕ້ອງແລ້ວ, ເຈົ້າໜ້າຈະສັງເກດເຫັນລາຍລະອຽດອື່ນໆ ອີກຫຼາຍຢ່າງ."

"ຂ້ອຍເຄີຍລົມກັບນາງຕະຫຼອດຕອນກິນເຂົ້ານຳກັນ."

"ເຈົ້າຮູ້ຫຼືບໍ່ວ່ານາງເຄີຍມີອາການເຈັບຫົວມາກ່ອນ?"

"ແນ່ນອນ! ແປກແທ້ທີ່ທ່ານຖາມເລື່ອງນີ້ ທີ່ພວກເຮົາລົມກັນກໍເລື່ອງນີ້ແຫຼະ ນາງເຄີຍມີອາການເມົາຄ້າງແບບຮຸນແຮງ ທ່ານນາງນິດນ້ອຍມັກດື່ມເບຍຢູ່ແລ້ວ ແລະຄືນກ່ອນກໍມີງານລ້ຽງ ແລະລາວກໍດື່ມເບຍຫຼາຍເປັນພິເສດ ພໍແຕ່ຕື່ນນອນມາກໍເຈັບຫົວຄືມັນຊິລະເບີດ. ຖ້າບໍ່ແມ່ນຍ້ອນມີການກະກຽມງານສຳລັບມື້ນີ້ ນາງຄົງລາພັກແລ້ວແຫຼະ."

"ນາງໄດ້ກິນຢາແກ້ປວດຫຍັງໃສ່ ຫຼືບໍ່?"

"ນາງມີຢາແກ້ປວດຕິດຕົວໜຶ່ງຂວດ."

"ນາງມີໂຕະເຮັດວຽກສ່ວນຕົວຢູ່ນີ້ ຫຼືບໍ່?"

"ນາງມີຫ້ອງເຮັດວຽກສ່ວນຕົວ ແຕ່ຢາແກ້ປວດບໍ່ຢູ່ຫັ້ນດອກເພາະນາງເອົາໄວ້ໃນກະເປົາຖື."

"ແຕ່ຄືວ່າບໍ່ເຫັນກະເປົາຖືຕິດຕົວໄປກັບນາງຕອນຢູ່ຫ້ອງເກັບສິບ."

ຜູ້ດູແລຄົນໜຶ່ງຄ່ອຍໆ ຄົ້ນຫາທົ່ວຫ້ອງ ແຕ່ແລ້ວກໍຮ້ອງສົ່ງແບບຮີບດ່ວນ.

"ບໍ່ໄດ້ສິ່ງໄປ ມັນຢູ່ບ່ອນນີ້ແຫຼະ ແຕ່ມີນາຍທະຫານທ່າທາງຂຶງຂັງຄົນ

ໜຶ່ງໃສ່ແວ່ນຕາດຳມາຮັບເອົາກະເປົາໃນຊ່ວງຕອນບ່າຍມື້ນັ້ນ."

ສີຣິເຮັດຄິ້ວສິນຂຶ້ນ ສ່ວນທ່ານໝໍພອນສະຫວັນກໍສະແດງກິລິຍາໂຕ້ຕອບໄປຕາມໆກັນແຕ່ຢູ່ໃນລະດັບຕ່ຳເລັກໜ້ອຍ. "ນາຍທະຫານຄົນນັ້ນບອກວ່າມີເອກະສານລັບສະບັບໜຶ່ງຢູ່ໃນກະເປົາຂອງນາງ ແລະເຂົາກໍໄດ້ຮັບຄຳສັ່ງໃຫ້ມາເອົາມັນ."

"ໃຜສັ່ງ?"

"ຜູ້ບັງຄັບບັນຊາຂອງເຂົາ ແຕ່ຂ້ອຍບໍ່ຮູ້ຊື່ເລີຍ."

"ແລ້ວເຂົາເອົາຫຍັງໄປນຳແດ່? ຂອງທີ່ຢູ່ໃນໂຕະທ່ານນາງນິດນ້ອຍ?"

"ບໍ່ໄດ້ເອົາຫຍັງ ເອົາແຕ່ກະເປົາໜ່ວຍນັ້ນ."

"ເຈົ້າຍັງບໍ່ມີໂອກາດໄດ້ສຳຫຼວດເບິ່ງເຄື່ອງໃນກະເປົາໜ່ວຍນັ້ນແມ່ນບໍ?"

"ທ່ານໝໍສີຣິ, ທ່ານຄິດວ່າຂ້ອຍເປັນແມ່ຍິງແບບໃດທີ່ຕ້ອງເຮັດແນວນັ້ນ?" ນາງປີນຂຶ້ນໄປເທິງຕັ່ງ ເພື່ອແຂວນສາຍປະດັບອີກໜຶ່ງອັນ. ສະພາບຂອງເວທີເບິ່ງຄືກັບເຕັ້ນໃຫຍ່ທີ່ຖືກຕັດແຫກດ້ວຍລົມມໍລະສຸມ. "ຜູ້ຊ່ຽວຊານດ້ານການອອກແບບຂອງພວກເຮົາຕ້ອງພໍໃຈກັບຄວາມງາມຂອງມັນແນ່ນອນ. ທ່ານໝໍຄິດວ່າເປັນແນວໃດ?"

"ຂ້ອຍຄິດວ່າມັນສະແດງເຖິງຄວາມຄິດລິເລີ່ມທີ່ບໍ່ສ້າງສັນຫຼາຍກວ່າ."

ນາງຫົວຂຶ້ນ.

"ຄັນຊັ້ນຕຳແໜ່ງທີ່ທ່ານໝໍເປັນຢູ່ທຸກວັນນີ້ ອາດຈະໄດ້ມາຍ້ອນຄວາມມີໄຫວພິບຂອງທ່ານໝໍຕີເນາະ."

"ຂ້ອຍຢ້ານວ່າແມ່ນແນວນັ້ນແຫຼະ."

"ບໍ່ຕ້ອງຢ້ານວ່າດອກທ່ານໝໍ. ພວກເຮົາຕ້ອງກ້າພໍທີ່ຈະບອກເລົ່າຄວາມຮູ້ສຶກອອກມາແບບຕົງໆ ແຕ່ຄວາມຈິງແລ້ວຄົນແບບນີ້ຫາຍາກຫຼາຍ." ເວົ້າສຸດນາງກໍກ້າວຂາລົງມາຈາກຕັ່ງກ່ອນຈະເວົ້າຕໍ່. "ມີເກີບແຕະນຳໃດ."

"ເວົ້າຫຍັງເກາະ?"

"ເວລາໄປມາທາງໃດທ່ານນາງນິດນ້ອຍມັກເອົາເກີບແຕະໄວ້ໃນກະເປົາ. ການຈັດຕັ້ງໄດ້ສັ່ງການໃຫ້ລາວໃສ່ເກີບຢາງຫຸ້ມສົ້ນສີດຳໃນເວລາອອກງານສາທາລະນະ ແຕ່ລາວກໍຊັງເກີບພວກນັ້ນສຸດໆ ເພາະມັນເຮັດໃຫ້ຕີນຂອງລາວເຈັບ ແລະມີບາດແຜ ພໍແຕ່ມີ

ໂອກາດລາວກໍຈົກເອົາເກີບແຕະນຸ້ມໆ ອອກຈາກກະເປົາມາໃສ່ໂລດ." ສີຣິຍິ້ມ. "ທ່ານຍິ້ມເຮັດຫຍັງ?"

"ບໍ່ມີຫຍັງດອກ. ນອກຈາກເກີບແຕະແລ້ວຍັງມີຫຍັງອີກຢູ່ໃນກະເປົາໜ່ວຍນັ້ນ?"

"ຕອນນີ້ທ່ານຄິດວ່າຂ້ອຍເປັນຄົນສອດຮູ້ສອດເຫັນວ່າຊັ້ນຕິ."

"ການສອດຮູ້ສອດເຫັນເປັນເລື່ອງທີ່ດີສຳລັບລະບອບການປົກຄອງ."

"ແມ່ນຊັ້ນເບາະ? ກໍໄດ້ຊັ້ນ. ນອກຈາກເກີບແຕະກໍມີສິ່ງເລັກໆ ໜ້ອຍໆ ສ່ວນໃຫຍ່ກໍແມ່ນປຶ້ມບັນທຶກ, ພວກລູກກະແຈ, ຢາດົມ, ຢາມ່ອງ, ນາມບັດ. ຄົງຈະໝົດເທົ່ານັ້ນແຫຼະ."

"ເຈົ້າບໍ່ໄດ້ອ່ານເບິ່ງພວກນາມບັດບໍ?"

"ທ່ານໝໍສີຣິ!"

"ຂໍໂທດ. ບໍ່ມີພວກເຄື່ອງສຳອາງ, ລິບສະຕິກອື່ນໆ ບໍ?"

"ຍັງບໍ່ເປັນທີ່ນິຍົມປານໃດ ແລະຕອນນີ້ກໍຂ້ອນຂ້າງແພງ."

"ສະນັ້ນ ນອກຈາກພວກປຶ້ມບັນທຶກທີ່ມີຢູ່ແລ້ວ ກໍບໍ່ເຫັນວ່າຈະມີ 'ເອກະສານສຳຄັນ' ຫຍັງເລີຍຕິຊັ້ນ?"

"ບໍ່ມີ."

"ແລ້ວນາຍທະຫານຜູ້ຂຶງຂັງຄົນນັ້ນໄດ້ເອົາທຸກຢ່າງໄປໝົດ."

"... ໂດຍ". ມັນບໍ່ແມ່ນຄຳຕອບຮັບເພື່ອສະແດງການຢືນຢັນທີ່ພົ້ນອອກມາຈາກປາກແບບອັດຕະໂນມັດ "ແມ່ນແລ້ວ".

"ທ່ານໝໍພອນສະຫວັນວ່າແນວໃດ?"

"ເອົາໄປເກືອບໝົດນັ້ນແຫຼະ."

"ນອກເໜືອຈາກ ...?"

"ເອົາລະ, ເຫດຜົນທີ່ຂ້ອຍຮູ້ວ່າໃນກະເປົາຂອງທ່ານນາງນິດນ້ອຍມີຫຍັງແດ່ນັ້ນກໍເພາະຂ້ອຍຕັ້ງໃຈເພື່ອຈະຂໍຢາແກ້ປວດນຳລາວໜ້ອຍໜຶ່ງ. ມີເອື້ອຍນ້ອງແມ່ຍິງຄົນໜຶ່ງ ສອງຄົນພາກັນຕົກໃຈຕະພຶດຕະພືກັບເຫດການທີ່ເກີດຂຶ້ນຕໍ່ທ່ານນາງນິດນ້ອຍ."

"ແລ້ວເຈົ້າກໍບໍ່ໄດ້ເອົາມັນເຂົ້າໄວ້ໃນກະເປົາຄືນຊັ້ນບໍ."

"ຢານັ້ນບໍ່ແມ່ນຈະຊອກຫາກັນໄດ້ງ່າຍໆ ແລະຕອນນັ້ນທຸກຢ່າງກໍຢູ່ໃນຄວາມສັບສົນ ..."

"ແຕ່ພວກເອື້ອຍນ້ອງແມ່ຍິງທີ່ເຈົ້າເອົາຢາໃຫ້ກິນນັ້ນ ກໍບໍ່ໄດ້ໜ້າຂວ້າມລົງໂຕະກະທັນຫັນ, ສະນັ້ນ ..."

"ສະນັ້ນ, ພວກເຮົາກໍອາດຈະຕັດຖິ້ມຄະດີທີ່ວ່າຢາແກ້ປວດຂຸມນັ້ນເປັນສາເຫດຂອງການເສຍຊີວິດ."

"ຖ້າເຈົ້າບໍ່ວ່າຫຍັງ ຂ້ອຍຢາກຈະໄດ້ຢາສ່ວນທີ່ເຫຼືອທັງໝົດ. ອາດມີຕົວຢາຊະນິດໃດໜຶ່ງທີ່ກໍ່ໃຫ້ເກີດອາການຂ້າງຄຽງ ເຖິງແມ່ນຂ້ອຍຈະບໍ່ມີເຄື່ອງມືທົດສອບວ່າພວກມັນເປັນຢາປະເພດໃດກໍຊ່າງ."

"ຊັ້ນຂ້ອຍຈະອອກໄປຊອກເບິ່ງກ່ອນ. ແຕ່ຂ້ອຍຂໍຖາມທ່ານໄດ້ບໍ ຍ້ອນຫຍັງທ່ານຈິ່ງຄິດວ່າລາວອາດມີອາການເຈັບຫົວນຳ?"

"ໃນລະຫວ່າງທຳການຜ່າຕັດຊັນນະສູດສົບ ຂ້ອຍໄດ້ກິ່ນຢາມ່ອງກາເສືອ. ມັນເປັນກິ່ນແຮງພິລຶກແຖວໆ ຮອບຂະມັບຂອງນາງ. ເຊິ່ງມັກຈະເປັນອາການເຈັບຫົວ."

"ຄັກຫຼາຍ, ທ່ານຮູ້ບໍວ່າເລື່ອງນີ້ມັນໜ້າຕື່ນເຕັ້ນອີ່ຫຼີ. ທ່ານຊ່ວຍເອົາເສັ້ນສຸດທ້າຍນີ້ຫ້ອຍໄວ້ເທິງເວທີໄດ້ບໍ? ເສຍດາຍແຕ່ພວກເຮົາບໍ່ມີປູມເປົ້າ." ເວົ້າສຸດນາງກໍແລ່ນອອກໄປ ພ້ອມປ່ອຍໃຫ້ສີຣິແຂວນເສັ້ນປະດັບຢູ່ຄົນດຽວ.

ໃນຂະນະທີ່ສີຣິຢືນງອຍຢູ່ເທິງຕັ່ງອີ້ທີ່ຍັງໂຍກເຍກ ເພື່ອແຂວນທໍ່ດູດໃສ່ກັບເຫຼັກຕະປູ ທີ່ອຳນວຍຄວາມສະດວກໃນການຕິດເກາະຢູ່ນັ້ນ ຄຳວ່າ ມັນຂ້ອນຂ້າງໜ້າຕື່ນເຕັ້ນທີ່ທ່ານໝໍພອນສະຫວັນເວົ້າອອກມາ ກໍໄດ້ປາກົດຂຶ້ນໃນຫົວຂອງລາວ. ແມ່ນແທ້, ເຂົາຍອມຮັບໄດ້ເລີຍວ່າ ຕົນເອງກຳລັງມ່ວນໄປກັບເລື່ອງລາວທີ່ຂ້ອນຂ້າງລຶກລັບ ແລະມີເງື່ອນງຳຊຸມນີ້ແລ້ວ. ສີຣິດີໃຈທີ່ໄດ້ກ້າວອອກມາຈາກຫ້ອງເກັບສົບ ເພື່ອມາພົບປະໂອ້ລົມກັບຜູ້ຄົນ ກ່ຽວກັບປະເດັນທີ່ຢູ່ນອກເໜືອອຳນາດໃນໜ້າທີ່ທີ່ມີຂີດຈຳກັດຂອງຕົນ. ມັນເປັນຄັ້ງທຳອິດນັບແຕ່ມື້ທີ່ເຂົາເຂົ້າມາຮັບໜ້າທີ່ໝໍຊັນນະສູດສົບທີ່ເຂົາຮູ້ສຶກໄດ້ວ່າຮໍໂມນອະດຣີນາລິນຂອງຕົນສູບສີດຂຶ້ນ.

"ຂ້ອຍຢ້ານວ່າຄົງຈະເຫຼືອພຽງແຕ່ສາມເມັດເທົ່ານັ້ນແຫຼະ." ທ່ານໝໍພອນສະຫວັນທັງເວົ້າທັງທັ່ງລົມຫັນໃຈບາດຖີ່ໆ ພ້ອມຍື່ນຂວດບັນຈຸສີນ້ຳຕານນ້ອຍໆ ມາທາງສີຣິ. "ບໍ່ຄວນໃຊ້ຕັ່ງອີ້ໜ່ວຍນັ້ນເລີຍ ເພາະຂາມັນບໍ່ແໜ້ນປານໃດ." ສີຣິຟ້າວໂດດລົງຈາກຕັ່ງໜ່ວຍນັ້ນໂດຍໄວ ປ່ອຍໃຫ້ສາຍຮ້ອຍທໍ່ພາກັນຫ້ອຍຕ່ອງແຕ່ງບໍ່ເປັນລະບຽບຢູ່ເທິງແທ່ນປາໄສ. ແຕ່ກໍຊ້າເກີນໄປທີ່ຈະມາແກ້ໄຂໄດ້ທັນອີກ.

**********

ບັນຍາກາດພາຍໃນສູນກາງສະຫະພັນແມ່ຍິງລາວໄດ້ເລີ່ມໂກລາຫົນວຸ້ນວາຍຂຶ້ນ. ສີຣິກັບພອນສະຫວັນແນມໄປທີ່ປະຕູ ກໍເຫັນທະຫານທີ່ສວມເຄື່ອງແບບເຕັມຍົດກຸ່ມໜຶ່ງຍ່າງເຂົ້າມາໃນຫ້ອງອາຫານທີ່ຍັງບໍ່ທັນຈັດແຈງໃຫ້ແລ້ວຮຽບຮ້ອຍເທື່ອ ທະຫານກຸ່ມ

ນັ້ນຢ່າງລຽນແຖວກັນເຂົ້າໄປປະຈຳທີ່ຕາມແຄມຝາຫ້ອງ.

"ໂອະ! ສິງໄສແຂກຈະມາຮອດໄວເປັນພິເສດມື້ນີ້. ທ່ານໝໍຕ້ອງຢູ່ກິນເຂົ້າທ່ຽງນຳກັນເດີ."

"ໄດ້ລະ ຂ້ອຍຈະອອກໄປແລ້ວ. ເປັນຫຍັງທຸກຄົນຄືຈັ່ງຕື່ນເຕັ້ນໃນເລື່ອງພັນລະຍາຂອງປະທານປະເທດມົງໂກເລຍເອົາແທ້ເອົາວ່າ?"

"ພວກເພິ່ນຈະມອບເງິນຊ່ວຍເຫຼືອຫຼາຍພໍສົມຄວນໃຫ້ແກ່ສູນກາງສະຫະພັນແມ່ຍິງລາວ ເພື່ອພັດທະນາການສຶກສາສຳລັບເດັກຍິງໃນເຂດຊົນນະບົດເດລະ."

ສິຣິຍັງສົງໄສວ່າ ປະຊາຊົນຊາວມົງໂກເລຍຈະໄດ້ຮັບປະໂຫຍດຫຍັງເປັນການຕອບແທນ ແຕ່ເຂົາບໍ່ຍອມສະແດງຄວາມເຫັນທີ່ເປັນການດູໝິ່ນຂອງຕົນອອກມາ. ເຂົາກ່າວຄຳຂອບໃຈນຳທ່ານໝໍພອນສະຫວັນ ແລ້ວຍ່າງໄປທາງປະຕູບານໜຶ່ງເຊິ່ງເປັນທັງທາງເຂົ້າແລະອອກຂອງຫ້ອງອາຫານ. ໃນທ່າມກາງຄວາມສັບສົນວຸ້ນວາຍຢູ່ບໍລິເວນຊ່ອງປະຕູດັ່ງກ່າວ ສິຣິໄດ້ປະເຊີນໜ້າກັບແມ່ຍິງຮ່າງນ້ອຍຄົນໜຶ່ງ ເຊິ່ງອົງປະກອບທັງໝົດມາລວມກັນທີ່ກາງໃບໜ້າຂອງນາງ. ແມ່ຍິງຄົນນັ້ນຖືກອ້ອມຮອບໄປດ້ວຍຜູ້ຄົນທີ່ມີຮ່າງກາຍສູງໃຫຍ່ກວ່ານາງ ທັງໃນຊຸດສາກົນ ແລະຜ້າໄໝ. ເນື່ອງຈາກສິຣິເປັນເພດຊາຍ, ແມ່ຍິງຮ່າງນ້ອຍຄົນນັ້ນຈິ່ງຄິດວ່າລາວແມ່ນຄົນສຳຄັນ ຈິ່ງຍື່ນມືເບື້ອງໜຶ່ງມາທາງເຂົາເພື່ອເປັນການທັກທາຍ.

ສິຣິປ່ຽນເຂົ້າຈີ່ຝຣັ່ງໄປທີ່ມືຂ້າງຊ້າຍ ກ່ອນຈະຍື່ນມືເບື້ອງຂວາອອກໄປທາງແມ່ຍິງທີ່ຢູ່ຕໍ່ໜ້າ. ມືຂອງນາງໜັກພໍສົມຄວນໃນຖານະພັນລະຍາຂອງທ່ານປະທານປະເທດ ນາງຫັນໜ້າໄປທາງລ່າມແປພາສາທີ່ຢູ່ໃກ້ໆ ພ້ອມຖາມບາງຢ່າງ. ແລ້ວລ່າມຜູ້ນັ້ນກໍຫັນໄປຖາມຄຳຖາມດຽວກັນກັບລ່າມພາສາຈີນທີ່ຢູ່ໃກ້ຕົວ ກ່ອນທີ່ລ່າມພາສາຈີນຈະສົ່ງຕໍ່ຄຳຖາມໄປທາງລ່າມພາສາລາວ/ຈີນ ເຊິ່ງໃນທີ່ສຸດກໍໄດ້ຖາມສິຣິວ່າ ລາວແມ່ນໃຜ.

"ຂ້າພະເຈົ້າແມ່ນເຈົ້າໜ້າທີ່ທົດສອບອາຫານ. ຕ້ອງກັນກ່ອນແກ້." ເວົ້າສຸດເຂົາກໍກົ້ມຫົວລົງຢ່າງສຸພາບເພື່ອສະແດງເຖິງຄວາມເຄົາລົບ ກ່ອນຈະຍ່າງຕໍ່ໄປ. ກວ່າຄຳຕອບຂອງສິຣິຈະຖືກແປເປັນພາສາຈີນ ກ່ອນສົ່ງຕໍ່ໃຫ້ລ່າມແປພາສາມົງໂກເລຍກວ່າຈະຊອດເຂົ້າຫູພັນລະຍາຂອງທ່ານປະທານປະເທດ ກໍພໍດີສິຣິຍ່າງອອກໄປຮອດກາງແດດທີ່ກຳລັງແຜ່ແສງອັນຮ້ອນເອົ້າໃນຕອນກາງເວັນແລ້ວຮຽບຮ້ອຍ.

3

# ພິທີສົ່ງດວງວິນຍານຄົນຂັບເຮືອ

ເນື່ອງຈາກຂອນໄມ້ທີ່ເຄີຍນັ່ງເປັນປະຈຳນັ້ນຕັ້ງຢູ່ຂ້ອນຂ້າງໄກຈາກແຄມຝັ່ງແມ່ນ້ຳພໍສົມຄວນບວກກັບອ່າວທິວແດ່, ສີຣິຈິ່ງຍ່າງລົງໄປຫາຮົ່ມໄມ້ໃນເຂດທີ່ໃກ້ສຸດຂອງຝັ່ງນ້ຳຂອງເຊິ່ງຖືເປັນຈຸດໜຶ່ງທີ່ລາວສາມາດນັ່ງກິນເຂົ້າຈີ່ຝຣັ່ງໄດ້ແບບສຳລານໃຈທ່າມກາງບັນຍາກາດອັນງຽບສະຫງົບ ໄດ້ຍິນແຕ່ສຽງສາຍລົມໂຊຍພັດມາເປັນຮູດບາດຄ່ອຍບາດແຮງ. ຄາບເຂົ້າທ່ຽງມື້ນັ້ນປາກົດວ່າມັນແຊບນົວເປັນພິເສດ. ເຂົາຮູ້ສຶກແປກໆແບບທີ່ບໍ່ເຄີຍເປັນມາກ່ອນ ແມ່ນແຕ່ລັກສະນະທ່າທາງຂອງເຂົາກໍອາດຈະມີອັນປ່ຽນໄປເຊັ່ນກັນ. ເຂົາຍັງຈິນຕະນາການວ່າຕົນເອງຢູ່ໃນຊ່ວງຂອງການປອມຕົວພໍປານນັ້ນ.

ເມື່ອຫຼາຍສິບປີກ່ອນເຊິ່ງເປັນຊ່ວງທີ່ອາໄສຢູ່ປາຣີ, ສີຣິມີຄວາມສຸກກັບການຈັດອັນດັບບົດຄວາມປະຈຳລາຍສັບປະດາຂອງເມັຊີອໍຊິມ ໃນໜັງສືພິມ *L'Oeuvre*. ເຊິ່ງໄດ້ເວົ້າເຖິງເລື່ອງລາວການສືບສວນສອບສວນຂອງຜູ້ກວດກາກອງກຳລັງເຈົ້າໜ້າທີ່ຕຳຫຼວດລາຍໜຶ່ງໃນປາຣີ ຜູ້ເຊິ່ງສາມາດໄຂປິດສະໜາທີ່ຊັບຊ້ອນທີ່ສຸດໄດ້ໂດຍບໍ່ຈຳເປັນຕ້ອງເພິ່ງພາອາວຸດອັນຮ້າຍແຮງຊະນິດໃດນອກຈາກທໍ່ກອກສູບຢາພຽງອັນດຽວ.

ພໍເຖິງຊ່ວງທີ່ສີຣິຍ້າຍໄປຢູ່ຫວຽດນາມ, ເຂົາຍິ່ງຮູ້ສຶກປິ້ມປິຕິຍິນດີທີ່ໄດ້ຮູ້ວ່າ 'ເມັຊີອໍຊິມ' ໄດ້ກັບຄືນມາໃຊ້ຊື່ເດີມຂອງຕົນເປັນ 'ຊິເມນອນ' ສ່ວນເລື່ອງລາວການໄຂປິດສະໜາຂອງສາລະວັດຕຳຫຼວດເມເກຣດໃນຕອນນີ້ ປາກົດວ່າໄດ້ຮັບການຕີພິມເປັນໜັງສືຈຳນວນຫຼາຍເຫຼັ້ມຮຽບຮ້ອຍແລ້ວ. ຄົນຝຣັ່ງທີ່ອາໄສຢູ່ໄຊ່ງ່ອນ ຕ່າງກໍມີໜັງສືເຫຼັ້ມນີ້ວາງໄວ້ໃນຖ້ານປຶ້ມຂອງໃຜລາວ ແລະອີກຈຳນວນໜຶ່ງກໍປາກົດເຫັນຢູ່ເຂດທາງພາກເໜືອ ເຊິ່ງເປັນທີ່ນິຍົມອ່ານໃນບັນດາກຸ່ມແກ່ນນຳຄອມມູຍນິດ ທີ່ພວມໃຊ້ເວລາໃນການກໍ່ສ້າງຄວາມແຂງແກ່ນໃຫ້ແກ່ຕົນເອງເຖິງຫຼາຍປີ ຢູ່ປະເທດຝຣັ່ງເສດ.

ສີຣິມີຄວາມສາມາດໃນການແກ້ໄຂປິດສະໜາໄດ້ດົນສົມຄວນ ກ່ອນທີ່ນັກສືບຜູ້ນັ້ນຈະຄົ້ນພົບຄຳຕອບຂອງປິດສະໜາດັ່ງກ່າວ ... ຂະນະທີ່ເຂົາເອງຍັງບໍ່ໄດ້ສູບຢາຈັກກອກ. ເວລານີ້, ຢູ່ໃຕ້ກິ່ງກ້ານຂອງຕົ້ນສາມສາທີ່ໄຫວຕິງໄປມາຕາມແຮງລົມ ເຂົາຮູ້ສຶກໄດ້ເຖິງການປະສົມປະສານກັນຢ່າງຊັດເຈນລະຫວ່າງໝໍຊັນນະສູດສົບກັບນັກສືບທີ່ໄດ້ປະສົມ

ກົມກຽວກັນກາຍເປັນໜຶ່ງດຽວ ແລະເຂົາເອງກໍຊື່ນຊອບກັບຄວາມຮູ້ສຶກແບບນີ້. ສໍາລັບຜູ້ຊາຍໃນໄວເຈັດສິບກວ່າແບບເຂົາ, ບໍ່ວ່າຫຍັງກໍຕາມທີ່ເປັນແຮງກະຕຸ້ນອັນດີພໍທີ່ຈະເຮັດຕົນຮູ້ສຶກດີນັ້ນ ເຂົາກໍຈະຟ້າວຄວ້າເອົາມັນມາຄອບຄອງໄວ້ກ່ອນສະເໝີ.

ສິຣິຍ່າງເລາະລຽບໄປຕາມແຄມແມ່ນໍ້າເພື່ອກັບຄືນຫ້ອງການ ແຕ່ພໍມາເຖິງສີ່ແຍກທີ່ຈະເດີນໜ້າໄປສູ່ຫ້ອງເກັບສິບ ແຕ່ເຂົາຊໍ້າພັດເຊື່ອໃນສັນຊາດຕະຍານຂອງແຮງກະຕຸ້ນຫຼາຍກວ່າຄວາມຮັບຜິດຊອບໃນໜ້າທີ່. ເຂົາໂບກມືກວັກລົດສອງແຖວຄັນໜຶ່ງໃນຈໍານວນລົດຮັບຈ້າງທີ່ນັບມື້ຫຼຸດໜ້ອຍລົງເຊິ່ງແລ່ນໄປຕາມຖະໜົນໃນເມືອງວຽງຈັນທັງແຈ້ງບອກຈຸດໝາຍປາຍທາງໃຫ້ຄົນຂັບລົດຮູ້ ກ່ອນຈະຄ່ອຍບຽດແຫຍ້ເພື່ອໝົ້ນເຂົ້າໄປທ່າມກາງຜູ້ໂດຍສານທີ່ພາກັນນັ່ງອັດແໜ້ນລໍຖ້າຢູ່ທາງໃນເພື່ອຈະເດີນທາງໄປຕາມທຸລະຂອງໃຜລາວ. ລົດສອງແຖວຄັນນັ້ນມຸ່ງໜ້າໄປຕາມແຄມແມ່ນໍ້າທາງທິດຕາເວັນອອກ, ມັນແລ່ນໄກອອກໄປຫ່າງຈາກຕົວເມືອງ ທັງແວ່ຈອດເອົາຜູ້ໂດຍສານທີ່ລັດລົດຢູ່ຂ້າງທາງ ໂດຍບໍ່ມີທ່າທີວ່າຍາມໃດຜູ້ໂດຍສານຈະເຕັມຈັກເທື່ອ.

ປະມານຊາວນາທີຕໍ່ມາ, ສິຣິຄ່ອຍໝົ້ນອອກມາຈາກລົດໂດຍໄດ້ຮັບການຊ່ວຍເຫຼືອຈາກຍິງສາວຜູ້ທີ່ມີທ່າທາງແຂງແຮງຄົນໜຶ່ງ ເຊິ່ງແຂນຊ້າຍຂອງນາງກໍຍັງຄາອູ້ມກະທໍໃສ່ລູກໄກ່ຜູ້ໂອກໂຕໜຶ່ງຕິດຢູ່. ພໍລົງຫວິດຈາກລົດເຂົາກໍຈ່າຍເງິນຄ່າໂດຍສານຈໍານວນຫ້າສິບກີບເຊິ່ງເປັນເງິນກີບປົດປ່ອຍໃຫ້ກັບຄົນຂັບລົດ ກ່ອນທີ່ຈະຍ່າງຂ້າມທາງໄປເບື້ອງກົງກັນຂ້າມ ຈາກນັ້ນກໍມາຢຸດຢືນຢູ່ຕໍ່ໜ້າເຮືອລາດຕາເວນແມ່ນໍ້າຂອງທີ່ຫາກໍສ້າງຕັ້ງຂຶ້ນໃໝ່ໆ ແຕ່ແລ້ວເຂົາກໍສົງໄສວ່າຕົນເອງມາຢືນເຮັດຫຍັງຢູ່ບ່ອນນັ້ນ. ເຮືອລາດຕາເວນແມ່ນໍ້າຂອງ ເຊິ່ງແມ່ນກອງທັບເຮືອແປກໆ ໂດຍຕັ້ງຢູ່ໃນປະເທດທີ່ບໍ່ມີທາງອອກສູ່ທະເລ ທັງເກືອບຈະບໍ່ມີພາລະກິດຫຍັງເລີຍໃນການກວດກາຕາມສາຍນໍ້າອັນຍາວຢຽດລຽບຕາມເຂດຊາຍແດນ.

ຄົນທີ່ນໍາເຮືອໃຫຍ່ເຂົ້າ-ອອກທ່າເຮືອຂອງເຮືອຂ້າມຟາກທີ່ໄດ້ຮັບການກໍ່ຕັ້ງຂຶ້ນແບບເຮັ່ງຮີບນັ້ນຊໍ້າພັດແມ່ນທະຫານກອງທັບທີ່ຫາກໍຜ່ານການຝຶກອົບຮົມໄດ້ສອງອາທິດ ເຊິ່ງເປັນຜູ້ບັງຄັບບັນຊາເຮືອທີ່ສົ່ງສຽງດັງສະໜັ່ນຫວັ່ນໄຫວ ເຖິງແມ່ນຈະຢູ່ໄກເປັນສອງສາມຫຼັກກໍຍັງໄດ້ຍິນສຽງແຈ້ງຊັດເຈນ. ໃຜກໍຕາມທີ່ກໍາລັງລັກລອບຂ້າມແມ່ນໍ້າແບບຜິດກົດໝາຍ ກໍສາມາດລີ້ຊ້ອນຕົວໄດ້ຢ່າງງ່າຍດາຍຈົນກວ່າເຮືອຫຸ້ມເກາະແລ່ນຜ່ານກາຍໄປ ເວັ້ນເສຍແຕ່ວ່າພວກເຂົາເປັນຄົນຫູໜວກຈົນບໍ່ສາມາດໄດ້ຍິນສຽງຫຍັງເລີຍເທົ່ານັ້ນແຫຼະ.

ສິຣິຖືກນໍາສົ່ງໄປທີ່ຫ້ອງພັກຂອງຜູ້ບັງຄັບການເຮືອ. ບັນດາເຈົ້າໜ້າທີ່ປະຈໍາກອງລາດຕາເວນຍາມກາງຄືນກໍາລັງພາກັນຫຼິ້ນໄພ້ຢູ່, ອີກກຸ່ມໜຶ່ງກໍພາກັນຢືນເປັນວົງລ້ອມ

ພ້ອມເຕະກະຕໍ້ຫວາຍສະຫຼັບສິ່ງໄປມາ. ໂຊກຍັງເຂົ້າຂ້າງສິຣິ, ເພາະຄົນທີ່ເຂົາຢາກພົບໃນທີ່ນັ້ນຖືກຍ້າຍໄປປະຈໍາການທີ່ໜ່ວຍລາດຕາເວນຍາມກາງຄືນ ພາຍຫຼັງເກີດອຸບັດຕິເຫດຮ້າຍແຮງໃນຄັ້ງນັ້ນ. ສິຣິ ພົບກັບຕັນບຸນເຮັງ ເຊິ່ງເປັນຜູ້ບັງຄັບການເຮືອທີ່ກໍາລັງນັ່ງໂຍກຕົວໄປມາຢູ່ເທິງຕັ່ງອີ້ຫວາຍຄືກັບຄົນຊະລາຜູ້ເຊີ້ຊ້າກໍປານນັ້ນ ທັງທີ່ເຂົາຫາກໍຢູ່ໃນໄວຊາວປີກວ່າ.

ສິຣິແນະນໍາຕົນເອງ ພ້ອມຈັບມືທັກທາຍກັບຕັນໜຸ່ມ.

"ສະຫາຍບໍ່ວ່າຫຍັງບໍ ຖ້າພວກເຮົາຈະພາກັນອອກໄປຍ່າງຫຼິ້ນຂ້າງນອກ?"

ບຸນເຮັງຍັງສັບສົນກັບແຂກທີ່ມາຢາມ ແຕ່ກໍຍ່າງຕາມສິຣິອອກໄປຂ້າງນອກຜ່ານທົ່ງນາອັນແຫ້ງກະດ້າງ.

"ເປັນເລື່ອງປົກກະຕິຂອງການປະຕິບັດໜ້າທີ່ແມ່ນບໍທ່ານ?

"ໝາຍເຖິງການທີ່ເຈົ້າໜ້າທີ່ຊັນນະສູດສືບອອກມາສືບຫາຄະດີດ້ວຍຕົນເອງຫັ້ນບໍ? ໂອ! ແມ່ນຫັ້ນແຫຼະ. ມັນເປັນແບບນີ້ຕະຫຼອດດອກ. ຂ້ອຍໃຊ້ເວລາສ່ວນໃຫຍ່ສໍາພາດຜູ້ຄົນພໍເທົ່າໆ ກັບການທີ່ໄດ້ເຫັນສົບຄົນຕາຍ. ທັງໝົດນັ້ນກໍເປັນເລື່ອງທໍາມະດາ ລວມທັງການລາຍງານ. ເຈົ້າເອງກໍຮູ້."

ບຸນເຮັງເບິ່ງຄືວ່າຮູ້ສຶກສະບາຍໃຈຂຶ້ນມາແດ່ເລັກໜ້ອຍ.

"ເຂົາບໍ່ໜ້າຈະຢູ່ບ່ອນຫັ້ນເລີຍ."

"ໝາຍເຖິງຊາຍຂັບເຮືອຫາງຍາວແມ່ນບໍ?"

"ພວກເຮົາກໍາລັງຈະເຂົ້າທຽບທ່າ ແລະເຂົາຊໍ້າພັດຫາປາໃນເຂດຫວງຫ້າມ." ກັບຕັນຕັ້ງໃຈຍ່າງອອກໜ້າກ່ອນສິຣິ ຜູ້ເຊິ່ງພະຍາຍາມຢ່າງໜັກເພື່ອຕິດຕາມເຂົາໃຫ້ທັນ.

"ຂ້ອຍເຂົ້າໃຈດີ, ຈັ່ງແມ່ນໂງ່ງ່າວອີ່ຫຼີບໍ. ຄົນຫາປາພວກນີ້ຊ່າງບໍ່ເຂົ້າໃຈຫຍັງເລີຍ, ພວກເຂົາບອກຫຍັງກໍບໍ່ເຄີຍຟັງ." ສິຣິຟ້າວເລັ່ງບາດຕີນໃຫ້ໄວຂຶ້ນ ເພື່ອໃຫ້ທັນໄດ້ໄປຢືນຢູ່ຕໍ່ໜ້າຂອງຊາຍຜູ້ພະຍາຍາມຈະເຜ່ນໜີຈາກຕົນ. "ຂ້ອຍຂໍຖາມເລື່ອງສ່ວນຕົວເຈົ້າໄດ້ບໍ?"

"ເລື່ອງຂ້ອຍນີ້ຫວາ?"

"ແມ່ນ. ເຈົ້າມາຮັບໜ້າທີ່ ... ຄວບຄຸມເຮືອລໍານີ້ດົນປານໃດແລ້ວ?"

ກັບຕັນໜຸ່ມຍັງຄິດລັ່ງເລໃຈດົນສົມຄວນ.

"ແບບວ່າ ນີ້ແມ່ນໜ່ວຍງານໃໝ່ທີ່ຫາກໍສ້າງຕັ້ງຂຶ້ນເທົ່ານັ້ນ."

"ຂ້ອຍເຂົ້າໃຈຢູ່ ແຕ່ເປັນແນວໃດລະ? ຈັກເດືອນ? ຈັກອາທິດ?"

"ອາທິດດຽວ."

"ຂ້ອຍຄິດວ່າມັນຄົງເປັນໜ້າວຽກທີ່ກົດດັນພໍສົມຄວນ."

“ກົດດັນຊັ້ນຫວາ?”

“ຂ້ອຍກໍຢາກຈະເວົ້າແນວນັ້ນລະ. ມັນກໍໜ້າຈະຫຍຸ້ງຍາກພໍສົມຄວນທີ່ຕ້ອງໄດ້ຄອຍລາດຕາເວນປ້ອງກັນການໂຈມຕີຂອງພວກຕໍ່ຕ້ານຄອມມູຍນິດຈາກຝັ່ງແມ່ນໍ້າເບື້ອງກົງກັນຂ້າມ.”

ບຸນເຮັ່ງລະເບີດສຽງຫົວຂຶ້ນແບບບໍ່ໄດ້ຕັ້ງໃຈ.

“ທ່ານໝໍສີຣິ! ຂ້ອຍເຄີຍສູ້ຮົບກັບສັດຕູແບບຕົວຕໍ່ຕົວຢູ່ຕາມຕົວເມືອງຕ່າງໆ ມາໄດ້ສອງປີເຕັມ. ອັນນີ້ກໍເປັນພຽງການລ່ອງເຮືອໃນວັນພັກຜ່ອນທຳມະດາຊື່ໆ ເມື່ອທຽບໃສ່ຄາວນັ້ນ. ບໍ່ມີພວກຕໍ່ຕ້ານຄອມມູຍນິດສະຕິດີຄົນໃດດອກ ທີ່ຈະສົ່ງກອງທັບເຮືອໃຫຍ່ຂ້າມນໍ້າມາໃນເຂດທີ່ມີບ້ານເຮືອນໜາແໜ້ນຈັ່ງຊີ້. ສິ່ງທີ່ໜ້າກົດດັນທີ່ສຸດກໍຄືການໄດ້ເຫັນພວກຊາວບ້ານພາກັນລອຍນໍ້າຂ້າມໄປທາງຝັ່ງໄທ ໃນລະດັບແມ່ນໍ້າທີ່ໄຫຼຕໍ່າແບບນີ້ ເຖິງປານນັ້ນພວກຜູ້ຄົນກໍຍັງຍອມທີ່ຈະສ່ຽງ.”

“ຊັ້ນເຈົ້າກໍຢາກຈະບອກວ່າຈຸດເຝົ້າລະວັງເຂດນີ້ຍັງບໍ່ເຂັ້ມງວດເທົ່າທີ່ຄວນ.”

“ມັນງຽບສະຫງົບດີ.”

“ເຈົ້າຂັບເຮືອດ້ວຍຄວາມໄວເທົ່າໃດ?”

“ສິບນັອດປະມານນັ້ນແຫຼະ. ມັນເປັນກົດ.”

“ຊ່າງເປັນວຽກທີ່ດີ. ຂ້ອຍຄວນສະໝັກລອງເບິ່ງ.”

ບຸນເຮັ່ງຫົວຂຶ້ນອີກຄັ້ງແບບຕົກປະມ່າ.

“ແຕ່ວ່າຂ້ອຍ ...”

“ເລື່ອງຫຍັງ?” ກັບຕັນໜຸ່ມຖາມ.

“ບໍ່ມີຫຍັງດອກ, ມັນບໍ່ໄດ້ສຳຄັນພໍເທົ່າໃດ. ຂ້ອຍໄດ້ຂໍ້ມູນພໍສຳລັບບົດລາຍງານແລ້ວແຫຼະ ມັນບໍ່ສຳຄັນດອກ.”

“ບໍ່. ເວົ້າອອກມາໂລດທ່ານໝໍ.”

“ກະໄດ້ຊັ້ນ, ຖ້າເຈົ້າໃຊ້ເວລາຂັບເຮືອດ້ວຍຄວາມໄວສິບນັອດ ພ້ອມກຳລັງຈະເຂົ້າທຽບທ່າ ...”

“ແລ້ວເປັນຫຍັງ?”

“ເປັນຫຍັງເຈົ້າຄືບໍ່ມີເວລາຢຸດເຮືອກ່ອນ ຕອນທີ່ແນມເຫັນຄົນຂັບເຮືອຫາງຍາວຜູ້ນັ້ນ?”

ບຸນເຮັ່ງຫຼົບສາຍຕາລົງຕໍ່າ ພ້ອມເລັ່ງບາດຕີນໃຫ້ໄວຂຶ້ນອີກຄັ້ງເພື່ອຈະໄດ້ຫຼົບໜີຂ້າມທົ່ງນາໄປ.

“ຄືຂ້ອຍເວົ້ານັ້ນແຫຼະວ່າລາວບໍ່ໜ້າຈະຢູ່ບ່ອນຫັ້ນເລີຍ.”

"ແຕ່ຄົນເຮັດວຽກເປັນຜູ້ຊ່ວຍໃນເຮືອກໍໜ້າຈະແນມເຫັນຢູ່ແລ້ວ, ແມ່ນບໍລະ?"

ເຫັນໄດ້ຊັດເຈນວ່າ ບຸນເຮັ່ງເຄີຍມີໂມງໜ່ວຍໜຶ່ງໃສ່ໄວ້ໃນແຂນ ແຕ່ກໍມີເຫດຜົນບາງຢ່າງມາພັດພາກມັນໄປ. ເຂົາພິກຂໍ້ແຂນຂຶ້ນແລ້ວແນມເບິ່ງ ພ້ອມອຸທານອອກມາແບບດັງໆ ທັງທີ່ບໍ່ເຫັນວ່າມີຄວາມຈຳເປັນໃດໆ ເລີຍເພາະຮູ້ດີວ່າມັນເສຍໄປ.

"ຂ້ອຍຕ້ອງກັບແລ້ວແຫຼະ. ຄືທ່ານໝໍເວົ້າຫັ້ນແຫຼະວ່າທ່ານໝໍມີຂໍ້ມູນພຽງພໍສຳລັບການລາຍງານແລ້ວ."

"ເອີແມ່ນ, ຊັ້ນກໍຂໍໂທດທີ່ເຮັດໃຫ້ສະຫາຍເສຍເວລານຳ. ຂອບໃຈທີ່ໃຫ້ຄວາມຮ່ວມມື."

ພໍຍ່າງກັບຄືນໄປໄດ້ໄລຍະໜຶ່ງ, ບຸນເຮັ່ງກໍຄ່ອຍຊະລໍບາດຍ່າງຂອງຕົນລົງເລັກໜ້ອຍພ້ອມກັບມາສະຫງົບສະຕິອາລົມຄືນໃໝ່ອີກຄັ້ງ. ພໍເມື່ອເຂົາສັງເກດເຫັນວ່າ ສີຣິບໍ່ໄດ້ຍ່າງຮຽງຂ້າງເຂົາອີກຕໍ່ໄປ ທັນໃດນັ້ນເຂົາກໍຫັນໜ້າກັບຄືນ ແລ້ວກໍເຫັນທ່ານໝໍຢືນຊື່ງຢູ່ ພ້ອມສັກສາຍຕາຈ້ອງມອງເບິ່ງຕໍເຟືອງແຫ້ງທີ່ຂາດນ້ຳກາງທົ່ງນາທີ່ຜ່ານການເກັບກ່ຽວໄປແລ້ວ.

"ທ່ານໝໍເບິ່ງຫຍັງ?" ເຂົາຍ່າງກັບຄືນໄປເພື່ອຈະໄດ້ຮູ້ວ່າສີຣິກຳລັງຈ້ອງມອງເບິ່ງຫຍັງ ແຕ່ທີ່ຈິງແລ້ວທ່ານໝໍບໍ່ໄດ້ເບິ່ງຫຍັງເລີຍ ເຂົາກຳລັງຕັ້ງຂໍ້ສົມມຸດຕິຖານບາງຢ່າງເທົ່ານັ້ນ. ກັບຕັນໜຸ່ມຮູ້ສຶກບໍ່ສະບາຍໃຈເມື່ອໄດ້ຍິນສຽງສີຣິຫົວຂຶ້ນຄ່ອຍໆ. "ທ່ານໝໍເປັນຫຍັງ?"

ສີຣິເງີຍໜ້າຂຶ້ນແລ້ວຈ້ອງມອງບຸນເຮັ່ງພ້ອມເຈາະເລິກເຂົ້າໄປໃນຕາຂອງກັບຕັນໜຸ່ມ.

"ເອົາລະລູກຊາຍ. ນີ້ຄືສິ່ງທີ່ຂ້ອຍສັນນິຖານ ຟັງເບິ່ງແລ້ວມັນອາດຈະຄ້າຍຄືກັບຈິນຕະນາການຂອງຜູ້ເຖົ້າຄົນໜຶ່ງ ແຕ່ຊ່ວຍຟັງຂ້ອຍເວົ້າກ່ອນ. ຕາມຄວາມຄິດສ່ວນຕົວ, ຂ້ອຍສັນນິຖານວ່າອາດມີການລັກລອບຂົນເຄື່ອງຂ້າມແມ່ນ້ຳເປັນປະຈຳ. ສ່ວນໃຫຍ່ແລ້ວກໍແມ່ນພວກເຫຼົ້າ ກັບຢາສູບທີ່ເຫັນໃນລາວກໍແມ່ນນຳມາແຕ່ໄທເກືອບໝົດ."

"ເຈົ້າເວົ້າເລື່ອງຫຍັງ ...?"

"ຟັງຂ້ອຍເວົ້າໃຫ້ຈົບກ່ອນ." ສີຣິສັງເກດເຫັນວ່າສີໜ້າທີ່ສະແດງເຖິງຄວາມເປັນມິດໄດ້ເລື່ອນຫາຍໄປຈາກໃບໜ້າອັນຈິດຊິດຄືປູຈີ່ຂອງບຸນເຮັ່ງ. ເຂົາຢືນພ້ອມເອົາມືຄ້ຳແອວກ່ອນຈະເວົ້າຕໍ່. "ຂ້ອຍເຊື່ອວ່າ ຕ້ອງມີບາງຄັ້ງຄາວທີ່ຜູ້ບັງຄັບການເຮືອແບບພວກເຈົ້າ ... ອາດຖືກຊັກຈູງໃຫ້ມີການເມີນເສີຍແບບບໍ່ມືນຫູມືນຕາ ບາງເທື່ອກໍອາດຈະມີການປ່ຽນຕາຕະລາງເວລາສຳລັບການລາດຕາເວນນຳອີກ."

"ທ່ານໝໍກຳລັງຈະບອກວ່າ ...?"

"ຂ້ອຍກຳລັງບອກວ່າ ອາດຈະມີເຫຼົ້າວິສກີໜຶ່ງລັງໃນຈຳນວນສອງຮ້ອຍລັງທີ່ຖືກລຳລຽງຂ້າມນ້ຳມາ ໂດຍທີ່ພວກເຈົ້າບໍ່ຮູ້ບໍ່ເຫັນຫຍັງເລີຍ ..." ບຸນເຮັ່ງຫັນໜ້າໜີປ່ອຍ

ໃຫ້ສິຣິແນມເຫັນແຕ່ທາງຫຼັງ "... ອີກໜຶ່ງລັງອາດລຳລຽງຂຶ້ນໃສ່ເຮືອຂອງໜ່ວຍລາດຕາເວນເພື່ອເປັນການສົມມະນາຄຸນ. ຂ້ອຍກຳລັງບອກວ່າ ໃນຕອນແລງມື້ທີ່ຊາຍຂັບເຮືອຫາງຍາວສູນເສຍຊີວິດພ້ອມທັງຂາທັງສອງຂ້າງຂອງເຂົານັ້ນ, ພວກລູກເຮືອທຸກຄົນລວມທັງກັບຕັນກຳລັງພາກັນເມົາແປເມົາແປດຈົນຍໍຫົວບໍ່ຂຶ້ນ. ຂ້ອຍກຳລັງບອກວ່າພວກເຈົ້າທຸກຄົນເມົາແຮງ ແລະເຈົ້າເອງກໍບໍ່ມີສະຕິເຫຼືອຄ້າງພໍທີ່ຈະສາມາດຄວບຄຸມເຮືອຂອງຕົນໄວ້ໄດ້ ທັງທີ່ເປັນເຮືອລຳດຽວກັນກັບຕອນທີ່ເຈົ້າເຄີຍຝຶກຄວບຄຸມມັນເມື່ອອາທິດກ່ອນ."

ສິຣິສັງເກດເຫັນບ່າໄຫຼ່ອັນໜຸ່ມແໜ້ນຂອງບຸນເຮັ່ງມີອາການສັ່ນຢຶກຢັກເລັກໜ້ອຍກ່ອນຈະຫຍັບເຂົ້າມາໃກ້ໆ ຈົນເກືອບຈຳກັບເຂົາ.

"ຂ້ອຍກຳລັງບອກວ່າ ຊາຍຂັບເຮືອຫາງຍາວບໍ່ໄດ້ຢູ່ໃນເຂດຫວງຫ້າມດອກ ແຕ່ພວກເຈົ້າຕ່າງຫາກທີ່ລ່ອງເຮືອຜິດຊ່ອງທາງ. ພໍເຖິງເວລາທີ່ເຈົ້າຮູ້ສຶກຕົວໄດ້, ເຈົ້າກໍພາເຮືອພຸ່ງເຂົ້າໃກ້ກັບກຳແພງຂອບຕາຝັ່ງແລ້ວ ທັງບໍ່ມີເວລາພໍທີ່ຈະຖອຍກັບຄືນໄດ້ທັນ. ຂ້ອຍກຳລັງບອກວ່າ ເຫຼົ້າແມ່ຂອງນັ້ນແຫຼະທີ່ຂ້າຊີວິດຊາຍຫາປາຄົນນັ້ນ."

ສິຣິຫັນໄປເບິ່ງໜ້າຂອງບຸນເຮັ່ງເຊິ່ງກຳລັງປຽກຊຸ່ມໄປດ້ວຍນ້ຳຕາທີ່ພວມໄຫຼອາບສອງພວງແກ້ມ, ຮີມສົບຂອງເຂົາບິດບ້ຽວດ້ວຍຄວາມເຈັບປວດ. ສິຣິຍັງຢືນຢູ່ບ່ອນນັ້ນແບບງຽບໆ ທັງຕື່ນເຕັ້ນກັບຄວາມຈິງທີ່ຕົນເອງເປັນຄົນເປີດເຜີຍອອກມາ. ຣໍໂມນອະເດຣັນເນີລລີນ ໄດ້ຈົມສ່າລົງສູ່ຊ່ວງທ້ອງຂອງເຂົາ ແລະແລ້ວພວກມັນກໍປິ່ວວ່ອນຂຶ້ນຄືກັບແມງເມົ່າທີ່ຖືກຂັງໄວ້ໃນຂວດ. ເວລາຜ່ານໄປຫຼາຍນາທີກ່ອນທີ່ຊາຍໜຸ່ມຄົນນັ້ນຈະເອີ່ຍປາກຂຶ້ນ ໂດຍທີ່ບໍ່ກ້າເງີຍໜ້າຂຶ້ນເບິ່ງສິຣິ.

"ແມ່ນໃຜ ... ມີໃຜໃນນັ້ນທີ່ເປັນຄົນບອກທ່ານ?"

"ໃຜລະ?"

"ພວກລູກເຮືອ."

"ບໍ່ດອກລູກຊາຍ. ຂ້ອຍຍັງບໍ່ໄດ້ລົມກັບລູກເຮືອຂອງເຈົ້າ ຫຼືພະຍານຄົນໃດເລີຍ."

ບຸນເຮັ່ງຈ້ອງມອງເບິ່ງໜ້າສິຣິ ໃນຕາຂອງເຂົາແດງກ່ຳຄືຄົນເມົາເຫຼົ້າແຕ່ແມ່ນຍ້ອນນ້ຳຕາ.

"ຊາຍຂັບເຮືອຫາງຍາວເປັນຄົນບອກຂ້ອຍເອງ."

ກັບຕັນໜຸ່ມເຮັດຄໍຕົກເຕ່ເຊ່ຄືໄກ່ຕົກນ້ຳ ທັງສະອື້ນໄຫ້ຄ້າຍກັບວ່ານ້ຳໜັກຂອງແມ່ນ້ຳທັງສາຍໄດ້ເຕັງຕິ້ງເຂົ້າພຸ່ງໃສ່ຈົນເຕັມຫົວອົກຂອງເຂົາ. ສິຣິອຶດອັດໃຈເກີນກວ່າທີ່ຈະຖອຍໄປຢືນເບິ່ງຄວາມທຸກທໍລະມານໃຈຂອງຊາຍຄົນນັ້ນແບບເສີຍໆ ບໍ່ໄດ້ ລາວຈຶ່ງຫຍັບບາດຕີນເຂົ້າໄປໃກ້ໆ ພ້ອມໃຊ້ມືໂອບກອດຕົວຂອງຊາຍຄົນນັ້ນເອົາໄວ້. ລາວຮູ້ສຶກ

ໄດ້ວ່າຮ່າງຄີງຂອງບຸນເຮັ່ງກຳລັງສັ່ນສະທ້ານດ້ວຍຄວາມເສົ້າເສຍໃຈ ທັງສາມາດເຂົ້າໃຈໄດ້ວ່າຊາຍໜຸ່ມຄົນນີ້ທົນທຸກທໍລະມານຫຼາຍພຽງໃດກັບການປະພຶດອັນໂງ່ງ່າວຂອງຕົນໂດຍບໍ່ມີຫຍັງຈະເວົ້າອອກມາໄດ້ອີກແລ້ວ.

ເນື່ອງຈາກປະຕິຫານແຫ່ງຊ່ວງເວລາ ແລະເຫດການທີ່ເຄີຍເກີດຂຶ້ນໃນອະດີດ ບຸນເຮັ່ງຈິ່ງລອດພົ້ນຈາກການຖືກປະຕິບັດວິໄນທາງກົດໝາຍ ແຕ່ເຂົາຊໍ້າພັດຕ້ອງໄດ້ກັກເກັບເອົາຄວາມທົນທຸກທໍລະມານຈາກຄວາມສຳນຶກຜິດມາສະສົມໄວ້ໃນໃຈເປັນເວລາຫຼາຍປີ. ທະຫານຄົນໜຶ່ງເຊິ່ງສາມາດສັງຫານສັດຕູຈາກການຕໍ່ສູ້ໄດ້ເປັນພັນຄົນຢ່າງບໍ່ກະດຽມມີ ແຕ່ການທີ່ເຮັດໃຫ້ຄົນບໍລິສຸດຜູ້ໜຶ່ງຕ້ອງມາຈົບຊີວິດດ້ວຍຕົວຂອງເຂົາເອງນັ້ນມັນຊໍ້າພັດເຮັດໃຫ້ເຂົາຮູ້ສຶກຜິດ ທັງຈະຖືກຝັງໄວ້ໃນຈິດສຳນຶກໄປຕະຫຼອດ.

ເມື່ອທົນຢູ່ກັບສະຖານະການແບບນີ້ບໍ່ໄດ້ອີກຕໍ່ໄປ, ສີຣິຈິ່ງຫຍັບຕົວອອກມາ ພ້ອມຄົ້ນຫາເຈ້ຍກັບປາກກາທີ່ຢູ່ໃນກະເປົາພາຍຂອງຕົນ. ເຂົາລົງມືຂຽນບາງຢ່າງເທົ່າທີ່ຕົນຈຳໄດ້ຈາກການລາຍງານຊັນນະສູດສົບລົງໃນດ້ານຫຼັງຂອງຊອງຈົດໝາຍເກົ່າໆ ສະບັບໜຶ່ງ ຈາກນັ້ນກໍຍັດເຈ້ຍແຜ່ນນັ້ນເຂົ້າໃສ່ມືບຸນເຮັ່ງ.

“ລູກຊາຍ, ນີ້ຄືຊື່ ແລະທີ່ຢູ່ຂອງຊາຍຫາປາ. ພໍ່ເຊື່ອວ່າ ພວກເຂົາຕ້ອງມີແທ່ນບູຊານ້ອຍໆ ຢູ່ຫັ້ນ ມັນອາດຈະຊ່ວຍໃຫ້ລູກໄປບ່ອນນັ້ນ ທັງມີໂອກາດໂອ້ລົມກັບເຂົາໄດ້.”

**********

ສີຣິຍ່າງກັບຄືນແບບບໍ່ຟ້າວຟັ່ງໂດຍຂ້າມຜ່ານທົ່ງນາເພື່ອມຸ່ງໜ້າໄປທາງຖະໜົນ. ໃນແຕ່ລະບາດກ້າວທີ່ຍ່າງໄປ, ເລື່ອງສຳຄັນຂອງສິ່ງທີ່ຫາກໍເກີດຂຶ້ນໄດ້ແກ່ດຶງເອົາເຂົາໃຫ້ຈົມລົງມາຢູ່ໃຕ້ພື້ນຂອງສາມັນສຳນຶກ. ຫົວໃຈອັນຫ່ຽວແຫ້ງເນື່ອງຈາກຄວາມແກ່ຊະລາໄດ້ເລີ່ມເຕັ້ນຂຶ້ນຕຶກຕັກ ບໍ່ຕ່າງຫຍັງກັບປາດຸກໃຫຍ່ເຊິ່ງກຳລັງດີ້ນແດ່ວໆ ທີ່ຕິດຄ້າງກັບດາງແຫ. ລາວອາດຮູ້ໄດ້ດ້ວຍເຫດຜົນບາງຢ່າງ ເຖິງຈະເປັນແນວໃດກໍຕາມ, ອາດເປັນຍ້ອນການມາຢັ້ຽມຢາມຂອງຊາຍຂັບເຮືອຫາງຍາວນັ້ນເອງທີ່ເປັນຜູ້ບອກລາວ ແຕ່ການຕັດສິນດ້ວຍເຫດຜົນນັ້ນມີຢູ່ໃສ? ແລະແມ່ນຫຍັງຄືສິ່ງທີ່ຈະພິສູດໃຫ້ຮູ້ໄດ້ໃນທາງວິທະຍາສາດ?

ເຂົາຮູ້ສຶກບໍ່ພໍໃຈໃນໂຊກ ຫຼືຄວາມສຳເລັດຂອງຕົນເອງ ທັງບໍ່ໄດ້ມີຄວາມເອກອ້າງທະນົງໃຈໃນສິ່ງທີ່ຕົນສາມາດເຮັດໄດ້. ໃນເວລາດຽວກັນນັ້ນກະໂຕລາວເອງກໍກຳລັງເດີນຕາມເສັ້ນທາງສາຍແຄບໆ ລະຫວ່າງຄວາມຢ້ານກົວກັບຄວາມຕື່ນເຕັ້ນ, ລະຫວ່າງອຳນາດກັບຄວາມໄຮ້ອຳນາດ, ລະຫວ່າງສະຕິ ແລະ ... ເວົ້າມາແລ້ວລາວຮອດບໍ່ຢາກຈະຄິດໃນສິ່ງທີ່ມັນກຳລັງເກີດຂຶ້ນກັບຕົນເອງເລີຍ.

ລົດສອງແຖວທີ່ກັບເຂົ້າໃນເມືອງແລ່ນຜ່ານໄປແລ້ວສອງຄັນ ສ່ວນຄັນທີສາມກຳລັງມາ ພວກເຂົາບີບແກສົ່ງສຽງເປັນສັນຍານແບບແຫບໆ ເພື່ອເອີ້ນໃຫ້ລາວຂຶ້ນລົດ ແຕ່ລາວກໍປ່ອຍໃຫ້ພວກນັ້ນຜ່ານໄປ. ສີຣິປ້າຍກົ້ນລົງນັ່ງຢູ່ກ້ອງຕົ້ນໝາກມີ້ ທັງຄິດທົບທວນກ່ຽວກັບເລື່ອງການພົບປະກັນຢູ່ໃນຫົວເຂົາຄິດແລ້ວຄິດອີກ ທັງຄິດແລ້ວກໍຄິດອີກວົນວຽນໄປມາ ຖ້າຫາກເຂົາຕ້ອງການຄຳອະທິບາຍ ແນ່ນອນເຂົາຈະຕ້ອງພົບກັບຄວາມຜິດຫວັງເປັນແນ່ແທ້.

"ໂອ ດີໃຈທີ່ໄດ້ພົບທ່ານໝໍ. ພວກເຮົາຄິດວ່າທ່ານໝໍຕາຍຍ້ອນໂລກຊະລາແລ້ວຊັ້ນດອກ."

ກົ່ງຫົວຂຶ້ນຊີງຖືກໃຈ ທັງລົ້ມຄືນຄຳເວົ້າແບບກວນໆ ຂອງຕຸ້ຍ.

"ພວກເຮົາ ... ອາ ... ອາ ... ອາ ... ຄິດວ່າທ່ານໝໍຕາຍຍ້ອນໂລກຊະລາແລ້ວ."

ຕອນນັ້ນເວລາກໍໄດ້ເລີຍກາຍສາມໂມງແລງແລ້ວ ຖືວ່າສີຣິຫາຍໂຕໄປດົນເຖິງຫ້າຊົ່ວໂມງ. ໃນຊ່ວງທີ່ເຂົາບໍ່ຢູ່ຫ້ອງການກໍມີສິບເອກທະຫານຄົນໜຶ່ງມາຖາມວ່າສີຣິໄປໃສ. ທາງຫົວໜ້າໜ່ວຍງານຮັກສາຄວາມໝັ້ນຄົງປະຈຳເຂື່ອນນ້ຳງື່ມກໍໄດ້ມາຖາມຫາເຂົາ ແລະແລ້ວຜູ້ພິພາກສາແຫງກໍໄດ້ໂທລະສັບມາຖາມວ່າສີຣິໄປໃສ ແຕ່ກໍບໍ່ມີໃຜສາມາດໃຫ້ຄຳຕອບໄດ້ ສະນັ້ນພວກເຂົາຈິ່ງຄິດວ່າສີຣິກຳລັງຕົກຢູ່ໃນຄວາມເດືອດຮ້ອນຈົນເງີຍຫົວບໍ່ຂຶ້ນ.

ແຕ່ທ່ານໝໍສີຣິກໍມາຢູ່ບ່ອນນີ້ແລ້ວ ທັງຍິ້ມຫົວຢູ່ຕໍ່ໜ້າປະຕູຫ້ອງການ. ສີໜ້າຂອງເຂົາເບິ່ງຄືອ່ອນເຍົາລົງ ແລະແລ້ວເຂົາກໍກ້າວເຂົ້າໄປໂຕະເຮັດວຽກຄືກັບວ່າບໍ່ມີຫຍັງເກີດຂຶ້ນ ເພາະທຸກຢ່າງເປັນສິ່ງທີ່ບໍ່ແນ່ນອນ.

"ມີລູກຄ້າບໍນ້ອງກົ່ງ?"

ກົ່ງຄົ້ນຫາຄຳຕອບແບບເດີມໆ ໝາຍເລກສອງ.

"ພວກເຮົາມີແຂກໃນຫ້ອງເບີໜຶ່ງ."

ມັນບໍ່ແມ່ນຄຳຕອບທີ່ສີຣິຢາກຮູ້ເລີຍ ເພາະເຂົາຕ້ອງການຄວາມງຽບສະຫງົບ, ເຂົາຢາກກັບບ້ານໄປພັກຜ່ອນ, ຍັງມີເລື່ອງອື່ນໃຫ້ເຂົາຂົບຄິດພຽງພໍແລ້ວຢູ່ໃນຫົວ ໂດຍທີ່ບໍ່ຈຳເປັນຕ້ອງໄປວຸ້ນວາຍກັບອີກໜຶ່ງສົບທີ່ກຳລັງນອນຖ້າຢູ່ໃນຕູ້ແຊ່ແຂງ.

ຕຸ້ຍຍ່າງພວດພາດເຂົ້າໄປໂຕະເຮັດວຽກຂອງທ່ານໝໍ, ໃບໜ້າອັນບໍ່ຮຽບນຽນຂອງນາງປາກົດວ່າຍິ້ມກວ້າງກວ່າປົກກະຕິ.

"ຂ້ອຍບໍ່ຈຳເປັນຕ້ອງບອກທ່ານໝໍວ່າຜູ້ພິພາກສາແຫງອາລົມເສຍຫຼາຍເທົ່າໃດທີ່ຮູ້ວ່າທ່ານໝໍອອກໄປຂ້າງນອກໃນໂມງເຮັດວຽກ. ໃນຖານະຜູ້ຊ່ວຍທີ່ສັດຊື່ ກັບພະນັກງານຝຶກງານຢ່າງເປັນທາງການຜູ້ໜຶ່ງດຽວຂອງທ່ານໝໍແລ້ວ ຂ້ອຍໄດ້ກຽມແຜນຈະຕົວະ

ຜູ້ພິພາກສາວ່າທ່ານໝໍຫາກໍອອກໄປກໍ້ນີ້. ແຕ່ຜູ້ພິພາກສາຊໍ້າພັດມີພະຍານໃນຫ້ອງການສອງສາມຄົນທີ່ເຫັນ ແລະລາຍງານກ່ອນແລ້ວວ່າທ່ານໝໍອອກໄປເກືອບໝົດມື້."

ສີຣິເບິ່ງຄືວ່າບໍ່ຮ້ອນບໍ່ເຄືອງຫຍັງ ຊໍ້າບໍ່ໝໍາລາວຍັງຍິ້ມເສີຍຢູ່.

"ເຂົາຕ້ອງການຫຍັງກັນແທ້?"

"ລາວຈະດີໃຈຫຼາຍຖ້າທ່ານໝໍໂທກັບຫາລາວກ່ອນຈະຄໍ່າ ເພາະລາວຍັງມີຄໍາຖາມຫຼາຍຂໍ້ທີ່ຈະຖາມທ່ານໝໍເລື່ອງແຂກຄົນໃໝ່ຂອງພວກເຮົາ."

"ຢ່າບອກໃດວ່າແຂກຜູ້ນັ້ນເປັນຄົນມີຊື່ສຽງອີກຄົນ."

"ຍັງບໍ່ທັນມີໃຜຮູ້ຊໍ້າວ່າເຂົາເປັນໃຜ ແຕ່ກໍມີຫຼາຍຄົນທີ່ສົນໃຈເຂົາ ທັງຢາກຮູ້ແນ່ນອນວ່າເຂົາຕາຍຍ້ອນຫຍັງ."

"ນ້ອງກິ່ງ." ສີຣິເງີຍໜ້າຂຶ້ນແນມເບິ່ງ ແລະກິ່ງກໍຢຸດໂຍກຕົວໄປມາທັນທີ. "ນ້ອງເຫັນສົບແລ້ວບໍ?"

"ເຫັນແລ້ວ ສະຫາຍທ່ານໝໍ."

"ເປັນຫຍັງເຂົາຈິ່ງຕາຍ?"

"ຈົມນໍ້າຕາຍ."

"ດີຫຼາຍ. ຕຸ້ຍເບິ່ງເອົາເດີ ນີ້ລະຄືຄໍາຕອບ ຖ້າຜູ້ພິພາກສາໜ້າຫີນໂທມາ ກໍໃຫ້ບອກເຂົາວ່ານີ້ຄືຜົນການສັນລະສູດເບື້ອງຕົ້ນ ທັງບອກເຂົາອີກວ່າ ຂ້ອຍຈະໂທຫາເຂົາມື້ອື່ນເຊົ້າ."

ສີຣິເປີດເບິ່ງເອກະສານທີ່ວາງໄວ້ໜ້າໂຕະ ຄ້າຍກັບວ່າມີເອກະສານສໍາຄັນບາງຢ່າງຫາຍໄປ. ຕຸ້ຍກັບກິ່ງໄດ້ແຕ່ແນມເບິ່ງໜ້າກັນແບບງຸນງົງ.

"ຫວ່າງສອງສາມມື້ກ່ອນພວກເຈົ້າສອງຄົນໄດ້ພາກັນຍ້າຍຫຍັງອອກຈາກໂຕະນີ້ບໍ່?"

ກິ່ງສ່າຍຫົວໄປມາງ້ອກໆ. ສ່ວນຕຸ້ຍກໍສະແດງສີໜ້າບູດບຶ້ງແບບບໍ່ພໍໃຈ.

"ຂ້ອຍບໍ່ຄິດແມ່ນແຕ່ຈະເອົາມືແຕະຕ້ອງໂຕະເຮັດວຽກຂອງທ່ານໝໍເລີຍ."

"ຄັນຊັ້ນອັນນັ້ນມັນ ...?" ສີຣິຫວນຄິດຄືນໃນມື້ທີ່ເຂົາລົງມືທໍາການຊັນນະສູດສົບຂອງທ່ານນາງນິດນ້ອຍ. ເຂົາໄດ້ນັ່ງຂຽນບົດລາຍງານຈົນຮອດຕອນເດິກ, ຈົນກວ່າ ... ອັນນີ້ເອງ ທີ່ເຮັດໃຫ້ເຂົາຮູ້ສຶກວ່າ "ມີບາງສິ່ງທີ່ຜິດທີ່ຜິດທາງ". ຄືນມື້ນັ້ນ, ສະຫາຍຄໍານັ່ງຢູ່ໂຕະເຮັດວຽກຂອງເຂົາ ພ້ອມເກັຍກ່ອມໃຫ້ສີຣິຢຸດທໍາການຊັນນະສູດສົບເມຍຕົນເອງ ຕອນນັ້ນບົດລາຍງານໄດ້ວາງຢູ່ເຊິ່ງໜ້າສະຫາຍຄໍາ ຕ້ອງແມ່ນໝໍທ່ານັ້ນແຫຼະທີ່ລັກມັນໄປ.

"ຄົງຈະແມ່ນພວກຂີ້ລັກທົ່ວໄປ."

"ແມ່ນໃຜ?" ຕຸ້ຍເວົ້າແບບຂຶງຂັງພຽງເພື່ອຕ້ອງການປົກປ້ອງສັກສີຂອງຕົນເອງ.

“ບໍ່ແມ່ນພວກເຈົ້າສອງຄົນດອກ. ມີຄົນຊັ້ນຕໍ່າເປັນຕາຂີ້ດຽດຜູ້ໜຶ່ງມາບ່ອນນີ້ແລ້ວກໍ “ຂໍຢືມ” ບົດລາຍງານໄປ. ຕຸ້ຍ, ປຶ້ມບັນທຶກຍັງຢູ່ນຳເຈົ້າຢູ່ບໍ?”

“ບັນທຶກການຊັນນະສູດສົບຫັ້ນບໍ?”

“ແມ່ນ.”

“ມີແທ້. ມັນຢູ່ໃນລິ້ນຊັກໂຕະ.” ເວົ້າສຸດນາງກໍດຶງລິ້ນຊັກອອກ ພ້ອມຈັບເອົາປຶ້ມບັນທຶກຂຶ້ນມາ.

“ດີຫຼາຍ, ຖ້າເຈົ້າບໍ່ວ່າຫຍັງ ຂ້ອຍຢາກຈະຂໍຢືມຊັ້ນດອກ ພໍຈະໄດ້ເຮັດບົດລາຍງານກ່ຽວກັບການຊັນນະສູດສົບຂອງທ່ານນາງນິດນ້ອຍຄືນໃໝ່.” ເວົ້າສຸດສີຣິກໍຍ່າງໄປພ້ອມຈັບເອົາປຶ້ມຫົວນັ້ນຈາກມືຕຸ້ຍ.

“ພວກເຮົາຮູ້ແລ້ວ ຫຼືບໍ່ວ່ານາງຕາຍຍ້ອນຫຍັງ?”

“ຍັງບໍ່ທັນຮູ້ຊັດເຈນເທື່ອ ແຕ່ເຊື່ອວ່ານາງບໍ່ໄດ້ຕາຍຍ້ອນລາບຜີບ້າຫັ້ນແນ່ ນອນ. ແຕ່ພວກເຈົ້າຕ້ອງສັນຍາວ່າຈະບໍ່ເອົາເລື່ອງນີ້ອອກໄປເວົ້າໂລເລຢູ່ຂ້າງນອກເດັດຂາດ. ເຂົ້າໃຈສິ່ງທີ່ຂ້ອຍເວົ້າບໍ?” ທັງສອງງຶກຫົວຕອບຮັບ. “ມັນຢາກຄ້າຍໆ ກັບວ່າມີໃຜຄົນໜຶ່ງຢາກໃຫ້ມີການປິດຄະດີນີ້ໃຫ້ໄວທີ່ສຸດ. ເບິ່ງເດີພວກລູກໆ ເອີຍ ພວກເຮົາອາດບໍ່ແມ່ນເຈົ້າໜ້າທີ່ຊັນນະສູດສົບອີກຕໍ່ໄປ ແຕ່ພວກເຮົາແມ່ນພະນັກງານສືບສວນສາເຫດການຕາຍຫຼາຍກວ່າ. ສາລະວັດຕຳຫຼວດສີຣິ ກັບລູກນ້ອງຜູ້ຊື່ສັດຊັ້ນນາຍຮ້ອຍ ພວກເຮົາທັງສາມແມ່ນນັກສືບຄະດີຄົນຕາຍທີ່ຮ່ວມມືກັນເປັນໜຶ່ງດຽວ.”

ເວົ້າສຸດສີຣິກໍຍ່າງອອກໄປທາງປະຕູ ກ່ອນຈະຫັນໜ້າກັບຄືນມາຫາລູກທີມຂອງຕົນທັງວາງສົ້ນເກີບແຕະທັງສອງຂ້າງແນບເຂົ້າຫາກັນໃນທ່າຢືນກົງ ພ້ອມຍົກມືຂຶ້ນສະແດງການຄຳນັບ. ເຂົາທັງຍິ້ມທັງຫົວອິອິຄ່ອຍໆ ທັງຍ່າງອອກໄປທາງປະຕູໜ້າຕຶກຈົນຮອດລານຈອດລົດ. ຕຸ້ຍ ແລະກິ່ງໄດ້ຍິນສຽງເຂົາຮ້ອງເພງຊາດຝຣັ່ງເສດປິວວ່ອນຜ່ານປ່ອງແວ່ນແກ້ວເທິງຫຼັງຄາ ກ່ອນທີ່ສຽງນັ້ນຈະພົ້ນຜ່ານສຸດເຂດແຫ່ງການໄດ້ຍິນໃນທີ່ສຸດ.

ພາຍໃນຫ້ອງການປາກົດວ່າມິດງຽບ ແມ່ນແຕ່ພວກແມງສາບກໍຍັງບໍ່ພາກັນສົ່ງສຽງຫຍັງເລີຍ. ຖືເປັນຄັ້ງທຳອິດທີ່ຕຸ້ຍບໍ່ຮູ້ຈະເວົ້າຫຍັງອອກມາ ແມ່ນແຕ່ກິ່ງ ເຊິ່ງຢູ່ໃນອີກມິຕິໜຶ່ງຂອງເຂົາເອງ ກໍຍັງສາມາດບອກໄດ້ເລີຍວ່າ ສິ່ງທີ່ຕົນເຫັນນັ້ນມັນຜິດປົກກະຕິໄປແລ້ວ.

“ມື້ນີ້ສະຫາຍທ່ານໝໍເບິ່ງ ... ເບິ່ງຄືຄົນບໍ່ເຕັມບາດນິແຫຼະ.”

4

# ທຣັນຜູ້ເປັນອ້າຍໃຫຍ່

ເມື່ອສັງເກດຈາກບັນຍາກາດອັນໜ້າຕື່ນເຕັ້ນທັງໝົດແລ້ວ, ມັນກໍໜ້າແປກໃຈພໍສົມຄວນທີ່ມື້ນີ້ຍັງເປັນວັນພະຫັດ. ທັງເປັນອີກມື້ທີ່ສີຣິມາຣອດຫ້ອງການເຊົ້າກວ່າທຸກຄົນ ແຕ່ຄັ້ງນີ້ເຂົາຊໍ້າພັດຮູ້ສຶກຄືກັບວ່າທຸກສິ່ງຢ່າງໃນຫົວໄດ້ຮັບການຟື້ນຟູ ທັງມີພະລັງງານຕື່ມເຕັມໃໝ່ໆ ແບບບອກບໍ່ຖືກ. ເຂົາໄຂກະແຈເຂົ້າໄປຕຶກອາຄານ ພ້ອມເປີດປະຕູປ່ອງຢ້ຽມທັງປ່ອຍໃຫ້ພວກແມງສາບທີ່ມີຈຳນວນຫຼາຍກວ່າເກົ່າພາກັນແລ່ນສວ່ານສົນໄປມາຢ່າງບໍ່ຄິດຊີວິດເພື່ອຊອກຫາບ່ອນລີ້ຊ່ອນ.

ສີຣິເຂົ້າໄປເບິ່ງແຂກໃນຫ້ອງເບີໜຶ່ງກ່ອນຈະເລີ່ມການພະຈົນໄພທາງໂທລະສັບຄັ້ງຍິ່ງໃຫຍ່. ສົບຂອງຊາຍຄົນນັ້ນມີສະພາບແບບບໍ່ເປັນຕາເບິ່ງເລີຍ, ຜິວໜັງບວມໆ ເລີ່ມປ່ຽນໄປ ຄ້າຍກັບວ່າມັນໄດ້ລອກອອກແລ້ວນຳມາຫຍິບຕໍ່ເຂົ້າກັນດ້ວຍຄວາມເຮັ່ງຮີບ, ຜິວຊັ້ນນອກເລີ່ມຈະກາຍເປັນສີນ້ຳຕານ ໂດຍບໍ່ຈຳເປັນຕ້ອງທຳການກວດສອບໃດໆກໍສາມາດເຫັນໄດ້ແຈ້ງວ່າສົບດັ່ງກ່າວໄດ້ແຊ່ໄວ້ຢູ່ໃນນ້ຳດິນເຖິງສອງ ຫຼືສາມອາທິດມາແລ້ວ.

ລາວດຶງຜ້າຄຸມອອກຈົນໝົດແລະສັງເກດເຫັນສາຍຣັດຢາງພລາສຕິກໜາໆ ພັນອ້ອມຂໍ້ຕີນຊ້າຍຂອງສົບ, ຄວາມແໜ້ນຂອງເຊືອກໄດ້ເຮັດໃຫ້ຜິວໜັງຢູ່ບໍລິເວນນັ້ນຢູ່ຜິດຮູບຜິດຮອຍໄປໝົດ.

ລາວສັງເກດໃນໃຈວ່າມີເລືອດຄ້າງຢູ່ດ້ານຫຼັງຂອງຮ່າງກາຍ ແລະອ້ອມຮອບຂາທັງສອງຂ້າງ. ຖ້າສົບຫາກຍັງຟູຢູ່ໜ້ານ້ຳໃນຕອນທີ່ເຂົາຕາຍໄປແລ້ວ, ສະພາບຮອຍຂຽວຊໍ້າຫຼັງການຕາຍກໍຈະປາກົດຢູ່ດ້ານໜ້າຂອງສົບ ແຕ່ປາກົດວ່າບໍ່ມີແບບນັ້ນເລີຍ.

ສີຣິສັງເກດເບິ່ງສິ່ງຕ່າງໆ ທັງໝົດແລ້ວກໍດຶງເອົາຜ້າຄຸມປົກຮ່າງຄົງອັນໄຮ້ວິນຍານນັ້ນຄືເກົ່າ ກ່ອນຈະອອກໄປພົບຜູ້ຊ່ຽວຊານທີ່ເຂົ້າໃຈໃນຄວາມມະຫັດສະຈັນຂອງເຕັກໂນໂລຊີໂທລະສັບ.

**********

ສາວງາມຄົນໜຶ່ງກຳລັງຈັດເອກະສານເຂົ້າແຟ້ມ ແຕ່ແລ້ວນາງກໍຫັນໜ້າໄປເບິ່ງວ່າແມ່ນໃຜມາ.

"ຂ້ອຍຢາກໂທໄປຫາພະແນກຍຸຕິທຳ."

"ໂທລະສັບຕັ້ງຢູ່ໂຕະທາງຫຼັງທ່ານໝໍນັ້ນແຫຼະ ພຽງແຕ່ຂຽນໝາຍເລກໂທອອກໃສ່ໃນປຶ້ມ ພ້ອມຊື່ໃຜໂທຫາໃຜ ແລະຈັກນາທີ."

ເວົ້າສຸດນາງກໍຫັນໜ້າກັບໄປທີ່ຕູ້ເອກະສານ ສ່ວນສີຣິຍັງຢືນແບບລັ່ງເລໃຈຢູ່ບ່ອນນັ້ນ ເຊິ່ງຍັງບໍ່ພ້ອມທີ່ຈະແນມເບິ່ງຮອດໂທລະສັບຊ້ຳ. ຍິງສາວຄົນນັ້ນເຫຼືອບສາຍຕາຜ່ານບ່າໄຫຼ່ຂອງຕົນ ແຕ່ກໍຍັງເຫັນສີຣິຢືນຢູ່ບ່ອນເກົ່າ.

"ຂ້ອຍຄິດວ່າເຈົ້າຈະເປັນຄົນເຮັດໃຫ້ຂ້ອຍ," ລາວເວົ້າຄ່ອຍໆ.

"ເຮັດຫຍັງລະ?"

"ຕໍ່ສາຍໃຫ້ຂ້ອຍນັ້ນລະ."

"ບໍ່ຈຳເປັນດອກ. ມັນກະເປັນໂທລະສັບທຳມະດາຊື່ໆ ບໍ່ອາໄສພະນັກງານຕໍ່ສາຍໃຫ້ກໍໄດ້."

ເຂົາຫັນໄປແນມເບິ່ງເຄື່ອງຈັກສີດຳອັນມົດຄື້ມ ພ້ອມຍ່າງເບັດໜ້າໄປທາງບ່ອນທີ່ໂທລະສັບຕັ້ງຢູ່ແບບກ້າໆ ເກງໆ. ຕົວເລກໃນຊ່ອງກົມໆ ເທິງແປ້ນໂທລະສັບໄດ້ຈ້ອງມາທີ່ເຂົາ. ສີຣິສັງເກດພິຈາລະນາຢູ່ຄາວໜຶ່ງ ກ່ອນຈະຈັບເອົາໂທລະສັບຂຶ້ນມາແນບໄວ້ທີ່ຫູຢ່າງລະມັດລະວັງ ພ້ອມຟັງສຽງກະຫຶ່ມອັນອຶບອຸ່ນ.

"ສະບາຍດີ."

ແຕ່ກໍບໍ່ມີການຕອບຮັບຫຍັງເລີຍ.

"ທ່ານບໍ່ເຄີຍໃຊ້ໂທລະສັບມາກ່ອນແມ່ນບໍ?" ນາງຄົນນັ້ນວາງມືຈາກການຈັດເອກະສານ ແລ້ວຍ່າງມາຢືນຢູ່ທາງຫຼັງຂອງສີຣິ. ເຖິງເວລາແລ້ວທີ່ຈະຕ້ອງເວົ້າຄວາມຈິງອອກມາ ເຂົາຈິ່ງຍອມສາລະພາບວ່າ.

"ບໍ່ເຄີຍຈັກເທື່ອ."

"ແມ່ນຫວາທ່ານໝໍ?"

ຖ້າຈະວ່າໄປແລ້ວ ມັນກໍຂ້ອນຂ້າງຍາກທີ່ຈະເຊື່ອໄດ້ວ່າ ຕະຫຼອດເຈັດສິບສອງປີຜ່ານມານັ້ນ ສີຣິບໍ່ເຄີຍໃຊ້ໂທລະສັບແມ່ນແຕ່ຄັ້ງດຽວ. ແຕ່ປະເທດລາວກໍຍັງບໍ່ທັນລຶ້ງເຄີຍກັບການໃຊ້ໂທລະສັບ ທົ່ວປະເທດມີໂທລະສັບບໍ່ຮອດເກົ້າຮ້ອຍເຄື່ອງ ແລະສ່ວນໃຫຍ່ກໍໃຊ້ສະເພາະໃນບັນດາຫ້ອງການຕ່າງໆ ແມ່ນແຕ່ຢູ່ໃນຊ່ວງວິກິດແຫ່ງການສໍ້ລາດບັງຫຼວງທີ່ຢູ່ໃນອັດຕາສູງສົມຄວນຈົນໜ້າວິນຫົວ ກໍຍັງມີສະເພາະຄອບຄົວທີ່ມີຖານະດີເທົ່ານັ້ນທີ່ມີໂທລະສັບໃຊ້ໃນຄົວເຮືອນຂອງຕົນເອງ.

ໃນຖານະນັກສຶກສາຜູ້ທຸກຍາກໃນປະເທດຝຣັ່ງເສດ ການບໍ່ມີໂທລະສັບໃຊ້ຈິ່ງບໍ່ເປັນປັນຫາ ຍິ່ງໄປກວ່ານັ້ນກໍຍັງບໍ່ມີໃຜໂທມາ ຫຼືຕ້ອງໂທຫາອີກ. ແຕ່ເຖິງປານນັ້ນສີຣິກໍຍັງມີຄວາມຫວາດລະແວງຕໍ່ສິ່ງຕ່າງໆ ຮອບຕົວ. ດັ່ງນັ້ນຈິ່ງບໍ່ໜ້າແປກໃຈເລີຍສຳລັບຄົນທີ່ໃຊ້ເວລາສ່ວນໃຫຍ່ຢູ່ໃນປ່າເກືອບຕະຫຼອດຊີວິດຈິ່ງປາສາຈາກການນຳໃຊ້ເຄື່ອງກົນໄກອັນເປັນຕາຢ້ານນີ້.

"ຂ້ອຍເຄີຍແຕ່ສົນທະນາຜ່ານເຄື່ອງສິ່ງວິທະຍຸພາກສະໜາມ ແຕ່ກໍມີຊ່າງຢູ່ຫັ້ນຕະຫຼອດເພື່ອໝູນດ້າມຈັບໃຫ້." ສີຣິເວົ້າທັງຍິ້ມ.

ເຫັນໄດ້ຊັດເຈນວ່ານາງຄົນນັ້ນເປັນຍິງສາວທີ່ມີນ້ຳໃຈງາມອີກຄົນໜຶ່ງ ເພາະສັງເກດເຫັນນ້ຳໃສໆ ໄຫຼຊຶມຈາກຂອບຕາທັງສອງຂ້າງຂອງນາງ ເມື່ອພົບວ່າຕົນເອງກຳລັງຢືນຢູ່ຕໍ່ໜ້າທ່ານໝໍຣຸ່ນອາວຸໂສຜູ້ດ້ອຍໂອກາດຄົນນີ້. ນາງຈັບເອົາຫູໂທລະສັບຈາກມືສີຣິແລ້ວຍິ້ມຕອບກັບ.

"ເບີໂທທີ່ທ່ານຈະໂທຫາແມ່ນຫຍັງທ່ານໝໍ?"

"ເບີໂທຫວາ?"

ດົນເຕີບ ນາງຈິ່ງຄົ້ນຫາເລກໂທຂອງພະແນກຍຸຕິທຳໃນສະໝຸດໂທລະສັບເຫຼັ້ມບາງໆ ພ້ອມສອນໃຫ້ສີຣິຮູ້ວິທີໝູນແປ້ນໂທໄປຮອບໆ ໜ້າເຄື່ອງ, ສຸດທ້າຍແລ້ວກໍບໍ່ມີຫຍັງຫຍຸ້ງຍາກດັ່ງທີ່ຄິດ.

ເປັນໄປຢ່າງທີ່ສີຣິຄາດຫວັງໄວ້ອີ່ຫຼີ, ຜູ້ພິພາກສາແຫງຫາກໍໄປຮອດສານເພື່ອເປັນປະທານໃນການຮ້ອງຟ້ອງຄະດີຢ່າຮ້າງ. ເຊິ່ງເປັນຄະດີກ່ຽວກັບການໃຊ້ຄວາມຮຸນແຮງພາຍໃນຄອບຄົວ ແລະມີການຮ້ອງຟ້ອງເພື່ອພິສູດຄວາມເປັນພໍ່ຈົນລົ້ນແຟ້ມເອກະສານແຕ່ກໍບໍ່ມີຫຍັງເຖິງຂັ້ນຮ້າຍແຮງຈົນຕ້ອງເອີ້ນວ່າອາຊະຍາກຳ. ມະນີວອນ, ເຊິ່ງແມ່ນສະໝຽນຂອງຜູ້ພິພາກສາແຫງ ໄດ້ຢືນຢັນກັບສີຣິວ່າ ຜູ້ພິພາກສາໜຸ່ມໃຈຮ້າຍແຮງທັງຫວັງວ່າຈະພົບກັບລາຍງານການຊັນນະສູດສົບຢູ່ໜ້າໂຕະຂອງເຂົາເມື່ອກັບຈາກສານໃນຕອນບ່າຍ.

ສີຣິຖາມຂ່າວລູກຂອງມະນີວອນທີ່ຫາກໍເກີດ ລວມທັງເລື່ອງໝູໆ ຂອງສາມີນາງທັງຄ່ອຍໆ ຮູ້ສຶກສະບາຍອີກສະບາຍໃຈກັບໂທລະສັບຢູ່ໃນມືຂອງຕົນ ຈົນຍິງສາວຄົນນັ້ນຄິດຢາກຈະຍາດມັນອອກມາວາງສາຍໄວ້ ເພາະຢ້ານຄົນອື່ນໂທເຂົ້າມາ.

ເທົ່າກັບວ່າ ສີຣິປະສົບຄວາມສຳເລັດອັນສຳຄັນທັງສອງເລື່ອງ ກ່ອນທີ່ຍັງບໍ່ທັນໄດ້ເລີ່ມຕົ້ນກິດຈະວັດປະຈຳວັນຊ້ຳອີກ ໂດຍສະເພາະກໍແມ່ນ ເຂົາເກືອບຈະສາມາດໃຊ້ໂທລະສັບໄດ້ດ້ວຍຕົນເອງ ແລະຍັງໄດ້ຕໍ່ສາຍຫາພະແນກຍຸຕິທຳ ໂດຍບໍ່ຈຳເປັນຕ້ອງໄປໂອ້ລົມແບບເຊິ່ງໜ້າກັບຜູ້ຊາຍຮ່າງນ້ອຍທີ່ໜ້າລຳຄານຄົນນັ້ນເລີຍ ແຕ່ໂຊກບໍ່ດີໃນ

ເລື່ອງທີສາມທີ່ເຂົາຍັງບໍ່ທັນສຳເລັດຫຍັງຈັກຢ່າງໃນການຊັນນະສູດສົບ.

**********

ຕຸ້ຍຢືນຢູ່ທາງຂ້າງສີຣິ ເຊິ່ງມີຄວາມກະຕືລືລົ້ນຫຼາຍກວ່າແຕ່ກ່ອນ ໃນມືຂອງນາງມີປຶ້ມບັນທຶກຕິດຢູ່ ສ່ວນສີຣິກໍທຳການບັນລະຍາຍໃນສິ່ງທີ່ເຂົາສັງເກດເຫັນແບບຊ້ຳໄປຊ້ຳມາ. ເຂົາສັງເກດເຫັນສັນຍານແປກໆ ອີກຫຼາຍຈຸດຢູ່ເທິງຜິວໜັງໃນສະພາບທີ່ຜິດຮູບຜິດຮອຍ. ສິ່ງທີ່ເຫັນໄດ້ຊັດເຈນທີ່ສຸດກໍແມ່ນຮອຍໄໝ້ຢູ່ບໍລິເວນຫົວນົມກັບອະໄວຍະວະເພດ ແຕ່ພັດບໍ່ພົບເຫັນຢູ່ຈຸດອື່ນໃດເລີຍ.

ຕຸ້ຍອະທິບາຍຊີ້ແຈງໄດ້ຂ້ອນຂ້າງຖືກຕ້ອງວ່າ ເຊືອກທີ່ຮັດອ້ອມຮອບຂໍ້ຕີນນັ້ນສັນນິຖານວ່າຕ້ອງຜູກຕິດກັບວັດຖຸໃດໜຶ່ງທີ່ໜັກພໍສົມຄວນຈົນເຮັດໃຫ້ຮ່າງຄົງຈົມລົງພື້ນນ້ຳໄດ້. ແຕ່ມີສິ່ງໜຶ່ງທີ່ນາງສັງເກດເຫັນອີກຄັ້ງໂດຍທີ່ສີຣິຍັງຄິດບໍ່ເຖິງ.

"ເປັນຫຍັງພວກເຂົາບໍ່ໃຊ້ສາຍໄຟ ຫຼືເສັ້ນລວດ ຫຼືອີ່ຫຍັງກໍໄດ້ມາມັດລະ?"

"ໝາຍຄວາມວ່າແນວໃດ?"

"ອືມ ກໍແນວວ່າໄດ້ລົງທຶນຖ່ວງຄົນຜູ້ນີ້ໃຫ້ຈົມນ້ຳແລ້ວ ກະບໍ່ຄວນຊິມາໃຊ້ເຊືອກຫ່ວຍໆ ແບບນີ້ຕິເບາະ. ໃຜໆ ກໍຮູ້ດີວ່າເຊືອກນິລົງລາຄາຖືກຂອງຫວຽດນາມມັນບໍ່ແມ່ນຈະທົນທານພໍຈະແຊ່ນ້ຳໄດ້ດົນປານນີ້ ຄົນເຂົາໃຊ້ເຊືອກນິລົງເພື່ອຜູກໄມ້ໄຜ່ສຳລັບເຮັດຮ້ານນັ່ງ ແຕ່ພໍຮອດຍາມຝົນ ຮ້ານນັ່ງຊຸມນັ້ນກໍພັງລົງມາ ຍ້ອນເຊືອກເປື່ອຍກ່ອນ."

"ອືມ, ບາງເທື່ອພວກເຂົາອາດຟ້າວແດ່ກໍເລີຍຫາແນວດີໆ ມາຜູກໄວ້ບໍ່ທັນ ແຕ່ມັນກໍໜ້າສົນໃຈຢູ່ໃດຈົດໄວ້ໂລດກໍດີ." ຕຸ້ຍຮີບຈົດລົງປຶ້ມບັນທຶກດ້ວຍຄວາມພາກພູມໃຈ.

ແລະແລ້ວຈຸດສຸດທ້າຍທີ່ພວກເຂົາພົບກ່ອນທີ່ສີຣິຈະລົງມືທຳການຜ່າສົບເພື່ອຊັນນະສູດ ກໍຄືສິ່ງທີ່ປາກົດຢູ່ເທິງໃບໜ້າຂອງຊາຍຄົນນີ້. ຄາງກະໄຕຂອງສົບອ້າຄ້າງ ທັງມີລັກສະນະເປັນຕາຢ້ານ ເຊິ່ງທັງສອງຍັງບໍ່ເຄີຍພົບເຫັນສົບໃດມາກ່ອນ ສີໜ້າແບບນີ້ມັນບໍ່ຄວນເກີດຂຶ້ນພາຍຫຼັງທຳການຊັນນະສູດສົບເລີຍ.

ພໍແຕ່ທຳການແຫກຜ່າເຂົ້າໄປຂ້າງໃນຂອງສົບ ພ້ອມປັບຈຸດຮັບກິ່ນຂອງຮູດັງໃຫ້ລຶ້ງເຄີຍກັບກິ່ນທີ່ບໍ່ເພິ່ງປາຖະໜານັ້ນແລ້ວ ກໍມີເລື່ອງເຮັດໃຫ້ສີຣິຕ້ອງປະຫຼາດໃຈເຖິງໜຶ່ງ ຫຼືສອງຢ່າງ ເນື່ອງຈາກສະພາບສົບປ່ຽນແປງຈົນເສຍຮູບເສຍຮອຍຄືແນວນັ້ນ ຈຶ່ງເປັນການຍາກທີ່ຈະສາມາດລະບຸວ່າ ຊາຍຄົນນີ້ເສຍຊີວິດຈາກການຈົມນ້ຳຕາຍ ແຕ່ຄວາມຈິງແລ້ວຊ້ຳພັດກົງກັນຂ້າມ ຍ້ອນມີສິ່ງໜຶ່ງທີ່ສະແດງໃຫ້ເຫັນວ່າ ມັນບໍ່ແມ່ນຄວາມຈິງຄືແນວນັ້ນ.

ໃນການຈົມນ້ຳຈືດແມ່ນຈະໃຊ້ເວລາປະມານສີ່ນາທີ. ໃນເວລານັ້ນ ຈຳນວນເລືອດ

ທີ່ໄຫຼວຽນໃນຮ່າງກາຍປະມານເຄິ່ງໜຶ່ງຈະຖືກນຳໄປປະສົມກັບຂອງແຫຼວທີ່ຖືກດູດເຂົ້າໄປ ແລະຖ້າເຫຍື່ອຫາກຍັງຄົງຫັນໃຈຢູ່ຂະນະທີ່ກຳລັງຈົມນ້ຳ ກໍຈະປາກົດມີນ້ຳ ແລະພວກໄຄນ້ຳຖືກດູດເຂົ້າໄປຢູ່ໃນຊ່ວງເລິກໆ ຂອງປອດແນ່ນອນ.

ສິຣິເກັບເອົາຕົວຢ່າງຈາກຊິ້ນສ່ວນຂອງກະເພາະ, ປອດ ແລະຫຼອດເລືອດແດງ ແຕ່ສັນຊາດຕະຍານເບື້ອງຕົ້ນໄດ້ບອກໃຫ້ເຂົາຮູ້ວ່າ ສິບນັ້ນຕາຍກ່ອນທີ່ຮ່າງຈະພຸ່ງລົງໄປຈົມໃນນ້ຳແລ້ວ ເຊິ່ງບໍ່ມີຫຍັງເປັນຕົວຊີ້ບອກໄວ້ວ່າຊາຍຄົນນັ້ນຍັງຫັນໃຈຢູ່ ຫຼືແມ່ນແຕ່ຫົວໃຈກໍຍັງເຕັ້ນຢູ່. ແຕ່ນ້ອງກິ່ງກໍຄວນຈະໄດ້ຮັບການອະນຸໂລມສຳລັບການປະເມີນຜົນຂອງເຂົາໃນມື້ກ່ອນໜ້ານັ້ນ ເນື່ອງຈາກສັນຍານອື່ນໆ ແມ່ນຖືກຮວບຮວມໄວ້ຢູ່ໃນຫັ້ນທັງໝົດຄວາມຈິງຊາຍຄົນນັ້ນອາດຈົມຢູ່ໃນນ້ຳເປັນເວລາດົນເຖິງສອງ ຫຼືສາມອາທິດແນ່ນອນ.

"ປະການທີສອງ ..."

ຜູ້ຊາຍຄົນໜຶ່ງສົ່ງສຽງດັງໂວຍວາຍມາປາກົດຢູ່ໜ້າປະຕູ ມືຂອງເຂົາຈັບຜ້າປິດປາກຖືຄ້າງໄວ້ ທາງສາຍຕາກໍຈ້ອງມາທີ່ທີມງານຄ້າຍກັບວ່າເຂົາຈັບໄດ້ວ່າທີມງານຊັນນະສູດສົບກຳລັງຫຼິ້ນແນວສົກກະປົກຢູ່.

"ແມ່ນພວກເຈົ້າພາກັນເຮັດຫຍັງເກາະ ຄືມາເໝັນຄັບທີບຢູ່ນີ້?"

ສິຣິຮອດບໍ່ເງີຍໜ້າຂຶ້ນແນມເບິ່ງຊ້ຳ.

"ໝີເຫາະແມ."

"ບໍ່, ຈົນກວ່າເຈົ້າເຊົາເຮັດໃຫ້ກິ່ນເໝັນເນົ່າຈົນຮາກຊິແຕກນີ້ໝົດໄປ. ແມ່ນຫຍັງຫັ້ນ? ສົບຄົນຕາຍຫວາ?"

"ນ້ອງກິ່ງ ມາເອົາຄົນໄຮ້ມາລະຍາດຜູ້ນີ້ອອກໄປຈາກຫ້ອງເກັບສົບຂອງພວກເຮົາໄດ້ບໍ?"

ກິ່ງຍ່າງເບັດໜ້າໄປຫາຊາຍຄົນນັ້ນ ແຕ່ຜູ້ບຸກລຸກຊ້ຳຜັດຫຍັບເຂົ້າໄປລີ້ຢູ່ຂອບປະຕູກ່ອນທີ່ຈະຖືກທຳຮ້າຍແຕ່ກໍຍັງສົ່ງສຽງຮ້ອງໂຫວກເຫວກ.

"ຂ້ອຍຊິໄປລາຍງານໃຫ້ຜູ້ອຳນວຍການໂຮງໝໍ ຈັ່ງແມ່ນມັນເໝັນຄັກ. ປານນີ້ຍັງບໍ່ເຊົາເໝັນ."

ສິຣິຫົວແບບບໍ່ສົນໃຈກັບສິ່ງນັ້ນເລີຍ.

"ຮອດໃສແລ້ວ?"

"ປະການທີສອງ ..."

"ແມ່ນແຫຼະ. ປະການທີສອງເບິ່ງຄືກັບວ່າມີຄວາມຜິດປົກກະຕິຢູ່ອ້ອມຮອບຊ່ອງໜ້າເອິກ, ຮອຍຂຽວຊ້ຳທີ່ປາກົດນີ້ໄດ້ບົ່ງຊີ້ວ່າຢູ່ພາຍໃນຮ່າງກາຍມີເລືອດກ້າມໝັກພໍສົມຄວນ."

“ສາເຫດເກີດຈາກຫຍັງ?”

“ຍັງບໍ່ທັນຮູ້ແຈ້ງເທື່ອ ພວກເຮົາຈະຊັນນະສູດພາຍຫຼັງ.”

ສິຣິບໍ່ພົບຫຍັງອີກເລີຍ. ສະພາບຕັບໄດ້ສະແດງຜົນຂອງທາດເຫຼົ້າ ແຕ່ກໍມີປະລິມານບໍ່ພຽງພໍທີ່ຈະຂ້າຊີວິດຊາຍຄົນນັ້ນໄດ້ ສ່ວນຫົວໃຈ ແລະສະໝອງກໍບໍ່ພົບຄວາມຜິດປົກກະຕິໃດໆ ຂະນະທີ່ຕຸ້ຍແລະກິ່ງທຳການຫຍິບສົບເຂົ້າໃສ່ກັນ ສິຣິກໍທຳການກວດສອບຊິ້ນສ່ວນຜິວໜັງດ້ວຍກ້ອງຈຸລະທັດ.

“ຕຸ້ຍ! ມາພີ້ຄາວໜຶ່ງ ມາຊ່ວຍເບິ່ງອັນນີ້ນຳກັນໄດ້ບໍ?” ຕຸ້ຍຟ້າວໄປທີ່ແປ້ນມ້າພ້ອມໃຊ້ຕາສອດສ່ອງໃສ່ກັບເລນ. “ເຫັນຫຍັງບໍ?”

“ເອ ມັນເປັນສີຂຽວໆ ເນາະ? ເປັນຈຸດປະກາຍເລັກໜ້ອຍວ່າບໍ?” ນາງເລື່ອນໄປມາ. “ຫຼືວ່າສີດຳ? ມີຈຸດປະກາຍນ້ອຍໆ ຫຼາຍຂຶ້ນອີກໃດນິ? ງາມຂະໜາດເລີຍ ມັນແມ່ນຫຍັງທ່ານໝໍ?”

“ນີ້ແມ່ນຊິ້ນສ່ວນຜິວໜັງທີ່ເອົາມາຈາກບໍລິເວນອ້ອມຮອບຫົວນົມທີ່ເບິ່ງຄືວ່າມັນຖືກເຜົາໄໝ້. ສ່ວນສີຂຽວອາດເກີດຈາກທອງແດງ ແລະສ່ວນທີ່ເປັນປະກາຍເຫຼື້ອມໆ ອາດຈະແມ່ນມີໂລຫະສະສົມຢູ່.”

“ໝາຍຄວາມວ່າແນວໃດ?”

“ຂ້ອຍຈະທຳການກວດສອບທາງເຄມີຕື່ມຢູ່ລີເຊ ແຕ່ຂ້ອຍບອກໄດ້ເລີຍວ່າຮອຍໄໝ້ຊຸມນີ້ຖືກຊັອດດ້ວຍໄຟຟ້າ.”

“ບໍ່ວ່າຕິເບາະ”

“ມີການຊັອດໄຟຟ້າຢູ່ບໍລິເວນຫົວນົມ ແລະໜ່ວຍອັນທະ ມັນບອກຫຍັງໄດ້ແດ່?”

“ອຸຍ.”

ສິຣິຫົວຂຶ້ນ.

“ເຈົ້າລອງເວົ້າໃຫ້ຄືກັບສົມເປັນນັກສືບແດ່ໄດ້ບໍ?”

ຕຸ້ຍຄົ້ນຄິດຄາວໜຶ່ງ ກ່ອນຈະເວົ້າຂຶ້ນ.

“ຂ້ອຍຄິດວ່າຕ້ອງແມ່ນການທໍລະມານ.”

“ຄິດຄືກັນເລີຍຊັ້ນ ຄົງຊິບໍ່ມີໃຜໄປຫຼິ້ງເຜີເອົາໄຟຟ້າຊັອດຫົວນົມ ກັບອັນທະໂຕເອງແບບບໍ່ໄດ້ຕັ້ງໃຈດອກເນາະ. ຂ້ອຍເອງກໍຄົງຈະຄິດຫາຄຳອະທິບາຍແບບອື່ນບໍ່ໄດ້ອີກແລ້ວແຫຼະ.”

“ຍ້ອນແນວນັ້ນເຂົາຈິ່ງຖືກທໍລະມານແລ້ວກໍມັດຕິດກັບກ້ອນຫີນ ກ່ອນຈະຖືກໂຍນລົງໄປໃນອ່າງເກັບນ້ຳ, ສົງໄສທ້າວນີ້ຕ້ອງເປັນຜູ້ທີ່ຄົນນິຍົມຫຼາຍແທ້ແຫຼະ. ທ່ານໝໍຄິດວ່າເຂົາຕາຍຍ້ອນຖືກທໍລະມານບໍ?”

“ເທົ່າທີ່ຂ້ອຍເຫັນແລ້ວມັນຍັງບໍ່ມີຫຼັກຖານຊີ້ແຈງວ່າ ເຂົາຖືກທໍລະມານຈົນຕາຍ. ຂ້ອຍສົງໄສວ່າເລືອດໃນຊ່ອງເອິກອາດຈະເຊື່ອມໂຍງກັນ ແຕ່ອັນນີ້ກໍໄດ້ແຕ່ສົງໄສເທົ່ານັ້ນແຫຼະ. ຂ້ອຍຈະກວດເບິ່ງໃນປຶ້ມຕຳລາຄືນອີກເທື່ອໜຶ່ງ ເຈົ້າຢາກຈະຂຽນມັນລົງໃສ່ໃນບົດລາຍງານບໍ?”

“ຂ້ອຍຫວາ?”

“ເປັນຫຍັງລະ? ເຈົ້າກໍຮູ້ເຫັນມາຫຼາຍພໍລະເດ ພຽງແຕ່ເທື່ອນີ້ຂຽນໂຕໜັງສືໃຫ້ມັນໃຫຍ່ໆ ແດ່ຈິ່ງຈະອ່ານໄດ້.”

“ທ່ານໝໍຢາກໃຫ້ຂ້ອຍພິມເອົາບໍ່?”

“ເຈົ້າພິມໄດ້ບໍ່?”

ກົ່ງຫົວຂຶ້ນ.

“ນາງ ... ພິມ ... ພິມເກັ່ງເດີ.”

“ຄັກເລີຍຊັ້ນ ເຈົ້າຢາກໄດ້ເຄື່ອງພິມດີດບໍ່?”

“ໜ້າຈະຊ່ວຍໄດ້ດີ. ໃນຫ້ອງການບໍລິຫານມີພິມດີດເຄື່ອງໜຶ່ງ ເຊິ່ງເຂົາອະນຸຍາດໃຫ້ຂ້ອຍລອງພິມໄດ້.”

ສິຣິສ່າຍຫົວໄປມາ ທັງເຮັດປາກຈຸເຂົ້າ.

“ເຈົ້າຮູ້ບໍ່? ຂ້ອຍຄິດວ່າຕົນເອງສະຫຼາດພໍທີ່ເລືອກເອົາເຈົ້າມາເປັນຜູ້ຝຶກງານຄົນໃໝ່ຂອງຂ້ອຍ. ແລ້ວມີໃຜຮູ້ບໍ່ວ່າໝໍຜູ້ເຂົ້າມາບ່ອນນີ້ ແລ້ວຮ້ອງໂຫວກເຫວກໃສ່ພວກເຮົານັ້ນເປັນໃຜ?”

“ບໍ່ຮູ້.”

“ບໍ່ຮູ້ເດ.”

**********

ບົດລາຍງານຖືກຕິພິມ ທັງມີການສະກົດຄຳຢ່າງຖືກຕ້ອງ ພ້ອມວາງໄວ້ຢູ່ໜ້າໂຕະເຮັດວຽກຂອງສິຣິຮຽບຮ້ອຍແລ້ວໜຶ່ງຊົ່ວໂມງກ່ອນທີ່ເຂົາຈະກັບມາຈາກການພິຈາລະນາຄະດີໃນຄົວເຮືອນ. ສົບຖືກນຳເຂົ້າໄວ້ໃນຕູ້ແຊ່ແຂງ ສ່ວນຫ້ອງເກັບສົບກໍສະອາດຈົບງາມ. ຕຸ້ຍຍອມໃຫ້ສິຣິໃຊ້ລົດຖີບຂອງຕົນໄດ້ກໍຕໍ່ເມື່ອເຂົາສັນຍາວ່າຈະບໍ່ຂີ່ມັນໄປຕຳກຳແພງຮົ້ວໃດໆ ຫຼືແມ່ນແຕ່ຄົນຂາຍຝອຍຢູ່ແຄມທາງ ພໍແຕ່ຈັບລົດຖີບໄດ້ ສິຣິກໍຂີ່ມັນມຸ່ງໜ້າໄປທາງລີເຊ.

ເມື່ອໄປຮອດກໍເຫັນອາຈານອູ້ມກຳລັງສອນຢູ່ ສະນັ້ນສິຣິຈິ່ງນັ່ງລໍຖ້າຢູ່ຂ້າງນອກທັງເຜີດເພີນກັບສຳນຽງພາສາຣັດເຊຍ, ປະຫວັດສາດຍຸກໃໝ່ ແລະອຸດົມການທາງການ

ເມືອງ ເຊິ່ງສອນໂດຍອາຈານທີ່ເຄີຍສອນພາສາຝຣັ່ງ, ອັງກິດ ແລະຄູສອນວິຊາປະຫວັດສາດບູຮານ ຜູ້ທີ່ຝັກໄຝ່ໃນລັດທິຄອມມູຍນິດ ເຊິ່ງກຳລັງສອນຢູ່ຫຼາຍໆ ຫ້ອງອ້ອມຮອບສະຖາບັນ. ວິທີການສອນແມ່ນພວກເຂົາອ່ານຈາກປຶ້ມຕຳລາຮຽນໂດຍກົງທີ່ຮຽບຮຽງໂດຍກົມສາມັນສຶກສາ ສ່ວນນັກຮຽນແຕ່ລະຄົນກໍພາກັນຕັ້ງໜ້າຈົດກ່າຍໃນສິ່ງທີ່ພວກຕົນໄດ້ຍິນລົງໃສ່ປຶ້ມຂອງໃຜລາວເຊິ່ງບໍ່ມີການຕັ້ງຄຳຖາມໃດໆ ເພາະຄູເອງກໍອາດຈະບໍ່ຮູ້ຈັກຄຳຕອບຢູ່ແລ້ວ. ແມ່ນແຕ່ຈະມີການເພີ່ມ ຫຼືລຶບຫຼັກສູດການຮຽນ-ການສອນເຫຼົ່ານີ້ອອກໄປ ກໍຍັງບໍ່ໄດ້ສິ່ງຜົນກະທົບຕໍ່ການປ່ຽນແປງທາງວິຖີຊີວິດຂອງບັນດານັກຮຽນ ແລະຄູອາຈານຜູ້ເຊິ່ງອາໄສຢູ່ໃນເມືອງຫຼວງເຫຼົ່ານີ້ພໍເທົ່າໃດ.

ມັນແມ່ນຊ່ວງຫົວລ້ຽວຫົວຕໍ່ແບບງຽບໆ ຈາກສິ່ງທີ່ທ່ານປະທານປະເທດຮ້ອງວ່າ "ຍຸກການເປັນລູກແຫຼ້ງຕົນມືຂອງອາເມລິກາ" ມາເປັນລັດທິມາກ-ເລນິນ. ພັກປະຊາຊົນປະຕິວັດລາວ ເຊິ່ງແຕ່ເດີມເຄີຍເປັນຝ່າຍແນວລາວຮັກຊາດນັ້ນ ໄດ້ຫວ່ານເມັດພືດແຫ່ງການກໍ່ກະບົດມາເປັນເວລາດົນນານກ່ອນເດືອນທັນວາ ໑໙໗໕. ຢູ່ຕາມບ້ານຕ່າງໆມີການລວມຕົວກັນຂອງກຸ່ມຜູ້ສະໜັບສະໜູນທັງພ້ອມທີ່ຈະດຳເນີນການຕາມລະບອບໃໝ່ໄດ້ທຸກເມື່ອ. ປະເທດລາວກໍມີທີ່ນັ່ງໃນສະພາແຫ່ງຊາດ ສ່ວນຫ້ອງການພັກກໍຕັ້ງຢູ່ບໍ່ໄກປານໃດກັບສະຖານທູດອາເມລິກາພໍທີ່ຈະຍ່າງແບບວາງທ່າໄປໄດ້.

ສະຫະພັນແຮງງານໃຕ້ດິນອັນສຳຄັນທີ່ອຳນວຍຄວາມສະດວກແກ່ການບໍລິການປະຊາຊົນທັງໝົດກໍພ້ອມທີ່ຈະຢຸດງານ ເມື່ອຮອດເວລາທີ່ຄຳສັ່ງນັ້ນມາເຖິງ, ບັນດາຕຳຫຼວດແລະທະຫານກໍບໍ່ມີຜູ້ບັງຄັບບັນຊາຫຼາຍພໍທີ່ຈະສັ່ງການໃຫ້ຍົກກຳລັງໄປປາບປາມພວກກໍ່ກະບົດໄດ້ ເນື່ອງຈາກເຈົ້າໜ້າທີ່ຜູ້ອາວຸໂສຈຳນວນຫຼາຍ ໄດ້ພາກັນລອຍຂ້າມແມ່ນ້ຳຂອງໄປຍັງຄ້າຍຜູ້ລີ້ໄພຕາມເຂດຊາຍແດນເປັນສ່ວນໃຫຍ່.

ສ່ວນປະຊາຊົນທີ່ອາໄສຢູ່ໃນເມືອງວຽງຈັນກໍບໍ່ເຫັນມີໃຜຈະຕ້ອງສົນໃຈໃນເລື່ອງນີ້ເນື່ອງຈາກຊີວິດຂອງພວກເຂົາເຄີຍຜ່ານຊ່ວງເວລາອັນຍາກລຳບາກມາແລ້ວ ນັບແຕ່ສະໄໝທີ່ເງິນດອນລາແຂງຄ່າ ລວມທັງສະໄໝທີ່ມີການສໍ້ລາດບັງຫຼວງຮຸນແຮງ, ສະໄໝຂອງການປະພຶດອັນຕໍ່າຊ້າ ດ້ວຍເຫດນັ້ນເອງ ການຍື່ນມືເຂົ້າມາໃຫ້ຄວາມຊ່ວຍເຫຼືອຂອງອາເມລິກາ ຈິ່ງເກີດປະໂຫຍດໜ້ອຍທີ່ສຸດສຳລັບພວກເຂົາ. ຄົນທີ່ຮັ່ງມີໃນຍຸກນັ້ນກໍບໍ່ເຄີຍແບ່ງປັນຊັບສິນທີ່ໄດ້ມາແບບບໍ່ຊອບທຳຂອງຕົນເອງໃຫ້ກັບຄົນທົ່ວໄປເລີຍ. ກ່ອນທີ່ອາເມລິກາຈະເຂົ້າມາລາວ ກໍແມ່ນຝຣັ່ງເສດເຂົ້າມາກ່ອນ ແລະຄວາມຮູ້ສຶກໂດຍທົ່ວໄປຂອງປະຊາຊົນໃນເວລານັ້ນກໍແມ່ນ ຍິ່ງພະຍາຍາມເວົ້າເຖິງພວກຝຣັ່ງເສດໃຫ້ໜ້ອຍລົງຍິ່ງເປັນການດີ.

ບໍ່ເລີຍມັນບໍ່ໄດ້ແມ່ນແບບນັ້ນ, ປະຊາຊົນລາວຫຼາຍຄົນຍັງຄົງສືບຕໍ່ອາໄສຢູ່ໃນເມືອງ

ຫຼວງອີກຕໍ່ໄປ ພາຍຫຼັງການຢຶດອຳນາດ ທັງໃຫ້ການສະໜັບສະໜູນລະບອບການປົກຄອງແບບໃໝ່. ຄວາມຮູ້ສຶກຂອງພວກເຂົາຄືເຊື່ອວ່າ ຜູ້ບໍລິຫານຊຸດໃໝ່ຈະບໍ່ເຮັດໃຫ້ຮ້າຍແຮງຄືກັບຊຸດກ່ອນໆ ພ້ອມກັນນັ້ນປະຊາຊົນລາວກໍບໍ່ສະບາຍໃຈ ທັງເບື່ອໜ່າຍເຕັມທີກັບການຕົກເປັນຫົວເມືອງຂຶ້ນຂອງຕ່າງຊາດ. ຖ້າການບໍລິຫານປະເທດມີຄວາມຜິດພາດເກີດຂຶ້ນ ຢ່າງໜ້ອຍມັນກໍແມ່ນຊ່ວງເວລາຂອງຄວາມຜິດພາດທີ່ເກີດຈາກນ້ຳມືຂອງຄົນລາວດ້ວຍກັນ.

ເມື່ອສຽງກະແຫຼ່ງດັງຂຶ້ນເຊິ່ງບົ່ງບອກເຖິງເວລາເລີກຮຽນ ພາບທີ່ປາກົດໃຫ້ເຫັນຢູ່ຕໍ່ໜ້າມັນເປັນບັນຍາກາດແຫ່ງຄວາມສຸກ ທີ່ໄດ້ຫຼຸດພົ້ນອອກຈາກຫ້ອງຄຸມຂັງຫຼາຍກວ່າການທີ່ໄດ້ກັບບ້ານໃຜລາວ. ສີຣິຍ່າງຜ່ານບັນດາໄວໜຸ່ມທີ່ມີໜ້າຕາຍິ້ມແຍ້ມແຈ່ມໃສ ເຊິ່ງພວກເຂົາຕ່າງກໍຍໍມືນົບຢ່າງສຸພາບໂດຍຖືເປັນການສະແດງຄວາມເຄົາລົບ. ນັບເປັນເລື່ອງດີທີ່ຈະຍໍມືນົບບຸກຄົນຜູ້ທີ່ມີອາຍຸສູງກວ່າຫ້າສິບປີທຸກຄົນ ຈົນກວ່າພວກເຂົາຈະຄຸ້ນໜ້າຜູ້ບໍລິຫານຄົນໃໝ່.

ອາຈານອູ້ມເງີຍໜ້າຂຶ້ນຈາກບົດບັນທຶກທົດສະດີທາງເຄມີຂອງຕົນ.

“ໂອ! ອາທິດນີ້ລຸງມາຫາຫຼານຕັ້ງສອງເທື່ອ ຄົງຊິມີວຽກຫຍຸ້ງຫຼາຍໃດເນາະ.”

“ລຸງຄິດວ່າພະພຸດທະເຈົ້າກຳລັງທົດສອບລຸງຢູ່ເພື່ອຈະເບິ່ງວ່າລຸງປະຖິ້ມເພິ່ນ.”

“ມີຫຍັງໃຫ້ຫຼານຊ່ວຍບໍ່ລຸງ?”

“ຂໍໂທດເດີຫຼານອູ້ມ ພວກເຮົາລອງທົດລອງສານໄຊຢາໄນດ໌ອີກຄັ້ງໄດ້ບໍ່?”

“ທົດລອງກັບຫຍັງລຸງ?”

ສີຣິດຶງເອົາຂວດຢາແກ້ປວດຫົວຂຶ້ນມາ.

“ລຸງຫວັງວ່າພວກເຮົາຈະກວດພົບສານຕົກຄ້າງຢູ່ໃນນີ້. ແຕ່ລຸງຄິດວ່າຢາເມັດພວກນີ້ເປັນພຽງຢາແອັສໄພລິນທຳມະດາ ແລ້ວກໍມີຊຸມນີ້ນຳ.” ເວົ້າສຸດເຂົາກໍຍື່ນຂວດແກ້ວນ້ອຍທີ່ບັນຈຸແມງສາບທີ່ຕາຍແລ້ວໄປທາງອາຈານອູ້ມ.

ນາງຫົວຂຶ້ນ.

“ຢ່າບອກໃດວ່າລຸງກຳລັງຈັດການຊອກຫາສາເຫດການຖືກຄາຕະກຳໃຫ້ແກ່ຊຸມແມງສາບເຫຼົ່ານີ້. ຕອນນີ້ລຸງຮູ້ບໍ່ວ່າ ພວກເຮົາບໍ່ມີສານເຄມີເຫຼືອຢູ່ສຳລັບການທົດລອງເຫຼົ່ານີ້ເລີຍ?”

“ຄັນຊັ້ນພວກເຮົາກໍລອງມາໃຊ້ໃຫ້ເກີດປະໂຫຍດສູງສຸດກັນເທາະ.”

ແລະມັນກໍເກີດປະໂຫຍດອີ່ຫຼີ.

5

# ຄົນນັບໄກ່

ຕອນເຊົ້າວັນສຸກ ຄວາມລຶກລັບຂອງຊາຍຜູ້ເປົ່າສຽງດັງຄືກັບສຽງຟ້າຜ່າກໍຖືກເປີດເຜີຍ. ສີຣິກັບທີມງານໄດ້ທຳການຫຍິບສືບຍິງຊະລາຄົນໜຶ່ງ ເຊິ່ງຂ້າໂຕຕາຍດ້ວຍການດື່ມນ້ຳຢາລ້າງຫ້ອງນ້ຳ ເພື່ອຫຼຸດຜ່ອນພາລະຂອງຄອບຄົວທີ່ຕ້ອງດູແລຕົນ ແຕ່ເນື່ອງຈາກເຫດການນີ້ເກີດຂຶ້ນໃນຫ້ອງນ້ຳຂອງໂຮງໝໍ ຈິ່ງຕ້ອງມີການຊັນນະສູດສົບ.

ສັກ ເຊິ່ງເປັນຜູ້ອຳນວຍການໂຮງໝໍ ຍ່າງມາທີ່ໜ້າປະຕູ ແລ້ວເອີ້ນເອົາສີຣິໄປທີ່ຫ້ອງການ ຊາຍທີ່ເປົ່າສຽງດັງຜູ້ນັ້ນຢືນເອົາມືກອດເອິກເສີຍມັ່ງຄືບໍ່ຮ້ອນບໍ່ເຄືອງຫຍັງ ສ່ວນຜູ້ອຳນວຍການກໍຄືຜູ້ບໍລິຫານອີກຄົນໜຶ່ງທີ່ໄດ້ຮັບການມອບໝາຍໜ້າທີ່ໃຫ້ແຕ່ຕອນອາຍຸຍັງນ້ອຍ ແລະເຂົາກໍຮູ້ສຶກວ່າຈະຕ້ອງໃຊ້ອຳນາດນີ້ຢ່າງເຕັມທີ່ ເຊິ່ງເຂົາເອງກໍເຊັ່ນກັນທີ່ຕ້ອງໄດ້ຢຳເກງຕໍ່ກັບກິລິຍາທ່າທາງທີ່ບໍ່ເກງກົວຜູ້ໃດຂອງສີຣິ.

"ທ່ານສີຣິນີ້ແມ່ນສະຫາຍເກດແກ້ວ." ສີຣິຍື່ນມືອອກມາ ແຕ່ຊາຍຜູ້ນັ້ນປະຕິເສດທີ່ຈະຈັບມັນ. "ຂ້ອຍຄິດວ່າທ່ານໝໍຈະສັງເກດເຫັນອາຄານໃໝ່ຫຼັງບ່ອນເຮັດວຽກຂອງທ່ານແລ້ວຕິ."

"ຍັງບໍ່ທັນເຫັນ." ບໍ່ຈຳເປັນຕ້ອງອ້ອມໄປດ້ານຫຼັງຂອງໂຮງເກັບສົບກໍໄດ້ເນື່ອງຈາກບໍ່ມີຫຍັງເປັນໜ້າສົນໃຈນອກຈາກຄວາມຮົກຮ້າງວ່າງເປົ່າ.

"ຄັນຊັ້ນເຮົາຂໍແນະນຳທ່ານໝໍມາເບິ່ງເອງເທາະ."

ພວກເຂົາທັງສາມພາກັນຍ່າງໄປອ້ອມຮອບແຈມຸມຂອງຕຶກເກັບສົບ ເຊິ່ງເປັນບ່ອນທີ່ພວກເຂົາພົບເຫັນຕູບໄມ້ໃຜ່ຂະໜາດນ້ອຍໜຶ່ງຫຼັງ ໂດຍມີໂຕະເຮັດວຽກ, ຕັ່ງ, ຕູ້ເກັບເອກະສານ ແລະກະດານດຳຢ່າງລະອັນ ຢູ່ເບື້ອງເທິງຂອງປະຕູມີປ້າຍອັນໜຶ່ງເຊິ່ງຂຽນດ້ວຍລາຍມືວ່າ **ຕົວແທນໜ່ວຍງານຂົນຂວາຍ**.

ຂົນຂວາຍ ຄືຜູ້ເຮັດໜ້າທີ່ເປັນສາຍລັບສອດແນມຊຸມຊົນໂດຍຊາວບ້ານຮູ້ຈັກກັນດີ ແລະເອີ້ນໃນນາມວ່າ "ຄົນນັບໄກ່". ມັນເປັນໜ້າທີ່ຂອງພວກເຂົາໃນການສອດສ່ອງວ່າແມ່ນໃຜຮັ່ງມີຜິດປົກກະຕິ ຫຼືໃຊ້ຊີວິດຟູມເຟືອຍກວ່າຄົນອື່ນໆ. ໂດຍປົກກະຕິແລ້ວວຽກນີ້ມັກຈະເປັນໜ້າວຽກທີ່ເຮັດນອກໂມງການ ໂດຍພະນັກງານທີ່ມີວຽກເຕັມເວລາຢູ່ແລ້ວ

ທີ່ຮັບຜິດຊອບວຽກນີ້ແບບໜ້າຮູຫູໃຄ່ກັນທຸກຄົນ. ເຊິ່ງທ້າວເກດແກ້ວມີຫ້ອງການເປັນຂອງຕົນເອງ ແລະມີການຕັ້ງປ້າຍແບບແທ້ຈິງເຊັ່ນນີ້ ສະແດງວ່າເຂົາເຕັມໃຈກັບຕຳແໜ່ງທີ່ໄດ້ຮັບແບບຈິງຈັງ.

"ສະຫາຍເກດແກ້ວໄດ້ຮັບການມອບໝາຍໃຫ້ມາປະຈຳການຢູ່ເຂດ ໑໗ ເນື່ອງຈາກໂຮງໝໍຕັ້ງຢູ່ເຂດສູນກາງຂອງພື້ນທີ່ ການອະນຸຍາດໃຫ້ສະຫາຍມາສ້າງຫ້ອງການຢູ່ບ່ອນນີ້ຈິ່ງຖືວ່າເປັນກຽດຢ່າງຍິ່ງ." ວິທີຂອງການເປັ່ງນ້ຳສຽງທີ່ວ່າ "ເປັນກຽດຢ່າງຍິ່ງ." ເຮັດໃຫ້ສີຣິຮູ້ທັນວ່າ ມັນມີຄວາມໝາຍໄປໃນທາງກົງກັນຂ້າມກັນ ເນື່ອງຈາກໂຮງໝໍແຫ່ງນີ້ຍັງຢູ່ຫ່າງໄກຄວາມຮັ່ງມີທັງກຳລັງດີ້ນຮົນແບບຫົວຊົນຝາ. ດັ່ງນັ້ນຄົນນັບໄກ່ຈິ່ງເປັນໜ້າວຽກສຸດທ້າຍທີ່ທາງໂຮງໝໍຕ້ອງການ ໂດຍສະເພາະກໍແມ່ນພະນັກງານຜູ້ທີ່ມີຄວາມກະຕືລືລົ້ນແບບນີ້.

ເກດແກ້ວເປີດປາກເວົ້າອອກມາ ເຂົາຊ່າງເປັນຜູ້ຊາຍທີ່ປາກຮ້າຍເວົ້າດັງພິລຶກ.

"ຄັນຊັ້ນຕ້ອງບໍ່ມີກິ່ນເໝັນເນົ່າພວກນັ້ນປິວອອກມາຈາກບ່ອນເຮັດວຽກຂອງພວກເຈົ້າອີກ, ເຂົ້າໃຈບໍລະ?"

ສີຣິຮອດບໍ່ຮູ້ຊ້ຳວ່າຈະຕອບໂຕ້ທ້າວປາກບອນຜູ້ນີ້ແນວໃດ ເຂົາເຄີຍເຫັນພວກພະນັກງານເດັກນ້ອຍທີ່ເຈົ້າກີ້ເຈົ້າການແບບນີ້ມາຫຼາຍຈົນນັບບໍ່ຖ້ວນ ສິ່ງສຳຄັນສຸດພວກເຂົາກໍເປັນພຽງຕົວປ່ວນຊື່ໆ ແຕ່ບາງຄັ້ງຖ້າເວົ້າຜິດຫູແລ້ວ ຄົນພວກນີ້ກໍເປັນອັນຕະລາຍຮ້າຍແຮງຢ່າງໜຶ່ງໄດ້ເຊັ່ນກັນ.

"ສະຫາຍເກດແກ້ວ ບາງທີເຈົ້າອາດແນະນຳພວກເຮົາກ່ຽວກັບວິທີການຢຸດຢັ້ງກິ່ນເໝັນອັນເປັນຕາຂີ້ດຽດນັ້ນດີກວ່າເທາະ."

ເກດແກ້ວຂົບຄິດຢູ່ຄາວໜຶ່ງ.

"ກໍຫາແນວມາສີດດັບກິ່ນບໍ່ໄດ້ບໍ?"

"ໝາຍເຖິງພວກສະເປດັບກິ່ນຫັ້ນຫວາ?"

"ທຳນອງນັ້ນແຫຼະ."

ສີຣິຫົວຂຶ້ນ ແມ່ນແຕ່ຜູ້ອຳນວຍການກໍຍັງອົດຫົວບໍ່ໄດ້.

"ຂ້ອຍຄິດວ່າຄົງເຮັດແບບນັ້ນບໍ່ໄດ້ດອກ ເພາະກົດໝາຍໄດ້ລະບຸໄວ້ວ່າ ການສີດສະເປດັບກິ່ນໃສ່ຮ່າງກາຍທີ່ມີຜົນຕໍ່ກິ່ນຕາມທຳມະຊາດມັນເປັນການລະເມີດສິດສ່ວນບຸກຄົນ."

"ຖ້າຈັ່ງຊັ້ນພວກເຈົ້າກໍຕ້ອງປິດປະຕູທຸກບານ ເພາະຂ້ອຍເຮັດວຽກບໍ່ໄດ້ແທ້ຖ້າມີກິ່ນເໝັນເນົ່າຊຸມນັ້ນໂຊຍມາ."

"ເຈົ້າຢາກໃຫ້ພວກເຮົາປິດປະຕູທຸກບານຫວາ? ຄັນຊັ້ນພວກເຮົາກໍຈະສິ້ນເປືອງ

ເງິນທີ່ຫາຍາກຂອງໂຮງໝໍເພື່ອມາຊື້ເຄື່ອງປັບອາກາດ. ເຈົ້າຍັງຢາກໃຫ້ພວກເຮົາຫັນໃຈຢູ່ບໍລະ?" ເກດແກ້ວຍົກບ່າໄຫຼ່ເໝືອນກັບວ່າບໍ່ຮູ້ບໍ່ສົນ. "ສ່ວນທາງອອກທີ່ດີທີ່ສຸດສໍາລັບທ່ານຜູ້ອໍານວຍການສັກນັ້ນກໍຄືຍ້າຍຫ້ອງການໄປຢູ່ບ່ອນອື່ນ ທ່ານຈຶ່ງບໍ່ໄດ້ມາທົນທຸກກັບເລື່ອງນີ້."

ສັກຟ້າວເວົ້າຕັດບົດຂຶ້ນທັນທີ.

"ບໍ່, ບໍ່ໄດ້ໃດ ຂ້ອຍເກງວ່າໃນເຂດໂຮງໝໍນີ້ຄືຈຸດດຽວທີ່ຕັ້ງຫ້ອງການໃສ່ໄດ້ ສ່ວນກາຍນັ້ນກໍມີຢູ່ໜຶ່ງ ຫຼືສອງແຫ່ງທີ່ຢູ່ນອກໂຮງ ..."

"ບໍ່ໄດ້ດອກແນວນັ້ນນະ ຂ້ອຍຈະຢູ່ບ່ອນນີ້ເພື່ອເຮັດວຽກໃຫ້ມີປະສິດທິພາບສູງສຸດ."

ທຸກຢ່າງເລີ່ມແຈ້ງຂາວອອກແລ້ວສໍາລັບສິຣິ ແລະແລ້ວທາງໂຮງໝໍກໍບໍ່ໄດ້ຢາກໃຫ້ເກດແກ້ວມາຕັ້ງຫ້ອງການຢູ່ບ່ອນນັ້ນ ແຕ່ຍ້ອນປະຕິເສດບໍ່ໄດ້ ຈຶ່ງວາງແຜນໃຫ້ເຂົາມາຢູ່ຂ້າງຫຼັງຂອງໂຮງເກັບສົບ ເພາະຫວັງວ່າກິ່ນເໝັນຂອງສົບຈະເປັນຕົວຂັບໄລ່ໃຫ້ເຂົາຍ້າຍໜີອອກໄປເອງ. ເທົ່າທີ່ຈະເຫັນໄດ້ແລ້ວ, ສິຣິຕ່າງຫາກທີ່ເປັນຄົນເດືອດຮ້ອນແທນ. ເປັນຫຍັງເລື່ອງບໍ່ເປັນຕາສາເຫດແບບນີ້ຈຶ່ງມັກເກີດຂຶ້ນກັບສິຣິສະເພາະໃນມື້ວັນສຸກຕະຫຼອດ? ເຂົາເລີ່ມສັງຫອນໃຈວ່າ ຄວາມເດືອດຮ້ອນກໍາລັງຄືບຄານເຂົ້າໄປຢູ່ໃນເສັ້ນຊາຕາຊີວິດຂອງຕົນເສຍແລ້ວ ນອກນັ້ນເຂົາຍັງມີຜູ້ພິພາກສາແຫງອີກຄົນໜຶ່ງທີ່ຈະຕ້ອງໄດ້ຄອຍຮັບມື.

**********

ມັນເປັນການຍາກທີ່ຜູ້ພິພາກສາແຫງຈະມັກນໍາເອົາແຕ່ເລື່ອງ "ທັດສະນະຄະຕິ" ຂອງສິຣິມາເປັນຫົວຂໍ້ຂອງການສົນທະນາ ລະຫວ່າງການແບ່ງປັນຄວາມຮັບຜິດຊອບໃນໜ້າທີ່ຄັ້ງທີສອງ ເພາະພວກເຂົາບໍ່ໄດ້ຢູ່ສອງຕໍ່ສອງ ມີຜູ້ຊາຍແຕ່ງຕົວໂກ້ ແລະຮຽບຮ້ອຍຄົນໜຶ່ງໃນໄວສີ່ສິບ ແຕ່ເບິ່ງເຂົາແລ້ວຄືຄົນຢູ່ໃນໄວຊາວປີກໍປານນັ້ນ ເຂົານັ່ງຢູ່ຕັ່ງອີ້ຮັບແຂກໜ່ວຍທີສອງ. ເຂົາມີໃບໜ້າທີ່ຫຼໍ່ເຫຼົາ ແລະລ່າເລີງ ທັງຄ່ອງແຄ້ວວ່ອງໄວ. ເຂົາເປັນຄົນບໍ່ມັກປາກປານໃດ.

ຜູ້ພິພາກສາແຫງແນະນໍາເຂົາຢ່າງເປັນທາງການ.

"ຂໍແນະນໍາໃຫ້ຮູ້ຈັກກັບທ່ານສາລະວັດຕໍາຫຼວດໂພສີ ມາຈາກກອງກໍາລັງຕໍາຫຼວດແຫ່ງຊາດ. ທ່ານສາລະວັດຫາກໍກັບຈາກການໄປຝຶກອົບຮົມທີ່ຖືວ່າປະສົບຜົນສໍາເລັດຫຼາຍສົມຄວນຢູ່ເມືອງວຽງໄຊ. ຕອນນີ້ເຂົາພ້ອມແລ້ວທີ່ຈະກັບມາເຮັດໜ້າທີ່ຮັບຜິດຊອບໃນຖານະຜູ້ສືບສວນຮຸ່ນອາວຸໂສທີ່ວຽງຈັນ."

ສິຣິເອນຕົວເຂົ້າໄປຈັບມືກັບໂພສີພ້ອມສັ່ນເບົາໆ. ການຈັບມືກັນດົນໆ ນັ້ນຄ້າຍຄື

ກໍາລັງຕັ້ງໃຈຈະດຶງເອົາຂໍ້ມູນສໍາຄັນຈາກອີກຝ່າຍ. ຜູ້ຄົນທີ່ຈັບມືກັນໃນລາວສ່ວນໃຫຍ່ແມ່ນສາມາດຮູ້ສຶກໄດ້ຈາກການສໍາຜັດຕ່າງໆ ບໍ່ວ່າຈະເປັນຄວາມຈິງໃຈ, ຄວາມໃຈຮ້ອນ ຫຼືແມ່ນແຕ່ຄວາມອ່ອນແອ ແຕ່ສີຣິກໍຍັງບໍ່ໝັ້ນໃຈວ່າສິ່ງທີ່ຕົນສົ່ງຜ່ານອອກໄປນັ້ນແມ່ນຫຍັງກັນແທ້.

ສີຣິນຶກເຖິງເລື່ອງລາວຂອງຕໍາຫຼວດຄົນນີ້ຂຶ້ນມາທັນທີ ຄໍາວ່າ 'ອອກໄປຝຶກອົບຮົມຢູ່ເມືອງວຽງໄຊ' ກໍເທົ່າກັບວ່າຖືກສົ່ງໄປປັບທັດສະນະຄະຕິ. ພໍເມື່ອຝ່າຍປະເທດລາວເຂົ້າຢຶດອໍານາດ ນັກຮຽນທຸກຄົນໃນໂຮງຮຽນຕໍາຫຼວດ ລວມທັງຜູ້ບັງຄັບບັນຊາຂອງພວກເຂົາກໍຈະໄດ້ຮັບເຊີນໄປທາງພາກເໜືອເພື່ອຝຶກອົບຮົມ ເຫດຜົນສ່ວນໜຶ່ງກໍເພື່ອພິສູດໃຫ້ຮູ້ແຈ້ງເຖິງຈຸດທີ່ພວກເຂົາສະແດງອອກໃຫ້ເຫັນເຖິງຄວາມຈົງຮັກພັກດີນັ້ນເອງ. ຖ້າໂພສີຫາກໍກັບມາ ກໍໝາຍຄວາມວ່າເຂົາຈະຕ້ອງໄດ້ໄປປະຈໍາການຢູ່ຄ້າຍເປັນເວລາໜຶ່ງປີເຕັມ. ສີຣິສົງໄສວ່າການຝຶກອົບຮົມແບບນັ້ນສົ່ງຜົນດີຕໍ່ຜູ້ຊາຍຄົນໜຶ່ງຄືແນວໃດ ແຕ່ເທົ່າທີ່ເຫັນຕໍາຫຼວດຄົນນີ້ມັກຈະຫົວຂຶ້ນທຸກຄັ້ງໃນເລື່ອງຕະຫຼົກຂອງແຫງທັງເຫັນດີກັບທຸກສິ່ງທີ່ເຂົາເວົ້າ ຈົນເຮັດໃຫ້ສີຣິເລີ່ມຫງຸດຫງິດ ແຕ່ແລ້ວ ແຫງກໍເຮັດໄອອະແຮມຂຶ້ນ.

"ສິ່ງທີ່ຂ້ອຍໃຫ້ພວກທ່ານສອງຄົນມານີ້ກໍເພື່ອຈະໄດ້ໂອ້ລົມເລື່ອງສອງສົບທີ່ດຶງຂຶ້ນມາຈາກອ່າງນໍ້າງື່ມ." ແຫງເລີ່ມ.

"ສອງສົບຫວາ?"

"ແມ່ນແລ້ວທ່ານໝໍ ມີອີກໜຶ່ງສົບ."

"ຄືບໍ່ເຫັນມີໃຜບອກຂ້ອຍເລື່ອງນັ້ນ. ເປັນຫຍັງຄືມີແຕ່ສົບດຽວໃນຫ້ອງເກັບສົບ?"

"ອີກບໍ່ດົນກໍຈະໄປຮອດເອງດອກທ່ານໝໍສີຣິ. ໂພສີ ໄດ້ຮັບສໍາເນົາລາຍງານຂອງທ່ານໝໍສີຣິ ທີ່ຂ້ອຍໄດ້ສົ່ງໄປໃຫ້ທາງພະແນກຂອງສະຫາຍ ຫຼືບໍ່?"

"ໄດ້ຮັບແລ້ວສະຫາຍພິພາກສາ ມັນຢູ່ບ່ອນນີ້ແຫຼະ ຊ່າງວ່າເປັນເລື່ອງຮອບຄອບທີ່ດີຫຼາຍທີ່ສົ່ງໄປໃຫ້ຂ້ອຍ."

"ມັນເປັນການສະແດງມາລະຍາດແບບສົມມາພາຄວນລະຫວ່າງໜ່ວຍງານທາງກົດໝາຍຕ່າງໆ. ຖ້າຂ້ອຍໄດ້ຮັບບົດລາຍງານໄວກວ່ານີ້ ສະຫາຍກໍຄົງຈະໄດ້ອ່ານມັນໄວກວ່ານີ້ແທ້ແຫຼະ." ແຫງທັງເວົ້າທັງສັກສາຍຕາໄປທີ່ສີຣິຜູ້ທີ່ນັ່ງຍິ້ມເສີຍມັ່ງແບບບໍ່ຮ້ອນບໍ່ເຄືອງຫຍັງ.

"ສຸດຍອດຫຼາຍສະຫາຍ." ສີຣິເລີ່ມສົງໄສວ່າ ອີກດົນປານໃດທີ່ຕໍາຫຼວດຄົນນີ້ຈະຍ່າງເຂົ້າມາ ແລ້ວທໍາທ່າຈັດແຈງແປງກະດຸມໂສ້ງໃຫ້ແຫງແບບປະຈົບສໍພໍ.

"ອີກສົບຢູ່ໃສ?" ສີຣິຖາມ.

“ຢູ່ສະຖານທູດຫວຽດນາມ.”

“ຂ້ອຍຄືບໍ່ຮູ້ຊໍ້າວ່າຢູ່ຫັ້ນກໍມີຕູ້ແຊ່ແຂງ.”

“ພວກເຂົາບໍ່ມີດອກຕູ້ແຊ່ແຂງຫັ້ນ. ແຕ່ຂ້ອຍເຊື່ອວ່າພວກເຂົາຕ້ອງເອົານໍ້າກ້ອນແຊ່ສົບໄວ້.”

“ແຊ່ໄວ້ເພື່ອຫຍັງ?”

“ແຊ່ໄວ້ຈົນກວ່າເຈົ້າໜ້າທີ່ຊັນນະສູດສົບຂອງພວກເຂົາເອງຈະມາຮອດ.”

“ເຈົ້າໜ້າທີ່ຊັນນະສູດສົບຂອງພວກເຂົາເອງ ... ພວກເຂົາບໍ່ເຊື່ອໝັ້ນຂ້ອຍແມ່ນບໍ?”

“ມັນບໍ່ແມ່ນປະເດັນທີ່ຈະມາຖາມເລື່ອງຄວາມເຊື່ອໝັ້ນຫຍັງດອກສີຣິ. ຖ້າພວກເຂົາກວດພົບຫຼັກຖານທີ່ວ່າ ຄົນຂອງພວກຕົນຖືກທໍລະມານຕາຍຄືກັບສິ່ງທີ່ທ່ານຢືນຢັນນັ້ນ ເລື່ອງນີ້ອາດຈະກາຍເປັນເລື່ອງທີ່ຕ້ອງອັບອາຍຂາຍຂີ້ໜ້າລະຫວ່າງສອງປະເທດແນ່ແທ້.”

“ແມ່ນຫຍັງທີ່ຢືນຢັນວ່າສົບນັ້ນເປັນ ‘ຄົນຂອງພວກເຂົາ’?”

“ນີ້ເດ.” ແຫງຍື່ນແຟ້ມເອກະສານເຫຼັ້ມບາງໆ ທັງຄິດວ່າສີຣິຈະລຸກຂຶ້ນແລ້ວຍ່າງມາຮັບມັນຈາກມືຂອງຕົນ ແຕ່ທ້າວນັກສືບຜູ້ບອກໄດ້ໃຊ້ຟັງຄືກັບລູກໝາຄົນນັ້ນກໍລຸກຂຶ້ນມາຍາດເອົາແຟ້ມເອກະສານ ແລ້ວຍື່ນໃຫ້ສີຣິແທນ. ທ້າວຢືນຄໍ້າແອວແອ້ກທ່າຄືນາຍແບບຊື່ກັບບ່າໄຫຼ່ຂອງສີຣິ ທັງເປັນຄົນທໍາອິດທີ່ວິຈານເລື່ອງພາບຖ່າຍຂອງສົບ.

“ຮອຍສັກແບບນີ້ນິຍົມກັນຫຼາຍໃນຫວຽດນາມ. ເຫັນບໍ່ວ່າມັນຊັດເຈນຄັກຂະໜາດ.”

“ແມ່ນແຫຼະ, ມັນຊັດເຈນຄັກອີ່ຫຼີ.” ສີຣິເຫັນດີນໍາ. ລາວຂ້ອນຂ້າງປະຫຼາດໃຈທີ່ເຫັນໄດ້ແຈ້ງແບບຊັດເຈນ. “ຄັນຊັ້ນທ້າວນີ້ໄປກ່ຽວຂ້ອງຫຍັງຈິ່ງວ່າຖືກສົ່ງໄປຢູ່ສະຖານທູດຫວຽດນາມ?”

“ຄົນແຖວເຂື່ອນຈື່ຮອຍສັກໄດ້ ພວກເຂົາເລີຍແຈ້ງທາງສະຖານທູດ ກ່ອນທີ່ທາງນັ້ນຈະສົ່ງທີ່ປຶກສາຄົນໜຶ່ງຂອງພວກເຂົາມາກວດເບິ່ງ.” ໃນເມືອງຫຼວງຂອງວຽງຈັນແມ່ນມີ ‘ທີ່ປຶກສາ’ ປະຈໍາຕະຫຼອດ. ມີຫຼາຍຄົນມັກໃຊ້ຄໍາເວົ້າໃນທາງທີ່ດູຖູກຖາກຖາງທໍານອງວ່າ ຮາໂນ່ຍມັກຫຽວໃຫ້ຄໍາປຶກສາໄປທົ່ວ ແລະອີກບໍ່ດົນພາສາທາງການກໍຈະປ່ຽນເປັນພາສາຫວຽດນາມ ໜຶ່ງໃນນັ້ນກໍມີສີຣິທີ່ມັກໃຊ້ຄໍາເວົ້າເຍີ້ຍຫຍັນເຊັ່ນນີ້. “ພວກທ່ານວາດພາບໄດ້ເລີຍວ່າເລື່ອງນີ້ມັນລະອຽດອ່ອນຫຼາຍພຽງໃດ ...” ແຫງຈົ່ມພຶມພໍາຄືຄົນກໍາລັງບ້ານອນ. “ລອງຄິດເບິ່ງນໍາກັນວ່າມີຄົນຫວຽດນາມຄົນໜຶ່ງຖືກທໍລະມານເພື່ອສອບຄົ້ນເອົາຄວາມລັບບາງຢ່າງໃນປະເທດລາວ. ມື້ວານທາງຄະນະລັດຖະມົນຕີໄດ້ມີການຫາລືກັນໃນເລື່ອງນີ້ແຫຼະ ແລ້ວພວກເຮົາກໍຈະຍື່ນຄໍາຮ້ອງເພື່ອຂໍອະນຸຍາດໃຫ້ພວກທ່ານເຂົ້າໄປທໍາການຊັນນະສູດສົບ ແລະປຽບທຽບກັບລາຍງານໄດ້.”

“ຄຳຮ້ອງຫວາ? ເປັນຫຍັງຕ້ອງຍື່ນຄຳຮ້ອງລະ? ນີ້ແມ່ນເມືອງລາວໃດ. ພວກເຮົາບໍ່ສົມຄວນຕ້ອງຍື່ນຄຳຮ້ອງກໍໄດ້ບໍ່ແມ່ນຫວາ?”

“ຍ້ອນມັນບໍ່ໄດ້ງ່າຍຄືຄິດຊັ້ນຕິ.”

“ມັນຄວນງ່າຍຢູ່ແລ້ວ. ເຈົ້າກໍຮູ້ດີຢູ່ ພວກເຮົາຍັງບໍ່ທັນເປັນຮອດແຂວງໜຶ່ງຂອງພວກເຂົາເທື່ອຊ້ຳ.”

“ສິຣິ, ຖ້າທ່ານຍັງຈະມາເສຍເວລາກັບເລື່ອງຄົນຫວຽດນາມຢູ່ແນວນີ້ ຂ້ອຍຂໍແນະນຳທ່ານລະວັງປາກຕົນເອງດີກວ່າ. ພວກເຂົາບໍ່ຄ່ອຍຈະເຂົ້າໃຈຫຍັງງ່າຍໆ ເທົ່າກັບພວກເຮົາດອກເດີ.”

ການພົບປະກັນກິນເວລາດົນກວ່າປົກກະຕິ ເນື່ອງຈາກແທງຮູ້ສຶກວ່າຈຳເປັນຕ້ອງທຳການສະຫຼຸບທຸກໆ ຄະດີທີ່ຕົນກັບສິຣິ ‘ເຮັດຮ່ວມກັນ’ ແບບຫຍໍ້ໆ ແຕ່ຕາບໃດທີ່ທ່ານໝໍຍັງນິ່ງເສີຍໂດຍບໍ່ຍອມເປີດປາກເວົ້າຈາຫຍັງຈັກຄຳ ຄ້າຍກັບວ່າວ່າມັນບໍ່ໄດ້ກະທົບກະເທືອນຫຍັງຕໍ່ມັນສະໝອງຂອງທ່ານໝໍເລີຍ ເບິ່ງຄືວ່າອີກບໍດົນມັນຄົງຈະໄປຕໍ່ບໍ່ໄດ້, ສິຣິທອດສາຍຕາຜ່ານໄປທາງປະຕູພ້ອມປ່ອຍໃຫ້ກະແສຈິດເລື່ອນລອຍໄປຕາມອາກາດກາງຫາວ ແຕ່ແລ້ວແທງກໍໄອອະແຮມຂຶ້ນອີກບາດໜຶ່ງ ເຮັດໃຫ້ລົບກວນບັນຍາກາດແຫ່ງຄວາມມິດງຽບນັ້ນທັນທີ.

“ທ່ານໝໍ, ພໍແຕ່ມາລອງຄິດເບິ່ງຂ້ອຍວ່າຕອນນີ້ທາງຕຳຫຼວດກໍຍອມຮັບລະບົບການເຮັດວຽກໃນພະແນກຂອງທ່ານແລ້ວ ຂ້ອຍເຊື່ອວ່າຮອດເວລາທີ່ທ່ານຄວນໄລ່ທ້າວຈ້ານັ້ນອອກການສະ.”

ສິຣິສັ່ນຂຶ້ນຄືຄົນກຳລັງໂມໂຫ ແຕ່ກໍວາງທ່າທີແບບໃຈດີສູ້ເສືອເຂົ້າໄວ້. “ທ້າວຈ້າຊັ້ນຫວາ? ໂອ! ຂ້ອຍບໍ່ຮູ້ເລີຍໃດວ່າເຂົາເປັນຄົນຈ້າ. ຂ້ອຍຮູ້ແຕ່ວ່າເຂົາກໍມີວັນພັກເໝືອນພະນັກງານທົ່ວໄປ ແຕ່ຂ້ອຍບໍ່ຄິດເລີຍວ່າຈະມີເຫດຜົນອັນໃດພໍຈະມາໄລ່ຜູ້ອຳນວຍການສັກອອກຈາກວຽກ ລອງໃຫ້ໂອກາດລາວຈັກຄັ້ງກໍດີໃດ ລາວກໍມີຄອບຄົວທີ່ຕ້ອງໄດ້ເບິ່ງແຍງ.”

“ຜູ້ອຳນວຍການ ...? ໂອຍບ້າແລ້ວແນວນີ້ ບໍ່ແມ່ນເດີທ່ານໝໍສິຣິ. ຂ້ອຍກຳລັງເວົ້າເຖິງຄົນປັນຍາອ່ອນທີ່ທ່ານຮັບມາເປັນຄົນເຮັດວຽກໃນໂຮງເກັບສົບຂອງທ່ານຫັ້ນແຫຼະ. ຕອນນີ້ຂ້ອຍກຳລັງກຽມສະເໜີເງິນເດືອນເຕັມຂັ້ນສຳລັບຄົນທີ່ຈະມາຮັບຕຳແໜ່ງນີ້.”

“ຂ້ອຍເຫັນດີນຳເລື່ອງນີ້ ເພາະຖ້າຂ້ອຍບອກນ້ອງກິ່ງ ເຂົາກໍຈະດີໃຈທີ່ຕົນສາມາດມີເງິນເດືອນມາປະທັງຊີວິດໄດ້.”

“ຟັງດີໆ ຕີທ່ານໝໍ, ຂ້ອຍກຳລັງບອກທ່ານໄລ່ເຂົາອອກສະ ແລ້ວຈ້າງຄົນປົກກະຕິທີ່ຄົບສາມສິບສອງປະການມາເຮັດວຽກແທນ.”

"ຂ້ອຍໄລ່ເຂົາອອກບໍ່ໄດ້ດອກ ເຂົາເປັນຄົນດຽວໃນຫັ້ນທີ່ຮູ້ຈັກໜ້າທີ່ຕົນເອງໄດ້ດີຢູ່ແລ້ວ."

"ຍ້ອນເຂົາເປັນຄົນບໍ່ເຕັມບາດ."

"ບໍ່ແມ່ນພວກເຮົາທຸກຄົນຫວາບໍ່ເຕັມບາດ?"

"ຂ້ອຍເລີ່ມຈະສົງໄສແລ້ວນີ້ວ່າທ່ານໝໍກໍແມ່ນຄົນບໍ່ເຕັມບາດຄືກັນ."

ສິຣິຖອນຫັນໃຈຮູດໜຶ່ງ.

"ຜູ້ພິພາກສາແຫງຟັງດີໆ ເດີ, ນ້ອງກົ່ງຫັ້ນເປັນດາວຊິນໂດມແບບບໍ່ຮຸນແຮງອາການແບບນີ້ເໝາະສົມຢ່າງຍິ່ງກັບໜ້າວຽກອັນຊ້ຳໆ ແນວນີ້, ເຈົ້າໜ້າທີ່ຊັນນະສູດສົບຄົນກ່ອນໄດ້ທຸ້ມເທເວລາຫຼາຍເປັນພິເສດໃນການສອນໃຫ້ເຂົາຮູ້ການຮູ້ງານ ເຂົາບໍ່ມີວັນລືມສິ່ງທີ່ຕົນເອງລົງມືເຮັດແນ່ນອນ. ເຂົາຍັງບໍ່ໄດ້ມີພິດໄພ ຫຼືເກາະກະກົດຂວາງຫຍັງເລີຍ ແລະສະພາບຂອງເຂົາກໍບໍ່ໄດ້ເຮັດໃຫ້ພວກລູກຄ້າທີ່ເຂົ້າມາໃນບ່ອນເຮັດວຽກຂອງພວກເຮົາຂັດຂ້ອງໝອງໃຈຫຍັງ."

"ຕະຫຼອດສາມປີທີ່ເຂົາເຮັດວຽກຢູ່ຫ້ອງເກັບສົບ, ບອກໄດ້ເລີຍວ່າເຂົາເຮັດວຽກໄດ້ດີກວ່າຂ້ອຍອີກຊໍ້າ ເລື່ອງນີ້ຂ້ອຍເວົ້າແທ້ໃດ໋. ຄວາມຈິງເຂົານັ້ນແຫຼະທີ່ເປັນຄົນເຕືອນຂ້ອຍຕະຫຼອດໃນຍາມທີ່ຂ້ອຍລືມນັ້ນນີ້ທັງຮູ້ເກັບມ້ຽນພວກເຄື່ອງມືຕ່າງໆ ໃນຫ້ອງເກັບສົບໄວ້ເປັນຢ່າງດີ. ເຂົາມີຄວາມຈຳແບບເປັນຕາງຶດທີ່ຄົນທຳມະດາທົ່ວໄປເຮັດບໍ່ໄດ້ທັງຂ້ອຍກັບຕຸ້ຍເຊິ່ງເປັນແພດຜູ້ຊ່ວຍຕ່າງກໍຮັກແພງເຂົາ."

ທ້ອງໄສ້ຂອງແຫງເລີ່ມຮູ້ສຶກປັ່ນປ່ວນຂຶ້ນມາທັນທີ ເຂົາໃຊ້ມືເຄາະສໍດຳຢ່າງແຮງຈົນໄສ້ສໍແຕກອອກ.

"ຂ້ອຍຈັ່ງແມ່ນຮູ້ສຶກຕື້ນຕັນໃຈພໍຢາກຈະໄຫ້ອອກມາພຸ້ນແຫຼະແນວນີ້. ແຕ່ຕອນນີ້ພວກເຮົາລອງກັບມາຂົບຄິດດ້ວຍເຫດດ້ວຍຜົນນຳກັນຈັກໜ້ອຍໜຶ່ງກ່ອນເທາະ. ທ່ານວາດພາບອອກໄດ້ບໍວ່າ ສະພາບການມັນຈະເປັນແນວໃດຖ້າມີຄົນທີ່ມີຕຳແໜ່ງສູງສັກມາຢ້ຽມຢາມໂຮງໝໍພວກເຮົາ?"

"ຂ້ອຍອາດບໍ່ໄດ້ໃສ່ເກີບຢາງຄູ່ນັ້ນ ສ່ວນຕຸ້ຍກໍລືມໃສ່ຊຸດຊັ້ນໃນ ..."

"ທ່ານໝໍ!"

"ການຢ້ຽມຢາມຂອງບຸກຄົນສຳຄັນກໍບໍ່ແມ່ນຈະຕ້ອງເຂົ້າໄປໃກ້ຫ້ອງເກັບສົບ; ແຕ່ຖ້າຫາກມີເຫດການສຸກເສີນທີ່ພວກເພິ່ນເຂົ້າໄປແລ້ວ ແນ່ນອນພວກເພິ່ນກໍຕ້ອງປະທັບໃຈໃນຄວາມເມດຕາປານີຂອງພວກເຮົາ ໂດຍຈ້າງຄົນຊິນກຸ່ມນ້ອຍຕັ້ງສາມກຸ່ມມາເຮັດວຽກບ່ອນດຽວກັນ ເຊິ່ງມີທັງແມ່ຍິງ, ຄົນປັນຍາອ່ອນ ແລະຜູ້ເຖົ້າຫຼົງກົ່ງທີ່ເນື້ອໜັງມັງສາຫ່ຽວຍານເປັນຕາຢ້ານຢູ່ທີ່ນັ້ນ."

ໂພສີ ຜູ້ເຊິ່ງນັ່ງຢູ່ແບບງຽບໆ ໂດຍບໍ່ມີຄຳເຫັນໃດໆ ຕະຫຼອດຂອງການສົນທະນາອັນໜ້າອຶດອັດ ທັນໃດນັ້ນເຂົາກໍເຮັດສຽງອະແຮມທາງຮູຄໍຂຶ້ນເພື່ອລົບກວນບັນຍາກາດອັນບໍ່ເປັນຕາສາເຫດນັ້ນ: "ຂ້ອຍກໍມີພີ່ນ້ອງທີ່ເປັນນັກໂກລອຍຜູ້ໜຶ່ງ ເຂົາກໍບໍ່ເຫັນຊີເປັນພິດເປັນໄພກັບໃຜ ຊ້ຳບໍ່ພໍເຂົາຍັງເຮັດຈົນກ້ວຍໃຫ້ພວກເຮົາກິນທຸກໆ ມື້ວັນສຸກຕະຫຼອດເວລາຜ່ານມາ ພວກເຮົາຈົນລືມຄິດເລີຍວ່າເຂົາເປັນຄົນບໍ່ເຕັມບາດ."

ສີຣິກັບແທງພາກັນຫັນໜ້າມາທາງເຈົ້າໜ້າທີ່ຕຳຫຼວດຜູ້ນັ້ນ ເຊິ່ງເຂົາຮອດບໍ່ເງີຍໜ້າຂຶ້ນແນມເບິ່ງໃຜເລີຍ.

ຄຳຄິດເຫັນອັນແສນຈະທຳມະດາຄຳນັ້ນໄດ້ເຮັດໃຫ້ສະພາບການອັນເຄັ່ງຕຶງທີ່ພວມເກີດຂຶ້ນແບບສົດໆ ຮ້ອນໆ ໃນຫ້ອງການຂອງຜູ້ພິພາກສາແທງຄ່ອຍສະຫງົບລົງແຕ່ກໍຍັງມີຄວາມເຄັ່ງຄຽດບາງຢ່າງຄ້າງຄາຢູ່ໃນໃຈຂອງອີກຝ່າຍ ຄືກັບໄດ້ຖອກນ້ຳໃສ່ກອງໄຟທີ່ພວມລຸກໄໝ້. ຊ້ຳບໍ່ພໍມັນຍັງເຮັດໃຫ້ຜູ້ພິພາກສາຮູ້ສຶກວ່າຕົນເອງບໍ່ມີໃຜເຂົ້າຂ້າງເລີຍ ເຂົາຈິ່ງເຫັນດີຍອມໃຫ້ກິ່ງເຮັດວຽກຢູ່ໂຮງເກັບສົບຕໍ່ ແຕ່ກໍຕ້ອງໄດ້ຮັບຄຳເຫັນດີຈາກພາກສ່ວນພາຍນອກທີ່ກ່ຽວຂ້ອງຕື່ມ ແຕ່ກິ່ງຄົງຈະບໍ່ໄດ້ຮັບເງິນເດືອນເພີ່ມເໝືອນກັບແທງບອກໄວ້.

ແລະແລ້ວການປະຊຸມກັນກໍສິ້ນສຸດລົງ ສີຣິກັບໂພສີພາກັນຈັບມືທັກທາຍອຳລາກັບຜູ້ພິພາກສາໜຸ່ມ ກ່ອນຈະຍ່າງໄປທີ່ປະຕູທາງອອກພ້ອມກັນ ແຕ່ກ່ອນທີ່ຈະເດີນຕາມສີຣິໄປທີ່ຫ້ອງໂຖງໃຫຍ່ ໂພສີກໍອວ່າຍໜ້າກັບຄືນມາ.

"ສະຫາຍຜູ້ພິພາກສາ, ຂ້າພະເຈົ້າຢາກບອກທ່ານວ່າການພົບປະກັນຄັ້ງນີ້ໄດ້ສ້າງແຮງບັນດານໃຈຫຼາຍສົມຄວນໃຫ້ກັບຂ້າພະເຈົ້າ. ແລະຂ້າພະເຈົ້າກໍຫວັງວ່າມັນຄົງຈະບໍ່ເຮັດໃຫ້ທ່ານອຶດອັດໃຈຫຍັງດອກຖ້າຂ້າພະເຈົ້າຈະບອກເຖິງຄວາມໝັ້ນໃຈ ທັງຄວາມເຊື່ອໝັ້ນຕໍ່ລະບອບສັງຄົມນິຍົມຂອງພວກເຮົາ ທຸກຄັ້ງທີ່ຂ້າພະເຈົ້າໄດ້ພົບປະກັບຄົນແບບທ່ານ. ຂ້າພະເຈົ້າດີໃຈເປັນຢ່າງຍິ່ງທີ່ປະເທດຂອງພວກເຮົາມີຫຸ່ນເຊີດທີ່ໜ້ານັບຖືແບບທ່ານອີກຄົນ."

ພໍແຕ່ຄຳເວົ້າດັ່ງກ່າວລອຍມາທາງຫ້ອງໂຖງ ເຮັດໃຫ້ສີຣິພໍຄິດຢາກຈະຮາກແຕກອອກ. ເມື່ອນາຍຕຳຫຼວດຄົນນັ້ນຍ່າງຕາມມາທັນ ທັງສອງຈິ່ງພາກັນເດີນຕາມທາງຄອນກຣີດໄປເບື້ອງບ່ອນຈອດລົດແບບບໍ່ເວົ້າບໍ່ລົມກັນຈັກຄຳ. ເຂົາເປັນຄົນທີ່ສີຣິຈະເຮັດວຽກນຳ ສະນັ້ນຕ້ອງສຸພາບເຂົ້າໄວ້ ເຖິງຈະມັກ ຫຼືບໍ່ມັກກໍຕາມ. ສີຣິແນມເບິ່ງນາຍຕຳຫຼວດກົ້ມໆ ເງີຍໆ ຢູ່ຕໍ່ໜ້າລົດຈັກຄັນເກົ່າໆ ຂອງຝຣັ່ງເສດ.

"ພີ່ນ້ອງທີ່ເຈົ້າເວົ້າເຖິງຫັ້ນພັກຢູ່ກັບຄອບຄົວເຈົ້າບໍ?"

ນາຍຕຳຫຼວດໜຸ່ມກົ້ມລົງເບິ່ງເກີບບູ໊ດຂອງຕົນ.

"ພີ່ນ້ອງຄົນໃດອີກ?"

"ພີ່ນ້ອງຜູ້ເປັນມົງໂກລອຍທີ່ຈີນກ້ວຍໃຫ້ພວກເຈົ້າກິນຫັ້ນເດ." ແຕ່ແລ້ວກໍບໍ່ມີປະຕິກິລິຍາໂຕ້ຕອບໃດໆ ກ່ອນທີ່ສີຣິຈະເວົ້າຕໍ່. "ຄວາມຈິງເຈົ້າຮອດບໍ່ມີພີ່ນ້ອງເປັນໂລກນີ້ຊ້ຳຕິຊັ້ນນະ?"

ສາລະວັດໂພສີກ້າວຂາຂຶ້ນນັ່ງຄາບຢູ່ເທິງລົດຈັກຂອງເຂົາ ພ້ອມເຜີຍຮອຍຍິ້ມບາງໆປາກົດຢູ່ເທິງຮີມສົບ.

"ຂ້ອຍມີນ້ອງສາວຄົນໜຶ່ງທີ່ເປັນພະຍາດລົດສີດວງ." ເຂົາພະຍາຍາມຕິດຈັກລົດເຖິງສີ່ຫ້າຄັ້ງກ່ອນທີ່ມັນຈະເຮັດວຽກ ທັງສົ່ງສຽງດັງຮື່ມໆ ເປັນຕາຢ້ານ ພ້ອມພົ່ນຄວັນດຳໂງ່ກຸ້ມອອກມາຈາກທໍ່ໄອເສຍ ມັນບໍ່ມີທ່າທີ່ວ່າຈະພຸ່ງຂຶ້ນ ຫຼືຫາຍໄປກັບອາກາດ.

ສີຣິທີ່ຢືນຢູ່ທ່າມກາງຄວັນດຳແຫງນໜ້າຂຶ້ນທັງຫົວຄົນດຽວ ວິນາທີນັ້ນເອງທີ່ເຂົາສາມາດຕັດສິນໃຈໄດ້ ເຊິ່ງເປັນການຕັດສິນໃຈທີ່ໄວ ທັງສ່ຽງອັນຕະລາຍໂດຍທີ່ເຂົາເອງບໍ່ເຄີຍເປັນແບບນີ້ມາກ່ອນແລ້ວ.

"ຂ້ອຍຢາກລົມກັບເຈົ້າເລື່ອງຄະດີກໍລະນີໜຶ່ງ."

"ຖ້າວັນຈັນຈິ່ງລົມກໍໄດ້."

"ບໍ່ໄດ້ ຂ້ອຍຢາກລົມຕອນນີ້."

ສາລະວັດຄົນນັ້ນຈ້ອງມອງເຂົ້າໄປທີ່ດວງຕາສີຂຽວທັງຄູ່ຂອງສີຣິ ພ້ອມງຶກຫົວງ່ອກໆ.

"ຄັນຊັ້ນຂ້ອຍຈະໄປຫາທ່ານໝໍຢູ່ເຮືອນຕອນແລງເດີ."

"ເຈົ້າຮູ້ຊັ້ນເບາະວ່າເຮືອນຂ້ອຍຢູ່ໃສ?"

"ຂ້ອຍເປັນເຈົ້າໜ້າທີ່ຕຳຫຼວດສືບສວນໃດ."

ເວົ້າສຸດ ໂພສີກໍເລັ່ງຈັກລົດ ພ້ອມຂັບອອກໄປໂດຍບໍ່ລໍຖ້າຟັງຄຳອະທິບາຍໃດໆ ອີກປ່ອຍໃຫ້ຜູ້ທີ່ຢູ່ເບື້ອງຫຼັງເຊິ່ງກຳລັງຂີ່ລົດຖີບຢູ່ສະມັກກັບຄວັນດຳທີ່ພົ່ນອອກມາຈາກທໍ່ລົດຈັກຄັນເກົ່າໝອງຂອງຕົນ.

ໂພສີຄ່ອຍຢ່ອງບາດຕີນຜ່ານຂຶ້ນໄປທາງຂັ້ນໄດຢູ່ນອກປະຕູໜ້າຫ້ອງຂອງສີຣິ ໂດຍທີ່ກະດານຫຼວມໆ ເຊິ່ງຕັ້ງຢູ່ທາງເທິງຮອດບໍ່ສົ່ງສຽງດັງອອດແອດແມ່ນແຕ່ໜ້ອຍດຽວ. ດັ່ງນັ້ນຈິ່ງເຮັດໃຫ້ສີຣິສະດຸ້ງຕື່ນບາດໜຶ່ງ ເມື່ອໄດ້ຍິນສຽງເຄາະປະຕູດັງຂຶ້ນ.

"ເຊີນເຂົ້າມາ."

ເຈົ້າໜ້າທີ່ຕຳຫຼວດຄົນນັ້ນຜະຫຼາຕົວຂ້າມຜ່ານປະຕູ ໂດຍທີ່ເຂົາໄດ້ປົດເກີບໄວ້ຂ້າງນອກກ່ອນແລ້ວ. ເຂົາຢູ່ໃນຊຸດນອກເຄື່ອງແບບ ໂດຍມີຂວດອັນໜຶ່ງຕິດມາກັບມື. ເຖິງແມ່ນຈະເຮັດຫຍັງບໍ່ໄດ້ ແຕ່ກໍຈຳຕ້ອງໃຫ້ຄວາມເຄົາລົບກັບຄົນທີ່ມີຂວດເຄື່ອງດື່ມ

ຢູ່ໃນມືເຊິ່ງກຳລັງມາປາກົດຕົວຢູ່ໜ້າປະຕູ. ສີຣິສັກສາຍຕາໄປທີ່ຂວດໜ່ວຍນັ້ນ.

"ຂ້ອຍຫວັງວ່າມັນຄົງບໍ່ແມ່ນຕົວຢ່າງນ້ຳຍ່ຽວທີ່ເຈົ້າຢາກຈະໃຫ້ຂ້ອຍວິເຄາະຕິເນາະ."

ໂພສີກ້າວບາດຕີນເຂົ້າໄປທາງໃນ ທັງກວາດສາຍຕາໄປທາງບ່ອນຕັ້ງຈອກແກ້ວຢ່າງວ່ອງໄວ ກ່ອນທີ່ຈະເປີດຂວດພ້ອມເລີ່ມເທຍັ້ນມັນລົງໃສ່ຈອກ.

"ມັນເປັນເຫຼົ້າແບຣນດີໜຶ່ງດຽວຂອງໄທ. ຂ້ອຍຄວນຖາມທ່ານກ່ອນວ່າທ່ານກໍດື່ມມັນບໍ່." ເຂົາເວົ້າທັງຍົກຈອກທີ່ບັນຈຸເຫຼົ້າໜ່ວຍໜຶ່ງໄປທາງສີຣິ ເຊິ່ງເຂົາກໍງຶກຫົວຕອບຮັບຈາກແຂກຜູ້ໃຈດີຂອງຕົນ.

"ນີ້ແມ່ນວິທີການສະແດງນ້ຳໃຈຂອງກອງກຳລັງຕຳຫຼວດແບບໃໝ່ແມ່ນບໍ່?"

"ຂ້ອຍຖືກສອນມາເພື່ອໃຫ້ຮູ້ຈັກສະແດງຄວາມເຄົາລົບຕໍ່ຜູ້ທີ່ອາວຸໂສ ກວ່າ."

"ກໍຮູ້ຢູ່ວ່າ ບໍ່ຈຳເປັນຕ້ອງມາເຮັດປະຈົບປະແຈງກໍໄດ້."

"ຂ້ອຍຮູ້ແລ້ວ."

"ເອົາໂຊກດີຊັ້ນ."

"ໂຊກດີ." ຈາກນັ້ນທັງສອງຈັບຈອກໃສ່ປາກທັງຈິບນ້ຳເຫຼົ້າລົງທ້ອງພ້ອມກັນ.

"ເບິ່ງຄືວ່າເຈົ້າກໍໄດ້ຮຽນຮູ້ຫຼາຍແນວຢູ່ໃນຄ້າຍ."

"ມັນເປັນປະສົບການທີ່ຄຸ້ມຄ່າສຸດໆ. ຂ້ອຍຈື່ຊື່ຜັກໄດ້ຮອດເຈັດສິບສາມຊະນິດ. ຂ້ອຍສາມາດບອກໄດ້ວ່າຕົ້ນເຂົ້າທີ່ງອກຂຶ້ນມາມີອາຍຸເທົ່າໃດ ຫຼືແມ່ນແຕ່ຄວາຍຖືພາຈັກເດືອນກໍຍັງຮູ້."

ສີຣິຫົວຂຶ້ນແບບພໍໃຈ.

"ເອົາໂຊກດີ."

"ໂດຍ ໂຊກດີ."

ພໍແຕ່ເຫຼົ້າຈອກທຳອິດໝົດກ້ຽງ ສີຣິຈິ່ງຈັບເອົາຂວດເຫຼົ້າມາເທຍັ້ນອີກເປັນຮອບທີສອງ.

"ໝາຍຄວາມວ່າພວກເຂົາບໍ່ສາມາດປ່ຽນໃຫ້ເຈົ້າກາຍເປັນລັດທິຄອມມູຍນິດໄດ້ແມ່ນບໍ?"

"ພວກເຂົາເຮັດໃຫ້ຂ້ອຍເຫັນແຈ້ງເຖິງຜົນປະໂຫຍດຂອງລະບອບສັງຄົມນິຍົມລວມທັງຄຸນຄ່າຂອງຄວາມພະຍາ ..."

"ພໍແຫຼະ, ພໍແຫຼະ, ຂ້ອຍຈະບໍ່ຖາມຫຍັງກ່ຽວກັບຄ້າຍຫັ້ນອີກ. ມາເລົ່າເລື່ອງຜູ້ຊາຍທີ່ຊື່ໂພສີໃຫ້ຂ້ອຍຟັງດີກວ່າ."

ໜຶ່ງຊົ່ວໂມງຜ່ານໄປ, ສີຣິຈິ່ງຮູ້ວ່າ ໂພສີສ້າງຄອບຄົວແລ້ວ ແລະມີລູກສອງຄົນ. ໃນຊ່ວງທີ່ເຂົາຖືກສົ່ງໄປຝຶກອົບຮົມຢູ່ພາກເໜືອ ທັງລູກ ແລະເມຍໄດ້ພາກັນໂຕນໜີ

ຂ້າມໄປທາງຝັ່ງແມ່ນ້ຳເບື້ອງນັ້ນ; ນັບແຕ່ນັ້ນມາເຂົາກໍບໍ່ໄດ້ຍິນຂ່າວຄາວຂອງທັງສາມຄົນເລີຍ. ເຂົາກັບມາເຮືອນໃນສະພາບທີ່ເປົ່າວ່າງໄຮ້ຮ່ອງຮອຍລູກເມຍ ແມ່ນແຕ່ເຄື່ອງເຮືອນຕ່າງໆ ກໍຍັງບໍ່ມີໃຫ້ເຫຼືອໄວ້ພໍຈະເກັບເປັນທີ່ລະນຶກ ແລະຕອນນີ້ເຂົາອາໄສຢູ່ໃນຫ້ອງແຄບໆ ທີ່ເປັນຫ້ອງນອນຫ້ອງດຽວ.

ສ່ວນໂພສີກໍໄດ້ຮູ້ວ່າສີຣິເຄີຍສ້າງຄອບຄົວມາກ່ອນ ທັງມີຄວາມສັດຊື່ຕໍ່ແມ່ຍິງໃນນາມວ່າເມຍຂອງເຂົາພຽງຜູ້ດຽວໃນຊີວິດ. ນາງບໍ່ເຄີຍຍອມປ່ອຍໃຫ້ບັນຫາອຸປະສັກໃດໆ ມາຂວາງກັ້ນໃຫ້ແກ່ການອຸທິດໃນອຸດົມການຂອງຕົນ ດ້ວຍເຫດນັ້ນເອງພວກເຂົາຈຶ່ງບໍ່ມີລູກນຳກັນຈັກຄົນ. ສິ່ງນີ້ຍິ່ງເຮັດໃຫ້ເລື່ອງລາວຕ່າງໆ ເພີ່ມຄວາມຫຍຸ້ງຍາກເປົ່າປ່ຽວຂຶ້ນຕື່ມອີກ ເມື່ອສິບເອັດປີກ່ອນເມຍຂອງສີຣິຖືກລອບຂ້າໃນສະຖານະການທີ່ຍັງຄາລັງຄາຊັງແບບຈັບຕົ້ນຊົນປາຍບໍ່ໄດ້ ເຮັດໃຫ້ສີຣິເກືອບຈະໝົດໃນຄວາມກະຕືລືລົ້ນກັບຊີວິດ ທັງໜ້າທີ່ການງານ ຫຼືແມ່ນແຕ່ໃນຄວາມກ້າວໜ້າຂອງຂະບວນການຄອມມູຍນິດ.

ເປັນເລື່ອງທີ່ໜ້າອັດສະຈັນທີ່ຄົນແປກໜ້າທັງສອງໄດ້ຮຽນຮູ້ເລື່ອງລາວຂອງກັນແລະກັນໃນເວລາອັນສັ້ນ ຍ້ອນມີເຫຼົ້າໄທຂວດນັ້ນເປັນຕົວຊ່ວຍ. ສິ່ງທີ່ໜ້າສົນໃຈກວ່ານັ້ນກໍຄືທັງສອງຕ່າງກໍຊັ່ງຊາຕີລາຄາກັນໄດ້ແບບສະບາຍ ທັງຕັດສິນໃຈມອບຄວາມເຊື່ອໝັ້ນຕໍ່ກັນໄດ້ໄວເກີນເວລາອັນຄວນ.

"ວ່າຈັ່ງໃດທ່ານໝໍ, ທ່ານມີຄະດີທີ່ຢາກຈະປຶກສາຂ້ອຍແບບຈິງຈັງ ຫຼືພຽງແຕ່ຢາກໃຫ້ຂ້ອຍຖືຂວດເຫຼົ້າມາດື່ມສັງສັນກັນຊື່ໆ ບໍ?"

ສີຣິຮູ້ສຶກວ່າຕອນນີ້ຕົນເອງມາໄກເກີນກວ່າຈະຖອນໂຕອອກໄດ້ທັນ. ເຂົາຈຶ່ງຜ່ອນສຽງລົງໃຫ້ອ່າວຄ່ອຍໜ້ອຍໜຶ່ງ.

"ຂ້ອຍບອກເຈົ້າກໍໄດ້ ແຕ່ຂ້ອຍບໍ່ໝັ້ນໃຈວ່າເຈົ້າຈະສົນໃຈຈົນຕ້ອງລົງມືເຮັດແທ້ທຳຈິງ ຫຼືບໍ່ເທົ່ານັ້ນແຫຼະ."

"ເປັນຫຍັງຊິເຮັດບໍ່ໄດ້ລະ?"

"ມັນອາດຈະເຮັດໃຫ້ເຈົ້າມີປັນຫາໜັກຫັ້ນແຫຼະ."

"ແລ້ວທ່ານເດລະ? ທ່ານບໍ່ຢ້ານມີປັນຫາໜັກບໍ?"

"ຂ້ອຍມີປັນຫາໜັກປະຈຳຕົວຢູ່ແລ້ວ."

"ແມ່ນໃຜບອກທ່ານໃຫ້ເຊື່ອໃຈຂ້ອຍ?"

"ພີ່ນ້ອງທີ່ເປັນໂລກມົງໂກລອຍ ກັບນ້ອງສາວທີ່ເປັນລິດສີດວງທະວານຂອງເຈົ້າຫັ້ນແຫຼະ."

ສຽງຫົວຂອງພວກເຂົາແຕກໂຄບຂຶ້ນພ້ອມກັນ ກ່ອນທີ່ທັງສອງຈະຍົກຈອກເຫຼົ້າ

ຂຶ້ນໃສ່ປາກພ້ອມກືນລົງທ້ອງຈົນໝົດເຮືອກສຸດທ້າຍ.

"ທ່ານບໍ່ຈຳເປັນຕ້ອງໄປເຊື່ອພວກເຂົາປານນັ້ນກໍໄດ້ ສອງຄົນທັ້ນເວົ້າເປັນໃດ. ທ່ານມີກາເຟບໍ?"

ໃນຂະນະທີ່ກຳລັງກະກຽມເຄື່ອງກອງທີ່ເຮັດດ້ວຍອາລູຍມີນຽມ ພ້ອມບ່ວງຕັກກາເຟອັນເຂັ້ມຂຸ້ນ ເລື່ອງບົດລາຍງານກ່ຽວກັບຄະດີການຕາຍຂອງທ່ານນາງນິດນ້ອຍທີ່ຕົນຢາກຈະເວົ້າໃຫ້ໂພສີຟັງກໍຜຸດຂຶ້ນມາໃນຫົວ. ພໍແຕ່ວາງຈອກກາເຟທັງສອງໄວ້ເທິງໂຕະ ເຂົາກໍຟ້າວຍ່າງໄປປິດປະຕູປ່ອງຢ້ຽມທັນທີ.

ການມາຕັ້ງຫ້ອງການໃສ່ເຂດໂຮງໝໍຂອງເກດແກ້ວ ເຮັດໃຫ້ສີຣິຮູ້ທັນວ່າ ມີຄົນສອດຮູ້ສອດເຫັນຢູ່ທຸກແຈມູມ ບໍ່ວ່າຈະຢູ່ໃນວັດ, ບ້ານເຮືອນ ຫຼືແມ່ນແຕ່ຢູ່ຫ້ອງທາງຂ້າງ. ກຸ່ມເຍົາວະຊົນສ່ວນໃຫຍ່ໄດ້ຮັບການຝຶກຝົນໃຫ້ຄອຍເປັນຫູເປັນຕາ ສືບຟັງກ່ຽວກັບເລື່ອງບໍ່ເອົາການເອົາງານຂອງພໍ່ແມ່ຜູ້ປົກຄອງພວກຕົນ ພ້ອມລາຍງານໃຫ້ເຈົ້າໜ້າທີ່. ຂະນະທີ່ຄົນນັບໄກ່ ຄືໝໍເກດແກ້ວ ກໍມັກຈະລີ້ຕົວຢູ່ໃກ້ກັບໜ້າປະຕູປ່ອງຢ້ຽມພ້ອມຈອບຟັງວ່າໃຜຄິດທໍລະຍົດ ຫຼືແອບຟັງລາຍການວິທະຍຸຂອງໄທຢູ່ ຫຼືບໍ່. ແມ່ນແຕ່ຄົນລາວທີ່ຂຶ້ນຊື່ວ່າເປັນພວກທີ່ມັກຢູ່ກັນແບບຮຽບງ່າຍສະບາຍໆ ໃນເຂດພູມີພາກນີ້ ແຕ່ຍ້ອນມີພຶດຕິກຳທີ່ບໍ່ໜ້າໄວ້ໃຈເຊັ່ນນີ້ ໄດ້ເປັນຕົວການເຮັດໃຫ້ຄວາມຫວາດລະແວງຄ່ອຍກໍ່ຕົວຂຶ້ນກັບຈິດໃຈຂອງພວກເຂົາເທື່ອລະໜ້ອຍ.

ສີຣິລາກຕັ່ງອີ້ຂອງຕົນໄປຕັ້ງຢູ່ຂ້າງໆ ກັບໂພສີ ກ່ອນຈະປ້າຍກົ້ນລົງນັ່ງ ພ້ອມເວົ້າເຖິງຜົນຂອງການທົດລອງທີ່ໄດ້ມາຮອດຫ້ອງການໃນວັນອັງຄານດ້ວຍສຽງກະຊິບຄ່ອຍໆ.

"ບໍ່ມີຫຼັກຖານໃດໃນສະໝອງທີ່ບອກວ່ານາງຕາຍຍ້ອນແມ່ທ້ອງ ເຊິ່ງການຕາຍກະທັນຫັນແບບນີ້ຕ້ອງມີຕຸ່ມໃດໜຶ່ງປາກົດຄ້າງໃນສະໝອງ ແຕ່ອັນນີ້ບໍ່ມີຫຍັງເລີຍ."

"ບໍ່ແມ່ນພວກແມ່ທ້ອງພາກັນຊ້ອນຕົວຢູ່ສ່ວນອື່ນໆ ຂອງຮ່າງກາຍບໍ?"

"ຖ້າມີແບບນັ້ນ ແມ່ນອນນາງກໍຕ້ອງມີອາການເຈັບປ່ວຍໃນຊ່ວງເວລາໃດໜຶ່ງແຫຼະ. ມີພຽງສະໝອງຈຸດດຽວເທົ່ານັ້ນທີ່ເປັນສາເຫດເຮັດໃຫ້ນາງເສຍຊີວິດກະທັນຫັນແນວນັ້ນ. ຕາມທີ່ພວກເຮົາໄດ້ທົດລອງຢູ່ໂຮງຮຽນມັດທະຍົມສຶກສາຕອນປາຍ ພວກເຮົາກວດພົບປະລິມານສານໄຊຍາໄນດ໌ໃນກະເພາະອາຫານສູງພໍສົມຄວນ."

"ສານໄຊຍາໄນດ໌ຊັ້ນຫວາ?" ຄືກັບວ່າມີບາງຢ່າງມາກະຕຸ້ນໂສດປະສາດຂອງທັງສອງໃຫ້ສະດຸ້ງຕື່ນຂຶ້ນມາທັນທີ.

"ມັນເປັນຊະນິດຢາທີ່ຮ້າຍແຮງທັງອັນຕະລາຍເຖິງຕາຍໄດ້. ຂ້ອຍໄດ້ດູດຂອງແຫຼວໃນກະເພາະອາຫານອອກມາເພື່ອຈະບັນທຶກໄວ້ ແຕ່ບໍ່ໄດ້ເກັບກ້ອນຊີ້ນໃດໆ ໄວ້ຊ້ຳ.

ສ່ວນບາງອັນທີ່ຄິດວ່າໃຊ້ການບໍ່ໄດ້ກໍເກັບຖິ້ມລົງໃສ່ກອງຂີ້ເຫຍື້ອໝົດໃນມື້ວັນຈັນ ພໍແຕ່ຮູ້ເມື່ອວ່າຂອງພວກນັ້ນອາດມີປະໂຫຍດບາງຢ່າງພໍຈະເກັບມາເປັນຫຼັກຖານໄດ້ ມັນຊ້ຳພັດຖືກໄຟໄໝ້ຈົນກ້ຽງກ່ອນ.”

“ຂ້ອຍເດົາວ່າ ຢາໃນກະເພາະອາຫານຂອງນາງອາດຍັງລະລາຍບໍ່ທັນໝົດເທື່ອ ສ່ວນຕົກຄ້າງທີ່ຍັງບໍ່ທັນໄດ້ດູດຊຶມເຂົ້າສູ່ກະແສເລືອດຈິ່ງກາຍເປັນຄວັນລອຍແຖວໆເຕົາຫຼໍ່ ແລະບ່ອນນັ້ນກໍຖືກລະບາຍອາກາດອອກໝົດ ບວກກັບຜູ້ດູແລອາຄານກໍລາພັກຍ້ອນບໍ່ສະບາຍໃນມື້ຕໍ່ມາ ອັນເປັນສັນຍານບົ່ງບອກວ່າເຂົາໄດ້ຮັບພິດຈາກສານໄຊຢາໄນດ໌ ຊ້ຳບໍ່ພໍຂ້ອຍຍັງພົບຊາກແມງສາບຈຳນວນໜຶ່ງນອນຕາຍອ້ອມຮອບແຖວເຕົາຫຼໍ່ ແລະພວກເຮົາກໍເກັບມາທຳການທົດລອງ ຈິ່ງຮູ້ວ່າຜົນອອກມາເປັນຕາມທີ່ຄິດໄວ້ແທ້.”

“ເປັນຫຍັງທ່ານຈິ່ງຄິດວ່າມີສານໄຊຢາໄນດ໌ເຈືອປົນຢູ່ກັບພວກເມັດຢາຊຸມນັ້ນ?” ໂພສີໂນ້ມຕົວມາທາງໜ້າ ໂດຍທີ່ເຂົາບໍ່ໄດ້ແຕະຕ້ອງຈອກກາເຟແມ່ນແຕ່ນິ້ວດຽວ. ສີຣິເລີ່ມເລົ່າກ່ຽວກັບເລື່ອງຢາ ລວມທັງອາການເມົາຄ້າງຂອງທ່ານນາງນິດນ້ອຍໃຫ້ເຂົາຟັງ.”

“ຂ້ອຍໄດ້ແຕ່ຫວັງວ່າພວກເຮົາຈະພົບຮ່ອງຮອຍຂອງໄຊຢາໄນດ໌ໃນຂວດຢາ ແຕ່ແລ້ວພວກເຮົາກໍພົບມັນອີ່ຫຼີ.”

“ຈາກຢາເມັດອື່ນແມ່ນບໍ່?”

“ໃນຂວດນັ້ນມີຢາສາມເມັດເຫຼືອຢູ່ ເຊິ່ງໜຶ່ງໃນນັ້ນມີຢາໄຊຢາໄນດ໌ ມັນຖືກແປຮູບໃຫ້ມີຂະໜາດນ້ອຍລົງເທົ່າກັບຢາເມັດອື່ນໆ ໂຊແຕ່ພວກແມ່ຍິງທີ່ເຮັດວຽກໃນສະຫະພັນແມ່ຍິງບໍ່ມີໃຜໂຊກຮ້າຍຫຼົງກິນຢາໃນນັ້ນເຂົ້າໄປຫັ້ນແຫຼະ.”

“ສະແດງວ່າມີຄົນຕັ້ງໃຈເອົາຢາໄຊຢາໄນດ໌ສອງເມັດປົນໃສ່ກັບຢາແກ້ປວດຫົວ ໂດຍທີ່ບໍ່ຮູ້ເລີຍວ່ານາງຈະຫຼົງກິນເຂົ້າໄປເມື່ອໃດ. ແຕ່ຂ້ອຍຄິດວ່າມັນຄົງບໍ່ສຳຄັນປານໃດຕິເນາະ. ທ່ານໄດ້ບອກເລື່ອງຊຸມນີ້ໃຫ້ສະຫາຍຄຳຮູ້ແລ້ວບໍ?”

“ອ່າ ນີ້ແຫຼະຄືສິ່ງທີ່ກຳລັງເລີ່ມຊັບຊ້ອນຕອນນີ້.” ສີຣິເວົ້າໃຫ້ໂພສີຟັງກ່ຽວກັບການທີ່ສະຫາຍຄຳເຂົ້າໄປຫ້ອງເກັບສິບໃນມື້ວັນຈັນ ລວມທັງເລື່ອງເອກະສານລາຍງານຫາຍໄປ. ແຕ່ເຂົາກໍບໍ່ໄດ້ເລົ່າເລື່ອງການມາປາກົດຕົວໃຫ້ເຫັນຂອງທ່ານນາງນິດນ້ອຍເລີຍ.

ຕຳຫຼວດສືບສວນຜິວປາກທັງເປັ່ງເປັນສຽງຍາວ ແລະຕໍ່າລົງພ້ອມຈັບຈອກກາເຟຂຶ້ນມາດື່ມຈົນໝົດ.

“ເລື່ອງນີ້ຕ້ອງຫຍຸ້ງເຫຍີງລັກກວ່າຫຍັງ.”

“ຂ້ອຍວ່າຈະຕ້ອງໄດ້ຖ້າເບິ່ງບົດລາຍງານທີ່ຍັງຂຽນບໍ່ທັນແລ້ວກ່ອນມັນຈະປາກົດໃນຮູບຖະແຫຼງການແບບເປັນທາງການ ຫຼືບໍ່ກໍບໍ່ຮູ້.”

“ທ່ານໝໍໄດ້ລົງລາຍເຊັນໃນບົດລາຍງານໂຕນັ້ນແລ້ວບໍ?”

"ບໍ່, ຕອນທີ່ມັນຫາຍໄປນັ້ນ ຂ້ອຍຍັງບໍ່ທັນເຊັນເທື່ອ."

"ດີແລ້ວຊັ້ນນະ. ເພາະນັ້ນຄືຫຼັກຖານທີ່ສາມາດເອົາຜິດໄດ້ທາງອາຍາ ທ່ານບໍ່ຟ້າວແຈ້ງຄວາມກັບເຈົ້າໜ້າທີ່ເທື່ອຈົນກວ່າພວກເຮົາຈະເກັບຫຼັກຖານໄດ້ຫຼາຍກວ່ານີ້. ອີກຢ່າງຊ່ວງນີ້ທາງພະແນກຍຸຕິທຳກໍຍັງບໍ່ທັນມີບົດບາດຫຼາຍພໍທີ່ຈະຈັດການກັບສິ່ງເຫຼົ່ານີ້ ອີກບໍ່ດົນເລື່ອງນີ້ກໍຈະຖືກເປີດເຜີຍອອກມາເອງດອກ. ທ່ານຄິດວ່າແທງ ສະຫາຍຂອງທ່ານຈະຈັດການເລື່ອງນີ້ແນວໃດ?"

"ນັ້ນແຫຼະຄືປະເດັນ. ຂ້ອຍເອງກໍບໍ່ຮູ້ດອກວ່າໃຜແດ່ຈະມີປະຕິກິລິຍາຕອບສະໜອງ. ຕອນພວກເຮົາຢູ່ທາງພາກເໜືອ ທຸກຢ່າງຈະເດີນຕາມຂອບຂອງຄວາມຍຸຕິທຳເພາະຖືເປັນລະບົບຂອງຄວາມຊື່ສັດປະມານນີ້. ແຕ່ຕອນນີ້ພວກເຮົາໄດ້ກາຍເປັນຄົນສະໄໝໃໝ່ທີ່ຈະເລີນແລ້ວ ຜູ້ຄົນຈຳນວນຫຼາຍເບິ່ງຄືວ່າຍັງສວມບົດບາດທີ່ຫຼົງເຫຼືອມາແຕ່ລະບອບການປົກຄອງແບບເກົ່າຢູ່ ຂ້ອຍຈຶ່ງບໍ່ຮູ້ວ່າມີໃຜທີ່ໜ້າເຊື່ອໃຈໄດ້."

ຫຼັງຈາກດື່ມກາເຟຈອກໃໝ່ໝົດ, ທັງສອງກໍພາກັນຍ່າງລົງໄປຂ້າງລຸ່ມ. ຊາລູບຍັງຄົງບໍ່ຫຼັບບໍ່ນອນ ມັນປຽບເໝືອນຜູ້ເຝົ້າຍາມໃນຕອນກາງຄືນ ເຖິງແມ່ນເວລາຈະລ່ວງເລີຍໄປຮອດສິບເອັດໂມງ ມັນກໍຍັງເຮັດຕາເບີກກວ້າງທັງພະຍາຍາມກະໂດດຂຶ້ນໄປທີ່ຂາຂອງສີຣິ ພ້ອມເຫົ່າຫອນ ທັງທີ່ດັງຂອງມັນຫ່າງຈາກຈຸດທີ່ອາດຖືກເຕະຄາງກະໄຕພຽງບໍ່ເທົ່າໃດຊັງຕີແມັດ ແຕ່ມັນກໍຍັງເຮັດຄືກັບວ່າບໍ່ເປັນຜິດເປັນໄພຫຍັງເລີຍ.

"ໝາໂຕນີ້ມັນເປັນຫຍັງ?"

"ມັນຕັ້ງບໍ່ມັກຂີ້ໜ້າຂ້ອຍ ມັນຮັກທຸກຄົນຍົກເວັ້ນຂ້ອຍຜູ້ດຽວ. ເລື່ອງປົກກະຕິດອກທີ່ຂ້ອຍມີປັນຫາກັບໝາເປັນປະຈຳ ບໍ່ເຄີຍມີຈັກໂຕທີ່ຈະບໍ່ເຫົ່າຂ້ອຍແບບນີ້."

"ແປກແທ້ເນາະ."

ໂພສີເງີຍໜ້າຂຶ້ນແນມເບິ່ງບານປະຕູໄມ້ຊັ້ນນອກຂອງປ່ອງຢ້ຽມຫ້ອງນອນ ເຊິ່ງທາງໜ້າກຳລັງຈະຖືກປິດສະໜິດ ສີຣິຟ້າວຕິດຕາມສາຍຕາຂອງເຂົາທັນທີ.

"ຝັນດີສາວວິງ." ເຖິງແມ່ນຈະບໍ່ໄດ້ຍິນສຽງຕອບຈາກປາກນາງ ແຕ່ສີຣິກໍຮູ້ທັນວ່ານາງພຽງຢາກຮູ້ຢາກເຫັນ ບໍ່ວ່າໃຜກໍຕາມທີ່ມາເຮັດສຽງເກາະກະກັບສີຣິຢູ່ຊັ້ນເທິງ ຈະກາຍເປັນຈຸດສົນໃຈຂອງນາງທັນທີ. ຖ້ານາງຫາກຍັງໂຫຍຫາຄວາມຮັກຢູ່ ແນ່ນອນນາງອາດສົນໃຈນາຍຕຳຫຼວດໜ້າຕາດີຄົນນີ້ແນ່ແທ້.

ໃນຂະນະທີ່ໂພສີກ້າວຂາຂຶ້ນຄາບຢູ່ເທິງລົດຈັກຄັນເກົ່າຂອງຕົນ ການປະສານສຽງເຫົ່າຫອນຂອງພວກໝາກໍຍັງດັງກ້ອງກັງວານໄປທົ່ວຖະໜົນອ້ອມຮອບທັງສອງ. ໂພສີຄ່ອຍຫຍັບຕົວເຂົ້າມາໃກ້ໆ ພ້ອມເວົ້າຄືຊິ່ມຄ່ອຍໆ ໃສ່ຫູຂອງສີຣິ.

"ໃຫ້ເວລາຂ້ອຍຄິດເລື່ອງນີ້ກ່ອນທີ່ພວກເຮົາຈະລົງມືເຮັດຫຍັງຈັກຢ່າງ."

"ພວກເຮົາຫວາ?"

ຊາຍທັງສອງຍິ້ມໃສ່ກັນເປັນການແທນຄຳຕອບ ຂະນະທີ່ໂພສີຢັນຈັກລິດຄູ່ຊີວິດກ່ອນຈະເລັ່ງຄວາມໄວອອກໄປ ປ່ອຍໃຫ້ສີຣິຢືນຢູ່ພຽງລຳພັງຄົນດຽວທ່າມກາງໝອກຄວັນ ຖ້າມີໝາໂຕໃດໜຶ່ງເຂົ້າຈູ່ໂຈມ ເຂົາກໍຍັງບໍ່ສາມາດແນມເຫັນໄດ້. ເຖິງແມ່ນຈະຕົກຢູ່ໃນຄວາມສ່ຽງທີ່ເປັນຕາຢ້ານເຊັ່ນນັ້ນ ແຕ່ສີຣິກໍບໍ່ເຄີຍຖືກໝາກັດຈັກເທື່ອ. ບານປະຕູປ່ອງຢ້ຽມໜ້າຫ້ອງນອນຂອງສາວວິງແງ້ມອອກເລັກໜ້ອຍອີກຄັ້ງ.

"ຝັນດີສາວວິງ."

"ນອນໄດ້ແລ້ວທ່ານໝໍສີຣິ."

**********

ໃນມື້ວັນເສົາ, ສົມຄວນແລ້ວທີ່ສີຣິຮູ້ສຶກຫິວໝູນ. ຕັ່ງອີ້ດັງລັ່ນອ້ຽດບາດໜຶ່ງເມື່ອເຂົາເອນຕົວລົງຈາກການພິນິດພິຈາລະນາຂໍ້ຄວາມທີ່ຢູ່ໃນປຶ້ມຕຳລາອັນໜາຕຶບກ່ຽວກັບພະຍາດວິທະຍາ. ເຂົາໃຊ້ມືກ່າຍໜ້າຜາກ ພ້ອມຂົບຄິດກ່ຽວກັບຄຳໆ ໜຶ່ງເຊິ່ງເປັນພາສາຝຣັ່ງທີ່ຍັງຄ້າງຢູ່ໃນຫົວ ແລະເຂົາກໍຮູ້ວ່າມັນຍັງຢູ່ໃນຫົວນັ້ນແຫຼະ ເພາະລາວເຄີຍເກັບມັນໄວ້ເມື່ອຫ້າສິບປີກ່ອນ ແລະຍັງບໍ່ມີວຽກງານຫຍັງທີ່ຈຳເປັນຈະຕ້ອງໄດ້ໃຊ້ມັນແຕ່ພໍຮອດຍາມຢາກໃຊ້ ເຂົາຊໍ້າພັດຄິດຫຍັງບໍ່ອອກເລີຍ.

ຮອຍຈີກຂາດຂອງເສັ້ນເລືອດແດງໃນຊ່ອງເອິກ ອາດມີສາເຫດຈາກແຮງປະທະທີ່ເກີດຂຶ້ນຢ່າງວ່ອງໄວ ຫຼື '*précipitation*' ແລ້ວຄຳວ່າ '*précipitation*' ມັນແປວ່າຫຍັງກັນແທ້?

ໜ້າປຶ້ມວັດຈະນານຸກົມທີ່ເປັນພາສາຝຣັ່ງຂອງເຂົາຖືກຫຍິບຕິດກັນເປັນປຶກພາຍຫຼັງພົບກັບພາຍຸໄຕ້ຝຸ່ນເມື່ອປີກ່ອນ ແລະເຂົາຍັງບໍ່ມີປັນຍາພໍທີ່ຈະຈີກເງິນຊື້ເຫຼັ້ມໃໝ່ມາແທນໄດ້.

"ຈັກໜ່ອຍກໍຄິດອອກເອງ." ລາວເວົ້າກັບໂຕເອງພ້ອມໃຊ້ມືສອງຂ້າງປະສານກັນຢູ່ທ້າຍງ່ອນ ກ່ອນຈະເອນຕົວໄປທາງຫຼັງຈົນສຸດເຂດເທົ່າທີ່ຕັ່ງອີ້ຈະເອື້ອອຳນວຍ "ຈັກໜ່ອຍກໍຄິດອອກ." ເຂົາເລັ່ງສາຍຕາໄປທີ່ປະຕູທາງເຂົ້າ ແຕ່ກໍຕ້ອງຕົກໃຈທັນທີເມື່ອເຫັນຊາຍຮ່າງຜອມບາງຄົນໜຶ່ງຢືນຢູ່ໃນຊຸດເຄື່ອງແບບຊາຍທີ່ມີຂະໜາດໃຫຍ່ກວ່າໂຕຄົນໃສ່ ມັນເປັນເຄື່ອງແບບທີ່ເຂົາຮູ້ດີ ເມື່ອກ່ອນເປັນເຄື່ອງແບບທະຫານຂອງຫວຽດນາມເໜືອ ແຕ່ຕອນນີ້ໄດ້ກາຍເປັນເຄື່ອງແບບທະຫານຫວຽດນາມທົ່ວປະເທດ. ແຕ່ເຂົາບໍ່ເຄີຍເຫັນໃຜນຸ່ງເຄື່ອງແບບໃຫຍ່ອ່ວມແນວນີ້ມາກ່ອນ ມັນເຮັດໃຫ້ສີຣິຄິດເຖິງຊຸດຂອງສັດປະຫຼາດທີ່ເຂົາເຄີຍເຫັນໃນໜັງນິຍາຍວິທະຍາສາດຍີ່ປຸ່ນ. ຄໍຂອງຊາຍຄົນ

ນັ້ນໂຜ່ອອກມາຈາກສິ້ນຄໍເສື້ອອັນຫຼວມໆ ເຊິ່ງມີບ່ອນວ່າງບັນຈຸໄດ້ຮອດສາມຄໍ ອີກສ່ວນທີ່ເຫຼືອຂອງຊຸດໄດ້ມັດຈອງເຂົາໄວ້ຄ້າຍກັບວ່າມັນຖືກແຂວນຫ້ອຍຕ່ອງແຕ່ງຈາກຄັນເບັດ. ແລະແລ້ວຊາຍຄົນນັ້ນກໍເວົ້າກັບສີຣິເປັນພາສາຫວຽດນາມ.

"ຂ້າພະເຈົ້າຢາກພົບກັບທ່ານໝໍ ສີຣິ ໄພບູນ."

ພາສາຫວຽດນາມຂອງສີຣິຂ້ອນຂ້າງໜັກປາກພໍສົມຄວນ ແຕ່ເຂົາກໍເວົ້າໄດ້ຫຼ່ຽນໄຫຼດີ ເນື່ອງຈາກເຂົາເຄີຍໃຊ້ຊີວິດຢູ່ພາກເໜືອຂອງຫວຽດນາມເປັນເວລາສິບຫ້າປີ ໃນຕອນຕົ້ນກໍເພື່ອຝຶກແອບໃຫ້ເປັນນັກປະຕິວັດ ແຕ່ທ້າຍສຸດຄົນພວກນັ້ນກໍຮູ້ແຈ້ງວ່າສີຣິຍັງບໍ່ເໝາະສົມທີ່ຈະຝຶກໃຫ້ທຳການຕໍ່ສູ້ແບບກຳລັງກອງຫຼອນ ພວກເຂົາຈິ່ງສົ່ງລາວໄປເຮັດວຽກປະຈຳໂຮງໝໍພາກສະໜາມກັບຫວຽດກົງ.

"ຂ້ອຍນີ້ແຫຼະ."

ຊາຍຄົນນັ້ນຍິ້ມແບບໂລ່ງໃຈ ທັງຖືກບາດຕີນເຂົ້າໄປທີ່ໂຕະແບບເກງໆ ເຂົາຈັບມືສີຣິດ້ວຍຄວາມເຂີນອາຍ.

"ຂໍອະໄພສໍາລັບ ..." ເຂົາສັກຕາຕໍ່າລົງຄືກັບກໍາລັງສໍາຫຼວດເບິ່ງໜ້າອົກຕົນເອງຈັ່ງຊັ້ນແຫຼະ.

"ເບິ່ງສະພາບຊຸດແບບນີ້ ທ່ານຄົງໝົດຕູດມາແຕ່ຫຼິ້ນການພະນັນແມ່ນບໍ?"

ຊາຍຫວຽດນາມຫົວຂຶ້ນໝົດແຮງ.

"ບໍ່ແມ່ນ, ມັນເປັນຊຸດດຽວທີ່ມີຢູ່ໃນສະຖານທູດ."

"ແລ້ວເປັນຫຍັງຈິ່ງນຸ່ງມັນແຫຼະ?"

"ຂ້ອຍຖືກສົ່ງຕົວໃຫ້ມາເປັນທີ່ປຶກສາທາງການທະຫານ ແຕ່ທ່ານເອກອັກຄະລັດຖະທູດຢ້ານວ່າຂ້ອຍຈະຖືກຍິງຖ້ານຸ່ງຊຸດທໍາມະດາ ເພາະຢ້ານຄົນສົງໄສວ່າເປັນສາຍລັບ ຖ້າຂ້ອຍເດີນໄປມາແຖວນີ້." ສີຣິຫົວຂຶ້ນ. ເລື່ອງລາວທີ່ຊາຍຫວຽດນາມເລົ່າມາມັນຊ່າງເປັນຕາຫົວກວ່າເລື່ອງຊຸດເຄື່ອງແບບໂຕນີ້ອີກ. "ຂ້ອຍແມ່ນທ່ານໝໍຫງຽນຫົງ."

"ຄັນຊັ້ນກໍເຊີນນັ່ງຢູ່ຕັ່ງອີ້ໜ່ວຍນັ້ນກ່ອນ ແລ້ວບອກຂ້ອຍເລີຍຖ້າມີຫຍັງໃຫ້ຊ່ວຍ."

ຫງຽນຫົງຍິ້ມ ພ້ອມປ້າຍກົ້ນລົງນັ່ງຢູ່ກົງກັນຂ້າມກັບສີຣິ.

"ໄດ້ຂ່າວວ່າອາທິດນີ້ມີສິບທີ່ຕາຍຈົມນໍ້າໜຶ່ງສິບຖືກສົ່ງມານີ້."

"ອາ. ສິບທີສອງ, ທ່ານເປັນຜູ້ຊ່ຽວຊານດ້ານນິຕິວິທະຍາສາດນີ້ເອງ."

"ທີ່ຈິງກໍເປັນພຽງເຈົ້າໜ້າທີ່ຊັນນະສູດສົບເຖົ້າໆ ເທົ່ານັ້ນແຫຼະ."

ເມື່ອແນມເບິ່ງເຂົາຕອນຢືນຢູ່ໜ້າປະຕູຄືຈັ່ງວ່າຍັງບໍ່ທັນແກ່ປານໃດ, ແຕ່ພໍມາເບິ່ງໃກ້ໆ ຜົມຂອງລາວກໍຍັງດົກດໍາກວ່າສິ່ງທີ່ທໍາມະຊາດກໍານົດ ສ່ວນແຂ້ວກໍຂ້ອນຂ້າງ

ໃຫຍ່ກວ່າປາກ. ເຂົາອາດຈະມີອາຍຸຣຸ່ນຣາວຄາວດຽວກັບສີຣິ ພຽງແຕ່ມີການເສີມແຕ່ງບາງຢ່າງເລັກໜ້ອຍ.

"ຂ້ອຍພໍຈະເຮັດຫຍັງຊ່ວຍທ່ານໄດ້ແດ່?"

"ຂ້ອຍຢາກຈະເບິ່ງສົບທີ່ຖືກສົ່ງມາທາງນີ້. ຂ້ອຍຮູ້ວ່າຕ້ອງມີການສົ່ງຄຳຮ້ອງຢ່າງເປັນທາງການ ແຕ່ຂ້ອຍພັດມັກວິທີການແບບ 'ລອງຂໍກັນເຊິ່ງໜ້າ' ດີກວ່າ."

"ຂ້ອຍຄືກັນ."

"ດີແລ້ວຊັ້ນ. ມີເຫດຜົນທຸກຢ່າງທີ່ເຊື່ອວ່າສົບທີ່ຢູ່ນຳທ່ານນັ້ນເປັນຄົນຫວຽດນາມແທ້. ແຕ່ຖ້າບໍ່ມີຮອຍສັກພວກເຮົາກໍຄົງຫາຂໍ້ອ້າງບໍ່ໄດ້ວ່າແມ່ນຄົນຂອງພວກເຮົາ. ທ່ານຄົງບໍ່ຮູ້ດອກວ່າເລື່ອງນີ້ໄດ້ສົ່ງຜົນໃຫ້ຮາໂນ່ຍຮ້ອນຮົນໃຈພຽງໃດ."

"ຮ້ອນຮົນໃຈແນວໃດລະ?"

"ມີຄົນຊ່າກັນໄປທົ່ວແລ້ວວ່າພວກທ່ານທຳການລັກພາຕົວ ພ້ອມທໍລະມານຄົນຂອງພວກເຮົາ. ພວກເຂົາຢາກຮູ້ວ່າທາງການມີສ່ວນກ່ຽວຂ້ອງຫຼາຍໜ້ອຍພຽງໃດ."

"ເປັນຫຍັງຈິ່ງຄິດວ່າທາງການມີສ່ວນກ່ຽວຂ້ອງ? ມັນອາດຈະເປັນເລື່ອງຂອງຢາເສບຕິດ ຫຼື..."

"ພວກເຮົາລະບຸໄດ້ແລ້ວວ່າແມ່ນຄົນຂອງພວກເຮົາ. ເຂົາເປັນຕົວແທນຂອງລັດຖະບານ ຊື່ ຫງຽນວັນທຣັນ. ເຂົາເປັນໜຶ່ງຂອງຄະນະຜູ້ແທນທີ່ຫາຍຕົວໄປພາຍຫຼັງເດີນທາງຂ້າມມາລາວຜ່ານຊາຍແດນນ້ຳພາວ ໂດຍຈຸດໝາຍປາຍທາງແມ່ນຈະມາວຽງຈັນແຕ່ກໍບໍ່ຮອດເລີຍ. ພາລະກິດຂອງພວກເຂົາຖືເປັນຄວາມລັບສຸດຍອດ."

"ໃນຄະນະຜູ້ແທນມີຈັກຄົນ?"

"ສາມຄົນ. ສອງຄົນແມ່ນເຈົ້າໜ້າທີ່ ສ່ວນອີກຜູ້ໜຶ່ງແມ່ນຄົນຂັບລົດ."

"ແລ້ວທ່ານກໍຢືນຢັນວ່າເປັນຄົນຂອງທ່ານຍ້ອນຮອຍສັກຫັ້ນບໍ?"

"ບໍ່ດອກ, ພວກເຮົາມີລາຍນິ້ວມື ລວມທັງບັນທຶກທາງທັນຕະກຳ ພ້ອມຍັງມີແຫວນ."

"ແຫວນຍັງຢູ່ໃນມືຂອງເຂົາແມ່ນບໍ?"

"ແມ່ນແຫຼະ. ແຫວນວົງນັ້ນໄດ້ສະຫຼັກຊື່ພໍ່ຂອງເຂົາໄວ້ຂ້າງໃນ. ໃນແຟ້ມເອກະສານທາງການທະຫານ ແມ່ນບໍ່ໄດ້ລະບຸເລື່ອງຮອຍສັກໃດໆ ບາງທີເຂົາອາດຈະສັກລາຍຕອນເຂົ້າເປັນທະຫານແລ້ວ."

"ທ່ານມີປະຫວັດຂອງທັງສາມຄົນເລີຍແມ່ນບໍ?"

ຫງຽນທົງ ພັບແຂນອັນຍາວຢຽດຂອງຕົນ ກ່ອນຈະປ່ອນມືເຂົ້າໄປໃນກະເປົາ. ເຂົາ

ດຶງແຟ້ມເອກະສານມະນິລາສາມສະບັບອອກມາ ພ້ອມວາງມັນໄວ້ເທິງໂຕະຕໍ່ໜ້າສີຣິ.

"ເອົານີ ຊ່ວຍເປີດເບິ່ງເອງກ່ອນ."

ສີຣິເປີດເອກະສານທັງສາມ ພ້ອມສາດສາຍຕາໄປທີ່ຮູບຖ່າຍເທື່ອລະໃບ ແຕ່ແລ້ວຮູບຖ່າຍໃນແຟ້ມທີສອງກໍປາກົດເປັນສີຄຸ້ນຕາຂຶ້ນມາ.

"ຜູ້ນີ້ຄືງແມ່ນຄົນທີ່ຢູ່ກັບພວກເຮົາ."

"ນັ້ນແມ່ນຄົນຂັບລົດ ຊື່ຂອງເຂົາແມ່ນທຣັນຄືກັນ."

"ເອົາລະທ່ານໝໍ ຂ້ອຍວ່າພວກເຮົາຄວນເອົາແຟ້ມເອກະສານຊຸມນີ້ໄປໂຮງອາຫານພ້ອມກິນເຂົ້າທັງແລກປ່ຽນເລື່ອງລາວນຳກັນ. ຂ້ອຍຄິດວ່າທ່ານຄວນຖອດເຄື່ອງແບບອອກກ່ອນພ້ອມຢືມຊຸດຄຸມສີຂາວໄປນຸ່ງແທນດີບໍ?"

"ຄັກເລີຍແບບນັ້ນ."

ຂະນະທີ່ຫງຽນທົງປ່ຽນຖ່າຍຊຸດໃໝ່ ທາງສີຣິກໍໄດ້ທຳການຮວບຮວມລາຍງານການຊັນນະສູດສົບຂອງເຂົາໄວ້ລວມກັນ. ຈາກນັ້ນທັງສອງກໍກິນເຂົ້າທ່ຽງໃນໂຮງອາຫານຮ່ວມກັນ ຕາມແບບສະບັບເຈົ້າໜ້າທີ່ຊັນນະສູດສົບ. ເມື່ອເຫັນດີຕາມຫົວຂໍ້ສົນທະນາແລ້ວ ທັງສອງຈິ່ງພາກັນຈອງໂຕະໜ່ວຍໜຶ່ງທີ່ເປັນຂອງຕົນເອງໄວ້ຕ່າງຫາກ.

6

# ເລື່ອງວຸ້ນໆ ຂອງການຊັນນະສູດສົບ

"ເປັນຈັ່ງໃດ ພໍແຕ່ອອກຫ່າງໄປວຽກຕ່າງແຂວງບໍ່ຮອດສອງສາມມື້ຄືໄດ້ຍິນຂ່າວຈົນໝາຫູວ່າໄປນອນກັບພວກຫວຽດນາມແລ້ວ."

"ຮູ້ເດີວ່າສະຫາຍອິດສາຫັ້ນນະ."

ມື້ນີ້ແມ່ນວັນຈັນ ສິຣິກັບສີວິໄລ ພາກັນນັ່ງກິນເຂົ້າຈີ່ພ້ອມຈິບກາເຟອຸ່ນໆ ລ່ອງຄໍ ເຊິ່ງເອົາມາແຕ່ທາງພາກໃຕ້ຢູ່ເທິງຂອນໄມ້ອັນເກົ່າທີ່ພວກເຂົາເຄີຍນັ່ງເປັນປະຈຳ. ສາຍຕາຂອງທັງສອງເພັ່ງມອງອອກໄປທີ່ນົກທະເລນ້ອຍສີຂາວໂຕໜຶ່ງ ທີ່ກຳລັງບິນເຈັ້ຍເຈີດຫ່າງຈາກໜ້ານ້ຳປະມານສາມສິບຊັງຕີແມັດ ຄາວໜຶ່ງມັນກໍສັກຫົວລົງມາເພື່ອຫວັງຈະສວາບເອົາປາເຂົ້າປາກ ແຕ່ຍ້ອນປາກຂອງມັນສັກລົງນ້ຳເລິກເກີນໄປ ຈຶ່ງເຮັດໃຫ້ມັນຈຶ້ງໂຕບໍ່ທັນ ແລະແລ້ວມັນກໍພຸ່ງຊົນເຂົ້າກັບໜ້ານ້ຳຢ່າງແຮງ ກ່ອນຈະຕີລັງກາປີ້ນໄປຕາມກະແສນ້ຳ.

"ຊິງຊິເຈັບຂະໜາດ."

"ທາງຄະນະກຳມາທິການບໍ່ພໍໃຈທີ່ເຮົາເຮັດວຽກຮ່ວມກັບພວກຫວຽດແມ່ນບໍ? ພວກເຂົາຍັງຄຶງເປັນພັນທະມິດຂອງພວກເຮົາຢູ່ບໍ່ແມ່ນຫວາ?"

ນົກທະເລນ້ອຍຜູ້ໜ້າສົງສານໂຕນັ້ນພຸ່ງທະຍານຂຶ້ນມາຈາກໜ້ານ້ຳ ພ້ອມກັບປາໂຕໜຶ່ງທີ່ຄາບໄວ້ໃນປາກຢ່າງຜູ້ມີໄຊ ສ່ວນປີກຂອງມັນແມ່ນຢູ່ໃນສະພາບຫຍັບຍໍ່ບໍ່ເປັນລະບົບລະບຽບ. ເພື່ອນເກົ່າສອງຄົນຕ່າງກໍວາງຈອກຢາງລົງພື້ນ ກ່ອນຈະຕົບມືແປະ! ແປະ ເພື່ອສະແດງຄວາມຊົມເຊີຍໃຫ້ກັບນົກໂຕນັ້ນ.

"ຄຳວ່າພັນທະມິດຫັ້ນກໍມີຢູ່ທົ່ວໄປນັ້ນແຫຼະສິຣິ ມັນຂຶ້ນກັບວ່າພວກເຮົາເຫັນພວກເຂົາເປັນແນວໃດ ແລະພວກເຂົາກໍເຫັນຕົນເອງເປັນແນວໃດ. ສຳລັບພວກເຮົາແລ້ວ, ຄຳວ່າທີ່ປຶກສາພວກນີ້ກໍບໍ່ຕ່າງຫຍັງກັບບຸກຄະລາກອນທີ່ພວກເຮົາເຫັນວ່າມີປະໂຫຍດ ຫຼືບໍ່ກໍໄດ້ຕາມທີ່ເຫັນວ່າເໝາະສົມ. ສ່ວນພວກເຂົາກໍເຫັນວ່າການທີ່ຖືກສົ່ງໄປປະຈຳການຢູ່ພະແນກນັ້ນ ຫຼືພະແນກນີ້ ກໍເພື່ອຢາກຈັດສັນນະໂຍບາຍຂອງພວກເຮົາໃຫ້ໃກ້ຊິດກັບພວກເຂົາຫຼາຍຂຶ້ນ ທັງນີ້ກໍເພື່ອເຮັດໃຫ້ພວກເຮົາຕ້ອງເພິ່ງພາອາໄສພວກເຂົາເພີ່ມຂຶ້ນ."

"ຍິ່ງປ່ອຍໃຫ້ມີການຈັດສິ່ງທີ່ປຶກສາເຂົ້າມາຫຼາຍຂຶ້ນເທົ່າໃດ ກໍຍິ່ງເຮັດໃຫ້ຮາໂນ່ຍຮູ້ສຶກວ່າພວກເຮົາຢູ່ພາຍໃຕ້ບັງຄັບບັນຊາຂອງພວກເຂົາຫຼາຍຂຶ້ນເທົ່ານັ້ນ. ນີ້ຄືເຫດຜົນທີ່ພວກເຮົາໄດ້ຄົ້ນຄິດນະໂຍບາຍນີ້ຂຶ້ນມາ ແຕ່ຍັງບໍ່ທັນເປັນທາງການເທື່ອທີ່ຈະບໍ່ເຊື່ອໃນສິ່ງທີ່ພວກເຂົາບອກເຖິງສີ່ສິບເປີເຊັນ."

"ເຖິງວ່າມັນຈະເປັນຄຳແນະນຳທີ່ດີກໍຕາມແມ່ນຫວາ?"

"ພວກເຮົາກະບໍ່ແມ່ນວ່າຊິໂຍນມັນຖິ້ມໄປໂດຍປະລິຍາຍດອກ ແຕ່ພວກເຮົາກໍເກັບມັນໄວ້ຈົນກວ່າພວກເຈົ້າໜ້າທີ່ປຶກສາຊຸມນັ້ນໝົດຫວັງຍ້ອນພວກເຮົາບໍ່ໃຫ້ຄວາມຮ່ວມມືຈາກນັ້ນພວກເຮົາກໍເອົາມັນມາໃຊ້ຄືນແລ້ວເຮັດຄືກັບວ່າມັນເປັນຄວາມຄິດຂອງພວກເຮົາເອງ."

"ແລ້ວສິ່ງທີ່ເຮົາສະໜິດສະໜົມກັບເຈົ້າໜ້າທີ່ຊັນນະສູດສົບຊາວຫວຽດນາມຄົນນັ້ນ ມັນສອດຄ່ອງກັບນະໂຍບາຍອັນບໍ່ເປັນທາງການຂອງສະຫາຍແນວໃດ?"

"ອ້າວ ຕາບໃດທີ່ພວກເຮົາກຳລັງຈະຮູ້ຄວາມລັບບາງຢ່າງ ... ເຂົາກະໄດ້ບອກຂໍ້ມູນບາງຢ່າງກັບສະຫາຍຢູ່ບໍ?"

"ທຸກສິ່ງທີ່ເຂົາຮູ້ຫັ້ນແຫຼະ ແຕ່ສິ່ງທີ່ຂ້ອຍຮູ້ປັນຫາດຽວກະແມ່ນຜົນການທົດລອງຂອງສອງສົບຫັ້ນມັນປາກົດອອກມາບໍ່ຄືກັນ."

"ນັ້ນແມ່ນຄວາມຜິດພາດຂອງສະຫາຍເອງແບບບໍ່ຕ້ອງສົງໄສແລ້ວແຫຼະ ສະຫາຍກໍບໍ່ເຫັນວ່າຊິເກັ່ງອີ່ຫຼີ ແມ່ນບໍລະ?"

"ຕອນເຫັນຜົນການຊັນລະສູດສົບຂອງເຂົາຫັ້ນ ເຮົາຄິດວ່າຕົນເອງຍັງສັບສົນຢູ່. ສົບທີ່ຢູ່ນຳເຮົາເຫັນໄດ້ຊັດເຈນວ່າແມ່ນທຮັນເຊິ່ງເປັນຄົນຂັບລົດ ສະພາບສົບຂອງເຂົາຍິ່ງຂີ້ຮ້າຍກວ່າທຮັນຜູ້ຖືກແຊ່ນ້ຳແຂງຢູ່ສະຖານທູດຫວຽດນາມຊ້ຳອີກ."

"ຄົນຫວຽດນາມເອີ້ນຊື່ທຮັນໝົດທຸກຄົນຊັ້ນຫວາ?"

"ບໍ່ມີແຕ່ທຮັນຢ່າງດຽວຍັງມີຄົນຊື່ຫງຽນອີກຫັ້ນຕີ. ແນວໃດກະຕາມ, ທຮັນຜູ້ຢູ່ນຳພວກເຮົາຫັ້ນຖືກນຳສົບໄປປະໄວ້ຢູ່ວັດຂອງທ້ອງຖິ່ນເປັນເວລາສອງວັນໃນຂະນະທີ່ພວກເຂົາຍັງບໍ່ຮູ້ວ່າຈະຈັດການກັບສົບແນວໃດດີ. ແຕ່ພວກເຂົາກໍພົບສົບທຮັນອີກຄົນໜຶ່ງ ຜູ້ທີ່ມີຮອຍສັກຂອງຫວຽດນາມຫັ້ນນະ ເພາະສະນັ້ນຈິ່ງເປັນເລື່ອງທຳມະດາທີ່ພວກເຂົາຕ້ອງໄດ້ຕິດຕໍ່ໄປຫາສະຖານທູດຫວຽດນາມ."

"ເມື່ອນຳສົບຂຶ້ນມາຈາກນ້ຳມັນຈິ່ງເນົ່າເປື່ອຍໄວ ຈັ່ງຊັ້ນແຫຼະສົບຂອງທຮັນຈິ່ງຕົກຢູ່ໃນສະພາບບໍ່ເປັນຕາເບິ່ງເລີຍຕອນຖືກສົ່ງມາໃຫ້ເຮົາຫັ້ນ. ທາງສະຖານທູດຫວຽດນາມໄດ້ນຳສົບຂອງທຮັນອີກຄົນແຊ່ໄວ້ໃນນ້ຳແຂງເພື່ອລໍຖ້າຫງຽນທົ່ງມາທຳການຊັນນະສູດແມ່ນແຕ່ນ້ຳແຂງກໍຍັງເຮັດໃຫ້ສະພາບສົບປ່ຽນແປງໜັກພໍສົມຄວນ. ເວົ້າໄດ້ເລີຍວ່າ

ທັງສອງຄົນພວກເຮົານັ້ນບໍ່ມີໃຜໄດ້ທຳການຊັນນະສູດສົບທີ່ຢູ່ໃນສະພາບດີຈັກຄົນເລີຍ.”

“ຖືເປັນຂໍ້ແກ້ຕົວທີ່ພໍຍອມຮັບໄດ້ຢູ່ ແລ້ວມີຫຍັງແດ່ທີ່ພວກເຈົ້າສອງຄົນເຫັນດີເຫັນພ້ອມຄືກັນ?”

“ພວກເຮົາສອງຄົນຂ້ອນຂ້າງແນ່ໃຈວ່າ ພວກເຂົາບໍ່ໄດ້ຕາຍຍ້ອນຈົມນໍ້າ. ນອກນີ້ພວກເຮົາຍັງເຫັນດີເປັນສຽງດຽວກັນວ່າ ພວກເຂົາອາດຖືກຖ່ວງໃຫ້ຈົມລົງໄປໃນນໍ້ານຳອີກ.”

“ເພື່ອບໍ່ໃຫ້ມີຄົນພົບສົບພວກເຂົາແມ່ນບໍ?”

“ຂຶ້ນຢູ່ກັບວ່າສະຫາຍຈະເຊື່ອໃນທິດສະດີຂອງຕຸ້ຍ ຫຼືບໍ່ເທົ່ານັ້ນແຫຼະ.”

“ທິດສະດີຫຍັງ?”

“ຖ້າພວກເຂົາຢາກໃຫ້ສົບຈົມລົງໄປຢູ່ພື້ນນໍ້າແທ້ໆ ພວກເຂົາອາດຈະໃຊ້ສາຍໄຟຫຼືເຫຼັກລວດ ຫຼືອີ່ຫຍັງກໍໄດ້ທີ່ບໍ່ເປື່ອຍໄວກວ່ານັ້ນ.”

“ຍອດຢ້ຽມຫຼາຍ. ສະນັ້ນ, ຖ້າພວກເຮົາຍອມຮັບຂໍ້ສັນນິຖານຂອງຕຸ້ຍ ກໍໝາຍຄວາມວ່າໃຜກໍຕາມທີ່ເອົາສົບພວກນີ້ຖ່ວງລົງນໍ້າ ກໍຢາກໃຫ້ສົບລອຍຂຶ້ນມາໃຫ້ຄົນເຫັນ. ແລ້ວສະຫາຍຮູ້ບໍວ່າພວກເຂົາຕາຍຍ້ອນຫຍັງ?”

“ເສັ້ນເລືອດແຖວໜ້າເອິກຂອງສົບທີ່ຢູ່ນຳເຮົາຫັ້ນເບິ່ງຄືວ່າມັນຂຽວຊໍ້າໜັກສົມຄວນ ເຊິ່ງຫຽນຫົງບອກວ່າອາການແບບນີ້ມັກພົບໃນເຫຍື່ອທີ່ປະສົບອຸບັດເຫດຈາກລົດຈັກ ຫຼືມີການຕຳກະແທກດ້ວຍຄວາມໄວສູງ.”

“ອີກຢ່າງເຂົາກໍແມ່ນຄົນຂັບລົດ ພວກເຮົາຈິ່ງພໍເດົາໄດ້ວ່າລົດຂອງພວກເຂົາອາດເກີດອຸບັດເຫດ.”

“ກໍອາດມີສ່ວນ.”

“ສະຫາຍກໍມີໂອກາດໄດ້ເຫັນຫຮັນຂອງຫຽນຫົງຢູ່ບໍ?”

“ບ່າຍມື້ນີ້ເຮົາຊິແອບລັກເຂົ້າໄປໃນສະຖານທູດ ເພາະພວກເຈົ້າໃຫຍ່ນາຍໂຕທັງຫຼາຍພາກັນໄປງານລ້ຽງຕ້ອນຮັບໝົດ. ພວກສະຫາຍນິຄົງຊິເປັນພວກບໍ່ເຄີຍຂາດງານລ້ຽງຕ້ອນຮັບແມ່ນແຕ່ງານດຽວເລີຍໃດເນາະ ແມ່ນບໍ?”

ສີວິໄລເຮັດຕາລ້ອກລໍ້ແບບກວນໆ ເຊິ່ງເຫັນໄດ້ຢ່າງຊັດເຈນວ່າເຂົາເອງກໍມີກຳນົດທີ່ຈະເຂົ້າຮ່ວມພົບປະຄະນະຜູ້ແທນຄິວບາເຊັ່ນກັນ.

“ກະຍ້ອນແນວນັ້ນພັກຈິ່ງໄດ້ຂຶ້ນຊື່ວ່າ ພັກ ‘ງານລ້ຽງ’ ບໍ່ແມ່ນພັກ ‘ນັ່ງເຮັດວຽກ’.”

ສີຣິຫົວຂຶ້ນ.

“ແລ້ວຂ່າວລືທີ່ວ່າພວກເຂົາຖືກທໍລະມານຫັ້ນເດ ເປັນແນວໃດ?”

“ເທົ່າທີ່ເວົ້າໄດ້ມັນກໍໜ້າຈະແມ່ນຫັ້ນແຫຼະ. ທັງສອງຄົນເລີຍ.”

"ມາຊ່າງວ່າແນວແປກແທ້. ເປັນຫຍັງພວກເຂົາຈິ່ງຕ້ອງທໍລະມານຄົນຂັບລົດ?"

"ເຮົາຢ້ານວ່າຄະດີນີ້ຕ້ອງມີຄໍາຖາມຫຼາຍກວ່າຄໍາຕອບຢູ່ແລ້ວ ຕາມທີ່ຫາງຽນຫົງບອກຫັ້ນ ສືບທີ່ຢູ່ນໍາລາວອາດຕາຍຍ້ອນຖືກທໍລະມານ."

"ມັນບໍ່ກ່ຽວກັບການຕໍາກະແທກຍ້ອນຄວາມໄວສູງເລີຍບໍ?"

"ເທົ່າທີ່ເຂົາບອກໄດ້ ມັນບໍ່ໄດ້ກ່ຽວກັບເລື່ອງນັ້ນເລີຍ."

ຣາຈິດ ຊາຍໜຸ່ມຄົນອິນເດຍທີ່ສະຕິບໍ່ສົມປະກອບ ຍ່າງຕະເປະຕະເປາະໄປຕາມແຄມຝັ່ງແມ່ນໍ້າມຸ່ງໜ້າມາທາງຊາຍຊະລາທັງສອງ. ເຂົາສວມຜ້າສະໂຫຼ່ງເກົ່າໆ ທີ່ເປັນພຽງສິ່ງປົກປິດຊິ້ນດຽວຂອງຕົນ ທັງປ່ອຍຜົມຍາວຕົກຕະຊະໃຫ້ຮົກລຸງລັງ ແຕ່ເຂົາກໍເປັນຊາຍໜຸ່ມທີ່ມີໜ້າຕາຫຼໍ່ເຫຼົາ ໂດຍຍັງຊີບຢູ່ໄດ້ຈາກການເພິ່ງພາອາໄສຄວາມເອື້ອອາທອນຂອງບັນດາເຈົ້າຂອງຮ້ານທີ່ຮູ້ຈັກເຂົາຕັ້ງແຕ່ຄາວເຂົາຍັງເປັນເດັກນ້ອຍ ແຕ່ກໍບໍ່ມີໃຜເຄີຍໄດ້ຍິນເຂົາເປັ່ງສຽງເວົ້າອອກມາຈັກເທື່ອ.

ເຂົານັ່ງເອົາຂາໄຂ່ວຫ້າງ ຫ່າງຈາກຊາຍຊະລາທັງສອງປະມານໜຶ່ງແມັດ ທັງຈົກເອົານ້ອງຊາຍມາຫຼິ້ນແບບບໍ່ອາຍຟ້າອາຍດິນ ຄວາມຈິງແລ້ວ ຂອນໄມ້ທີ່ທັງສີຣິ ກັບສີວິໄລນັ່ງຢູ່ ກໍຖືກໜຸ່ມອິນເດຍຈັບຈອງບໍ່ຕ່າງຫຍັງກັບພວກເຂົາ.

"ສະບາຍດີຣາຈິດ."

"ສະບາຍດີຣາຈິດ." ແຕ່ເຂົາກໍມີສິ່ງທີ່ໜ້າສົນໃຈຈະຕ້ອງເຮັດຫຼາຍກວ່າຈະໄປໂຕ້ຕອບຊາຍຊະລາສອງຄົນນັ້ນອີກ.

ດ້ວຍເຫດຜົນບາງຢ່າງທີ່ບໍ່ອາດຈະຢັ່ງຮູ້ໄດ້, ສີວິໄລຜ່ອນສຽງລົງຄ່ອຍໆ ເພື່ອຊັກຖາມສີຣິຕໍ່. "ເພື່ອນຂອງສະຫາຍພໍຈະບອກໄດ້ບໍວ່າຍ້ອນຫຍັງພວກຫວຽດນາມຈິ່ງກ່າວຫາວ່າພວກເຮົາເປັນຄົນລົງມືເຮັດເລື່ອງນີ້ແທນທີ່ຈະແມ່ນມົ້ງ? ຖ້າພວກເຂົາຂັບລົດຜ່ານແຂວງບໍລິຄໍາໄຊ ກໍເທົ່າກັບວ່າພວກເຂົາເປີດໂອກາດໃຫ້ສັດຕູເກົ່າລັກພາຕົວແບບສະບາຍຫັ້ນຕີ."

"ຖືກເປະເລີຍສະຫາຍ. ແຕ່ກໍມີສອງເຫດຜົນທີ່ພວກເຂົາຄິດວ່າມັນບໍ່ໜ້າຈະເກີດເລື່ອງແບບນີ້ຂຶ້ນ ແລະເຮົາກໍຍັງບໍ່ໄດ້ຄິດໄລ່ເອົາເງິນນໍາຈັກກັບທີ່ສະຫາຍມາຂູ່ເຂັນໃຫ້ເຮົາຕ້ອງເປີດເຜີຍຂ່າວລັບໃຫ້ຮູ້ແບບຟຣີໆ ນໍາອີກ. ເຫດຜົນທີໜຶ່ງ, ພວກເຂົາມີທະຫານຕິດອາວຸດເປັນກໍາລັງຄຸ້ມກັນໄປຈົນຮອດປາກຊັນ. ຖັດຈາກ ຫັ້ນກໍຍັງມີເຈົ້າໜ້າທີ່ຕໍາຫຼວດເຕັມຖະໜົນ ເຊິ່ງກໍຖືວ່າປອດໄພພໍສົມຄວນ. ຄັ້ງຫຼ້າສຸດທີ່ພົບພວກເຂົາຢູ່ແຖວນໍ້າຈີງ ເຊິ່ງຫ່າງຈາກວຽງຈັນພຽງຫົກສິບກິໂລແມັດ.

"ເຫດຜົນທີສອງ, ຖ້າພວກເຂົາເດີນທາງມາບໍ່ຮອດວຽງຈັນ ແລ້ວເປັນຫຍັງພວກທີ່ລັກພາຕົວຂຸມນັ້ນຕ້ອງຍອມລໍາບາກຂັບລົດຜ່ານຖະໜົນອັນຂະລຸຂະລະ ພ້ອມດ່ານ

ກວດຫຼາຍຈຸດຜ່ານວຽງຈັນຂຶ້ນໄປທາງພາກເໜືອຕັ້ງແປດສິບກິໂລແມັດພຽງເພື່ອເອົາພວກເຂົາໄປຖິ້ມລົງໃສ່ເຂື່ອນ? ທັງທີ່ທາງໃຕ້ກໍມີໜອງນໍ້າຫຼາຍແຫ່ງ ລວມທັງສາຍນໍ້ານໍາອີກ.

"ສະນັ້ນພວກຂີ້ລະແວງໃນຮາໂນ່ຍກໍເລີຍພາກັນເດົາເອົາເອງວ່າ ພວກເຂົາໄປຮອດວຽງຈັນແລ້ວ ແຕ່ໜ່ວຍງານຮັກສາຄວາມໝັ້ນຄົງທາງພວກເຮົາເປັນຜູ້ໄປຮັບເອົາ ແລ້ວທໍາການຈັບກຸມ ຫຼືເຮັດອີ່ຫຍັງຈັກຢ່າງ."

"ຈັບກຸມເລື່ອງຫຍັງ?"

"ພວກເຂົາຍັງບໍ່ທັນບອກເຮົາເທື່ອ."

"ແມ່ນພວກໃດ?"

"ວິນຍານ."

ອີກເທື່ອໜຶ່ງທີ່ສີວິໄລຍາກທີ່ຈະອົດເພື່ອບໍ່ໃຫ້ຕົນຫຼົງລະເບີດສຽງຫົວອອກມາບໍ່ໄດ້ເມື່ອສີຣິເວົ້າເລື່ອງວິນຍານ. ພາລະອັນໜັກຕຶ້ງທີ່ທ່ານໝໍສືບຕໍ່ທົນແບກໄວ້ເປັນເວລານານແສນນານຊໍ້າພັດກາຍເປັນພຽງເລື່ອງຕະຫຼົກຂົບຂັນສໍາລັບອ້າຍ.  ເຂົາເຊື່ອໃນສິ່ງທີ່ສາມາດມອງເຫັນໄດ້ຫຼາຍກວ່າຈະຈິງຈັງກັບຄໍາເວົ້າຂອງສີຣິ. ສີວິໄລຜູດລຸກຂຶ້ນ ແຂນທັງສອງຂ້າງຂອງເຂົາຢຽດຊີ້ອອກໄປທາງໜ້າ ທັງກະໂດດຢໍ້ອກໆ ຄືກັບຜີໜັງຮອງກົງ. "ໂອອອ! ທ່ານໝໍສີຣິຊ່ວຍຂ້ອຍແດ່ ພວກຝ່າຍປະເທດລາວໃຊ້ໄຟຟ້າຊັອດຫົວນົມຂ້ອຍຍ້ອນຂ້ອຍຜ່າໄຟແດງ."

ສີຣິຫົວຂຶ້ນແບບຈືດໆ  ເມື່ອເຫັນພາບທີ່ໄຮ້ສາລະຂອງສະຫາຍທີ່ກໍາລັງກະໂດດຢັອກໆ  ບໍ່ຕ່າງຫຍັງກັບປອບ.  ບໍ່ມີໃຜເຄີຍເຫັນສີວິໄລສະແດງທ່າທີແບບນີ້ໃນກອງປະຊຸມພົບປະຂອງຄະນະກໍາມະການໂປລິດບູໂຣ.

ແນ່ນອນຄໍາເວົ້າແບບຫຼິ້ນຕະຫຼົກຂອງສີວິໄລ  ໄດ້ສະທ້ອນຫົວຂໍ້ສໍາຄັນທີ່ຝ່າຍບໍລິຫານຕົວເມືອງວຽງຈັນໃນຂະນະນັ້ນ  ເຊິ່ງກໍາລັງມີການຖົກຖຽງກັນຢ່າງເຄັ່ງຮ້ອນກ່ຽວກັບເລື່ອງການລົງທຶນໃສ່ການຕິດຕັ້ງໄຟສັນຍານຈະລາຈອນແຫ່ງທີເຈັດ ແລະແມ່ນໃຜຈະເປັນຜູ້ເຮັດໜ້າທີ່ຄວບຄຸມສັນຍານໄຟເຫຼົ່ານີ້. ເມື່ອເບິ່ງຈາກປະລິມານຂອງການຈະລາຈອນແລ້ວ  ກໍບໍ່ເຫັນວ່າຈະມີຄວາມຈໍາເປັນອັນໃດທີ່ຈະຕ້ອງລົງທຶນເປັນເງິນມະຫາສານເຊັ່ນນີ້ ແຕ່ພວກເຂົາພຽງເປັນຫ່ວງເລື່ອງດຽວນັ້ນກໍຄື ຖ້າມີໄຟຈະລາຈອນບໍ່ຫຼາຍກໍຈະເຮັດໃຫ້ເສຍພາບລັກໃນສາຍຕາຂອງຊາວຕ່າງຊາດເທົ່ານັ້ນເອງ.  ທາງພະແນກຄົມມະນາຄົມໄດ້ຮັບລາຍງານສະບັບໜຶ່ງທີ່ສະແດງໃຫ້ເຫັນວ່າ ໃນບັນດາເມືອງຫຼວງທຸກແຫ່ງທົ່ວໂລກນັ້ນ  ມີພຽງເມືອງບູຈຸມບູຣາຂອງປະເທດບຸຣູນດີແຫ່ງດຽວທີ່ມີສັນຍານໄຟຈະລາຈອນໜ້ອຍກວ່າໝູ່. ໃນກອງປະຊຸມຄັ້ງນັ້ນ, ສີວິໄລ ກໍເຮັດໃຫ້ການ

ພິຈາລະນາຄະດີທີ່ໄຮ້ສາລະມີສີສັນຂຶ້ນ ເຊິ່ງເຂົາໄດ້ຊີ້ແຈງວ່າ ຄ່າໃຊ້ຈ່າຍອາດຫຼຸດລົງຮອດເຄິ່ງໜຶ່ງ ເພາະມີໄຟແດງເຫຼືອໃຊ້ຈາກລັດຖະບານໃນລະບອບເກົ່າຕັ້ງຫຼາຍດວງ ແຕ່ອັນສຳຄັນກໍພຽງແຕ່ລົງທຶນຊື້ໄຟຂຽວເທົ່ານັ້ນ.

"ນັ່ງລົງເທາະອີ່ຕາເຖົ້າປັນຍາອ່ອນ ວາງຕົວໃຫ້ສົມໄວໂຕເອງແດ່. ລືມລະບໍວ່າເຮົາເວົ້າຫຍັງ."

ສີວິໄລຫົວຂຶ້ນ ແຕ່ກໍຍັງເສົ່າຫອບຢູ່ ເຂົາກັບຄືນໄປນັ່ງລົງທີ່ຂອນໄມ້ ພ້ອມຈິບກາເຟທີ່ສີຣິຍື່ນໃຫ້.

"ຈັ່ງແມ່ນບໍ່ຍອມເສຍເວລາເລີຍເນາະອ້າຍໃຫຍ່."

"ແມ່ນຫຍັງຄືມາວ່າເຮົາ 'ບໍ່ຍອມເສຍເວລາ' ຫັ້ນນະນ້ອງຊາຍ?"

"ເຈົ້າຫາກໍກັບມາຮອດມື້ວານນີ້. ເທົ່າກັບວ່າຫາກໍໄດ້ພົບປະກັບແຫງຫວ່າງເຊົ້ານີ້ແຫຼະ."

"ແມ່ນຫຍັງເຮັດໃຫ້ສະຫາຍຄິດວ່າ ...? ອະຮາ ສະຫຼາດແທ້ນໍຄົນແກ່ອ່ອນແອຂີ້ແບະຜູ້ນີ້. ສະຫາຍບໍ່ໄດ້ບອກເລື່ອງໄຟຟ້າຊັອດຫົວນົມແມ່ນບໍລະ? ເຫັນແລ້ວວ່າເຮົາຄົງຈະເປັນຜູ້ກໍ່ການຮ້າຍນຳເຂົາບໍ່ໄດ້ແລ້ວແຫຼະ ແມ່ນບໍ?"

"ໂຕພຽງແຕ່ບໍ່ເຄີຍໄດ້ໂອ້ລົມກັບຄົນສະຫຼາດເປັນເລີດເທົ່ານັ້ນແຫຼະ."

"ເອົາລະ ຄົນສະຫຼາດໃຫຍ່ເອີຍ, ຈະເຮັດແນວໃດກັບຂັ້ນຕອນຕໍ່ໄປສຳລັບການສືບສວນຂອງສະຫາຍ?"

"ຫາງຽນຫົງ ກັບເຮົາຈະພາກັນຂີ່ລົດເມໄປທີ່ອ່າງນ້ຳງື່ມ."

"ໄປຮັບນີມູນຫວາ?"

"ໄປຕຶກເບັດຫັ້ນຕີ."

"ໄປຊອກສືບທີສາມບໍ?"

"ມີໂອກາດເປັນໄປໄດ້ຍາກ ທີ່ທັງສາມສືບຈະຖືກຖິ້ມໄວ້ຢູ່ບ່ອນດຽວກັນ. ບາງທີຮ້ອກອາດຈະຍັງບໍ່ມີໂອກາດໄດ້ຫຼຸດພົ້ນຈາກກ້ອນຫີນທີ່ດຶງຖ່ວງເຂົາໄວ້ຢູ່ພື້ນນ້ຳກໍເປັນໄດ້. ຖ້າສືບຂອງເຂົາຍັງຢູ່ພື້ນນ້ຳ ມັນກໍຄວນໄດ້ຮັບການຮັກສາໄດ້ດີກວ່າຫຣັນທັງສອງຄົນຫັ້ນອີກ ມັນຍັງເປັນເລື່ອງດີທີ່ຈະບອກພວກເຮົາໃຫ້ຮູ້ຫຼາຍຢ່າງໄດ້."

"ສະຫາຍເອົາທໍ່ຊ່ວຍຫັນໃຈຕິດມືໄປນຳບໍ?"

"ເຮົາລອຍນ້ຳບໍ່ເປັນ."

"ສຳພິດອກ ຈິ່ງວ່າຍັງຢູ່ໃນເມືອງລາວ!"

ທັງສອງດື່ມກາເຟຈົນໝົດ ທັງພະຍາຍາມຫັກເຫຄວາມສົນໃຈໃຫ້ຫ່າງຈາກໝໍຣາຈິດທີ່ກຳລັງເພີດເພີນກັບການຫຼິ້ນນ້ອງຊາຍຕົນເອງຜູ້ດຽວທີ່ແຄມຝັ່ງແມ່ນ້ຳ.

# 7

# ພະຍາດນອກຮີດ

ທ່ານໝໍ ສີຣິ,

ທ່ານໝໍຕ້ອງໄດ້ອອກເດີນທາງໄປຄໍາມ່ວນໂດຍດ່ວນທີ່ສຸດ. ຕິດຕໍ່ຫາຂ້ອຍໄດ້ສໍາລັບລາຍລະອຽດອື່ນໆ.

ແຫງ.

"ແມ່ນຫຍັງຄືເປັນຈັ່ງຊີ້?" ສີຣິເງີຍໜ້າຂຶ້ນແນມເບິ່ງກິ່ງຜູ້ເຊິ່ງນໍາເອົາຂ່າວຮ້າຍມາມອບໃຫ້ເຂົາ ທັງກໍາລັງແນມເບິ່ງເຂົາແບບບໍ່ຮູ້ຈັກອີ່ໂໜ່ອີ່ເໜ່ຫຍັງເລີຍ. "ໄດ້ຈົດໝາຍນີ້ມາແຕ່ໃສນ້ອງກິ່ງ?"

"ມີ ... ຜູ້ ... ຜູ້ ... ຜູ້ຊາຍຂີ່ລົດຈັກ."

"ມັນເກີດຫຍັງຂຶ້ນກັບວຽກອັນນີ້? ວຽກງານຂອງພວກເຮົາຕະຫຼອດເກົ້າເດືອນຜ່ານມາຄືວ່າຜ່ານໄປດ້ວຍດີ ບໍ່ວ່າຈະແມ່ນເລື່ອງການພົບຍິງຊະລາສອງສິບ, ຜູ້ຖືກໄຟຊັອດອີກໜຶ່ງສິບ ລວມທັງອຸບັດຕິເຫດທາງລົດຖີບຈົນເຖິງແກ່ຊີວິດ. ບໍ່ມີເລື່ອງຄາຕະກໍາ, ບໍ່ມີເລື່ອງລຶກລັບປິດສະໜາ ຫຼືແມ່ນແຕ່ເລື່ອງການທໍາຮ້າຍຮ່າງກາຍຫຍັງເລີຍເຮັດໃດວ່າຢູ່ບໍ່ຢູ່ໜ້າວຽກຂອງຂ້ອຍມັນກໍລະເບີດຕູ້ມຂຶ້ນມາທັນທີບໍ່ຕ່າງຫຍັງກັບລະເບີດປາລາມະນູ ໂດຍມີສິບຂຶ້ນມາໃຫ້ຂ້ອຍທໍາການຊັນນະສູດຈົນລົ້ນຫູ."

ກິ່ງແນມເບິ່ງທີ່ຫູຂອງສີຣິປາກົດວ່າບໍ່ເຫັນສິບໃຜຈັກຄົນຕິດຄ້າງຢູ່. ທ່ານໝໍຊຸ້ນຄິດຄາວໜຶ່ງ ແທນທີ່ຈະຍ່າງໄປຈັບຫູໂທລະສັບແລ້ວຍົກມັນຂຶ້ນມາຕໍ່ສາຍ ແຕ່ເຂົາກໍເລືອກທີ່ຈະຍ່າງຂ້າມເສັ້ນທາງໄປຫາພະແນກຍຸຕິທໍາ. ເຂົາເສຍເວລາຢູ່ທີ່ນັ້ນປະມານສີ່ສິບນາທີຈົນແຫງວ່າງ.

"ເຂົ້າມາໃນໂລດທ່ານສີຣິ. ທາງກອງທັບມີ ... ໂອເອົາລະ, ນັ່ງລົງກ່ອນເທາະ. ທາງກອງທັບໄດ້ຕິດຕໍ່ມາຫາພວກເຮົາເພື່ອຂໍຄວາມຊ່ວຍເຫຼືອແບບເລັ່ງດ່ວນໃນຄໍາມ່ວນ. ທ່ານໝໍຈະໄດ້ອອກເດີນທາງມື້ອື່ນເລີຍ."

"ແຕ່ຂ້ອຍ ..."

"ເບິ່ງຄືວ່າມີນາຍທະຫານຊັ້ນສູງທີ່ເຮັດວຽກດ້ານການກະເສດໄດ້ເສຍຊີວິດຫຼາຍຄົນແບບບໍ່ຮູ້ສາເຫດ ..."

"ຂ້ອຍ ..."

"... ໂຄງການພັດທະນາດ້ານການກະເສດໄດ້ຈັດຕັ້ງຢູ່ເຂດນັ້ນ. ແມ່ນແຕ່ທາງກອງທັບ ລວມທັງເຈົ້າໜ້າທີ່ຕຳຫຼວດກໍຍັງບໍ່ສາມາດສືບຫາສາເຫດການຕາຍໄດ້ ຈົນກວ່າພວກເຂົາຈະມີການສະຫຼຸບຢ່າງເປັນທາງການ ເພາະພວກເຂົາຍັງບໍ່ກ້າຢືນຢັນໄດ້ວ່າ ມັນເປັນການຕາຍທີ່ເກີດຈາກທຳມະຊາດ ຫຼືເລື່ອງການກໍ່ອາດຊະຍາກຳ."

ສີຣິຍັງບໍ່ທັນໄດ້ປ້າຍກົ້ນລົງນັ່ງຊ້ຳ. ລາວຍັງຢືນເສີຍມັ່ງເພື່ອລໍຖ້າໃຫ້ແຫງເງີຍໜ້າຂຶ້ນເບິ່ງລາວ ແຕ່ຜູ້ພິພາກສາຄົນນັ້ນກໍຍັງເຮັດເປັນກົ້ມໜ້າກົ້ມຕາອ່ານບົດລາຍງານ ຫຼືອາດເຮັດທຳທ່າຄືກັບວ່າຍັງອ່ານຢູ່. "ໝົດເທົ່ານີ້ແຫຼະ. ສຳລັບລາຍລະອຽດອື່ນໆ ແມ່ນພົບກັບສະໝຽນຂອງຂ້ອຍໄດ້."

"ນີ້ເຈົ້າກຳລັງຈະບອກຂ້ອຍພັກເລື່ອງຄະດີຂອງຄົນຫວຽດນາມ ແລ້ວກໍເປີດອາດຫຼາດລົງໄປທາງໃຕ້ຊັ້ນບໍ?"

"ຄະດີ ... ຄະດີ ... ຄະດີ?" ສີຣິສົງໄສວ່າແຜ່ນສຽງຢຸດສະຫງັກ ຫຼືບໍ່.

"ສີຣິ ເຈົ້າເປັນໝໍຊັນນະສູດສົບ ແຕ່ກໍຍັງບໍ່ແມ່ນໝໍທີ່ເກັ່ງພໍປານໃດດອກ. ພໍມີສົບຖືກສົ່ງມາ ເຈົ້າກໍທຳການຊັນນະສູດຊື່ໆ ແລ້ວກໍສົ່ງຜົນການຊັນນະສູດມາໃຫ້ຂ້ອຍກໍເທົ່ານັ້ນແຫຼະ."

"ໝໍຊັນນະສູດສົບບໍ່ແມ່ນຜູ້ເຮັດຄະດີ ແຕ່ຜູ້ພິພາກສາພຸ້ນເປັນຜູ້ເຮັດຄະດີ, ຕຳຫຼວດພຸ້ນເປັນຜູ້ເຮັດຄະດີ. ສຳລັບເຈົ້າຫັ້ນນະສີຣິ ກໍເປັນພຽງແຕ່ທຳການຊັນນະ ສູດສົບພຽງຢ່າງດຽວ. ຕອນນີ້ມີສອງສົບຢູ່ຄຳມ່ວນກຳລັງລໍຖ້າການຊັນນະສູດ. ຂ້ອຍລະເບື່ອເຕັມທົນແລ້ວໃດ ກັບການທີ່ເຈົ້າມັກເຮັດແນວແບບເກີນໜ້າເກີນຕາໂຕເອງ. ຢ່າຄິດວ່າໂຕເອງສຳຄັນ ... ເກີນຖານະທີ່ຕົນເປັນຢູ່ຄືກັບເກີບສຸບສີນ້ຳຕານຄູ່ນັ້ນເລີຍ." ເຂົາເຜີຍຮອຍຍິ້ມອອກມາແບບຫຼົງໂຕເອງເພາະຄິດວ່າຄຳເວົ້າຂອງຕົນຊ່າງສະຫຼາດປາດປ້ຽງແຕ່ປານນັ້ນເຂົາກໍຍັງບໍ່ກ້າຮອດແມ່ນແຕ່ຈະເງີຍໜ້າຂຶ້ນມາສົບສາຍຕາກັບສີຣິແມ່ນແຕ່ຄັ້ງດຽວ. "ເອົາລະ ອອກໄປໄດ້ແລ້ວ."

ສີຣິຍັງຄົງຢືນຢູ່ບ່ອນຫັ້ນ ທັງຮວບຮວມຄວາມຄິດຂອງເຂົາຢູ່ຄາວໜຶ່ງ ກ່ອນຈະຫັນຫຼັງກັບໄປທີ່ປະຕູ. ສ່ວນຜູ້ພິພາກສາແຫງກໍໄດ້ແຕ່ນັ່ງດັກຟັງທັງຫວັງວ່າຈະໄດ້ຍິນສຽງເປີດ ແລະປິດປະຕູ ແຕ່ເຂົາຊ້ຳພັດໄດ້ຍິນສຽງກົດລູກບິດລັອກປະຕູແທນ. ຫົວໃຈຂອງເຂົາປາກົດວ່າຕົກລົງວາບເຂົ້າໃສ່ອີກບາດໜຶ່ງ ເຂົາເງີຍໜ້າຂຶ້ນແນມເບິ່ງ ປາກົດວ່າສາຍຕາຂອງເຂົາພໍດີປະຈວບກັບບ່າໄຫຼ່ຂອງສີຣິ.

"ເຈົ້າຊິເຮັດ ...?"

ສິຣິຍ່າງກັບໄປທີ່ໂຕະ ພ້ອມໃຊ້ມືປັດບາງຢ່າງອອກ ກ່ອນຈະປ້າຍກົ້ນລົງນັ່ງຢູ່ມຸມໜຶ່ງ ເຊິ່ງຫ່າງຈາກແຂນເສື້ອຂອງແຫງປະມານສອງສາມຊັງຕີແມັດ. ຜູ້ພິພາກສາໜຸ່ມຮູ້ສຶກເປັນກະວົນກະວາຍໃຈ ທັງຮູ້ສຶກວ່າຕົນເອງກຳລັງພົບກັບໄພອັນຕະລາຍແບບບໍ່ຮູ້ສາເຫດ. ສິຣິຄວ້າເອົາສໍດຳທີ່ກຳລັງແກວ່ງດຸກດິກໄປມາຢ່າງໜ້າລຳຄານອອກຈາກມືຂອງແຫງພ້ອມໃຊ້ມັນຊີ້ໜ້າເຂົາ.

"ຟັງເດີລູກຊາຍ. ຂ້ອຍຮູ້ວ່າເຈົ້າຈຳເປັນຕ້ອງວາງທ່າທາງໃຫ້ສົມກັບຕຳ ແໜ່ງທີ່ເຈົ້າເປັນ ແລະຂ້ອຍກໍຮູ້ອີກວ່າ ເຈົ້າອາດຈະຮູ້ສຶກປະມ່າ ແລະຫຼົງທາງເປັນບາງຄັ້ງຄາວ. ຂ້ອຍເຂົ້າໃຈວ່າພາລະໜ້າທີ່ເຈົ້າແບກຫາບມັນໜັກໜາຕໍ່ເຈົ້າຫຼາຍພຽງໃດ ແຕ່ຂ້ອຍຈະບໍ່ຍອມທົນກັບຄວາມຮູ້ສຶກບໍ່ໝັ້ນຄົງຂອງເຈົ້າອີກຕໍ່ໄປ."

"ເຈົ້າກ້າດີແນວໃດ ..."

"ງຽບ. ບໍ່ຕ້ອງເວົ້າຫຍັງອອກມາເພາະມັນອາດເຮັດໃຫ້ຂ້ອຍຕ້ອງໄດ້ລະບາຍຄວາມຄິດຕົນເອງກ່ຽວກັບຄຸນສົມບັດຂອງເຈົ້າຜູ້ເຊິ່ງຈະເຮັດໜ້າວຽກນີ້." ຜູ້ພິພາກສາມີທ່າທາງສັ່ນເລັກໜ້ອຍຢູ່ເທິງຕັ່ງຂອງເຂົາ. ເບິ່ງຄືກັບວ່າເຂົາກຳລັງແຄ້ນເຄືອງແນວໃດແນວໜຶ່ງ, ທ່າທາງຂອງເຂົາຄ້າຍຄືກັບເດັກນ້ອຍເມື່ອໄດ້ຍິນໃນສິ່ງທີ່ສິຣິເວົ້າອອກມາແຕ່ລະຄຳແບບຄ່ອຍໆ.

"ເຖິງແມ່ນຂ້ອຍຈະຮູ້ແລ້ວວ່າເຈົ້າໄດ້ຕຳແໜ່ງນີ້ມາຄອງ ກໍຍ້ອນມີຍາດພີ່ນ້ອງເປັນຜູ້ຢູ່ເບື້ອງຫຼັງຄອຍຊ່ວຍເຫຼືອ ..."

"ຂ້ອຍ ..."

"... ແນ່ນອນເຈົ້າກໍຕ້ອງມີທັກສະຄວາມສາມາດບໍ່ໜ້ອຍເລີຍແຫຼະ ບໍ່ຊັ້ນພວກເຂົາຄົງບໍ່ພາກັນສ່ຽງເລືອກເອົາເຈົ້າດອກ ທັງບໍ່ມີທາງທີ່ເຈົ້າຈະຜ່ານດ່ານຂອງສະຫະພາບໂຊວຽດໄດ້ແທ້."

"ຂ້ອຍ ..."

"ແຕ່ໜ້າວຽກຂ້ອຍກະໜັກພໍໆ ປານກັນ. ຂ້ອຍບໍ່ເຄີຍເຕັມໃຈກັບມັນເລີຍ ແລະຂ້ອຍກໍເຮັດໜ້າທີ່ໄດ້ບໍ່ດີພໍ ຍ້ອນບໍ່ມີສິ່ງເອື້ອອຳນວຍ ຫຼືແມ່ນແຕ່ຊັບພະຍາກອນເຄື່ອງໃຊ້ ຫຼືແມ່ນແຕ່ປະສົບການກໍຍັງບໍ່ມີ ອີກຢ່າງໜຶ່ງເຈົ້າເອງຫັ້ນນະລູກຊາຍ ເຈົ້າກໍບໍ່ເຄີຍຊ່ວຍຫຍັງພໍຈະເຮັດໃຫ້ຂ້ອຍເຮັດວຽກໄດ້ງ່າຍດາຍຂຶ້ນແມ່ນແຕ່ໜ້ອຍດຽວ.

"ບໍ່ວ່າເຈົ້າຈະມັກ ຫຼືບໍ່ມັກກໍຕາມຊ່າງ, ຂ້ອຍເອງໃນນາມຫົວໜ້າເຈົ້າໜ້າທີ່ຊັນນະສູດສົບ ຈາກນີ້ໄປຂ້ອຍຈະເປັນຜູ້ຈັດການ 'ຄະດີ' ທີ່ເຂົ້າມາໃນຫ້ອງການຂອງຂ້ອຍຕາມຄວາມເໝາະສົມ. ຂ້ອຍຈະນຳສືບທຸກໆ ເລື່ອງທີ່ເຫັນວ່າຈຳເປັນ ແລ້ວຂ້ອຍກໍຈະສະຫຼຸບ

ຜົນການຊັນນະສູດດ້ວຍຕົນເອງ ແລ້ວສົ່ງລາຍງານໃຫ້ເຈົ້າກໍຕໍ່ເມື່ອຂ້ອຍພ້ອມແລ້ວເທົ່ານັ້ນ. ເມື່ອໃດທີ່ມີການລົງລາຍເຊັນແລ້ວ ກໍໝາຍຄວາມວ່າຈະບໍ່ມີການດັດແປງແກ້ໄຂໃດໆ ເພື່ອໃຫ້ສອດຄ່ອງກັບສະຖິຕິທີ່ເຈົ້າມີຢູ່. ເອົາລະແນວໃດກະແນວ ປິດປາກເຈົ້າໄວ້ກ່ອນກໍດີໃດ."

ຣິມສີບທັງສອງຂ້າງຂອງແທງຫຸບເຂົ້າຫາກັນທັນທີ ເບິ່ງຄືວ່າພວກມັນກຳລັງສັ່ນເຊັນຢູ່.

"ຖ້າຄຳເວົ້າແບບຕົງໄປຕົງມາຂອງຂ້ອຍຕອນນີ້ ມັນຫາກໄປແຕະຕ້ອງຈົນເຮັດໃຫ້ເຈົ້າຂຸ່ນເຄືອງໃຈ ຂ້ອຍຕ້ອງຂໍໂທດຂໍອະໄພແກ່ແມ່ມານດາຂອງເຈົ້ານຳ ເຊິ່ງລາວຄົງຈະຮັກເຈົ້າຫຼາຍ ເຖິງແມ່ນລູກຊາຍຂອງລາວຈະເປັນແນວໃດກໍຕາມ. ຂ້ອຍຕ້ອງຂໍໂທດຂໍໂພຍນຳລາວຈາກໃຈຈິງ ຍ້ອນເຫດຜົນທີ່ວ່າ ຂ້ອຍຈຳຕ້ອງໄດ້ກ່າວເຕືອນໃຫ້ເຈົ້າຮູ້ຈັກສຳມາຄາລະວະແກ່ຜູ້ໃຫຍ່ໄມ້ສູງ.

"ຖ້າຫາກສິ່ງທີ່ຂ້ອຍເວົ້າອອກໄປທັງໝົດນັ້ນມັນກະໄດ້ກະທົບກະແທກກັບຫົວໃຈຈົນເຮັດໃຫ້ເຈົ້າບໍ່ສາມາດລະງັບຄວາມໂກດແຄ້ນໄວ້ໄດ້ ຂ້ອຍຂໍເຕືອນໃຫ້ເຈົ້າຮູ້ເລີຍວ່າອາຍຸຂອງຂ້ອຍມັນເລີຍຮອດເຈັດສິບສອງປີແລ້ວ ເຊິ່ງຫຼາຍກວ່າອາຍຸໄຂສະເລ່ຍຂອງຄົນທົ່ວໄປເຖິງຊາວສອງປີ. ເວົ້າໄດ້ວ່າຂ້ອຍຢູ່ດົນເກີນກຳນົດ ແລະມັນກໍໝົດເວລາສຳລັບຂ້ອຍແລ້ວ. ຕະຫຼອດຂອງຊ່ວງເວລາແຫ່ງຊີວິດຂອງຂ້ອຍນັ້ນ ຂ້ອຍເຄີຍຜ່ານການຖືກລົງໂທດມາທຸກຮູບແບບ ໂດຍທີ່ເຈົ້າເອງກໍຮັບຮູ້ໄດ້. ຍ້ອນແນວນັ້ນແຫຼະ ເຈົ້າຈິ່ງບໍ່ສາມາດເຮັດໃຫ້ຂ້ອຍຫວັ່ນໄຫວ ຫຼືຢ້ານກົວແມ່ນແຕ່ກ້ອຍດຽວ.

"ຂ້ອຍຍັງຍິນດີອີກຊ້ຳຖ້າເຈົ້າຈະໄລ່ຂ້ອຍອອກການ ພ້ອມທັງມີຄວາມສຸກຢ່າງລົ້ນເຫຼືອຖ້າຈະສົ່ງຂ້ອຍໄປທາງພາກເໜືອເພື່ອດັດສ້າງຂ້ອຍຄືນໃໝ່ ສຳລັບຂ້ອຍແລ້ວທີ່ນັ້ນກໍບໍ່ຕ່າງຫຍັງກັບເມືອງສະຫວັນແຫ່ງໜຶ່ງ ເຊິ່ງຂ້ອຍອາດຈະເກັບເຄື່ອງເກັບຂອງອອກໄປກ່ອນທີ່ເຈົ້າຈະກະດິກປາຍສໍດຳຊ້ຳອີກ. ແມ່ນແຕ່ຈະຈົບຊີວິດດ້ວຍການຖືກຍິງເປົ້າ ຂ້ອຍກໍຍັງບໍ່ມີຫຍັງຕ້ອງໃຫ້ເສຍດາຍອີກເລີຍ. ຕອນນີ້, ຂ້ອຍພໍເບິ່ງອອກວ່າສະຖານະການເຊັ່ນນີ້ກຳລັງເຮັດໃຫ້ເຈົ້າຮູ້ສຶກອຶດອັດພໍສົມຄວນ ເພາະນັບຈາກນີ້ເປັນຕົ້ນໄປ ຂ້ອຍຈະບໍ່ຍອມທົນກັບຄວາມຫຍາບຄາຍຂອງເຈົ້າອີກ.

"ເອົາລະ, ນີ້ຄືສິ່ງທີ່ຂ້ອຍຈະເຮັດ. ມື້ອື່ນນີ້ ຂ້ອຍກັບທ່ານໝໍຊັນນະສູດສິບຊາວຫວຽດນາມຈະອອກເດີນທາງໄປທີ່ເຂື່ອນນ້ຳງື່ມ ເຊິ່ງອາດຈະພັກຄ້າງຄືນຢູ່ຫັ້ນຈັກໜຶ່ງຫຼືບາງເທື່ອກໍສອງຄືນ. ແລ້ວຂ້ອຍກໍຈະກັບມາຫ້ອງການພ້ອມທຳການທົດລອງບາງຢ່າງໃນຫ້ອງເກັບສົບ ພ້ອມທັງປຶກສາຫາລືກັບທ່ານໝໍຫງຽນຫົງ. ເມື່ອໃດທີ່ບໍ່ສາມາດ

ເຮັດຫຍັງໄດ້ອີກແລ້ວໃນວຽງຈັນ ຂ້ອຍອາດຈະພິຈາລະນາເລື່ອງການເດີນທາງໄປຄໍາມ່ວນ.

"ເມື່ອຮອດຕອນນັ້ນ, ເຈົ້າຈະຕ້ອງກຽມເອກະສານເດີນທາງໄວ້ໃຫ້ຂ້ອຍ ພ້ອມເຈລະຈາຂໍໃຫ້ເຄື່ອງບິນຂອງກອງທັບໄປສົ່ງຂ້ອຍຢູ່ພາກໃຕ້ ຍ້ອນຂ້ອຍເຖົ້າຫຼາຍແລ້ວຈິ່ງຂັບລົດໄປຕາມທາງອັນຍາວຢຽດແບບຂະລຸຂຸລະທີ່ເຕັມແຕ່ບວກຂຸມບໍ່ໄດ້. ອີກຢ່າງໜຶ່ງ, ຂ້ອຍຍັງຕ້ອງການເບ້ຍລ້ຽງລາຍວັນແຮຖ້ງເລັກໜ້ອຍໃນກໍລະນີເກີດເຫດການສຸກເສີນ. ເຈົ້າຍັງຕ້ອງໄດ້ຢໍ້າເຕືອນທາງກອງທັບອີກວ່າມີເຈົ້າໜ້າທີ່ຊັນນະສູດສົບທີ່ມີງານລົ້ນມືເດີນທາງໄປບ່ອນຫັ້ນພຽງຄົນດຽວ. ເທົ່າທີ່ຂ້ອຍຮູ້, ທາງກະຊວງຍຸຕິທໍາກໍບໍ່ໄດ້ມີອໍານາດ ດ້ອຍກວ່າກອງທັບໃນຍາມບ້ານເມືອງບໍ່ມີສົງຄາມພໍປານໃດ.

"ຕອນນີ້ກໍຮອດຍາມທີ່ຂ້ອຍຕ້ອງກັບແລ້ວລະ." ເວົ້າສຸດສີຣິກໍຢືນຂຶ້ນ ພ້ອມຍິ້ມສໍດໍາຄືນໄປທີ່ແຫງ. "ຂ້ອຍຈະບໍ່ເປີດປາກເວົ້າເລື່ອງມະຍົກມະຍ່ອຍທີ່ພວກເຮົາລົມກັນໃນມື້ນີ້ແນ່ນອນ ສ່ວນເຈົ້າຈະໄປເວົ້າໃຫ້ໃຜຟັງມັນກໍເລື່ອງຂອງເຈົ້າ ຕໍ່ໄປນີ້ເຈົ້າຕ້ອງປະຕິບັດຕໍ່ຂ້ອຍຢ່າງມີມາລະຍາດ ສ່ວນຂ້ອຍກໍຈະຄອຍສອນປະສົບການ ທັງໃຫ້ຄວາມຮ່ວມມືກັບເຈົ້າ ເພື່ອຊ່ວຍໃຫ້ເຈົ້າໄດ້ມີໂອກາດປ່ຽນແປງຕົນເອງເທື່ອລະໜ້ອຍ ຈົນກວ່າເຈົ້າຈະກາຍເປັນຜູ້ພິພາກສາໃນແບບທີ່ເຈົ້າຄວນຈະເປັນ."

ແຫງຈ້ອງມອງເບິ່ງສາຍຕາສີຂຽວອັນແຝງຊ້ອນໄປດ້ວຍພະລັງອໍານາດຄູ່ນັ້ນຕະຫຼອດເວລາຄືກັບຖືກສະກົດຈິດກໍປານນັ້ນ. ສີຣິງຶກຫົວ ພ້ອມໝູນຕົວກັບຄືນ ແລ້ວຍ່າງເບັດໜ້າໄປທາງປະຕູ ທັງຍົກເກີບແຕະຂຶ້ນມາເຊັດໃສ່ກັບຂາສິ້ງດ້ານຫຼັງຂອງຕົນກ່ອນທີ່ຈະຍ່າງອອກຈາກຫ້ອງອັນງຽບແສນງຽບຈົນຂົນໜາວລຸກບ່ອນນັ້ນ.

8

# ໄປຕຶກເບັດ

"ອືມ, ຕ້ອງບອກເລີຍວ່າແບບນີ້ດີກກວ່າຂີ່ລົດເມໂດຍສານຕັ້ງຫຼາຍເທື່ອ."

ສີຣິແລະຫງຽນທັງນັ່ງແນມເບິ່ງທ້າຍງ່ອນອັນອວບອ້ວນຂອງຄົນຂັບລົດໃນຊຸດເຄື່ອງແບບທະຫານຫວຽດນາມຢູ່ເບາະດ້ານຫຼັງຂອງລົດລີມູຊີນສີດຳ ສ່ວນຫງຽນທັງກໍເບິ່ງຄືວ່າແຕ່ງກາຍເຂົ້າຮູບເຂົ້າຮອຍໄດ້ແບບລົງຕົວ ທັງເໝາະສົມສຳລັບການເດີນທາງ.

"ທ່ານທູດບໍ່ຢາກໃຫ້ຂ້ອຍເດີນທາງໄປໃສກໍຕາມດ້ວຍລົດໂດຍສານທົ່ວໄປ. ທ່ານວ່າຢູ່ໃສກໍມີແຕ່ໂຈນເຕັມໄປໝົດ."

"ທ່ານເລີຍຄິດວ່າການຂີ່ລົດຄັນໃຫຍ່ອັນຫຼູຫຼາລາຄາແພງຫັ້ນຊິຊ່ວຍໃຫ້ພວກເຮົາປອດໄພຈາກພວກໂຈນວ່າຕີ?"

"ມີຜູ້ດູແລຄວາມປອດໄພນຳ." ທັງສອງແນມຜ່ານອອກໄປເບື້ອງປະຕູລົດທາງສີຣິນັ່ງຢູ່ ເຊິ່ງມີຜູ້ດູແລຄວາມປອດໄພ ຮ່າງກາຍຕ່ຳເຕ້ຍ ແຕ່ທ່າທາງຂຶງຂັງນັ່ງເທິງລົດຈັກຄ້າຍຄືກັບລົດຈັກຂົນສິ່ງໄປສະນີຕ່າງແຕ່ຕິດອາວຸດ ໂດຍມີປືນຍາວແບບປືນລ່າສັດພາຍໄວ້ຕິດກັບບ່າໄຫຼ່ ຄ້າຍກັບວ່າກຽມພ້ອມທີ່ຈະພິຊິດຜູ້ກໍ່ການຮ້າຍໄດ້ທຸກວິນາທີຖ້າມີເຫດການຈູ່ໂຈມເກີດຂຶ້ນ.

"ຂ້ອຍຄິດວ່າທ່ານທູດເພິ່ນຄົງບໍ່ຄ່ອຍໄດ້ເດີນທາງອອກໄປທາງນອກພໍເທົ່າໃດ."

"ສີຣິ, ຂ້ອຍໄດ້ອ່ານເລື່ອງຄວາມສາມາດໃນການກັບຄືນສະພາບເດີມໄວຂອງກ້າມຊີ້ນຫົດ-ຢືດແລ້ວໃດ." ສີຣິຫົວຂຶ້ນເບົາໆ.

"ໃຜໆ ກໍເວົ້າວ່າຄົນຫວຽດນາມເປັນຊົນຊາດທີ່ບໍ່ມີວັດທະນະທຳ."

"ເຈົ້າຮູ້ບໍວ່າພວກເຮົາກຳລັງສົງໄສຢູ່ວ່າພາຍໃນສອງອາທິດນ້ຳໃນເຂື່ອນຈະເຂົ້າໄປຢູ່ໃນລຳໄສ້ແບບທຳມະຊາດຈົນມັນເຕັມ ຫຼືບໍ່?" ໝາຍເຖິງສອງສິບທີ່ພວກເຂົາຄິດວ່າມີປະລິມານນ້ຳຢູ່ໃນຮ່າງກາຍຫຼາຍຜິດປົກກະຕິ.

"ໃນປຶ້ມຕຳລາບອກໄວ້ວ່າ ອະໄວຍະວະພາຍໃນຮ່າງກາຍອາດໄດ້ຮັບຄວາມເສຍຫາຍຍ້ອນພວກປານ້ອຍກັບໄຄນ້ຳ ແຕ່ການຫົດຕົວຂອງກ້າມຊີ້ນຈະປິດກັ້ນບໍ່ໃຫ້ນ້ຳໄຫຼເຂົ້າ

ໄປໃນລຳໄສ້ ແລະພາຍໃນລຳໄສ້ກໍບໍ່ໜ້າຈະມີນ້ຳຫຼາຍຂະໜາດນີ້.”

“ເອີາເທາະຫິງ. ປັດສະໜາທີ່ພວກເຮົາມີຢູ່ຕອນນີ້ຍັງບໍ່ພຽງພໍອີກຫວາ? ບາງທີພວກເຂົາອາດຫິວນ້ຳແຮງແລ້ວພາກັນດື່ມນ້ຳໃນເຂື່ອນຈົນເຕັມທ້ອງ ກ່ອນທີ່ພວກເຂົາຈະຂາດໃຈຕາຍ.”

“ແຕ່ບໍ່ມີນ້ຳໄຫຼຜ່ານໝາກໄຂ່ຫຼັງຈັກເມັດເລີຍໃດ.”

“ຄັນຊັ້ນ ເຈົ້າກຳລັງເວົ້າເລື່ອງຫຍັງ?”

“ເຈົ້າເຄີຍຫຼິ້ນກິລາສະກີນ້ຳບໍສີຣີ?”

“ໂອ ຫຼິ້ນປະຈຳ. ຕອນລ່ອງເຮືອທ່ອງທ່ຽວ ຂ້ອຍມັກໂຍງສະກີທາງຫຼັງເຮືອໃບລົມຕະຫຼອດ.”

ຫງຽນຫົງຫົວຂຶ້ນຊິງຖືກໃຈ ສ່ວນຄົນຂັບລົດກໍຈ້ອງແນມມາທາງສີຣີຜ່ານແວ່ນລົດທາງໜ້າດ້ວຍສາຍຕາຊິງອິດສາໃນຄວາມລ້ຳລວຍຂອງເຂົາ.

“ຢ່າບອກໃດວ່າເຈົ້າກໍເຄີຍຫຼິ້ນ?”

“ສະໄໝຍັງໜຸ່ມຂ້ອຍເປັນເດັກໄດ້ຮັບສິດພິເສດ ກ່ອນຈະເຂົ້າໃຈສັດຈະທຳຂອງຊີວິດ.”

“ດີເລີຍ, ແລ້ວມັນເປັນແນວໃດ?”

“ຫຼິ້ນສະກີນ້ຳຫັ້ນຫວາ? ມັນກໍເຮັດໃຫ້ຮູ້ສຶກສົດຊື່ນມີຊີວິດຊີວາຊັ້ນລະບໍ.”

“ແລ້ວມັນກ່ຽວຫຍັງກັບກ້າມຊີ້ນຫົດ-ຢືດຂອງຫຣັນທັງສອງຄົນລະ?”

“ຂ້ອຍເອງກໍບໍ່ໝັ້ນໃຈມັນອາດຈະມີສ່ວນກ່ຽວຂ້ອງກັນກໍເປັນໄດ້ໃດ. ຄວາມຈິງແລ້ວ ຂ້ອຍກໍບໍ່ແມ່ນນັກຫຼິ້ນສະກີນ້ຳທີ່ເກັ່ງທີ່ສຸດຈົນເປັນມືໜຶ່ງຂອງໂລກດອກ ຂ້ອຍພຽງແຕ່ໂດດຕົ໋ວມຕົ໋ຽມລົງໄປໃນນ້ຳຫຼາຍກວ່າການຫຼິ້ນສະກີ ທັງບໍ່ມີວິທີໃດອີກແລ້ວທີ່ຈະສວນທະວານໄດ້ດີກວ່າ ...”

“ຂ້ອຍພໍເຂົ້າໃຈປະເດັນທີ່ເຈົ້າຢາກບອກແລ້ວແຫຼະ ໝາຍຄວາມວ່າຫຣັນທັງສອງຄົນຫັ້ນພາກັນລົງຫຼິ້ນສະກີນ້ຳແບບເບີກບານສຳລານໃຈ ຢູ່ອ່າງນ້ຳຈືນແມ່ນບໍ?”

“ມັນກໍບໍ່ແມ່ນແບບນັ້ນ ແຕ່ຖ້າພວກເຂົາຖືກລາກໄປຕາມທ້າຍເຮືອ ...”

“ຜົນຂອງມັນກໍອັນດຽວກັນຫັ້ນແຫຼວ. ຈັ່ງແມ່ນສະຫຼາດຫຼາຍສະຫາຍນີ້ ນັ້ນອາດຈະເປັນວິທີການໜຶ່ງຂອງການເຮັດທໍລະມານ. ໂອຟ້າເອີຍ, ຫວັງວ່າຜູ້ທໍລະມານຄົງໄດ້ຂໍ້ມູນຫຍັງບາງຢ່າງຈາກສອງຄົນນັ້ນ. ພວກມັນໃຊ້ຄວາມພະຍາຍາມສູງພໍຄວນເພື່ອບີບໃຫ້ພວກເຂົາເປີດປາກໄຂຄວາມລັບອອກມາ. ແລ້ວເຈົ້າຄິດວ່າທັງສອງຄົນຫັ້ນມີເລື່ອງລາວສຳຄັນຫຍັງທີ່ຈະຕ້ອງເວົ້າອອກມາແທ້ໆ? ຫຼືມີຫຍັງທີ່ເຈົ້າຍັງປິດບັງຂ້ອຍຢູ່ບໍ?”

"ຂ້ອຍກໍບອກທຸກຢ່າງຕາມທີ່ຮູ້ຫັ້ນແຫຼະ ທັງໝັ້ນໃຈວ່າຄົນຂັບລົດຫັ້ນບໍ່ຮູ້ເລື່ອງລາວຫຍັງດອກ ເທົ່າທີ່ເຂົາສາມາດບອກໄດ້ກໍແມ່ນ ລົດຈີບຂອງເຂົາກິນນ້ຳມັນຈັກກິໂລຕໍ່ລິດເທົ່ານັ້ນລະ."

"ອືມ ຖ້າຂ້ອຍເປັນຄົນຂັບລົດ ຂ້ອຍຈະຮີບບອກພວກເຂົາທັນທີເມື່ອເຫັນສັນຍານອັນຕະລາຍຕັ້ງແຕ່ຕອນຕົ້ນ ແມ່ນບໍໂຊເຟີ?" ຄົນຂັບລົດເຮັດເປັນບໍ່ຮູ້ບໍ່ສົນກັບຄຳຖາມຂອງສີຣິ ຄົງກຳລັງຕັ້ງໃຈໃນການໃຊ້ພະລັງງານຂອງຕົນເພື່ອຫຼົບຂຸມ ລວມທັງຄົນຍ່າງກະແຈກກະຈາຍຢ່າງບໍ່ເປັນລະບຽບໄປຕາມຂອບທາງ.

ສີຣິ ກັບຫງຽນທົງໄດ້ພົບປະກັບທ່ານເຈົ້າເມືອງທີ່ເຂື່ອນນ້ຳງື່ມ ໂດຍໄດ້ແນະນຳທັງສອງໃຫ້ຮູ້ຈັກກັບຊາຍຫາປາສອງຄົນຜູ້ເຊິ່ງພົບສົບຂອງຫຣັນທັງຄູ່. ຕອນທີ່ຫຣັນຄົນທຳອິດພຸ່ງຂຶ້ນມາເທິງໜ້ານ້ຳບໍ່ຕ່າງຫຍັງກັບຂີປານາວຸດ, ຊາຍຫາປາຄົນທີສອງຜູ້ໜ້າສົງສານເຊິ່ງກຳລັງນັ່ງຂະມຸກຂະມຸ້ຍກັບໜ້າວຽກບາງຢ່າງຢູ່ເທິງເຮືອ ໃບໜ້າສີນ້ຳຕານອັນບິດບ້ຽວໄດ້ຈ້ອງມອງໄປທີ່ເຂົາຈົນເຮັດໃຫ້ຫົວໃຈຂອງເຂົາເກືອບຫຼົ່ນລົງມາຕົກຢູ່ກັບພື້ນເຮືອທັນທີ.

ພໍແຕ່ສີຣິແຈ້ງເຈດຈຳນົງໃຫ້ທ່ານເຈົ້າເມືອງຮູ້ເຖິງຈຸດປະສົງຂອງພວກຕົນແລ້ວລາວກໍພໍຮູ້ຢູ່ແກ່ໃຈວ່າຄົງບໍ່ມີໃຜຢາກເຂົ້າຄິວເປັນອາສາສະໝັກ ແມ່ນແຕ່ນັກດຳນ້ຳທີ່ເກັ່ງທີ່ສຸດຂອງເມືອງ ກໍຍັງຖອດໃຈເພື່ອຈະມຸດນ້ຳລົງໄປຄົ້ນຫາສົບທີ່ແຊ່ນ້ຳຈົນຮອດສາມອາທິດ. ຜູ້ຄົນທີ່ອາໄສລຽບຕາມຂອບເຂດຂອງອ່າງນ້ຳງື່ມ ຕ່າງກໍຍັງຝັງໃຈໃນເລື່ອງປະເພນີ ແລະໂຊກລາງຈົນບໍ່ສາມາດຈະລຶບລ້າງໄດ້ ສະນັ້ນສອງສົບທີ່ພົບກ່ອນໜ້ານີ້ຈຶ່ງສ້າງຄວາມຫວາດລະແວງໃຫ້ກັບຜູ້ຄົນເປັນສ່ວນໃຫຍ່. ແຕ່ໃນບັນດາຄົນຫາປາເຫຼົ່ານັ້ນ ກໍມີຜູ້ເຖົ້າຄົນໜຶ່ງທີ່ຍອມເຮັດທຸກຢ່າງພຽງເພື່ອເງິນບໍ່ພໍເທົ່າໃດກີບ ເຊິ່ງຊື່ຂອງເຂົາແມ່ນດັນ ຄວາມຈິງແລ້ວຕົວຂອງດັນເອງກໍບໍ່ມີຄວາມສາມາດແມ່ນແຕ່ຈະຊື້ເຮືອພຽງລຳດຽວ. ປົກກະຕິແລ້ວເຂົາພຽງແຕ່ຢັ່ງລົງໄປໃນອ່າງນ້ຳທີ່ມີຄວາມເລິກພຽງແອວ ແລ້ວກໍໃຊ້ແຫຄູ່ໃຈທີ່ເຂົາເອງໄດ້ທຳການສ້ອມແຊມມັນຕັ້ງຫຼາຍຄັ້ງ ເພື່ອຂວ້າງມັນໄປໃນນ້ຳປະມານຊາວຄັ້ງ ເຂົາດຳລົງຊີວິດຢູ່ດ້ວຍການຫາປາໄອຄິວຕ່ຳ ແລະສັດນ້ຳຂະໜາດນ້ອຍທີ່ບໍ່ມີປັນຍາຈະໜີພົ້ນຈາກເງື້ອມມືຂອງເຂົາ.

"ຂ້ອຍຮັບປາກເຮັດໄດ້ແນ່ນອນ ... ສ່ວນຄ່າແຮງແມ່ນຫ້າຮ້ອຍກີບ." ນັບແຕ່ເດືອນມິຖຸນາຜ່ານມາ ຄ່າເງິນກີບໄດ້ຫຼຸດລົງ ເຊິ່ງເງິນສອງຮ້ອຍກີບມີຄ່າເທົ່າກັບໜຶ່ງໂດລາສະຫະລັດ. ດັນຮູ້ສຶກວ່າຕົນເອງຂໍຄ່າແຮງເປັນເງິນກ້ອນໃຫຍ່ພໍສົມຄວນ ທັງກັງວົນວ່າຄົນເມືອງສອງຄົນນັ້ນຈະຕໍ່ລອງລາຄາກັບເຂົາ ແຕ່ບໍ່ເລີຍ ທັງສອງບໍ່ຕໍ່ຈັກກີບ ພວກເຂົາຈ່າຍເງິນລ່ວງໜ້າໃຫ້ດັນເຄິ່ງໜຶ່ງ ເຊິ່ງຖືໄດ້ວ່າເປັນມື້ໂຊກດີຂອງເຂົາອີກວັນ.

ຊາຍຫາປາຄົນທີສອງ ໄດ້ພາດັນໄປຈຸດທີ່ຕົນພົບເຫັນສົບຂອງທຣັນພົ້ນຂຶ້ນມາຈາກໜ້ານໍ້າ ຫົວໃຈຂອງເຂົາປາກົດວ່າບໍ່ໄດ້ຢູ່ກັບເນື້ອກັບຄີງເລີຍແມ່ນແຕ່ໜ້ອຍຍ້ອນຄວາມຫວາດພະຫວາ ສ່ວນສີຣິ ກັບຫງຽນທົງ ພ້ອມທ່ານເຈົ້າເມືອງ ພາກັນຢືນແນມເບິ່ງທັງສອງຢູ່ເທິງຝັ່ງແມ່ນໍ້າ. ດັນສວມແວ່ນຕາກັນນໍ້າທີ່ສີຣິຊີ້ມາແຕ່ໃນເມືອງ ກ່ອນໂດດຕວ້ານລົງຈາກທ້າຍເຮືອຂະນະທີ່ຍັງສວມເສື້ອຍຶດຕິດຢູ່, ເຂົາມຸດຫົວລົງໄປໃນນໍ້າປະມານຫ້າຫົກວິນາທີ ກໍໂດດພວດພາດຂຶ້ນມາ ພ້ອມອ້າປາກຫຼູບເອົາອາກາດເຂົ້າປອດຢ່າງຄົນກໍາລັງຫິວກະຫາຍ. ທ່ານເຈົ້າເມືອງໄດ້ຊີ້ແຈງວ່າ ມັນເປັນຜົນຂອງການສູບຢາໜັກນັ້ນເອງ ຂະນະທີ່ດັນກໍຍັງດໍານໍ້າລົງ ແລ້ວກໍສະມັກນໍ້າ, ດໍາລົງແລ້ວກໍສະມັກສະຫຼັບໄປມາພໍປານນັ້ນ, ສີຣິອວ່າຍໜ້າມາທາງທ່ານເຈົ້າເມືອງ ເພື່ອເອີ່ຍຖາມສາເຫດບາງຢ່າງກ່ຽວກັບມື້ທີ່ພວກເຂົາພົບເຫັນສົບຜູ້ຊາຍທີ່ມີຮອຍສັກ.

"ແມ່ນໃຜເປັນຄົນຢືນຢັນວ່າ ຮອຍສັກນັ້ນເປັນສັນຍະລັກຂອງຄົນຫວຽດນາມ?"

"ໂອ ຂ້ອຍເອງກໍຂ້ອນຂ້າງໝັ້ນໃຈຄືກັນໃດ ແຕ່ກໍມີທະຫານຄົນໜຶ່ງເປັນຜູ້ຢືນຢັນເຂົາຍັງບອກວ່າເຂົາເຄີຍຖືກສົ່ງໄປປະຈໍາການຢູ່ຫວຽດນາມ ແລະເຂົາກໍຈື່ຮອຍສັກແບບນັ້ນໄດ້ທັນທີ."

"ເຂົາຍັງຢູ່ແຖວນີ້ບໍ?"

"ບໍ່ດອກ ເຂົາບໍ່ແມ່ນຄົນເຂດນີ້ ເຂົາມາພຽງເພື່ອສໍາຫຼວດຊື່ໆ."

"ສໍາຫຼວດຫຍັງ?"

"ການເດີນທາງດ້ວຍເຮືອແບບໄປ-ກັບ ໄປຍັງດອນດັດສ້າງ ເຂົາວ່າແນວນັ້ນແຫຼະ."

ດອນທັງສອງທີ່ວ່ານັ້ນສາມາດແນມເຫັນໄກອອກໄປພໍສົມຄວນໂດຍມີດອນທ້າວສໍາລັບຄຸມຂັງນັກໂທດແລະຜູ້ຕິດຢາເສບຕິດຊາຍ ສ່ວນດອນນາງແມ່ນສໍາລັບນັກໂທດທີ່ເປັນເພດຍິງ. ສີຣິບໍ່ຄາດຄິດວ່າຈະມີການດັດສ້າງຫຍັງແດ່ເກີດຂຶ້ນຢູ່ສອງດອນແຫ່ງນັ້ນ.

"ທ່ານເຫັນເອກະສານຄໍາສັ່ງຂອງເຂົາ ຫຼືບໍ່?"

"ອຸ້ຍຕາຍ ບໍ່ເລີຍທ່ານໝໍ. ຜູ້ຄົນໃນຊຸດເຄື່ອງແບບສ່ວນໃຫຍ່ບໍ່ມັກໃຫ້ຄົນທໍາມະດາຄືຊຸມເຮົາເຈົ້າຂ້ອຍສອດຮູ້ສອດເຫັນເລື່ອງຂອງເຂົາເຈົ້າປານໃດ ຊໍ້າບໍ່ໜໍາເຂົາຍັງມີປືນກະບອກໃຫຍ່ ຂ້ອຍຈິ່ງບໍ່ຖາມຫຍັງຕໍ່ອີກ."

ແນມອອກໄປທີ່ເຮືອລໍາໜຶ່ງເຊິ່ງກໍາລັງຟູອ່ອງລ່ອງຢູ່ກາງແມ່ນໍ້າ ພໍ່ເຖົ້າດັນເບິ່ງຄືວ່າກໍາລັງຈະປ່ອຍໃຫ້ຕົນເອງຈົມນໍ້າຕາຍ ເຮັດໃຫ້ຫງຽນທົງຮູ້ສຶກເປັນຫ່ວງລາວ.

"ຄິດວ່າພວກເຮົາຄວນຮ້ອງລາວກັບຄືນເຂົ້າຝັ່ງດີກວ່າບໍ? ຂ້ອຍຄິດວ່າລາວຄົງບໍ່ລອດດອກ." ສີຣິງຶກຫົວເຫັນດີ ພຽງແຕ່ພວກເຂົາແຂກປາກເອີ້ນໃສ່ຊາຍຫາປາ ແຕ່ແລ້ວກໍບໍ່ເຫັນດັນໂປໂລຫົວຂຶ້ນມາອີກ.

"ໂອ ຊວຍແລ້ວບັດນີ້." ພວກເຂົາພາກັນກົ້ງໂກບເພື່ອສອດສ່ອງຫາບາງຢ່າງຜ່ານແສງແດດ ໂດຍມຸ່ງເປົ້າໄປທົ່ວໜ້ານ້ຳເພື່ອຫວັງຈະພົບດັນໂຜ້ໂວ້ໜ້າຂຶ້ນມາ. ໜ້ານ້ຳແບນລຽບບໍ່ຕ່າງຫຍັງກັບແຜ່ນແກ້ວ ແຕ່ຊາຍທີ່ນັ່ງຢູ່ເທິງເຮືອຊ້ຳພັດມີທ່າທີເສີຍມັ່ງແບບບໍ່ຮ້ອນບໍ່ເຄືອງຫຍັງກັບເລື່ອງສະຫຍອງຂວັນທີ່ອາດເກີດຂຶ້ນຢູ່ກ້ອງພື້ນເຮືອ.

ທ່ານໝໍທັງສອງຮູ້ວ່າຄົນທີ່ດຳນ້ຳລົງໄປໃນນ້ຳຈືດຈະໃຊ້ເວລາຢ່າງໜ້ອຍສີ່ນາທີ. ຫງຽນຫົງຍົກແຂນຂຶ້ນເພື່ອຈັບເວລາຕາມເຂັມໂມງ. "ມັນຜ່ານໄປສາມນາທີແລ້ວ ເປັນຫຍັງຊາຍຫາປາຄົນນັ້ນຄືບໍ່ລົງໄປຊ່ວຍດັນ?"

ສີຣິຖາມທ່ານເຈົ້າເມືອງ.

"ເຂົາບອກວ່າເຂົາລອຍນ້ຳບໍ່ເກັ່ງປານໃດ ຈິ່ງບໍ່ມີປະໂຫຍດຫຍັງເລີຍທີ່ພວກເຂົາຈະພາກັນຕາຍທັງຄູ່."

ເວລາລ່ວງເລີຍກາຍສີ່ນາທີເລັກໜ້ອຍ ດັນຈິ່ງໂປໂລຫົວຂຶ້ນມາຈາກໜ້ານ້ຳ, ສີໜ້າຂອງເຂົາປາກົດວ່າກ່ຳແຫຼ້ ແຕ່ແຝງຮອຍຍິ້ມຢ່າງຜູ້ມີໄຊ. ມັນຄືເຫດການທີ່ສ້າງຄວາມສະຫຍອງຂວັນຈົນເຖິງນາທີສຸດທ້າຍ ບໍ່ຕ່າງຫຍັງກັບການສະແດງມາຍາກົນຂອງຮູດີນີຜູ້ມີສີມືໃນການເອົາຕົວລອດຈາກໄພອັນຕະລາຍ ດັນຍົກແຂນຂຶ້ນ ພ້ອມໂບກມືໄປມາເຊິ່ງສະແດງໃຫ້ເຫັນວ່າເຂົາຖືບາງຢ່າງໄວ້ຢູ່ໃນມືຂ້າງໜຶ່ງເບິ່ງຄ້າຍຄືກັບສິ້ນເຊືອກ ພໍເຂົາດຶງເຊືອກເສັ້ນນັ້ນແຮງໆ ຕີນຂ້າງໜຶ່ງກໍລອຍຂຶ້ນມາເທິງໜ້ານ້ຳເປັນອັນດັບທຳອິດ ຈາກນັ້ນຂາກໍຟູຂຶ້ນຕາມມາ ໝາຍຄວາມວ່າ ສົບຂອງຣັອກຖືກນຳຂຶ້ນມາຈາກພື້ນນ້ຳແລ້ວ.

**********

ເພື່ອຈະໄດ້ລົງມືຊັນນະສູດສົບຜູ້ຕາຍກ່ອນທີ່ອາກາດຈະເປັນຕົວປັນຫາໃນການເຮັດໃຫ້ສົບເນົ່າເປື່ອຍໄວຂຶ້ນນັ້ນ, ທ່ານໝໍຊັນນະສູດສົບທັງສອງຄົນໄດ້ອາໄສຫ້ອງຄອນກຣີດທີ່ເປົ່າວ່າງເຊິ່ງຕັ້ງຢູ່ດ້ານຫຼັງເຂື່ອນເພື່ອໃຊ້ເປັນຫ້ອງເກັບສົບຊົ່ວຄາວ. ສ່ວນເມຍຂອງທ່ານເຈົ້າເມືອງກໍຍັງຄົງເຮັດໜ້າທີ່ວິ່ງເຕັ້ນເຂົ້າ-ອອກຫ້ອງນັ້ນເພື່ອເສີບນ້ຳຊາ.

ການພົບສົບຂອງຣັອກມີຄວາມຄ້າຍຄືກັບສົບຂອງທຣັນຜູ້ຫຼ້າສຸດ ແຕ່ມີຂໍ້ຂັດແຍ່ງທີ່ແຕກຕ່າງອັນສຳຄັນສອງຢ່າງ. ເຖິງແມ່ນຈະມີຮ່ອງຮອຍຂອງຄວາມຕື່ນຕົກໃຈ ແຕ່ກໍມີແຜຂະໜາດໃຫຍ່ປາກົດຢູ່ ເຊິ່ງເຫັນໄດ້ຊັດເຈນຈາກການຖືກຍິງໄລຍະໃກ້ ລູກປືນໄດ້

ທະລຸຜ່ານໜ້າເອິກ ເຊິ່ງຫ່າງຈາກຫົວໃຈຂອງເຂົາບໍ່ເທົ່າໃດເຊັນ ແລ້ວພຸ່ງອອກໄປທາງກະດູກບ່າໄຫຼ່. ຫງຽນສ່າຍຫົວໄປມາ.

"ມັນຊ່າງໄຮ້ເຫດຜົນອີ່ຫຼີ ພຽງແຕ່ບາດແຜອັນດຽວກໍຍັງເຮັດໃຫ້ເຂົາຕາຍໄດ້ແລ້ວ."

"ເຈົ້າຄິດວ່າເຂົາບໍ່ໄດ້ຕາຍຍ້ອນບາດແຜນີ້ຊັ້ນບໍ?"

"ອືມ ກໍບໍ່ແນ່ແຫຼະ. ເບິ່ງແມ."

ສິຣິ ເອ່ນຕົວເຂົ້າໃກ້ກັບບາດແຜ ທັງເຫັນໃນສິ່ງທີ່ເພື່ອນຮ່ວມງານຂອງຕົນກຳລັງງຸນງົງ ຮອຍປາກບາດຍັງຄົງເປີດຢູ່ ທັງມີຮອຍອັກເສບ ແຕ່ບໍລິເວນທີ່ຮອຍລູກປືນທະລຸຜ່ານອອກໄປນັ້ນ ມີຮ່ອງຮອຍຕົກເກັດຢ່າງເຫັນໄດ້ຊັດເຈນ ບໍ່ມີຫຍັງທີ່ຕ້ອງສົງໄສເລີຍວ່າ ບາດແຜຈາກລູກປືນເທິງໜ້າອົກຂອງຮ໊ອກນັ້ນແມ່ນແຜເກົ່າ ເຊິ່ງຄົງຈະແມ່ນກຳລັງຢູ່ໃນລະຫວ່າງການຮັກສາຕົວຕອນທີ່ເຂົາເສຍຊີວິດ.

"ເປັນຫຍັງເຂົາຄືວ່າອອກເດີນທາງໄປທົ່ວກັບຄະນະຜູ້ແທນ ທັງທີ່ໜ້າອົກມີບາດແຜເປັນຮູຂະໜາດໃຫຍ່ແບບນີ້? ເຂົາຄວນຈະພັກຜ່ອນເພື່ອຮັກສາຕົວຢູ່ບ່ອນໃດບ່ອນໜຶ່ງກ່ອນ."

"ນີ້ແມ່ນຄຳຖາມຂໍ້ທີໜຶ່ງ," ສິຣິກ່າວ. "ສ່ວນຄຳຖາມຂໍ້ທີສອງ. ຊ່ວຍອະທິບາຍອັນນີ້ໃຫ້ຂ້ອຍຟັງເບິ່ງດູ." ລາວເວົ້າທັງຍົກສາຍໄຟຟ້າທີ່ເຄືອບດ້ວຍຢາງທີ່ຫາກໍແກ້ອອກຈາກຂໍ້ຕີນຂອງຮ໊ອກ. "ມັນເລີ່ມແປກຂຶ້ນຕະຫຼອດແລ້ວນິ."

"ເຈົ້າໝາຍຄວາມວ່າ ຖ້າຄົນພວກນັ້ນມີສາຍໄຟຊຸມນີ້ ແລ້ວເປັນຫຍັງພວກເຂົາຄືບໍ່ມັດໝົດທັງສາມຄົນຖ່ວງນໍ້ານຳກັນແມ່ນບໍ?"

"ສາຍໄຟທີ່ໃຊ້ມັດສົບນີ້ ມັນຫຼາຍພໍທີ່ຈະໃຊ້ມັດທະຫານທັງກອງພັນ ແລ້ວເຈົ້າຄິດວ່າມັນຕ້ອງໝາຍເຖິງອີ່ຫຍັງຈັກຢ່າງແມ່ນບໍ?"

"ໝາຍຄວາມວ່າຄົນພວກນັ້ນຖິ້ມເງື່ອນງຳໄວ້ໃຫ້ພວກເຮົາວ່າຕີ?"

"ອາດຈະແມ່ນແນວນັ້ນ."

"ຄັນຊັ້ນກໍແລ້ວໄປ ແຕ່ເກາງວ່າຄົນພວກນັ້ນພາກັນປະເມີນຄ່າພວກເຮົາຕໍ່າເກີນໄປແລ້ວແຫຼະ. ຂ້ອຍບໍ່ເຂົ້າໃຈອີ່ຫຼີວ່າມັນໝາຍເຖິງຫຍັງ ແລ້ວເຈົ້າລະພໍຮູ້ຢູ່ບໍ?"

"ຕອນນີ້ຍັງບໍ່ຮູ້ ແຕ່ຂ້ອຍຕ້ອງຮູ້ໃຫ້ໄດ້. ບັດແລ້ວວຽກບ່ອນນີ້ ຂ້ອຍຄິດວ່າພວກເຮົາຄວນໄປລົມກັບສະຫາຍດັນອີກເທື່ອໜຶ່ງ."

ດັນນັ່ງສູບຢາທັງດື່ມເຫຼົ້າທີ່ເຂົາຊື້ມາເອງຈາກລາຍໄດ້ທີ່ຫາມາຢ່າງມີຄວາມສຸກຢູ່ຊື່ລະບຽງໜ້າເຮືອນນ້ອຍຊັ້ນດຽວທີ່ເຮັດດ້ວຍລັງສິນຄ້າ. ເລື່ອງທີ່ຈະຊວນທ່ານໝໍທັງສອງດື່ມຫຍັງຈັກຢ່າງນຳນັ້ນປາກົດວ່າບໍ່ມີໃນຫົວຂອງເຂົາເລີຍ.

"ມັນແມ່ນລະເບີດ."

"ລະເບີດຊະນິດໃດ?"

"ມັນກໍແມ່ນປະເພດດຽວກັບພວກອາເມລິກາໜ້າໂງ່ ທີ່ເຄີຍເຮັດໃຫ້ຄົນຂອງພວກເຮົາໄປສູ່ນິບພານຫັ້ນແຫຼະ ມີສາມລູກຈົມຢູ່ໃນນ້ຳໂດຍຖືກຂີ້ຕົມຝັງໄວ້ເປັນເຄິ່ງ ຄົນພວກນັ້ນຍັງສະຫຼັກຕົວອັກໜັງສືໃສ່ໃນນັ້ນ.

"ເຈົ້າຮູ້ບໍວ່າມັນເປັນພາສາຫຍັງ?"

ດັນຫົວຂວັນກັບຄຳທີ່ຖືກຖາມ ຄ້າຍຄືວ່າເຂົາເຄີຍໄດ້ຮັບພອນຈາກຟ້າໃຫ້ສາມາດອ່ານໜັງສືອອກນີ້ແຫຼະ. "ບໍ່ຮູ້ຄືກັນ ແຕ່ຂ້ອຍຢາກຈະບອກໃຫ້ຮູ້ວ່າ ໜຶ່ງໃນນັ້ນມີທຸງຊາດຈີນຕັ້ງຢູ່ນຳ."

"ຂໍບອກເລີຍວ່າ ມັນບໍ່ແມ່ນໜ້າທີ່ຂອງຂ້ອຍທີ່ຈະຕ້ອງມາເຮັດວຽກນີ້. ຂ້ອຍຈະຍື່ນຄຳຮ້ອງທຸກໄປຫາສະຖານທູດແບບເປັນທາງການເບິ່ງ ເລື່ອງນີ້ຈ້າງກະບໍ່ຈົບງ່າຍໆດອກ."

ສີຣິສົງໄສວ່າເມື່ອໃດເຂົາຈະເຊົາຈົ່ມຈັກເທື່ອ ຄົນຂັບລົດຊາຍຫວຽດນາມເລີ່ມຈົ່ມບໍ່ຢູ່ບໍ່ເຊົາຕັ້ງແຕ່ອອກຈາກເຂື່ອນນ້ຳງື່ມມາ ສີຣິຈຳເປັນຕ້ອງທົນຟັງສຽງຈົ່ມວ່ານັ້ນ ເພາະເຂົານັ່ງຢູ່ທາງໜ້າຂອງລົດລີມູຊິນ. "ມັນບໍ່ແມ່ນ ... ເລື່ອງປົກກະຕິ."

"ຂ້ອຍຮູ້ຢູ່ດອກ ເບິ່ງລົດຖີບແດ່ດຸຫັ້ນນະ."

ກະໂປງທ້າຍລົດອາດຈະກວ້າງພໍຖ້າບໍ່ມີຢາງອາໄຫຼ່ ກັບຖັງນ້ຳມັນແປດລິດ ສ່ວນນາຍທະຫານຜູ້ຮັກສາຄວາມປອດໄພກໍປະຕິເສດບໍ່ໃຫ້ສີຣິຊ້ອນລົດຈັກໄປນຳ ສະນັ້ນລາວຈິ່ງບໍ່ມີທາງເລືອກອື່ນເລີຍ.

ສິບຂອງຮ້ອກຖືກຫໍ່ຢ່າງແໜ້ນໄວ້ໃນຜ້າໃບແຕ່ກໍຍັງຍ້ອຍໂຢດລົງມາ ແລະຖືກຈັບພາດແຂງທີ່ເບາະດ້ານຫຼັງຂອງທ່ານໝໍຫງຽນ ເຖິງແມ່ນວ່າເຄື່ອງປັບອາກາດຈະເຮັດວຽກໄດ້ເປັນຢ່າງດີ ແຕ່ກິ່ນກະຈາຍອອກມາກໍຂ້ອນຂ້າງແຮງສົມຄວນ, ຄົນຂັບລົດຈຶ່ງເອົາເຈ້ຍທິດຊູມາອັດຮູດັງທັງສອງຂ້າງໄວ້. ສີຣິອວ່າຍໜ້າໄປທາງຫງຽນຫົງ.

"ທ່ານເວົ້າພາສາຝຣັ່ງໄດ້ບໍ່?"

"ພໍໄດ້ຢູ່ ແຕ່ກໍເປັນກະຕຸກຕະຕັກເລັກໜ້ອຍ."

"ໂຊເຟີລົດເດລະເວົ້າໄດ້ບໍ່?"

"ໂອຍ! ທ່ານອາດຄິດວ່າຂ້ອຍຈະໄດ້ຮັບສິດພິເສດໃຫ້ໄດ້ເຂົ້າຮຽນໃນໂຮງຮຽນຝຣັ່ງຢູ່ໃສຊັ້ນຫວາ? ຂ້ອຍເປັນຄົນທຸກຍາກອະນາຖາ ເປັນໄດ້ພຽງມະນຸດເດີນດິນ ... ເປັນຈິດວິນຍານຂອງລະບອບການປົກຄອງແບບໃໝ່."

"ດີແລ້ວຊັ້ນ." ສີຣິປ່ຽນໄປເວົ້າເປັນພາສາຝຣັ່ງ. "ໄດ້ຂໍ້ສົມມຸດຖານຫຍັງແດ່ທ່ານໝໍ?"

“ມີເປັນຮ້ອຍຂໍ້ ແຕ່ບໍ່ມີຈັກຂໍ້ທີ່ພໍຈະເຫັນວ່າສົມເຫດສົມຜົນ. ທ່ານໝໍເດລະ?”

“ລອງສັງເກດເບິ່ງນຳກັນກ່ອນດູວ່າ ທຣັນ ກັບຣັອກພາກັນເດີນທາງມາທີ່ນີ້ເນື່ອງຈາກພາລະກິດອັນຮີບດ່ວນ ຈົນຣັອກເອງບໍ່ສາມາດລໍໃຫ້ຮອຍບາດແຜຫາຍເຊົາໄດ້. ສົມມຸດວ່າມັນເປັນເລື່ອງທີ່ສ້າງຄວາມເສຍຫາຍໃຫ້ກັບພວກເຮົາ, ພວກເຮົາກໍເລີຍຟ້າວພາກັນຈັບຕົວຜູ້ແທນ ກ່ອນທີ່ຈະເດີນທາງໄປຮອດຈຸດໝາຍປາຍທາງ. ຈາກນັ້ນພວກເຂົາກໍຖືກນຳມາຂັງໄວ້ຢູ່ໃນດອນຮ່ວມກັບອາດຊະຍາກອນຄົນອື່ນໆ ທັງຖືກທຸບຕີທໍລະມານຈົນຍອມເປີດປາກເຜີຍຄວາມລັບອອກມາ ຈາກນັ້ນກໍເອົາຮ່າງໄປຖ່ວງລົງໃນອ່າງເກັບນ້ຳດ້ວຍອາວຸດຍຸດໂທປະກອນຂອງຈີນບູຮານ.

“ແຕ່ຄົນຂອງພວກເຮົາຕ້ອງການໃຫ້ຄົນຂອງທ່ານຮູ້ວ່າ ພວກເຮົາຈັບພວກເຂົາໄດ້ກໍເລີຍໃຊ້ເຊືອກທີ່ເປື່ອຍງ່າຍ. ພວກເຂົາຮູ້ວ່າ ແນວໃດພວກເຮົາກໍຕ້ອງນຳຫາສິບທີສາມແນ່ນອນ ແລ້ວກໍພົບເປືອກນອກລູກລະເບີດຂອງຈີນ ເມື່ອຄຳນຶງເຖິງຄວາມສຳພັນອັນເຢັນຊາລະຫວ່າງພວກທ່ານກັບຜູ້ນຳມ້າວແລ້ວ ມັນກໍພຽງແຕ່ຈະຍົ້ວະໂທສະພວກທ່ານໃຫ້ໂມໂຫຂຶ້ນຕື່ມ, ເປັນແນວໃດພໍໃຊ້ໄດ້ຢູ່ບໍ?”

“ເບິ່ງຄືວ່າຈະເປັນເຫດຈູງໃຈທີ່ພໍຟັງຂຶ້ນຢູ່ ສຳລັບເຫດການລະຫວ່າງປະເທດ ເຊິ່ງໜ້າຈະມີເຫດຜົນພຽງພໍທີ່ຈະເຮັດໃຫ້ຄວາມສຳພັນຂອງພວກເຮົາແຕກຫັກໄດ້,” ທ່ານໝໍຫາງຽນໃຫ້ຄຳເຫັນ.

“ຫັ້ນແຫຼະ ມັນເປັນແບບສິ່ງທີ່ພວກໂປລິບູໂຣຫົວຮ້ອນຢາກໃຫ້ເກີດຂຶ້ນແບບນັ້ນ.”

“ແຕ່ເບິ່ງນ້ຳສຽງຂອງທ່ານແລ້ວຄືກັບວ່າບໍ່ໝັ້ນໃຈປານໃດ.”

“ກໍບໍ່ຮູ້ແຫຼະ, ຂ້ອຍພຽງຮູ້ສຶກວ່າ ... ຂ້ອຍຮູ້ສຶກວ່າຖ້າມີຫຍັງບາງຢ່າງທີ່ຊັດເຈນທີ່ຂ້ອຍສາມາດຫາຄຳຕອບໄດ້ງ່າຍໆ ກໍບໍ່ເຫັນຊິຈຳເປັນຕ້ອງໃຊ້ຄວາມພະຍາຍາມໃນການປົກປິດຫຼາຍປານນັ້ນ. ບາງທີພວກເຂົາອາດຈະຄິດບໍ່ເຖິງວ່າພວກເຮົາຈະຮູ້ຫຼາຍເລື່ອງລາວຂະໜາດນີ້ ຫາກປ່ອຍໃຫ້ວຽກນີ້ເປັນໜ້າທີ່ຂອງຕຳຫຼວດ ພວກເຂົາກໍຄົງພຽງແຕ່ຂຽນທຸກຢ່າງລົງໃສ່ບົດລາຍງານ ແລ້ວຖືກສົ່ງໄປຫາຄະນະກຳມາທິການໂດຍກົງ. ແຕ່ຖ້າທາງສະຖານທູດຂອງທ່ານບໍ່ໄດ້ຮັບຂ່າວຄາວຫຍັງເລີຍກ່ຽວກັບເຫດການນີ້ ມັນກໍຈະຖືກປົກປິດທັງຖືກປະຕິເສດເປັນແນ່ແທ້.

“ມັນຊ່າງເປັນເລື່ອງບັງເອີນແຕ່ໜ້າອັດສະຈັນແທ້ລະ ທີ່ມີຄົນຈື່ຮອຍສັກນັ້ນໄດ້ ຫຼືຖ້າບໍ່ເຊັ່ນນັ້ນກໍຕ້ອງມີການວາງແຜນຢ່າງເປັນຂັ້ນເປັນຕອນ ມັນຈະບັງເອີນຫຍັງກະດໍ້ທີ່ມີທະຫານຄົນໜຶ່ງບັງເອີນມາຢູ່ບ່ອນນັ້ນ ທີ່ຫາກໍຮູ້ຈັກຮອຍສັກ? ຂ້ອຍຮອດບໍ່ຢາກເຊື່ອເລີຍວ່າ ຝ່າຍພວກເຮົາຈະຕ້ອງລົງທຶນຍາກຊາຫຼາຍແນວປານນັ້ນເພື່ອຕັດຄວາມສຳພັນກັບຫວຽດນາມ.”

“ທ່ານຄິດວ່າພວກເຮົາຄວນຈະເຮັດແນວໃດຕໍ່?” ທ່ານໝໍຫງຽນຖາມ.

“ເບິ່ງຕິ, ຂ້ອຍຕ້ອງໄດ້ເດີນທາງໄປພາກໃຕ້ສອງສາມມື້. ທ່ານຄິດວ່າພໍຈະສາມາດຍືດເວລາການຊຸມນະສູດສົບອອກໄປຢ່າງເປັນທາງການ ຈົນກວ່າຂ້ອຍຈະກັບມາໄດ້ບໍ່?”

“ຂ້ອຍຂຽນໜັງສືຊ້າຢູ່ແລ້ວ.”

“ດີແລ້ວຊັ້ນ. ຂ້ອຍຄິດຮູ້ສຶກດີຂຶ້ນຫຼາຍເຕີບ ຖ້າພວກເຮົາບໍ່ເປີດສາກເຮັດສິ່ງຄາມກັນອີກຄັ້ງຈົນກວ່າພວກເຮົາຈະຮູ້ວ່າມັນເກີດຫຍັງຂຶ້ນ.” ສິຣິເວົ້າ.

“ຂ້ອຍເຫັນດີນຳ.”

9

# ລອບສັງຫານ

ທັງສອງນຳເອົາຮ່າງຂອງຣັອກໄປທີ່ຫ້ອງເກັບສົບໂດຍກົງ ເຊິ່ງສິຣິກໍໄດ້ແນະນຳທີມງານຂອງຕົນໃຫ້ຮູ້ຈັກກັບຣັອກ ແລະຫຽນຫົງ ພ້ອມທັງບອກວ່າ ໃນຊ່ວງທີ່ຕົນເດີນທາງໄປພາກໃຕ້ ທ່ານໝໍຫົງຈະມາເຮັດໜ້າທີ່ຊັນນະສູດສົບຂອງຣັອກ ແລະໃຊ້ຫ້ອງການເປັນບ່ອນເຮັດວຽກ ເຊິ່ງຫຽນຫົງເອງກໍເວົ້າພາສາລາວບໍ່ໄດ້ ສ່ວນຕຸ້ຍແລະກິ່ງກໍເວົ້າພາສາຫຍັງບໍ່ເປັນ ຈຶ່ງເຫັນວ່າພວກເຂົາອາດບໍ່ໄດ້ໂອ້ລົມຫຍັງກັນເລີຍ ແຕ່ສິຣິກໍຮູ້ດີວ່າທຸກຄົນຈະເຂົ້າກັນໄດ້.

ຍ້ອນໄດ້ຮັບການຊ່ວຍເຫຼືອແບບບໍ່ຮູ້ສຶກຕົວຂອງໝໍເກດແກ້ວ ພວກເຂົາຈຶ່ງສາມາດຕໍ່ແທ່ນໄມ້ໃຜ່ຂາຕັ້ງສັ້ນໆ ຈາກວັດສະດຸທີ່ຫຼົງເຫຼືອມາແຕ່ການກໍ່ສ້າງຫ້ອງການ ຂົນຂວາຍທັງສອງຈຶ່ງສາມາດເລື່ອນສົບຂອງຣັອກເຂົ້າໄປໃນຕູ້ແຊ່ແຂງ ທັງວາງສົບໄວ້ຢ່າງລະມັດລະວັງຢູ່ເທິງຮ່າງຂອງທຣັນ ຄ້າຍກັບວ່າເຂົາກຳລັງນອນຢູ່ເທິງຕຽງສອງຊັ້ນເຕ້ຍໆ.

ສິຣິຍ່າງໄປຈັດໂຕະຂອງຕົນເພື່ອໃຫ້ຫຽນຫົງໄດ້ມີບ່ອນເຮັດວຽກສະດວກຂຶ້ນພ້ອມພົບກັບຊອງຈົດໝາຍປິດແໜ້ນຂະໜາດໃຫຍ່ໜຶ່ງອັນ ທັງສະຫຼັກຊື່ຂອງເຂົາຕິດຈ່າໜ້າຊອງວາງອີງໄວ້ກັບບ່ອນໃສ່ສໍດຳຮູບຫົວກະໂຫຼກ ເຂົາຄິດວ່າຄົງແມ່ນແຫງເປັນຜູ້ສົ່ງມາ ສະນັ້ນເຂົາຈຶ່ງຕັດສິນໃຈບໍ່ເປີດເບິ່ງມັນ. ຕອນນີ້ເຂົາມີຄວາມຮູ້ສຶກມ່ວນກັບໜ້າວຽກທີ່ກຳລັງເຮັດຢູ່ ແລະຄວາມຈິງແລ້ວກໍບໍ່ຢາກຖືກໄລ່ອອກດອກ ແຕ່ສິ່ງທີ່ເຂົາໄດ້ເວົ້າກັບຜູ້ພິພາກສານັ້ນກໍເປັນພຽງຄຳຂູ່ຊື່ໆ.

ແຕ່ພາຍຫຼັງທ່ານໝໍຄົນຫວຽດນາມກັບໄປແລ້ວ, ຕຸ້ຍ ແລະກິ່ງກໍພາກັນອອກໄປຫົດນ້ຳໃຫ້ຕົ້ນໝາກຫຸ່ງ ແລະໝາກມ່ວງທີ່ປູກໃນເຂດໂຮງໝໍ ສ່ວນສິຣິກໍອົດໃຈບໍ່ໄຫວລາວໂຍບຕົວນັ່ງລົງເທິງຕັ່ງ ພ້ອມໃຊ້ມືຈີກຊອງຈົດໝາຍສີນ້ຳຕານຊົງທຳມະດາຊອງນັ້ນ, ຂ້າງໃນຂອງຊອງຈົດໝາຍມີຕົວໜັງສືທີ່ຖືກຕີພິມສັ້ນໆ ເຊິ່ງມັນກໍຖືກສົ່ງມາຈາກພະແນກຍຸຕິທຳດັ່ງທີ່ສິຣິຄິດໄວ້ຕອນຕົ້ນອີ່ຫຼີ. ລາວສົງໄສວ່າຖ້າລາວຖືກລົງໂທດອີກຄັ້ງທາງຄະນະກຳມາທິການຈະສັ່ງໃຫ້ລາວໄດ້ພັກຜ່ອນກິນບຳນານຢ່າງສະຫງົບສຸກ ຫຼືບໍ່.

ສິຣິເຫຼືອບຕາຕໍ່າລົງໄປທີ່ລາຍເຊັນ ລາວດີໃຈເປັນຢ່າງຍິ່ງເມື່ອເຫັນວ່າເປັນຊື່ຂອງ

ສະໜຽນມະນິວອນ. ນາງໄດ້ອະທິບາຍໃນຈົດໝາຍວ່າ ສີຣິມີບ່ອນນັ່ງໃນຖ້ຽວບິນທຳອິດຈາກສະໜາມບິນວັດໄຕໄປຄຳມ່ວນຕອນຫົກໂມງເຊົ້າມື້ອື່ນນີ້ ພ້ອມຍັງເພີ່ມຄຳວ່າ "ຖ້າສະດວກ" ລົງໃສ່ທາງຕອນທ້າຍ ເຊິ່ງອາດຈະເປັນຄຳສັ່ງຂອງແທງໃຫ້ຕື່ມໃສ່ກໍເປັນໄດ້ ລາວຍັງຈະໄດ້ພົບກັບຮ້ອຍເອກຄຳສິງຢູ່ຄຳມ່ວນ. ເມື່ອລ້ວງມືເຂົ້າໄປໃນຊອງຈົດໝາຍ ສີຣິກໍພົບເອກະສານສຳລັບການເດີນທາງກັບທະນະບັດໃບໃຫຍ່ລວມທັງໝົດສາມພັນກີບ.

ຮອຍຍິ້ມອັນເຕັມໄປດ້ວຍຄວາມເພິ່ງພໍໃຈໄດ້ກະຈາຍໄປທົ່ວໃບໜ້າຂອງສີຣິ ບໍ່ຕ່າງຫຍັງກັບນ້ຳມັນໝູແຕກສ່າຢູ່ເທິງໝໍ້ຂາງຮ້ອນໆ ເຂົາຢືນຂຶ້ນຢູ່ທີ່ໂຕະເຮັດວຽກ ທັງເຕັ້ນທັງດີດເບົາໆ ຮອບໆ ຕັ່ງອີ້.

"ບອກແດ່ດູວ່ານາງຊື່ຫຍັງ?"

ສີຣິເງີຍໜ້າຂຶ້ນເພື່ອຈະເບິ່ງວ່າເຈົ້າຂອງສຽງແມ່ນໃຜ ແຕ່ແລ້ວກໍພົບກັບສາລະວັດຕຳຫຼວດໂພສີ ເຊິ່ງຍັງຢືນອີງຂອບປະຕູທັງສົ່ງຮອຍຍິ້ມປະດັບໄວ້ເທິງສີໜ້າ.

"ຄລໍເດັດຕ໌ ... ຄລໍເດັດຕ໌ ຄອລແບ."

"ຟັງຄືແມ່ນຊື່ຕ່າງປະເທດ."

"ຮູ້ຊັ້ນບໍ? ສັນຊາດຕະຍານໃນຄວາມເປັນນັກສືບຄືຊິແລ່ນເຂົ້າສະໝອງລະໃດຫັ້ນຖ້າເປັນຄົນທຳມະດາຄົງຈະບໍ່ສັງເກດເຫັນຫຍັງແບບນີ້ດອກ." ໂພສີກ້າວຂາຍ່າງເຂົ້າມາທີ່ໂຕະເຮັດວຽກຂອງສີຣິ ແລ້ວທັງສອງກໍຈັບມືທັກທາຍກັນຢ່າງອົບອຸ່ນ. "ຊີວິດຂອງເຈົ້າໜ້າທີ່ຕຳຫຼວດໃນຕົວເມືອງໂດຍປາສາຈາກການກໍ່ອາດຊະຍາກຳເປັນແນວໃດບໍ?"

"ກໍມີປະຊຸມ, ມີງານສຳມະນາທີ່ໜ້າສົນໃຈຫຼາຍຢ່າງ ໃນຄວາມຈິງແລ້ວ ກໍມີເລື່ອງໜຶ່ງທີ່ເຮັດໃຫ້ຂ້ອຍຫຍຸ້ງຍາກນຳ ກໍແມ່ນເລື່ອງຂອງທ່ານນາງນິດນ້ອຍເພື່ອນຂອງທ່ານນັ້ນແຫຼະ."

ສີຣິຍົກນິ້ວມືຂຶ້ນມາແຕະໃສ່ຮີມສົບຂອງຕົນ ພ້ອມສົ່ງສັນຍານຜ່ານສີໜ້າໂດຍບູ້ຍສົບໄປທາງປະຕູປ່ອງຢ້ຽມທີ່ເປີດຢູ່. "ຂ້ອຍກຳລັງຄິດວ່າຊິອອກໄປຍ່າງຫຼິ້ນຢູ່ນອກ. ເຈົ້າຢາກໄປນຳຂ້ອຍບໍ?"

"ຍິນດີເປັນຢ່າງຍິ່ງ."

ສີຣິຈັດເກັບເຄື່ອງທີ່ຈຳເປັນຕ້ອງໃຊ້ໃນມື້ຕໍ່ໄປ ພ້ອມທັງປິດປະຕູຫ້ອງເກັບສົບ ທັງຍ່າງຮຽງຂ້າງກັບໂພສີລົງໄປທາງແມ່ນ້ຳ.

ຕໍ່ໜ້າໂຮງແຮມລ້ານຊ້າງ ມີສະຖານທີ່ແຫ່ງໜຶ່ງທີ່ພໍຈະເອີ້ນໄດ້ວ່າເປັນບາກາງແຈ້ງຊົ່ວຄາວເຊິ່ງຊຸດໂຊມລົງຫຼາຍ ຜູ້ຄົນຍັງບໍ່ມີເງິນພໍສຳລັບການກິນດື່ມ ຫຼືຮັບປະທານອາຫານ, ຮ້ານໄມ້ໄຜ່ນ້ອຍໆ ແຫ່ງນີ້ຈະເລີ່ມມີລູກຄ້າເຂົ້າກໍຕໍ່ເມື່ອຮອດຍາມຕາເວັນຕົກ

ດິນເທົ່ານັ້ນ ຈາກນັ້ນພວກຄົນເມືອງໂດຍສະເພາະກໍແມ່ນບັນດາທີ່ປຶກສາລັດຖະບານ, "ຜູ້ຊ່ຽວຊານ" ແລະສະມາຊິກພັກທີ່ພາກັນມາເພີດເພີນໃນຍາມອາທິດອັດສະດົງ ສ່ວນຄົນທ້ອງຖິ່ນກໍຈະອອກມາພັກຜ່ອນຢ່ອນໃຈເລັກໜ້ອຍພຽງເດືອນລະຄັ້ງ ແລະນັ່ງດື່ມເຄື່ອງດື່ມທີ່ປັດສະຈາກທາດເຫຼົ້າປະມານໜຶ່ງຊົ່ວໂມງ.

ເນື່ອງຈາກບໍ່ມີກຳແພງກັ້ນ ຫຼືກົດເກນໃດໆ, ລູກຄ້າຈິ່ງສາມາດຍ້າຍໂຕະອັນໂຍກເຍກຄອນແຄມໄປໃຊ້ໄດ້ທຸກທີ່ເພື່ອຈະໄດ້ຊົມຕາເວັນຕົກດິນຕາມໃຈຕົນເອງ. ໂພສີກັບສີຣິພາກັນຫອບອູ້ມເອົາຕັ່ງຂອງໃຜລາວລົງໄປເກືອບຈະຮອດແຄມນໍ້າ ໂດຍມີແມ່ຍິງເຈົ້າຂອງຮ້ານບາແກ່ລາກໂຕະຕາມຫຼັງໄປດ້ວຍທ່າທີບໍ່ພໍໃຈປານໃດ. ແຕ່ແລ້ວສີໜ້າຂອງນາງກໍສົດຊື່ນຂຶ້ນເມື່ອທັງສອງພາກັນສັ່ງເຫຼົ້າແສງທິບຂອງໄທເຄິ່ງແກ້ວກັບໄຂ່ນົກກະທາ ເພາະເຖິງແນວໃດສີຣິກໍມີເງິນໃນກະເປົາຮອດສາມພັນກີບ.

"ເຈົ້າຄືຊິບໍ່ຄິດຈະຢາກເວົ້າເລື່ອງຂອງທ່ານນາງນິດນ້ອຍອີກດອກເນາະ" ໃນທີ່ສຸດສີຣິກໍເວົ້າອອກມາ. "ແຕ່ຢູ່ໂຮງໝໍມີຄົນນັບໄກ່ມາຕັ້ງຫ້ອງການຢູ່ດ້ານຫຼັງໂຮງເກັບສົບຂອງພວກເຮົາ ຂ້ອຍຮູ້ສຶກວ່າທຸກສິ່ງຢ່າງທີ່ພວກເຮົາໂອ້ລົມກັນ ມັນຈະຕ້ອງຖືກນຳໄປເກັບບັນທຶກໄວ້ຢູ່ບ່ອນໃດບ່ອນໜຶ່ງແທ້ແຫຼະ ວ່າແນວໃດລະ? ເຈົ້າຢາກຈະລືມເລື່ອງທ່ານນາງນິດນ້ອຍບໍ່ແມ່ນຫວາ?"

"ແມ່ນແຫຼະ. ທ່ານໝັ້ນໃຈແນວໃດວ່າພວກກົບຂຽດແຖວນີ້ຈະໄວ້ໃຈໄດ້?"

ສີຣິຫົວຂຶ້ນ. "ຂ້ອຍບໍ່ຄິດວ່າມັນຈະເປັນແບບນີ້ດອກ ຂ້ອຍຮູ້ວ່າມັນບໍ່ມີລະບົບການດັກຟັງ ແລະສາຍລັບທີ່ຍອດຢ້ຽມທາງໃດອີກ. ຂ້ອຍວ່າທັງໝົດນັ້ນແມ່ນຢູ່ໃນຄວາມຄິດຂອງພວກເຮົາເອງ, ແຕ່ຄວາມຄິດນີ້ແຫຼະສຳຄັນສຸດ."

ແມ່ຍິງເຈົ້າຂອງຮ້ານບາ ສາວບາດຕີນກັບລົງມາທາງຝັ່ງນໍ້າພ້ອມຖາດໃບໜຶ່ງ ເຊິ່ງມີແກ້ວເຫຼົ້າ, ນໍ້າດື່ມ ທັງໄຂ່ນົກກະທາຕັ້ງວາງຢູ່ເບື້ອງເທິງ ແລະທີ່ໜ້າອັດສະຈັນກໍແມ່ນນໍ້າແຂງ ທັງສອງຈ້ອງມອງເບິ່ງນໍ້າແຂງຄ້າຍກັບວ່າມັນມາຈາກດາວດວງອື່ນພໍປານນັ້ນ.

"ແມ່ໄປເອົານໍ້າແຂງພວກນີ້ມາແຕ່ໃສ?"

ນາງຜ່ອນສຽງລົງຄ່ອຍໆ ເພື່ອວ່າມີຕຳຫຼວດຢູ່ແຖວນັ້ນ.

"ຂ້ອຍມີໝູ່ເຮັດວຽກໃນເຮືອນຄົວຢູ່ພຸ້ນ." ນາງປ່ອຍຮີມສົບໃຫ້ໂຜ່ອອກໄປທາງໜ້າຊີ້ກັບໂຮງແຮມຊື່ດັງລະດັບແຖວໜ້າຂອງປະເທດແຕ່ຊໍ້າພັດບໍ່ມີຫຍັງປະດັບເອ້ຍ້ອງຢູ່ໜ້າຕຶກພໍຈະເປັນສິ່ງດຶງດູດໃຈໄດ້ ເມື່ອພິຈາລະນາເບິ່ງພາບລັກຂອງມັນແລ້ວຈາກການຈັດອັນດັບໃນກຸ່ມຂອງໂຮງແຮມນານາຊາດ, ໂຮງແຮມແຫ່ງນີ້ບໍ່ໜ້າຈະໄດ້ດາວຈັກດວງ ແຕ່ລ້ານຊ້າງກໍເປັນໂຮງແຮມທີ່ເຊີດໜ້າຊູຕາຂອງນະຄອນຫຼວງ ເຊິ່ງມີລາຄາສູງພໍຄວນ ແລະພະນັກງານກໍໜ້າຈະໄດ້ຮັບການຍົກລະດັບມາຈາກລາ ຊາຕະຫຼົກ

ລຳເລື່ອງ ແຕ່ຢ່າງໜ້ອຍມັນກໍຍັງເປັນບ່ອນທີ່ຄົນຕ່າງປະເທດສາມາດພັກໄດ້.

"ພວກເຂົາຊິເຮັດສະເຕັກໃຫ້ພວກເຮົາໄດ້ຢູ່ບໍລະ?" ໂພສີຖາມ.

"ຖ້າເຈົ້າກິນດິບໄດ້ອາດຈະຕົກໃຈຈົນຊ໊ອກ ຖ້າຮູ້ວ່າຢູ່ໃນເຮືອນຄົວອັນຫຍຸ້ງເຫຍີງ ຫັ້ນມີຫຍັງແດ່. ເປັນຕາສົງໄສອີ່ຫຼີວ່າແມ່ນໃຜຈະມີເງິນຊື້ຂອງພວກນັ້ນ ພວກເຂົາບອກວ່າມີເຫຼົ້າວາຍນຳອີກ. ເຫຼົ້າວາຍພຸ້ນໃດ!"

"ເປັນຕາອາຍແທນ."

"ຖ້າຢາກໄດ້ຫຍັງກໍຮ້ອງບອກເອົາເດີ້." ແລ້ວນາງເຈົ້າຂອງຮ້ານກໍຍ່າງຕະເປະຕະເປາະໄປທາງຕາຝັ່ງ.

ທັງສອງເຫຍັ້ນເຄື່ອງດື່ມໃຫ້ກັນພ້ອມຕື່ມນ້ຳແຂງໃສ່ຂະນະທີ່ມັນຍັງບໍ່ທັນເປື່ອຍ.

"ແລ້ວເລື່ອງທ່ານນາງນິດນ້ອຍທີ່ຢາກເວົ້າຫັ້ນເປັນແນວໃດ?"

"ມັນຍັງເປັນເລື່ອງຍາກຢູ່ ທ່ານໝໍພິຊິວາດພາບອອກເນາະວ່າຂ້ອຍຈະໄປຍ່າງເລາະ ທັງສອບຖາມຜູ້ຄົນໄດ້ແນວໃດ. ແຕ່ມາຟັງຈາກສຽງເລົ່າລື ແລະຄຳເວົ້າທີ່ພວກຊາວບ້ານຊຳກັນ ແລະຄົງຈະມີແຕ່ເທວະດາເທົ່ານັ້ນແຫຼະທີ່ຮູ້ວ່າ ສຽງພວກນັ້ນຄ່ອຍໄຫຼເຂົ້າຫູບໍ່ມີມື້ຢຸດຢ່ອນ ເຊິ່ງທຸກສຽງກໍລ້ວນແຕ່ລືກັນວ່າສະຫາຍຂອງທ່ານມີເມຍນ້ອຍ."

"ເອີອັນນັ້ນມັນນິດໄສສັນດານຂອງຜູ້ຊາຍຢູ່ແລ້ວ."

"ປາກົດວ່າຍິງຜູ້ນັ້ນເປັນຊ່າງຕັດຜົມຢູ່ຮ້ານເສີມຄວາມງາມຢູ່ດົງໝ້ຽງຊື່ໄໝ, ມາແຕ່ຊຳເໜືອ ເຊິ່ງຫາກໍຍ້າຍລົງມາຢູ່ພີ້ຕອນຕົ້ນປີນີ້ລະ."

"ເຈົ້າຄິດວ່ານາງຕິດຕາມເຂົາມາແມ່ນບໍ?"

"ຄືຊິແມ່ນແນວນັ້ນ. ນາງຍັງເປັນສາວຢູ່ໃດ໋ ອາຍຸກໍປະມານຊາວເອັດປີນີ້ແຫຼະ ແຕ່ຕາມທີ່ພວກຜູ້ສາວໃນຮ້ານຕັດຜົມບອກວ່ານາງ ..."

"ເຈົ້າໄປຮ້ານຕັດຜົມມາແລ້ວຫວາ?"

"ຂ້ອຍຢາກຕັດກຽນຜົມໃຫ້ສັ້ນເຂົ້າ ທັງນວດຜ່ອນຄາຍນຳ ຕອນຂ້ອຍໄປຮ້ານ ນາງບໍ່ໄດ້ມາວຽກ ພວກຍິງສາວຢູ່ຮ້ານພາກັນຄິດວ່າໄໝເປັນຄົນທະເຍີທະຍານສູງ ນາງບໍ່ໄດ້ຕັ້ງອົກຕັ້ງໃຈຝຶກແອບເລື່ອງການຕັດຜົມແບບຈິງຈັງແຕ່ຢ່າງໃດ ຟັງຈາກຄົນອື່ນໆເຂົາເວົ້າກັນ ນາງບອກວ່າຈະເປັນຊ່າງຕັດຜົມອີກບໍ່ດົນ."

"ກຳລັງວາງແຜນຈະຍົກຕຳແໜ່ງຕົນເອງ."

"ທຳນອງນັ້ນລະ."

"ເຈົ້າຄິດວ່າເຫດຜົນຊ່ຳນີ້ ຈະເຮັດໃຫ້ສະຫາຍຄຳພິຄິດຈະກຳຈັດເມຍຂອງຕົນເອງຍ້ອນບໍ?"

"ເປັນຫຍັງຄືວ່າຊັ້ນ?"

“ເປັນຫຍັງຊື້ຫວາ? ກໍເຂົາເປັນຝ່າຍມີແຕ່ໄດ້ກັບໄດ້ທັງສອງທາງຫັ້ນຕິ. ມີເມຍເປັນຕົວເປັນຕົນໄວ້ຄວງອອກງານແບບເປັນທາງການ ພ້ອມມີຊ່າງຕັດຜົມປະຈຳຕົວໄວ້ ...”

“... ໄວ້ວິເຄາະເນື້ອໃນແບບເຊີງເລິກຂອງ ດາສ ທຄາພິຕາລ.”

“ແນ່ນອນ. ມັນບໍ່ເກີດປະໂຫຍດຫຍັງເລີຍສຳລັບເຂົາແຕ່ມັນເກີດປະໂຫຍດກັບນາງຫຼາຍກວ່າ.”

“ອາ ທ່ານນີ້ຊ່າງເຈົ້າເລ່ອີ່ຫຼີ ທ່ານໝໍສີຣິ ແລ້ວນາງເຂົ້າໄປເອົາຂວດຢາໄດ້ແນວໃດລະ?”

ສີຣິທອດສາຍຕາຜ່ານໄປທາງແມ່ນ້ຳ ທັງວາດພາບວ່າຕົນເອງກຳລັງສູບກອກຢາຢູ່. “ຖ້ານາງບໍ່ໄດ້ລົງມືເອງເດລະ?”

“ໝາຍຄວາມວ່າແນວໃດ?”

“ອາດຈະແມ່ນຄົນຮັກຂອງນາງ ຂ້ອຍໝາຍເຖິງຄົນຮັກຕົວຈິງ ຫຼືຖ້ານາງແມ່ນສະມາຊິກກຸ່ມເຄື່ອນໄຫວທີ່ຮຽກຮ້ອງອະນາທິປະໄຕເດລະ? ການເປີດທາງໃຫ້ເມຍນ້ອຍໄດ້ເຂົ້າໄປຢູ່ໃນບ້ານຂອງສະຫາຍ ມັນອາດຈະເປັນປະໂຫຍດແກ່ສ່ວນລວມກໍເປັນໄດ້. ໂລກນີ້ມັນບໍ່ໄດ້ໃຫຍ່ໂຕໂອຫັງພໍພິລຶກ ເຊິ່ງພວກເຂົາພຽງແຕ່ໃຫ້ຄົນໃດຄົນໜຶ່ງທີ່ເຫັນວ່າເປັນຄົນໃກ້ຊິດແດ່ໄປຂໍຢືມຂວດຢານຳທ່ານນາງນິດນ້ອຍ ແລ້ວກໍລັກເອົາຢາໄຊຢາໄນດ໌ເຂົ້າໄປປົນໃສ່ກັບຢາໃນຂວດນັ້ນ.”

“ແມ່ນຄົນໃນສູນກາງສະຫະພັນແມ່ຍິງຫັ້ນບໍ?”

“ຫຼື ກໍແມ່ນຄົນໃນງານລ້ຽງຕ້ອນຮັບ ນາງຍິ່ງມັກດື່ມເບຍຊ້ຳ.”

“ມັນຍັງບໍ່ເຂົ້າທ່າປານໃດ. ຖ້າຄຳບໍ່ມີສ່ວນກ່ຽວຂ້ອງແລ້ວເປັນຫຍັງ ...”

“ຢາກໄດ້ຫຍັງເພີ່ມອີກບໍຜູ້ບ່າວ?” ແມ່ຍິງເຈົ້າຂອງບາຮ້ອງດອດມາແຕ່ທາງຮ້ານ. ທັງສອງສົ່ງສັນຍານບອກໃຫ້ຮູ້ວ່າຍັງບໍ່ທັນຕ້ອງການຫຍັງ.

“ເປັນຫຍັງລາວຄືວ່າອອກຮ້ອນອອກຮົນຈົນຕ້ອງຟ້າວປິດຄະດີຄາຕະກຳ? ແລະເປັນຫຍັງລາວຈິ່ງຕ້ອງນຳສະເໜີບົດລາຍງານທີ່ບໍ່ມີມູນຄວາມຈິງ?”

“ເຂົາເຮັດແນວນັ້ນຫວາ?”

“ຂ້ອຍເຫັນແຟ້ມຂໍ້ມູນຊຸມນັ້ນແລ້ວ, ລາຍງານຂອງທ່ານກໍແມ່ນເອກະສານຊັນນະສູດສົບຢ່າງເປັນທາງການ.”

“ແຕ່ມັນຍັງຂຽນບໍ່ທັນແລ້ວ ຍັງບໍ່ທັນເຊັນເທື່ອຊ້ຳ.”

“ແຕ່ມັນເຊັນແລ້ວລະເດ.”

“ຫ່າພາກມັນເອີຍ. ແລ້ວພວກເຮົາຊິຕັ້ງຂໍ້ຫາເຂົາໄດ້ບໍ່? ເລື່ອງການປອມແປງລາຍເຊັນໃນເອກະສານທາງການ?”

"ພວກເຮົາບໍ່ຮູ້ວ່າເປັນສີມືຂອງເຂົາແທ້ບໍ."

"ຂ້ອຍໝັ້ນໃຈວ່າແມ່ນ ເຂົາຫັ້ນແຫຼະລັກເອົາເອກະສານໃນຫ້ອງການຂ້ອຍ ແບບຕໍ່ໜ້າຕໍ່ຕາເລີຍແຫຼະ."

"ທ່ານເວົ້າແນວໜຶ່ງ ແຕ່ເຂົາຊໍ້າພັດເວົ້າແນວໜຶ່ງ."

ສີຣິຍົກເຫຼົ້າຂຶ້ນດື່ມເຮືອກໃຫຍ່ ເກືອບນໍ້າແຂງຄາຄໍ ໂພສີຟ້າວຕົບຫຼັງລາວ.

"ຂອບໃຈ. ແລ້ວພວກເຮົາຊິເຮັດແນວໃດບັດນີ້?"

"ສິ່ງທີ່ພວກເຮົາຈະເຮັດຕໍ່ໄປກໍຄືງຽບໄວ້ກ່ອນ ຂ້ອຍຈະລອງຜູກມິດກັບຊ່າງເຮັດຜົມ ແລ້ວກໍຄ່ອຍໆ ສືບຖາມເລື່ອງຂອງຄໍາ. ພວກເຮົາຍັງບໍ່ມີຫຼັກຖານພຽງພໍທີ່ຈະດໍາເນີນການຮ້ອງຟ້ອງຢ່າງເປັນທາງການ ເຖິງແມ່ນຈະຮູ້ວ່າແມ່ນໃຜເປັນຄົນສົ່ງເອກະສານຊຸມນັ້ນໄປກໍຕາມ."

"ຫຼິ້ນສົກກະປົກຄັກແທ້ແບບນີ້. ຂ້ອຍໂລດຄິດວ່າພວກເຮົາຍຶດອໍານາດກໍເພື່ອຈະໄດ້ກວາດລ້າງທໍາຄວາມສະອາດສັງຄົມໃຫ້ດູດີຂຶ້ນ ແຕ່ອັນນີ້ເປັນພຽງແຕ່ປ່ຽນມືຄົນທຸດຈະລິດຊື່ໆ."

"ຢ່າຟ້າວຄິດລົບເທາະນາ. ມັນກໍເປັນພຽງຄະດີໜຶ່ງທີ່ຄົນອື່ນບໍ່ໄດ້ກ່ຽວຂ້ອງນໍາ ທ່ານເອງກໍຮູ້ດີວ່າຫຼາຍຢ່າງມັນເລີ່ມດີຂຶ້ນແລ້ວເດ, ສະພາບການຂອງປະເທດຕອນນີ້ກໍດີຂຶ້ນຫຼາຍ ເໝາະກັບການເຕີບໃຫຍ່ຂອງພວກເດັກນ້ອຍ."

"ນັ້ນແມ່ນຄໍາເວົ້າຂອງຜູ້ທີ່ໄດ້ຮັບການສຶກສາອົບຮົມຄືນໃໝ່ແມ່ນບໍ?"

"ບໍ່ແມ່ນດອກ ເປັນຄໍາເວົ້າຂ້ອຍເອງນີ້ແຫຼະ. ນັ້ນຄືສິ່ງທີ່ຂ້ອຍເຊື່ອ ເພາະປະເທດລາວກໍາລັງໄປໄດ້ດີ."

ທັງສອງແນມເບິ່ງດວງຕາເວັນທີ່ກໍາລັງເລື່ອນລັບລົງສູ່ພື້ນດິນບ່ອນໃດບ່ອນໜຶ່ງທາງຝັ່ງໄທ, ທ້ອງຟ້າສີບົວເລີ່ມກາຍເປັນສີມ່ວງ ກ່ອນຈະກາຍເປັນສີມ່ວງຈາງ. ເທິງກ້ອນຫີນແຄມແມ່ນໍ້າມີຊາຍໜຸ່ມຜົມສັ້ນ ແລະຍິງສາວຜົມຍາວຕາມລະບຽບຄູ່ໜຶ່ງນັ່ງຢູ່ດ້ວຍໄລຍະຫ່າງກັນໜຶ່ງແມັດ ເຊິ່ງມີຂໍ້ຫ້າມບໍ່ໃຫ້ທັງສອງຄົນຈັບມືກັນ.

ເຫຼົ້າໝົດກ້ຽງແລ້ວ ສ່ວນໂພສີກໍປະຕິເສດບໍ່ຍອມໃຫ້ສີຣິຍ່າງກັບພ້ອມຕົນເພື່ອໄປເອົາລົດຈັກທີ່ຈອດໄວ້ຢູ່ໂຮງໝໍ ສະຫາຍຜູ້ເຮັດໜ້າທີ່ປ້ອງກັນອາດຊະຍາກໍາທັງສອງຈັບມືອໍາລາກັນຢູ່ຕໍ່ໜ້າໂຮງແຮມ ສີຣິຍັງຄົງຈັບມືຂອງອີກຝ່າຍໄວ້ ແໜ້ນພາຍຫຼັງຈັບມືກັນແລ້ວຮຽບຮ້ອຍ.

"ຂອບໃຈທີ່ຍອມເຮັດວຽກນີ້ ຂ້ອຍຮູ້ວ່າເຈົ້າເອງກໍສ່ຽງ."

"ຂ້ອຍຫວາ? ບໍ່ດອກ. ຂ້ອຍເປັນຄອມມູຍນິດທີ່ເກີດລຸນຫຼັງ ຈິ່ງບໍ່ມີໃຜຈັບຕາເບິ່ງຂ້ອຍອີກ. ແຕ່ສະຫາຍຂອງທ່ານພຸ້ນແຫຼະຕ້ອງລະມັດລະວັງໄວ້. ມີໃຜທີ່ຮູ້ເລື່ອງນີ້ແດ່?"

"ມີແຕ່ອາຈານອູ້ມຢູ່ລີເຊຄົນດຽວ ນາງເປັນຜູ້ທົດລອງທຸກຢ່າງ."

"ນັ້ນແຫຼະ ທ່ານຄວນບອກໃຫ້ນາງລະມັດລະວັງແດ່ ບໍ່ຄວນໄປບອກໃຫ້ໃຜຮູ້ນຳເດັດຂາດ."

"ນາງຮູ້ດີຢູ່ແລ້ວ."

"ດີລະຊັ້ນ ແລ້ວຂ້ອຍຈະຕິດຕໍ່ກັບມາໃໝ່."

ສີຣິຍ່າງກັບຄືນໄປຕາມຖະໜົນທີ່ໄຮ້ຜູ້ຄົນ ທັງທີ່ຫາກໍ ໗ ໂມງແລງເທົ່ານັ້ນ ແຕ່ເຂດຖະໜົນເສດຖາທິລາດ ຊໍ້າພັດມິດງຽບຄືກັບປ່າຊ້າ ມີພຽງລົດຖີບທີ່ປັດສະຈາກຕາໄຟຄັນດຽວແລ່ນຜ່ານເຂົ້າໄປໃນລະຫວ່າງທາງກັບເມືອເຮືອນ, ຄວັນໄຟຍັງຄົງລອຍລ່ອງຂຶ້ນຈາກກອງຂີ້ເຫຍື້ອຂະໜາດນ້ອຍທີ່ຖືກເຜົາໄໝ້ຢູ່ຕາມມຸມຖະໜົນ. ໝູໂຕໜຶ່ງໂຜ່ອອກມາຈາກທໍ່ລະບາຍນໍ້າ ພ້ອມໄລ່ລ່າແມວຈ່ອຍຜອມຜ່ານເຂົ້າທາງປະຕູວັດອິງຕື້.

ເມື່ອກ່ອນຖະໜົນເຫຼົ່ານີ້ບໍ່ເຄີຍມີເວລາໄດ້ຜ່ອນຄາຍຫຼັບໄຫຼເລີຍ ບັນດາຮ້ານບັນເທີງເຊັ່ນໄນຄລັບ ແລະບາ ຈະຖືກປິດກໍຕໍ່ເມື່ອຄົນຂີ້ເມົາຜູ້ສຸດທ້າຍຍ່າງອອກມາລົ້ມຟຸບລົ້ມຟາບຢູ່ແຄມຖະໜົນ. ຕາມທາງຄົນຍ່າງເຕັມແຕ່ພວກໂສເພນີແລະຄົນຕິດຢາ. ສີຣິເຄີຍໄດ້ຍິນກ່ຽວກັບຊີວິດອັນສຸດຂົ້ວອື່ນໆ ມັນຄືຂົ້ວຊີວິດທີ່ກົງກັນຂ້າມກັບສິ່ງທີ່ລາວເປັນຢູ່ໃນປັດຈຸບັນ ລາວຄິດວ່າຕ້ອງມີຫຍັງຈັກຢ່າງທີ່ປອດໄພ ແລະຄວາມສະໜຸກສະໜານລະຫວ່າງສອງຂົ້ວນີ້.

ໝາເລີ່ມສິ່ງສຽງເຫົ່າຫອນ ແມ່ນແຕ່ກ່ອນທີ່ສີຣິຈະໄປຮອດຮ່ອມເຂົ້າບ້ານບ່ອນທີ່ຕົນພັກຊໍ້າອີກ. ຫຼັງຈາກຊ່ວງເວລາຄໍ່າຄືນອັນງຽບສະຫງັດຂອງເມືອງວຽງຈັນ ລາວກໍຮູ້ສຶກວ່າຕົນເອງແມ່ນຕົ້ນເຫດຂອງການທຳລາຍຄວາມງຽບສະຫງົບ. ໜ້າທາງອັນເປັນຂຸລຸຂະລະທີ່ຍັງບໍ່ທັນມີການປູຢາງ ໄດ້ເປັນເຫດເຮັດໃຫ້ສີຣິເຊສະດຸດເຖິງສອງສາມເທື່ອເຊິ່ງເຫຼົ່ານັ້ນກໍມີສ່ວນຕໍ່ຄວາມສົມດູນໃນການຊົງຕົວຂອງເຂົາ. ລາວຕ້ອງຄວບຄຸມຕົນເອງໃຫ້ໄດ້ກ່ອນທີ່ນາງວົງທັນລັກສັງເກດຢູ່ເບື້ອງຫຼັງຂອງຜ້າກັ້ງຈະແນມເຫັນກ່ອນ. ເຂົາລ້ຽວຕົວເຂົ້າໄປທາງຍ່າງຢູ່ໜ້າບ້ານບ່ອນທີ່ຊາລູບນອນໝອບຢູ່ທັງສິ່ງສຽງຄາງຮື່ມໆຕໍ່ໜ້າສີຣິ.

ຜ້າກັ້ງໄຫວຕິງຍຸດໆ.

"ລາຕີສະຫວັດນາງວົງ."

ປາກົດວ່າບໍ່ມີສັນຍານຕອບຮັບ. ສີຣິກົ້ມຕົວລົງໃສ່ໝາຊາລູບ ຖ້າລາວໃຊ້ຄວາມພະຍາຍາມແດ່ເລັກໜ້ອຍ ບາງທີອາດຈະກາຍເປັນເພື່ອນທີ່ດີກັບໝາຂີ້ເຮື້ອນໂຕນີ້ໄດ້ ບາງທີອາດມີຂ່າວລອຍໄປເຂົ້າຫູພວກໝາແຖວນີ້ວ່າ ທີ່ຈິງແລ້ວເຂົາກໍມີແນວດິບແນວດີຕິດຕົວນຳຢູ່.

ລາວຍ່າງເຂົ້າຫາຊາລູບໂດຍກົງແທນທີ່ຈະຍ່າງເວັ້ນຈາກມັນຄືກັບເຄີຍເຮັດເປັນປະຈຳ ທັງສົ່ງສຽງເບົາໆ ປອບປະໂລມເພື່ອຫວັງວ່າຈະສະຫງົບຈິດໃຈຂອງມັນ. ໝາພັນປະສົມຮູ້ສຶກສັບສົນ ມັນຈິ່ງຖອຍຫຼັງໄປຕາມບາດຕີນທີ່ສີຣິຍ່າງໄປ ເບິ່ງມັນຄືຈະຮູ້ສຶກຢ້ານ ແຕ່ກໍຍັງສົ່ງສຽງຂູ່. ການເຕັ້ນລຳແຫ່ງໂກລະຫວ່າງຄົນກັບໝາຍັງດຳເນີນໄປເລື້ອຍໆ ຈົນຊາລູບຖອຍໄປຕຳກັບໜ້າປະຕູ.

ທັງທີ່ບໍ່ຢາກສູນເສຍນິ້ວມືໄປ ແຕ່ສີຣິກໍທຳມືເຮັດຄືວ່າກຳລັງຈະໃຫ້ອາຫານ ແລ້ວກົ້ມຕົວລົງພ້ອມຈໍ່ມືໄປຊີ້ໜ້າຂອງຊາລູບ ທັນໃດນັ້ນໝາກໍເຫົ່າຂຶ້ນໂວ້ງໆ ຕໍ່ມາກໍມີສຽງດັງເປີຍະ! ສອງຄັ້ງຄືກັບສຽງໄມ້ແສ້ ສີຣິເຫຼືອບມອງອ້ອມຮອບຕົວເອງ ແຕ່ກໍຍັງບໍ່ໝັ້ນໃຈວ່າສຽງນັ້ນດັງມາແຕ່ໃສ ສ່ວນໝາກໍສວຍໂອກາດຕອນສີຣິກຳລັງບ່ຽງເບນຄວາມສົນໃຈໄປທາງອື່ນ ເພື່ອແລ່ນໜີໄປລີ້ຢູ່ໝານຜັກ.

ສີຣິຍັງຄົງຢືນຢູ່ ທັງແນມຍ້ອນກັບໄປທາງຊອຍເຂົ້າເຮືອນອັນມືດມິດ ເຊິ່ງມີແສງທີ່ເລັດລອດມາແຕ່ຕະກຽງນ້ຳມັນໜ່ວຍດຽວຈາກປະຕູປ່ອງຢ້ຽມຊັ້ນເທິງ ລາວແນມບໍ່ເຫັນຫຍັງເລີຍນອກຈາກເງົາມືດ ມີບາງຢ່າງເຮັດໃຫ້ລາວຮູ້ສຶກເສຍຂວັນເມື່ອໄດ້ຍິນສຽງນັ້ນ ແຕ່ລາວເອງກໍເຮັດຫຍັງບໍ່ໄດ້ ແລະແລ້ວລາວກໍຍ່າງເຂົ້າໄປທາງໃນເຮືອນ ພ້ອມປິດປະຕູລັອກໄວ້.

ພໍແຕ່ຕັ້ງໂມງປຸກໃສ່ສີ່ໂມງເຄິ່ງ ສີຣິກໍອາບນ້ຳ ແລະເຂົ້ານອນແຕ່ຫົວຄ່ຳ ລາວເຊືອບຫຼັບຕັ້ງແຕ່ກົ່ນອັບຂອງໝອນຍັດງິ້ວໜ່ວຍນັ້ນຍັງລອຍໄປບໍ່ທັນຮອດຮູດັງຊ້ຳ.

**********

ຫຣັນ, ຫຣັນ ກັບຣັອກ ພາກັນຍ່າງຮຽງຂ້າງສີຣິໄປຕາມເສັ້ນທາງອັນສັບສົນວຸ້ນວາຍໃນຕົວເມືອງ ມັນຄືກັບຢູ່ປະເທດແຖບຕາເວັນຕົກທີ່ຜູ້ຄົນປາກເວົ້າເປັນພາສາອັງກິດ, ມີທັງລົດລາງພາຫານະ ພ້ອມຝູງຊົນຄົນໃຈຮ້ອນ ທັງເປັນຊ່ວງຕອນແລງແດ່ ແສງໄຟນີອອນອ້ອມຮອບບໍລິເວນນັ້ນກໍເປັ່ງປະກາຍ ທັງສົ່ງແສງເຫຼື້ອມລະຍິບລະຍັບສາດສ່ອງເປັນຕົວໜັງສືທີ່ສີຣິອ່ານບໍ່ອອກ.

ຊາຍຫວຽດນາມທັງສາມພາກັນເກາະເປັນກຸ່ມອ້ອມຮອບຕົວເຂົາບໍ່ຕ່າງຫຍັງກັບພະນັກງານຮັກສາຄວາມປອດໄພຫຸ້ມລ້ອມທ່ານປະທານາທິບໍດີຜູ້ບໍ່ບໍລິສຸດ. ເມື່ອໃດກໍຕາມ ຫາກມີໃຜຈັກຄົນຈາກທ້ອງຖະໜົນທີ່ພະຍາຍາມຈະເຂົ້າຫາສີຣິ ໜຶ່ງໃນສາມກໍຈະເປັນຜູ້ກ້າວອອກມາເພື່ອຂັດຂວາງທັງຜັກດັນຄົນຜູ້ນັ້ນອອກໄປແບບບໍ່ໄວ້ໜ້າໃຜທັງທີ່ຫຼາຍຄົນມີຮ່າງຄີງສູງໃຫຍ່ຈົກຄຶກຕັ້ງເປັນສອງເທົ່າຖ້າທຽບກັບຊາຍຫວຽດນາມຮ່າງນ້ອຍ ແຕ່ກໍຍັງຍອມຈຳນົນໃຫ້ແກ່ຜູ້ຄຸ້ມກັນທັງສາມຕະຫຼອດ.

ບາງຄັ້ງສີຣິກໍຈື່ຄົນທີ່ເດີນຜ່ານໄປມາ ພ້ອມທັງພະຍາຍາມຮ້ອງທັກທາຍພວກເຂົາ ເຊິ່ງມີທັງເພື່ອນທີ່ມາຈາກທາງພາກເໜືອ, ເພື່ອນຮ່ວມງານ ແມ່ນແຕ່ຕຸ້ຍກັບກິ່ງກໍພາກັນຍ່າງໄປຕາມຖະໜົນສາຍນັ້ນ. ແຕ່ສີຣິຕ້ອງຮູ້ສຶກຂາຍໜ້າເພາະທຸກຄັ້ງທີ່ໝູ່ເພື່ອນເຂົ້າມາທັກທາຍ ຊາຍຫວຽດນາມທັງສາມກໍຈະເປັນຜູ້ຂັບໄລ່ພວກເຂົາໃຫ້ອອກໄປ ທັງຫຣັນກັບຫຣັນແລະຣັອກເບິ່ງຄືກັບວ່າພວກເຂົາຍັງມີຊີວິດຢູ່ ທັງເບິ່ງຄືວ່າພວກເຂົາມີຄວາມສຸກດີ ແລະມ່ວນຊື່ນເພີດເພີນກັບໜ້າວຽກອັນບໍ່ສຸພາບນັ້ນ ແຕ່ພວກເຂົາບໍ່ປາກບໍ່ເວົ້າຫຍັງໄດ້ແຕ່ຄອຍປົກປ້ອງສີຣິ ທັງຄຸມໃຫ້ເຂົາຝ້າວຍ່າງໄປຕາມເສັ້ນທາງສາຍນັ້ນ.

ເດັກນ້ອຍຄົນໜຶ່ງໃນຊຸດເຄື່ອງແບບທີ່ລີດຈົນນຽນຂອງໂຮງຮຽນປະຖົມສຶກສາແຫ່ງລັດເຂົ້າມາຢືນຕໍ່ໜ້າພວກເຂົາ ເດັກຜູ້ນັ້ນຢືນດ້ວຍທ່າທີຕຶກປະມ່າ ເຂົາຖືສໍດຳກ້ານໜຶ່ງໄວ້ໃນມື ສ່ວນອີກຂ້າງມີເຈ້ຍແຜ່ນໜຶ່ງ ເຖິງແມ່ນຈະຖືກກຸ່ມຜູ້ຕິດຕາມສີຣິລຸມຢຽບແບບງ່າຍໆ ແຕ່ເຂົາກໍຍັງຢືນຢູ່ບ່ອນນັ້ນຢ່າງບໍ່ເກງກົວໃຜ ພ້ອມຍື່ນເຈ້ຍແຜ່ນນັ້ນອອກໄປ ເພາະເຂົາຕ້ອງການລາຍເຊັນຈາກທ່ານໝໍຊັນນະສູດສົບ ຈົນຊາຍທັງສີ່ຈຳຕ້ອງຢຸດ.

ທ່ານໝໍເອື້ອມມືອອກໄປທາງໜ້າ ສ່ວນນິ້ວມືກໍທໍ່ເຂົ້າຫາກັນຄືກັບກຳເຂົ້າໜົມໄວ້ພ້ອມກົ້ມຕົວລົງ ເດັກຊາຍຄົນນັ້ນຍິ້ມຕອບເຂົາ ຈົນເຜີຍໃຫ້ເຫັນແຂ້ວແດງໆ ທີ່ເຕັມແຕ່ນ້ຳໝາກອອກມາ. ເດັກຄົນນັ້ນກ້າວຂາມາທາງໜ້າໜຶ່ງກ້າວ ແຕ່ກ່ອນທີ່ສີຣິທັນໄດ້ຢື້ມືໄປຈັບເອົາສໍດຳຈາກມືເຂົາ ຊາຍຫວຽດນາມກໍກະແທກເຂົ້າໄປ ພ້ອມທຸບຕີເດັກຊາຍຄົນນັ້ນຢ່າງບໍ່ປານີ, ພວກນັ້ນທັງເຕະທັງກະທືບເຂົາແບບບໍ່ຢັ້ງບາດຕີນ. ສີຣິຕົກໃຈກັບເຫດການທີ່ເກີດຂຶ້ນ ທັງພະຍາຍາມດຶງເອົາຊາຍຫວຽດນາມອອກຈາກເດັກຄົນນັ້ນ ແຕ່ກໍບໍ່ໄດ້ຜົນຍ້ອນພວກເຂົາມີກຳລັງແຮງເໜືອກວ່າສີຣິ.

ເມື່ອແນມຜ່ານຮູລູກປືນທີ່ຊອດໃສ່ໜ້າເອິກຂອງຣັອກ ສີຣິແນມເຫັນໃບໜ້າຂອງເດັກຊາຍຜູ້ນັ້ນ, ເຂົາກຳລັງຈະຕາຍ ແຕ່ລັກສະນະຂອງເດັກຄົນນັ້ນກໍກຳລັງປ່ຽນໄປເຊັ່ນກັນ ໃບໜ້າອັນໄຮ້ດຽງສາຂອງເດັກຄ່ອຍຫຼຸດລອດອອກ ແລ້ວເຜີຍໃຫ້ເຫັນຮູບຮອຍໃບໜ້າຂອງຊາຍຊະລາຄົນໜຶ່ງ. ຜູ້ຄຸ້ມກັນທັງສາມຖອຍຕົວອອກມາ ແລະຊາຍຊະລາຜູ້ນັ້ນມາບັດນີ້ຊໍ້າພັດຢູ່ໃນເຄື່ອງແບບຂອງກອງທັບປະຊາຊົນລາວ ເຊິ່ງກຳລັງນອນຕາຍຢູ່ກອງເລືອດ ທາງຂ້າງເຂົາແມ່ນເຂັມສີດຢາທີ່ແຕກກະຈາຍ ເຊິ່ງສີຣິເຂົ້າໃຈຜິດທັງເບິ່ງວ່າເຂັມສີດຢານັ້ນແມ່ນສໍດຳ. ນ້ຳກົດທີ່ບັນຈຸຢູ່ໃນກ່ອງຟົດປອດໆ ທັງເດືອດຟູຢູ່ຕາມທາງຄົນຍ່າງ ຝູງຊົນທີ່ເດີນທາງຜ່ານໄປມາກ່ອນໜ້ານີ້ເລີ່ມໝາຕາເພີ່ມຂຶ້ນ ເຊິ່ງໃນມືແຕ່ລະຄົນລ້ວນແຕ່ຖືເຂັມສີດຢາທີ່ມີກົດໄຫຼຍ້ອຍເປັນຢົດໆ.

**********

ສິຣິສະເດີດຕື່ນຂຶ້ນມາຈາກຄວາມຝັນ ທັນໃດນັ້ນລາວກໍຮູ້ສຶກຢ້ານກົວໃນຄວາມງຽບສະຫງັດ ທັງຄວາມມືດມິດທີ່ຢູ່ຮອບຕົວຂຶ້ນມາທັນທີ ຄືນນັ້ນບໍ່ມີແສງສາດສ່ອງຈາກດວງຈັນພໍໜ້ອຍ ເຂົາຮູ້ສຶກວ່າມີຄົນຢູ່ໃນຫ້ອງ ເຖິງແມ່ນເຂົາຈະແນມບໍ່ເຫັນຫຍັງເລີຍກໍຕາມ ເພາະເຂົາສາມາດສຳຜັດໄດ້ເຖິງການເຄື່ອນໄຫວຂອງຜູ້ຄົນເຫຼົ່ານັ້ນ.

"ແມ່ນໃຜຫັ້ນ?"

ບໍ່ມີສຽງຕອບ. ສິຣິດຶງຫາງມຸ້ງໄປດ້ານໜຶ່ງ ແລ້ວກັ້ນໃຈແນມອອກໄປຜ່ານຄວາມມືດ ທັງພະຍາຍາມແຍກແຍະພວກເງົາ ແລະສຽງການເຄື່ອນໄຫວທີ່ຄຸ້ນເຄີຍພາຍໃນຫ້ອງ ແຕ່ເຂົາກໍຍັງແນມບໍ່ເຫັນຫຍັງເລີຍແມ່ນແຕ່ຂອບປະຕູປ່ອງຢ້ຽມ.

ສຽງປະສານຂອງໝາທີ່ເຫົ່າຫອນຄ່ອຍໆ ດັງຂຶ້ນເທື່ອລະໜ້ອຍຈາກບ່ອນຢູ່ທີ່ຫ່າງອອກໄປ ສຽງຫອນເຫຼົ່ານັ້ນດັງ ແລະລາກສຽງແຫຼມຄືກຳລັງເຈັບປວດສູງ ແຕ່ແລ້ວກໍມີສຽງລົມກັນດັງຂຶ້ນທ່າມກາງສຽງເຫົ່າຫອນຂອງໝາ ເຊິ່ງສິຣິຮູ້ໄດ້ທັນທີວ່າພວກເຂົາເປັນໃຜ ໃນນັ້ນມີສາມສຽງ ທັງເປັນສຽງປາກພາສາຫວຽດນາມ ຄວາມຈິງແລ້ວຈະເອີ້ນວ່າການທ່ອງແບບຊ້ຳໄປຊ້ຳມາຫຼາຍກວ່າ 'ໝູປ່າດຳຍັງຢູ່ນີ້. ໝູປ່າດຳຍັງຢູ່ນີ້.'"

**********

ແລ້ວສິຣິກໍຕື່ນຂຶ້ນມາອີກເທື່ອໜຶ່ງ ຄັ້ງນີ້ກໍແມ່ນຍ້ອນສຽງໂມງປຸກໄດ້ກະຊາກໃຫ້ເຂົາຕ້ອງຮູ້ເມື່ອຄືງ ມັນຍັງເຊົ້າມືດຢູ່ແຕ່ກໍພໍມີແສງອັນພຸມພູ່ຈາກທຳມະຊາດໄດ້ເລັດລອດເຂົ້າມາຜ່ານໜ້າປະຕູປ່ອງຢ້ຽມແດ່ແລ້ວເລັກໜ້ອຍ. ໜ້າປັດເຮືອງແສງຂອງເຂັມໂມງໄດ້ເປັນຕົວຢືນຢັນວ່າມັນແມ່ນສີ່ໂມງເຄິ່ງແທ້. ລາວຮູ້ ສຶກວ່າຕົນເອງຍັງບໍ່ໄດ້ນອນຈັກເມັດເລີຍ ສ່ວນມຸ້ງກໍບໍ່ໄດ້ຄຸມເອົາຮ່າງຄີງຂອງເຂົາໄວ້ ສະນັ້ນພວກແມງໄມ້ທັງຫຼາຍກໍພາກັນຫຸ້ມແຫ້ນກິນເລືອດເຂົາຢ່າງແຊບນົວ.

ເຂົາແຕ່ງຕົວງຸ່ມງ່າມແບບຊ້າໆ ກ່ອນຄວ້າເອົາກະເປົາມາຖືໄວ້ ແລ້ວຍ່າງລົງໄປຊັ້ນລຸ່ມດ້ວຍຄວາມມຶນງົງ ໂດຍອາໄສແສງຈາກໄຟສາຍເປັນຕົວຊ່ວຍນຳທາງ ສ່ວນປະຕູໜ້າບ້ານກໍເປີດແງ້ມໄວ້ ເຂົາຈິ່ງສາດລຳແສງອອກມາຕາມທາງ ເຊິ່ງຊາລູບກໍບໍ່ໄດ້ຢູ່ເຮັດໜ້າທີ່ຂອງຕົນໃນມື້ນັ້ນ ແມ່ນແຕ່ກະໂຕເຮືອນເອງກໍເບິ່ງຄືວ່າບໍ່ໄດ້ສົນໃຈກັບການອອກຈາກເຮືອນຂອງເຂົາແມ່ນແຕ່ໜ້ອຍດຽວ. ສິຣິປິດປະຕູ ແລ້ວໃຊ້ແສງໄຟສາຍສຳຫຼວດເບິ່ງ, ປະຕູບານນັ້ນໜາປະມານສິບສອງຊັງຕີແມັດ ມັນອາດຈະເຄີຍເປັນປະຕູທີ່ສວຍງາມ ຕັ້ງແຕ່ຄາວເຮືອນຫຼັງນີ້ຍັງໄດ້ຮັບການເອົາໃຈໃສ່ຮັກສາ ໂດຍໝັ່ນຢອດນ້ຳມັນໃສ່ບານພັບ ພ້ອມທານ້ຳມັນຂັດເງົາໃຫ້ງາມເຫຼື້ອມ ແຕ່ຕອນນີ້ມັນຊ້ຳຜັດເປັນຝືດໆທັງບິດບ້ຽວ.

ເຂົາຮູ້ສຶກໜາວເຜືອບບາດໜຶ່ງຂະນະທີ່ແສງໄຟສາດສ່ອງໃສ່ຮູລູກປືນສອງຮູທີ່ຢູ່ສູງລະດັບພຽງໜ້າເອິກ. ບໍ່ຕ້ອງສົງໄສເລີຍວ່າມັນແມ່ນຮູຫຍັງ ເພາະແນວໃດລູກປືນກໍບໍ່ສາມາດທະລຸຜ່ານໄມ້ສັກອັນໜາຕຶບແຜ່ນນີ້ໄດ້ ຫາກສິຣິບໍ່ກົ້ມຕົວລົງຕອນນັ້ນ ລູກປືນທັງສອງຄົງເຂົ້າໄປຝັງໄວ້ໃນຮ່າງກາຍຂອງເຂົາແນ່ນອນ.

10

# ຂີ່ແຢັກໄປຄຳມ່ວນ

ເຮືອບິນແຢັກ-໔໐ ຍົກຕົວໂຍກເຍກຂຶ້ນຈາກໜ້າດິນດ້ວຍຄວາມລຳບາກຍາກຊາ ບໍ່ຕ່າງຫຍັງກັບຫ່ານທີ່ຖືກລ້ຽງເກືອໃຫ້ຕຸ້ຍພີດີງາມ, ຍົນລຳນີ້ບໍ່ມີຄວາມງາມຫຼືເຫຼືອພໍຈະມີບ່ອນໃດເປັນຕາເບິ່ງເລີຍ ບໍ່ຕ່າງຫຍັງກັບນັກບິນຊາວໂຊວຽດສອງຄົນທີ່ກຳລັງນັ່ງຢູ່ໃນຫ້ອງຄວບຄຸມເຄື່ອງ. ສີຣິຄິດບໍ່ອອກເລີຍວ່າມີຂໍ້ຕົກລົງອັນໃດທີ່ເຮັດໃຫ້ເຮືອບິນອັນເຊື້ອຊ້າງຸ່ມງ່າມ ພ້ອມທັງພະນັກງານປະຈຳເຮືອບິນລຳນີ້ຕ້ອງມາຄອຍຮັບໃຊ້ບໍລິການບຸກຄົນສຳຄັນຂອງລາວຕະຫຼອດຊາວສີ່ຊົ່ວໂມງ ເຊິ່ງເລີ່ມເຮັດໜ້າທີ່ນີ້ຕັ້ງດົນນານມາແລ້ວ ເຂົາຍັງຄິດບໍ່ອອກວ່າ ແມ່ນນັກບິນທັງສອງກະທຳຄວາມຜິດຫຍັງມາກ່ອນຈິ່ງຕ້ອງຖືກລົງໂທດໜັກເຊັ່ນນີ້ ແຕ່ເຄື່ອງບິນທີ່ຖືກສົ່ງມາຈາກຄວາມໄມຕີຈິດຂອງສະຫະພາບໂຊວຽດລຳນີ້ ກໍໄດ້ນຳພາບັນດາທ່ານນາຍພົນພ້ອມລັດຖະມົນຕີເດີນທາງໄປມາທົ່ວປະເທດໄດ້ເຖິງຫົກເດືອນແລ້ວ.

ສີຣິເປັນຜູ້ໂດຍສານພຽງຄົນດຽວ. ໃນຂະນະທີ່ຂຶ້ນໄປເທິງເຮືອບິນທີ່ກຳລັງສົ່ງສຽງຄາງຮື່ມໆ ເປັນຕາອຶດອັດໃຈນັ້ນ, ຜູ້ຊ່ວຍນັກບິນໄດ້ຊີ້ບອກໃຫ້ເຂົາໄປນັ່ງຢູ່ຕັ່ງມ້າ ພ້ອມຮັດສາຍນິລະໄພ ເປັນອັນວ່າການບໍລິການເທິງເຮືອບິນໄດ້ສິ້ນສຸດລົງພຽງເທົ່ານັ້ນ ແຕ່ສີຣິກໍຮູ້ສຶກດີໃຈທີ່ມີແຕ່ລາວຄົນດຽວຢູ່ໃນຫັ້ນ, ເຂົາຕ້ອງການເວລາເພື່ອຂົບຄິດ, ເຂົາເຄີຍຢູ່ໃນສະໜາມຮົບມາກ່ອນ ທັງເຄີຍຖືກຍິງຫຼາຍຄັ້ງຈົນນັບບໍ່ຖ້ວນ ແຕ່ການລອບຂ້ານັ້ນຊໍ້າພັດແຕກຕ່າງອອກໄປຢ່າງສິ້ນເຊີງ, ມັນເປັນເລື່ອງສ່ວນຕົວ ທັງຫຼົ້ນສົກກະປົກໂພດ ຍ້ອນແນວນັ້ນຈິ່ງເຮັດໃຫ້ເຂົາຍິ່ງໂມໂຫຫຼາຍກວ່າຈະຢ້ານກົວຊໍ້າອີກ.

ໃນລະຫວ່າງທາງໄປສະໜາມບິນ ສີຣິໄດ້ແວ່ຢຸດຢູ່ສອງບ່ອນ ເຊິ່ງເຂົາໄດ້ປຸກຫາງຽນຫົງໃຫ້ຕື່ນຂຶ້ນ ພ້ອມເຕືອນໃຫ້ເຂົາລະວັງຕົວເພື່ອຄວາມປອດໄພຕົນເອງ ທັງແນະນຳໃຫ້ຫາງຽນຂຽນທຸກຢ່າງທີ່ເຂົາຮູ້ ພ້ອມສອດໄວ້ໃນຊອງຈົດໝາຍແລ້ວໄປຝາກໄວ້ກັບສະຖານທູດ ເພື່ອຈະໄດ້ເປີດອ່ານໃນກໍລະນີມີ "ອຸບັດຕິເຫດ" ເກີດຂຶ້ນເທົ່ານັ້ນ.

ຈາກນັ້ນເຂົາກໍມາຢຸດຢູ່ເຮືອນຂອງຕຸ້ຍ ເຊິ່ງນາງຕື່ນນອນແລ້ວຮຽບຮ້ອຍ ສ່ວນແມ່ຂອງນາງກໍຍັງຢູ່ໃນອາການຊຸດໂຊມຄືເກົ່າ ທັງສອງຈິ່ງເກືອບບໍ່ໄດ້ພາກັນຫຼັບນອນເລີຍ.

ນີ້ແມ່ນຊ່ວງເວລາທີ່ບໍ່ຄ່ອຍຈະມີຂ່າວຮ້າຍຫຍັງອີກແລ້ວ, ສີຣິບໍ່ໄດ້ບອກຕຸ້ຍເລື່ອງທີ່ຕົນຖືກລອບຍິງ ແຕ່ເຂົາໄດ້ບອກໃຫ້ນາງເຮັດເປັນບໍ່ຮູ້ບໍ່ສົນ ທັງປະຕິເສດບໍ່ຮູ້ບໍ່ເຫັນຫຍັງໝົດ ຖ້າມີຄົນມາສອບຖາມບໍ່ວ່າຄະດີໃດກໍຕາມທີ່ກ່ຽວຂ້ອງກັບຄົນຫວຽດນາມ. ນາງເປັນພະນັກງານທຳຄວາມສະອາດ ສ່ວນກິ່ງເປັນກຳມະກອນລາຍວັນ ທັງສອງຈິ່ງບໍ່ຮູ້ຈັກອີ່ໂໜ່ອີ່ເໜ່ຫຍັງ. ພໍຟັງຈາກນ້ຳສຽງຂອງເຂົາ, ຕຸ້ຍຈິ່ງພໍເຂົ້າໃຈດ້ວຍຕົນເອງວ່າສີຣິຈິງຈັງຫຼາຍພຽງໃດ.

**********

ເຮືອບິນລຳນັ້ນສົ່ງສຽງຄາງຮື່ມໆ ທັງມຸ່ງໜ້າໄປທາງທິດໃຕ້ ໂດຍມີແມ່ນ້ຳຂອງຢູ່ເບື້ອງຂວາ ສ່ວນຕາເວັນທີ່ກຳລັງພຸ່ງພົ້ນຂຶ້ນໃນຍາມເຊົ້າແມ່ນຢູ່ກ້ຳເບື້ອງຊ້າຍໂດຍມີແສງສາດສ່ອງເປັນປະກາຍເຂົ້າມາຜ່ານທາງໜ້າປະຕູປ່ອງຢ້ຽມນ້ອຍໆ. ສີຣິຮູ້ສຶກຄືກັບວ່າມີຕົ່ເປັນຈຳນວນຫຼາຍໂຕພາກັນບິນວີ່ໆ ຢູ່ເທິງຫົວຂອງເຂົາ ມັນບໍ່ແມ່ນຍ້ອນແຮງສັ່ນສະເທືອນຂອງຕົວເຄື່ອງບິນພຽງຢ່າງດຽວເທົ່ານັ້ນ, ຄວາມຄິດຫຼາກຫຼາຍໄດ້ຕົບຕີກັນຢູ່ໃນບ່ອນນັ້ນ ເຊິ່ງມີທັງຄວາມເປັນຈິງ ແລະຈິນຕະນາການໄດ້ເລີ່ມສັບສົນປົນເປກັນຈົນວຸ້ນວາຍໄປໝົດ.

ສີຣິພະຍາຍາມຕີຄວາມຝັນໃນຄືນມື້ກ່ອນ ເຊິ່ງເຫັນໄດ້ແຈ້ງວ່າ ຊາຍຫວຽດນາມທັງສາມໄດ້ພະຍາຍາມປົກປ້ອງເຂົາ ບາງທີພວກເຂົາພຽງແຕ່ຢາກເຕືອນລາວບໍ່ໃຫ້ໄວ້ໃຈໃຜທັງນັ້ນ ແລ້ວເດັກນ້ອຍຜູ້ຊາຍທີ່ມີຮອຍຍິ້ມແຂ້ວແດງໆ ຄືເລືອດນັ້ນແມ່ນໃຜກັນແທ້? ຄວາມຈິງທີ່ສີຣິໄດ້ຄົ້ນພົບໄດ້ກາຍເປັນຕົວອັນຕະລາຍພໍທີ່ຈະຂ້າຈະຝັນກັນພຸ້ນບໍ? ຫຼືໃນຄວາມເປັນຈິງແລ້ວ ຄົນພວກນັ້ນພຽງແຕ່ສົງໄສວ່າເຂົາຈະຄົ້ນພົບຄວາມຈິງບາງຢ່າງຊື່ໆ? ແລະແລ້ວ "ຄົນພວກນັ້ນ" ແມ່ນໃຜກັນແທ້?

ເຫັນໄດ້ຊັດເຈນວ່າຄຳສັນນິຖານແມ່ນໃກ້ຄຽງກັບຄຳຕອບພໍສົມຄວນ ທັງໃກ້ຄຽງພໍທີ່ຈະເຮັດໃຫ້ໂສດປະສາດຂອງຝ່າຍໃດຝ່າຍໜຶ່ງເກີດຫວັ່ນໄຫວຂຶ້ນມາ. ເຂົາກໍພຽງແຕ່ຫວັງວ່າຈະສາມາດເຮັດວຽກທັງໝົດໃຫ້ລຸລ່ວງໄດ້ດີ ກ່ອນທີ່ຄົນພວກນັ້ນຈະຈັດການຊີວິດເຂົາ ເພາະມັນຈະກາຍເປັນເລື່ອງຜິດຫວັງທີ່ສຸດທີ່ຈະໄປໃຊ້ຊີວິດໃນໂລກຂອງດວງວິນຍານຫຼັງຄວາມຕາຍທັງທີ່ຍັງບໍ່ທັນໄດ້ໄຂປິດສະໜາລັບຊຸມນັ້ນ.

ເຮືອບິນແຢັກກະເດັ້ງຕຶກຕັກໄປຕາມຮັນເວຍ໌ຊົ່ວຄາວຂອງສາຍການບິນແອອາເມລິກາເຊິ່ງຕັ້ງຢູ່ຄຳມ່ວນຄ້າຍກັບວ່າລືມໃສ່ລໍ້ກິ້ງຢູ່ກ້ອງຕີນຂອງເຮືອບິນ. ມັນພົ່ນຝຸ່ນຜົງໄງ່ກຸ້ມທົບກ່ອນຢຸດຈິກບ່ອນສິ້ນສຸດຂອງຮັນເວຍ໌. ຜູ້ຊ່ວຍນັກບິນ ຢ້ອນຄືນມາເພື່ອເປີດປະຕູແລະຍູ້ສີຣິອອກໄປ ພວກເຂົາບໍ່ໄດ້ແວ່ຈອດຢູ່ທີ່ນີ້ ເພາະເຮືອບິນລຳນີ້ກຳລັງເດີນທາງໄປ

ຮັບທ່ານນາຍົກລັດຖະມົນຕີ ພ້ອມຄະນະຜູ້ແທນຄິວບາທີ່ປາກເຊ.

ສິຣິແລ່ນປົບອອກຈາກຣັນເວຍ໌ ເພື່ອຫຼີກລ່ຽງບໍ່ໃຫ້ໃບພັດທີ່ກຳລັງໝູນປິ່ນຄວ້າງໆ ດ້ວຍຄວາມໄວຂອງເຮືອບິນແຢັກຕັດຫົວຂາດອອກເປັນປ່ຽງ ກ່ອນຢືນແນມເບິ່ງເຮືອບິນລຳນັ້ນຄ່ອຍພາຕົວມັນເອງທະຍານຂຶ້ນທ້ອງຟ້າໃນຍາມເຊົ້າ ເມື່ອສຽງຂອງເຮືອບິນງຽບຫາຍໄປ ກໍບໍ່ມີສຽງອື່ນໃດມາແທນທີ່ ສິຣິຍັງຢືນຢູ່ທີ່ປາຍລານດິນອັນຍາວຢຽດແບບຊື່ຕົງສອງຮ້ອຍແມັດພຽງລຳພັງຄົນດຽວ ທ່າມກາງການຫຸ້ມລ້ອມຂອງປ່າໄມ້ອັນຂຽວກະຈີ.

ສິ່ງດຽວທີ່ເຮັດໃຫ້ເຂົາຮູ້ສຶກສະບາຍຈິດສະບາຍໃຈຈາກສະຖານະການສະເພາະໜ້ານັ້ນກໍຄື ບ່ອນນີ້ແມ່ນຄຳມ່ວນ ເຊິ່ງເປັນຖິ່ນທີ່ເຂົາກຳເນີດທັງອາໄສຢູ່ໃນຊ່ວງສິບປີທຳອິດຂອງຊີວິດ ເພາະນັບແຕ່ອອກຈາກບ້ານໄປ ເຂົາກໍບໍ່ເຄີຍໄດ້ກັບມາທີ່ນີ້ອີກເລີຍ ແລະຕອນນີ້ເຂົາກໍບໍ່ເຫັນຫຍັງພໍຈະຮື້ຟື້ນຄວາມຊົງຈຳໃນອະດີດໃຫ້ກັບຄືນມາ ສ່ວນປ່າໄມ້ກໍຍັງຄົງຄວາມມີຊີວິດຊີວາບໍ່ຕ່າງຫຍັງກັບເຂດອື່ນໆ.

ຊາວນາທີຕໍ່ມາ ສຽງຄວນຄາງຂອງລົດຍົນ ຄືກັບກຳລັງຮ້ອງຮ່ຳຫາໃນແບບຈັງຫວະເກາະທີ່ຖືກຕ້ອງກໍໄດ້ດັງກ້ອງເຂົ້າສູ່ໂສດປະສາດຫູຂອງສິຣິ, ສຽງນັ້ນປາກົດວ່າຊັດເຈນທັງຫຍັບໃກ້ເຂົ້າມາມໍ່ຂຶ້ນ ສິຣິຍ່າງອອກຈາກກ້ອງຮົ່ມໄມ້ໄປຢຸດຢູ່ກາງລານບິນ ແລະແລ້ວລົດບັນທຸກທະຫານຈີນອັນເກົ່າໝອງຄັນໜຶ່ງກໍແລ່ນອອກມາຈາກປ່າໄມ້ທີ່ຢູ່ປາຍຣັນເວຍ໌ ພ້ອມທັງຢຸດຢູ່ບ່ອນນັ້ນ. ສິຣິຢືນຢູ່ອີກຟາກໜຶ່ງຂອງລານບິນ ສ່ວນລົດບັນທຸກກໍຈອດຢູ່ບ່ອນນັ້ນຄືກັບມືປືນສອງຝ່າຍທີ່ກຳລັງປະເມີນທ່າທາງຂອງກັນແລະກັນ.

ເມື່ອເຫັນວ່າແນວໃດສິຣິກໍບໍ່ຍອມຍ້າຍບາດຍ່າງເຂົ້າໄປຫາພວກຕົນ ລົດບັນທຸກຄັນນັ້ນຈິ່ງຂັບພຸ່ງຜ່ານລານບິນເຂົ້າມາຢ່າງວ່ອງໄວ ກ່ອນຈະຢຸດຈຶກຢູ່ຕໍ່ໜ້າຂອງສິຣິປ່ອຍໃຫ້ຂີ້ຝຸ່ນໄງ່ກຸ້ມຖວ້າມຕົວເຂົາ. ທະຫານສອງຄົນກະໂດດລົງມາຈາກລົດ ພ້ອມຢືນກົ່ງຄຳນັບ.

"ທ່ານໝໍສິຣິແມ່ນບໍ?" ເບິ່ງຈາກສະພາບແວດລ້ອມອ້ອມຂ້າງແລ້ວ ເຂົາບໍ່ອາດຈະແມ່ນຄົນອື່ນແນ່ນອນ.

"ຮ້ອຍເອກຄຳສິງແມ່ນບໍ?"

"ຂ້າພະເຈົ້າຢູ່ພີ້." ເຈົ້າຂອງສຽງແມ່ນອີກຄົນໜຶ່ງເຊິ່ງນຸ່ງເຄື່ອງແບບທີ່ບໍ່ມີເຄື່ອງໝາຍຢືນຢູ່ທາງຫຼັງ. "ຍິນດີເປັນຢ່າງຍິ່ງທີ່ທ່ານໝໍມາໄວເຕີບ ຖ້າຊ້າກວ່ານີ້ພຽງມື້ດຽວບັນດາສິບທັງຫຼາຍຄົງຈະພາກັນລຸກມາຢ່າງໂຍ້ງເຍ້ງແທ້ລະ." ມັນເປັນຄຳເວົ້າຢອກຫຼິ້ນ ແຕ່ພາບຂອງທ່ານນາງນິດນ້ອຍກໍໄດ້ປາກົດຂຶ້ນໃນຫົວຂອງສິຣິທັນທີ.

"ແມ່ນໃດເນາະ ຄົນຕາຍມັກເຮັດແບບນັ້ນແຫຼະ."

ຂະນະກຳລັງນັ່ງຢູ່ລົດບັນທຸກໃນລະຫວ່າງການເດີນທາງໄປຖານທີ່ຕັ້ງຂອງໂຄງການ, ຮ້ອຍເອກຄຳສິງກໍໄດ້ພະຍາຍາມທຳການສະຫຼຸບເຫດການທີ່ເກີດຂຶ້ນຢູ່ໃນປ່າໃຫ້ສີຣິຟັງ ເຂົາອະທິບາຍວ່າ ໂຄງການທີ່ດຳເນີນຢູ່ນີ້ເປັນໂຄງການຂອງກອງທັບ ເຊິ່ງເປັນໂຄງການພັດທະນາຂັ້ນທົດລອງ ເພື່ອຟື້ນຟູເຂດທີ່ຢູ່ອາໄສຂອງຊາວເຜົ່າມົ້ງເຊິ່ງເຄີຍຖືກທຳລາຍຈາກສົງຄາມເປັນເວລານານຫຼາຍປີ. ໃນຂະນະດຽວກັນນັ້ນ, ທາງກອງທັບກໍຕ້ອງການໃຫ້ຊາວເຜົ່າມົ້ງຢຸດຕິການປູກຝິ່ນເຊິ່ງເປັນພືດເສດຖະກິດສຳຄັນຂອງພວກເຂົານຳອີກ.

ເຂົາບໍ່ລືມໃຈທີ່ຈະບອກເລີຍວ່າ ຊາວເຜົ່າມົ້ງເປັນປະຊາກອນຂອງລາວປະມານສິບເປີເຊັນ ພ້ອມກັນນັ້ນມົ້ງຫຼາຍຄົນກໍໄດ້ທຳການຕໍ່ສູ້ຄຽງບ່າຄຽງໄຫຼ່ກັບອາເມລິກາເພື່ອຕ້ານກັບຄອມມູຍນິດ ທັນໃດນັ້ນຄຳຖາມທີ່ບໍ່ໄດ້ຄິດຈະຢາກຖາມກໍໄດ້ຜຸດຂຶ້ນໃນຫົວຂອງສີຣິວ່າ ຍ້ອນເຫດໃດທາງທະຫານຈິ່ງຍິນມີເຂົ້າມາຊ່ວຍເຫຼືອຊາວເຜົ່າມົ້ງ ທັງທີ່ເມືອງລາວໃນຫຼາຍພື້ນທີ່ກໍຍັງຕົກຢູ່ໃນສະພາບທີ່ສິ້ນຫວັງພໍປານກັນ.

ຮ້ອຍເອກຄຳສິງອະທິບາຍຕໍ່ວ່າ ໂຄງການນັ້ນໄດ້ເລີ່ມດຳເນີນການໃນເດືອນກໍລະກົດເຊິ່ງແຕ່ເດີມແມ່ນຢູ່ພາຍໃຕ້ການບັນຊາຂອງທ່ານພັນຕີອະນຸ ເຊິ່ງແມ່ນທະຫານຜ່ານເສິກຢູ່ເຊໂປນກັບສາລາພູຄູນ. ສີຣິຍັງຈື່ໄດ້ວ່າ ອະນຸເປັນຄົນທະເຍີທະຍານພໍຄວນ ກັບມີຍາດພີ່ນ້ອງຢູ່ປະເທດຝຣັ່ງເສດ. ອາຍຸຂອງເຂົາປະມານຫ້າສິບປີ ຕອນທັງສອງພົບກັນນັ້ນ ເບິ່ງເຂົາຍັງແຂງແຮງປັ່ງປັ່ງ ຊ້ຳບໍ່ພໍສີຣິເອງຍັງເປັນຄົນກວດຮ່າງກາຍໃຫ້ເຂົາຫວ່າງສອງສາມປີກ່ອນ ນັ້ນເປັນເຫດຜົນທີ່ເຂົາພົບວ່າ ມັນເປັນການຍາກທີ່ຈະເຊື່ອວ່າບຸກຄົນສຳຄັນຜູ້ນັ້ນຈົບຊີວິດຍ້ອນໂລກຫົວໃຈວາຍ ພາຍຫຼັງໄດ້ລົງໄປປະຈຳການຢູ່ພື້ນທີ່ໂຄງການພຽງໜຶ່ງເດືອນ ເຂົາຕາຍໃນຂະນະກຳລັງນອນຫຼັບ ແລະແພດປະຈຳຄ້າຍກໍບໍ່ພົບຫຼັກຖານໃດທີ່ບົ່ງຊີ້ວ່າເປັນການຕາຍທີ່ຜິດປົກກະຕິ.

ພວກເຂົາທຳການຝັງສົບໃຫ້ທ່ານພັນຕີຕາມປະເພນີ ຈາກນັ້ນ, ທ່ານພັນຕີໂຣ່ ເຊິ່ງແມ່ນທີ່ປຶກສາຊາວຫວຽດນາມກໍໄດ້ເຂົ້າຮັບຕຳແໜ່ງແທນ ໃນລະຫວ່າງລໍຖ້າໃຫ້ທາງການລາວແຕ່ງຕັ້ງຜູ້ບັນຊາການຄົນໃໝ່ ຫຼັງຈາກນັ້ນສອງເດືອນ ທ່ານພັນຕີໂຣ່ກໍຫາຍໂຕໄປອີກ ເຂົາຍ່າງເລ້ລ້ອນເຂົ້າໄປໃນປ່າ ແລ້ວກໍບໍ່ກັບຄືນອອກມາອີກເລີຍ ແຕ່ມີໜ້ອຍຄົນທີ່ຄິດແປກໃຈ ເພາະຊ່ວງນັ້ນພັນຕີໂຣ່ເລີ່ມເວົ້າຄົນດຽວ ທັງວາງຕົວແປກໆຕອນອອກຈາກຄ້າຍພັກນັ້ນ ເຂົາສວມມົງກຸດທີ່ເຮັດຈາກຜັກອີ່ເລີດ ເຊິ່ງຄົນລາວເຂົ້າໃຈວ່າ ເຂົາອາດຈະຖືກເສືອກິນແລ້ວ.

ໃນເດືອນກັນຍາ, ຫຼັງຈາກບໍ່ມີຜູ້ບັງຄັບບັນຊາມາຊ່ວງໜຶ່ງ ພະນັກງານໜຸ່ມສອງຄົນຈາກພາກເໜືອກໍໄດ້ເດີນທາງມາເຖິງ ເຊິ່ງທັງສອງຫາກໍໄດ້ຮັບການເລື່ອນຕຳແໜ່ງມາໃໝ່ໆ ພະນັກງານທີ່ອາວຸໂສກວ່າໄດ້ເຂົ້າມາເຮັດໜ້າທີ່ເປັນຜູ້ອຳນວຍການໂຄງການ

ແຕ່ຜ່ານໄປໄດ້ສອງອາທິດ ເຂົາກໍເກີດອາການເຈັບທ້ອງແບບບໍ່ຮູ້ສາເຫດ ອາການຂອງເຂົາຮຸນແຮງຂຶ້ນ ຈົນຖືກນຳສົ່ງຂຶ້ນເຮືອບິນເພື່ອໄປກວດຮ່າງກາຍຢູ່ສະຫວັນນະເຂດ ແຕ່ທ່ານໝໍຢູ່ທີ່ນັ້ນກໍບໍ່ສາມາດພົບເຫັນຫຍັງທີ່ເຫັນວ່າຜິດປົກກະຕິແຕ່ຢ່າງໃດ.

ເຂົາກັບມາພ້ອມຄຳຢືນຢັນວ່າສຸຂະພາບເປັນປົກກະຕິດີທຸກປະການ ແລະແລ້ວອາທິດຕໍ່ມາເຂົາກໍຕາຍໃນໄວພຽງສາມສິບສີ່ປີ.

ເພື່ອນຮ່ວມງານຂອງເຂົາເຂົ້າມາຮັບໜ້າທີ່ແທນ ເບິ່ງຄືວ່າທຸກຢ່າງກຳລັງໄປໄດ້ດີ ຈົນມາເຖິງອາທິດແລ້ວນີ້ ເຂົາບໍ່ໄດ້ມີປັນຫາທາງຮ່າງກາຍ ຫຼືແມ່ນແຕ່ທາງຈິດໃຈເລີຍ ຈົນທຸກຄົນພາກັນຄິດວ່າ ຄຳສາບນັ້ນອາດຈົບລົງແລ້ວລະ ແຕ່ມື້ໜຶ່ງ ເຊິ່ງເປັນມື້ທີ່ເຂົາຂັບລົດອອກໄປເບິ່ງພື້ນທີ່ໂຄງການ ປົກກະຕິແລ້ວເຂົາກໍມັກຂັບລົດຈີບດ້ວຍຕົນເອງ ແຕ່ກໍມີຊາຍສອງຄົນຕິດຕາມໄປນຳເຂົາ ມື້ນັ້ນທັງສອງກໍໄດ້ເຕືອນເຂົາວ່າ ຢ່າຂັບລົດໄວເກີນໄປເພາະສະພາບຂອງຫົນທາງກໍບໍ່ໄດ້ດີພໍປານໃດ ແຕ່ເຂົາກໍບໍ່ຍອມຟັງ ຄ້າຍກັບວ່າບໍ່ແມ່ນຕົວຕົນອັນແທ້ຈິງຂອງເຂົາຈັ່ງຊັ້ນແຫຼະ.

ເຂົາບອກຊາຍທັງສອງວ່າກຳລັງຈະກັບບ້ານ ຈາກນັ້ນ, ກໍແລ່ນຕັດເຂົ້າໄປໃນທົ່ງໂລ່ງແລ້ວກໍຢືນຂຶ້ນ ... ເຂົາລຸກຢືນຂຶ້ນອີ່ຫຼີ ທັງທີ່ຕີນຂ້າງລຸ່ມຍັງຢຽບຄັນເລັ່ງໄວ້ຢູ່ ຕົວຂອງເຂົາກຳລັງຈະແຂງ ເຂົາພຸ່ງໄປໃສ່ຕົ້ນໄມ້ສັກເກົ່າແກ່ທີ່ຕັ້ງຢູ່ໄກອອກໄປທາງທົ່ງພຽງ. ຊາຍທັງສອງພະຍາຍາມຍາດພວງມາໄລ ແຕ່ຕາມທີ່ຊາຍຄົນໜຶ່ງບອກວ່າ ຕອນນັ້ນຮ່າງຄີງຂອງເຂົາແຂງຄືກັບແຜ່ນຊີເມັນ ເມື່ອເຫັນໄດ້ຊັດເຈນວ່າກຳລັງຈະເກີດຫຍັງຂຶ້ນ ບວກກັບບໍ່ມີທາງເລືອກອື່ນໃດ ຊາຍທັງສອງກໍພາກັນກະໂດດອອກຈາກລົດຈີບ ແຕ່ຄົນໜຶ່ງຊໍ້າພັດບໍ່ລອດເພາະຫົວຂອງເຂົາໄປຕຳກັບຕໍໄມ້ເລີຍຕາຍຄາທີ່ ສ່ວນອີກຄົນໜຶ່ງແມ່ນຂາຫັກທັງສອງຂ້າງ ເຂົາເງີຍໜ້າຂຶ້ນມາກໍພໍດີເຫັນຫົວໜ້າຂອງເຂົາທີ່ຍັງຄົງຢືນຢຽບຄັນເລັ່ງຢູ່ຢ່າງນັ້ນ ກ່ອນທີ່ລົດຈີບຄັນນັ້ນຈະກະແທກເຂົ້າໃສ່ກັບຕົ້ນໄມ້ຢ່າງຈັງ ແລະແລ້ວຮ່າງຄີງຂອງເຂົາກໍປິວວ່ອນຂຶ້ນຜ່ານອາກາດ ພ້ອມໄປຕຳກັບຕົ້ນໄມ້ ບໍ່ຕ່າງຫຍັງກັບນົກກະຈອກທີ່ບິນເຂົ້າໄປຕຳກັບແວ່ນແກ້ວ ເຊິ່ງບໍ່ມີໂອກາດຈະລອດຊີວິດໄດ້ອີກ.

ສິຣິຮູ້ສຶກຕົກຕະລຶງຄາວໜຶ່ງ. "ແມ່ນໃຜເຂົ້າມາຮັບໜ້າທີ່ເປັນຜູ້ບັງຄັບບັນຊາຄົນຕໍ່ໄປ?"

ຮ້ອຍເອກເຮັດສຽງສູບສິດຜ່ານຫວ່າງແຂ້ວຂອງຕົນ. "ຂ້ອຍເອງ ແຕ່ພວກເຮົາບໍ່ໄດ້ປະກາດໃຫ້ໃຜຮູ້ ເຊິ່ງຄົນທາງນອກຮູ້ພຽງແຕ່ວ່າ ບໍ່ມີໃຜເຂົ້າມາຮັບໜ້າທີ່ນີ້ ເຊິ່ງຫ້ອງເຮັດວຽກຂອງຜູ້ບັນຊາການແມ່ນວ່າງເປົ່າ ບໍ່ມີໃຜເຂົ້າໄປໃນຫັ້ນ ແລະພວກເຮົາກໍພາກັນປ່ອຍຂ່າວວ່າ ກຳລັງລໍຖ້ານາຍທະຫານຄົນໃໝ່ຈາກວຽງຈັນ."

"ທ່ານຄິດວ່າຈະເຮັດໃຫ້ມັນປ່ຽນແປງໄດ້ຊັ້ນບໍ?" ລົດບັນທຸກເຕັ້ນຂຶ້ນ-ລົງໄປຕາມ

ຮ່ອງນ້ຳອັນປັ່ນປວນຜ່ານປ່າໄມ້ໜາຕຶບ ເຊິ່ງສະພາບຂອງມັນບໍ່ອາດຮ້ອງວ່າຫົນທາງໄດ້ເລີຍ ສ່ວນສີຣິກໍໄດ້ແຕ່ເກາະຕິດກັບແຜງຄວບຄຸມໄວ້ຢ່າງແໜ້ນເພື່ອປ້ອງກັນບໍ່ໃຫ້ແຂ້ວທັງສອງເບື້ອງກະທົບກັນຈົນມັນຫຼຸດອອກ.

"ແນ່ນອນ ພວກເຮົາບໍ່ຢາກໃຫ້ຄົນຮູ້ວ່າແມ່ນໃຜເປັນຜູ້ບັງຄັບບັນຊາ ເພາະເຫັນໄດ້ຊັດເຈນວ່າ ພວກເຂົາມຸ່ງເປົ້າມາໃສ່ສະເພາະຜູ້ນຳ."

"'ພວກເຂົາ' ໝາຍເຖິງໃຜ?"

"ແນວມັນຊັດເຈນຢູ່ແລ້ວ."

"ແຕ່ຂ້ອຍບໍ່ຮູ້ນິແຫຼະ."

"ຕ້ອງແມ່ນພວກມົ້ງແນ່ນອນ."

"ພວກມົ້ງຫວາ? ແຕ່ຂ້ອຍພັດຄິດວ່າພວກທ່ານກຳລັງໃຫ້ການຊ່ວຍເຫຼືອແກ່ພວກເຂົາ."

"ກະແມ່ນ ພວກເຂົາສ່ວນຫຼາຍກະຮູ້ວ່າແມ່ນແນວນັ້ນ ແຕ່ແນ່ນອນຢູ່ແລ້ວ ໃນທຸກຊຸມຊົນ ທ່ານກໍຈະພົບວ່າມີພວກສະໜັບສະໜູນລັດທິນາຍທຶນທີ່ກຳລັງຂຸ່ນເຄືອງໃຈເພາະຄິດວ່າຕົນເອງເປັນຝ່າຍເສຍປຽບຢູ່ແລ້ວ."

"ແລ້ວເຈົ້າຄິດວ່າຄົນພວກນັ້ນລົງມືກຳຈັດບັນດາຜູ້ນຳເຫຼົ່ານັ້ນແນວໃດ? ແນ່ນອນວ່າໃຊ້ລູກປືນ ຫຼືແມ່ນແຕ່ລະເບີດມີຍັງງ່າຍກວ່າຕາມທີ່ເຈົ້າເລົ່າມາຊ້ຳອີກ."

"ໂອຍ ຄົນພວກນີ້ມີເລ່ຫຼ່ຽມຂະໜາດ ພວກເຂົາຮູ້ວ່າການເຮັດແບບນີ້ກໍເທົ່າກັບການເປີດເສີກເອົາຊື່ໆ ບໍ່ໄດ້ດອກ ພວກເຂົາໃຊ້ມົນດຳທຸກເທື່ອຫັ້ນແຫຼະ."

"ພວກນີ້ໃຊ້ມົນດຳຫວາ?"

ຮ້ອຍເອກຜ່ອນສຽງລົງໃຫ້ຄ່ອຍກວ່າເກົ່າ ຈົນເກືອບຈະບໍ່ໄດ້ຍິນຍ້ອນສຽງຂອງເຄື່ອງຈັກດັງເໜືອກວ່າ. "ພວກເຂົາເປັນຄົນບໍ່ມີສາສະໜາ ພວກເຂົາຍັງໃຊ້ເວດມົນຄາຖາເປັນປະຈຳຫັ້ນແຫຼະທ່ານໝໍ ພວກເຂົາມີຢາພິດທຸກຊະນິດ ລວມທັງຢາເຮັດໃຫ້ປະສາດຫຼອນ ພຽງແຕ່ຢອດມັນລົງໃສ່ນ້ຳ ຫຼືແນວກິນ ທຸກຢ່າງກໍຮຽບຮ້ອຍ."

"ພວກມົ້ງວາງຢາພິດຂ້າຄົນຂອງເຈົ້າ ເພື່ອກີດກັ້ນບໍ່ໃຫ້ຊຸມເຈົ້າເຂົ້າມາພັດທະນາຊຸມຊົນຂອງພວກເຂົາຊັ້ນຫວາ?"

"ມັນເປັນການແກ້ແຄ້ນໃດທ່ານໝໍສີຣິ ທ່ານຮູ້ບໍ່ວ່າພວກເຂົາຖືກລ້າງສະໝອງໝົດແລ້ວ? ພວກເຂົາຖືກອາເມລິກາເປົ່າຫູຈົນເຊື່ອວ່າ ຖ້າຄອມມູຍນິດຂຶ້ນກຳອຳນາດ ພວກເຮົາກໍຈະບໍ່ເຮັດຫຍັງເລີຍເພື່ອຊ່ວຍເຫຼືອເຂົາເຈົ້າ ພວກເຂົາຍັງບໍ່ເຂົ້າໃຈຊ້ຳວ່າພວກເຮົາແມ່ນພີ່ນ້ອງກັນ ເພາະອາເມລິກາຍຸຍົງໃຫ້ພວກເຂົາເຈົ້າເຂົ້າໃຈວ່າພວກຕົນບໍ່ແມ່ນຄົນລາວ."

"ກະບໍ່ແມ່ນອີ່ຫຼີ."

"ກະບໍ່ແມ່ນ ຖ້າເວົ້າຕາມຫຼັກການນະສະຫາຍ. ແຕ່ພວກເຂົາກໍຄືຄອບຄົວຂອງພວກເຮົາ ເຖິງແມ່ນພວກເຂົາອາດບໍ່ມີພໍ່ແມ່ເປັນຄົນລາວ ແຕ່ພວກເຮົາທຸກຄົນກໍອາໄສຢູ່ໃນແຜ່ນດິນດຽວກັນ ແມ່ນແຕ່ໝາ ຫຼືແມວ ຂະໜາດພວກມັນບໍ່ແມ່ນມະນຸດ ແຕ່ຄິດດູວ່າມີຈັກຄອບຄົວທີ່ພາກັນລ້ຽງເກືອໝາຂອງພວກເຂົາບໍ່ຕ່າງຫຍັງກັບສະມາ ຊິກຄອບຄົວຂອງພວກຕົນຜູ້ໜຶ່ງ ມັນກໍເຂົ້າຄ່າຍທຳນອງດຽວກັນນັ້ນແຫຼະ."

"ອືມ ກະຖືວ່າເປັນເຫດຜົນພໍຟັງໄດ້ຢູ່ ເທົ່າກັບເຈົ້າຄິດວ່າໝາມັນກຳລັງລອບກັດຜູ້ທີ່ໃຫ້ເຂົ້າໃຫ້ນໍ້າມັນແມ່ນບໍ?"

"ຖ້າຈະວ່າເຫດຜົນໜຶ່ງກໍແມ່ນແນວນັ້ນແຫຼະ ແຕ່ກໍບໍ່ແມ່ນທັງໝົດດອກທ່ານໝໍ ມັນກໍມີພຽງໝາໂຕໜຶ່ງ ຫຼືສອງໂຕທີ່ເປັນໝາວໍ້ ແຕ່ພວກເຮົາກໍຄົງບໍ່ມີປັນຍາທີ່ຈະຕ້ອນພວກເຂົາໃຫ້ຈົນຕາແຈຈົນກວ່າຈະຮູ້ວ່າພວກເຂົາໃຊ້ຢາພິດຊະນິດໃດ ຍ້ອນເຫດຜົນນີ້ລະ ພວກເຮົາຈິ່ງຕ້ອງການທ່ານໝໍ."

ລົດໄດ້ພາພວກເຂົາລ້ຽວເຂົ້າສູ່ອາຄານທະຫານທີ່ຢັ່ງຢາຍດ້ວຍເຄື່ອງຈັກ ແລະຍານພາຫານະເປັນກະແຈກກະຈາຍໄປທົ່ວ. ໃຜກໍຕາມທີ່ໂງ່ຈ້າພໍທີ່ຈະເຊື່ອຟັງຄຳສັ່ງຂອງຮ້ອຍເອກ ພາບເຫຼົ່ານີ້ເບິ່ງຄືກັບຜູ້ມີມະນຸດສະທຳທີ່ພະຍາຍາມຊ່ວຍເຫຼືອເພື່ອນມະນຸດດ້ວຍກຳລັງຊັບພະຍາກອນທີ່ເໜືອກວ່າຄວາມໂງ່ງ່າວເຊິ່ງຈ່າຍເງິນປານຖອກນໍ້າຖິ້ມຂອງອົງການສະຫະປະຊາຊາດ.

ໂລງສົບຂະໜາດໃຫຍ່ສອງອັນຕັ້ງຮຽງກັນຢູ່ໃຕ້ຫຼັງຄາທີ່ມຸງດ້ວຍໃບຕານທີ່ສ້າງຂຶ້ນຊົ່ວຄາວ ເຊິ່ງຕັ້ງຢູ່ເບື້ອງຫຼັງຫ້ອງການຜູ້ບັງຄັບບັນຊາເກົ່າທີ່ປະຖິ້ມໃຫ້ເປັນຫ້ອງການຮ້າງໄວ້. ທະຫານທີ່ປັດສະຈາກເສື້ອຫໍ່ຫຸ້ມຮ່າງກາຍຫຼາຍຄົນພາກັນຫາມໂລງສົບທັງສອງເຂົ້າໄປທາງໃນ ພ້ອມວາງມັນລົງໃສ່ເທິງໂຕະຂາຕັ້ງເຊິ່ງໂອ່ນເອ່ນໄປມາເມື່ອຕ້ອງແບກຮັບນໍ້າໜັກ. ພວກຜູ້ຊາຍພະຍາຍາມງັດຝາໂລງອອກ ເຜີຍໃຫ້ເຫັນຮ່າງອັນໄຮ້ວິນຍານຂອງຜູ້ບັນຊາການສອງຄົນກ່ອນໜ້າຄຳສິງ, ສົບຂອງພວກເຂົາຖືກຫໍ່ດ້ວຍໃບຢາສູບ ອີກຍັງປະດັບປະດາດ້ວຍສະໝຸນໄພທຳມະຊາດຫຼາຍຊະ ນິດ ເຊິ່ງວິທີນີ້ຈະເປັນການຊ່ວຍຫຼຸດເລື່ອງກິ່ນ ແລະເຮັດໃຫ້ສົບຢູ່ໃນສະພາບຢູ່ໄດ້ດົນ ທັງມີຮ່ອງຮອຍຖືກທຳລາຍຈາກພວກແມງໄມ້ໄດ້ໜ້ອຍທີ່ສຸດ.

ແພດປະຈຳຄ້າຍແມ່ນຊາຍໜຸ່ມອາຍຸຊາວປີ ເຊິ່ງຜ່ານການຝຶກອົບຮົມໃຫ້ເປັນແພດປະຈຳພາກສະໜາມກັບຜູ້ປ່ວຍຫຸ່ນທົດລອງທີ່ບໍ່ມີເລືອດ ຊາຍໜຸ່ມຄົນນີ້ ພ້ອມກັບຍິງໄວກາງຄົນຜູ້ໜຶ່ງຈາກເຕັ້ນໂຮງອາຫານ ໄດ້ຮັບມອບໝາຍໃຫ້ເປັນຜູ້ຊ່ວຍສີຣິໃນການຊັນນະສູດສົບ ຫາກສີຣິຄິດສົງໄສໃນຄວາມໂຊກດີທີ່ເຂົາຍັງມີຕຸ້ຍ ກັບກົ່ງເປັນ

ຜູ້ຊ່ວຍຢູ່ໂຮງເກັບສົບ ແຕ່ແລ້ວຄວາມສົງໄສດັ່ງກ່າວກໍຖືກກຳຈັດອອກໄປໃນອີກຫົກຊົ່ວໂມງຕໍ່ມາ ເນື່ອງຈາກສອງຄົນນີ້ຂີ້ຮ້າຍຫຼາຍກວ່າຄວາມຜິດຫວັງຊໍ້າອີກ.

ຊາຍແພດໜຸ່ມໂກ່ງຄໍຮາກແຕກອອກໄປທາງໜ້າປະຕູປ່ອງຢ້ຽມທີ່ເປີດຢູ່ຕັ້ງແຕ່ເລື່ອຍຕັດກະດູກຍັງບໍ່ທັນແຕະຊີໂຄງພຸ້ນລະ ເຊິ່ງເຂົາໄດ້ໃຊ້ກົນອຸບາຍນີ້ນັບຫຼາຍຄັ້ງໃນມື້ນັ້ນ ສ່ວນແມ່ຍິງຄົນນັ້ນກໍບໍ່ເຄີຍຢຸດໄບ່ແບັບໆ ຕະຫຼອດເວລາ ພ້ອມໄຖ່ຖາມດ້ວຍຄຳຖາມແບບໂງ່ໆ ທັງເກະກະຂວາງທາງ ເປັນເຫດເຮັດໃຫ້ສີຣິ ສັງເກດພິຈາລະນາອະໄວຍະວະພາຍໃນຂອງສົບໄດ້ບໍ່ເຕັມທີ່ ນາງຄົງຢາກຮູ້ໄປໝົດທຸກອັນທຸກແນວຢ່າງແມ່ນຢໍາ ເພື່ອຈະໄດ້ເອົາໄປເລົ່າໃຫ້ສາວໆ ໃນໂຮງອາຫານຟັງ ບໍ່ພຽງແຕ່ສອງຄົນນີ້ ຍັງມີແມງໄມ້ຂະໜາດໃຫຍ່ທີ່ບິນວີ່ໆ ພຸ່ງຊົນໃສ່ກັບໃບໜ້າຂອງເຂົາບໍ່ຕ່າງຫຍັງກັບເຮືອບິນເຮລິຄົອບແຕຂະໜາດນ້ອຍ ນັບເປັນຄວາມເຈັບປວດທີ່ປຽບເໝືອນຝັນຮ້າຍກໍບໍ່ປານ.

ມັນບໍ່ແມ່ນຝັນຮ້າຍທີ່ຈົບລົງດ້ວຍຄວາມສຸກສົມຫວັງແຕ່ຢ່າງໃດ ເພາະເຂົາຕ້ອງການຢາກຮູ້ສາເຫດອັນຊັດເຈນຂອງການເສຍຊີວິດໂດຍທຳມະຊາດ ແຕ່ເຂົາກໍບໍ່ພົບຮ່ອງຮອຍຫຍັງເລີຍ ພ້ອມທັງຍັງບໍ່ພົບຮ່ອງຮອຍລຶກລັບໃດໆ ທັງຊິ້ນໃນທັງສອງສົບ. ການພຸ່ງຊົນກັບຕົ້ນໄມ້ຢ່າງແຮງຂອງນາຍທະຫານໜຸ່ມ ເປັນເຫດເຮັດໃຫ້ຮ່າງ ຄົງຂອງເຂົາແຕກມຸ່ນຈົນບໍ່ເປັນຊິ້ນເປັນອັນ, ກະດູກທັງສາມສິບແປດຊິ້ນສ່ວນຖືກທຳ ລາຍສ່ວນກະໂຫຼກຫົວກໍມຸ່ນອຸ້ຍປຸ້ຍ ແຕ່ທັງໝົດນັ້ນເກີດຂຶ້ນພາຍຫຼັງການເສຍຊີວິດ ເພາະເຂົາຕາຍກ່ອນທີ່ລົດຈິບຈະພຸ່ງໄປຕຳກັບຕົ້ນໄມ້.

ສະພາບຮ່າງກາຍຂອງຊາຍທັງສອງຍັງດີທັງແຂງແຮງ ແລະສຸຂະພາບກໍດີເລີດແຕ່ພວກເຂົາກໍຈົບຊີວິດລົງດ້ວຍເຫດຜົນບາງຢ່າງ ເຊິ່ງສີຣິເອງກໍຍັງບໍ່ສາ ມາດເຂົ້າໃຈໄດ້ ແລະລາວເອງກໍຮູ້ດີວ່າມັນບໍ່ແມ່ນຄຳຕອບທີ່ຮ້ອຍເອກຄຳສິງຢາກຈະໄດ້ຍິນເລີຍ ແຕ່ກໍຍັງມີອີກເຫດຜົນໜຶ່ງທີ່ໜ້າຄິດກໍຄື ອາດມີຄົນໃຊ້ຢາພິດແບບບໍ່ປະຖິ້ມຮ່ອງຮອຍໃຫ້ຫຼົງເຫຼືອຢູ່.

ສີຣິທຳການຫຍິບສົບທັງສອງເຂົ້າກັນໄວ້ເປັນຢ່າງດີທີ່ສຸດເທົ່າທີ່ເຂົາຈະເຮັດໄດ້ໂດຍປັດສະຈາກຜູ້ຊ່ວຍໃດໆ ແລະແລ້ວພວກທະຫານກໍພາກັນມາຍົກສົບທັງສອງເຂົ້າໃສ່ໃນໂລງ ເຊິ່ງຖືເປັນເລື່ອງທຳມະດາຢູ່ແລ້ວເຊິ່ງການຕາຍທີ່ຜິດທຳມະຊາດແບບນີ້ຈະຖືກນຳໄປຝັງໃນປ່າຊ້າໃຫ້ໄວ້ທີ່ສຸດ ໂດຍບໍ່ມີການປະກອບພິທີໃດໆ ທັງບໍ່ມີການເຜົາສົບເພາະຄວາມເຊື່ອທີ່ວ່າ ວິນຍານຂອງຜູ້ຕາຍຍັງບໍ່ພ້ອມທີ່ຈະໄປສະ ຫວັນຊັ້ນຟ້າ.

ເລື່ອງໂຊກລາງ, ສາສະໜາ ທັງປະເພນີຕ່າງໆ ໃນປະເທດລາວມັກຈະສັບສົນປົນເປກັນພໍສົມຄວນ ແມ່ນແຕ່ສີຣິເອງທີ່ບໍ່ເຊື່ອເລື່ອງສາສະໜາ ເຂົາກໍຍັງເຫັນວ່າປະເພນີທີ່ປະຕິບັດເຊັ່ນນີ້ບໍ່ແມ່ນເລື່ອງແປກ ເພາະມັນເປັນວິຖີທີ່ເຄີຍປະຕິບັດສືບທອດກັນມາ,

ກະດູກຈະຖືກຖິ້ມປະໄວ້ຢູ່ໃນຂຸມດິນຈົນກວ່າຄົນໃນຄອບຄົວຕັດສິນໃຈວ່າ ຊ່ວງເວລາອັນເໝາະສົມທີ່ຄົນຕາຍຄວນຈະຢູ່ຮ່ວມໂລກໜ່ວຍນີ້ຜ່ານພົ້ນໄປແລ້ວ ແລະຖ້າຍັງຄົ້ນຫາຮ່າງກາຍພົບ ຮ່າງຄົນຕາຍກໍຈະຖືກຂຸດຄົ້ນຂຶ້ນມາ ພ້ອມທຳພິທີເຜົາຕາມປະເພນີ.

ສີຣິອອກໄປພົບກັບຄຳສິງໃນຫ້ອງການຂອງໂຄງການ ທີ່ໃຊ້ຮ່ວມກັບທະຫານຫ້າຄົນ. ຄຳສິງນັ່ງຢູ່ໂຕະທີ່ມີຂະໜາດນ້ອຍກວ່າໝູ່ເຊິ່ງຕັ້ງຢູ່ສົ້ນໄກສຸດໃນຫ້ອງ ການ ສີຣິສັງເກດເຫັນວ່າຊາຍຮ່າງນ້ອຍຄົນນັ້ນມີທ່າທາງສັ່ນເຊັນໃນຂະນະທີ່ກຳລັງເຮັດວຽກຢູ່ທັງຄິດວ່າອາການກະຕຸກເຫຼົ່ານັ້ນເປັນຜົນມາຈາກຄວາມຕຶງຄຽດທີ່ເຂົາກຳລັງປະເຊີນ, ເຂົານຸ່ງເສື້ອຍືດສີຂາວ ເພື່ອປົດບັງຕຳແໜ່ງທີ່ແທ້ຈິງຂອງຕົນ ທັງສັ່ງຫ້າມບໍ່ໃຫ້ໃຜຍົກມືຄຳນັບຕົນເດັດຂາດ. ສີຣິລົງຄຳເຫັນວ່າ ຖ້າພວກມົ້ງຂ້າຄຳສິງບໍ່ໄດ້ ເຂົາອາດຈະຕາຍຍ້ອນຄວາມວິຕົກກັງວົນຂອງຕົນເອງຫຼາຍກວ່າ.

ສີຣິເອີ້ນເອົາຣ້ອຍເອກອອກໄປຂ້າງນອກ ພ້ອມອະທິບາຍໃນສິ່ງທີ່ເຂົາພົບເຫັນວ່າມີຫຍັງແດ່ ແລະມີຫຍັງທີ່ບໍ່ພົບ. ທັງສອງຍ່າງຮຽງຂ້າງກັນລັດຂ້າມໄປທາງລານໂລ່ງສີຣິບໍ່ເຄີຍເຫັນເຄື່ອງຂຸດດິນຫຼາຍເທົ່ານີ້ມາກ່ອນ ແມ່ນແຕ່ຢູ່ວຽງຈັນ.

"ທ່ານກຳລັງບອກວ່າພວກເຂົາຕາຍໂດຍທຳມະຊາດແມ່ນບໍ?"

"ບໍ່, ຂ້ອຍກຳລັງບອກວ່າຂ້ອຍບໍ່ພົບຫຼັກຖານໃດໆ ທີ່ບົ່ງບອກວ່າພວກເຂົາຕາຍແບບຜິດທຳມະຊາດ ແລະຂ້ອຍກໍຍັງບໍ່ພົບຂໍ້ບົ່ງຊີ້ກ່ຽວກັບການຕາຍໂດຍທຳມະຊາດ."

"ແຕ່ນາຍທະຫານໜຸ່ມກໍໄປກະແທກກັບຕົ້ນໄມ້ເຮັງຊວຍຫັ້ນນະ ຢ່າບອກໃດວ່າເຂົາບໍ່ໄດ້ຕາຍຍ້ອນເຫດນັ້ນ."

"ເຂົາຕາຍກ່ອນທີ່ຈະໄປຕຳກັບຕົ້ນໄມ້ພຸ້ນນະ."

"ເປັນໄປບໍ່ໄດ້ແນວນັ້ນ ເພາະທະຫານບອກວ່າເຂົາລຸກຢືນຂຶ້ນທັງທີ່ຕົນຍັງຢຽບຄາຄັນເລັ່ງ ຈາກນັ້ນເຂົາກໍແຂກຮ້ອງຈົນສຸດສຽງ ທ່ານຄົງເຂົ້າໃຈຜິດແທ້ແຫຼະ."

"ຂ້ອຍຈະຮູ້ສຶກດີຫຼາຍກວ່ານີ້ຖ້າຫາກເປັນຄວາມເຂົ້າໃຈຜິດຂອງຂ້ອຍແທ້ ແຕ່ໃນຫົວຂອງຂ້ອຍບໍ່ມີຫຍັງເຫຼືອໃຫ້ສົງໄສອີກແລ້ວວ່າເຂົາບໍ່ໄດ້ຕາຍຍ້ອນຂັບລົດຕຳຕົ້ນໄມ້ສ່ວນເພື່ອນຂອງເຂົາກໍບໍ່ໄດ້ຕາຍຍ້ອນຫົວໃຈວາຍ ທັງບໍ່ມີຫຼັກຖານໃດໆ ທີ່ບົ່ງບອກວ່າທັງສອງຖືກວາງຢາພິດໂດຍເປັນຢາພິດທີ່ເຄີຍໃຊ້ກັນເປັນປະຈຳ ແຕ່ຂ້ອຍກໍພໍເຄີຍໄດ້ຍິນເລື່ອງຢາພິດທີ່ສາມາດຂ້າຄົນຕາຍໂດຍບໍ່ປະຮ່ອງຮອຍຫຼັກຖານໃດໆ ຫຼົງເຫຼືອໄວ້ ຄົງຕ້ອງໃຊ້ເວລາເກືອບທັງຊີວິດພຸ້ນລະຈິ່ງຈະທຳການທົດສອບຢາພິດພວກນີ້ຈົນໝົດໄດ້."

ເຫັນໄດ້ຊັດເຈນວ່າຄຳສິງບໍ່ໄດ້ເພິ່ງພໍໃຈກັບການຊັກຖາມຄັ້ງນີ້ແຕ່ຢ່າງໃດ, ຍິ່ງໄດ້ຍິນຄຳຕອບກໍຍິ່ງເຮັດໃຫ້ເຂົາຮູ້ສຶກກະວົນກະວາຍໃຈຢ່າງເຫັນໄດ້ຊັດ, ເຂົາໃຊ້ກົ່ງອ່ອນຂອງໄມ້ໄຜ່ຟາດໃສ່ຂ້າງຂາໂສ້ງຂອງຕົນເອງ.

"ທ່ານໄດ້ສອບຖາມຄົນໃນພື້ນທີ່ແລ້ວ ຫຼືບໍ່?" ສິຣິຖາມຂຶ້ນ.

"ພວກມົ້ງຫັ້ນບໍ? ພວກເຂົາປະຕິເສດທຸກຢ່າງເລີຍແຫຼະ ພວກເຂົາບໍ່ມີທາງຍອມຂາຍໜ້າຄົນຂອງຕົນເອງດອກ ອີກຢ່າງພວກນີ້ກໍມັກທຳຕົວແປກປະຫຼາດ ທັງນັບຖືຜີສາງພ້ອມປະກອບພິທີບູຊາແບບມະລຳມະລອຍອີ່ຫຍັງຈັກຢ່າງປະມານນັ້ນ. ມັນຍັງບໍ່ໜ້າແປກໃຈເລີຍຖ້າພວກເຂົາມີໝໍຜີຄົນໜຶ່ງສ້າງໂຮງງານຜະລິດຢາພິດ ແລະຢາເສບຕິດເປັນກິດຈະການຂອງຕົນເອງແບບບ້າຄັ່ງ."

"ໝູ່ບ້ານໃກ້ສຸດຢູ່ຫ່າງອອກໄປໄກຫຼາຍປານໃດ?"

"ສີ່ຫ້າກິໂລແມັດນິແຫຼະ. ເປັນຫຍັງ?"

"ຂ້ອຍຢາກລົມກັບພວກເຂົາ."

"ໂອ ນັ້ນມັນບໍ່ມີຫຍັງດີຂຶ້ນເລີຍດອກ."

"ທ່ານຮ້ອຍເອກ, ຖ້າຫາກມີການໃຊ້ຢາແທ້ ວິທີດຽວທີ່ພວກເຮົາຈະຮູ້ວ່າແມ່ນຢາຊະນິດໃດ ກໍຄືຕ້ອງໄປເບິ່ງໃຫ້ຮູ້ວ່າມີຢາຫຍັງແດ່ທີ່ພວກເຂົາໃຊ້ຢູ່ ຈຶ່ງຂໍເອົາຕົວຢ່າງມາແລ້ວເອົາມັນກັບໄປທົດສອບໃນວຽງຈັນ, ຖ້າບໍ່ເຮັດແບບນີ້ພວກເຮົາກໍບໍ່ມີມື້ຮູ້ຜົນການຕາຍ ແລະທ່ານກໍຈັບກຸມຄຸມຂັງໃຜບໍ່ໄດ້ອີກ. ເຂົ້າໃຈໃນສິ່ງທີ່ຂ້ອຍເວົ້າບໍ່?"

"ຂ້ອຍຄິດວ່າແນວນັ້ນແຫຼະ."

"ດີແລ້ວຊັ້ນນະ ຂ້ອຍຢາກໄດ້ຄົນຂັບລົດຜູ້ໜຶ່ງ."

"ທ່ານຢາກໄປຕອນນີ້ເລີຍບໍ?"

"ຖ້າບໍ່ໄປຕອນນີ້ກໍບໍ່ມີເວລາອີກແລ້ວລະ."

"ແຕ່ອີກບໍ່ເທົ່າໃດຊົ່ວໂມງມັນກໍຄ່ຳມືດແລ້ວ."

"ດີແຕ່ຂ້ອຍບໍ່ແມ່ນຄົນຂີ້ຢ້ານຄວາມມືດ ແມ່ນບໍ່ລະ?"

**********

ພວກເຂົາຂັບລົດເລາະລຽບຕາມຮ່ອມທາງ ທີ່ມີຕົ້ນໄມ້ຕຶບໜາຄ້າຍຄືກັບຢູ່ເດີ່ນບິນ ສິຣິຄິດວ່າເສັ້ນທາງຊຸມນີ້ໜ້າຈະແມ່ນພວກລັກລອບຂົນຂອງເຖື່ອນເປັນຜູ້ສ້າງຂຶ້ນ ເຊິ່ງບໍ່ໜ້າຈະສັງເກດເຫັນໄດ້ເມື່ອແນມລົງມາແຕ່ເທິງເຮືອບິນ. ເສັ້ນທາງໂຮ່ຈີມິນມີລັກສະນະດຽວກັນຄື ເປັນອຸບໂມງຜ່ານປ່າ ເຊິ່ງບໍ່ໜ້າແປກໃຈເລີຍທີ່ອາເມລິ ກາຍັງບໍ່ສາມາດທຳລາຍເສັ້ນທາງເຫຼົ່ານັ້ນໄດ້ ຊາວເຜົ່າມົ້ງຄົງຈະຮຽນຮູ້ກົນລະຍຸດນີ້ມາຈາກສັດຕູ.

ຮ້ອຍເອກຄຳສິງເລືອກທີ່ຈະບໍ່ເດີນທາງມານຳຄັ້ງນີ້ ເຂົາສົ່ງສິຣິມາພ້ອມກັບຄົນຂັບລົດ ແລະຮ້ອຍເອກໜຸ່ມຄົນໜຶ່ງ ເຊິ່ງຄົນຂັບລົດກໍສະໜິດສະໜົມກັບທັງສອງເປັນຢ່າງດີ.

ສິຣິຖາມວ່າຈະສາມາດແວ່ເບິ່ງເຂດພື້ນທີ່ໂຄງການໃນລະຫວ່າງທາງໄດ້ ຫຼືບໍ່.

"ບໍ່ໄດ້ດອກທ່ານ ເພາະມັນຄືນລະທາງກັນຕ້ອງໄດ້ເດີນທາງໄປອີກສິບສາມກິໂລແມັດ."

"ແທ້ຫວາ? ເບິ່ງແລ້ວຄືວ່າແປກໆ ເນາະ ທີ່ພວກເຈົ້າກຳນົດຈຸດພັດທະນາໂຄງການປູກພືດທົດແທນຢູ່ຫ່າງຈາກໝູ່ບ້ານທີ່ພວກຕົນກຳລັງໃຫ້ການຊ່ວຍເຫຼືອ."

ຄົນຂັບລົດຫົວຂຶ້ນ. "ແມ່ນແຫຼະທ່ານ ມັນຕັ້ງແປກແທ້ໆ ບໍ່ແມ່ນບໍ?"

ຮ້ອຍເອກໜຸ່ມຈ້ອງເບິ່ງໜ້າສີຣິ ແຕ່ມັນກໍບໍ່ໄດ້ເຮັດໃຫ້ລາວຢຸດຍິ້ມໄດ້ ໃນຄວາມຈິງແລ້ວລາວຕັ້ງຍິ້ມມາຈົນຕະຫຼອດທາງຈົນກະທັ້ງເງົາສີດຳຂະໜາດໃຫຍ່ພຸ່ງເຂົ້າມາປະທັບກັບແວ່ນໜ້າລົດຈົນດັງຕຸບ! ເງົາດັ່ງກ່າວກະພືປີກພົບພັບ ກ່ອນບິນຂຶ້ນໄປເທິງຫຼັງຄາຂອງຫ້ອງໂດຍສານ ແຕ່ຄົນຂັບລົດເບິ່ງຄືວ່າຄຸ້ນເຄີຍກັບມັນແລ້ວ ມີແຕ່ສີຣິກັບຮ້ອຍເອກໜຸ່ມນັ້ນລະພາກັນປິດຕາທັງສອງຂ້າງຂອງພວກຕົນໄວ້.

"ຜີບ້າເອີຍ."

"ມັນແມ່ນອີ່ຫຍັງຫັ້ນນະ?"

"ໂຕກາທ່ານໝໍ ມັນມັກບິນອອກມາຕຳກັບລົດພວກເຮົາແບບນີ້ແຫຼະ."

"ໂຕກາຫວາ? ເປັນເລື່ອງປົກກະຕິຢູ່ຫວາທີ່ເຫັນໂຕກາໃນບ່ອນທີ່ໄກຈາກຕົວເມືອງຂະໜາດນີ້? ຂ້ອຍລະຄິດວ່າແມ່ນນົກກາງແກຊັ້ນດອກ."

"ຂ້ອຍບໍ່ຮູ້ເລື່ອງນົກປານໃດ ແຕ່ເລື່ອງປາຫັ້ນພໍຮູ້ຫຼາຍຢູ່ ແຕ່ວ່າ ..." ກາໂຕນັ້ນພຸ່ງຕຳເຂົ້າໃສ່ລົດກະບະອີກຄັ້ງ ແຕ່ເທື່ອນີ້ມັນພຸ່ງເຂົ້າມາທາງປະຕູຂ້າງລົດ ເຊິ່ງຮ້ອຍເອກໜຸ່ມຕົບຫົວມັນອອກ ເຂົາພະຍາຍາມກົດແວ່ນໜ້າປະຕູຂຶ້ນປິດໄວ້ ເຮັດໃຫ້ກາໂຕນັ້ນໂມໂຫ ພ້ອມຈິກກັດມືເຂົາຈົນເລືອດອາບ.

"ຫ່າມັນນິ!"

ສີຣິຊ່ວຍເຂົາໄລ່ນົກອອກໄປຈົນປິດໜ້າແວ່ນປະຕູໄດ້ສຳເລັດ ສ່ວນນົກໂຕນັ້ນກໍບິນກັບຄືນເຂົ້າໄປໃນຕົ້ນໄມ້ ຄົນຂັບລົດກໍໝູນແວ່ນໜ້າປະຕູລົດທີ່ຢູ່ທາງເບື້ອງຕົນຂຶ້ນເຊັ່ນກັນ.

"ບໍ່ເຄີຍເຫັນກາໂຕໃດຮ້າຍຊໍ່ານີ້ມາກ່ອນ ຄືຊິແມ່ນເວລາທີ່ມັນອອກມາທັກທາຍກັນທ່ານຮູ້ຕິວ່າຂ້ອຍເວົ້ານີ້ໝາຍເຖິງກາຫຼາຍໂຕ ແຕ່ຄິດວ່າໜ້າຈະມີແຕ່ໂຕນີ້ພຽງໂຕດຽວເພາະຂ້ອຍຈື່ຮອຍສີນ້ຳຕານຢູ່ຫອນຂອງມັນໄດ້ ຂ້ອຍຄິດວ່າເຄີຍໆ ເຫັນກາໂຕນີ້ມາກ່ອນ."

ຮ້ອຍເອກດູດແຜທີ່ຂໍ້ມືທັງຈົ່ມພຶມພຳເບົາໆ ສີຣິເອື້ອມມືໄປຈົກເອົາຢາຂ້າເຊື້ອຢູ່ໃນກະເປົາ.

"ໃຫ້ຂ້ອຍເບິ່ງແຜແດ່ໄດ້ບໍ່?"

"ບໍ່ເປັນຫຍັງດອກ." ທີ່ເຂົາເວົ້າອອກມາບໍ່ໄດ້ໝາຍຄວາມວ່າມັນເປັນແຜເລັກໜ້ອຍ

ແຕ່ໝາຍເຖິງບໍ່ໄດ້ເປັນຫຍັງເລີຍ ເຂົາຍົກຂໍ້ມືຂຶ້ນໃຫ້ເບິ່ງເຊິ່ງມັນກໍບໍ່ມີຫຍັງອີ່ຫຼີ ທັງທີ່ວ່າງກໍ້ນີ້ທຸກຄົນແນມເຫັນເລືອດຕິດຢູ່.

ຄົນຂັບລົດຜິວປາກຂຶ້ນ. "ເລີ່ມແປກແລ້ວຕອນນີ້."

ພວກເຂົາຂັບລົດຜ່ານດ່ານທະຫານຍາມແຫ່ງໜຶ່ງຂະນະທີ່ກຳລັງຈະຮອດໝູ່ບ້ານ ເຊິ່ງທະຫານຍາມກໍໄດ້ໂບກມືສັນຍານໃຫ້ພວກເຂົາຜ່ານໄປໄດ້. ເສັ້ນທາງເປີດອອກສູ່ຈຸດໂລ່ງ ອັນເປັນບໍລິເວນທີ່ມີຕູບນ້ອຍທີ່ສ້າງດ້ວຍໄມ້ໃຜ່ ແລະຫຍ້າແຫ້ງ ປະມານສາມສິບ ຫຼືສີ່ສິບຫຼັງ ຕັ້ງລຽນລາຍກັນຢູ່ແຄມແມ່ນໍ້ານ້ອຍໆ. ມີທາງຍ່າງແຄບໆ ຫຼາຍເສັ້ນພາດຜ່ານໄປມາໃນທຸກທິດທາງ ແລະຢູ່ຕາມສີ່ແຍກທຸກແຫ່ງລ້ວນແຕ່ມີໂຄງສ້າງນ້ອຍໆ ຄ້າຍຄືກັບຂົວ ມັນນ້ອຍຫຼາຍ ແມ່ນແຕ່ເດັກນ້ອຍກໍຍັງສາມາດຍ່າງຂ້າມໄປໄດ້ ສ່ວນຂົວທີ່ໃໝ່ອ່ຽມກໍມີດອກໄມ້ແລະທູບປະດັບປະດາ ສ່ວນອັນທີ່ເກົ່າແກ່ແດ່ແລ້ວແມ່ນຖືກປ່ອຍປະລະເລີຍໃຫ້ຜຸພັງຈົນເສື່ອມສະຫຼາຍ ຄົນຂັບລົດເຫັນສີຣິແນມເບິ່ງບັນດາໂຄງສ້າງເຫຼົ່ານັ້ນ.

"ນັ້ນແມ່ນຂົວທີ່ສ້າງໄວ້ເພື່ອໃຫ້ວິນຍານທີ່ຫຼົງທາງໄດ້ມີໂອກາດກັບຄືນເຂົ້າຮ່າງໄດ້ຖືກ." ເຂົາຫົວຂຶ້ນ.

"ຄົນປ່າເຖື່ອນ," ຮ້ອຍເອກໜຸ່ມຈົ່ມພຶມພຳ. ຕົ້ນໄມ້ທຸກຕົ້ນຕະຫຼອດທາງເຂົ້າບ້ານລ້ວນແຕ່ຖືກອ້ອມຮອບດ້ວຍຜ້າຫຼາຍສີ ລວມທັງເສັ້ນຝ້າຍສີຂາວ, ຫຼາຍຕົ້ນມີຖາດເຄື່ອງເສັ່ນໄຫວ້ ລວມທັງກອງກ້ອນຫີນຢູ່ເບື້ອງໜ້າ, ສີຣິຄິດວ່າທຸກສິ່ງທີ່ເຫັນນັ້ນລ້ວນແຕ່ມີສະເໜ ແລະເຂົາກໍຂ້ອນຂ້າງຮູ້ສຶກຄຸ້ນເຄີຍວາດໃດວາດໜຶ່ງ.

ທະຫານຖືອາວຸດສອງຄົນຍ່າງມາທີ່ລົດກະບະ ປາກົດວ່າທາງກອງທັບໄດ້ສົ່ງກຳລັງທະຫານມາຮັກສາຄວາມປອດໄພ ໃຫ້ແກ່ປະຊາຊົນພາຍໃນບ້ານເມຢູໂບຫຼາຍສົມຄວນ. ທະຫານຄົນໜຶ່ງຖືເຄື່ອງຮັບ-ສົ່ງວິທະຍຸແບບພົກພາ ພ້ອມແຈ້ງໄປທາງສຳນັກງານກອງບັນຊາການໃຫຍ່ວ່າ ທ່ານໝໍເດີນທາງມາຮອດແລ້ວ.

ຜູ້ເຖົ້າໃນໝູ່ບ້ານຫົກຄົນ ຖືກຕ້ອນມາຮວມຕົວກັນເພື່ອເປັນຄະນະກຳມະ ການໃນການຕ້ອນຮັບແຂກສຳຄັນຈາກເມືອງຫຼວງເຊິ່ງເປັນບຸກຄົນທີ່ພວກເຂົາບໍ່ຕ້ອງການ. ຜູ້ເຖົ້າເຫຼົ່ານັ້ນໄດ້ຮັບຄຳສັ່ງໃຫ້ຢືນຫ່າງໄປສາມສີ່ກ້າວ ຈົນກວ່າຈະຖືກເອີ້ນອອກມາກ່າວຄຳຕ້ອນຮັບດ້ວຍຄວາມຈິງໃຈ.

"ຢ່າໄປຄາດຫວັງວ່າຄົນພວກນີ້ຈະຮູ້ຈັກເລື່ອງຂອງມາລະຍາດ." ຮ້ອຍເອກໜຸ່ມບອກສີຣິຕອນພວກເຂົາຍ່າງອອກມາຈາກລົດກະບະ. "ຄົນພວກນີ້ຊ່າງບອດໄບ້ໂງ່ງ່າວພິລຶກ."

ທະຫານຍາມຄົນໜຶ່ງພາສີຣິຍ່າງໄປຫາພວກຜູ້ເຖົ້າຊຸມນັ້ນ ເຊິ່ງກຳລັງຢືນກົ້ມໜ້າ

ນັບນິ້ວຕີນບໍ່ຕ່າງຫຍັງກັບເດັກນ້ອຍນັກຮຽນ ພວກເຂົາຮູ້ວ່າບໍ່ຄວນເປີດປາກເວົ້າຫຍັງອອກມາຈົນກວ່າອີກຝ່າຍຈະເປັນຜູ້ເວົ້ານຳກ່ອນ.

"ຜູ້ອາວຸໂສແຫ່ງເມຢູໂບທຸກທ່ານ, ນີ້ແມ່ນທ່ານໝໍສີຣິ ໄພບູນ."

ເຖິງແມ່ນຈະມີສະຖານະພາບເປັນຜູ້ມີອາຍຸສູງກວ່າ ແຕ່ຊາຍອາວຸໂສສີ່ຄົນ ລວມທັງຍິງອາວຸໂສສອງຄົນກໍພາກັນພະນົມມືນົບຈົນພົ້ນຫົວຂອງຕົນຕາມຄຳສັ່ງຂອງທະຫານ ພວກເຂົາປະຫຼາດໃຈເມື່ອສີຣິຍົກມືນົບຕອບຄືນສູງກວ່າ ທັງກົ້ມຫົວລົງຕ່ຳກວ່າ ນັ້ນຄືຕອນທີ່ພວກເຂົາຕັ້ງໃຈທີ່ຈະແນມເບິ່ງລາວ ແລະແລ້ວຜູ້ອາວຸໂສກໍສົງ ເກດເຫັນ, ທັງໝົດສັງເກດເຫັນ ພວກເຂົາໄດ້ແຕ່ຢືນຕົກຕະລຶງ ເມື່ອໄດ້ເຫັນທ່ານໝໍຮ່າງນ້ອຍຢືນຢູ່ຕໍ່ໜ້າພວກຕົນ.

ບັນດາຜູ້ອາວຸໂສທັງຫົກໄດ້ແຕ່ຄວັກຂ້າງຄວັກແອວກັນເປັນຮຸ່ນໆ ເພື່ອໃຫ້ແນ່ໃຈວ່າທຸກຄົນລ້ວນແຕ່ແນມເຫັນປະຕິຫານແບບດຽວກັນ. ສີຣິແລະບັນດາທະຫານເລີ່ມຮູ້ສຶກຄືກັບວ່າຈິດໃຈບໍ່ຄ່ອຍຢູ່ກັບເນື້ອກັບຄີງ ກ່ອນທີ່ຮ້ອຍເອກໜຸ່ມຈະເວົ້າຂຶ້ນ.

"ຢ່າພາກັນຢືນຊຶງລຶງຄືຄວາຍແບບນັ້ນຕິລະ. ບໍ່ມີຫຍັງຊິເວົ້າຊິລົມນຳແຂກຕົນເອງແນ່ບໍ່?"

ຄວາມມິດງຽບອັນໜ້າອຶດອັດຍັງຄືງບໍ່ມີຫຍັງປ່ຽນແປງ ກ່ອນທີ່ຊັດເຊິ່ງເປັນເຈົ້າກົກເຈົ້າເຫຼົ່າປະຈຳບ້ານກ້າວຂາອອກມາຂ້າງໜ້າແບບກ້າໆ ເກງໆ ຂະນະທີ່ມືຂອງເຂົາກໍຍັງພະນົມໄວ້ຊື່ກັບໃບໜ້າ ພາສາລາວຂອງເຂົາຟັງແລ້ວຍັງເປັນສຳນຽງທາງມົ້ງຫຼາຍກ່ອນ.

"ແມ່ນທ່ານເອງແມ່ນບໍ?"

"ຄືງຊິແມ່ນຫັ້ນແຫຼະ." ສີຣິກ່າວ. ເຂົາກ້າວອອກໄປເພື່ອຈັບມືຂອງເຈົ້າກົກເຈົ້າເຫຼົ່າ ແຕ່ຜູ້ເຖົ້າຄົນນັ້ນຊໍ້າພັດຖອຍບາດຕີນກັບໄປຢືນຮຽງຂ້າງຜູ້ເຖົ້າຄົນອື່ນ.

"ຄົນປ່າເຖື່ອນເອີຍເນາະ!" ຮ້ອຍເອກໜຸ່ມເວົ້າຂຶ້ນ. ເຫັນໄດ້ຊັດເຈນວ່າ ເຂົາບໍ່ໄດ້ມີຈິດໃຈເມດຕາຕໍ່ຊົນຊາດທີ່ຍິ່ງທະນົງອົງອາດຜູ້ເຊິ່ງເປັນສັດຕູກັບເຂົາມາຫຼາຍກວ່າໜຶ່ງທົດສະວັດ.

ກຸ່ມຜູ້ເຖົ້າໄດ້ແຕ່ພາກັນຈັບກຸ່ມສົນທະນາເປັນພາສາມົ້ງ ເຊິ່ງພວກເຂົາກຳລັງສັບສົນກັບບາງສິ່ງຢ່າງທັງທີ່ມືກໍຍັງນົບຄ້າງໄວ້ແບບນັ້ນຄືເກົ່າ.

**********

ຄົນຂັບລົດກ້າວອອກມາທັງແກ່ວງຫົວ. "ຂ້ອຍເຄີຍເຫັນຄົນພວກນີ້ມັກເຮັດແຕ່ແນວໄຮ້ສາລະຕະຫຼອດດອກ ແຕ່ມື້ນີ້ພວກເຂົາຄືວ່າແປກໜັກກວ່າແຕ່ກ່ອນ ປົກ ກະຕິພວກ

ເຂົາເກືອບຊິພາກັນລໍຖ້າຣອດບໍ່ໄຫວ ທັງເຮັ່ງຮີບໃຫ້ພິທີການນີ້ຟ້າວຈົບສິ້ນໄວໆ ພໍຈະໄດ້ກັບໄປເຮັດແນວໂງ່ໆ ແບບໃດກໍໄດ້ຄືກັບພວກເຂົາເຮັດຕອນນີ້.”

ສິຣິພະຍາຍາມສາວບາດຕີນໄປຂ້າງໜ້າໜຶ່ງກ້າວ ແຕ່ເທື່ອນີ້ພວກຜູ້ເຖົ້າທຸກຄົນຊໍ້າພັດພາກັນຖອຍຫຼັງມາຮວມຕົວກັນອີກຄັ້ງ. ສິຣິຈິ່ງບໍ່ຮູ້ຈະເຮັດແນວໃດໄດ້ອີກ.

“ມີຫຍັງຜິດປົກກະຕິ ຫຼືບໍ່?”

“ທ່ານມານີ້ໄດ້ແນວໃດ?” ຍິງຊະລາຄົນໜຶ່ງຖາມຂຶ້ນ.

“ຍົນແຟັກ-໔໐.” ຄວາມງຽບງັນກັບຄືນມາອີກຄັ້ງ. “ຂ້ອຍບິນມາ.”

ພວກຜູ້ເຖົ້າພາກັນຫັນໜ້າໄປສົນທະນາກັນອີກຄັ້ງດ້ວຍທ່າທີຕື່ນເຕັ້ນຫຼາຍຂຶ້ນຈາກນັ້ນຍິງອາວຸໂສຄົນດຽວກັນກັບຜູ້ຖາມເຂົາກໍຮີບໂຮມຄວາມກ້າຫານຂອງຕົນກ້າວອອກມາຂ້າງໜ້າ ພ້ອມເອື້ອມມືໄປທີ່ແຂນຂອງສິຣິ ສັງເກດໄດ້ວ່າ ມືຂອງແມ່ເຖົ້າຄົນນັ້ນມີອາການສັ່ນເຊັນ ແຕ່ແລ້ວລາວກໍເຮັດສີໜ້າແບບໂລ່ງອົກໂລ່ງໃຈທັນ ທີເມື່ອຕົນເອງໄດ້ຄົ້ນພົບຊີ້ນເນື້ອເຊື້ອໄຂ ທັງໂຄງກະດູກທີ່ເຊື່ອງຊ້ອນໄວ້ພາຍໃນແຂນເສື້ອຂອງສິຣິ. ຍິງຊະລາຜູ້ນັ້ນຢ້ອນກັບຄືນໄປກະຊິບລາຍງານໃຫ້ຜູ້ເຖົ້າຄົນອື່ນຮູ້ນໍາ ແລະແລ້ວບັນຍາກາດກໍປ່ຽນໄປແບບໜ້າມືເປັນຫຼັງມື.

ຜູ້ເຖົ້າທັງໝົດພາກັນຫຸ້ມເຂົ້າມາອ້ອມຮອບຕົວສິຣິ ທັງຈັບບາຍຕົນຕົວເຂົາ ທັງຍິ້ມຫົວ ພ້ອມສອບຖາມເຂົາເປັນພາສາມົ້ງ ຄ້າຍກັບວ່າລາວເປັນເພື່ອນເກົ່າທີ່ຫ່າງຫາຍຈາກກັນເປັນເວລາດົນນານ. ພວກຊາຍທະຫານບໍ່ຮູ້ຈະເຮັດແນວໃດຈິ່ງໄດ້ແຕ່ຢືນເກີ້ແນມເບິ່ງແບບງົງໆ ປານໄກ່ຖືກຄ້ອນ. ຮ້ອຍເອກໜຸ່ມຮ້ອງດອດມາໃສ່ສິຣິ. “ທ່ານເຄີຍຢູ່ນີ້ມາກ່ອນຫວາ?”

“ບໍ່ເຄີຍ.” ສິຣິເວົ້າທັງຍິ້ມ.

“ບ້າຄັກ ພວກນີ້ຕັ້ງເປັນບ້າທຸກຄົນ.”

ກຸ່ມຜູ້ເຖົ້າພາກັນແກ່ດຶງ ທັງປະຄອງເອົາສິຣິໄປທີ່ຕູບນ້ອຍຂອງຊຸມຊົນ ເຖິງແມ່ນເຂົາຈະຮູ້ສຶກງຸນງົງແຕ່ກໍມີຄວາມສຸກທີ່ທຸກຄົນໃຫ້ຄວາມສົນໃຈຕົນ ພວກເຂົາຈັດບ່ອນນັ່ງໃນຈຸດທີ່ຫັນໜ້າໄປທາງປະຕູເຊິ່ງຖືເປັນການໃຫ້ກຽດ ພ້ອມທັງຈັດຫານໍ້າກັບເຂົ້າໜົມຫວານມາໃຫ້ເຂົາກິນ ໂດຍບໍ່ໄດ້ສົນໃຈໄຍດີກັບພວກທະຫານແມ່ນແຕ່ໜ້ອຍດຽວ.

ພວກເຂົາພາກັນສອບຖາມຫຼາຍຫຼືບຫຼາຍຕ່າວເປັນພາສາມົ້ງ ທຸກຄັ້ງສິຣິລ້ວນແຕ່ບອກພວກເຂົາເປັນພາສາລາວວ່າ ເຂົາເວົ້າພາສາມົ້ງບໍ່ເປັນ ແລ້ວພວກເຂົາກໍຫົວຂຶ້ນໂຄບໆ ສິຣິກໍຫົວຂຶ້ນເຊັ່ນກັນສ່ວນທະຫານໄດ້ແຕ່ພາກັນອ້າປາກຫາວນອນ.

ໃນທີ່ສຸດຜູ້ອາວຸໂສທຸກຄົນກໍເຂົ້າມານັ່ງອ້ອມຮອບຕົວຂອງສິຣິ ແຕ່ເວັ້ນໄລ ຍະຫ່າງໄວ້ປະມານສອງສາມແມັດເພື່ອສະແດງເຖິງຄວາມເຄົາລົບ ຈໍານວນຄົນໃນຕອນນີ້ເພີ່ມຂຶ້ນ

ຮອດຊາວຄົນແລ້ວ ທັງໝົດໄດ້ແນະນຳຕົນເອງໃຫ້ສິຣິຮູ້ ແຕ່ມີສອງສາມຄົນເທົ່ານັ້ນທີ່ເຂົາຈື່ຊື່ໄດ້ ໂດຍສະເພາະກໍແມ່ນຊັດ ເຈົ້າກົກເຈົ້າເຫຼົ່າ ຕໍ່ມາກໍແມ່ນນາໄບ ແມ່ເຖົ້າຜູ້ເຂົ້າໄປຈັບເບິ່ງວ່າເຂົາມີເລືອດເນື້ອເຊື້ອໄຂແທ້ຈິງ ຫຼືບໍ່, ເລົາຈິງ ຜູ້ຊາຍຮ່າງສູງ ບໍ່ມີແຂ້ວຈັກເຫຼັ້ມທັງຍິ້ມປາກກວ້າງ ແລະປ້າສວບຮອງຜູ້ອາວຸໂສເພດຍິງ ຜູ້ມີຮູບຮ່າງຜອມບາງລາວຍິ້ມຫວານຈົນສິຣິສາມາດບອກໄດ້ເລີຍວ່າຄົງເຄີຍມີຜູ້ຊາຍຫຼາຍຄົນທີ່ອົກຫັກຍ້ອນປ້າສວບ. ຮ້ອຍເອກໜຸ່ມນັ່ງໜ້າບູດເຕ່ເຊ່ຢູ່ຊື່ຊ່ອງປະຕູ ປ່ອຍໃຫ້ປາຍເກີບບູ໊ດຊີ້ໄປທາງວົງລ້ອມຂອງກຸ່ມຊຸມນຸມ.

ແສງສີທອງຍາມແລງຄ່ອຍເລື່ອນຈາງລົງຢ່າງຊ້າໆ ພ້ອມມີຄົນພາຍໃນບ້ານພາກັນແຫ່ມາເບິ່ງພາບແຫ່ງຄວາມພິດສະຫວົງຂອງການຊຸມນຸມໃນຕູບນ້ອຍຫຼັງນັ້ນ ພວກເຂົາເລີ່ມໜາຕາຈົນປິດບັງແສງຜ່ານທາງປະຕູໃຫຍ່ກັບປະຕູປ່ອງຢ້ຽມ. ຢູ່ຕາມຮູຝາໃບຕອງກໍເຕັມໄປດ້ວຍດວງຕາຂອງບັນດາເດັກນ້ອຍທີ່ພາກັນຫຸ້ມສ່ອງເບິ່ງ, ສິຣິອາດດຶງດູດເອົາຄົນມາໄດ້ຫຼາຍກວ່ານີ້ ແຕ່ເຂົາກໍຮູ້ສຶກຜິດທີ່ໄດ້ສວຍໂອກາດສະແດງຕົວຕົນເປັນບຸກຄົນທີຄົນອື່ນເຂົ້າໃຈຜິດ.

"ຂ້ອຍຮູ້ສຶກດີຫຼາຍແທ້ລະ." ເຂົາເວົ້າ. "ແຕ່ມັນກໍເປັນຄວາມຈິງດັ່ງທີ່ທະຫານເວົ້າ." ເຂົາເອງຮູ້ສຶກປະຫຼາດໃຈທີ່ໄດ້ຍິນຕົວເອງໃຊ້ຄຳວ່າ 'ທະຫານ' ເປັນພາສາມົ້ງ ເຂົາຕ້ອງຈື່ຈຳມາຈາກບ່ອນໃດບ່ອນໜຶ່ງ. "ຄວາມຈິງແລ້ວຂ້ອຍຊື່ ສິຣິ ໄພບູນມາຈາກວຽງຈັນ. ຂ້ອຍເປັນເຈົ້າໜ້າທີ່ຊັນນະສູດສົບທີ່ໂຮງໝໍມະໂຫສົດ [ເຂົາໃຊ້ຄຳວ່າ 'ໝໍຜີ' ເພື່ອຊ່ວຍໃຫ້ພວກເຂົາເຂົ້າໃຈງ່າຍຂຶ້ນ]. ຂ້ອຍໝັ້ນໃຈວ່າຂ້ອຍຕ້ອງຄືກັບໃຜຄົນໜຶ່ງທີ່ພວກເຈົ້າຮູ້ຈັກ ແຕ່ຂ້ອຍບໍ່ແມ່ນເຂົາຄົນນັ້ນແນ່ນອນ."

ພວກເຂົາພຽງແຕ່ຈ້ອງມອງເບິ່ງສິຣິໂດຍບໍ່ມີໃຜຕອບຫຍັງຈັກຄົນ. ເຂົາຈິ່ງສົງໄສວ່າພວກເຂົາເຂົ້າໃຈໃນສິ່ງທີ່ຕົນເວົ້າຢູ່ ຫຼືແນວໃດ.

"ພວກເຈົ້າຄິດວ່າຂ້ອຍເປັນໃຜ?"

"ທ່ານແມ່ນເຢມົງ." ເຈົ້າກົກເຈົ້າເຫຼົ່າເວົ້າຂຶ້ນແບບບໍ່ລັ່ງເລໃຈ ຈົນພວກຊາວບ້ານທີ່ຫຸ້ມລ້ອມຄົນທັງສອງຕ່າງກໍພາກັນອ້າປາກຄ້າງບໍ່ຕ່າງກັບແຂ້ລໍຖ້າເຫຍື່ອ.

"ຂ້ອຍກະຢາກເປັນຢູ່ໃດ໋." ສິຣິຫົວຂຶ້ນ. "ລາວຄົງຈະເປັນ ນັກຣົບສີມືດີສຸດຍອດ. ແລ້ວພໍ່ເຖົ້າເຢມົງລາວສ້າງວິລະກຳຫຍັງໄວ້ແດ່ບໍ່?" ຄຳວ່າ ນັກຣົບສີມືດີສຸດຍອດ ໄດ້ຫຼຸດອອກຈາກປາກຂອງສິຣິເປັນພາສາມົ້ງ ເຊິ່ງເຂົາເອງກໍຄິດບໍ່ອອກວ່າຕົນເອງຈື່ຈຳຄຳເວົ້ານີ້ຈາກໃສມາກ່ອນ.

ປ້າສວບກ່າວຄຳເວົ້າຄ່ອຍໆ ດ້ວຍທ່າທາງເຄັ່ງຂຶມ ຄ້າຍກັບວ່າເປັນການທົດສອບຢ່າງໜຶ່ງ. "ເຢມົງເປັນໝໍຜີຜູ້ຍິ່ງໃຫຍ່ສຸດ."

"ເຢມິງມີອຳນາດເໜືອທຳມະຊາດ." ຊັດເວົ້າສອດຂຶ້ນ. "ຊ່ວງໜຶ່ງພັນຫ້າສິບປີກ່ອນ, ທ່ານ ... ລາວ ... ປາບພວກສັດຕູຮອດຊາວພັນຄົນດ້ວຍເຂົາງົວອັນດຽວ."

"ໜຶ່ງພັນຫ້າສິບປີກ່ອນພຸ້ນຫວາ?" ສີຣິຫົວຂຶ້ນອີກເທື່ອໜຶ່ງ ແລະແລ້ວຊາວ ມົ້ງທຸກຄົນກໍພາກັນຫົວຂຶ້ນນຳສີຣິ ເບິ່ງຄືວ່າພວກເຂົາເປັນຜູ້ຟັງທີ່ດີ. "ໜ້າຕາຂອງຂ້ອຍມັນອາດຈະຟ້ອງໃຫ້ເຫັນເຖິງໄວອາຍຸກໍຈິງ ແຕ່ໜຶ່ງພັນຫ້າສິບປີພຸ້ນຫວາ? ຢ່າໄດ້ໃສ່ຮ້າຍປ້າຍສີກັບຜູ້ເຖົ້າເລີຍເທາະ."

ນາໄບເວົ້າຂຶ້ນ. "ຕອນນັ້ນທ່ານບໍ່ໄດ້ອາໄສຢູ່ໃນຮ່າງຜູ້ນີ້. ທ່ານຄົງບໍ່ສາ ມາດຂັບໄລ່ທະຫານຫວຽດນາມພຽງເຄິ່ງຄົນດ້ວຍຮູບຮ່າງທີ່ເຫັນໃນປັດຈຸບັນນີ້ດອກ."

"ຂອບໃຈທີ່ອິດສາຍ້ອງ." ນັ້ນແມ່ນຄຳເວົ້າທີ່ເປັ່ງອອກມາເປັນພາສາມົ້ງ ເຫັນໄດ້ວ່າມັນເປັນພາສາທີ່ເວົ້າໄດ້ແບບງ່າຍໆ ພຽງແຕ່ຢູ່ຮ່ວມໂອ້ລົມສົນທະນາກັບຜູ້ຄົນເຫຼົ່ານີ້ບໍ່ພໍເທົ່າໃດຊໍ້າ. "ແຕ່ຖ້າຂ້ອຍປ່ຽນຮ່າງໃໝ່ແລ້ວພວກເຈົ້າຊິຮູ້ໄດ້ແນວໃດວ່າເປັນຂ້ອຍ?"

ໃນທີ່ສຸດ, ຮ້ອຍເອກໜຸ່ມກໍໝົດຄວາມສົນໃຈກັບເລື່ອງທີ່ໄຮ້ສາລະຢູ່ຕໍ່ໜ້າ ແລ້ວກໍອອກໄປກິນເຂົ້າກັບພວກທະຫານຍາມ.

"ເຮືອນຮ່າງເປັນສິ່ງປ່ຽນແປງໄດ້ງ່າຍ ..." ຊັດອະທິບາຍ, "ແຕ່ດວງຕາຄືສິ່ງທີ່ບໍ່ມີມື້ປ່ຽນແປງ ທ່ານບໍ່ສາມາດແທນທີ່ສີຂຽວມໍລະກົດເຊັ່ນກັບນໍ້າຈືດໄດ້. ໄຊ ເຊິ່ງແມ່ນເທບພະເຈົ້າແຫ່ງສາຍຮຸ້ງ ໄດ້ເປັນຜູ້ເນລະມິດໃຫ້ກັບສອງໂຕກາຍເປັນແກ້ວມໍລະກົດເພື່ອຕອບແທນໝໍຜີຄົນທຳອິດທີ່ເສກໃຫ້ຮ່າງກາຍຂອງຕົນມີສີສັນສວຍງາມຂຶ້ນ ມໍລະກົດສອງເມັດນີ້ເປັນສິ່ງສືບທອດຈາກຮ່າງກາຍໜຶ່ງໄປຍັງຮ່າງກາຍໜຶ່ງ."

ນັ້ນກໍແມ່ນດວງຕາຂອງສີຣິນັ້ນເອງ. ທຸກສິ່ງທຸກຢ່າງສືບເນື່ອງມາຈາກຄວາມຈິງທີ່ວ່າ ເຂົາມີດວງຕາສີຂຽວ. ຕະຫຼອດຂອງການສົນທະນາໂຕ້ຖຽງກັນໄປມາ ແລະຕາມດ້ວຍອາຫານການກິນ ສີຣິຍັງບໍ່ສາມາດໂນ້ມນ້າວໃຫ້ພວກຊາວບ້ານປັກໃຈເຊື່ອວ່າລາວບໍ່ແມ່ນໝໍຜີອາຍຸໜຶ່ງພັນປີ ແມ່ນແຕ່ລາວຈົກເອົາໃບຂັບຂີ່ລົດຈັກອອກມາໃຫ້ພວກເຂົາເບິ່ງກໍຕາມ ເຖິງປານນັ້ນກໍຍັງບໍ່ມີໃຜເຊື່ອຢູ່ດີ. ເຖິງແມ່ນພວກຊາວບ້ານຈະພາກັນເກ້ຍກ່ອມໃຫ້ລາວນອນພັກຄ້າງຄືນໃນໝູ່ບ້ານ ແລະຮ້ອຍເອກໜຸ່ມກັບຄົນຂັບລົດກໍພາກັນເດີນທາງກັບກ່ອນ ປ່ອຍໃຫ້ສີຣິຢູ່ພາຍໃຕ້ການດູແລຂອງກອງຫຼອນບ້ານ ລາວກໍຍັງຮູ້ສຶກບໍ່ສະບາຍໃຈຢູ່ດີ ລາວຮູ້ສຶກລະອາຍໃຈເປັນຢ່າງຍິ່ງທີ່ໄດ້ຮັບການຕ້ອນຮັບຢ່າງອົບອຸ່ນດ້ວຍອາຫານດີໆ ລວມທັງບ່ອນຢູ່ບ່ອນນອນທີ່ແສນຈະສະດວກສະບາຍຍ້ອນລາວພຽງແຕ່ຄ້າຍຄືກັບເຢມິງ ແຕ່ລາວກໍຮູ້ສຶກມີຄວາມສຸກບໍ່ໜ້ອຍ.

ຢ່າງໃດກໍຕາມ ໜ້າວຽກທີ່ສີຣິຕ້ອງໄດ້ແກ້ໄຂໃຫ້ມັນລຸລ່ວງນັ້ນກໍໄດ້ຖືກພັກໄວ້ກ່ອນ

ຊົ່ວຄາວ ແຕ່ລາວເອງກໍຄິດວ່າການທີ່ສວມບົດບາດເປັນບຸກຄົນທີ່ຊາວບ້ານໃຫ້ຄວາມເຄົາລົບນັບຖືນັ້ນ ສຸດທ້າຍແລ້ວກໍຈະເຮັດໃຫ້ຕົນໄດ້ຄຳຕອບຫຼາຍກວ່າຮ້ອຍເອກແນ່ນອນ. ເຂົາກຳລັງນັ່ງລົ້ມລອງລົດຊາດຂອງເຫຼົ້າຂາວລົດໝາກໄມ້ຂວດທີສອງກັບຜູ້ຊາຍສູງໄວຈຳນວນໜຶ່ງຢູ່ສາລານ້ອຍໆ ເຊິ່ງຕັ້ງຢູ່ສົ້ນສຸດຂອງໝູ່ບ້ານ.

"ຂ້ອຍຢາກບອກຊຸມເຈົ້າວ່າເປັນຫຍັງຂ້ອຍຈິ່ງມາບ່ອນນີ້." ເຂົາເວົ້າຂຶ້ນ.

ຊັດຝ້າວເວົ້າຕັດບົດ. "ພວກເຮົາຮູ້ແລ້ວວ່າທ່ານມານີ້ຍ້ອນຫຍັງ."

"ພວກເຈົ້າຮູ້ຊັ້ນເບາະ? ຄັນຊັ້ນຍ້ອນຫຍັງລະ?"

"ທ່ານມາຍ້ອນການຕາຍຂອງທະຫານ."

"ຖືກເປະເລີຍ ຊັ້ນບອກຂ້ອຍໄດ້ບໍ່ວ່າພວກເຂົາຕາຍຍ້ອນຫຍັງ?"

"ບອກໄດ້."

ປ້າສວບຄົນໜ້າຮັກມາເຖິງຊ່ວງເວລາສຳຄັນພໍດີ ລາວແມ່ນຜູ້ຜະລິດທັງຈຳໜ່າຍເຄື່ອງລາງຂອງຄັງ ອີກທັງຍັງຖືມາຕິດຕົວຫອບໃຫຍ່ມາວາງໄວ້ໜ້າໂຕະ.

ຊັດເລີ່ມບໍ່ພໍໃຈ. "ສວບ, ນີ້ແມ່ນການລົມເລື່ອງວຽກເລື່ອງງານຂອງພວກຜູ້ຊາຍໃດ໋ນີ້."

"ຂໍໂທດຫຼາຍໆ ອ້າຍ ແຕ່ນີ້ຊິມາອິດຖ້າຈົນຮອດຕອນເຊົ້າບໍ່ໄດ້ໃດ." ລາວວາງພວກເຄື່ອງລາງທີ່ຫ້ອຍຕ່ອງແຕ່ງທັງລູກຕຸ້ມກັບພະເຄື່ອງ ແລະວັດສະດຸທີ່ໃຊ້ໃນພິທີທາງສາສະໜາ ແລະສິ່ງສັກສິດຕ່າງໆ ໄວ້ເທິງໂຕະຕໍ່ໜ້າສີຣິ ພ້ອມຫັນຫຼັງກັບ ສ່ວນສີຣິກໍຫົວຂຶ້ນ.

"ໂອ້ຟ້າເອີຍ! ຄືມາຫຼາຍກະດໍ້ແທ້ ຢ່າບອກໃດວ່າຂ້ອຍຕ້ອງສວມເຄື່ອງພວກນີ້ທັງໝົດ." ຜູ້ຊາຍຄົນອື່ນໆ ກໍຫົວຂຶ້ນເຊັ່ນກັນ.

ສວບແກວ່ງຫົວໄປມາ. "ບໍ່ດອກ ເຢມິງ ໃຫ້ເລືອກເອົາແຕ່ອັນດຽວເທົ່ານັ້ນ ເພາະມີອັນໜຶ່ງທີ່ຂ້ອຍປຸກເສກດ້ວຍຄາຖາຂອງທ່ານ."

"ເລືອກເອົາໂຕໃດລະ?"

"ແລ້ວທ່ານຊິຮູ້ເອງດອກ."

"ຮູ້ແນວໃດ?"

"ມັນຫາກຊິມາຫາທ່ານເອງ."

ສີຣິເຮັດຄິ້ວສົນເຂົ້າ ພ້ອມກົ້ມແນມເບິ່ງຫຼຽນປະມານສາມສິບອັນທີ່ກອງໄວ້ຢູ່ຕໍ່ໜ້າຖ້າລາວຢິບຖືກອັນຜິດ ຄົນພວກນີ້ກໍຈະເຊື່ອແນ່ນອນວ່າລາວແມ່ນທ່ານໝໍຊັນນະສູດສິບ ແຕ່ກໍມີໂອກາດເປັນໄປໄດ້ທີ່ລາວຈະຈັບຖືກອັນຜິດຫຼາຍກວ່າ ລາວຮູ້ດີວ່າມັນອາດຈະ

ເປັນການທຳລາຍບັນຍາກາດດີໆ ໃນຄ່ຳຄືນນີ້ ແຕ່ບາງທີມັນອາດຈະເປັນການດີທີ່ໄດ້ຮູ້ຄວາມຈິງ.

ສິຣິເອື້ອມມືໄປທີ່ໂຕະບ່ອນທີ່ເຄື່ອງລາງອັນໃຫຍ່ກວ່າໝູ່ວາງຢູ່ ລັກສະນະຂອງມັນເປັນກ້ອນໃຫຍ່ເກາະກະທັງຂີ້ຮ້າຍແຖມມີແຕ່ຂີ້ຝຸ່ນໂອບຈົນເຕັມ. ລາວຮູ້ສຶກໝັ້ນໃຈວ່າຖ້າປ້າສວບຫາກເສກມົນຄາຖາໃສ່ເຄື່ອງລາງອັນນີ້ໃຫ້ແກ່ຕົນ ລາວຈະຕ້ອງຈຸ່ມ ຫຼືເສີມມັນດ້ວຍນ້ຳມັນ ຫຼືຢ່າງໜ້ອຍກໍພຽງແຕ່ກຳຈັດຂີ້ຝຸ່ນອອກໄປ ຖືເປັນເຫດຜົນງ່າຍພໍສົມຄວນທີ່ລາວຕ້ອງເລືອກເຄື່ອງລາງເຄື່ອງນີ້.

ພໍແຕ່ເຂົາເອື້ອມມືເພື່ອຈະຢື້ເອົາເຄື່ອງລາງທີ່ໝາຍຕາໄວ້ ທັນໃດນັ້ນກະດຸມອັນລຸງລັງຢູ່ຂໍ້ແຂນເສື້ອຂອງເຂົາກໍໄດ້ເກາະຕິດເອົາບາງສິ່ງບາງຢ່າງໄວ້ ພໍເມື່ອເຂົາຍົກແຂນຂຶ້ນເບິ່ງກໍພົບກັບແກ້ວປຣິຊຳສີດຳຂະໜາດນ້ອຍ ທີ່ຫ້ອຍຕ່ອງແຕ່ງໄວ້ເທິງສາຍໜັງສີທອງ. ເຄື່ອງລາງຊະນິດນັ້ນເກົ່າແກ່ຫຼາຍ ແມ່ນແຕ່ຕົວອັກສອນ ຫຼືພາບທີ່ຈາລຶກໄວ້ໃນຫັ້ນກໍຫຼຸ້ຍຫ້ຽນອອກເກືອບໝົດ.

"ແມ່ນແລ້ວ." ປ້າສວບເວົ້າທັງຖອນລົມຫັນໃຈອອກຮູດໃຫຍ່. "ແມ່ນ

ຄັກ."

"ບໍ່ຝ້າວເທື່ອ ມັນບໍ່ຍຸຕິທຳຊ້ຳໃດ ຕ້ອງເລືອກຮອດສາມເທື່ອບໍ່ແມ່ນຫວາ?"

ແຕ່ກໍບໍ່ທັນເສຍແລ້ວ. ສວບເກັບຮວບຮວມຫຼຽນທີ່ບໍ່ຖືກເລືອກດ້ວຍຮອຍຍິ້ມແຫ່ງຄວາມເພິ່ງພໍໃຈ ກ່ອນຈະຍ່າງອອກໄປ ປ່ອຍໃຫ້ພວກຜູ້ຊາຍພາກັນຖົກຖຽງກັນເປັນຮຸ່ມໆ ເລື່ອງເຄື່ອງລາງຊິ້ນນັ້ນ.

"ແປກແທ້ນໍ." ສິຣິຍອມຮັບ.

"ທ່ານບໍ່ໃສ່ມັນເທື່ອບໍ?" ຊາຍຄົນໜຶ່ງຖາມຂຶ້ນ.

"ບໍ່ຝ້າວເທື່ອ ຂ້ອຍຍັງບໍ່ທັນຢາກເຊື່ອກັບເລື່ອງໄຮ້ສາລະພວກນີ້."

"ຄັນຊັ້ນສະແດງວ່າທ່ານຄົງຈະບໍ່ຢາກຮູ້ເລື່ອງການຕາຍຂອງພວກທະຫານຕີເນາະ." ຊຸດເວົ້າຂຶ້ນ.

"ຢ່າບອກໃດວ່າມັນເປັນເລື່ອງໄສຍະສາດຫັ້ນນະ." ສິຣິເວົ້າພ້ອມສິ່ງສຽງຫົວຂຶ້ນເພື່ອປິດບັງຄວາມບໍ່ພໍໃຈເອົາໄວ້ ແຕ່ກໍສັງເກດເຫັນວ່າ ເລົາຈິງ ພ້ອມກັບຜູ້ຊາຍຜິວດຳມືດຈົນສິຣິເກືອບແນມບໍ່ເຫັນນັ້ນ ສະແດງທ່າທາງແບບຄົນສຳນຶກຜິດ ເນື່ອງຈາກມີຕຳແໜ່ງເປັນຫົວໜ້າໝູ່ບ້ານ ຊຸດຈຶ່ງເຮັດໜ້າທີ່ເປັນຄົນເລົ່າເລື່ອງ ຂະນະທີ່ຄົນອື່ນໆກໍໄດ້ແຕ່ເຫຍັນເຫຼົ້າໃສ່ຈອກແລ້ວນັ່ງເອ່ນຫູຟັງດ້ວຍທ່າທາງສະບາຍ.

"ພວກທະຫານມາປະຈຳການຢູ່ນີ້ໄດ້ເຄິ່ງປີແລ້ວ ພວກເຂົາບອກວ່າຊິມາຊ່ວຍເຫຼືອ

ພວກເຮົາ ພວກເຂົາຍັງບອກວ່າຕ້ອງໄດ້ຖາງປ່າອອກກ່ອນເພື່ອໃຫ້ພວກເຮົາພໍມີດິນວ່າງເຮັດບ່ອນປູກພືດຜັກແທນປູກຝິ່ນ."

"ພວກເຮົາປູກຝິ່ນມາແຕ່ປຸແຕ່ປູ້ພຸ້ນແລ້ວ ຄວາມຈິງພວກເຮົາກະບໍ່ໄດ້ອີ່ຫຍັງຫຼາຍຈາກມັນດອກ ບາງເທື່ອກະເອົາມາເຮັດຢາ ບາງເທື່ອກະກິນຍາມບໍ່ມີແນວກິນ ແຕ່ມັນກໍເປັນພືດເສດຖະກິດຊະນິດດຽວທີ່ພວກເຮົາມີມາແຕ່ດົນແຕ່ນານ ເຊິ່ງພວກຝຣັ່ງກໍເຄີຍຊື້ນຳພວກເຮົາທຸກກິໂລທີ່ພວກເຮົາປູກໄດ້ ລວມທັງພວກອາເມລິກາກໍຊື້ໄປກັ່ນເຮັດຢາໃນວຽງຈັນ ພ້ອມສົ່ງຂາຍໃຫ້ພວກທະຫານຢູ່ໄຊ່ງ່ອນ."

"ແຕ່ຄົນຜູ້ດີຂອງລັດຖະບານແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວຊ້ຳພັດຄິດວ່າມັນເປັນໄພອັນຕະລາຍ ພວກເຂົາບອກໃຫ້ພວກເຮົາຫັນໄປປູກແນວອື່ນແທນ ເຊິ່ງຈະປູກຫຍັງກໍໄດ້ທີ່ມັນບໍ່ເປັນພິດເປັນໄພກັບສຸຂະພາບ. ຖ້າຖາມຂ້ອຍຈັກຄຳຂ້ອຍກະພໍຊິບອກວ່າ ພວກເຂົາພຽງແຕ່ຕ້ອງການຢາກໃຫ້ພວກເຮົາມີລາຍໄດ້ຫຼຸດລົງຈິ່ງພໍໝົດປັນຍາໄປສະໜັບສະໜູນໃຫ້ເງິນແກ່ຄົນທີ່ກໍ່ຈະລາຈົນ."

"ພວກເຮົາໄດ້ແຕ່ມົນຕາເມົ້າໆ ແນມເບິ່ງພວກທະຫານຖາງປ່າ ແລະພວກເຮົາກໍໄດ້ແຕ່ຄອຍແລ້ວຄອຍອີກວ່າພວກເຂົາຈະເອົາພັນປູກແນວໃດມາໃຫ້ພວກເຮົາຫວ່ານລົງດິນ ທັງທີ່ພວກເຂົາພາກັນຖາງແລ້ວຕັ້ງຫຼາຍເຮັກຕາ ທັງສືບຕໍ່ຖາງໄປເລື້ອຍໆ."

ສີຣິໄດ້ແຕ່ແກວ່ງຫົວ. "ຂ້ອຍກະຄິດໝັກຄືກັນ. ເຈົ້າຮູ້ບໍວ່າພວກເຂົາເອົາໄມ້ທ່ອນໄປຂາຍຢູ່ໃສ?"

"ໂອ ຮູ້ແທ້!" ຊາຍຄົນດຳກ່າວ. "ມັນຖືກສົ່ງໄປທາງຫວຽດນາມ ພ້ອມສົ່ງຜ່ານໄປຟໍໂມຊາ ປະເທດໃຕ້ຫວັນປະຈຸບັນເຊິ່ງເປັນສັດຕູຂອງຈີນ."

"ແມ່ນຫວາ? ຂ້ອຍລະອິດສົງໄສບໍ່ໄດ້ວ່າກຳໄລຊຸມນີ້ທາງລັດຖະບານໄດ້ສ່ວນແບ່ງນຳຫຼາຍປານໃດ."

"ສຳລັບພວກເຮົາມັນກະບໍ່ຕ່າງກັນດອກ." ຊັດເວົ້າຂຶ້ນ. "ຖ້າຜົນກຳໄລຕົກເປັນຂອງທາງກອງທັບ ຫຼືລັດຖະບານ ຊີວິດພວກເຮົາກໍບໍ່ມີຫຍັງປ່ຽນແປງ ພວກເຮົາບໍ່ໄດ້ປະໂຫຍດຫຍັງເລີຍ."

ເລົາຈົ່ງດອດສຽງຂຶ້ນມາແຕ່ສົ້ນສຸດຂອງໂຕະໄມ້ອັນຍາວໆ ເຊິ່ງເປັນເຄື່ອງທີ່ລະນຶກຊິ້ນດຽວທີ່ຫຼົງເຫຼືອມາຈາກອາເມລິກາ. "ພວກສັດປ່າພາກັນປົບໜີຈາກແຂ້ວຄົມຂອງເລື່ອຍຕັດໄມ້ຈີນໝົດ ພວກເຮົາຈິ່ງຕ້ອງໄດ້ໄປລ່າສັດໄກອອກຕື່ມ ພວກຊາຍໜຸ່ມຫຼາຍຄົນຈຳຕ້ອງໄດ້ອອກຈາກບ້ານໄປລ່າສັດເປັນທິດສອງທິດ ສ່ວນນ້ຳໃນຫ້ວຍ ຮ່ອງຄອງບຶງກໍເປື້ອນຂຶ້ນຍ້ອນດິນໄຫຼເຊາະລົງມາແຕ່ເທິງພູ ແຕ່ມັນກະຄືຊິແມ່ນປັນຫາຂອງທຳມະຊາດຊື່ໆ ດອກ."

"ແມ່ນ ມັນເປັນພຽງປັນຫາທາງທຳມະຊາດເທົ່ານັ້ນແຫຼະ." ຊັດເວົ້າຕໍ່. "ພວກເຮົາເຄີຍປະສົບກັບຄວາມເຈັບໄຂ້ໄດ້ປ່ວຍມາແລ້ວຫຼາຍຕໍ່ຫຼາຍຄັ້ງເປັນຫຼາຍປີ ທັງຍັງລອດມາໄດ້ຮອດທຸກມື້ນີ້ ເຊິ່ງມັນກະບໍ່ແມ່ນສິ່ງທີ່ເຮັດໃຫ້ພວກເຮົາຢ້ານຊໍ້າດອກ ແຕ່ເລື່ອງທີ່ເຮັດໃຫ້ພວກທະຫານຂອງທ່ານຕາຍຫັ້ນ ບໍ່ແມ່ນປັນຫາຂອງທຳມະຊາດດອກ ຄືທີ່ທ່ານຮູ້ຫັ້ນລະເຢນິງ ວ່າຢູ່ໃນປ່າຫັ້ນມີພວກວິນຍານທີ່ມີພະລັງອຳນາດອາໄສຢູ່. [ສິຣິເຮັດຕາລັອກແລັກໄປມາ.] ແຕ່ວິນຍານສ່ວນໃຫຍ່ແລ້ວແມ່ນເປັນພວກມີຈິດໃຈເມດຕາປານີ ຄອຍໃຫ້ຄວາມຊ່ວຍເຫຼືອ ແຕ່ຂ້າງນອກກໍຍັງມີພວກວິນຍານເລ່ລ້ອນທີ່ຊົ່ວຮ້າຍປະປົນມານຳຄືກັນ ວິນຍານເຫຼົ່ານີ້ຫຼຸດລອຍມາຈາກຮ່າງຄົນທີ່ຕາຍຫຼູງຕາຍຫ່າ ທັງພາກັນມາສິງຢູ່ຕາມຕົ້ນໄມ້ທີ່ມີພວກນາງໄມ້ ກັບພູດຜີປີສາດສະຖິດຢູ່."

"ຊັ້ນກໍໝາຍຄວາມວ່າ ຄ້າຍກັບການພັກເຊົາແບບບໍ່ແຄສາຍຕາເຈົ້າຂອງບ້ານແມ່ນບໍ?"

ຊັດບໍ່ສົນໃຈນຳທ່ານໝໍທີ່ກຳລັງຍິ້ມຢູ່. "ຍາມພວກເຮົາໄປໂຄ່ນຕົ້ນໄມ້ເພື່ອມາປຸກຕູບ ຫຼືເອົາມາເປັນຄ້າງສຳລັບບ່ອນປູກຝັງ ພວກເຮົາກໍໄດ້ຄອບໄດ້ຂໍນຳວິນຍານທີ່ສິງຢູ່ໃນໄມ້ຊຸມນັ້ນ, ບາງເທື່ອພວກເຮົາກໍເອົາເຄື່ອງເສັນໄຫວ້ໄປຖວາຍ ບາງເທື່ອກໍເຮັດພິທີບວງສວງຂຶ້ນກັບໝໍຜີຂອງພວກເຮົາເຫັນວ່າເໝາະສົມ. ປົກກະຕິແລ້ວ, ພວກວິນຍານກໍຈະໜີອອກໄປສິງຢູ່ຕົ້ນໄມ້ອື່ນ ໂດຍບໍ່ເຮັດໃຫ້ພວກເຮົາເດືອດຮ້ອນຫຍັງເລີຍ ເພາະແນວໃດພວກເຮົາກໍຕ້ອງໄດ້ຢູ່ຮ່ວມກັນທັງໝົດ ທັງແບ່ງປັນຊັບພະຍາກອນທີ່ມີໃຫ້ໃຊ້ນຳກັນ. ເຊິ່ງນັ້ນຄືວິຖີທີ່ພວກເຮົາປະຕິບັດສືບທອດກັນມາ."

"ຕົ້ນໄມ້ບາງຕົ້ນແຖວນີ້ມີອາຍຸພໍເທົ່າກັບຜືນດິນພຸ້ນລະ ພວກວິນຍານທີ່ສິງຢູ່ຈິ່ງມີພະລັງອຳນາດຫຼາຍ ພໍເມື່ອພວກທະຫານມາຮອດ ກໍບໍ່ພາກັນຂໍອະນຸຍາດຈາກພວກວິນຍານ ... ບໍ່ສະແດງຄວາມເຄົາລົບນັບຖື ... ບໍ່ລົ້ມຄວາຍເພື່ອທຳພິທີເສັນໄຫວ້ ຫຼືແມ່ນແຕ່ປຶກສາກັບໝໍຜີ ... ພວກເຂົາພຽງແຕ່ລົງມືຕັດ ແລ້ວກໍຕັດຕົ້ນນີ້ຕໍ່ໃສ່ຕົ້ນອື່ນພ້ອມຫັ່ນເປັນໄມ້ທ່ອນຂົນອອກໄປໃສ່ລົດບັນທຸກ ... ພວກເຂົາພາກັນຕັດໄມ້ເປັນຮ້ອຍເປັນພັນໆ ຕົ້ນ.

"ທ່ານພໍຊິເບິ່ງອອກຢູ່ບໍ? ແມ່ນແຕ່ພວກວິນຍານທີ່ມີຈິດເປັນກຸສົນ ກໍຍັງກາຍເປັນວິນຍານທີ່ຊົ່ວຮ້າຍໄດ້ ເຊິ່ງວິນຍານທຸກດວງລ້ວນແຕ່ລໍຖ້າໂອກາດແກ້ແຄ້ນເພື່ອເອົາຄືນໃຫ້ສະສົມ."

"ພວກວິນຍານທີ່ສິງຢູ່ຕາມຕົ້ນໄມ້ເປັນຜູ້ຂ້າທະຫານຊັ້ນບໍ?" ສິຣິຍົກເຫຼົ້າເຂົ້າປາກແລ້ວກືນລົງທ້ອງຈົນໝົດບາດດຽວ ແລະແລ້ວຈອກຂອງລາວກໍຖືກເຫຍັ້ນຕື່ມໃສ່ອີກຄັ້ງຈົນເຕັມ. "ພວກວິນຍານຂ້າຄົນແບບໃດ? ຟ້າຜ່າບໍ?"

“ເຂົ້າສິງ.”

“ໂອ ບໍ່ຕິເບາະ.”

ເລົາຈິງຜູ້ບໍ່ມີແຂ້ວໃນປາກຈັກເຫຼັ້ມ ຊະໂງກໜ້າມາທາງໂຕະພ້ອມຈ້ອງມອງເຂົ້າໃສ່ໜ່ວຍຕາຂອງສີຣິ.

“ຕົວທ່ານເອງຫັ້ນແຫຼະໜ້າຈະຮູ້ເລື່ອງນັ້ນຫຼາຍກວ່າທຸກຄົນ.”

“ຂ້ອຍນີ້ຫວາ?”

“ລອງຄິດຫາຄວາມຝັນຂອງທ່ານເບິ່ງກ່ອນແມ.” ຂົນໜາວຂອງສີຣິຊີ້ຂຶ້ນເກ່ເດ່.

“ເຈົ້າຮູ້ຊັ້ນເບາະວ່າຂ້ອຍຝັນຫຍັງ?”

“ຂ້ອຍຮູ້ວ່າທ່ານບໍ່ສາມາດເຊື່ອງຊ້ອນພວກວິນຍານໄວ້ໄດ້ອີກແລ້ວ.”

“ຂ້ອຍ ...”

“ອ້າຍເລົາຈິງລາວເປັນໝໍທຳ ຫຼືຮ່າງຊົງຂອງພວກເຮົາ. ລາວຮູ້ເຫັນໝົດທຸກຢ່າງ ລາວຍັງຮູ້ວ່າທ່ານເປັນໝໍຜີ.”

“ຂ້ອຍບໍ່ໄດ້ຮູ້ເອງດອກ.” ການເວົ້າສອດຂຶ້ນແບບບໍ່ມີຜູ້ໃດເຊີນຂອງເລົາຈິງ ຊ່າງໜ້າລຳຄານບໍ່ຕ່າງຫຍັງກັບຮອຍຍິ້ມທີ່ເຫັນແຕ່ເຫືອກຂອງເຂົາ.

“ພວກໝາພຸ້ນນະຮູ້.”

“ໝາອີ່ຫຍັງຢູ່ໃສອີກລະ.”

“ໝາທຸກໂຕຮູ້ວ່າທ່ານເປັນໃຜ ພວກມັນຍັງຮູ້ອີກວ່າແມ່ນໃຜເຂົ້າໄປສິງຢູ່ໃນຕົວທ່ານ.”

“ໃນກະໂຕຂ້ອຍມີແນວດຽວກໍຄືຂ້ອຍຮູ້ສຶກວຸ້ນທ້ອງ ເຫຼົ້ານີ້ມັນກຳລັງເຮັດໃຫ້ຫົວຂ້ອຍໜັກຕຶ້ງແລ້ວ.”

“ມັນບໍ່ແມ່ນດອກ. ທຸກຢ່າງມັນມາຈາກປ່າທັງນັ້ນ.”

ກຸ່ມຜູ້ຊາຍທີ່ນັ່ງອ້ອມຮອບສີຣິເລີ່ມຝ່າມົວ ເຫຼົ້າພວກນີ້ກໍແຮງກວ່າທີ່ຄິດແລະຫົວຂໍ້ຂອງການສົນທະນາກໍເລີ່ມເຮັດໃຫ້ເຂົາຮູ້ສຶກຫວັ່ນກົວຂຶ້ນເລື້ອຍໆ ແຕ່ເລິກໆ ລົງໄປໃນໃຕ້ຈິດວິນຍານຂອງນັກວິທະຍາສາດ ຜູ້ທີ່ບໍ່ເຊື່ອໃນເລື່ອງລຶກລັບຂອງເຂົານັ້ນ ເຂົາຊ້ຳພັດຢາກໃຫ້ເລື່ອງຜີສາງ ຫຼືຮ່າງຊົງທີ່ໂອ້ລົມກັນທັງໝົດນັ້ນເປັນເລື່ອງຈິງ. ສີຣິຢາກໃຫ້ສະໝອງຂອງຕົນມີເລື່ອງອື່ນປະປົນຢູ່ນຳ ເຊິ່ງເປັນເລື່ອງອື່ນທີ່ໄຮ້ເຫດຜົນ, ຕະຫຼອດຊີວິດຂອງເຂົາຖືກປິດກັ້ນ ທັງຄອບງຳດ້ວຍຄວາມເຊື່ອທາງວິທະຍາສາດ ແລະເຂົາກໍພ້ອມແລ້ວທີ່ຈະປົດປ່ອຍມັນໃຫ້ເປັນອິດສະຫຼະ.

ແຕ່ເລື່ອງນີ້ຫວາ? ທຸກຢ່າງເປັນພຽງການສົນທະນາແບບມະລຳມະລອຍ ... ທຸກຢ່າງເປັນພຽງການສົນທະນາທີ່ໄຮ້ສາລະ ເຊິ່ງຍັງແຝງຊ້ອນໃນຄວາມເຊື່ອເລື່ອງໂຊກ

ລາງຂອງພວກມົ້ງເຖົ້າຂີ້ເມົາ, ພວກເຂົາໂຊກດີທີ່ຍັງເດົາຖືກ ເພາະໃຜໆ ຕ່າງກໍມີຄວາມຝັນທັງນັ້ນ ສ່ວນເລື່ອງໝາກໍເປັນພຽງເລື່ອງເດົາແບບມົ້ວໆ ສະຫຼຸບແລ້ວມັນກໍເປັນພຽງຄໍາເວົ້າມົ້ວໆ ແບບຈັບຕົ້ນຊົນປາຍບໍ່ໄດ້ຊື່ໆ. ສີຣິລຸກຢືນຂຶ້ນແບບເຊຊັດເຊຊ້າຍ ທັງກ່າວຂໍອະນຸຍາດກັບໄປພັກຜ່ອນ ພ້ອມຫາໃຜຄົນໜຶ່ງພາຕົນໄປນອນ. ນໍ້າເຫຼົ້າໄດ້ເປັນຕົວການເລີ່ມເຮັດໃຫ້ເຂົາສັບສົນງຸນງົງ. ຊາຍສອງຄົນຍ່າງມາຫາເຂົາພ້ອມຮອຍຍິ້ມ ກ່ອນຈະພະຍຸງເອົາແຂນທັງສອງຂ້າງແລ້ວພາເຂົາອອກໄປ ແຕ່ພໍໄປຮອດໄລຍະໜຶ່ງ ຊັດກໍຮ້ອງດອດມາໃສ່.

"ເຢມົງ." ສີຣິ ພ້ອມຊາຍສອງຄົນພາກັນຫັນຫຼັງກັບຄືນມາ. "ຂ້ອຍເວົ້າພາສາລາວໄດ້ບໍ່ພໍເທົ່າໃດຄໍາພໍເອົາຕົວລອດ ແຕ່ພວກຜູ້ຊາຍທີ່ຢູ່ນີ້ບໍ່ມີໃຜເວົ້າລາວໄດ້ເລີຍ."

ນັ້ນຄືຄວາມຄິດສຸດທ້າຍທີ່ວຽນວົນຢູ່ໃນຫົວສະໝອງຂອງສີຣິ. ຊາຍສອງຄົນພະຍຸງເອົາສີຣິໄປທີ່ຕູບຮັບແຂກ ພ້ອມຄ່ອຍປະຄອງໃຫ້ເຂົາລົ້ມຫົວນອນ ແຕ່ສີຣິຊໍ້າພັດຈື່ຫຍັງບໍ່ໄດ້ເລີຍ, ເຂົາໝົດສະຕິຕັ້ງແຕ່ກ່ອນໜ້ານັ້ນດົນສົມຄວນ.

**********

ເມື່ອຄໍານຶງເຖິງເລື່ອງທີ່ໂອ້ລົມກັນລວມທັງບັນຍາກາດທັງມວນບວກກັບເຫຼົ້າທີ່ດື່ມເຂົ້າໄປກໍບໍ່ເຫັນມີຫຍັງຕ້ອງປະຫຼາດໃຈແຕ່ຢ່າງໃດ ແຕ່ຄວາມຝັນໃນຄືນນັ້ນຊ່າງເປັນພາບທີ່ເຍົ້າຍວນຊວນຫຼົງໄຫຼໜັກໜາ.

ສີຣິແຕ່ງກາຍຄ້າຍຄືກັບຊາວມົ້ງຢ້ອນຍຸກເຂົ້າໄປໃນຊ່ວງໜຶ່ງພັນປີກ່ອນ, ຜູ້ບັນດານຝັນທີ່ຍິ່ງໃຫຍ່ພຽງຄົນດຽວເທົ່ານັ້ນທີ່ຮູ້ເລື່ອງເຫດຜົນ, ລາວຂີ່ລົດຖີບຂອງຕຸ້ຍຜ່ານປ່າທີ່ເບິ່ງຄືກັບເທບນິຍາຍ, ບັນດາຕົ້ນໄມ້ທີ່ເຂົາແນມເຫັນກໍແປກຕາບໍ່ຄືກັບຕົ້ນໄມ້ທົ່ວໄປແຕ່ຊໍ້າພັດເປັນພວກວິນຍານທີ່ສິງສະຖິດຢູ່. ວິນຍານເຫຼົ່ານັ້ນພາກັນພັນໂອບຮອບເອົາຕົ້ນໄມ້ເລີ່ມແຕ່ຮາກໄມ້ໄປຈົນສຸດຢອດຟ້າ, ພວກເຂົາໃຈດີມີເມດຕາ ທັງໃຫ້ການຕ້ອນຮັບເປັນຢ່າງດີຄືກັບດັ່ງທີ່ຊັດວ່າໄວ້. ວິນຍານສ່ວນໃຫຍ່ແມ່ນແມ່ຍິງ ທັງເປັນຍິງສາວທີ່ງົດງາມ, ມີເສັ້ນຜົມຍາວເປັນສາຍຂອດປະສານເປັນໜຶ່ງດຽວກັບລາຍໄມ້.

ມັນເປັນບ່ອນທີ່ມີແຕ່ຄວາມຜາສຸກ ເຊິ່ງສີຣິກໍຍັງຮູ້ສຶກເບິ່ງຄືວ່າຮູ້ຈັກກັບພວກວິນຍານທຸກດວງ ແລະວິນຍານພວກນັ້ນກໍມັກນິດໄສລາວ ແຕ່ຍ້ອນສຽງດັງອຽດອາດຂອງລົດຖີບໄດ້ເປັນຕົວການປຸກໃຫ້ໝູປ່າສີດໍາທີ່ກໍາລັງນອນຫຼັບໄຫຼຢູ່ຂ້າງຫຼັງພຸ່ມໄມ້ຕ້ອງຕື່ນຂຶ້ນມາ ແຂ້ວຂອງມັນຍັງປາກົດມີຮອຍເລືອດຂອງເຫຍື່ອທີ່ຖືກຂ້າ, ພວກນາງໄມ້ພາກັນຮ້ອງເຕືອນສີຣິໃຫ້ຮູ້ເຖິງໄພອັນຕະລາຍທີ່ກໍາລັງຈະມາເຖິງ ແຕ່ປາກົດວ່າເຂົາເໜັງຕີງບໍ່ໄດ້ເລີຍ ສ່ວນລົດຖີບກໍແຂງຄ້າງຍ້ອນຂີ້ໝ້ຽງໂອບຫຸ້ມເອົາໄວ້ ມີພຽງສະຫວັນ

ເທົ່ານັ້ນທີ່ຮູ້ວ່າ ເຫດໃດສີຣິຈິ່ງບໍ່ລົງຈາກລົດຖີບ ແລ້ວແລ່ນໜີເພື່ອເອົາຕົວລອດ.

ໝູປ່າພຸ່ງເຂົ້າມາແບບບ້າຄັ່ງ ສ່ວນສີຣິໄດ້ແຕ່ເງີຍໜ້າຂຶ້ນແນມເບິ່ງພວກວິນຍານ ແຕ່ກໍບໍ່ເຫັນມີໃຜຈະແຜງລິດເດດ ຫຼືຊ່ວຍຫຍັງແກ່ເຂົາເລີຍ ພໍເມື່ອເຂົາແນມໄປທາງຫຼັງແຕ່ແລ້ວກໍມີແມ່ຍິງຮ່າງນ້ອຍຄົນໜຶ່ງປາກົດຂຶ້ນຢູ່ລະຫວ່າງເຂົາກັບໝູປ່າໂຕນັ້ນ. ນາງບໍ່ມີທ່າທີຢ້ານກົວແມ່ນແຕ່ໜ້ອຍດຽວ ແມ່ນແຕ່ຕອນທີ່ໝູປ່າໂດດຂຶ້ນຈາກພື້ນດິນແລ້ວທະຍານຜ່ານອາກາດເພື່ອຈະພຸ່ງເຂົ້າມາໃສ່ນາງ ກ່ອນທີ່ມັນເກືອບຈະກະແທກຕົວເຂົ້າເຖິງນັ້ນ ທັນໃດແມ່ຍິງຄົນນັ້ນກໍຍົກເຄື່ອງລາງສີດຳຈີ້ຂຶ້ນໃສ່ທາງໜ້າ ແລະແລ້ວກ້າມຊີ້ນລວມທັງຂົນຂອງໝູປ່າກໍປ່ຽນສະພາບກາຍເປັນແຜ່ນເຈ້ຍສີດຳທີ່ຖືກໄຟເຜົາຍັບຍ່ອຍ ລອຍລ່ອງໄປຕາມອາກາດໂດຍບໍ່ເປັນພິດເປັນໄພຫຍັງກ່ອນຈະຕົກລົງໃສ່ພື້ນດິນທັງມຸ່ນອຸ້ຍປຸ້ຍ.

ນາງຫັນໄປຫາສີຣິ ເຊິ່ງລາວເອງກໍໄດ້ແຕ່ຄາດຫວັງໄວ້ວ່າຈະໄດ້ເຫັນໃບໜ້າຫວານໆຂອງປ້າສວບ ແຕ່ຊ້ຳພັດແມ່ນໃບໜ້າຂອງຊາຍຊະລາປາກແດງດ້ວຍຄາບນ້ຳໝາກທີ່ນອນຕາຍຢູ່ຕີນຂອງພວກຊາຍຫວຽດນາມ ໃນຄວາມຝັນຄັ້ງກ່ອນ. (ຊາຍຊະລາຜູ້ນີ້ຄົງແປງຮ່າງເປັນຄົນອື່ນເພື່ອມາປາກົດຕົວຢູ່ໃນຄວາມຝັນຂອງເຂົາແນ່ນອນ.) ຊາຍຊະລາຄົນນັ້ນຮອດບໍ່ສົນໃຈສີຣິແມ່ນແຕ່ໜ້ອຍດຽວ ເຂົາເບັດໜ້າໄປທີ່ຕົ້ນໄມ້ພ້ອມກະຊາກເອົາວິນຍານທີ່ສິງຢູ່ຈາກຕົ້ນນີ້ຕໍ່ໃສ່ຕົ້ນອື່ນເຂົ້າໃສ່ໃນຂວດໂຄຄາ-ໂຄລາ ເຖິງແມ່ນວ່າຂວດນັ້ນຈະຍັງບໍ່ທັນເຕັມ ແຕ່ວິນຍານທັງໝົດກໍພາກັນຫາຍໄປຈາກໄມ້ທຸກຕົ້ນ ແລ້ວຊາຍຊະລາຄົນນັ້ນກໍມະຫັບມະຫາຍໄປເຫຼືອໄວ້ແຕ່ສີຣິຍັງນັ່ງຄ້າງຢູ່ເທິງລົດຖີບທີ່ເຕັມແຕ່ຂີ້ໝ້ຽງໂອບໄວ້ທ່າມກາງບັນດາຕົ້ນໄມ້ ເຊິ່ງຕອນນີ້ໄດ້ກາຍເປັນພຽງໄມ້ທຳມະດາໄປແລ້ວ.

ເຂົາໄດ້ຍິນສຽງຫຍໍ້າຕ້ອຍໆ ຈິ່ງຝ້າວຫຼຽວມອງໄປຂ້າງຫຼັງຜ່ານບ່າໄຫຼ່ຂອງຕົນແລະເຫັນວ່າພື້ນທີ່ປ່າດ້ານຫຼັງກາຍເປັນສີຂຽວສົດໃສ ສີດັ່ງກ່າວພໍແຕ່ມັນສະທ້ອນເຂົ້າສູ່ດວງຕາຂອງເຂົາປາກົດວ່າພວກມັນເຄື່ອນເໜັງເປັນເພືອບໆ ໃນລະຫວ່າງທີ່ຈ້ອງມອງຢູ່ນັ້ນ ແຜ່ນພົມສີຂຽວກໍຂະຫຍັບເຂົ້າມາໃກ້ກັບຕົວຂອງສີຣິທຸກຂະນະ ແລະເມື່ອມັນເຄື່ອນເຂົ້າມາໃກ້ພໍແລ້ວ ເຂົາຈິ່ງສາມາດບອກໄດ້ເລີຍວ່າມັນເປັນກຸ່ມບົ້ງກະເລັນສີຂຽວ. ເຂົາຢ້ອນມອງກັບໄປອີກ ປາກົດວ່າທຸກສິ່ງຢ່າງທີ່ຢູ່ຕາມທາງບ່ອນພວກບົ້ງຜ່ານໄປນັ້ນຖືກທຳລາຍຈົນບໍ່ເຫຼືອຊາກ ຍ້ອນຄວາມຫິວໂຫຍພວກບົ້ງກະເລັນຈິ່ງພາກັນກິນໝົດທຸກຢ່າງທີ່ຂວາງໜ້າ.

ເປືອກຕົ້ນໄມ້ທີ່ຢູ່ອ້ອມຮອບສີຣິຖືກຫຸ້ມແທ້ນກິນຈົນໝົດ ຕໍ່ມາກໍແມ່ນໃບໄມ້ເຊິ່ງຫາຍໄປໃນພິບຕາດຽວ ແລະແລ້ວພວກລຳຕົ້ນກໍຄ່ອຍໆ ບົກວາບລົງຢ່າງຊ້າໆ. ເມື່ອ

ບໍ່ມີຕົ້ນໄມ້ໃຫ້ກິນອີກແລ້ວ, ພວກບົ້ງກະເລັນຈິ່ງແນມເຫັນສີຣິ. ພວກມັນພາກັນຄືບຄານເຂົ້າມາຈົນຖ້ວມຕົນຕົວຂອງເຂົາລວມທັງລົດຖີບຂອງຕຸ້ຍ ຂະນະທີ່ສີຣິໄດ້ແຕ່ນັ່ງແນມເບິ່ງຢ່າງສະຫງົບຢູ່ນັ້ນ ພວກບົ້ງກໍຄ່ອຍໆ ຫຸ້ມແຫ້ນກິນຮ່າງຄີງຂອງເຂົາຄືກັບພວກມັນກິນສິ່ງອື່ນໆ ເຂົາຮູ້ສຶກຄັນຍຸບຍິບທັງກະດຽມຄີງ ແຕ່ໃນບໍ່ຊ້າເຂົາກໍຮູ້ສຶກວ່າຕົນເອງເຂົ້າໄປຢູ່ໃນກະໂຕຂອງພວກແມງບົ້ງແລ້ວ.

ກາຝູງໜຶ່ງບິນເຈັ້ຍເຈີດລົງມາແລ້ວຕອດກິນພວກແມງບົ້ງທີ່ມີຊິ້ນສ່ວນຂອງສີຣິຢູ່ຂ້າງໃນ ຈາກນັ້ນກໍມີປາວານມາສວາບກືນກິນພວກອີ່ກາ ແລະແລ້ວຝູງປາວານກໍຖືກກືນກິນເຂົ້າໄປໃນພູເຂົາໄຟ ທັນໃດນັ້ນສີຣິ ຫຼືຊິ້ນສ່ວນຂອງສີຣິກໍກະແຈກກະຈາຍເຂົ້າໄປແຊກຊ້ອນຢູ່ໃນຮ່າງກາຍຂອງສິ່ງທີ່ມີຊີວິດທຸກຊະນິດ ແລະຜືນແຜ່ນດິນທຸກອະນຸພາກຢູ່ເທິງໜ້າໂລກ. ມັນແມ່ນບົດລົງເອີ່ຍທີ່ສຸດຍອດອີກຢ່າງໜຶ່ງ.

**********

"ເຢມີງ."

ໃນຂະນະທີ່ສີຣິຍັງຄິດບໍ່ອອກວ່າຕົນເອງຢູ່ໃສ ຫຼືເປັນໃຜນັ້ນ ເຂົາເຫຼືອບຕາຂຶ້ນ ແລ້ວກໍເຫັນໃບໜ້າອັນງົດງາມຂອງຍິງສາວຄົນໜຶ່ງຄ້າຍຄືກັບນາງໄມ້ກຳລັງກົ້ມແນມເບິ່ງຕົນ.

"ພວກພໍ່ເຖົ້າແມ່ເຖົ້າເຊີນທ່ານໄປກິນເຂົ້າເຊົ້າ."

ນາງເວົ້າພາສາມົ້ງ ແລະລາວເອງກໍເຂົ້າໃຈ ໃບໜ້າຂອງນາງແດງຂຶ້ນເມື່ອເຫັນຮອຍຍິ້ມຂອງເຂົາ ຈາກນັ້ນກໍປ່ອຍໃຫ້ເຂົາຢູ່ຄົນດຽວ. ສີຣິນອນຢູ່ເທິງແພເສື່ອເຊິ່ງປູໄວ້ຢູ່ພື້ນເຮືອນໃນຕູບນ້ອຍອັນຮຽບງ່າຍຫຼັງໜຶ່ງ ທັງຮູ້ສຶກເບົາວ່ອງໄປໃນຕົວ, ພ້ອມມີກຳລັງວັງຊາ ແລະຮູ້ສຶກຫິວແບບບອກບໍ່ຖືກ ພໍເມື່ອເຂົາລຸກຂຶ້ນນັ່ງຈິ່ງຮູ້ສຶກວ່າມີບາງຢ່າງຫ້ອຍຢູ່ຄໍ ມັນແມ່ນເຄື່ອງລາງສີດຳເຊິ່ງເຂົາບໍ່ໄດ້ປົດມັນອອກ.

ລົດຈິບມາຮັບສີຣິຫຼັງເວລາສິບໂມງເຊົ້າ ກ່ອນໜ້ານັ້ນ ທະຫານຍາມໄດ້ພາກັນຕິດຕໍ່ໄປທີ່ສຳນັກງານກອງບັນຊາການ ພ້ອມກັບເຕືອນວ່າທ່ານໝໍມີພຶດຕິກຳແປກໆ ພວກເຂົາຢ້ານວ່າທ່ານໝໍອາດຖືກມອມຢາ, ພວກເຂົາຍັງໄດ້ລາຍງານເລື່ອງການຊຸມນຸມກັນໃນຄືນຜ່ານມານຳອີກ.

ເມື່ອມາຮອດກອງບັນຊາການ ສີຣິກໍກະໂດດລົງຈາກລົດຈິບບໍ່ຕ່າງຫຍັງກັບຊາຍສະກັນຄົນໜຶ່ງ ແລ້ວຍ່າງເຂົ້າໄປໃນຫ້ອງເຮັດວຽກອັນເຊື່ອງຊ້ອນຂອງທ່ານຮ້ອຍເອກດ້ວຍທ່າທາງຂຶງຂັງມັງມໍ. ທະຫານທຸກຄົນທີ່ຢູ່ໃນຫ້ອງນັ້ນຕ່າງກໍພາກັນເງີຍໜ້າຂຶ້ນແນມເບິ່ງເຂົາ ສີຣິສັງເກດເຫັນທ່າທາງແບບບໍ່ໄວ້ວາງໃຈປາກົດອອກມາຈາກສາຍຕາທຸກຄູ່.

ເມື່ອຄຳສີງແນມເຫັນທ່ານໝໍ ເຂົາກໍລຸກຂຶ້ນ ແລ້ວຍ່າງເບັດໜ້າໄປຫາລາວ "ອອກ

ໄປນອກດີກວ່າ.” ເຂົາຈັບແຂນສີຣິຢ່າງແຮງແລ້ວດຶງອອກໄປທາງປະຕູ. ພໍແຕ່ທັງສອງຍ່າງອອກມາໄກຈາກອາຄານພໍສົມຄວນ ຄຳສິງກໍເວົ້າຂຶ້ນດ້ວຍທ່າທາງໂມໂຫ. “ເອົາລະຈະບອກໄດ້ຫຼືບໍ່ວ່າທ່ານຈະຫຼິ້ນເກມຫຍັງກັບຂ້ອຍນິຫື.”

“ເກມຫຍັງລະ? ອໍ ຂ້ອຍເຄີຍຊິກມວຍຢູ່ໃດ໋.”

“ທ່ານຮູ້ບໍ່ວ່າຂ້ອຍເວົ້າເລື່ອງຫຍັງ, ພວກເຂົາສົ່ງທ່ານມານີ້ເພື່ອຫຍັງ?”

“ພວກເຂົາສົ່ງຂ້ອຍມາຕາມຄຳຮ້ອງຂໍໃນນາມເຈົ້າໜ້າທີ່ຊັນນະສູດສົບຂອງເຈົ້າຫັ້ນລະ.”

“ແລະຂ້ອຍກໍຄິດວ່າມັນບັງເອີນພິລຶກອີກແມ່ນບໍ່ທີ່ທ່ານເວົ້າພາສາມົ້ງໄດ້ແບບບໍ່ຂ້ອງບໍ່ຄາຫຍັງເລີຍ?”

“ໃນເມື່ອທົ່ວປະເທດມີເຈົ້າໜ້າທີ່ຊັນນະສູດສົບພຽງຄົນດຽວ ຄຳຕອບກໍຄົງຊິຄືໂຕເຈົ້າຄິດຫັ້ນລະ ແມ່ນ ມັນເປັນເລື່ອງບັງເອີນ.”

“ແລ້ວເປັນຫຍັງທ່ານຄືບໍ່ຄິດທີ່ຈະບອກໃຫ້ຂ້ອຍຮູ້ນຳ?”

“ເອົາລະ ປະເດັນທຳອິດກະຄືວ່າ ມັນບໍ່ແມ່ນເລື່ອງຂອງເຈົ້າ ແລະອັນທີສອງກໍຍ້ອນຂ້ອຍເອງກະບໍ່ຮູ້ຄືກັນຫັ້ນແຫຼະ.”

ຄຳສິງໄດ້ແຕ່ແນມເບິ່ງໜ້າສີຣິແບບປະຫຼາດໃຈ. “ບໍ່ຮູ້ຊັ້ນຫວາ? ທ່ານບໍ່ຮູ້ເລີຍຫວາວ່າຕົນເອງເວົ້າພາສາມົ້ງໄດ້ ຫຼືບໍ່ໄດ້? ຢ່າຄິດວ່າຂ້ອຍໂງ່ເລີຍທ່ານໝໍ.”

“ໃຫ້ຂ້ອຍສາບານກະໄດ້ ຕອນຂ້ອຍມາຮອດຄຳມ່ວນຫັ້ນ ຂ້ອຍເວົ້າບໍ່ໄດ້ແມ່ນແຕ່ຄຳດຽວ ແຕ່ເຊື່ອວ່າເລື່ອງນີ້ຕ້ອງມີຄຳອະທິບາຍໄດ້ຕາມຫຼັກວິທະຍາສາດແນ່ນອນ.”

“ແມ່ນຫຍັງຢູ່ຮອບຄໍຂອງທ່ານ?”

“ເຄື່ອງລາງ.”

“ທະຫານຂອງຂ້ອຍລາຍງານວ່າທ່ານເຄີຍມານີ້ກ່ອນໜ້ານີ້ ພວກມົ້ງຮູ້ຈັກທ່ານດີແລະທ່ານໝໍກໍປິດມັນໄວ້ບໍ່ຍອມບອກຂ້ອຍຮູ້ອີກ.”

“ເອົາລະ ຂ້ອຍອາດລືມ ຄວາມຈິງມັນກະຕັ້ງແຕ່ດົນພຸ້ນແຫຼະ ຖ້າຊິວ່າໄປແລ້ວມັນກະຊ່ວງໜຶ່ງພັນປີກ່ອນ ຕອນນັ້ນຂ້ອຍຕີຊະນະພວກທະຫານອັນນັມສອງໝື່ນກວ່າຄົນດ້ວຍເຂົາງົວອັນດຽວ ສິງໄສຕ້ອງແມ່ນເຂົາງົວໃຫຍ່ແທ້ລະ.”

ຄຳສິງປ່ຽນສີໜ້າຈາກຄວາມຢາກຮ້າຍກາຍເປັນຄວາມວິຕົກກັງວົນທັນທີ. “ຫວັງວ່າຄົນພວກນັ້ນ ... ຄົງບໍ່ໄດ້ເຮັດຫຍັງໃຫ້ທ່ານໝໍແມ່ນບໍ?”

“ເຈົ້າໝາຍເຖິງການຖືກມົນສະກົດຈິດເພື່ອໃຫ້ຂ້ອຍກາຍເປັນບ້າຊັ້ນຫວາ? ບໍ່ນາຂ້ອຍບໍ່ເຫັນຊິຄິດແບບນັ້ນ ຂ້ອຍກໍເປັນແນວນີ້ມາຕະຫຼອດ ຂໍບອກເລີຍວ່າ ການໄປຢ້ຽມຢາມຄັ້ງນີ້ມັນໜ້າອັດສະຈັນອີ່ຫຼີ.”

“ທ່ານໄດ້ຊຸມຕົວຢ່າງມາກວດສອບນຳບໍ່?”

“ຢາຂອງພວກເຂົາຫັ້ນຫວາ? ບໍ່ເລີຍ. ພວກເຂົາບໍ່ໄດ້ໃຊ້ຢຸກຢາຫຍັງດອກ, ຮ້ອຍເອກຄຳສີງ ຂ້ອຍຢາກຊວນເຂົ້າໄປໃນຫ້ອງການກ່ອນ ພ້ອມຟັງຂ້ອຍເລົ່າເລື່ອງປະຫຼາດບາງຢ່າງທີ່ແປກສຸດໆ ຖ້າມີໃຜເລົ່າເລື່ອງແນວນີ້ໃຫ້ຂ້ອຍຟັງກ່ອນໜ້ານີ້ຊາວສີ່ຊົ່ວໂມງ ຂ້ອຍຄົງຈັບທ້າວຊ່ານັ້ນໄປໂຮງໝໍປົວຄົນບ້າຮຽບຮ້ອຍແລ້ວແຫຼະ ແຕ່ຂ້ອຍຄິດວ່າສຸດທ້າຍແລ້ວເຈົ້າກໍຕ້ອງເຊື່ອຄືກັບຂ້ອຍເຊື່ອ ເພາະອາດມີວິທີດຽວທີ່ຈະສາມາດຮັກສາຊີວິດຂອງເຈົ້າໄວ້ໄດ້.”

# 11

# ຜູ້ຊ່ວຍໝໍຜີ

ພວກຜູ້ເຖົ້າພາຍໃນບ້ານພາກັນແຕ່ງກາຍປະດັບເອ້ຍ້ອງງົດງາມເປັນພິເສດໃນມື້ສັນວັນດີຂອງວັນອາທິດ ພ້ອມພາກັນອອກມາຢືນລໍຖ້າຕ້ອນຮັບດ້ວຍໃຈຈົດຈໍ່ບ່ອນທີ່ລົດຈິບແລ່ນມາຈອດໃນຕອນຄ້າຍແລງມື້ນັ້ນ. ມີພຽງສີຣິກັບຄຳສິງທີ່ເດີນທາງມາຕາມຄຳແນະນຳຂອງຝ່າຍມົ້ງ ເຊິ່ງຄຳສິງເປັນຄົນຂັບລົດເອງ, ພວກທະຫານຍາມປະຈຳບ້ານໄດ້ຖອນກຳລັງໄປປະຈຳການຢູ່ປ້ອມເວນຍາມຂ້າງຖະໜົນແບບບໍ່ເຕັມໃຈພໍເທົ່າໃດ ສ່ວນຊາຕາກຳຂອງແຂກທັງສອງຄົນແມ່ນຂຶ້ນຢູ່ກັບຄວາມຮັບຜິດຊອບຂອງບ້ານເມຢູໂບເຊິ່ງຄຳສິງເອງກໍມີຄວາມຫວາດລະແວງຢູ່ກ່ອນແລ້ວ.

ສີຣິກັບກຸ່ມຜູ້ເຖົ້າຫຼາຍຄົນຕ່າງກໍທັກທາຍກັນເປັນພາສາມົ້ງ ເຊິ່ງຕອນເຊົ້າມື້ນັ້ນເຂົາກໍໄດ້ອະທິບາຍສິ່ງທີ່ຕົນເອງສັນນິຖານໄວ້ເບື້ອງຕົ້ນໃຫ້ຮ້ອຍເອກຟັງໝົດແລ້ວ, ສີຣິເກີດຢູ່ຄຳມ່ວນກໍຈິງ ແຕ່ເຂົາກໍອາໄສຢູ່ທີ່ນັ້ນໃນຊ່ວງສິບປີທຳອິດຂອງຊີວິດ ແລະເຂົາກໍບໍ່ຮູ້ອີ່ໂໜ່ອີ່ເໜ່ຫຍັງເລີຍກ່ຽວກັບພໍ່ແມ່ຜູ້ບັງເກີດເກົ້າຂອງຕົນ. ຕອນອາຍຸໄດ້ສີ່ປີ ເຂົາໄດ້ຍ້າຍໄປຢູ່ນຳແມ່ເຖົ້າຄົນໜຶ່ງ ແຕ່ຖ້າຄອບຄົວທີ່ເຂົາບໍ່ເຄີຍຮູ້ຈັກຫາກເປັນເຜົ່າມົ້ງ ຫຼືເຄີຍອາໄສຢູ່ຮ່ວມກັບຊາວເຜົ່າມົ້ງ ເຂົາຄົງສາມາດຊຶມຊັບພາສາມົ້ງໄດ້ດີພໍສົມຄວນແລະຢ່າງໜ້ອຍອາດໃຊ້ເວລາຮອດໜຶ່ງປີຈຶ່ງສາມາດເວົ້າໄດ້.

ຖ້າອະທິບາຍຕາມຫຼັກວິທະຍາສາດນັ້ນກໍຄື ຕະຫຼອດຫຼາຍປີຜ່ານມາ ພາສາມັນຍັງຄົງຖືກຝັງໄວ້ໃນຫ້ວງນຶກ ແຕ່ພໍເມື່ອໄດ້ມາພົບປະກັບຊາວເຜົ່າມົ້ງ, ພາສານັ້ນກໍຖືກກະຕຸ້ນໃຫ້ຕື່ນຂຶ້ນມາຄືນອີກຄັ້ງ ເຖິງແມ່ນຈະເປັນເລື່ອງເຫຼືອເຊື່ອສຳລັບຄຳສິງ ແຕ່ສີຣິກໍຮູ້ສຶກສະບາຍໃຈທີ່ໄດ້ສາລະພາບມັນອອກມາຫຼາຍກວ່າຈະໃຊ້ທາງເລືອກອື່ນ. ເຂົາຍັງຄິດໄວ້ວ່າຈະໄປກວດສອບຫາຄວາມຈິງກັບອາຈານທີ່ວິທະຍາໄລຄູດົງໂດກອີກເທື່ອໜຶ່ງເມື່ອກັບຄືນໄປວຽງຈັນ.

ພວກຜູ້ເຖົ້າພາຊາຍທັງສອງມຸ່ງໜ້າໄປທີ່ຕູບຂອງເລົາຈິງ ເຊິ່ງມີການຕັ້ງໂຕະບູຊາພ້ອມປະດັບປະດາຢ່າງງົດງາມໃນຈຸດໜຶ່ງຂອງຫ້ອງໂດຍຫັນໜ້າເຂົ້າຫາປະຕູ. ຖັດຈາກໜ້າໂຕະໜ່ວຍນັ້ນມີດາບດວງໜຶ່ງ ທີ່ປະກອບດ້ວຍເຄື່ອງປະດັບເອ້ງົດງາມປັກຢູ່

ເທິງພື້ນດິນ. ເທິງແທ່ນບູຊາມີຖາດສອງໃບຕັ້ງຢູ່, ໃບໜຶ່ງປະດັບດ້ວຍຂັນໝາກເບັງລວມທັງພາບສັດປະເພດຕ່າງໆ ທີ່ພັບຈາກໃບຕອງກ້ວຍ ແລະດອກໄມ້ຈຳນວນຫຼາຍ. ໄຂ່ໄກ່ໜ່ວຍໜຶ່ງທີ່ຍັງບໍ່ທັນປອກເປືອກຕັ້ງໄວ້ເດັ່ນສະຫງ່າເພື່ອທ້າທາຍແຮງໂນ້ມຖ່ວງຢູ່ເທິງປາຍຂັນໝາກເບັງເບິ່ງຄືວ່າມັນຈະບໍ່ຍອມຕົກລົງງ່າຍໆ. ສ່ວນຖາດທີສອງບັນຈຸອາຫານນາໆ ຊະນິດ ແຕ່ລະຢ່າງມີປະລິມານບໍ່ຫຼາຍ ພ້ອມທັງເຫຼົ້າແລະໝາກພູ ເຊິ່ງທຸກຢ່າງຖືກຫໍ່ຫຸ້ມດ້ວຍໃຍຝ້າຍສີຂາວທີ່ຍັງບໍ່ທັນໄດ້ປັ່ນ.

ຊັດຍ່າງເຂົ້າໄປຫາຮ້ອຍເອກພ້ອມຖາມຂຶ້ນ. "ເອົາມັນມານຳບໍ?"

ກິລິຍາທ່າທາງພາຍນອກຂອງຄຳສີງຄ້າຍກັບວ່າເຂົາບໍ່ມີຄວາມສັດທາຫຍັງເລີຍແຕ່ກໍສະແດງອອກແບບງຽບໆ ແຕ່ພໍເປີດປາກເວົ້າ ນ້ຳສຽງຂອງເຂົາຊ້ຳພັດເປັນສັ່ນໆ. ເຂົາຍື່ນເສື້ອເຊີດເຊິ່ງເປັນເຄື່ອງແບບເກົ່າໆ ໃຫ້ຊັດ. "ນີ້ເດ ແຕ່ລະວັງຢ່າໃຫ້ມັນເປື້ອນຂີ້ເຜີ້ງ ກັບຂີ້ເຖົ່າໃດລະ."

ຊັດຈັບເອົາເສື້ອຜືນນັ້ນຈາກມືຄຳສີງ ພ້ອມທັງຈັດການພັບມັນໃຫ້ແປລາບຊາບ, ເມຍຂອງເລົາຈິງຍົກຖາດໃບທີສອງເຊິ່ງຕັ້ງໄວ້ຢູ່ເທິງແທ່ນບູຊາທີ່ວາງທັບຊ້ອນຢູ່ເທິງຖາດເປົ່າໃບທີສາມອອກ ແລ້ວຊັດກໍວາງເສື້ອເຊີດໂຕນັ້ນລົງ ຈາກນັ້ນເມຍຂອງເລົາຈິງກໍເອົາຖາດເຄື່ອງເສັ່ນໄຫວ້ທີ່ຖືໄວ້ຢູ່ໃນມື ວາງທັບລົງຖາດເສື້ອຜືນນັ້ນ ບັດນີ້ເຄື່ອງໃຊ້ສ່ວນຕົວທີ່ປຽບເໝືອນຂວັນຄືງຂອງຄຳສີງ ຈຶ່ງກາຍເປັນໝາກຫົວໃຈສຳຄັນສຳລັບການປະກອບພິທີໃນຄັ້ງນີ້.

ຜູ້ເຖົ້າຜູ້ແກ່ພາກັນຜູກເສັ້ນຝ້າຍສີຂາວທີ່ໂຍງລົງມາຈາກຂື່ໄມ້ອ້ອມຮອບໂຕະບູຊາແລະດຶງອອກໄປມັດໄວ້ໃສ່ທາງວົງກົບປະຕູໃຫ້ແໜ້ນ.

"ທ່ານລໍຖ້າຢູ່ນີ້ກ່ອນເດີ." ຊັດພາຄຳສີງອອກໄປນັ່ງຢູ່ພື້ນເຮືອນໃກ້ກັບສີຣິ.

ຜູ້ຄົນທີ່ເຂົ້າມາເບິ່ງການປະກອບພິທີ ໄດ້ຄ່ອຍໆ ລວມຕົວກັນເພີ່ມຈຳນວນຫຼາຍຂຶ້ນເຊິ່ງຄົນໃນບ້ານຈະຕ້ອງເຂົ້າຮ່ວມໃນພິທີສຳຄັນຂອງແລງມື້ນີ້ ເພາະມັນເປັນວິທີດຽວທີ່ຈະໄດ້ຮູ້ວ່າແມ່ນໃຜຖືກວິນຍານອັນຊົ່ວຮ້າຍ ຫຼືຜີປອບເຂົ້າສີງ. ຜີປອບບໍ່ສາມາດເຂົ້າສີງເພື່ອທຳຮ້າຍເຫຍື່ອໄດ້ໂດຍກົງ ແຕ່ມັນເລືອກແຝງຕົວຢູ່ໃນຮ່າງຂອງຄົນທີ່ຍັງມີຊີວິດເຊິ່ງວິທີນີ້ໄດ້ເປັນຊ່ອງທາງໃຫ້ມັນໄດ້ປົດປ່ອຍຄວາມຄຽດແຄ້ນຈົນສາມາດທຳຮ້າຍຜູ້ທີ່ເຄີຍຮຸກຮານຕົນ ໂດຍທີ່ເຈົ້າຂອງຮ່າງບໍ່ຮູ້ຕົວຊ້ຳວ່າຕົນເອງຖືກຜີປອບເຂົ້າສີງ.

"ຂ້ອຍໂລດບໍ່ຮູ້ເລື່ອງແນວນີ້ເລີຍທ່ານສີຣິ ຖ້າພວກທະຫານຫາກຈັບໄດ້ ວ່າ ..."

"ຂ້ອຍກ້າພະນັນໄດ້ເລີຍພວກເຂົາບໍ່ແປກໃຈດອກຖ້າພວກທະຫານຫາກຮູ້ເລື່ອງນີ້ນະ ບໍ່ແມ່ນວ່າພວກເຂົາເກີດມາແລ້ວຊິໄດ້ເປັນທະຫານໂລດ ຂ້ອຍກ້າເວົ້າໄດ້ວ່າມີຫຼາຍຄົນຕ້ອງເຄີຍເຫັນການເຮັດພິທີແບບນີ້ໃນບ້ານຂອງໂຕເອງຢູ່ແລ້ວ. ແນວໃດກໍແນວ

ຂ້ອຍກ້າພະນັນໄດ້ວ່າພວກເຂົາຮູ້ເລື່ອງນີ້ແລ້ວແຫຼະ.”

“ທ່ານໝໍຮູ້ໄດ້ແນວໃດວ່າ ວິທີນີ້ບໍ່ແມ່ນແຜນເພື່ອຫຼອກພວກເຮົາໃຫ້ຕາຍໃຈ ເພື່ອຄົ້ນຫາຜູ້ມີອຳນາດສັ່ງການຕົວຈິງຂອງໂຄງການ? ເປັນຫຍັງພວກເຂົາຈິ່ງຢາກຊ່ວຍຂ້ອຍ?”

“ເພື່ອຄວາມຢູ່ລອດ.”

“ໝາຍຄວາມວ່າແນວໃດ?”

“ຖ້າຜູ້ບັນຊາການປະຈຳໂຄງການຫາກຍັງຕາຍແບບເມື່ອງມິດລຽນຕິດຢູ່ຄືແນວນີ້ເຈົ້າຄິດວ່າທາງກອງທັບຊິເຮັດແນວໃດ?”

“ພວກເຂົາກໍຊິພາກັນສະຫຼຸບວ່າພວກເຮົາຖືກຊາວເຜົ່າມົ້ງໂຈມຕີຫັ້ນລະ.”

“ແລ້ວກໍຍົກກຳລັງມາຈັດການພວກເຂົາ.”

“ທ່ານໝໍກໍຮູ້ວ່າພວກເຮົາບໍ່ແມ່ນຄົນປ່າເຖື່ອນ.”

“ແມ່ນແທ້ຊັ້ນເບາະ? ເຈົ້າຕ້ອງແປກໃຈແຫຼະຖ້າຮູ້ວ່າກອງທັບຂອງເຈົ້າເຮັດຫຍັງລົງໄປແດ່ເພື່ອຖອນຮາກຖອນເຫງົ້າພວກກໍ່ກະບົດ, ເຖິງແມ່ນບ້ານນ້ອຍໆ ແບບນີ້ຈະຫາຍໄປອີກໜຶ່ງແຫ່ງກໍບໍ່ເຫັນມີຫຍັງແຕກຕ່າງກັນພໍເທົ່າໃດ. ນີ້ແຫຼະຄືເຫດຜົນ ເພາະຄົນພວກນີ້ບໍ່ຢາກຖືກທຳລາຍ ຍ້ອນແນວນັ້ນ ວິທີດຽວທີ່ຈະເຮັດໃຫ້ພວກເຂົາລອດພົ້ນນັ້ນກໍຄື ອ້ອນວອນໃຫ້ພວກດວງວິນຍານພາກັນຢູ່ໃນຄວາມສະຫງົບ ແລະໄວ້ຊີວິດແກ່ເຈົ້າ. ຖ້າມັນໄດ້ຜົນ ນັບຈາກນີ້ເປັນຕົ້ນໄປ ເຈົ້າຈະຕ້ອງໄດ້ຂໍຂະມາຕົ້ນ ໄມ້ທີ່ເຈົ້າຕັດລົງທຸກຕົ້ນ.”

“ຂ້ອຍຄົງກາຍເປັນຕົວຕະຫຼົກເຮັດໃຫ້ທຸກຄົນຫົວຂວັນແນ່ນອນ.”

“ເປັນຕົວຕະຫຼົກທີ່ຍັງມີຊີວິດຢູ່ ຍັງດີກວ່າກາຍເປັນຜີເຝົ້າພູທີ່ຍັງບໍ່ເຊື່ອອີ່ຫຍັງເລີຍໃດທ່ານຮ້ອຍເອກ ແຕ່ເລື່ອງແບບນີ້ມັນກໍຂຶ້ນຢູ່ກັບເຈົ້າເອງແດ່ຫັ້ນແຫຼະ.” ມັນຍາກສຳລັບສີຣິທີ່ຈະໂນ້ມນ້າວຈິດໃຈຂອງຄຳສິງໃນສິ່ງທີ່ກະໂຕເຂົາເອງກໍຍັງບໍ່ໝັ້ນໃຈໂຕເອງ. ເຂົາບໍ່ຮູ້ຊ້ຳວ່າຍ້ອນເຫດຜົນຫຍັງເຂົາເອງຈິ່ງເຊື່ອວ່າວິທີນີ້ເປັນທາງດຽວທີ່ຈະຊ່ວຍຄຳສິງໃຫ້ມີຊີວິດຢູ່ລອດປອດໄພ. ເຂົາບໍ່ຄາດຄິດເລີຍວ່າ ຄຳບອກ ເລົ່າກ່ຽວກັບເຫດການໃນຄືນທີ່ເຂົາໄດ້ຢູ່ຄ້າງໃນໝູ່ບ້ານຈະມີເຫດຜົນພຽງພໍ ຈົນສາ ມາດເກັ້ຍກ່ອມໃຫ້ຮ້ອຍເອກຄຳສິງຍອມມາກັບເຂົາຈົນໄດ້ ແຕ່ຊາຍໜຸ່ມຄົນນີ້ຄົງໝົດຫວັງແລ້ວແຫຼະ ເຂົາຈິ່ງຍອມລອງເຮັດທຸກວິທີທາງ.

ສີຣິກວາດສາຍຕາແນມເບິ່ງຕົວລະຄອນທີ່ເບິ່ງຄືວ່າບໍ່ສົມບົດບາດພໍປານໃດສຳລັບການສະແດງໃນຄືນມື້ນີ້ ທຸກຢ່າງເບິ່ງຄືວ່າໄຮ້ສາລະແນວໃດແນວໜຶ່ງ. ເລົາຈົ່ງເຊິ່ງສວມໃສ່ເສື້ອຜ້າສີແດງທັງຊຸດ ໂດຍມີສິ່ງສິ່ງສຽງເບົາໆ ນ້ອຍໆ ຄ້ອງໃສ່ກັບນິ້ວມື ສ່ວນເມຍ

ຂອງເຂົາກໍເປັນຜູ້ຜູກໝວກຄຸມຫົວໃຫ້. ຊັດກຳລັງຈູດທຽນທັງເຫຼັ້ມນ້ອຍແລະໃຫຍ່, ກິ່ນຫອມຂອງທູບໄດ້ລອຍລ່ອງປະທະກັບກິ່ນທຽນຂີ້ເຜີ້ງກຸ້ມກ່ອມໄປທົ່ວຫ້ອງ.

ປ້າສວບກຳລັງເຮັດວຽກກັບຝູງຊົນ ພ້ອມແຈກຢາຍເຄື່ອງລາງຂອງຂັງບໍ່ຕ່າງຫຍັງກັບຄົນເລາະຂາຍຖົ່ວດິນໃນງານກິລາເຕະບານ ຜູ້ຄົນໃນບ້ານສ່ວນໃຫຍ່ແມ່ນມາຮອດເກືອບໝົດແລ້ວ. ຜູ້ເຖົ້າຜູ້ແກ່ ແລະບຸກຄົນສຳຄັນແມ່ນນັ່ງຢູ່ເທິງພື້ນຂ້າງໃນ ສ່ວນທີ່ເຫຼືອແມ່ນພາກັນນັ່ງຢູ່ເທິງຕັ່ງມ້າຂ້າງນອກ ເຖິງແມ່ນຈະມີຜູ້ຄົນຈຳນວນຫຼາຍ ແຕ່ກໍບໍ່ໄດ້ຍິນສຽງໂອ້ລົມກັນແມ່ນແຕ່ໜ້ອຍດຽວ ແມ່ນແຕ່ເດັກເລັກເດັກແດງກໍຍັງນອນງຽບແບບສະບາຍອຸລາຢູ່ອ້ອມອົກຂອງຜູ້ເປັນແມ່.

“ມີຫຍັງທີ່ອາດຈະເປັນອັນຕະລາຍ ຫຼືບໍ່?” ຄຳສີງກະຊິບໃສ່ຫູສີຣິຄ່ອຍໆ.

“ບໍ່ຮູ້ຄືກັນ ຂ້ອຍເອງກະຍັງບໍ່ເຄີຍເຂົ້າຮ່ວມພິທີແບບນີ້ມາກ່ອນ. ຕອນນີ້ເຈົ້າຢ່າຟ້າວເວົ້າຫຍັງເລີຍດີກວ່າ.”

ເລົາຈິງຈັບເອົາໝວກມາຄຸມຫົວໄວ້ ແລ້ວຄູ້ເຂົ່າລົງຕໍ່ໜ້າໂຕະບູຊາ ເພື່ອເສັນຖວາຍເຂົ້າໜົມ ແລະເຫຼົ້າແກ່ບັນດາຄູອາຈານຂອງຕົນ ລວມທັງຄູທຸກຄົນກ່ອນໜ້ານີ້ເຊິ່ງໄດ້ຍ້ອນກັບໄປເຖິງຍຸກສະໄໝຂອງໝໍຜີຜູ້ຍິ່ງໃຫຍ່ຄົນທຳອິດ, ເມຍຂອງເຂົາດຶງໝວກຄຸມຫົວໃຫ້ຕ່ຳລົງມາປົກໜ້າ ແລະເຂົາກໍເລີ່ມເຄາະສິ່ງທີ່ຫ້ອຍຢູ່ກັບນິ້ວມືປະທະກັນເປັນຈັງຫວະຊ້າໆ ສ່ວນເມຍຂອງເຂົາກໍຈັບຄ້ອງຂຶ້ນມາຕີເພື່ອຮັບຕາມຈັງຫວະດ້ວຍກະດູກກົກຂານົກຍາງ.

ເລົາຈິງເລີ່ມສວດມົນຂຶ້ນຢ່າງຊ້າໆ ດ້ວຍພາສາທີ່ສີຣິເອງກໍບໍ່ເຄີຍໄດ້ຍິນມາກ່ອນ ແຕ່ເບິ່ງຄືວ່າລາວພໍຈະເຂົ້າໃຈຄວາມໝາຍໄດ້ຢູ່ ອາດຈະແມ່ນຍ້ອນເຫດຜົນໃດກໍແລ້ວແຕ່ ສີຣິເບິ່ງຄືຈະຮູ້ວ່າ ເລົາຈິງກຳລັງອັນເຊີນບັນດາເທບໄທ້, ເທວະດາລວມທັງບັນດາວິນຍານທີ່ມີຈິດເມດຕາປ່ຽມລົ້ນໄປດ້ວຍຄຸນນະທຳມາເຂົ້າສິງພ້ອມໃຊ້ຮ່າງຂອງຕົນເປັນສູນກາງສື່ສານລະຫວ່າງວິນຍານກັບມະນຸດ. ເຂົາໂຍກຕົວໄປມາແບບຄ່ອຍໆ ຢູ່ຂ້າງໂຕະບູຊາ ແລ້ວກໍອັນເຊີນດວງວິນຍານທັງຫຼາຍອອກມາ ເຂົາໃຊ້ເວລາສວດມົນຮອດສາມສິບນາທີໂດຍບໍ່ມີຜູ້ໃດສະແດງອາການກະສັບກະສ່າຍ ຄ້າຍກັບວ່າພວກເຂົາຖືກມົນສະກົດຈິດ ພາຍໃຕ້ຈັງຫວະ ແລະການເຄື່ອນໄຫວຢູ່ຕໍ່ໜ້າ ເຊິ່ງຍັງບໍ່ມີສຽງອື່ນໃດແຊກຊ້ອນອີກເຊັ່ນເຄີຍ.

ມີພຽງຮ້ອຍເອກຄຳສີງຄົນດຽວເທົ່ານັ້ນທີ່ຮູ້ສຶກຫງຸດຫງິດໝຸດໝັດໃຈບໍ່ເປັນອັນຢູ່ອັນເຊົາ ທັງເຮັດສຽງດັງຮື່ມໆ ຢູ່ໃນຮູຄໍ, ຄວັນທີ່ລອຍລ່ອງກຸ້ມພາຍໃນຫ້ອງໄດ້ເຮັດໃຫ້ເຂົາຮູ້ສຶກແສບຕາ ທັງສຽງຄ້ອງກັບສຽງສິ່ງກໍຍັງດັງອູ້ອີ້ງຢູ່ໃນກ້ອງຫູຂອງເຂົາ ເຊິ່ງເຂົາກໍຄິດວ່າຕົນເອງຈະກັ້ນອາການປວດຮາກໄວ້ບໍ່ຢູ່.

ຈາກນັ້ນສຽງສວດມົນກໍໄວຂຶ້ນທັງດັງແຮງຂຶ້ນ ເຊິ່ງຍັງບໍ່ມີໃຜທັນໄດ້ສັງເກດເຫັນໃນຕອນຕົ້ນ. ຈັງຫວະການຫັນໃຈຂອງເລົາຈິງເລີ່ມຖີ່ຂຶ້ນ ເຖິງແມ່ນໃບໜ້າຂອງເຂົາຈະຖືກເຊື່ອງຊ້ອນໄວ້ພາຍໃນໝວກ ແຕ່ທຸກຄົນໃນທີ່ນັ້ນກໍສາມາດບອກໄດ້ເລີຍວ່າ ເຂົາຖືກເຂົ້າທຽມແລ້ວ. ແຂນທັງສອງຂ້າງຂອງເຂົາເລີ່ມກະຕຸກ ກ່ອນຈະລຸກຢືນຂຶ້ນພວດພາດທົ່ວທັງຮ່າງກາຍນັບແຕ່ຕີນຮອດຫົວປາກົດວ່າສັ່ນກະຕຸກແຮງຂຶ້ນ ... ແຮງຂຶ້ນທຸກຂະນະມັນບໍ່ແມ່ນອາການຂອງຄົນທີ່ລຸກຂຶ້ນມາຟ້ອນ ຫຼືເປັນລົມຊັກແຕ່ຢ່າງໃດ ສິ່ງສັກສິດທີ່ບໍ່ສາມາດແນມເຫັນໄດ້ເຂົ້າສິງສູ່ຢູ່ໃນຮ່າງກາຍຂອງເຂົາ. ເລົາຈິງຊາວນາຜູ້ບໍ່ມີແຂ້ວຄົນເດີມໄດ້ຫາຍໄປແລ້ວ ບໍ່ມີໃຜຈັກຄົນໃນບ່ອນນັ້ນເຊື່ອວ່າ ວິນຍານທີ່ຢູ່ເຊິ່ງໜ້າ ເປັນຄົນດຽວກັບຜູ້ຊາຍທີ່ຢູ່ໃນພາວະມຶນງົງຈົນບໍ່ສາມາດຄວບຄຸມຕົນເອງໄດ້ກ່ອນໜ້ານີ້.

ເຖິງແມ່ນຈະແນມບໍ່ເຫັນຫຍັງເລີຍ ແຕ່ໝໍຜີກໍທຳທ່າແນມເບິ່ງໄປທົ່ວຮອບຫ້ອງ. ຄວາມສົນໃຈຂອງໝໍຜີໄດ້ມາຢຸດທີ່ກະໂຕສິຣິຜູ້ເຊິ່ງກຳລັງຖອຍຕົວກັບໄປທາງຫຼັງ ຂະນະທີ່ສາຍຕາທຸກຄູ່ຕ່າງກໍຈ້ອງມອງມາທີ່ລາວຄົນດຽວ ຄວາມຄິດທີ່ວ່າຕົນເອງເປັນພຽງຜູ້ສັງເກດການໃນພິທີຂັບໄລ່ຜີຄັ້ງທຳອິດ ກໍເຫືອດຫາຍໄປໃນທັນທີທັນໃດ. ຮ່າງຂອງເລົາຈິງລົ້ມລົງຟາດພື້ນ ແຕ່ຕ່າງກັບຄົນລົ້ມທົ່ວໄປ ມັນຄ້າຍຄືກັບຕົ້ນໄມ້ທັງຕົ້ນຖືກຫັກໂຄ່ນລົງມາກະແທກກັບພື້ນປ່າຫຼາຍກວ່າ ມັນເປັນການຫັກລົ້ມແບບໝົດແຮງ ໃບໜ້າຂອງເລົາຈົ່ງພໍດີຟຸບລົງຊື່ກັບປາຍຕີນຂອງສິຣິ.

ສິຣິໝັ້ນໃຈວ່າ ເລົາຈິງໝົດສະຕິໄປຍ້ອນແຮງນັອກລົງຟາດກັບພື້ນ ຫົວຂອງເຂົາຢູ່ຫ່າງຈາກສິຣິບໍ່ພໍເທົ່າໃດຊັງຕີແມັດ ໂດຍບໍ່ມີການເໜັງຕີງທັງບໍ່ຫັນໃຈ. ສິຣິເອື້ອມມືໄປທາງໜ້າເພື່ອເບິ່ງວ່າເຂົາເອງພໍຈະຊ່ວຍຫຍັງໄດ້ແດ່ ແຕ່ພຽງອຶດໃຈດຽວ ໝໍຜີຜູ້ນັ້ນກໍລຸກຢືນພວດພາດຂຶ້ນ ບໍ່ຕ່າງຫຍັງກັບໜັງມ້ວນໜຶ່ງໄດ້ກັບມາສາຍຄືນຊ້ຳອີກ ... ຄ້າຍກັບວ່າຕົ້ນໄມ້ຕົ້ນນັ້ນບໍ່ເຄີຍຖືກໂຄ່ນລົງ ທຸກຄົນໄດ້ແຕ່ອ້າປາກຄ້າງ.

ວິນຍານທີ່ຄອບຄອງຮ່າງຂອງເລົາຈິງຜູ້ໃໝ່ກົ້ມຕົວລົງໃຫ້ຕ່ຳກວ່າທ່ານໝໍຜູ້ເຊິ່ງກຳລັງຕົກຕະລຶງງຸນງົງ ພ້ອມທັງຍໍມືທັງສອງຂ້າງຂອງໝໍຜີແລ້ວພະນົມຂຶ້ນໃສ່ເບື້ອງໜ້າໝວກປົກຫົວ ວິນຍານສັກສິດໄດ້ກ່າວຄຳເວົ້າຂຶ້ນດ້ວຍສຽງຂອງຕົນເອງ ... ເຊິ່ງແມ່ນສຽງທີ່ບໍ່ມີວັນເປັນຂອງເລົາຈິງ.

"ເຢມົງ! ບອກພວກເຮົາແດ່ຖ້ອນວ່າວິນຍານຊົ່ວຮ້າຍຂອງຜີປອບ ມັນໄປລີ້ຊ້ອນສິງສູ່ຢູ່ໃນຮ່າງຂອງຜູ້ໃດ? ແມ່ນໃຜຄືເຈົ້າຂອງຮ່າງນັ້ນ?"

ສິຣິເວົ້າຫຍັງບໍ່ອອກ ນີ້ແມ່ນຄວາມຮັບຜິດຊອບອັນຍິ່ງໃຫຍ່ແສນສາຫັດສຳລັບລາວ ເປັນຫຍັງຕ້ອງແມ່ນລາວ? ສາຍຕາທຸກຄູ່ໄດ້ຈັບຈ້ອງມາໃສ່ລາວທັງໝົດ ຄ້າຍຄືກັບນັກສະແດງທີ່ລືມບົດສົນທະນາຂອງຕົນເອງ. ເຂົາໄດ້ແຕ່ແນມໄປອ້ອມຮອບທົ່ວຫ້ອງ

ແລະແນມອອກໄປທາງໜ້າປະຕູທີ່ເປີດຄ້າງໄວ້. ເຂົາໄດ້ແຕ່ແນມຜ່ານໆ ໄປທີ່ໃບໜ້າຂອງແຕ່ລະຄົນທັງຜູ້ຊາຍ, ຜູ້ຍິງ ແມ່ນແຕ່ເດັກນ້ອຍກໍບໍ່ເວັ້ນ ທັງຫວັງວ່າຈະມີເຄື່ອງໝາຍໃດໜຶ່ງ ຫຼືລູກສອນ ຫຼືບາງສິ່ງຢ່າງ ເຊັ່ນ ແສງໄຟກະພິບປາກົດຂຶ້ນ ແຕ່ແລ້ວກໍບໍ່ສາມາດແນມເຫັນຫຍັງເລີຍ ໃນທີ່ສຸດກໍຍອມຮັບດ້ວຍຄວາມໝົດຫວັງ. "ຂ້ອຍຊິໄປຮູ້ໄດ້ຈັ່ງໃດລະ."

ເຖິງແມ່ນຮ່າງຂອງໝໍຜີຈະບໍ່ໄດ້ຫຍັບມາໃກ້ພໍປະມານກໍຕາມ ແຕ່ມືອັນຈ່ອຍແຫ້ງແລະບິດບ້ຽວຂອງເລົາຈິງ ກໍຢື່ເກ່ເດ່ອອກໄປຂ້າງໜ້າພ້ອມຄວ້າຈັບເອົານິ້ວມືຂອງສີຣິໄວ້ຢ່າງແໜ້ນ ອາການເຈັບປວດແສບຮ້ອນໄດ້ແລ່ນຜ່ານແຂນແລ້ວຍິງທະລຸລົງໃສ່ຂາຂອງສີຣິ ຄ້າຍກັບວ່າປະສາດຖືກກະຕຸ້ນຢ່າງໝົດແຮງ ຈາກນັ້ນພະລັງດັ່ງກ່າວກໍແຜ່ກະຈາຍໄປທົ່ວຮ່າງຄືງຂອງເຂົາ ພ້ອມໄປຈຸກແໜ້ນທີ່ຄໍຫອຍ ເຄື່ອງລາງທີ່ຮູ້ສຶກເຢັນຊື່ນນັ້ນກໍຮ້ອນຊ່າຂຶ້ນ ຄືກັບກ້ອນຖ່ານຂາວທີ່ກໍາລັງເຜົາໄໝ້ ເຂົາໄດ້ແຕ່ອ້າປາກພ້ອມພະຍາຍາມເປັ່ງສຽງກົດຮ້ອງອອກມາ ແຕ່ປາກົດວ່າສຽງນັ້ນຖືກອັດຄ້າງເອົາໄວ້ໃນຮູຄໍເຂົາພະຍາຍາມດຶງສາຍໜັງຂອງເຄື່ອງລາງເສັ້ນນັ້ນອອກຈາກຄໍ ແຕ່ກໍບໍ່ໄດ້ຜົນ ຊ້ຳບໍ່ໜໍາ ມັນຍິ່ງລຸກໄໝ້ເປັນແປວໄຟແຜດເຜົາຈົນຄວາມຮ້ອນທະລຸຜ່ານເຂົ້າໄປໃນຜິວໜັງກ່ອນຈະເຜົາຜານກ້າມຊີ້ນ ແລ້ວຈິ້ມຈໍ່າລົງໄປສູ່ກະດູກ. ສຽງເນື້ອໜັງຝົດປູດໆ ເປັນສຽງດັງສ່າໆ ບັດນີ້ເຂົາຍິ່ງພະຍາຍາມໃຊ້ມືດຶ້ງດຶງກຸມເອົາເຄື່ອງລາງຂຶ້ນທາງຫົວເພື່ອຫວັງຈະໃຫ້ມັນຫຼຸດອອກຈາກຄໍ ແຕ່ຍິ່ງເຂົາພະຍາຍາມເທົ່າໃດ ສາຍໜັງເສັ້ນນັ້ນກໍຍິ່ງຮັດແໜ້ນເຂົ້າ ... ແໜ້ນເຂົ້າ ບໍ່ຕ່າງຫຍັງກັບກໍາລັງຖືກປະຫານຊີວິດດ້ວຍເຄື່ອງຮັດຄໍຈົນເຂົາຫັນໃຈບໍ່ອອກ ແລະເຂົາກໍຮູ້ວ່າຕົນເອງກໍາລັງຈະຕາຍ ເຊິ່ງເຂົາກໍາລັງຈະຕາຍຢ່າງທຸກທໍລະມານ, ເຂົາຫັນໃຈແບບຫອບຫືດ ແຕ່ກໍບໍ່ມີໃຜເຂົ້າໄປຊ່ວຍ, ບໍ່ມີໃຜມາຊ່ວຍດຶງເອົາເຄື່ອງລາງທີ່ກໍາລັງລຸກໄໝ້ເພືອບພາບອ້ອມຮອບຜິວໜັງເສັ້ນນັ້ນອອກຈາກຄໍຂອງເຂົາ ເຊິ່ງເຂົາບໍ່ເຂົ້າໃຈເລີຍ ແມ່ນແຕ່ຄໍາສິງກໍຍັງນັ່ງເສີຍມັ່ງຢູ່ຂ້າງໆ ຄ້າຍກັບວ່າບໍ່ມີຫຍັງເກີດຂຶ້ນ. ເຂົາບໍ່ເຫັນແປວໄຟຈັກໜ້ອຍເລີຍບໍ? ຮູດັງຂອງເຂົາບໍ່ໄດ້ກິ່ນໄໝ້ຂອງເນື້ອໜັງຫຍັງເລີຍຫວາ? ສີຣິໄດ້ແຕ່ບິດຕົວໄປມາດ້ວຍຄວາມເຈັບປວດ ທັງດີດຂາຂຶ້ນ ທັງກຸມດຶງສາຍໜັງອອກຈາກຄໍ ແລະແລ້ວໃນຄວາມເຈັບປວດສາຫັດຈົນຈະຂາດໃຈຕາຍນັ້ນເຂົາກໍແນມເຫັນແມ່ຍິງຄົນໜຶ່ງ ເຊິ່ງນັ່ງຢູ່ກ້ອງປະຕູປ່ອງຢ້ຽມທັງສົ່ງຮອຍຍິ້ມຢ່າງສະຫງົບຄືກັບນາງຟ້າກໍບໍ່ປານ.

ຄໍາສິງແນມບໍ່ເຫັນແບບນີ້ ເຂົາໄດ້ແຕ່ຄິດວ່າສີຣິຄົງຈ້ອງມອງສິ່ງໃດໜຶ່ງຢ່າງໃຈຈົດຈໍ່ຈາກນັ້ນກໍຫຼັບຕາພ້ອມຫັນໃຈເຂົ້າບາດເລິກໆ ບໍ່ພໍຄາວເຂົາກໍມືນຕາອີກຄັ້ງພ້ອມຈ້ອງມອງໄປທີ່ແມ່ເຖົ້າຄົນໜຶ່ງ ເຊິ່ງນັ່ງຢູ່ກ້ອງປະຕູປ່ອງຢ້ຽມທີ່ຢູ່ຈຸດໄກສຸດຈາກໂຕະບູຊາ.

ບັດນີ້ສີຣິຮູ້ແລ້ວວ່າແມ່ນໃຜເປັນຄົນຂ້າເຂົາ ເຄື່ອງລາງຊິ້ນນັ້ນເອງທີ່ເປັນຕົວບັງຕາບໍ່ໃຫ້ເຂົາສາມາດແນມເຫັນຜີປອບໄດ້. ໃນຄວາມຝັນກໍແມ່ນຍິງຜູ້ນີ້ເອງທີ່ເປັນຄົນໄປເລາະເກັບເອົາວິນຍານຢູ່ໃນປ່າ ແລ້ວປ່ອຍພວກບົ້ງກະເລັນອອກມາເປັນຈຳນວນມະຫາສານ ເຊິ່ງກໍແມ່ນປ້າສວບນີ້ເອງຜູ້ຈັດສາກແຫ່ງວິນຍານອັນຊົ່ວຮ້າຍທັງປວງ ແລະຜີປອບຕົນນັ້ນກໍສິງສູ່ຢູ່ໃນຮ່າງຂອງລາວ. ສີຣິແນມເບິ່ງລາວຜ່ານເປືອກຕາທີ່ກຳລັງຈະປິດສະໜິດ ສ່ວນປ້າສວບກໍໄດ້ແຕ່ຍິ້ມເສີຍຢູ່ ແລະຮອຍຍິ້ມນັ້ນກໍປາກົດເປັນສີແດງໆ ຂຶ້ນມາມັນບໍ່ແມ່ນຍ້ອນສີຂອງນໍ້າໝາກແຕ່ຢ່າງໃດແຕ່ມັນແຝງໄປດ້ວຍເລືອດແຫ່ງຄວາມອາຄາດແຄ້ນ ທັນໃດນັ້ນສີຣິກໍແນມເຫັນວິນຍານທຸກດວງ ເຊິ່ງເປັນພວກສັບພະເວສີທີ່ເລ່ລ້ອນເພາະຕາຍຍ້ອນຄວາມທຸກທໍລະມານ, ວິນຍານເຫຼົ່ານັ້ນພາກັນສິງຢູ່ໃນຮ່າງຂອງປ້າສວບ. ສີຣິຍົກມືຂຶ້ນແລ້ວຊີ້ໄປທາງແມ່ເຖົ້າຜູ້ທີ່ນັ່ງຢູ່ກ້ອງປະຕູປ່ອງຢ້ຽມ ກ່ອນທີ່ພະລັງອັນແຂງແກ່ນເຮືອກສຸດທ້າຍຂອງຕົນຈະໝົດໄປ ແລະເຖິງແມ່ນຄວາມສາມາດໃນການໄດ້ຍິນຂອງເຂົາກຳລັງຈະໝົດໄປພ້ອມກັບລົມຫັນໃຈບາດສຸດທ້າຍ ແຕ່ເຂົາກໍໄດ້ຍິນສຽງເວົ້າຂອງປ້າສວບທີ່ເປັ່ງອອກມາຈາກຣິມສົບ ມັນເປັນສຽງເວົ້າທີ່ສີຣິເອງກໍບໍ່ເຄີຍໄດ້ຍິນມາກ່ອນ ເພາະສຽງທີ່ເປັ່ງອອກມາຈາກປາກຂອງແມ່ເຖົ້າຜູ້ນັ້ນເປັນພະລັງສຽງຂອງຜູ້ຄົນຈຳນວນຫຼາຍ ມີທັງສຽງແຫບຫ້າວ, ສຽງແຄ້ນເຄືອງ, ສຽງຂອງວິນຍານທີ່ເລ່ລ້ອນຜ່ານຫຼາຍຊ່ວງອາຍຸຄົນ ມັນຄືສຽງວິນຍານທັງແມ່ຍິງ ແລະຜູ້ຊາຍທີ່ໄດ້ຮັບຄວາມເດືອດຮ້ອນຈາກການຖືກທາລຸນ ແລະຄວາມໂກດແຄ້ນ, ມັນແມ່ນສຽງຂອງພູດຜີປີສາດເຊິ່ງບໍ່ມີບ່ອນຢູ່ແບບສະຫງົບສຸກ, ວິນຍານທຸກດວງໄດ້ເວົ້າອອກມາຜ່ານປາກຂອງແມ່ຍິງຮ່າງນ້ອຍທີ່ສຸດ ທັງອ່ອນແອທີ່ສຸດວ່າ: "ຫ່າກິນຫົວມຶງບັກເຢມິງ! ເຊື່ອໂລດວ່າມຶງຊິຖືກສາບແສ່ງໃຫ້ເຮັດແບບນີ້ ມຶງຊິຖືກສາບແສ່ງແນ່ນອນ."

ໄຟໄດ້ລຸກລາມເຂົ້າໄປໃນໜ້າເອິກ ພ້ອມເຜົາໄໝ້ທົ່ວຜິວໜັງຂອງສີຣິ ເຊືອກໜັງທີ່ຕິດຢູ່ໄດ້ຮັດແໜ້ນຈົນບາດເລິກເຂົ້າໄປໃນລຳຄໍ, ສີຣິໄດ້ແຕ່ດີ້ນຣົນກະວົນ ກະວາຍ ທັງດີດຂາແດ່ວໆ ໄປມາ ພ້ອມສົ່ງສຽງຮ້ອງຄວນຄາງເປັນຄັ້ງສຸດທ້າຍກ່ອນຂາດໃຈ ແລະແລ້ວເຂົາກໍຈາກໄປ.

ຄຳສິງຈັບຈ້ອງຕາມສາຍຕາທີ່ສີຣິແນມໄປທີ່ຍິງຊະລາຄົນນັ້ນ ທ່ານໝໍນັ່ງເຮັດສະມາທິ ວາງມືພາດໄວ້ເທິງຕັກ ສ່ວນສີໜ້າທ່າທາງກໍສະຫງົບເຢືອກເຢັນກວ່າຄັ້ງກ່ອນຍິງຊະລາຍິ້ມໃສ່ສີຣິດ້ວຍທ່າທາງຕົກປະມ່າເລັກໜ້ອຍ ຈາກນັ້ນທ່ານໝໍກໍຍົກມືຂຶ້ນແລ້ວຊີ້ໜ້າຍິງຄົນນັ້ນ.

"ຜີປອບ" ສີຣິບອກດ້ວຍນໍ້າສຽງທີ່ສະຫງົບເຢືອກເຢັນ. "ຜີປອບສິງຢູ່ໃນຮ່າງລາວ

ນັ້ນແຫຼະ.” ເວົ້າສຸດເຂົາກໍລົ້ມຟຸບລົງໄປທາງໜ້າຄ້າຍກັບອິດເມື່ອຍຂຶ້ນມາແບບກະທັນຫັນ.

**********

ເທົ່າທີ່ສິຣິຮັບຮູ້ໄດ້ ການປະກອບພິທີໄດ້ສິ້ນສຸດລົງພຽງເທົ່ານັ້ນ. ຕອນທີ່ເຂົາຮູ້ເມື່ອຄືງຂຶ້ນມາ ແສງແດດກໍໄດ້ສາດສ່ອງຜ່ານໜ້າປະຕູປ່ອງຢ້ຽມທີ່ປິດສະຈາກບານປະຕູຕິດຢູ່ພ້ອມປະທະໃສ່ໃບໜ້າຂອງເຂົາຄ້າຍຄືກັບນ້ຳມັນຫອມລະເຫີຍອຸ່ນໆ. ອາດຈະເປັນຍ້ອນສັນຊາດຕະຍານ, ເຂົາຈິ່ງເອື້ອມມືໄປຈັບທີ່ບໍລິເວນລຳຄໍຕົນເອງ ແຕ່ປາກົດວ່າບ່ອນນັ້ນບໍ່ມີຜ້າພັນແຜ, ບໍ່ມີແມ່ນແຕ່ຮອຍຂຽວຊ້ຳ ທັງບໍ່ມີອາການບາດເຈັບຫຍັງເລີຍແຕ່ເຄື່ອງລາງຊິ້ນນັ້ນໄດ້ຫາຍໄປເສຍແລ້ວ.

“ບາດແຜທີ່ເກີດຈາກການຕໍ່ສູ້ທາງຈິດວິນຍານຈະບໍ່ປະຮອຍແຜໄວ້ໃຫ້ເຫັນດອກເຢມິງ.”

ສິຣິແນມໄປທີ່ປາຍເສື່ອນອນຍັດເຟືອງແຫ້ງ ເຂົາເຫັນປ້າສວບກຳລັງຕັກແກງຈາກໝໍ້ດຳຂະໜາດໃຫຍ່ລົງໃສ່ຖ້ວຍ. ສີໜ້າຂອງເຂົາຄົງສະແດງອອກເຖິງຄວາມຫວາດລະແວງ ປ້າສວບຈິ່ງຍິ້ມ. “ບໍ່ຕ້ອງຫ່ວງດອກ ພວກມັນໄປໝົດແລ້ວ ເສຍດາຍມື້ຄືນນີ້ທ່ານບໍ່ເຫັນສາກສຳຄັນຊ້ຳ ຕົວຂ້ອຍເອງກໍເກືອບຈະບໍ່ໄດ້ເຫັນຫຍັງເລີຍຄືກັນ ເຖິງແມ່ນຈະເຫັນໄດ້ຊັດແຈ້ງວ່າ ຂ້ອຍເປັນຕົວລະຄອນເອກກໍຕາມ.”

“ຂໍໂທດທີ່ຂ້ອຍຊີ້ມືໄປໃສ່ເຈົ້າ.”

“ມັນເປັນເລື່ອງທີ່ຕ້ອງເຮັດຢູ່ແລ້ວ.” ປ້າສວບຖືຖ້ວຍແກງແລ້ວຍ່າງມາຫາເຂົາພ້ອມຊ່ວຍປະຄອງເຂົາລຸກຂຶ້ນນັ່ງອີງໄມ້ຂີ່ຂອງຕູບ ເຂົາຮູ້ສຶກອ່ອນເພຍ, ປ້າສວບຍື່ນຖ້ວຍແກງພ້ອມບ່ວງໄປທາງເຂົາ ແຕ່ສິຣິກໍຍັງແນມເບິ່ງນ້ຳແກງດ້ວຍຄວາມສົງໄສ.

“ບໍ່ມີຢາເບື່ອດອກເຢມິງ. ທ່ານຕ້ອງກິນແນວບຳລຸງກຳລັງໃສ່ ມື້ຄືນນີ້ທ່ານຮາກອອກຈົນໝົດ.”

“ຂ້ອຍເປັນປານນັ້ນພຸ້ນບໍ?”

“ກໍຍັງດີທີ່ທ່ານກັ້ນມັນໄວ້ຈົນກວ່າໄດ້ອອກມາຮາກຢູ່ທາງນອກ.”

“ຂ້ອຍກໍມີມາລະຍາດແບບນັ້ນຕະຫຼອດແຫຼະ. ມັນເກີດຫຍັງຂຶ້ນ?”

ປ້າສວບນັ່ງຂັດສະມາທິຢູ່ເທິງພື້ນຂະນະທີ່ສິຣິຕັກແກງເຂົ້າໃສ່ປາກ. “ຂ້ອຍຢ້ານວ່າມັນອາດຈະເກີນກຳລັງເລົາຈຶ່ງພໍສົມຄວນ ປົກກະຕິແລ້ວເຂົາເປັນຮ່າງຊົງປະເພດທີ່ຊ່ວຍປິ່ນປົວອາການເຈັບທ້ອງ, ຊ່ວຍກອບກູ້ພວກພືດຜັກຮົ້ວສວນປະມານນັ້ນ ເຊິ່ງເຂົາສາມາດຈັດການກັບປັນຫາເລັກໆ ນ້ອຍໆ ຊຸມນັ້ນໄດ້ດີ ແຕ່ເລື່ອງທີ່ເກີດໃນມື້ຄືນນີ້

ມັນເປັນການລົງໂທດແບບເຕັມໆ ຈາກໄຟນາຣົກ ເຂົາບໍ່ເຄີຍເຮັດພິທີແບບນີ້ມາກ່ອນ ໂຊກດີທີ່ທ່ານເຄີຍ.”

ເງົາມືດຜ່ານແວັບເຂົ້າມາໃນຫົວຂອງສີຣິ ເຂົາເຫັນຕົນເອງກຳລັງໃຊ້ມືບີບຄໍຂອງປ້າສວບໃນລະຫວ່າງການທຳພິທີ ເຂົາຮີບກຳຈັດພາບນັ້ນອອກຈາກຫົວທັນທີ.

“ຂ້ອຍນີ້ຫວາ? ຂ້ອຍຊິມີປັນຍາເຮັດຫຍັງໄດ້ ໃນເມື່ອຂ້ອຍໝົດສະຕິຄືແນວນັ້ນ.”

“ຮ່າງກາຍນີ້ຕ່າງຫາກທີ່ໝົດສະຕິ ແຕ່ເຢມົງພຸ້ນທີ່ຢູ່ກັບພວກເຮົາ. ທ່ານເປັນທີ່ປຶກສາໃຫ້ກັບເລົາຈົງ ແລະເຮັດໃຫ້ທຸກຄົນຢູ່ໃນຄວາມສະຫງົບ ລະຫວ່າງພວກທ່ານສອງຄົນ ກໍແມ່ນທ່ານເອງນັ້ນແຫຼະທີ່ໄລ່ຜີປອບອອກຈາກຕົວຂອງຂ້ອຍໄດ້ສຳເລັດ. [ອີກຄັ້ງທີ່ສີຣິເຫັນຕົນເອງໃຊ້ມືບີບຄໍຍິງຊະລາໄວ້ຢ່າງແໜ້ນ ແຕ່ຄັ້ງນີ້ປາກົດມີສຽງຄ້ອງ ແລະສຽງຮ້ອງໂຫຍຫວນປະປົນຢູ່ນຳ.] ພວກເຮົາໄດ້ເຮັດທຸກຢ່າງເພື່ອໃຫ້ໝັ້ນໃຈວ່າພວກເຂົາຈະບໍ່ສາມາດເຂົ້າສິງໃຜໄດ້ໃນໝູ່ບ້ານ ແມ່ນແຕ່ນາຍທະຫານເພື່ອນຂອງທ່ານ, ໃນຕອນທ້າຍຂອງພິທີເບິ່ງລາວຮ້ອງໄຫ້ບໍ່ຕ່າງຫຍັງກັບເດັກນ້ອຍອຶມໂປ້ພຸ້ນໃດ.”

“ພວກຜີປອບພາກັນໜີໄປຢູ່ໃສ?”

“ປົບເຂົ້າໄປຢູ່ຕາມຕົ້ນໄມ້ ພວກມັນບໍ່ມັກເຂົ້າສິງຮ່າງຄົນພໍເທົ່າໃດດອກ ພວກມັນມັກຢູ່ປ່າຫຼາຍກວ່າ.”

“ເປັນຫຍັງພວກມັນຈິ່ງເລືອກສິງເຈົ້າ?”

“ໜ້າຈະແມ່ນຍ້ອນພວກເຄື່ອງລາງຂຸມນັ້ນແຫຼະ ຂ້ອຍໄດ້ຮັບບາບກຳມາຈາກພວກລູກຄ້າຫຼາຍພໍຄວນ ທັງໄດ້ເຄື່ອງລາງຂອງຄັງທີ່ມາພ້ອມກັບຄຳສາບກໍຫຼາຍ ແລະວິນຍານທີ່ຊົ່ວຮ້າຍກໍມັກຈະມຸ່ງເປົ້າໄປທີ່ແມ່ຍິງເປັນປະຈຳ.”

“ແລ້ວເຈົ້າບໍ່ຮູ້ຕົວຊ້ຳບໍວ່າຖືກພວກມັນເຂົ້າສິງ?”

“ເຈົ້າຂອງຮ່າງຈະບໍ່ຮູ້ສຶກຕົວເລີຍ ພວກມັນຈະສະແດງອິດທິພົນຢູ່ໃຕ້ຈິດສຳນຶກຫຼາຍກວ່າ ຕົວຢ່າງເຄື່ອງລາງຊິ້ນນີ້.” ປ້າສວບຍົກເຄື່ອງລາງແກ້ວປຣິຊຳສີດຳຂຶ້ນຊີ້ໜ້າຂອງສີຣິ. “ຂ້ອຍບໍ່ຮູ້ເລີຍວ່າມັນມີອຳນາດຊົ່ວຮ້າຍແຝງຢູ່.”

ໃນຂະນະທີ່ເຄື່ອງລາງເສັ້ນນັ້ນກວັດແກວ່ງໄປມາ ພາບທີ່ເກີດຂຶ້ນໃນຄືນກ່ອນກໍປາກົດເດັ່ນຊັດຍິ່ງຂຶ້ນ ສີຣິໄດ້ກິ່ນຂີ້ເຜີ້ງທີ່ລະເຫີຍອາຍຈາກທຽນ. ປ້າສວບກໍກຳລັງຕໍ່ສູ້ເພື່ອຂັບໄລ່ໃຫ້ເຂົາອອກຫ່າງ ດ້ວຍພະລັງອຳນາດທີ່ເຫຼືອເຊື່ອເໜືອມະນຸດ ໂດຍບໍ່ມີໃຜເຂົ້າມາຊ່ວຍເຫຼືອລາວເລີຍ ສ່ວນເລົາຈົງກໍນອນຫຼັບນິ້ງຢູ່ເທິງພື້ນໂດຍມີເລືອດໄຫຼຊຶມອອກມາຈາກມຸມປາກ.

ປ້າສວບແນມເບິ່ງໜ້າສີຣິ. “ມີຫຍັງບໍ?”

“ຂ້ອຍ ... ຂ້ອຍເຫັນພາບເລື່ອງລາວຂອງມື້ຄືນນີ້ ມັນຄືຄວາມຈິງອີ່ຫຼີ.”

"ຂ້ອຍຢ້ານວ່າມັນຈະຕ້ອງເປັນແບບນັ້ນພຽງຊົ່ວຂະນະໜຶ່ງ ມັນເປັນພຽງຄວາມເຊື່ອ ພາຍຫຼັງທີ່ທ່ານພົບພໍ້ກັບເຫດການນີ້ ນັ້ນເປັນອີກເຫດຜົນໜຶ່ງທີ່ທ່ານຈຳເປັນຕ້ອງສວມເຄື່ອງລາງຊິ້ນນີ້ໄວ້ຄືເກົ່າ." ປ້າສວບຕູດກົ້ນໄປຕາມພື້ນເພື່ອໃຫ້ໄດ້ເຂົ້າໃກ້ສິຣິຕື່ມຂຶ້ນ ທັງທີ່ມືກໍຍັງຖືເຄື່ອງລາງຊິ້ນນັ້ນຢູ່ຄືເກົ່າ.

"ໃສ່ມັນຄືນຊື້ຫວາ? ແຕ່ມັນເປັນເຄື່ອງລາງບັງຕາບໍ່ໃຫ້ຂ້ອຍເຫັນຜີປອບຕັ້ງແຕ່ຕອນຕົ້ນພຸ້ນນະ."

"ມັນບັງຕາບໍ່ໃຫ້ທ່ານເຫັນກໍຕອນທີ່ພວກມັນສິງຢູ່ໃນຮ່າງຂອງຄົນ ຕອນນີ້ພວກມັນໄດ້ອອກຈາກຮ່າງຂ້ອຍແລ້ວເດ ບໍ່ມີຫຍັງທີ່ຈະເປັນພິດເປັນໄພອີກແລ້ວລະ. ເຄື່ອງລາງຊິ້ນນີ້ຈະສົ່ງຜົນກົງກັນຂ້າມ ສ່ວນເຄື່ອງລາງສີດຳກໍຈະຊ່ວຍບໍ່ໃຫ້ພວກມັນກັບມາແກ້ແຄ້ນທ່ານອີກ. ທ່ານຍັງຟັງຂ້ອຍເວົ້າຢູ່ບໍ?"

ສິຣິແກວ່ງຫົວໄປມາ ຄວາມງຽບສະຫງົບໃນຍາມເຊົ້າຕູ່ໄດ້ຖືກບຸກລຸກດ້ວຍສຽງຂອງການປະກອບພິທີໃນມື້ຄືນນີ້ ... ສຽງຂອງຊາວບ້ານທີ່ຮ້ອງຮຽກຊື່ຂອງເຂົາຊ້ຳໄປຊ້ຳມາ ... ແມ່ຍິງຄົນໜຶ່ງກຳລັງຮ້ອງໄຫ້ຄວນຄາງ ນາງຄືເມຍຂອງເລົາຈົງທີ່ກຳລັງໝູບໜ້າຢູ່ເທິງຮ່າງຂອງຜູ້ເປັນຜົວ.

ຄວາມອົບອຸ່ນໃນຍາມເຊົ້າເລີ່ມເລື່ອນຫາຍໄປ, ດວງຕາເວັນທີ່ສາດສ່ອງເຂົ້າມາທາງໜ້າປະຕູປ່ອງຢ້ຽມກໍເຄື່ອນທີ່ຫຼົບເຂົ້າໄປລີ້ຢູ່ໃນກັບເມກ.

"ມັນຄືວ່າຄືກັບເລື່ອງຈິງແທ້."

"ສວມໃສ່ອັນນີ້ສາເທາະເຢມິງ ເມື່ອໃສ່ເຄື່ອງລາງຊິ້ນນີ້ແລ້ວພາບຊຸມນັ້ນກໍຈະຫາຍໄປດອກ."

"ຂ້ອຍເຮັດແນວນັ້ນບໍ່ໄດ້ດອກ ຂ້ອຍຮູ້ດ້ວຍເຫດຜົນບາງຢ່າງວ່າບໍ່ຄວນໃສ່ມັນອີກຢູ່ນີ້ມີບາງຢ່າງຜິດປົກກະຕິ."

"ທ່ານຕ້ອງໄວ້ໃຈຂ້ອຍ." ປ້າສວບເລີ່ມໝົດຄວາມອົດທົນ ແລະແລ້ວສຽງຂອງລາວກໍປ່ຽນເປັນສຽງຕ່ຳລົງ.

"ເຈົ້າຮູ້ໄດ້ແນວໃດວ່າຜີພວກນັ້ນຄິດຈະມາແກ້ແຄ້ນຂ້ອຍ?" ເລືອດຢອດນ້ອຍໆໄດ້ປາກົດທີ່ມຸມປາກຂອງປ້າສວບ ເຮັດໃຫ້ສິຣິເຂົ້າໃຈທັນທີ. ພາບເຫດການໃນຍາມຄ່ຳຄືນບໍ່ໄດ້ຫວນກັບວົກວົນມາໃນຕອນເຊົ້າແຕ່ຢ່າງໃດ ແຕ່ພາບໃນຍາມເຊົ້າຕ່າງຫາກທີ່ຜຸດໂຜ່ຂຶ້ນມາໃນຍາມຄ່ຳຄືນ ສິຣິບໍ່ໄດ້ຄິດເອງເອີເອງວ່າເຂົາກຳລັງບີບຄໍປ້າສວບ ລາວຕັ້ງເຮັດແທ້ນີ້ແຫຼະ ມັນແມ່ນຄວາມຈິງທີ່ເກີດຂຶ້ນ, ບ່ອນນອນອັນອ່ອນນຸ້ມ ... ປ້າສວບຜູ້ໃຈດີ ລວມທັງແກງແຊບໆ... ທັງໝົດນັ້ນລ້ວນແຕ່ແມ່ນຜີປອບເປັນຜູ້ບັງຄັບໃຫ້ມັນເກີດຂຶ້ນຢູ່ໃນຫົວຂອງເຂົາ.

ວິນຍານຊົ່ວຮ້າຍກຳລັງກ່ອມເຂົາ, ມັນກຳລັງເກ້ຍກ່ອມໃຫ້ສີຣິຍອມສວມໃສ່ເຄື່ອງລາງຊິ້ນນັ້ນ ເພື່ອເຮັດໃຫ້ພະລັງຂອງເຂົາອ່ອນແຮງລົງ ເຊິ່ງເປັນຄວາມຫວັງດຽວທີ່ຈະເຮັດໃຫ້ພວກມັນຢູ່ຕໍ່ໄດ້, ສີຣິບີບຄໍປ້າສວບເພື່ອຂັບໄລ່ພວກວິນຍານເຫຼົ່ານັ້ນໃຫ້ອອກຈາກຮ່າງຂອງລາວ, ພວກມັນບໍ່ສາມາດສູ້ຢັນກັບພະລັງຂອງເຂົາໄດ້. ພວກມັນໄດ້ຂ້າຮ່າງຊິງ ແຕ່ເຢນິງມີພະລັງແຂງແກ່ນພໍສົມຄວນ. ເຂົາປ່ອຍມືຂ້າງໜຶ່ງອອກຈາກຄໍຂອງປ້າສວບ ແລ້ວຕົບໜ້າລາວຢ່າງໂຫດຫ້ຽມໄຮ້ມະນຸດສະທຳ.

"ຈົ່ງອອກໄປ ຜີປອບອອກໄປສະ!"

ແລະແລ້ວພວກມັນກໍຫາຍຕົວໄປ ທ່າມກາງຄວາມຟັ່ງຟ້າວຂອງພະລັງສະຖິດທີ່ໄຫຼພ່າວໄປຕາມອາກາດພ້ອມຖືກດູດອອກໄປຈາກຫ້ອງແຫ່ງນັ້ນ. ຮ່າງຄີງຂອງປ້າສວບອ່ອນຕົວລົງປວກປຽກ ສ່ວນເຢນິງກໍປ່ອຍໃຫ້ຮ່າງຂອງປ້າສວບຫຼົ່ນລົງໃສ່ກັບພື້ນ ເຂົາກວາດສາຍຕາແນມເບິ່ງພວກຊາວບ້ານອ້ອມຮອບທີ່ກຳລັງມືນຕາອ້າປາກຄ້າງບໍ່ເວົ້າບໍ່ຈາຫຍັງອອກມາມີພຽງນ້ຳຕາໄຫຼອາບຍ້ອຍຈົນເປື້ອນໃບໜ້າ ເປັນອັນວ່າໜ້າວຽກຂອງເຂົາໄດ້ຈົບສິ້ນແລ້ວ ຮ່າງຄີງຂອງສີຣິຄ່ອຍໆ ລົ້ມຕົວລົງກັບພື້ນແລ້ວເຊືອບຫຼັບໄປ.

**********

ພໍເມື່ອເຂົາຕື່ນຂຶ້ນ ດວງຕາເວັນໄດ້ສາດສ່ອງຜ່ານປະຕູປ່ອງຢ້ຽມທີ່ບໍ່ມີບານຄ້າຍຄືກັບນ້ຳມັນຫອມລະເຫີຍອຸ່ນໆ ປະທະໃສ່ໃບໜ້າ, ເຂົາໄດ້ຍິນສຽງຄວ້າງເຄ້ງຂອງບ່ວງກະທົບກັບໝໍ້ ແຕ່ກໍບໍ່ກ້າຮອດຈະແນມເບິ່ງ. ເຂົາໄດ້ຍິນສຽງຖອກນ້ຳແກງລົງໃສ່ຖ້ວຍ ແຕ່ກໍພະຍາຍາມບໍ່ຽງເບ່ນຄວາມສົນໃຈທີ່ຈະບໍ່ຍອມຮັບຟັງສຽງນັ້ນອີກ.

"ລາວຕື່ນແລ້ວ."

ສຽງຂອງຜູ້ຊາຍຄົນໜຶ່ງຕາມດ້ວຍສຽງຄາງຕອບຮັບຂອງຜູ້ຊາຍອີກຄົນ. ສີຣິມືນຕາຂຶ້ນເບິ່ງຈຶ່ງເຫັນພວກຜູ້ເຖົ້າຈຳນວນໜຶ່ງນັ່ງເປັນກຸ່ມຢູ່ອີກຟາກໜຶ່ງຂອງຕູບ. ທຸກຄົນລຸກຢືນຂຶ້ນແລ້ວພາກັນຍ່າງຂ້າມຫ້ອງມາແບບຟ້າວໆ ເບິ່ງຄືວ່າພວກເຂົາດີໃຈທີ່ໄດ້ເຫັນສີຣິ. ຍິງສາວທີ່ເຂົາເຄີຍພົບມາກ່ອນໜ້ານີ້ກຳລັງຕັກແກງແລ້ວຢາຍໃຫ້ແຕ່ລະຄົນນ້ຳແກງໄດ້ສົ່ງກິ່ນຫອມຫວນຊວນນ້ຳລາຍໄຫຼ.

ສີຣິບໍ່ປາກບໍ່ເວົ້າຫຍັງກັບພວກຜູ້ຊາຍກຸ່ມນັ້ນ ເຂົາໄດ້ແຕ່ມືນຕາເມົ້າໆ ແນມເບິ່ງພວກເຂົາ. ເຂົາສອດຊ່ອງເພື່ອຄົ້ນຫາຄວາມຜິດປົກກະຕິ ... ແມ່ນຫຍັງກໍຕາມທີ່ຜິດແປກຈາກທຳມະຊາດ ຫຼືພາວະທີ່ແສງປ່ຽນແປງຢ່າງກະທັນຫັນ ແຕ່ແລ້ວຊັດກໍເປັນຄົນເວົ້າຂຶ້ນກ່ອນ.

“ເປັນແນວໃດແລ້ວເຢມິງ?” ສຽງນັ້ນອາດຈະແມ່ນສຽງຂອງຊັດແທ້ ແຕ່ສີຣິບໍ່ຢາກໃຫ້ຕົນເອງຜິດພາດຂຶ້ນເປັນຄັ້ງທີສອງ.

“ເຈົ້າແມ່ນໃຜ?”

ພວກຜູ້ຊາຍໄດ້ແຕ່ແນມເບິ່ງໜ້າກັນແບບງຸນງົງ. “ຂ້ອຍກະແມ່ນຊັດຫັ້ນເດ ເປັນຫຍັງອີກແລ້ວ?”

“ນີ້ແມ່ນປີຫຍັງ?”

“ປີ ໑໙໗໘.”

“ວັນທີເດ?” ສີຣິຄິດວ່າພວກວິນຍານຊົ່ວຮ້າຍບໍ່ສາມາດບອກວັນ-ວັນທີ-ເດືອນປີຕາມປະຕິທິນໄດ້.

ພວກຜູ້ເຖົ້າໄດ້ແຕ່ແນມເບິ່ງໜ້າກັນອີກຄັ້ງ ໜ້າເສຍດາຍທີ່ພວກເຂົາເອງກໍບໍ່ໄດ້ໃສ່ໃຈກັບວັນທີພໍເທົ່າໃດ ແຕ່ແລ້ວໜຶ່ງໃນນັ້ນກໍລອງສ່ຽງຕອບ.

“ເດືອນພະຈິກຕິເບາະ?”

“ວັນຫຍັງ?”

“ວັນຈັນ.”

“ບໍ່ຕິ! ເປັນໄປບໍ່ໄດ້ ມັນເກີດຫຍັງຂຶ້ນກັບວັນສຸກ, ເສົາ ກັບທິດ?”

“ທ່ານນອນຫຼັບທັງສາມມື້.”

“ທ່ານໝົດສະຕິບໍ່ຮູ້ສຶກຕົວຕັ້ງແຕ່ ... ຄືນນັ້ນພຸ້ນ.”

ມັນບໍ່ໜ້າຈະເປັນໄປໄດ້. ສີຣິຮູ້ສຶກສະໝອງຕື້ ທັງຫິວເຂົ້າຜິດປົກກະຕິ ກິ່ນຫອມຂອງແກງເຮັດໃຫ້ທ້ອງຂອງເຂົາຮ້ອງຂຶ້ນເປັນແຊວໆ ແຕ່ໃຈຂອງເຂົາກໍຍັງບໍ່ຢຸດເຊົາຈາກອາການຫວາດລະແວງກັບພາບທີ່ປາກົດຢູ່ຕໍ່ໜ້າ.

“ເລົາຈິງໄປໃສ?”

ຊັດກົ້ມໜ້າເສົ້າແນມເບິ່ງມືຕົນເອງ. “ເຂົາຈາກໄປແລ້ວ.”

“ຈາກໄປແລ້ວ ໝາຍເຖິງຕາຍຕອນເຮັດພິທີຫັ້ນບໍ?”

ທຸກຄົນງຶກຫົວຢ່າງເຄັ່ງຂຶມ.

“ສະພາບຮ່າງກາຍຂອງເຂົາຍັງບໍ່ພ້ອມທີ່ຈະທົນທຸກທໍລະມານກັບຄວາມປັ່ນປວນພາຍໃນຂະນະຖືກຜີເຂົ້າສິງ ທີ່ແທ້ແລ້ວເຂົາກໍບໍ່ເຄີຍສ່ຽງທີ່ຈະເຮັດພິທີແບບນີ້ມາກ່ອນ ເຊິ່ງເຂົາເອງກໍເປັນໂລກຫົວໃຈຢູ່ແລ້ວ ຂະໜາດຜີປອບກໍຍັງຮູ້. ຂ້ອຍເອງກໍຍັງຄິດບໍ່ເຖິງວ່າ ພວກມັນພາກັນດົນບັນດານໃຈໃຫ້ເຂົາເຫັນພາບຫຍັງຈົນຕ້ອງຕົກໃຈຈົນຊໍ໋ອກ ແຕ່ຂ້ອຍບໍ່ໄດ້ຢາກຮູ້ຊໍ້າດອກ.”

“ຂ້ອຍພໍເດົາອອກຢູ່.”

“ຖືວ່າພວກເຮົາຍັງໂຊກດີທີ່ເຢມິງເປີດໃຈຍອມຮັບເທບສັກສິດ ມັນປຽບເໝືອນການຕໍ່ສູ້ໃນສະໜາມຮົບຂອງຜີສາດ.”

“ຂ້ອຍຄິດວ່າຄືຊິໄດ້ປະຈັນໜ້າກັບຜີສາດໂຕນັ້ນແລ້ວແຫຼະ. ແລ້ວມັນເກີດຫຍັງຂຶ້ນກັບຜີປອບໂຕນັ້ນ?”

“ກັບຄືນເຂົ້າໄປໃນປ່າແລ້ວເດ.”

“ງ່າຍໆ ແບບນັ້ນເລີຍບໍ? ພວກມັນພຽງແຕ່ດີໃຈທີ່ໄດ້ແລ່ນແກ່ຫາງຈຸກກົ້ນເຂົ້າໄປໃນປ່າແບບນັ້ນຫວາ?”

“ມັນກະບໍ່ມີຫຍັງທີ່ຈະຕ້ອງດີໃຈ ຫຼືມີຄວາມສຸກອີ່ຫຍັງດອກ. ຢູ່ໃນປ່າກໍຍັງຄືງມີສິ່ງຊົ່ວຮ້າຍຫຼາຍຢ່າງແຝງຢູ່ ແຕ່ຕອນນີ້ພວກເຮົາໄດ້ຮັບການປົກປ້ອງຄຸ້ມຄອງຈາກສິ່ງສັກສິດ ເຊິ່ງກໍຍາກທີ່ພວກຜີປອບຊຸມນັ້ນຈະມາເຂົ້າສິງຄົນໃນບ້ານໄດ້ອີກຄັ້ງ ເພາະເຢມິງໄດ້ໃຫ້ພອນແກ່ພວກເຮົາ ທັງສວດມົນຄາຖາປົກປ້ອງໝູ່ບ້ານຂອງພວກເຮົານຳອີກ.”

“ເຂົາເປັນຄົນດີແທ້ໆ.” ສິຣິຕັດສິນໃຈວ່າພາບທັງໝົດເຫຼົ່ານີ້ແມ່ນເຫດການຂອງຄວາມເປັນຈິງ ເພາະທ້ອງໄສ້ຂອງເຂົາກຳລັງຮ້ອງຄ່ຳຄວນບໍ່ຕ່າງຫຍັງກັບແບ້ທີ່ຖືກລ່າມໄວ້ເມື່ອໄດ້ກິ່ນຂອງນ້ຳແກງ. ການຟື້ນຕົວຄືນມາອີກຄັ້ງຫຼັງຈາກທີ່ໄດ້ຫຼັບໄຫຼໄປຕັ້ງເຈັດສິບສອງຊົ່ວໂມງບໍ່ແມ່ນເລື່ອງງ່າຍເລີຍ ແລະເຂົາຈຳເປັນຕ້ອງໄດ້ຮັບການຊ່ວຍເຫຼືອຈາກພວກຜູ້ເຖົ້າເພື່ອພະຍຸງເຂົາໃຫ້ລຸກນັ່ງ ຮ່າງກາຍຂອງພວກເຂົາປະກອບດ້ວຍເລືອດເນື້ອເຊື້ອໄຂແຕ່ສ່ວນໃຫຍ່ກໍເປັນກະດູກຫຼາຍກວ່າ ຍິງສາວໜ້າແດງກ່ຳຂະນະກຳລັງຕັກແກງເຂົ້າໃສ່ປາກຂອງເຂົາ ທີ່ຈິງແລ້ວເຂົາສາມາດຕັກກິນເອງໄດ້ ແຕ່ເຂົາມັກໃຫ້ນາງຮັບໃຊ້ຫຼາຍກວ່າ.

“ທ່ານຮ້ອຍເອກເປັນແນວໃດ?” ເຂົາຖາມຂະນະຊົດນ້ຳແກງສຽງດັງ.

“ເຂົາກໍໄດ້ຮັບພອນເຊັ່ນກັນ. ເບິ່ງຄືວ່າເຂົາມີຄວາມເຊື່ອໝັ້ນຫຼາຍຂຶ້ນ ແລະຕັດສິນໃຈວ່າຈະປົກປ້ອງອ້າຍນ້ອງທະຫານຂອງເຂົາໄດ້. ປ້າສວບກໍໄດ້ຂາຍເຄື່ອງລາງໃຫ້ພວກທະຫານຫຼາຍອັນ ທັງຂາຍດີປານເທນ້ຳເທທ່າຈົນເຮັດນຳບໍ່ທັນ.”

ສິຣິຢຸດສະຫງັກຈາກການກິນທັນທີ. “ປ້າສວບຫວາ? ລາວຍັງລອດຢູ່ຫວາ?”

“ລາວບໍ່ໄດ້ເປັນຫຍັງດອກ ລາວຮອດບໍ່ຮູ້ເລື່ອງອີ່ຫຍັງໃນຄືນມື້ນັ້ນຊ້ຳ ເຈົ້າຂອງຮ່າງທີ່ຖືກສິງບໍ່ຮູ້ສຶກຕົວຫຍັງດອກ ພໍແຕ່ທ່ານຊີ້ຕົວໄປໃສ່ລາວປັບ ນາງສວບກໍສະຫຼົບປຸບແລ້ວຜີປອບກໍອອກມາອາລະວາດແບບປ່ວງບ້າ.”

“ແຕ່ຂ້ອຍ ... ຂ້ອຍບໍ່ໄດ້ບີບຄໍປ້າສວບຈົນຕາຍແມ່ນບໍ?”

“ບໍ່ນາ. ທ່ານທຳຮ້າຍຜີປອບພຸ້ນ ສ່ວນມືທັງສອງຫັ້ນກໍບໍ່ແມ່ນມືຂອງທ່ານເອງດອກ ແລະຄໍທີ່ຖືກບີບກໍບໍ່ແມ່ນຄໍຂອງນາງສວບ.”

“ຂອບໃຈເທວະດາຟ້າແຖນທີ່ເປັນແບບນັ້ນ ປ້ອນຂ້ອຍອີກແດ່ສາວນ້ອຍໜ້າຮັກ.”

ຍິງສາວຕັກແກງເຂົ້າໃສ່ປາກຂອງເຂົາດ້ວຍອາການເຂີນອາຍຈົນແກ້ມແດງອ່ອງຕ່ອງປານໝາກເຜັດສຸກ.

ພໍເມື່ອສີຣິຕັ້ງສະຕິຈາກການນອນຫຼັບໄດ້ຢ່າງເຕັມທີ່ ບວກກັບໄດ້ຮັບພະລັງງານຈາກອາຫານ ຈຶ່ງເປັນຕົວການກະຕຸ້ນໃຫ້ສີຣິຮູ້ສຶກດີຂຶ້ນທັງກະປີ້ກະເປົ່າກວ່າໃນຊ່ວງຫຼາຍໆ ປີຜ່ານມາ ບາງທີເຂົາອາດຮູ້ສຶກດີຂຶ້ນຫຼາຍກວ່າທີ່ເຄີຍເປັນໃນເມື່ອກ່ອນ ມີອີ່ຫຍັງບາງຢ່າງທີ່ກຳລັງພຸ່ງຜ່ານຂຶ້ນໃນຕົວຂອງເຂົາ ແລະແລ້ວພາບແຫ່ງຄວາມຫຼັງອັນຫວານຊື່ນໃນໄວໜຸ່ມທີ່ເຂົາກັບບົວເຄີຍມີຕໍ່ກັນກໍຜຸດຂຶ້ນມາໃນຫົວ ເພາະມັນເປັນຄວາມຮູ້ສຶກດີອີ່ຫຼີຈົນບໍ່ມີສິ່ງໃດມາແທນທີ່ໄດ້.

ຫຼັງຈາກຕື່ນຂຶ້ນມາໄດ້ຊົ່ວໂມງໜຶ່ງ ສີຣິກໍຍ່າງອອກໄປຮອບໆ ບໍລິເວນໝູ່ບ້ານເມຢູໂບເພື່ອກ່າວຄຳອຳລາ ແລະຮັບຂອງຂວັນເລັກໆ ໜ້ອຍໆ ແລະຄຳສະແດງຄວາມຍິນດີຈາກຊາວບ້ານ ພໍມາຮອດຕູບຂອງປ້າສວບ ສີຣິກໍກ່າວຄຳຂໍໂທດນຳລາວອີກຄັ້ງແຕ່ແນ່ນອນວ່າລາວຈື່ຈຳເຫດການຫຍັງບໍ່ໄດ້ເລີຍທັງບໍ່ຮູ້ສຶກຫຍັງໝົດ ລາວຍັງບໍ່ເຂົ້າໃຈຊ້ຳວ່າສີຣິກຳລັງເວົ້າເລື່ອງຫຍັງເມື່ອເຂົາເວົ້າເຖິງກົນອຸບາຍທີ່ລາວໃຊ້ກັບສີຣິ, ປ້າສວບຍື່ນຖົງຢາງໜັງໃບນ້ອຍໆ ໃຫ້ສີຣິ ເຊິ່ງເຂົາກໍຮັບເອົາມັນດ້ວຍຄວາມຫວາດລະແວງ.

“ອັນນີ້ບໍ່ແມ່ນເຄື່ອງລາງສີດຳຕິເນາະ?”

“ບໍ່ແມ່ນເຢມົງ ເຄື່ອງລາງຊິ້ນນັ້ນມັນຖືກທຳລາຍໄປແລ້ວ ມັນຖືກທຸບຖິ້ມຈົນແຕກມຸ່ນເປັນພັນໆ ຊິ້ນ ແລ້ວກໍຖືກເອົາໄປໂຮຍຖິ້ມໃສ່ໃນປ່າທີ່ຖືກຕັດພຸ້ນລະລອງເປີດເບິ່ງແມ.” ສີຣິດຶງເຊືອກທີ່ມັດປາກຖົງນັ້ນອອກ ຈຶ່ງພົບເຄື່ອງລາງສີຂາວທີ່ມີຂະໜາດນ້ອຍກວ່າເຄື່ອງລາງສີດຳຊິ້ນນັ້ນ ແຕ່ຄວາມເກົ່າແກ່ແມ່ນພໍຊ່ຳໆ ກັນ ມັນຫ້ອຍຕ່ອງແຕ່ງຢູ່ສາຍທີ່ຖັກດ້ວຍຜົມເປຍສີຂາວ. “ເຄື່ອງລາງຊິ້ນນີ້ຕ່າງກັບເຄື່ອງລາງສີດຳ ເພາະຖ້າຢູ່ແຫ່ງໃດຫາກມີສິ່ງຊົ່ວຮ້າຍສິງຢູ່ ທ່ານຈະແນມເຫັນມັນທັນທີຖ້າທ່ານສວມໃສ່ມັນໄວ້ກໍຈະບໍ່ມີວິນຍານຢູ່ໃສສາມາດບັງຕາທ່ານໄດ້ອີກ.”

“ຫວັງວ່າຜີປອບຄົງຈະບໍ່ກັບມາວຸ້ນວາຍທ່ານອີກ ແຕ່ຜີພວກນັ້ນມັນຊົ່ວຊ້າສາມານທັງໂຫດຮ້າຍສຸດ ມີວິນຍານຊົ່ວຮ້າຍຫຼາຍດວງຮວມຕົວກັນຢູ່ ແຕ່ໃນພິທີໄລ່ຜີອາດເຮັດໃຫ້ພວກມັນຮູ້ໄດ້ວ່າແມ່ນໃຜມີອຳນາດເໜືອກວ່າ ແຕ່ຂ້ອຍຢາກໃຫ້ທ່ານກຽມພ້ອມຮັບມືໄວ້ເພາະຢ້ານມັນກັບມາແກ້ແຄ້ນຄືນຕາມຄຳສາບ ເຄື່ອງລາງຊິ້ນນີ້ຈຶ່ງຈຳເປັນສຳລັບທ່ານ, ສັນຍາໄດ້ບໍວ່າທ່ານຈະໃສ່ມັນໄວ້ຕະຫຼອດເວລາ.”

ຄວາມຮູ້ສຶກເໝືອນກັບເຄີຍຜ່ານເຫດການແບບນັ້ນມາກ່ອນກໍໄດ້ປາກົດເປັນແວັບໆເຂົ້າມາໃນຫົວຂອງສີຣິ ເຖິງແມ່ນມັນຈະເປັນເລື່ອງໄຮ້ສາລະງົມງວາຍກໍຕາມ. ປ້າສວບ

ບໍ່ແມ່ນຜີປອບ ແຕ່ລາວກຳລັງຍື່ນມືມາຊ່ວຍເຫຼືອເຂົາ ພຽງແຕ່ວ່າ ຖ້າລາວຈື່ຈຳຫຍັງບໍ່ໄດ້ເລີຍວ່າຕົນເອງຖືກຜີສິງ ແລ້ວລາວຮູ້ໄດ້ແນວໃດກ່ຽວກັບຄຳສາບ? ເຂົາຮອດບໍ່ຢາກຈະຄິດເຖິງມັນຈຶ່ງພະຍາຍາມກຳຈັດຄວາມຄິດດັ່ງກ່າວອອກໄປ.

ເຂົາກ່າວຂອບໃຈປ້າສວບສຳລັບເຄື່ອງລາງຊິ້ນນັ້ນ ແຕ່ກໍຮອດບໍ່ຄິດຈະຢາກໃສ່ມັນຊ້ຳດອກ ເຂົາອວຍພອນໃຫ້ລາວໂຊກໜານກັບການຄ້າຂາຍເຄື່ອງລາງຂອງຂັງທີ່ລາວປະດິດຂຶ້ນ ແລະຫວັງວ່າມັນຈະສາມາດສ້າງລາຍຮັບໄດ້ຢ່າງພຽງພໍໃຫ້ແກ່ຄົນໃນໝູ່ບ້ານຈົນຫຼຸດພົ້ນອອກຈາກພາວະຄວາມທຸກຍາກໄດ້. ນະທີ່ແຫ່ງນັ້ນຍິ່ງມີທະຫານປະຈຳການເປັນຈຳນວນຫຼວງຫຼາຍ ແລະຄວາມເຊື່ອເລື່ອງໂຊກລາງຊ້ຳພັດແຜ່ກະຈາຍລຸກລາມໄປໄວກວ່າໄຟໄໝ້ປ່າຊ້ຳອີກ.

ໃນຕອນບ່າຍຂອງມື້ນັ້ນ, ຄຳສິງໄດ້ຕິດຕາມສີຣິໄປທີ່ລານເດີ່ນບິນ ເບິ່ງຄືວ່າທ່ານຮ້ອຍເອກຈະປ່ຽນເປັນຄົນລະຄົນ. ກິລິຍາທ່າທາງທີ່ເຄີຍກະວົນກະວາຍໃຈຂອງເຂົາໄດ້ຫາຍໜີໄປໝົດແລ້ວ ແລະເຂົາກໍກ້ານຸ່ງຊຸດເຄື່ອງແບບເພື່ອສະແດງຕຳ ແໜ່ງຂອງຕົນຢ່າງອົງອາດກ້າຫານ ເຄື່ອງລາງຂອງເຂົາໂຜ່ອອກມາຈາກຮອຍຍະວ່າງຂອງກະດຸມເສື້ອ.

ທຸກຄົນແນມເບິ່ງເຄື່ອງບິນແຢັກທີ່ກຳລັງບິນມາຈາກຂອບຟ້າບໍ່ຕ່າງຫຍັງກັບແມງເຜິ້ງທີ່ບິນມາພ້ອມກັບລະອອງເກສອນດອກໄມ້ແບບເຕັມຕື້ງ. ສີຣິກັບຄຳສິງຍ່າງກອດຄໍກັນໄປທີ່ເຮືອບິນ ບໍ່ຕ່າງຫຍັງກັບສອງສະຫາຍທີ່ຫາກໍລອດຊີວິດມາຈາກສົງຄາມອັນຕະລາຍຄັ້ງຍິ່ງໃຫຍ່.

“ທ່ານບໍ່ຟ້າວກັບໄວກໍໄດ້ດອກ ອາດຈະພັກຕໍ່ອີກຈັກສອງສາມມື້.” ຄຳສິງເວົ້າຂຶ້ນ.

“ຂ້ອຍຄິດວ່ານອນຫຼັບປານຕາຍຕັ້ງສາມມື້ຄືງຈະເປັນການພັກຜ່ອນທີ່ພຽງພໍແລ້ວແຫຼະອີກຢ່າງໜຶ່ງ ແມ່ນໃຜຈະໄປຮູ້ວ່າສະຫາຍໂຊວຽດສຸດຫຼໍ່ຂອງພວກເຮົາຈະຜ່ານມາທາງນີ້ອີກເມື່ອໃດ? ເມື່ອພວກເຂົາມາແລ້ວຂ້ອຍກໍຈຳຕ້ອງສວຍໂອກາດກັບກ່ອນ.”

“ທ່ານສີຣິ, ແລ້ວເລື່ອງບົດລາຍງານ ...”

ສີຣິຫົວຂຶ້ນ. “ຖ້າຫົວໜ້າຂອງເຈົ້າຄືກັນກັບຫົວໜ້າຂອງຂ້ອຍ ຄິດວ່າເລື່ອງທີ່ເກີດຂຶ້ນໃນອາທິດແລ້ວນີ້ຄວນຈະປ່ອຍໃຫ້ມັນເປັນເລື່ອງປົກກະຕິຈະດີກວ່າ ເອົາແບບວ່າຂ້ອຍໃຊ້ເວລາທຳການຊັນນະສູດສົບໄດ້ສອງວັນຈາກນັ້ນກໍເຈັບປ່ວຍຍ້ອນໂລກ ...”

“ມາເລເຣຍ.”

“ເອີແມ່ນມາເລເຣຍຫັ້ນແຫຼະທີ່ເຮັດໃຫ້ຂ້ອຍຕ້ອງນອນພັກຈົນເຊົາໄຂ້ ຂ້ອຍຈື່ຫຍັງບໍ່ໄດ້ເລີຍເລື່ອງນີ້ງ, ເຈົ້າເດ?”

“ຈື່ບໍ່ໄດ້ຄືກັນ.” ທັງສອງຈັບມືອຳລາ. “ທ່ານສີຣິ, ທ່ານຮູ້ສຶກແນວໃດ?”

“ເລື່ອງຫຍັງລະ?”

“ກໍເລື່ອງການສະແດງລະຄອນສັດແບບບ້າເລືອດທັນແຫຼະ. ເລື່ອງລາວທັງໝົດທີ່ເກີດຂຶ້ນນັ້ນຂ້ອຍຮູ້ວ່າຕົນເອງຄົງຈະກັບມາເປັນປົກກະຕິບໍ່ໄດ້ອີກແລ້ວ ທັງທີ່ຂ້ອຍເປັນພຽງຜູ້ສັງເກດການຊື່ໆ ແຕ່ສຳລັບທ່ານ ... ບໍ່ຮູ້ແຫຼະ ... ທ່ານຄືຊິງົງກັບເລື່ອງນີ້ໜັກພໍຄວນແຫຼະເນາະ?”

“ຊິບໍ່ໃຫ້ງົງໄດ້ແນວໃດ? ຂ້ອຍເປັນຄົນທີ່ເຊື່ອໃນເລື່ອງວິທະຍາສາດ ແຕ່ສິ່ງທີ່ເກີດຂຶ້ນກັບຂ້ອຍນັ້ນຊ້ຳພັດເປັນສິ່ງທີ່ບໍ່ສາມາດອະທິບາຍໄດ້ດ້ວຍຫຼັກເຫດຜົນ ແຕ່ເຈົ້າກໍເຫັນກັບຕາໃນສິ່ງທີ່ມັນເກີດຂຶ້ນແລ້ວ ສ່ວນຂ້ອຍກໍສຳຜັດໄດ້ດ້ວຍຄວາມຮູ້ສຶກ ຖ້າເປັນແນວນີ້ແລ້ວຂ້ອຍຈະກັບໄປເປັນທ່ານໝໍສິຣິຜູ້ຖືກຂົ່ມເຫັງໄດ້ແນວໃດ?”

“ຂ້ອຍຈັ່ງແມ່ນເຫຼື້ອມໃສໃນຕົວຂອງທ່ານອີ່ຫຼີ.”

“ເພາະເຫດຜົນຫຍັງລະ?”

“ພຽງແຕ່ຄິດວ່ານັບຈາກນີ້ໄປ ໂລກຂອງທ່ານກໍຈະໜ້າສົນໃຈຫຼາຍຂຶ້ນ.”

“ຂ້ອຍເຈັດສິບສອງປີແລ້ວໃດບ່າວນ້ອຍ ຄວາມສົນໃຈທີ່ມີຕໍ່ໂລກເລີ່ມຄ່ອຍໆ ໝົດໄປແບບຊ້າໆ ບໍ່ຢາກຈະຮັບຮູ້ຫຍັງທັງໝົດ ສິ່ງທີ່ຂ້ອຍຫວັງຢູ່ກໍຄື ຂ້ອຍຈະລືມທຸກຢ່າງໄດ້ໃນທັນທີທີ່ອອກຈາກຄຳມ່ວນ. ເວົ້າຄວາມຊື່ເທາະ ໃນຄວາມຄິດທີ່ຈະພາເຢມີງກັບໄປທີ່ວຽງຈັນນຳຫັ້ນ ມັນຄືວ່າເຮັດໃຫ້ຂ້ອຍຮູ້ສຶກຢ້ານຂຶ້ນມາແບບບອກບໍ່ຖືກ.”

ບົດສົນທະນາຂອງພວກເຂົາຖືກລົບກວນດ້ວຍສຽງຄາງຮື່ມໆ ຂອງເຄື່ອງບິນທີ່ກຳລັງເຕັ້ນກະເດັ້ງໄປຕາມຮັນເວຍ໌ ເມື່ອເຮືອບິນແຢັກໃກ້ຈະຈອດແບບສະໜິດ ປະຕູກໍເປີດອ້າອອກ ແລ້ວສົ່ງຜູ້ໂດຍສານຄົນໜຶ່ງລົງ ຈາກນັ້ນກໍຮັບເອົາສິຣິກັບຜູ້ຊ່ຽວຊານດ້ານປ່າໄມ້ສອງຄົນຂຶ້ນໄປ ກ່ອນທີ່ເຮືອບິນຈະໝູນກັບລຳ ແລ້ວບິນຂຶ້ນຄືນອີກຄັ້ງພາຍໃນສິບນາທີ.

ສິຣິສອດສ່ອງສາຍຕາເບິ່ງຜ່ານໜ້າປະຕູປ່ອງຢ້ຽມ ກໍເຫັນຮ້ອຍເອກຄຳສີງຍ່າງກັບຄືນໄປທີ່ລົດກະບະ. ກາໂຕໜຶ່ງເຊິ່ງມີຫອນເປັນສີນ້ຳຕານງອຍຢູ່ເທິງຂອນໄມ້ເຊິ່ງຢູ່ຫ່າງອອກໄປບໍ່ຮອດຫ້າແມັດ ທ່າທາງຂອງມັນຄືຈັ່ງວ່າບໍ່ຮູ້ສຶກສະທົກສະທ້ານກັບສຽງດັງສະນັ່ນຂອງເຮືອບິນແຕ່ຢ່າງໃດ. ຄົນຂັບລົດແລ່ນເຂົ້າໄປໃສ່ນົກໂຕນັ້ນໂດຍຄິດວ່າມັນຈະບິນໜີໄປ ແຕ່ມັນກໍຍັງນັ່ງທ້າທາຍເສີຍຢູ່ຈົນຄົນຂັບລົດຜູ້ນັ້ນຍອມໃຈມັນ ພໍແຕ່ລົດກະບະແລ່ນອອກໄປ ກາໂຕນັ້ນກໍບິນຕາມຫຼັງ.

ເຈົ້າໜ້າທີ່ປ່າໄມ້ຜູ້ນຸ່ງເສື້ອແຂນຍາວ ໄດ້ສະແດງຄວາມເອື້ອເຟື້ອຂອງຕົນໂດຍຊີ້ໃຫ້ສິຣິເບິ່ງພື້ນທີ່ຂອງໂຄງການ ເມື່ອຍົນໄດ້ພາພວກເຂົາຜ່ານເຂດນັ້ນໄປ. ທ່ານໝໍຮູ້ສຶກປະຫຼາດໃຈກັບຄວາມກວ້າງໃຫຍ່ໄພສານຂອງໂຄງການນີ້. ຜືນປ່າດັ້ງເດີມຖືກຖາງຈົນແປນເອີດເຕີດຕິດຕໍ່ກັນຫຼາຍໆ ເຮັກຕາ, ພາບການທຳລາຍລ້າງຂະຫຍາຍຕົວອອກໄປ

ທົ່ວທຸກທິດທາງຈົນສຸດສາຍຕາ ສີຣິເອົາຮູດັງຕົນເອງໄປຈຸກັບແວ່ນແກ້ວທີ່ມີຮອຍຂີດຂວ່ານເປັນຈຸດ ພ້ອມແກວ່ງຫົວຊ້າໆ.

"ຜີບ້າ." ເຂົາສັງເກດເຫັນວ່າມືຂອງຕົນໄດ້ລ້ວງເຂົ້າໄປໃນກະເປົາພ້ອມຢິບເອົາຖົງໜັງແບບບໍ່ໄດ້ຕັ້ງໃຈ ເຂົາຈິ່ມພຶມພຳເພື່ອຂໍຂະມາຜີປອບ ພ້ອມກັບພວກວິນຍານເລ່ລ້ອນອື່ນໆ. "ຂ້ອຍຂໍໂທດ ຂ້ອຍບໍ່ຮູ້ຫຍັງເລີຍອີ່ຫຼີ."

"ວ່າຫຍັງເກາະ?" ເຈົ້າໜ້າທີ່ປ່າໄມ້ເອ່ນຕົວເຂົ້າໄປໃກ້ກັບສີຣິເພື່ອຈະໄດ້ຍິນສຽງເຂົາຊັດເຈນຂຶ້ນ.

"ບໍ່ມີຫຍັງດອກ ຂ້ອຍສວດມົນໜ້ອຍໜຶ່ງ."

"ຢ້ານຕອນຂີ່ຍົນແມ່ນບໍທ່ານ?"

"ຢ້ານທີ່ຈະຕ້ອງກັບລົງໄປຢຽບເທິງພື້ນຫຼາຍກວ່າ ຟັງເດີສະຫາຍ ເຈົ້າຄືຊິບໍ່ຮູ້ແມ່ນບໍວ່າໄມ້ຊຸມນີ້ຖືກສົ່ງໄປໃສໃນໃຕ້ຫວັນ?"

12

# ຢ້ານຕອນຢືນແຕະພື້ນ

ໃນຂະນະທີ່ເຄື່ອງບິນກຳລັງລົງຈອດແຕະກັບພື້ນດິນນັ້ນ ຄວາມຢ້ານກົວຂອງສິຣິໄດ້ປາກົດຂຶ້ນມາຢ່າງເປັນເລື່ອງເປັນລາວ ຄວາມຈິງແລ້ວຍົນແຢັກລຳນັ້ນກໍບໍ່ໄດ້ມີປັນຫາຂ້ອງຄາຫຍັງເລີຍ ນອກເໜືອຈາກທ່າທາງອັນອັບປະລັກຂ້າງນອກຂອງມັນເທົ່ານັ້ນ. ແຕ່ທັນທີທີ່ລົງຈາກເຄື່ອງມາຮອດສະໜາມບິນວັດໄຕ ຄວາມຂ້ອງຄາໃຈ ບວກກັບຄວາມຫວາດລະແວງທີ່ໄດ້ປະຖິ້ມໄວ້ເບື້ອງຫຼັງກໍຊ້ຳພັດມາລໍຖ້າເຂົາຢູ່ທີ່ນັ້ນ ເຫັນໄດ້ຊັດເຈນວ່ານັກຮົບຜູ້ທີ່ບໍ່ຍອມພ່າຍແພ້ແຫ່ງຄຳມ່ວນໄດ້ພາດການເດີນທາງໃນຖ້ຽວບິນລຳນີ້.

ເຂົາແນມອ້ອມຮອບໄປທີ່ລະບຽງຕ້ອນຮັບຜູ້ເດີນທາງມາເຖິງຢູ່ອາຄານຜູ້ໂດຍສານເກົ່າໆ ດ້ວຍທ່າທາງຕົກປະມ່າ ອາດມີຄົນໃດຄົນໜຶ່ງທີ່ຢູ່ໃນກຸ່ມເຝົ້າມອງຖືປືນ ແລະຈ້ອງມາໃສ່ເຂົາກໍເປັນໄດ້ ສ່ວນພະນັກງານຜູ້ກວດເອກະສານການເດີນທາງກໍປາກົດວ່າຈ້ອງຕາໃສ່ທີ່ເຂົາດົນນານເກີນຄວນ ພໍເມື່ອຄົນຂັບສາມລໍ້ລ້ຽວຜິດຖະໜົນຂະນະເດີນທາງກັບບ້ານ ສິຣິກໍຊັກຖາມແບບລົວໆ ຈົນຄົນຂັບສາມລໍ້ເກືອບຈະຮ້ອງໄຫ້ອອກມາ. ເຂົາສັ່ງໃຫ້ສາມລໍ້ຢຸດຢູ່ຫ່າງຈາກບ່ອນພັກປະມານຊ່ວງໜຶ່ງຂອງຖະໜົນ ຈາກນັ້ນກໍຍ່າງມາຕະຫຼອດໄລຍະທາງທີ່ເຫຼືອ ເຂົາບໍ່ລືມທີ່ຈະຢຸດຢູ່ບ່ອນຫົວມຸມປາກຮ່ອມ ພ້ອມສຳຫຼວດສອດສ່ອງບັນດາເຮືອນຫຼັງຕ່າງໆ ທີ່ຢູ່ກົງກັນຂ້າມກັບເຮືອນຂອງຕົນ.

ພໍແຕ່ຍ່າງມາຮອດປາກທາງເຂົ້າເຮືອນ ສັນຊາດຕະຍານທັງໝົດທີ່ມີກໍພາກັນຕື່ນຕົວຂຶ້ນ ເຂົາໄດ້ກຽມພ້ອມຮັບມືກັບທຸກສິ່ງທີ່ອາດຈະເກີດຂຶ້ນໄວ້ແລ້ວ ... ນັ້ນກໍຄືເຫດການທີ່ບໍ່ຄາດຝັນນອກເໜືອເຫດການເກົ່າທີ່ເຄີຍເກີດຂຶ້ນມາກ່ອນ ເຂົາຮູ້ສຶກປະ ຫຼາດໃຈເປັນຢ່າງຍິ່ງທີ່ໝາຊາລູບເງີຍໜ້າຂຶ້ນແນມເບິ່ງເຂົາມາແຕ່ທາງໜ້າບ້ານພ້ອມຍິ່ງແຂ້ວກ່ອນຍ່າງເປະເຊະປະຊະເຂົ້າໄປຫາເຂົາ ທັງກະດິກຫາງໄປມາດຸກດິກບໍ່ຕ່າງຫຍັງກັບທຸງຊາດປິວສະບັດຢູ່ກາງສາຍລົມມໍລະສຸມ. ມັນເອົາຮູດັງຖູໄຖໄປມາໃສ່ກັບຂາຂອງສິຣິ ແລະຫງ່ຽງຄໍຄ້າຍກັບວ່າມັນຕ້ອງການໃຫ້ສິຣິສະແດງຄວາມຮັກຕອບຈັ່ງຊັ້ນແຫຼະ.

ທ້ອງຟ້າສີບົວອ່ອນເປັນສັນຍານຊີ້ບອກເຖິງຕອນຄ້າຍແລງ ເຊິ່ງນາງວົງກໍຍ່າງໄປທີ່ຜ້າກັ້ງພ້ອມຈຸດໄຟຕະກຽງ ທັງປິດບານປະຕູປ່ອງຢ້ຽມໃນຫ້ອງ, ນາງບໍ່ເຄີຍຄິດມາກ່ອນ

ວ່າຈະໄດ້ເຫັນພາບທີ່ສີຣິກຳລັງຕົບທ້ອງຊາລູບຫຼິ້ນ ຂະນະທີ່ໝາໂຕນັ້ນຍັງນອນເອົາຂາປັ່ນລົດຖີບເທິງອາກາດເສີຍຢູ່ຢ່າງສະບາຍອຸລາ ນາງວິງຢືນນິ້ງອ້າປາກຄ້າງ.

ສີຣິເງີຍໜ້າຂຶ້ນແລ້ວກໍຫົວ. “ສະບາຍດີຕອນຄໍ່ານາງວິງ.” ແລ້ວພຶມພໍາຄ່ອຍໆ ໃຕ້ລົມຫັນໃຈ. “ຢ່າໄດ້ຄິດເລື່ອງບ້າບໍຫຍັງຖ້ອນ.”

**********

ສີຣິຍັງຄຶງງຸນງົງໃນຄວາມສຳພັນຮູບແບບໃໝ່ຂອງຕົນກັບຊາລູບຂະນະແວ່ເຂົ້າໄປຫ້ອງນໍ້າທີ່ຢູ່ຊັ້ນລຸ່ມພ້ອມກັບນໍ້າຕົ້ມຮ້ອນໆ ເພື່ອຈະໃຊ້ອາບ ນັ້ນເປັນສິ່ງທີ່ເຂົາສົມຄວນໄດ້ຮັບມັນ.

ເຂົາສາມາດບອກໄດ້ວ່າມີໃຜຜູ້ໜຶ່ງບຸກລຸກເຂົ້າມາໃນຫ້ອງພັກ ທັງເດົາໄດ້ວ່າຄົນຜູ້ນັ້ນແມ່ນໃຜ ມີຊອງຈົດໝາຍໜຶ່ງສະບັບທີ່ບໍ່ມີຈ່າໜ້າຊອງວາງໄວ້ເທິງໂຕະ ແນ່ນອນວ່າຄົນທີ່ເອົາຈົດໝາຍມາສົ່ງຕ້ອງແມ່ນສາວແກ່ບໍ່ມີຜົວຈາກກົມສາມັນສຶກສາຜູ້ນັ້ນແທ້ແຫຼະ ເຊິ່ງພຽງແຕ່ຖືໂອກາດຫາຂໍ້ອ້າງວ່າໄດ້ເຂົ້າມາປັດກວາດ, ເຊັດຖູ, ລ້າງຖ້ວຍບ່ວງລວມເຖິງຮື້ຖອນປຶ້ມຕ່າງໆ ຂອງເຂົາມາຈັດຮຽງກັນເປັນແຖວໃຫ້ຮຽບຮ້ອຍຈົນວ່າສີຣິຊອກຫາຫຍັງກໍບໍ່ເຫັນເຊິ່ງກໍຮອດເວລາທີ່ສີຣິຕັດສິນໃຈຈະລົງທຶນຊື້ກະແຈມາລັອກໄວ້ເພາະການກະທຳບາງຢ່າງມັນໂຫດຮ້າຍກວ່າການກໍ່ອາດຊະຍາກຳຊໍ້າອີກ.

ເຂົາຍ່າງລົງໄປອາບນໍ້າແບບສະບາຍທັງບໍ່ຮ້ອນບໍ່ເຄືອງຫຍັງທັງໃຊ້ນໍ້າມວກທີ່ເຫຼືອຢູ່ມາຊະໂລມໃສ່ເທິງຜົມແທນຢາສະຜົມ. ເຂົາສຳຫຼວດຮ່າງກາຍເພື່ອຊອກຫາຮ່ອງຮອຍການຕໍ່ສູ້ທີ່ຫາກໍຜ່ານພົ້ນໄປໝາດໆ ແຕ່ກໍບໍ່ພົບຄວາມຜິດປົກກະຕິໃດໆ ຊໍ້າບໍ່ໜຳເຂົາຊໍ້າພັດຮູ້ສຶກວ່າຕົນເອງດູດີຂຶ້ນຫຼາຍກວ່າຕອນທີ່ເຂົາເດີນທາງອອກຈາກເຮືອນໄປ. ພາຍຫຼັງທີ່ທຳຄວາມສະອາດຮ່າງກາຍຈົນຮູ້ສຶກສົດຊື່ນຂຶ້ນແດ່ແລ້ວ ເຂົາກໍຄວ້າເອົາຜ້າແພຂາວມ້ານມານຸ່ງກ່ອນຈະຍ່າງກັບໄປທີ່ຫ້ອງພັກ ແລະລໍຖ້າໃຫ້ໝໍ້ຕົ້ມນໍ້າຟົດເພື່ອຈະຊົງກາເຟ. ເຂົາຈັບເອົາຕະກຽງນໍ້າມັນແລ້ວຫິ້ວໄປທີ່ໂຕະກາເຟ ພ້ອມໃຊ້ປາກເປົ່າອາຍຮ້ອນອອກຈາກຈອກຈົນຄວັນລອຍລ່ອງໄປຕາມອາກາດກາງຫາວ ເຂົາພ້ອມແລ້ວທີ່ຈະເປີດຈົດໝາຍອອກມາອ່ານ ເຂົາພິຈາລະນາເບິ່ງຮອຍກາວທີ່ຕິດກັບຊອງຈົດໝາຍປາກົດວ່າຍັງບໍ່ທັນມີໃຜແຕະຕ້ອງມັນເທື່ອ ທັງບໍ່ພົບຮ່ອງຮອຍໃດໆ ກ່ຽວກັບການພົ່ນອາຍນໍ້າ ຫຼືເຮັດໃຫ້ມັນປຽກ ເຂົາໃຊ້ມີດເຫຼັ້ມເກົ່າແລ້ວແຫກປາກຊອງຈົດໝາຍໃຫ້ຂາດອອກ ກ່ອນຈະດຶງເອົາເຈ້ຍສອງແຜ່ນຢູ່ທາງໃນອອກມາ.

ຈາກລາຍເຊັນທີ່ປາກົດຢູ່ໜ້າກະດາດແຜ່ນທຳອິດນັ້ນ ເຂົາຈິ່ງເຫັນໄດ້ວ່າຈົດໝາຍ

ນີ້ຖືກຂຽນໂດຍ "ເພື່ອນຮ່ວມຕໍ່ສູ້ຕ້ານອາດຊະຍາກຳ", ໝາຍຄວາມວ່າ ໂພສີເອງກໍຢ້ານຈະມີຄົນລັກເປີດອ່ານເຊັ່ນກັນ.

ຄຳຂຶ້ນຕົ້ນຂອງຈົດໝາຍພໍຈັບໃຈຄວາມໄດ້ຢ່າງເປັນວັກເປັນຕອນ.

**********

ໄມເກຣດເພື່ອນຮັກ,

ຍິງສາວຊ່າງຕັດຜົມຄົນນັ້ນໄດ້ເສຍຊີວິດແລ້ວ. ພໍຮູ້ຂ່າວທຳອິດ ຂ້ອຍກໍຄິດສົງໄສຄືກັບສິ່ງທີ່ເຈົ້າສົງໄສ ແຕ່ວ່າຊ່ວງນັ້ນສະຫາຍ ຄ ບໍ່ຢູ່ ແລະນີ້ຄືຫຼັກຖານຊີ້ວັດວ່າແມ່ນການຂ້າຕົວຕາຍ ຕອນທີ່ມີການແຈ້ງຄວາມເຂົ້າມານັ້ນຂ້ອຍຍັງຢູ່ສະຖານີ ທາງຕຳຫຼວດທີ່ໄປກວດສອບຫ້ອງພັກໄດ້ພົບສົບຂອງນາງພ້ອມກັບຈົດໝາຍລາຕາຍສະບັບໜຶ່ງ ນາງເຊືອດຂໍ້ມືຂອງຕົນເອງດ້ວຍມີດໂກນທີ່ເອົາມາແຕ່ຮ້ານເສີມຄວາມງາມ.

ແຂນທັງສອງຂ້າງຂອງນາງຖືກແຊ່ໄວ້ຢູ່ໃນຊາມນໍ້າ ເຊິ່ງຂ້ອຍຄິດວ່າຕ້ອງແມ່ນນໍ້າອຸ່ນໃນຕອນທີ່ນາງຂ້າຕົວຕາຍ ເພາະນີ້ເປັນວິທີທີ່ເຮັດໃຫ້ເລືອດບໍ່ຢຸດໄຫຼອອກຈາກປາກບາດ ຮ່າງຂອງນາງຂາວຊີດຄືກັບແຜ່ນເຈ້ຍ ດັ່ງນັ້ນຈິ່ງຂ້ອນຂ້າງຊັດເຈນວ່ານາງເສຍເລືອດຫຼາຍຈົນເສຍຊີວິດ ເສຍດາຍທີ່ເຈົ້າບໍ່ຢູ່ ບໍ່ຊັ້ນສົບຂອງນາງຕ້ອງຖືກສົ່ງໄປໃຫ້ເຈົ້າທຳການສັນລະສູດ ແຕ່ແລ້ວທາງວັດກໍຕ້ອງການຝັງສົບຂອງນາງດ້ວຍເຫດຜົນທາງສາສະໜາ ເຊິ່ງແນ່ນອນວ່າເຈົ້າຕ້ອງເຂົ້າໃຈດີກວ່າຂ້ອຍ.

ຂໍ້ຄວາມໃນຈົດໝາຍສະບັບນັ້ນໄດ້ສາລະພາບວ່າ ນາງຮັກສະຫາຍ ຄ ຫຼາຍຈົນນາງຄິດອິດສາເມຍຂອງເຂົາ ແຕ່ກໍບໍ່ຮູ້ວິທີທາງທີ່ຈະເຮັດໃຫ້ເຂົາເລີກລາກັບຜູ້ເປັນເມຍໄດ້ ນາງຈິ່ງຕັດສິນໃຈຖອຍຕົວອອກມາຈາກການເປັນຄູ່ແຂ່ງນັ້ນ ການທີ່ນາງຈະເຂົ້າຫາທ່ານນາງ ນ ບໍ່ໄດ້ເປັນປັນຫາເລີຍ ມີລາຍລະອຽດເລັກນ້ອຍບາງຢ່າງທີ່ຂ້ອຍລືມກວດສອບ (ຂໍໂທດອາດເປັນຍ້ອນຂ້ອຍເຄີຍປູກຜັກໃນປີທີ່ຜ່ານມາ) ຄືວ່າ ຮ້ານບ່ອນທີ່ນາງເຮັດວຽກຊໍ້າເປັນບ່ອນດຽວກັບຮ້ານທີ່ທ່ານນາງ ນ ໄປເຮັດຜົມເປັນປະຈຳ ຂ້ອຍຄິດວ່າມັນອາດຈະບໍ່ເປັນເລື່ອງຍາກທີ່ນາງຈະລັກລອບເອົາຢາໄຊຢາໄນດ໌ເຂົ້າໄປປົນໃສ່ໃນຂວດຢາແກ້ປວດ ໃນຂະນະທີ່ທ່ານນາງ ນ ກຳລັງອົບຜົມ ຫຼືເຮັດຫຍັງກໍໄດ້ຕາມທີ່ພວກແມ່ຍິງມັກເຮັດໃນຮ້ານແບບນັ້ນ.

ຂ້ອຍໄດ້ທຳການສອບປາກຄຳສະຫາຍ ຄ ເບິ່ງຄືກັບວ່າເຂົາເອງກໍຮູ້ສຶກວຸ້ນວາຍໃຈພໍສົມຄວນ ເຊິ່ງເຫັນວ່າເຂົາຄົງຈະຮັກຍິງສາວຜູ້ນີ້ບໍ່ໜ້ອຍເລີຍແຫຼະ

ສຳລັບເລື່ອງທັງໝົດນີ້ ຂ້ອຍມີຄວາມຄິດຢູ່ໜຶ່ງ ຫຼືສອງຢ່າງ ຂ້ອຍຍັງບໍ່ໄດ້ສິ່ງລາຍງານຫຍັງເລີຍນອກເໜືອເລື່ອງທີ່ວ່າມີຄົນຂ້າຕົວຕາຍ ຂ້ອຍຈະໄປປຶກສາກັບເຈົ້າຫຼັງຈາກກັບແຕ່ພາກເໜືອ (ສຳມະນາ) ໑. ເທົ່າທີ່ສັງເກດຮູບການແລ້ວ ເຫັນວ່າສະຫາຍ ຄ ບໍ່ມີຄວາມຜິດ, ໔. ຄາຕະກອນຖືກພິຈາລະນາຄວາມຜິດ ແລະຕັດສິນຄະດີດ້ວຍຄວາມຮັບຜິດຊອບຊົ່ວດີຂອງນາງເອງແລ້ວ, ໓. ຂ້ອຍສົງໄສວ່າການສ້າງເຫດການແບບເປີດເຜີຍໃຫ້ສັງຄົມຮູ້ເຊັ່ນນີ້ຈະເປັນປະໂຫຍດກັບຄົນໃດຄົນໜຶ່ງ ຫຼືບໍ່.

ແຕ່ແນ່ນອນວ່າຂ້ອຍເອງກໍເປັນພຽງຕຳຫຼວດຄົນໜຶ່ງ ແລ້ວຂ້ອຍຈະໄປຮູ້ເລື່ອງຫຍັງຫຼາຍກວ່ານີ້ລະ? ແຕ່ຖ້າເຈົ້າຫາກບໍ່ເຫັນດີກັບສິ່ງທີ່ຂ້ອຍຄິດ ຂ້ອຍກໍຍິນດີຈະນຳມັນກັບມາພິຈາລະນາໃໝ່ ຫວັງວ່າວັນພັກຂອງທ່ານຄົງຈະລາບລື່ນດີ ຄົງຈະໄດ້ຍິນເລື່ອງເລົ່າຫຼາຍຢ່າງຈາກປາກຂອງທ່ານໃນບໍ່ຊ້ານີ້. ດ້ວຍຄວາມປາຖະໜາດີ.

ເພື່ອນຮ່ວມຕໍ່ສູ້ຕ້ານອາດຊະຍາກຳ

**********

ກາເຟໃນຈອກຈົນເຢັນແລ້ວ.

"ຄິດແລ້ວວ່າມັນຕ້ອງເປັນແບບນັ້ນ." ສິຣິຄ້າງໝໍ້ຕົ້ມນ້ຳໃໝ່ອີກຄັ້ງ ແລ້ວຕັກເອົາກາເຟຣາໂບ່ຍບ່ວງສຸດທ້າຍລົງໃສ່ໃນເຄື່ອງກອງ. "ປັນຫາທຸກຢ່າງຖືກຜູກຕິດ ແລະຝັງແໜ້ນໄວ້ຈົນມິດຊິດ." ເຂົາຈັບເອົາຈອກກາເຟທີ່ຫາກໍຊົງໃໝ່ໆ ໄປທີ່ໂຕະຂຽນໜັງສືໂດຍຖິ້ມຕະກຽງນ້ຳມັນໄວ້ຢູ່ເທິງໂຕະກາເຟ ເຂົາໃຊ້ປາກເປົ່າອາຍຮ້ອນອອກຈາກຈອກແລ້ວທອດສາຍຕາອອກໄປທາງເດີ່ນວັດບ່ອນທີ່ມີແສງສາດສ່ອງຈາກດວງຈັນ.

ຈີວອນສີເຫຼືອງປິວວ່ອນໄປມາເບົາໆ ຢູ່ເທິງຮາວຕາກເຄື່ອງ ພະສົງຜູ້ຊະລາອົງໜຶ່ງຕັກນ້ຳຈາກໄຫທີ່ປັ້ນດ້ວຍດິນເຜົາຂະໜາດໃຫຍ່ມາຖອກໃສ່ຫົວຂອງຈົວນ້ອຍ, ແມວວັດສອງໂຕພາກັນນອນສະບາຍຢູ່ເທິງຝາກະໂປງລົດເຣໂນລ ເຊິ່ງຕອນນີ້ມັນຖືກຫຸ້ມດ້ວຍຂີ້ໝ້ຽງຈົນເຕັມ ທັງຖືກຖິ້ມໄວ້ໃຫ້ເປັນສິ່ງປະດັບເອ້ຢູ່ສວນຂອງວັດ ທຸກສິ່ງຢ່າງປາກົດວ່າຢູ່ໃນຄວາມງຽບສະຫງົບ.

"ປັນຫາທຸກຢ່າງຖືກຜູກຕິດ ແລະຝັງແໜ້ນໄວ້ຈົນມິດຊິດ."

13

# ເຖິງເວລາຂ້າ

ສິຣິເຂົ້ານອນເດິກພໍສົມຄວນ ທັງຕື່ນນອນແຕ່ເຊົ້າໆ ໂດຍບໍ່ຝັນຫຍັງເລີຍ ໃນຂະນະທີ່ເຂົາກຳລັງອອກຈາກບ້ານ ເຂົາໄດ້ໃຊ້ສິ່ວງັດກະສູນລູກປືນສອງລູກອອກຈາກຮູທີ່ຢູ່ເທິງປະຕູໜ້າບ້ານ ໂດຍຖິ້ມຮອຍອັນເຮິະຮ້າຍໄວ້ ເຊິ່ງສິຣິຮູ້ດີວ່ານາງວິງຈະຕ້ອງຈົ່ມບູດຈົ່ມເນົ່າກັບຮອຍອັນນີ້ອີກຄົນເປັນເດືອນພຸ້ນແຫຼະ. ໃນຂະນະທີ່ເຂົາກຳລັງທຳການງັດແງະຮອຍລູກປືນຢູ່ນັ້ນ, ຊາລູບກໍນັ່ງເຝົ້າຕິດກັບຕີນທັງແຫງນໜ້າເບິ່ງເຂົາດ້ວຍຄວາມສັດທາ.

ດ້ວຍຄວາມກະຕືລືລົ້ນທີ່ຈະໄດ້ຮູ້ຜົນຂອງການຊັນນະສູດສົບຈາກຫງຽນທົງ, ສິຣິຈິ່ງໄປຮອດຫ້ອງເກັບສົບຕັ້ງແຕ່ຫົກໂມງເຊົ້າ ເຊິ່ງມັນກໍເຊົ້າເກີນໄປແມ່ນແຕ່ຮ້ານລໍ້ຂາຍເຝີແຄມທາງກໍຍັງບໍ່ທັນເປີດ ເນື່ອງຈາກສິຣິຫວັງວ່າຈະໄດ້ພົບບາງສິ່ງຢ່າງທີ່ໜ້າສົນໃຈໃນຫ້ອງ ແຕ່ແລ້ວເຂົາກໍຕ້ອງຜິດຫວັງ ເພາະຢູ່ໜ້າໂຕະເຮັດວຽກຂອງເຂົາບໍ່ມີຮອດແມ່ນແຕ່ຂໍ້ຄວາມ, ຫຼືຈົດໝາຍ ຫຼືແມ່ນແຕ່ບົດລາຍງານທີ່ຂຽນໄວ້ແລ້ວ. ສົບຂອງຮ້ອກແລະຫຣັນກໍບໍ່ມີຢູ່ໃນຕູ້ແຊ່ແຂງເຊິ່ງຝາຕູ້ເປີດຄ້າງໄວ້ທັງຖືກຖອດປັກສຽບໄຟອອກ. ຂໍ້ຄວາມສຸດທ້າຍທີ່ຕຸ້ຍໄດ້ຈົດບັນທຶກໄວ້ໃນປຶ້ມບັນທຶກການຝຶກງານຊໍ້າພັດແມ່ນຜົນການຊັນນະສູດສົບຂອງຫຣັນໝາຍເລກ ໑ ທີ່ເຂົາເອງເປັນຄົນຊັນນະສູດ ເຊິ່ງກໍບໍ່ໜ້າແປກໃຈພໍເທົ່າໃດເພາະນາງອາດບໍ່ສາມາດຈົດບັນທຶກການລາຍງານຈາກທ່ານໝໍຊັນນະສູດສົບຄົນຫວຽດນາມໄດ້.

ແມ່ນແຕ່ຈະອິດສາໄປແຕ່ເຊົ້າຊໍ້າພັດເກືອບບໍ່ປາກົດເຫັນຫຍັງທັງຊິ້ນ ສິຣິມີເວລາເຫຼືອເຟືອ ດັ່ງນັ້ນເຂົາຈິ່ງຈັບເອົາສໍດຳຂຶ້ນມາພ້ອມຂຽນຈົດໝາຍສະບັບໜຶ່ງກ່ອນຈະຍ່າງລົງໄປທາງຫຼັງຫ້ອງການຂອງຕຶກສະພາ. ເວລານັ້ນຖະໜົນລ້ານຊ້າງທີ່ມີຄວາມກວ້າງຕັ້ງສີ່ເລນໄດ້ຖືກຍຶດຄອງໂດຍບັນດານັກແລ່ນກັບພວກຂີ່ລົດຖີບ, ບັນດາພໍ່ລຸງທີ່ກຳລັງຝຶກມວຍໄທ່ເກັກກຸ່ມໜຶ່ງກຳລັງຝຶກຊ້ອມກົນລະວິທີໃນການຕໍ່ສູ້ກັບສັດຕູທີ່ເບິ່ງບໍ່ເຫັນແບບຊ້າໆ ເປັນຈັງຫວະຢູ່ຮົ່ມເງົາໃຕ້ກ້ອງອະນຸສາວະລີ.

ທ່ານສະພາຍັງນອນຫຼັບໄຫຼຢູ່ເທິງຕຽງ ແຕ່ຜູ້ເວນຍາມກໍໄດ້ສັນຍາວ່າຈະສົ່ງ

ຈົດໝາຍສະບັບນີ້ໃຫ້ສະຫາຍສິວິໄລເມື່ອເຂົາມາຮອດຫ້ອງການ ເມື່ອສີຣິກັບຄືນໄປທີ່ໂຮງໝໍກໍພໍດີຈວບກັບພໍ່ຄ້າຂາຍເຝີທີ່ກຳລັງເປີດຮ້ານ ເຂົາໄດ້ກິນເຝີທີ່ປຸງແລ້ວດ້ວຍນ້ຳຕົ້ມໃໝ່ໆ ທີ່ກຳລັງຟົດປູດໆ ເປັນຄົນທຳອິດ ແຕ່ລົດຊາດຂອງມັນກໍຍັງເໝືອນເດີມ ຄືຈະແມ່ນນ້ຳຊຸບຄ້າງຄືນ.

ເຂົານັ່ງກິນເຝີແບບບໍ່ຟ້າວບໍ່ຟັ່ງ ຈາກນັ້ນກໍຄ່ອຍຍ່າງເຂົ້າໄປໃນໂຮງໝໍ ເຂົາມີຫຍັງໃຫ້ເຮັດເພື່ອຂ້າເວລາຕັ້ງເຄິ່ງຊົ່ວໂມງ ດັ່ງນັ້ນເຂົາຈິ່ງຍ່າງໄປອ້ອມຮອບຫ້ອງການຂົນຂວາຍເຊິ່ງຕັ້ງຢູ່ດ້ານຫຼັງຂອງຫ້ອງເກັບສົບ ເຂົາບໍ່ແປກໃຈເລີຍທີ່ໄດ້ເຫັນສະຫາຍເກດແກ້ວກຳລັງນັ່ງຂຽນລາຍງານກ່ຽວກັບຄືນນັ້ນຄືນນີ້ວ່າເປັນກະບົດຢູ່ໂຕະເຮັດວຽກທີ່ເຮັດດ້ວຍເຫຼັກຂອງເຂົາ.

“ສະບາຍດີຕອນເຊົ້າສະຫາຍເກດແກ້ວ.” ຊາຍຄົນນັ້ນເບິ່ງຄືວ່າຕົກໃຈວາດໃດວາດໜຶ່ງເມື່ອເຫັນສີຣິ. ຫູຟັງຂະໜາດນ້ອຍທີ່ຕໍ່ກັບສາຍເຊິ່ງຫາຍເຂົ້າໄປໃນລີ້ນຊັກໂຕະຍັງສຽບຄາທີ່ຫູຂອງເຂົາ.

“ຫວັງວ່າເຈົ້າຄືຊິບໍ່ໄດ້ລັກດັກຟັງວິທະຍຸໄທແບບລັບໆ ດອກນໍ.”

ສີຣິຍ່າງເຂົ້າໄປ ແລ້ວປ້າຍກົ້ນລົງນັ່ງບ່ອນຕັ່ງວ່າງໜ່ວຍໜຶ່ງເຊິ່ງຄົນນັບໄກ່ ໃຊ້ສຳລັບທຳການສືບສວນ-ສອບສວນ ເກດແກ້ວໄດ້ແຕ່ງຶກຫົວແຕ່ບໍ່ປາກເວົ້າຫຍັງຈັກຄຳເຂົາໄດ້ແຕ່ແນມເບິ່ງສີຣິແບບງຸນງົງສົງໄສ.

“ເຈົ້າເຮັດວຽກໜັກປານນີ້ ຫວັງວ່າເມຍຂອງເຈົ້າຄືຊິເຮັດແນວແຊບໆ ໃຫ້ປັ້ນເຂົ້າພໍໄດ້ບຳລຸງໃຫ້ແຂງແຮງເນາະ.”

“ຂ້ອຍແຕ່ງກິນເອງ.” ເກດແກ້ວແຜດສຽງຂຶ້ນ ທັງທີ່ສີຣິນັ່ງຢູ່ຫ່າງຈາກເຂົາບໍ່ຮອດສາມສິບຊັງຕີແມັດຊ້ຳ.

“ຢ່າບອກໃດວ່າເຈົ້າຍັງບໍ່ທັນສ້າງຄອບຄົວ.”

“ແມ່ນໃຜຊິໄປມີເວລາກັບເລື່ອງແບບນັ້ນ? ໃນກໍລະນີຫາກເຈົ້າຍັງບໍ່ທັນສັງເກດຂ້ອຍກໍຢາກຈະບອກໃຫ້ຮູ້ວ່າໜ້າທີ່ຂ້ອຍຕ້ອງໄດ້ອາໄສຄວາມຮັບຜິດຊອບສູງພໍຄວນ. ແລ້ວຕອນນີ້ເຈົ້າມີ ...?

“ໜ້າສົນໃຈຫຼາຍ.”

“ແມ່ນເລື່ອງຫຍັງລະ?”

“ເລື່ອງທີ່ຜູ້ຊາຍໜ້າຕາດີແບບເຈົ້າທີ່ຍັງບໍ່ມີເມຍຫັ້ນແຫຼະ.”

“ເຮີຍຟັງເດີ ຂ້ອຍມັກຜູ້ຍິງໃດ໋ ເຈົ້າກະຮູ້ຕິເບາະວ່າຂ້ອຍບໍ່ແມ່ນ ...”

“ເລື່ອງເຈົ້າມັກຜູ້ຍິງຫັ້ນແນ່ນອນຢູ່ແລ້ວ ແລະມັນກໍຂ້ອນຂ້າງຊັດເຈນ ແນ່ນອນວ່າແມ່ຍິງກໍມັກເຈົ້າຄືກັນນັ້ນແຫຼະ.”

"ຂ້ອຍເລືອກເອົາກະຍັງໄດ້ນະຊໍ່າແມ່ຍິງຫັ້ນ."

"ແນ່ນອນ ແຕ່ມັນຄ້າງຢູ່ບ່ອນໜ້າທີ່ຮັບຜິດຊອບທາງການງານອີ່ຫຍັງທໍານອງນັ້ນລະ."

"ທີ່ຈິງແລ້ວຖ້າຂ້ອຍຢາກໄດ້ໃຜກໍບໍ່ຍາກດອກ ຖ້າຂ້ອຍສົນໃຈ."

"ແນ່ນອນ ຂ້ອຍກໍບອກນາງແນວນັ້ນແຫຼະ."

"ນາງແມ່ນໃຜ?"

"ກໍຍ້ອນແນວນີ້ແຫຼະນາງຈິ່ງຄິດວ່າຕົນເອງຄົງບໍ່ມີໂອກາດອີກ ໃນເມື່ອເຈົ້າກໍມີຄູ່ແຂ່ງຫຼາຍພໍຄວນ ທັງເກືອບບໍ່ມີເວລາເລີຍ." ສີຣິລຸກຢືນຂຶ້ນພ້ອມຈະອອກຈາກທີ່ນັ້ນ. "ຂ້ອຍຈະບອກເລື່ອງນີ້ກັບນາງເອງດອກ."

"ນີ້ທ່ານໝໍ, ເອີ ນາງຜູ້ນີ້ຂ້ອຍຮູ້ຈັກ ຫຼືບໍ່?"

"ອາດຈະບໍ່ຮູ້ດອກ. 'ລາກ່ອນ'."

"ຂ້ອຍຮູ້ຈັກຫຼາຍຄົນໂພດ ເຈົ້າຮູ້ບໍວ່ານາງຊື່ຫຍັງ?"

"ວິງ."

"ວິງໃດອີກລະ? ຂ້ອຍຮູ້ຈັກຄົນຊື່ວິງຕັ້ງຫຼາຍຄົນໃນເມືອງທີ່ຂ້ອຍຢູ່ນີ້. ນາງເຮັດວຽກຢູ່ໃສ?" ສີຣິສັງເກດເຫັນນໍ້າລາຍຢືດໜຶ່ງໄຫຼລົງບ່ອນມຸມປາກຂອງຄູ່ສົນທະນາ.

"ກົມສາມັນສຶກສາ. ກະໂຕໃຈກາງພື້ນທີ່ແຫ່ງຄວາມຮັບຜິດຊອບຂອງເຈົ້າ ຖ້າຂ້ອຍຈື່ບໍ່ຜິດ ມື້ກ່ອນຫັ້ນນາງຍັງຜ່ານມາທາງນີ້ແລ້ວກໍສັງເກດເຫັນສະຫາຍກໍາລັງຕັ້ງໜ້າຕັ້ງຕາເຮັດວຽກຊ່ວຍການປະຕິວັດຂອງພວກເຮົາແບບຂະຫຍັນຂັນແຂງ ແລະຂ້ອຍຍັງສາບານໄດ້ວ່າເຫັນແມ່ຍິງຜູ້ໜ້າສົງສານຄົນນັ້ນໜ້າແດງອ່ອງຕ່ອງ ນາງຍັງຖາມຂ້ອຍເລື່ອງເຈົ້າອີກ."

ສິບນາທີຕໍ່ມາ ສີຣິກັບຄືນມາທີ່ຫ້ອງການພ້ອມຮອຍຍິ້ມແບບເຈົ້າເລ່ແຝງຢູ່ໃນລະຫວ່າງແຂ້ວທັງສອງເບື້ອງ.

"ໂອຍຢາກເປັນກັບແກ້ເກາະຢູ່ເທິງຝາຫ້ອງການຂອງນາງວິງແທ້ເດຕອນທີ່ຄົນນັບໄກ່ຄົນນັ້ນມາກ້ຽວພາລາສີນາງ."

ແປດໂມງແລ້ວ ແລະເຂົາກໍອອກມາຢືນຢູ່ກ້ອງປ້າຍ **ຫ້ອງເກັບສິບ** ເພື່ອລໍຖ້າຕ້ອນຮັບພະນັກງານຂອງຕົນ ເປັນຍ້ອນລາວຄິດຮອດພວກເຂົາ ແຕ່ເວລາລ່ວງເລີຍໄປຮອດ ໗:໑໕ ໂມງ ເຂົາກໍຍັງຄົງຢືນຖ້າຢູ່ບ່ອນນັ້ນແຕ່ບໍ່ມີວີ່ແວວວ່າຕຸ້ຍ ກັບນ້ອງກິ່ງຈະມາປາກົດໃຫ້ເຫັນ ສີຣິຍ່າງກັບຄືນເຂົ້າໄປທາງໃນຫ້ອງການ ພ້ອມກວດສອບເບິ່ງປະຕິທິນແຕ່ກໍບໍ່ມີຫຍັງເປັນສິ່ງຢືນຢັນວ່າມື້ນັ້ນແມ່ນວັນພັກປະຈໍາຊາດ ເຂົາຍ່າງກ້ຽວໄປວົນມາຢູ່ແຖວບ່ອນຈອດລົດດ້ວຍຫົວໃຈອັນຮ້ອນຮົນ ເຂົາບໍ່ໄດ້ກັງວົນເລື່ອງທີ່ສອງຄົນມາວຽກ

ຊ້າ ແຕ່ເຂົາຢ້ານທັງສອງຕາຍຫຼາຍກວ່າ, ລູກປືນທັງສອງທີ່ຢູ່ໃນກະເປົາກະທົບກັນກ່ອງແກ່ງໃນຂະນະເຂົາຍ່າງໄປມາ.

ໜ:໓໐ ໂມງ, ສິຣິນັ່ງຢູ່ຂ້າງນອກຫ້ອງເຮັດວຽກຂອງສັກ ເຊິ່ງເປັນຜູ້ອຳນວຍການໂຮງໝໍ, ສັກເຮັດເປັນບໍ່ຮູ້ບໍ່ສົນກັບເຂົາຂະນະຍ່າງໄປຮ່ວມປະຊຸມກັບພະນັກງານ ພໍເມື່ອກັບຄືນມາຫ້ອງເຮັດວຽກກໍເຮັດເປັນເມີນເສີຍກັບເຂົາອີກຄັ້ງ. ຕອນນີ້ທາງຕົວແທນຜະລິດຢາຈາກເກົາຫຼີເໜືອກຳລັງລົມວຽກກັບສຸກຢູ່ໃນຫ້ອງ, ລັດທິຄອມມູຍນິດມັກຄົບຄ້າສະມາຄົມກັບແຕ່ພວກບໍ່ເຂົ້າຂາກັນຕະຫຼອດ.

ພໍເມື່ອຄົນເກົາຫຼີຍ່າງອອກຈາກຫ້ອງ ສິຣິກໍເຂົ້າໄປນັ່ງຢູ່ຕັ່ງອຸ່ນໆ ເຊິ່ງເປັນບ່ອນທີ່ຄົນເກົາຫຼີຜູ້ນັ້ນນັ່ງຢູ່ກ່ອນໜ້ານີ້ບໍ່ດົນ.

"ເປັນແນວໃດທ່ານໝໍສິຣິ ໃນທີ່ສຸດເງິນໃນຖົງຄົງຊິໝົດໄປພ້ອມກັບວັນພັກລະຕິຫັ້ນນະ."

"ຂ້ອຍໄປວຽກນອກ ທາງພະແນກຍຸຕິທຳເປັນຜູ້ສົ່ງໄປ."

"ພຽງເພື່ອໄປຊັນນະສູດສົບເປັນໜຶ່ງອາທິດວ່າຕິ."

"ເພື່ອຊັນນະສູດສອງສົບ ເຊິ່ງໃຊ້ເວລາສອງວັນ ສ່ວນເວລາທີ່ເຫຼືອແມ່ນຂ້ອຍປ່ວຍເປັນໄຂ້ມາເລເຣຍ."

ກ່ອນຈະມາຮັບໜ້າທີ່ນີ້ ທ່ານຜູ້ອຳນວຍການກໍເຄີຍເປັນທ່ານໝໍມາກ່ອນ ເຂົາແນມເບິ່ງສິຣິຕັ້ງແຕ່ຫົວສຸດຕີນ ເພື່ອສຳຫຼວດຫາຮ່ອງຮອຍອັນເປັນສັນຍານຂອງຄົນຜູ້ຫາກໍເຊົາປ່ວຍຈາກພະຍາດທີ່ຂ້າຊີວິດຄົນລາວປີລະສິບສອງພັນຄົນ.

"ດີໃຈທີ່ທ່ານລອດຊີວິດມາໄດ້."

"ຂອບໃຈ. ພະນັກງານຂອງຂ້ອຍຢູ່ໃສ?"

"ພວກເຂົາຖືກຊັບຊ້ອນໄປເຮັດວຽກບ່ອນອື່ນ."

ສິຣິຮູ້ສຶກຄືກັບວ່າພູເຂົາທັງໜ່ວຍໄດ້ຖືກຍົກອອກໄປຈາກອົກ. "ພວກເຂົາຈະຍ້າຍໄປເຮັດວຽກບ່ອນອື່ນໄດ້ແນວໃດທັງທີ່ຍັງບໍ່ໄດ້ຮັບອະນຸຍາດຈາກຂ້ອຍ."

"ແທ້ຫວາ? ແນວທ່ານບໍ່ຢູ່ເດ ກໍເລີຍບໍ່ມີໃຜມາຄັດຄ້ານ ທ່ານກໍຮູ້ວ່າພວກເຮົາຂາດຄົນເຮັດວຽກ ຂ້ອຍບໍ່ຄິດຈະປ່ອຍໃຫ້ນາງພະຍາບານທີ່ມີຄຸນສົມບັດສະເພາະນັ່ງອ່ານປຶ້ມກາຕູນລ້າໆ ໂດຍທີ່ບໍ່ຮູ້ວ່າທ່ານຈະກັບມາ ຫຼືບໍ່ດອກເດີ."

"ຊັ້ນນາງຢູ່ໃສ?"

"ພະແນກພະຍາດລະບົບທາງເດີນປັດສະວະ."

ສິຣິຫົວຂຶ້ນເບົາໆ. "ພໍຈະໃຫ້ບົດຮຽນນາງແດ່ຊັ້ນລະ. ນ້ອງກີ່ງເດ?"

"ໄປຂຸດຄອງລະບາຍນ້ຳ."

"ເຂົາເປັນວິຊາການປະຈຳຫ້ອງຊັນນະສູດສົບຜູ້ມີປະສົບການຄົນໜຶ່ງໃດ໋ຫັ້ນນະ."

"ຍ້ອນເຂົາບໍ່ມີໃບປະກາດຈັກໃບ ເຂົາເລີຍມີຄຸນສົມບັດເປັນພຽງຜູ້ຂຸດຄອງລະບາຍນໍ້າ."

"ຂ້ອຍຢາກໄດ້ພວກເຂົາກັບຄືນໄປເຮັດວຽກບ່ອນເກົ່າ."

"ທ່ານບໍ່ມີວຽກຫຍັງໃຫ້ພວກເຂົາເຮັດເດລະ."

"ມີອີກສົບໜຶ່ງຈະຖືກສົ່ງມາຕອນບ່າຍ ໑:໓໐ ໂມງ."

"ທ່ານໝັ້ນໃຈໄດ້ແນວໃດ? ທ່ານກຳລັງວາງແຜນຈະຂ້າໃຜຜູ້ໜຶ່ງດ້ວຍສືມືຕົນເອງຊັ້ນຫວາ?" ສັກຍິ້ມຫົວກັບຄາລົມຄົມຄາຍຂອງຕົນເອງ ຈົນກະທັ້ງເຂົາແນມເຫັນທ່າທາງອັນເປັນຕາຢ້ານທີ່ສິຣິແນມມາເບິ່ງເຂົາ.

**********

"ສະບາຍດີທ່ານໝໍ."

"ສະບາຍດີບໍ? ນາງພະຍາບານຂອງຂ້ອຍຊື່ຕຸ້ຍຢູ່ບ່ອນນີ້ບໍ?"

"ແມ່ນແລ້ວ ນາງຢູ່ທາງຫຼັງພຸ້ນ ເຊີນທ່ານເຂົ້າໄປໂລດ."

ຍິງຊະລາຄົນໜຶ່ງນັ່ງຢູ່ເທິງຕັ່ງອີ້ເອ່ນໃນສະພາບເປືອຍກາຍຕັ້ງແຕ່ແອວລົງໄປ ຕຸ້ຍເຊິ່ງສວມຖົງມືຢາງພລາສຕິກນັ່ງຄູ້ເຂົ່າຢູ່ລະຫວ່າງຂາຂອງຍິງຊະລາຄົນນັ້ນ. ນາງເງີຍໜ້າຂຶ້ນ ພ້ອມເຜີຍຮອຍຍິ້ມແບບດີໃຈທີ່ໄດ້ເຫັນສິຣິ.

"ໂອທ່ານໝໍ ຂອບໃຈເທວະດາຟ້າແຖນ ຊ່ວຍຂ້ອຍແດ່ ພາຂ້ອຍກັບໄປເຮັດວຽກຢູ່ຫ້ອງເກັບສົບແດ່ທ່ານໝໍ ຖ້າຊິມາໃຫ້ຂ້ອຍສອດນິ້ວມືເຂົ້າໄປໃນແມ່ຍິງຊະລາອາລົມບູດອີກຄົນແບບນີ້ ຂ້ອຍພໍຢາກຊິຮ້ອງດັງໆ."

ຍິງຊະລາພະຍາຍາມດຶງແນວມາປົກປິດທ່ອນລ່າງຂອງຕົນໄວ້.

"ບໍ່ເປັນຫຍັງດອກ ຂ້ອຍກໍແມ່ນທ່ານໝໍຄືກັນ."

"ທີ່ຈິງແລ້ວລາວແມ່ນທ່ານໝໍຊັນນະສູດສົບ ແຕ່ວ່າສຳລັບທ່ານໝໍແລ້ວ ບໍ່ວ່າຄົນຕາຍ ຫຼືຄົນເປັນ ກໍບໍ່ໄດ້ຕ່າງກັນພໍເທົ່າໃດດອກ."

ຍິງຊະລາທົນຟັງຕໍ່ບໍ່ໄຫວຈິ່ງຈັບເອົາຜ້າສິ້ນມານຸ່ງແລ້ວຍ່າງໜີໄປ.

"ເຫັນແລ້ວວ່າເປັນຫຍັງເຈົ້າຈິ່ງມັກເຮັດວຽກກັບສົບຫຼາຍກວ່າ ແຕ່ບໍ່ຕ້ອງຫ່ວງດອກພະຍາບານຕຸ້ຍ ພວກເຈົ້າສອງຄົນຈະໄດ້ກັບໄປຫ້ອງເກັບສົບໃນຕອນບ່າຍມື້ນີ້ແຫຼະ. ໃນຊ່ວງທີ່ຂ້ອຍບໍ່ຢູ່ ມີເລື່ອງຜິດປົກກະຕິເກີດຂຶ້ນ ຫຼືບໍ່?"

"ກະບໍ່ມີຫຍັງຫຼາຍດອກ ອ້າຍຄົນຫວຽດນາມຂອງທ່ານໄດ້ກັບໄປຮາໂນ່ຍແລ້ວ."

"ເຂົາໄດ້ເວົ້າຫຍັງໃຫ້ຟັງແດ່ບໍ?"

“ຄືຊິເວົ້າຫັ້ນແຫຼະ ແຕ່ພວກເຮົາພຽງແຕ່ບໍ່ເຂົ້າໃຈພາສາຂອງລາວຊື່ໆ.”

“ເຂົາໄດ້ຝາກຫຍັງໄວ້ໃຫ້ຂ້ອຍບໍ?”

“ມີບົດລາຍງານທັງຈົດໝາຍສະບັບໜຶ່ງ ກັບອີ່ຫຍັງຈັກຢ່າງນີ້ລະ.”

“ດີຊັ້ນນະ.”

“ເນື່ອງຈາກວ່າອາດຈະມີຄວາມລັບຫຼາຍຢ່າງເຊິ່ງຂ້ອຍອາດຍັງບໍ່ຮູ້ ຂ້ອຍຈິ່ງເອົາໄປເຊື່ອງໄວ້.”

“ດີຫຼາຍສາວນ້ອຍ ຂອງຊຸມນັ້ນຢູ່ໃສ?”

“ໃນຫ້ອງສະໝຸດຂອງໂຮງໝໍ ຂ້ອຍສອດໄວ້ໃນແຖວໜັງສືທີ່ເປັນຕົວອັກສອນ ‘ວ’ ທ່ານຮູ້ບໍວ່າບໍ່ມີໃຜເຄີຍໄປແຖວນັ້ນດອກ.”

ສີຣິຕັດສິນໃຈປ່ອຍໃຫ້ບົດລາຍງານຂອງທ່ານໝໍຫວຽດນາມຢູ່ບ່ອນນັ້ນກ່ອນ ເຂົາໝັ້ນໃຈວ່າຕ້ອງມີໃຜຈັກຄົນທີ່ຢາກຈະເຫັນບົດລາຍງານສະບັບນີ້ແນ່ນອນ ເຂົາໃຊ້ເວລາສອງສາມນາທີເພື່ອເຮັດຜິດກົດລະບຽບຂອງໂຮງໝໍເມື່ອກັບເຂົ້າຫ້ອງການ ຈາກນັ້ນເຂົາກໍຈັບເອົາລົດຖີບຂອງຕຸ້ຍ ແລ້ວຂີ່ມັນອອກໄປທາງດົງໝ້ຽງ.

ວັດສີບຸນເຮືອງໄດ້ຮັບການບົວລະບັດຮັກສາໄດ້ດີພໍເທົ່າກັບວັດຫາຍໂສກເຊິ່ງຕັ້ງຢູ່ຂ້າງຫຼັງບ່ອນສີຣິພັກຢູ່ ແຕ່ບັນຍາກາດຢູ່ໃນວັດແຫ່ງນີ້ຂ້ອນຂ້າງໜ້າຕື່ນເຕັ້ນຫຼາຍກວ່າ ທາງພະແນກວັດທະນະທຳ ແລະການສຶກສາໄດ້ຈັດຕັ້ງໂຄງການທົດລອງ ເພື່ອສົ່ງເສີມຄວາມສາມາດໃນການອ່ານອອກຂຽນໄດ້. ຄູບາທຸກອົງ ບໍ່ວ່າຈະມີພື້ນຖານການສຶກສາໃນລະດັບໃດ ກໍລ້ວນແຕ່ໄດ້ຮັບການຄັດເລືອກໃຫ້ມາສອນຢູ່ທີ່ນີ້.

ຫຼັກປັດຊະຍາທີ່ຍຶດຖືໃນປັດຈຸບັນກໍຄື ພະພຸດທະເຈົ້າເປັນຄອມມູຍນິດ ການທີ່ພະອົງໄດ້ສະຫຼະບັນລັງ ແລະຊັບສິນສົມບັດຂອງຕົນນັ້ນແມ່ນເພື່ອເປັນການຕໍ່ຕ້ານລະບອບທຶນນິຍົມ ແລະພະຍາຍາມທຳລາຍກຳແພງກີດກັ້ນລະຫວ່າງຊົນຊັ້ນວັນນະ. ສະນັ້ນ, ເພື່ອເປັນການສະທ້ອນໃຫ້ເຫັນເຖິງຮາກເຫງົ້າຂອງການກຳເນີດທາງດ້ານສັງຄົມ-ການເມືອງ-ເສດຖະກິດ ຈິ່ງເປັນໜ້າທີ່ຂອງພະພິຊຸສົງທີ່ຈະຕ້ອງທົນແບກກະດານດຳເປັນຕົວຊີ້ນຳຄວາມຮູ້ໃນທົ່ວປະເທດ.

ອັດຕາການເຂົ້າຮຽນຂອງປະຊາຊົນລາວພາຍຫຼັງການປົດປ່ອຍ ເພີ່ມຂຶ້ນເຖິງເຈັດສິບຫ້າເປີເຊັນຄືນັບແຕ່ຂະບວນການປະຕິວັດຂອງຝ່າຍປະເທດລາວຢຶດອຳນາດມາໄດ້. ວິທະຍຸກະຈາຍສຽງແຫ່ງຊາດລາວຍັງຄົງອອກຂ່າວເປັນປະຈຳຢ່າງເນື່ອງນິດລຽນຕິດ ແຕ່ກໍບໍ່ມີການເວົ້າເຖິງກິດຈະກຳທີ່ເຮັດຢູ່ໃນໂຮງຮຽນ ຫຼືເກືອບຈະບໍ່ມີຮອດຄູທີ່ມີຄຸນນະພາບເຮັດໜ້າທີ່ໃນການສິດສອນ ພ້ອມທັງຍັງບໍ່ໄດ້ບອກອີກວ່າ ພະສົງແມ່ນຜູ້ແບກພາລະໃນການສອນໜັງສືຕາມລະບົບການສຶກສາຮູບແບບໃໝ່ນີ້.

ພວກເຂົາລົງມືສ້າງຫ້ອງຮຽນ ໂດຍປຸກເປັນແຖວຍາວເຊິ່ງມຸງດ້ວຍໃບ ຕອງກ້ວຍພ້ອມນໍາເອົາທ່ອນໄມ້ໄຜ່ມາດັດແປງເຮັດເປັນຕັ່ງນັ່ງ ເຊິ່ງນັກຮຽນກໍມີທັງເດັກນ້ອຍກໍາພ້າອາຍຸຕັ້ງແຕ່ຫ້າປີຈົນຮອດແມ່ຕູ້ໄວເຈັດສິບຫ້າ ພວກເຂົາເຫຼົ່ານັ້ນບໍ່ມີແມ່ນແຕ່ປຶ້ມຫຼືສໍດໍາ ແລະກະດານດໍາກໍແມ່ນດ້ານຫຼັງປ້າຍໂຄສະນາເກົ່າຂອງຝ່າຍອະນຸຮັກນິຍົມ, ພວກເຂົາຈະບໍ່ໄດ້ຮຽນຮູ້ຫຍັງຫຼວງຫຼາຍພາຍມາກ ແຕ່ທຸກຄົນກໍເບິ່ງຄືວ່າກໍາລັງມີຄວາມສຸກດີ.

ເຈົ້າອາວາດວັດຢືນຢູ່ເທິງຂັ້ນໃດໄມ້ໄຜ່ອັນຄົດໂຄ້ງເພື່ອທາສີຮູບໃສ່ເຈດີ ຜ້າຈີວອນຂອງເພິ່ນຖືກຖົກມ້ວນພ້ອມສອດເຂົ້າຢູ່ລະຫວ່າງຂາຄ້າຍຄືກັບຜ້າອ້ອມສີສົ້ມ ເພິ່ນກໍາລັງປ່ຽນເຈດີຈາກສີເທົາອັນກໍ່າແຫຼູ້ໃຫ້ກາຍເປັນສີຟ້າອ່ອນບໍ່ຕ່າງຫຍັງກັບ ເຄັກວັນເກີດ.

“ທາສີຂາວບໍ່ດີກວ່າບໍຂ້ານ້ອຍ?” ສີຣິຖາມ.

ມີເຫດຜົນບາງຢ່າງທີ່ເຮັດໃຫ້ສີຟ້າຄ້າຍຄືສະລອຍນໍ້າເປັນສີດຽວທີ່ຫາໄດ້ໃນຊ່ວງສອງສາມເດືອນຜ່ານມາ ມັນກໍາລັງຈະກາຍເປັນສີທີ່ປະກາດເຖິງລະບອບການປົກຄອງແບບໃໝ່ຢ່າງຊ້າໆ ໃນເມື່ອສີຂອງສະໜາມບິນກໍກາຍເປັນສີທີ່ກົມກືນກັນກັບທ້ອງຟ້າຮຽບຮ້ອຍແລ້ວ. ສີວິໄລໃຫ້ເຫດຜົນວ່າ ແຜນໄລຍະຍາວຂອງທາງຄະນະກໍາມະການກໍແມ່ນ ຈະທາທຸກຢ່າງໃຫ້ເປັນສີຟ້າຄືກັບສະໜາມບິນວັດໄຕ ເພື່ອວ່າເວລານັກບິນອາວະກາດແນມລົງມາແຕ່ເທິງຟ້າກໍຈະຮູ້ໄດ້ທັນທີໂລດວ່າ ນີ້ແມ່ນປະເທດລາວ.

“ເຖິງຈະທາສີດໍາອາຕະມາກໍຍັງບໍ່ສົນໃຈ ຂໍພຽງແຕ່ໃຫ້ມັນປ້ອງກັນຄາບເປື້ອນໄປໄດ້ຮອດໜຶ່ງປີກະພໍ.” ເຈົ້າອາວາດແຂວນກະປ໋ອງນໍ້າສີໃສ່ກັບງວງຊ້າງທີ່ປັ້ນດ້ວຍປູນແລ້ວກໍຄ່ອຍກ້າວຂາລົງມາຈາກຂັ້ນໄດ. ຍາພໍ່ສິ່ງສາຍຕາລອດແວ່ນເພື່ອເບິ່ງແຂກມາຢາມ. “ອາດຕະມາຄືເຄີຍເຫັນພໍ່ອອກມາກ່ອນ.”

“ກໍຄວນຈະຮູ້ຫັ້ນແຫຼະຍາພໍ່. ພວກເຮົາເຄີຍຢູ່ປາກເຊນໍາກັນຕອນສອງຮ້ອຍປີກ່ອນ.”

“ອືມ, ອາຕະມາຄືຊິ ... ສີຣິ ແມ່ນບໍ່ນີ້?” ສີຣິຍິ້ມພ້ອມກັບເຮັດທ່າທາງກຽມຈະຍົກມືນົບ ແຕ່ເຈົ້າອາວາດຜູ້ຊະລາກໍຄວ້າເອົາມືເຂົາມາຈັບສັ່ນໄວ້ດ້ວຍຄວາມຕື່ນ ເຕັ້ນ. “ພໍ່ອອກຍັງຄືເກົ່າບໍ່ປ່ຽນເລີຍ.”

“ແມ່ນແທ້ບໍ? ຍາພໍ່ໝາຍຄວາມວ່າຂ້ານ້ອຍເປັນອີ່ຕາເຖົ້າໜັງຍານ ທັງຫຼັງກົ່ງມາແຕ່ເທິງແຕ່ເທົ້າງພຸ້ນບໍ?”

“ພວກເຮົາຕ່າງຄົນຕ່າງກໍຈື່ບໍ່ໄດ້ແລ້ວວ່າສະໄໝນັ້ນສອງຄົນເຮົາເປັນແນວໃດ ແຕ່ຖ້າອາຕະມາຈື່ບໍ່ຜິດ ພໍ່ອອກໄດ້ຕັດສິນໃຈວ່າຈະຕິດຕາມເມຍຄົນງາມໄປຢູ່ຫວຽດນາມນໍາກັນ ສ່ວນອາຕະມາກໍຕ້ອງໄດ້ເລືອກລະຫວ່າງການເປັນນັກຂີ່ລົດ ຖີບທີມຊາດເພື່ອລົງແຂ່ງໃນເອຊຽນເກມ ຫຼືຈະຕິດຕາມຫົວໃຈຕົນເອງໄປອິດສະຕາລີ.”

“ສຸດທ້າຍແລ້ວຍາພໍ່ເລືອກທາງໃດລະ?”

“ບໍ່ເລືອກທາງໃດເລີຍ ເບິ່ງສະພາບອາຕະມາຕອນນີ້ຕິ. ອາຕະມາສັບສົນສຸດໆ ຕອນນັ້ນ ແລ້ວກໍກັບໄປພັກໃຈຢູ່ວັດໂສກປ່າຫຼວງ ແຕ່ພະສົງຢູ່ວັດນັ້ນບໍ່ເຄີຍອະນຸຍາດ ໃຫ້ອາດຕະມາອອກຈາກຜ້າເຫຼືອງອີກ.”

ທັງສອງຫົວຂຶ້ນພ້ອມກັນ.

“ພໍ່ອອກຊອກຫາອາຕະມາຈົນພົບໄດ້ແນວໃດ?”

“ໂອ ຂ້ານ້ອຍໄດ້ຍິນຂ່າວວ່າຍາພໍ່ມາຢູ່ວັດນີ້ດົນເຕີບແລ້ວ ເພາະມີຄູຜູ້ໜຶ່ງທີ່ສອນ ຢູ່ຄ້າຍຊາວໜຸ່ມເປັນຄົນບອກ.”

“ແລ້ວເມຍຄົນງາມຂອງພໍ່ອອກເດເປັນແນວໃດລະສີຣິ?”

“ເສຍດາຍເດທີ່ລາວເສຍຊີວິດໄດ້ຫຼາຍປີແລ້ວຂ້ານ້ອຍ.”

“ອາ ... ອາຕະມາບໍ່ແປກໃຈດອກ ຊີວິດໃນປ່າມັນຊ່າງລຳບາກພໍສົມຄວນສຳລັບ ແມ່ຍິງ.”

“ຍິ່ງລຳບາກໜັກຂຶ້ນເມື່ອຖືກຄົນແກວ່ງລະເບີດມາໃສ່.”

“ເວົ້າອີກກໍຖືກອີກຫັ້ນລະ ການເສຍຊີວິດໃນສະໜາມຮົບບໍ່ແມ່ນເລື່ອງໜ້າອາຍ ແຕ່ຢ່າງໃດ.”

“ລາວບໍ່ໄດ້ຕາຍໃນສະໜາມຮົບດອກຂ້ານ້ອຍ ນາງນອນຢູ່ເທິງຕຽງ ທັງນອນຫຼັບ ຢູ່ ສ່ວນຂ້ານ້ອຍແມ່ນອອກໄປວຽກນອກ ເບິ່ງຄືວ່າມີຄົນໂຍນລະເບີດໃສ່ເຕັ້ນທີ່ນາງຢູ່ ຈົນຮອດດຽວນີ້ກະຍັງບໍ່ຮູ້ວ່າເປັນສີມືຂອງໃຜ.”

ສີຣິແປກໃຈທີ່ຕົນເອງເວົ້າອອກມາໄດ້ຢ່າງຫຼູ່ຣຽນໄຫຼ ທັງທີ່ເຂົາໄດ້ກັກເກັບເລື່ອງນີ້ ໄວ້ໃນໃຈດົນເຖິງສິບເອັດປີ ແຕ່ຕອນນີ້ເຂົາຊໍ້າພັດລະເບີດມັນອອກມາຕໍ່ໜ້າພະພິຊຸຮູບ ໜຶ່ງເຊິ່ງເຂົາເອງກໍເກືອບຈະບໍ່ຮູ້ຈັກ. ຊາວກາໂຕລິກເວົ້າຖືກແລ້ວທີ່ວ່າການລະບາຍ ຄວາມທຸກທີ່ຖືກທັບຖົມໄວ້ຢູ່ໃນຫົວອົກກັບຜູ້ຢູ່ໃນສົມກົນໃນທຳນັ້ນ ເປັນວິທີຢຽວຢາ ທາງຈິດໃຈທີ່ໄດ້ຜົນດີພໍສົມຄວນ ພຽງແຕ່ວິທີການຂອງຊາວກາໂຕລິກຈະລະອຽດອ່ອນ ກວ່າຄົນລາວເທົ່ານັ້ນແຫຼະ.

“ເຊື່ອວ່າລະເບີດນັ້ນໜ້າຈະແມ່ນມັນຕັ້ງໃຈຂວ້າງໃສ່ພໍ່ອອກຫຼາຍກວ່າ.”

ທັງສອງຍ່າງໄປລົມກັນທີ່ຕັ່ງມ້າ ພ້ອມລົ້ມຄືນຄວາມເກົ່າຄາວຫຼັງຕັ້ງແຕ່ຄາວຢູ່ຄ້າຍ ຊາວໜຸ່ມ ແຕ່ສີຣິມີບາງຢ່າງທີ່ຈະຕ້ອງໄດ້ຖາມ.

“ເມື່ອສອງສາມມື້ກ່ອນ ສືບຍິງສາວຜູ້ກົດຂໍ້ມືໂຕເອງເພື່ອຂ້າຕົວຕາຍໄດ້ນຳມາໄວ້ ຢູ່ວັດແຫ່ງນີ້.”

“ແມ່ນ ພວກເຂົາເອົາສົບມາພີ້. ພໍ່ອອກຮູ້ໄດ້ແນວໃດ?”

“ຕອນນີ້ຂ້ານ້ອຍແມ່ນທ່ານໝໍຊັນນະສູດສົບຂອງລັດ.”

“ໂອໂຫ! ຍິນດີນຳເດີ.”

“ຂ້ານ້ອຍຢ້ານວ່າຈະໄດ້ຂຸດສົບນາງຂຶ້ນມາອີກຄັ້ງ.”

“ໂອ ບໍ່ໄດ້ໃດ໋ແນວນັ້ນນະ.”

ສີຣິດຶງເອົາເຈ້ຍແຜ່ນໜຶ່ງອອກມາຈາກກະເປົາເສື້ອ ເຊິ່ງເປັນເຈ້ຍທີ່ເຂົາຂຽນເອງທັງຈ້ຳຕາປະທັບໃສ່ເອງ ແລະລົງຊື່ໃນນາມຂອງຜູ້ພິພາກສາແທງ. “ຂ້ານ້ອຍມີເອກະສານຮັບຮອງພ້ອມລາຍເຊັນຂອງ...”

“ບໍ່ແມ່ນແນວນັ້ນ, ອາຕະມາບໍ່ໄດ້ຂ້ອງໃຈໃນເລື່ອງສິດຂອງພໍ່ອອກ ອາ ຕະມາໝາຍຄວາມວ່າ ການທີ່ຈະໄປຂຸດສົບຂອງນາງຂຶ້ນມາບໍ່ໄດ້ຫັ້ນແມ່ນພວກເຮົາຍັງບໍ່ທັນຝັງນາງພຸ້ນດອກ.”

“ແຕ່ມັນກໍຜ່ານມາຕັ້ງສີ່ມື້ແລ້ວເດຂ້ານ້ອຍ.”

“ກະຮູ້ຢູ່ດອກ ປົກກະຕິແລ້ວພວກເຮົາຈະຝັງສົບນາງທັນທີ ແຕ່ກໍມີເລື່ອງໃຫ້ຫຍຸ້ງເຫຍີງໜ້ອຍໜຶ່ງ.”

“ຫຍຸ້ງແນວໃດ?”

“ກໍຍ້ອນນາງມີເອື້ອຍຫັ້ນຕີ.”

“ເອື້ອຍຂອງນາງຊັ້ນຫວາ?”

“ສອງເອື້ອຍນ້ອງຫັ້ນເດີນທາງລົງມາແຕ່ທາງເໜືອພ້ອມກັນ ຜູ້ເອື້ອຍຄັດ ຄ້ານບໍ່ຍອມໃຫ້ພວກເຮົາຝັງສົບຜູ້ເປັນນ້ອງຢູ່ນີ້ ກໍເລີຍພະຍາມເກັບທ້ອນເງິນເພື່ອເປັນຄ່າໃຊ້ຈ່າຍໄວ້ນຳເອົາສົບກັບໄປທາງຊຳເໜືອ.”

“ນາງຢູ່ໃສຕອນນີ້?”

“ຜູ້ເອື້ອຍຫັ້ນຫວາ?”

“ທັງສອງເອື້ອຍນ້ອງຫັ້ນແຫຼະ.”

“ສົບຂອງນາງຕັ້ງຢູ່ເຕົາເຜົາເກົ່າໆ ທີ່ພວກເຮົາເຄີຍໃຊ້ເປັນບ່ອນເຜົາໝໍ້ທີ່ປັ້ນຈາກດິນເຜົາ ມັນເປັນຈຸດທີ່ແຫ້ງທັງຂ້ອນຂ້າງໂລ່ງແດ່ ແຖວນີ້ມີພວກເດັກນ້ອຍແລ່ນສວ່ານສິນໄປມາອຶກກະທຶກ ອາຕະມາຄຶງຈະປ່ອຍໃຫ້ສົບມາຕັ້ງຂວາງທາງແບບນີ້ບໍ່ໄດ້ດອກ.”

“ຂ້ານ້ອຍກໍພໍເຂົ້າໃຈຢູ່ ແລ້ວຜູ້ເປັນເອື້ອຍເດລະ?”

“ນາງພັກກັບໝູ່ເຊິ່ງເປັນຊ່າງສ້ອມແປງລົດຖີບ ຜ່ານກາຍໄປທາງສະຖານ ທູດໄທໜ້ອຍໜຶ່ງ.”

**********

ສິຣິໃຊ້ຕີນຢັນລົດຖີບຂອງຕຸ້ຍເຂົ້າໄປກ້ອງຫຼັງຄາມຸງຈາກໜ້າຮ້ານແປງລົດ. ເບິ່ງຄືວ່າມັນຈະຖືກຖິ້ມໃຫ້ກາຍເປັນຮ້ານຮ້າງຈົນບໍ່ມີໃຜຢູ່ຈັກຄົນ ເຂົາສິ່ງສຽງໄອອະແຮມຂຶ້ນຈາກນັ້ນກໍໄດ້ຍິນສຽງດັງຄໍ້ອກແຄັ້ກມາແຕ່ທາງຫຼັງ ແລ້ວຮ່າງຄີງອັນລໍ້າສັນຂອງຊາຍໜຸ່ມທີ່ເປືອຍກາຍແຕ່ທ່ອນທາງເທິງ ນຸ່ງພຽງໂສ້ງວອມສໍາລັບອອກກໍາລັງກາຍກໍຍ່າງອອກມາຈາກບ່ອນວ່າງຂອງຝາ.

"ສະບາຍດີຫົວໜ້າ. ມີຫຍັງບໍ່?"

"ແປງເບກໃຫ້ແດ່ໄດ້ບໍ່? ມັນໃຊ້ງານໄດ້ສະເພາະໃນຍາມຂີ່ລົດຂຶ້ນຄ້ອຍເທົ່ານັ້ນລະ."

"ໄດ້ເລີຍບໍ່ມີປັນຫາ." ເຂົາຈັບເອົາລົດຖີບອັນໜັກຕຶ້ງແລ້ວພິກຂຶ້ນມາໂດຍເອົາເຂົາລົດຖີບທັງສອງຂ້າງຄໍ້າດິນໄວ້ແບບສະບາຍຄ້າຍກັບວ່າມັນເຮັດດ້ວຍໄມ້ບອລຊະ.

"ມີບ່ອນຖ່າຍເບົາບໍ່?"

"ມີຫົວໜ້າ ມີສ້ວມຢູ່ເບື້ອງຫຼັງ ຖ້າທ່ານບໍ່ຊັງພວກແມງວັນ."

ສິຣິຍ່າງຜ່ານຊ່ອງວ່າງເຂົ້າໄປແລ້ວພົບຍິງສາວໃສ່ຜ້າສິ້ນຜູ້ມີຮ່າງຄີງອັນສູງຍາວທັງຜອມບາງຄົນໜຶ່ງກໍາລັງນັ່ງປອກໝາກຂາມ ຄັນອາຍຸຫ້າເດືອນເຮັດເປັນອຸ້ມ ລຸ້ມຢູ່ໃນຜ້າສິ້ນ ສິຣິບໍ່ສົນໃຈເລື່ອງຫ້ອງນໍ້າ ແຕ່ຄູ້ເຂົ່າລົງຂ້າງໆ ນາງ ເບິ່ງນາງຄືວ່າບໍ່ໄດ້ສົນໃຈເຂົາພໍປານໃດ ຄວາມຄິດຂອງນາງກໍາລັງລ່ອງລອຍໄປບ່ອນອື່ນພຸ້ນ.

"ສະບາຍດີ ຂ້ອຍແມ່ນທ່ານໝໍສິຣິ ຂ້ອຍຫາກໍມາແຕ່ວັດສີບຸນເຮືອງ." ດວງຕາຂອງນາງເບີກກວ້າງຂຶ້ນດ້ວຍທ່າທາງຢ້ານກົວ. "ນ້ອງສາວເຈົ້າຢູ່ຫັ້ນແມ່ນບໍ?" ນາງງຶກຫົວຊ້າໆ.

"ຂ້ອຍແມ່ນທ່ານໝໍຊັນນະສູດສົບ. ເຈົ້າຮູ້ຈັກເຈົ້າໜ້າທີ່ຊັນນະສູດສົບ ຫຼືບໍ່?"

"ຮູ້ຢູ່."

"ຂ້ອຍຢາກຂໍອະນຸຍາດທໍາການກວດສົບຂອງນ້ອງສາວເຈົ້າ."

ນາງກົ້ມໜ້າແກະເມັດໝາກຂາມຕໍ່ອີກໜຶ່ງຝັກ ກ່ອນຈະຕອບ. "ທ່ານພໍຈະບອກໄດ້ບໍຖ້າທໍາການກວດສົບຂອງນາງແລ້ວ ທ່ານຈະຮູ້ໄດ້ຊັ້ນບໍວ່ານາງຂ້າໂຕຕາຍ?"

"ຄິດວ່າໜ້າຈະບອກໄດ້ແຕ່ຂ້ອຍຕ້ອງໄດ້ຕັດຜ່າຮ່າງຂອງນາງ."

"ໝາຍເຖິງຕັດແຫກເຂົ້າໄປທາງໃນພຸ້ນແມ່ນບໍ?"

"ແມ່ນແຫຼະ ເຈົ້າເຫັນດີໃຫ້ຂ້ອຍເຮັດແບບນັ້ນບໍ່?" ເບິ່ງຄືວ່ານາງຄົງຈະບໍ່ພໍໃຈປານໃດທີ່ສົບຂອງນ້ອງສາວຖືກແຕະຕ້ອງໃຫ້ເສຍຫາຍ. "ຖ້າຄະດີນີ້ຕົກຢູ່ພາຍໃຕ້ຄວາມຮັບຜິດຊອບຂອງຂ້ອຍ, ຂ້ອຍຈະຈັດການນໍາສົ່ງສົບຂອງນາງກັບຄືນໄປຊໍາເໜືອເອງດອກ."

"ພວກເຮົາບໍ່ໄດ້ຈ່າຍຫຍັງແມ່ນບໍ່?"

"ພວກເຮົາຈະຈ່າຍທຸກຢ່າງເອງ."

"ແລ້ວສິບຂອງນາງຄືຊິບໍ່ເສຍຫາຍຫຼາຍຕິເນາະ."

"ຂ້ອຍສັ່ງໃຫ້ຊ່າງແຕ່ງສິບເຮັດໃຫ້ນາງງາມໆ ໄດ້."

"ລາວບໍ່ໄດ້ເຮັດແບບນັ້ນແທ້ດອກ ເຈົ້າຮູ້ບໍ?"

"ເລື່ອງຂ້າໂຕຕາຍຫັ້ນຫວາ?"

"ແມ່ນ ນາງບໍ່ໄດ້ຂ້າໂຕຕາຍດອກ."

"ເຈົ້າໝັ້ນໃຈໄດ້ແນວໃດ?"

"ຂ້ອຍຮູ້ຈັກລາວດີ."

"ເຈົ້າຮູ້ບໍວ່າໂຮງໝໍມະໂຫສົດຕັ້ງຢູ່ໃສ?"

"ຮູ້."

"ຂ້ອຍຄວນຈະໄດ້ຄຳຕອບຈາກປາກເຈົ້າຫຼາຍກວ່ານີ້ ຖ້າເຈົ້າໄປຫາຂ້ອຍຢູ່ຫັ້ນຕອນແລງມື້ນີ້ປະມານຫົກໂມງ. ຂ້ອຍເອງກໍມີເລື່ອງຢາກລົມກັບເຈົ້າຄືກັນ."

ນາງງຶກຫົວຕອບຮັບອີກຄັ້ງ. "ຂອບໃຈ."

**********

ເວລາໃນຊ່ວງຕອນເຊົ້າໄດ້ຜ່ານພົ້ນໄປ ສີຣິບໍ່ມີເວລາແມ່ນແຕ່ຈະເອົາລົດ ຖີບໄປມ້ຽນໄວ້ຢູ່ບ່ອນຈອດລົດ ເຂົາຂີ່ລົດຖີບໄປຈອດໄວ້ຂ້າງຮ້ານລໍ້ຂອງປ້າຫຼ້າເພື່ອຮັບເອົາອາຫານທ່ຽງ.

"ແມ່ນທ່ານແທ້ບໍທ່ານໝໍສີຣິ?" ສີໜ້າຂອງນາງສ່ອງແສງເປັນປະກາຍຄືກັບໄຟສັນຍານຈະລາຈອນອັນໃໝ່ອ່ຽມ ປາກົດວ່ານາງຕື່ນເຕັ້ນດີໃຈເປັນພິເສດທີ່ໄດ້ພົບກັບທ່ານໝໍສີຣິ ນາງໃຊ້ຄຳແທນນາມເອີ້ນເຂົາວ່າ "ທ່ານ" ພ້ອມຍົກມືນົບໄຫວ້ສີຣິຢ່າງສຸພາບທັງທີ່ຄຳວ່າ 'ທ່ານ' ໃນຊ່ວງປົດປ່ອຍໃໝ່ໆ ນັ້ນຍັງເປັນຄຳເກືອດຫ້າມເອີ້ນກັນ.

"ເອີາແລ້ວນາງຫຼ້າ ຊ່ວງສຳມະນາທາງການເມືອງ ພວກເຂົາບໍ່ໄດ້ສັ່ງສອນຫຍັງເຈົ້າເລີຍບໍ? ຢ່າໃຫ້ທ້າວນັບໄກ່ໄດ້ເຫັນເຈົ້າເຮັດແນວນີ້ອີກເດີ."

"ອ້າວທ່ານໝໍ ທ້າວສ່ານັ້ນບໍ່ໄດ້ເຮັດໃຫ້ຂ້ອຍຢ້ານຈັກດີ້ ວ່າແຕ່ທ່ານໝໍໄປໃສມາ?"

"ຄຳມ່ວນ."

"ທິດແລ້ວນີ້ຂ້ອຍເຮັດເຂົ້າຈີ່ປາເຕໄວ້ໃຫ້ເຈົ້າທຸກມື້."

"ໂອຂໍໂທດເດີ ຂ້ອຍລືມບອກງຶດກ່ອນ ຂ້ອຍຈ່າຍເງິນຄືນກໍໄດ້."

"ໂອຍບໍ່ຕ້ອງຫ່ວງດອກຂ້ອຍກິນເອງໝົດແລ້ວ ຂ້ອຍພຽງແຕ່ເປັນຫ່ວງຢ້ານທ່ານໝໍບໍ່ກັບມາອີກຫັ້ນແຫຼະ ດີແລ້ວທີ່ໄດ້ເຫັນໜ້າທ່ານໝໍອີກ."

ນາງເຣັດເຂົ້າຈີ່ຝຣັ່ງສູດພິເສດ ພ້ອມເປີດໂອກາດໃຫ້ສີຣິແນມເບິ່ງນາງໄດ້ຢ່າງເຕັມຕາ ນາງເປັນແມ່ຍິງທີ່ມີຮູບຮ່າງໜ້າຕາຈົບງາມພໍສົມຄວນ ເຂົາຍັງຄິດບໍ່ອອກວ່າເປັນຫຍັງພວກຜູ້ຊາຍໄວສູງອາຍຸທັງຫຼາຍຈຶ່ງມັກພາກັນໄລ່ລ່າລູກໄກ່ໂຕນ້ອຍ ໆ ທີ່ຫາກໍແບະເບາະ ທັງທີ່ມີແມ່ໄກ່ສວຍງາມຕັ້ງຫຼາຍໂຕຢູ່ເດີ່ນໜ້າບ້ານ. ຄວາມຮູ້ສຶກບາງຢ່າງປາກົດວ່າສັ່ນໄຫວຢູ່ໃນຫົວໃຈຂອງເຂົາ ແລະເຂົາກໍຍັງສົງໄສວ່າຈະເປັນແນວໃດເມື່ອໄດ້ຢູ່ໃກ້ນາງ ເຂົາບໍ່ເຄີຍຢູ່ກັບແມ່ຍິງຄົນໃດອີກເລີຍນັບແຕ່ມື້ທີ່ບົວຈາກໄປ.

"ສາມີຂອງເຈົ້າເປັນແນວໃດ?"

ນາງບໍ່ຍອມເງີຍໜ້າຂຶ້ນ ແຕ່ເຂົາກໍສັງເກດເຫັນວ່າໜ້າຂອງນາງແດງຍ້ອນຄວາມເຂີນອາຍ. "ໂອ ລາວກໍສະບາຍດີຢູ່ດອກ ຢ່າງໜ້ອຍລາວກໍບໍ່ໄດ້ສ້າງຄວາມເດືອດຮ້ອນໃຫ້ຂ້ອຍອີກ."

"ແມ່ນຕິເນາະ."

"ພຽງແຕ່ປັດກວດຂີ້ຝຸ່ນທັງເຊັດຖູໝໍ້ໃສ່ກະດູກໃຫ້ລາວກໍແລ້ວ."

ສີຣິຍິ້ມພ້ອມກັບຄືນໄປນັ່ງທີ່ລົດຖີບ ກ່ອນຈະນຳເອົາອາຫານທ່ຽງລົງໄປທີ່ແຄມແມ່ນ້ຳ ນາງຢືນແນມເບິ່ງເຂົາຖີບລົດອອກໄປ.

ສີວິໄລນັ່ງຢູ່ເທິງຂອນໄມ້ພຽງຄົນດຽວ ຣາຈິດຜູ້ບໍ່ສົມປະກອບກຳລັງນອນເປືອຍກາຍຢູ່ແຄມຝັ່ງຫ່າງຈາກສີວິໄລພຽງສອງສາມແມັດ.

"ບໍ່ໄດ້ມາກວນເວລາແຫ່ງຄວາມສຸກອີ່ຫຍັງດອກຕິ?"

"ບໍ່ດອກ ສະຫາຍກຳລັງມາຕົງເວລາເປະ ເຮົາພວມຄິດອິດສາເຂົາຢູ່ນິ."

"ແມ່ນຢູ່ວ່າເຂົາມີບາງສິ່ງທີ່ເປັນຕາອິດສາແຕ່ກໍທຽບກັບເຮົາບໍ່ໄດ້ແນ່ນອນ." ສີຣິປ້າຍກົ້ນນັ່ງລົງທາງຂ້າງສະຫາຍຂອງເຂົາ.

"ອີ່ຫຼີຫວາ? ປານນີ້ມັນຄືຊິແຫ່ວໝົດລະຕິເພາະບໍ່ໄດ້ໃຊ້ງານດົນ."

"ບໍ່ເດີມັນຍັງປິ່ງປັ່ງຢູ່ ເວົ້າຄວາມຊື່ເທາະ ວ່າງກີ້ນີ້ມັນຍັງຮູ້ສຶກຂູ່ຊ່າເລັກໜ້ອຍ."

"ບໍ່ແມ່ນໃຊ້ກັບສິບຕິເນາະ? ຢ່າບອກໃດວ່າສະຫາຍມີລົດນິຍົມຕໍ່າປານນັ້ນ."

"ສະຫາຍຮູ້ຈັກນາງຫຼ້າບໍ? ຜູ້ເຣັດເຂົ້າຈີ່ປາເຕໃຫ້ເຮົາປະຈຳຫັ້ນນະ."

"ທີ່ຢູ່ແຈຖະໜົນຫັ້ນຕິ? ນາງແກ່ສົມຄວນພໍຈະເປັນຮອດ ... ລູກສາວຂອງສະຫາຍໄດ້ລະຕິ. ແຕ່ໜ້າອົກຂອງນາງຍັງຕົ່ງເຕັມຢູ່ເກາະ ຖ້າເປັນເຮົານິບໍ່ຍອມປ່ອຍໃຫ້ຫຼຸດມືແນ່ນອນ."

"ເຊີນຝັນໂລດເທາະ ອີ່ຕາເຖົ້າຫົວງູ."

"ເປັນຈັ່ງໃດໄປຄຳມ່ວນ?"

"ມັນກະໜ້າສົນໃຈຢູ່ ຜ່າຕັດສອງສົບທີ່ຕາຍແບບບໍ່ຮູ້ສາເຫດ

ແລ້ວກໍເປັນໄຂ້ມາເລເຣຍ ແລ້ວກໍກາຍເປັນຜູ້ເວົ້າພາສາມົ້ງໄດ້ແບບບໍ່ຂ້ອງບໍ່ຄາ."

"ອີມພະມາເວົ້າກະບໍ່ເຊື່ອດອກ ລອງເວົ້າໃຫ້ຟັງເບິ່ງແດ່ແມພາສາມົ້ງຫັ້ນ."

"ປານວ່າໂຕເອງກະເວົ້າພາສາມົ້ງໄດ້ນິແຫຼະ."

"ໜ້າຈະດີກວ່າສະຫາຍຫັ້ນຕິ ຖ້າຈະເວົ້າເລື່ອງໄລ່ຈີບສາວຫັ້ນ ຂ້ອຍເຄີຍຈີບສາວມົ້ງມາແລ້ວສອງສາມຄົນພຸ້ນ ເວົ້າໂລດນະ."

ສີຣິອ້າປາກຂຶ້ນກຽມຈະເວົ້າ ແຕ່ປາກົດວ່າເຂົາຄິດຫຍັງບໍ່ອອກ ເຂົາຄິດຫາປະໂຫຍກທີ່ເປັນພາສາລາວແບບງ່າຍໆ ແຕ່ເຂົາກໍຍັງແປອອກມາເປັນພາສາມົ້ງບໍ່ໄດ້ ພາສາທີ່ເຂົາເຄີຍເວົ້າໄດ້ໂດຍທຳມະຊາດໃນມື້ວານມາບັດນີ້ໄດ້ຫາຍໄປເສຍແລ້ວ.

"ແປກອີ່ຫຼີ ເຮົາລືມມັນໝົດລະ."

"ອໍ ແມ່ນແຫຼະ ພາສາມັນກໍເປັນແບບຊັ້ນແຫຼະ ມາຄາວດຽວລະກະໄປປຸບປັບ. ຫວ່າງວັນພະຫັດແລ້ວເຮົາກະເວົ້າພາສາຍີ່ປຸ່ນໄດ້ຄ່ອງເປະ."

"ບໍ່ແມ່ນແນວນັ້ນ ເຮົາຕັ້ງເວົ້າໄດ້ແທ້ໃດ." ສີວິໄລເຜີຍຮອຍຍິ້ມແລ້ວກໍຫຍໍ້າເຂົ້າໜົມປັງຕ້ວຍ!ຕ້ວຍ. ສີຣິຈິ່ງຮູ້ວ່າບໍ່ມີປະໂຫຍດອັນໃດທີ່ຈະໂຕ້ແຍ່ງປະເດັນດັ່ງ ກ່າວກັບເຂົາ.

"ສະຫາຍຮູ້ບໍວ່າພວກທະຫານກຳລັງພາກັນເຮັດຫຍັງຢູ່ຫັ້ນ?"

"ປູກພືດທົດແທນບໍ່ແມ່ນຫວາ?"

"ແມ່ນແຫຼະ ຖາງປ່າເພື່ອໃຫ້ອາກາດບໍລິສຸດມາແທນທີ່ບ່ອນວ່າງຂອງຕົ້ນ ໄມ້ຫັ້ນແຫຼະ ຖ້າບໍ່ມີໃຜຫ້າມພວກເຂົາ ແນ່ນອນເຂດນັ້ນຈະຕ້ອງກາຍເປັນສວນສະ ໜາມແທ້ລະ. ສະຫາຍພໍຈະແກ້ໄຂເລື່ອງນີ້ໄດ້ຢູ່ບໍ?"

"ສະຫາຍແນະນຳໃຫ້ພວກເຮົາສົ່ງໃຜເຂົ້າໄປຫ້າມພວກເຂົາຫວາ? ໃຫ້ເຈົ້າບຸນອູ້ມຂີ່ຊ້າງເຂົ້າໄປຫວາ? ບໍ່ມີທາງ, ນາຍພົນພວກນັ້ນທຳການຕໍ່ສູ້ເພື່ອການປະຕິ ວັດມານານນັບຫຼາຍສິບປີ ອັນນີ້ຄືລາງວັນຕອບແທນເລັກໜ້ອຍຊື່ໆ ດອກທີ່ພວກເຂົາມອບໃຫ້ຕົນເອງ."

"ຂ້ອຍຕ້ອງພາດໂອກາດບໍ່ໄດ້ອ່ານຄຳຖະແຫຼງການໜ້ານີ້ລະຕິຊັ້ນນະ ຂ້ອຍໂລດຄິດວ່າ ການທຸດຈະລິດໃນໜ້າທີ່ແມ່ນເຫດຜົນສຳຄັນໃນການຕໍ່ສູ້ ບໍ່ແມ່ນລາງວັນຕອບແທນໃດໆ ແລ້ວທາງກອງທັບໄດ້ຈ່າຍໃຫ້ພວກສະຫາຍເປັນຄ່າສຳປະ ທານປ່າໄມ້ຫຼາຍປານໃດ?"

"ນີ້ຄືສິ່ງທີ່ສະຫາຍຂຽນຈົດໝາຍດ່ວນຫາເຮົາເພື່ອໃຫ້ອອກມາພົບແບບດ່ວນໆພຽງເພື່ອຈະມາສ້າງຄວາມລຳຄານໃຫ້ກັບເຮົາໃນເລື່ອງນີ້ຊັ້ນເບາະ?"

"ບໍ່ນາ ແຕ່ກໍມີແດ່ເປັນບາງສ່ວນ ແຕ່ເຮົາສົງໄສວ່າຄວາມສຳພັນທາງການທູດລະຫວ່າງພວກເຮົາກັບຫວຽດນາມເປັນແນວໃດແລ້ວ?"

"ກະດີຢູ່."

"ດີແລ້ວຊັ້ນນະ."

"ພຽງແຕ່ລະຫວ່າງພວກເຮົາແມ່ນບໍ່ມີຄວາມສຳພັນແບບຄືສະຫາຍວ່າ."

"ເກີດຫຍັງຂຶ້ນຊັ້ນນະ?"

"ທາງຮາໂນ່ຍໄດ້ເອີ້ນເອົາບັນດາເອກອັກຄະລັດຖະທູດ ແລະນັກການທູດສ່ວນໃຫຍ່ກັບຄືນປະເທດ ສ່ວນໂຄງການຊ່ວຍເຫຼືອທັງໝົດກໍຖືກລະງັບໄວ້ ສ່ວນພວກເຮົາກໍນຳເອົາຄົນຂອງພວກເຮົາອອກຈາກຮາໂນ່ຍ ເພື່ອສະແດງໃຫ້ເຫັນວ່າ ພວກເຮົາເອງກໍແຂງແກ່ນບໍ່ນ້ອຍໜ້າໃຜ ຕອນນີ້ຍັງບໍ່ທັນມີການເຈລະຈາອີ່ຫຍັງກັນເລີຍ."

"ບ້າແທ້ ບໍ່ແມ່ນເລື່ອງທີ່ຖືກຫາວ່າພວກເຮົາທໍລະມານຄົນພວກເຂົາຫັ້ນບໍ?"

"ພວກເຂົາບໍ່ພໍໃຈ ສະຫາຍຍັງບໍ່ພົບຫຼັກຖານຫຍັງທີ່ສະແດງໃຫ້ເຫັນວ່າ ພວກເຮົາບໍ່ໄດ້ທຳຮ້າຍຄົນຂອງພວກເຂົາແມ່ນບໍ?"

ໃນຂະນະທີ່ຮາຈິດຜູ້ສະຕິບໍ່ສົມປະກອບຍ່າງລົງໄປທີ່ແມ່ນ້ຳ ແລ້ວເລີ່ມລອຍນ້ຳຂ້າມໄປທາງຝັ່ງໄທ ສິຣິຈິ່ງໄດ້ອະທິບາຍກ່ຽວກັບລາຍລະອຽດຕ່າງໆ ຂອງຄະດີນີ້. ເຂົາບອກສີວິໄລກ່ຽວກັບເລື່ອງທີ່ຕົນເດີນທາງໄປເຂື່ອນນ້ຳງື່ມ ເຖິງແມ່ນເຂົາຈະໝັ້ນໃຈວ່າເພື່ອນຜູ້ເຊິ່ງປຽບເໝືອນອ້າຍໄດ້ອ່ານບົດລາຍງານຂອງເຈົ້າເມືອງຢູ່ຫັ້ນແລ້ວ. ແຕ່ເຂົາກໍໄດ້ເລົ່າຂໍ້ມູນເພີ່ມເຕີມບາງຢ່າງໃນສິ່ງທີ່ສີວິໄລຍັງອ່ານບໍ່ທັນພໍ້.

"ມີຄົນພະຍາຍາມລອບຂ້າເຮົາ."

"ຂໍໂທດ ກີ້ນີ້ສະຫາຍວ່າຫຍັງເກາະ?"

"ໃນມື້ທີ່ພວກເຮົາເດີນທາງກັບຈາກເຂື່ອນ ຫງຽນທິງກັບເຮົາຕັດສິນໃຈນຳກັນວ່າຍັງມີຫຼາກຫຼາຍຄຳຖາມທີ່ຍັງຫາຄຳຕອບບໍ່ໄດ້." ເຂົາຢິບເອົາກະສຸນລູກປືນສອງລູກອອກມາຈາກກະເປົາ. "ເຮົາກັບບ້ານຕອນເດິກ ລູກປືນສອງນັດກໍແລ່ນດາດຜ່ານບ່າໄຫຼ່ຂະນະທີ່ເຮົາພວມກົ້ມຕົວລົງຢູ່ໜ້າປະຕູບ້ານ."

ສີວິໄລຈັບເອົາລູກປືນທັງສອງລູກຈາກມືຂອງເຂົາ. "ສິຣິ, ສະຫາຍ ... ສະຫາຍຄົງບໍ່ຄິດວ່າມັນກ່ຽວກັບຄົນຫວຽດນາມແມ່ນບໍ?"

"ມັນເປັນເລື່ອງບັງເອີນແບບອື່ນຫຼາຍກວ່າ."

"ແຕ່ເປັນຫຍັງຄືເຮັດແນວນີ້? ສະຫາຍຄົ້ນພົບຫຼັກຖານຫຍັງທີ່ເຫັນວ່າພໍຊິເອົາຜິດໃຜຜູ້ໜຶ່ງບໍ?"

"ບໍ່ເລີຍ ແຕ່ເຮົາກ້າພະນັນດ້ວຍເຂົ້າໜົມປັງຂອງສະຫາຍທີ່ເຫຼືອຢູ່ ຕ້ອງມີໃຜຄົນໜຶ່ງຄິດວ່າພວກເຮົາຮູ້."

"ອຸ໊ຍຕາຍ!"

"ປັນຫາກໍຄື ເຮົາຍັງບໍ່ຮູ້ຊໍ້າວ່າເປັນຝ່າຍໃດກັນແທ້."

"ໂອ ຟ້າວກ່ອນ ສະຫາຍຄືຊິບໍ່ຄິດວ່າຄົນຂອງພວກເຮົາພະຍາຍາມຢາກຂ້າສະຫາຍດອກເນາະ."

ສີຣິຫົວຂຶ້ນ. "ຄົນສະຫຼາດແບບສະຫາຍຊ່າງວ່າໃສຊື່ໄຮ້ດຽງສາພິລຶກ ແມ່ນເບາະອ້າຍ? ແນ່ນອນວ່າພວກເຂົາເຮັດແທ້.ຖ້າເຮົາມີຫຼັກຖານວ່າຝ່າຍເຮົາເປັນຜູ້ 'ສອບປາກຄຳ' ເຫຍື່ອພວກນັ້ນ ຄວາມສຳພັນທາງການທູດຂອງພວກເຮົາກໍຈະເພີ່ມທະວີຄວາມຕຶງຄຽດຂຶ້ນໄປອີກ ອາດເຖິງຂັ້ນເກີດສົງຄາມຮ້າຍແຮງກໍເປັນໄດ້."

"ເອົາລະຊັ້ນ ຖືວ່າເປັນຄັ້ງທຳອິດໃນຮອບຫ້າສິບປີທີ່ສະຫາຍເຮັດໃຫ້ເຮົາມີຄວາມສົນໃຈຂຶ້ນມາທັນທີ. ສະຫາຍຢາກໃຫ້ເຮົາເຮັດຫຍັງ?"

"ສະຫາຍຮູ້ບໍວ່າຄະນະຜູ້ແທນຂອງຫວຽດນາມພາກັນມາເຮັດຫຍັງຢູ່ນີ້?"

"ບໍ່ຮູ້."

"ຮວ້າຍສີວິໄລເອົາຈັ່ງໃດ໋ນິ?"

"ບໍ່ຮູ້ ຕັ້ງບໍ່ຮູ້ແທ້ໆ ນີ້ແຫຼະ."

"ສືບເບິ່ງໄດ້ບໍ?"

"ຈະພະຍາຍາມລອງເບິ່ງ."

"ດີແຫຼະຊັ້ນນະ ເຮົາຈະອ່ານບົດລາຍງານຂອງຫງຽນຫົງ ແລ້ວຊິເບິ່ງຕື່ມວ່າພໍມີທາງຈະຕິດຕໍ່ໄປຫາເຂົາຢູ່ຮາໂນ່ຍໄດ້ ຫຼືບໍ່. ພວກເຮົາຍັງມີອີກຫຼາຍເລື່ອງທີ່ເຮັດຍັງບໍ່ແລ້ວ."

"ສະຫາຍເລົ່າເລື່ອງພວກນີ້ໃຫ້ຜູ້ພິພາກສາຂອງສະຫາຍຟັງແລ້ວລະບໍ?"

"ບໍ່ ສະຫາຍຮູ້ບໍ ມັນຄືວ່າເປັນເລື່ອງບັງເອີນອີ່ຫຍັງກະດໍ້ທີ່ທາງພະແນກຍຸຕິທຳຕ້ອງສົ່ງເຮົາໄປບ່ອນອື່ນທັງທີ່ພວກເຮົາກຳລັງພະຍາຍາມທຳການສອບສວນເລື່ອງນີ້ຢູ່."

"ຕ້ອງຮູ້ຈັກໄວ້ໃຈຄົນອື່ນແດ່ ສະຫາຍຕ້ອງມີເພື່ອນພ້ອງໃດ໋."

"ເພື່ອນພ້ອງຂອງເຮົາກະຄືສະຫາຍຫັ້ນລະ."

"ໂອຕາຍ ຄວາມດັນຂຶ້ນເລີຍເຮົາ."

"ຄຳວ່າ 'ໝູປ່າດຳ' ມີຄວາມໝາຍຫຍັງສຳລັບສະຫາຍ ຫຼືບໍ່?"

"ນອກຈາກຄວາມໝາຍກົງໆ ແລ້ວກໍບໍ່ເຫັນຊິມີຫຍັງອີກ."

"ຊ່ວຍຖາມຄົນອື່ນເບິ່ງໄດ້ບໍ? ມັນມີຫຍັງບາງຢ່າງທີ່ກ່ຽວຂ້ອງກັບຄະນະຜູ້ແທນອາດຈະໝາຍເຖິງສົງຄາມໃນຫວຽດນາມກໍເປັນໄດ້."

"ສະຫາຍໄປເອົາຄຳເວົ້ານີ້ມາແຕ່ໃສ?"

"ຈາກ...ເຮົາຄົງເປີດເຜີຍແຫຼ່ງຂໍ້ມູນບໍ່ໄດ້."

"ມີເລື່ອງອື່ນອີກບໍ່?"

“ມີບາງຢ່າງ ແຕ່ເຮົາລືມ ... ໂອ ແມ່ນແທ້ໃດ. ສະຫາຍເວົ້າພາສາຝຣັ່ງເສດ ໄດ້ດີແມ່ນບໍ?”

“ຄືກັບນາໂປລີອົງເລີຍແຫຼະ.”

“ນາໂປລີອົງຄົນທີ່ຕາຍໄປແລ້ວຫັ້ນບໍ່?”

“ຢ່າງເລີດເລີຍ. ຢ່າບອກໃດ໋ວ່າພາສາຝຣັ່ງເສດຂອງສະຫາຍລະລາຍໄປກັບພາສາມົ້ງຮຽບຮ້ອຍ.”

“ປິດປາກບໍ່ຕ້ອງເວົ້າຫຼາຍ. ຄໍາວ່າ ‘*précipitation*’ ໝາຍຄວາມວ່າແນວໃດ?”

“ອືມ ... ອາດຈະໝາຍເຖິງການແຍກຕະກອນອອກຈາກສານລະລາຍທາງເຄມີ.”

“ຫຼື?”

“ການຕົກຈາກບ່ອນສູງ.”

“ການຕົກຈາກທີ່ສູງ? ເອີແມ່ນແຫຼະ. ແມ່ນອີ່ຫຼີ! ພວກເຂົາບໍ່ໄດ້ຫຼິ້ນສະກີເລີຍ. *Felicitations*, *mon brave empereur* ຂອບໃຈຫຼາຍໆ ເດີເຈົ້າຈັກກະພັດຜູ້ກ້າຫານຂອງຂ້ອຍ.” ສີຣິຈູບແກ້ມທັງສອງຂ້າງຂອງສີວິໄລພ້ອມຍົກມືຂຶ້ນສະແດງຄວາມຄໍານັບແກ່ເຂົາ.

14

# ຮອຍຊຸງວຊ້ຳເທິງຮ່າງຊ່າງເຮັດຜົມ

ສິຣິກັບມາແຕ່ກິນເຂົ້າທ່ຽງຕອນ ໑:໓໐ ໂມງ ການມາເຖິງຂອງເຂົາໃກ້ຄຽງກັບຕົວຢ່າງທີ່ເຄີຍກ່າວໄວ້ແບບບໍ່ເຄີຍໄດ້ຍິນມາກ່ອນຂອງຄົນລາວກັບຄຳວ່າຕົງຕໍ່ເວລາ.

ເມື່ອຕຸ້ຍຍ່າງມາຈາກທາງໜຶ່ງພໍຮອດໜ້າປະຕູຫ້ອງເກັບສືບ, ຄູບາສາມອິງເຊິ່ງໃຊ້ຜ້າປິດປາກປິດດັງທັງໝົດທີ່ພວມພາກັນຫາມມ້ວນເສື່ອໃຍໝາກພ້າວກໍມາຈາກອີກທາງໜຶ່ງ ສ່ວນກິ່ງກໍພໍດີຍ່າງອອກມາຈາກຫ້ອງເຮັດວຽກ ສະພາບຂອງເຂົາບໍ່ເປັນຕາເບິ່ງເລີຍ.

"ທ່ານ ... ທ່ານ ... ທ່ານ ... ໝໍ ..." ອາການເວົ້າຄ້າງເຮັດໃຫ້ເຂົາໂມໂຫໃຫ້ຕົນເອງ. ສິຣິນວດບ່າໄຫຼ່ທັງສອງຂ້າງຂອງເຂົາ ພ້ອມແນະນຳໃຫ້ເຂົາຈິດຈໍ່ກັບລົມຫັນໃຈຂອງຕົນເອງ ຂະນະທີ່ຕຸ້ຍເປັນຜູ້ຍ່າງນຳຄູບາເຂົ້າໄປທາງຫ້ອງຊັນນະສູດສືບ.

"ເກີດຫຍັງຂຶ້ນນ້ອງກິ່ງ?"

"ຫ້ອງ ... ຫ້ອງ ... ຫ້ອງການທ່ານໝໍມັນ ... ມັນຊະໄປທົ່ວ." ເຂົາຄວ້າຈັບເອົາແຂນສິຣິ ແລ້ວລາກໄປທີ່ປະຕູຫ້ອງການ. ແນ່ນອນຫ້ອງເຮັດວຽກມັນຖືກຄົ້ນຊະຊາຍກະແຈກກະຈາຍ ຕຸ້ຍອອກໄປສິ່ງພະສິງໂດຍຮັກສາໄລຍະຫ່າງຢ່າງເໝາະສົມ.

"ຕຸ້ຍເຂົ້າມາເບິ່ງທາງນີ້ກ່ອນໄດ້ບໍ?"

"ຕຸ້ຍຍ່າງມາຢືນຂັ້ນກາງລະຫວ່າງຊາຍທັງສອງ ພ້ອມແນມເບິ່ງສະພາບຄວາມຫຍຸ້ງເຫຍີງຢູ່ຕໍ່ໜ້າ. "ໂອ."

"ເຫດການນີ້ເກີດຂຶ້ນໃນສາມຊົ່ວໂມງກ່ອນ. ຫ້ອງຊັນນະສູດສືບເປັນແນວໃດ?"

"ກະປົກກະຕິດີລວມທັງຫ້ອງເກັບເຄື່ອງຄືກັນ."

"ສະນັ້ນພວກມັນຄືຊິຕັ້ງໃຈມາຄົ້ນຫາອັນໃດອັນໜຶ່ງໃນຫ້ອງນີ້ສະເພາະ."

"ໂອ ບໍ່ເດີ ປຶ້ມກາຕູນຂ້ອຍ!"

"ຟັງເດີບັດນີ້ຕຸ້ຍ, ນ້ອງກິ່ງ! ນີ້ບໍ່ແມ່ນເລື່ອງທຳມະດາແລ້ວໃດ ເຫດການທັງໝົດນີ້ມັນແມ່ນໄພອັນຕະລາຍຄືດັ່ງທີ່ຂ້ອຍໄດ້ບອກພວກເຈົ້າແລ້ວກ່ອນທີ່ຈະໄປຄຳມ່ວນ

ຈັ່ງຊັ້ນແຫຼະນີ້ຈິ່ງແມ່ນສິ່ງທີ່ພວກເຮົາຕ້ອງໄດ້ລະວັງຕົວເພີ່ມຂຶ້ນນັບຈາກນີ້ເປັນຕົ້ນໄປ ພວກເຈົ້າເຂົ້າໃຈຢູ່ບໍ?"

"ເຂົ້າໃຈ. ຂ້ອຍເຂົ້າໃຈ." ກິ່ງເວົ້າດ້ວຍສີໜ້າທ່າທາງທີ່ເຄັ່ງຂຶມ.

ຕຸ້ຍງຶກຫົວຕອບ. "ໂດຍ ທ່ານໝໍ."

"ດີແລ້ວຊັ້ນ ຂ້ອຍຢ້ານແຕ່ວ່າເຈົ້າໜ້າທີ່ຕຳຫຼວດພຽງຄົນດຽວທີ່ຂ້ອຍໄວ້ໃຈທີ່ສຸດ ພັດບໍ່ຢູ່ວຽງຈັນຊ້ຳຕອນນີ້ ແຕ່ເລື່ອງທີ່ເກີດຂຶ້ນນີ້ພວກເຮົາຈະຕ້ອງໄດ້ແຈ້ງຄວາມກັບ ເຈົ້າໜ້າທີ່ຕຳຫຼວດ. ແຕ່ກ່ອນທີ່ຈະແຈ້ງຄວາມ ຂ້ອຍຢາກໃຫ້ທຸກຄົນເຂົ້າໄປກວດຄົ້ນ ໃນຫ້ອງເບິ່ງວ່າມີຫຍັງເສຍຫາຍ ຫຼືບໍ່ ພວກເຮົາຕ້ອງພະຍາຍາມຮັກສາສະພາບຫຼັກຖານ ໄວ້ບໍ່ຫຍັບຍ້າຍຫຍັງຈັກອັນ."

ມີສິ່ງໜຶ່ງຫາຍໄປນັ້ນກໍຄືພວກປຶ້ມບັນທຶກຂອງຕຸ້ຍທີ່ຖືກລັກໄປຈາກໂຕະເຮັດວຽກ ຂອງນາງ. ບັນທຶກກ່ຽວກັບການຊຸມນະສູດສົບທີ່ທັງສອງເຮັດຮ່ວມກັນເສຍໄປທັງໝົດ. ໃນຂະນະທີ່ພວກເຂົາຄົ້ນຫາຕາມກອງເຈ້ຍທີ່ຢາຍຊະທົ່ວຫ້ອງຢູ່ນັ້ນ ສີຣິກໍໄດ້ບອກທຸກ ຢ່າງທີ່ເຂົາຮູ້ກ່ຽວກັບຄະດີຂອງຄົນຫວຽດນາມໃຫ້ຕຸ້ຍ ແລະກິ່ງ ລວມເຖິງການພະຍາຍາມ ກຳຈັດຊີວິດຂອງເຂົານຳອີກ.

ພວກເຂົາໄດ້ສະຫຼຸບໃນທຳນອງດຽວກັນວ່າ ເປົ້າໝາຍຂອງຜູ້ທີ່ເຂົ້າມາບຸກ ລຸກ ຫ້ອງການນັ້ນແມ່ນພຽງແຕ່ຢາກໄດ້ບົດລາຍງານຂອງຫງຽນຫົງ.

"ເປັນຄວາມຄິດທີ່ສຸດຍອດຫຼາຍຕຸ້ຍທີ່ເອົາລາຍງານສະບັບນັ້ນໄປເຊື່ອງໄວ້ ເຮັດ ໄດ້ດີຫຼາຍ."

"ເຮັດ ... ເຮັດໄດ້ດີຫຼາຍຕຸ້ຍ."

"ເພີ່ມເງິນເດືອນໃຫ້ຂ້ອຍແດ່ເດີ."

"ນັບຈາກນີ້ໄປທັງສອງຄົນພວກເຈົ້າແມ່ນບໍ່ມີສ່ວນກ່ຽວຂ້ອງກັບຄະດີຂອງຄົນ ຫວຽດນາມອີກ ຂ້ອຍຈະເອົາເອກະສານໄປເຮືອນແລ້ວເປີດອ່ານມັນຢູ່ພຸ້ນ. ຟ້າວກ່ອນ, ເລື່ອງພາບຖ່າຍເດລະ? ບໍ່ແມ່ນໂຈນລັກເອົາຮູບຖ່າຍຕອນຊຸມນະສູດສົບໄປນຳແລ້ວບໍ?"

ຕຸ້ຍແຫງນໜ້າຂຶ້ນເບິ່ງເທິງຟ້າ. "ບໍ່ດອກ ພວກເຂົາບໍ່ໄດ້ເອົາໄປນຳ."

"ເຈົ້າໝັ້ນໃຈໄດ້ແນວໃດ?"

"ອືມ ກະແນວຮູບພວກນັ້ນຢູ່ໄຊຍະບູລີພຸ້ນນະ."

"ໄຊຍະບູລີຫວາ? ເຮັດແນວໃດຈິ່ງວ່າໄປຮອດໄຊຍະບູລີ?"

"ຄືວ່າ ... ທ່ານໝໍຈື່ໄດ້ບໍ່ງານດອງເອື້ອຍບຸນຫຼານ ທີ່ພວກເຮົາເອົາຫາງຟິມກັບຫົວ ຟິມຢ່າງລະມ້ວນໄປຖ່າຍຮູບຕອນເຮັດພິທີຫັ້ນນະ?"

"ຢ່າບອກໃດວ່າ ..."

“ເອື້ອຍບຸນຫຼານສົ່ງຮູບທັງໝົດໄປໃຫ້ຄອບຄົວຢູ່ທາງບ້ານເບິ່ງ ມັນຢູ່ໃນຊອງດຽວກັນໝົດ ລາວຝາກຮູບໄປນຳຄົນທີ່ເດີນທາງໄປໄຊຍະບູລີ ລາວມາເອົາຮູບຢູ່ໂຕະເຮັດວຽກຕອນຂ້ອຍບໍ່ຢູ່ຫ້ອງການ ລາວຄົງບໍ່ມີເວລາກວດເບິ່ງຮູບພວກນັ້ນຕີເບາະ.”

“ຂ້ອຍພໍຄິດອອກວ່າແມ່ຍ່າຂອງເຈົ້າຊິອິດຫົວໄດ້ຊ່ຳໃດ.”

“ລາວຫົວບໍ່ອອກເລີຍຫັ້ນຕີ ພວກເຂົາພໍຊິຮາກອອກມາພຸ້ນລະ ຈັ່ງໄດ້ແຕ່ຝ້າວສົ່ງຊອງໃສ່ຮູບມາທາງໄປສະນີໃນຮຸ່ງເຊົ້າມື້ຕໍ່ມາ ປານນີ້ຄືຊິມາຮອດພີ້ແລ້ວແຫຼະ.”

“ເຫັນບໍ່ລະ ແມ່ນແຕ່ຕອນທີ່ເຮັດໃຫ້ມັນຫຍຸ້ງເຫຍີງ ມັນຍັງກາຍເປັນເລື່ອງດີຊ້ຳ.”

“ດີແນວໃດ?”

“ດີແທ້ແນ່ນອນ. ຖ້າຫາກແຂກຜູ້ມາຢາມຂອງພວກເຮົາຢາກໄດ້ບົດບັນທຶກແຮງປານນັ້ນ ຂ້ອຍກໍຂ້ອນຂ້າງໝັ້ນໃຈວ່າພວກເຂົາຕ້ອງຢາກໄດ້ຮູບຖ່າຍຊຸມນັ້ນຄືກັນ ບາງເທື່ອຮູບຖ່າຍອາດສາມາດບອກຫຍັງບາງຢ່າງໃຫ້ພວກເຮົາໄດ້ຮູ້ວ່າແມ່ນຫຍັງແທ້ທີ່ເຮັດໃຫ້ພວກມັນພາກັນຢ້ານຈົນໂຕສັ່ນຖ້າພວກເຮົາສືບພໍ້ຄວາມຈິງໄດ້.

“ນ້ອງກິ່ງວ່າແນວໃດ?”

“ໂດຍສະ ... ສະຫາຍທ່ານໝໍ.”

“ຕຸ້ຍກັບອ້າຍຈະພາກັນໄປເບິ່ງແຂກຄົນໃໝ່ຂອງພວກເຮົາ ໃຫ້ນ້ອງໄປບອກທ້າວເກດແກ້ວ ກັບຜູ້ບໍລິຫານໂຮງໝໍເລື່ອງເຫດການທີ່ເກີດຂຶ້ນຈະໄດ້ບໍ?”

“ໂດຍ ໄດ້ໆ.”

**********

ສີຣີພ້ອມທີມງານຂອງເຂົາພາກັນຢູ່ໃນຫ້ອງຊັນນະສູດສົບ ຕຳຫຼວດໃນເຄື່ອງແບບສອງຄົນພາກັນກວດສອບເບິ່ງສະພາບຂອງຄວາມເສຍຫາຍທີ່ເກີດຂຶ້ນພາຍໃນຫ້ອງເຮັດວຽກຂອງສີຣີ ໂດຍມີທ້າວເກດແກ້ວຜູ້ເວົ້າສຽງດັງໂຫວກເຫວກມາເປັນຜູ້ຊ່ວຍໂດຍບໍ່ມີໃຜຮ້ອງຂໍ ຫຼືຢາກໃຫ້ເຂົາມາຊ່ວຍເລີຍ. ເຈົ້າໜ້າທີ່ສອງຄົນພາກັນໃຊ້ຜ້າອັດປາກສີຂາວຂອງໂຮງໝໍ ເພື່ອປ້ອງກັນກິ່ນອັນບໍ່ເພິ່ງປະສົງທີ່ຖືກສາຍລົມພັດປິ່ວວ່ອນມາແຕ່ຫ້ອງທາງຂ້າງ ສ່ວນເກດແກ້ວກໍໄດ້ແຕ່ຍົກຂວດຢາດົມ ນ້ອຍໆ ຂຶ້ນໃສ່ຮູດັງໃນທຸກໆ ສອງສາມວິນາທີ. ເຂົາຮູ້ສຶກເສຍໜ້າຫຼາຍເຕີບທີ່ບ່ອນ ເກີດອາດຊະຍາກຳຮ້າຍແຮງນັ້ນ ຊ້ຳພັດຢູ່ຫ່າງຈາກບ່ອນເຂົາເຮັດວຽກບໍ່ຮອດສິບແມັດ.

ບໍ່ມີຄວາມຈຳເປັນຫຍັງອີກທີ່ທີມງານທັງສອງຈະກ້າວກ່າຍເລື່ອງຂອງກັນແລະກັນເມື່ອຕຳຫຼວດສອງຄົນເຮັດວຽກແລ້ວ ພວກເຂົາກໍພາກັນອອກຈາກບ່ອນນັ້ນໂດຍບໍ່ບອກລາຜູ້ໃດ.

**********

"ທ່ານໝໍຄິດວ່າເຈົ້າໜ້າທີ່ພວກນັ້ນຈະເຂົ້າໄປອ່ານປື້ມດາລາຂອງຂ້ອຍໃນຫ້ອງ ຫຼືບໍ່?"

"ຕຸ້ຍຈົດຈໍ່ກັບວຽກກັບງານແດ່ໄດ້ບໍ່?"

"ອີ່ຕົນສົມນໍ້າໜ້າເດ." ນ້ອງກິ່ງຫົວສະອຶກສະອ້ອຍຂະນະຢັບເອົາຫົວໃຈຂຶ້ນມາຊັ່ງຢູ່ຊິງຊັ່ງນໍ້າໜັກຊີ້ນທີ່ຫ້ອຍຕ່ອງແຕ່ງລົງມາແຕ່ເທິງເພດານ.

"ເອົາລະ ມີຮ່ອງຮອຍຜິດປົກກະຕິຫຍັງທີ່ພວກເຮົາພໍຈະເບິ່ງອອກແດ່?"

ຕຸ້ຍປິດປື້ມບັນທຶກຂອງຕົນ ພ້ອມຕອບຄຳຖາມຕາມທີ່ຈື່ໄດ້. "ຂໍ້ໜຶ່ງ ມີຮອຍກົດເທິງຂໍ້ມືທີ່ບາດເລິກພຽງຮອຍດຽວໃນຂໍ້ມືແຕ່ລະຂ້າງ."

"ແລະນັ້ນກໍເປັນເລື່ອງແປກເພາະ ...?"

"ເພາະຜູ້ເຊືອດຂໍ້ມືຕົນເອງມັກຈະຂີດຂວ່ານຂໍ້ມືຕົນເອງເຖິງສອງ ຫຼືສາມບາດເພື່ອຈະຮວບຮວມຄວາມກ້າຫານ ຈິ່ງຈະກົດມັນໃຫ້ເລິກພໍສົມຄວນໄດ້."

"ດີ ແລ້ວຂໍ້ສອງເດ?"

"ຂໍ້ທີສອງກໍແມ່ນມີເລືອດຄ້າງຢູ່ເທິງແຜ່ນຫຼັງຂອງຜູ້ຕາຍ ສະແດງວ່ານາງຢູ່ໃນທ່ານອນຫງາຍພາຍຫຼັງເສຍຊີວິດແລ້ວ."

"ດັ່ງນັ້ນ?"

"ດັ່ງນັ້ນຈິ່ງເປັນໄປບໍ່ໄດ້ທີ່ນາງຈະເອ່ນຕົວແລ້ວເອົາແຂນຂອງຕົນເອງໄປພາດໄວ້ຢູ່ໃນຊາມນໍ້າໂດຍປັດສະຈາກຄົນອື່ນຊ່ວຍພະຍຸງໄປ."

"ແລ້ວຂໍ້ສາມເດ?"

"ຂໍ້ທີສາມກໍແມ່ນໃບໜ້າຈືດຊີດເປັນສີຂາວ ແຕ່ຮ່າງກາຍຊໍ້າຜັດຂຽວຊໍ້າ."

"ນັ້ນກໍສະແດງວ່າ ...?"

"ຂາດອາກາດຫັນໃຈ."

"ວິເສດຫຼາຍ ຄິດວ່າຂ້ອຍພໍອອກບໍານານໄດ້ແລ້ວບັດນີ."

"ກ່ອນທີ່ທ່ານຈະອອກບໍານານ ກໍບອກໃຫ້ຂ້ອຍຮູ້ກ່ອນວ່າ ພວກເຮົາໝັ້ນໃຈແນວໃດທີ່ວ່ານາງບໍ່ໄດ້ຂ້າໂຕຕາຍ."

"ຂ້ອຍບອກໄດ້ເລີຍວ່າ ພວກເຮົາໝັ້ນໃຈຮອດເກົ້າສິບສອງເປີເຊັນ ແຕ່ວ່າໃນກໍລະນີທີ່ພວກເຮົາຕ້ອງຫາຄວາມໝັ້ນໃຈເພີ່ມຕື່ມຈັກສອງສາມເປີເຊັນ ລອງມາເບິ່ງນີ້ນໍາກັນກ່ອນເທາະ." ສິຣິດຶງຊັ້ນໜັງເປືອກນອກຈາກຄໍລົງມາ ແລ້ວໃຊ້ມີດຕັດຜ່ານກ້າມຊີ້ນແລ້ວກາງຮອຍພັບໄວ້ເພື່ອໃຫ້ຕຸ້ຍເບິ່ງກ່ອງສຽງ.

"ອືມ ... ມີເລືອດອອກບ່ອນນີ້."

"ແລະຫຍັບຂຶ້ນໄປທາງເທິງນຳເດຜູ້ຊ່ວຍທີ່ຮັກ ມີສັນຍານບາງຢ່າງເຊື່ອງຊ້ອນຢູ່ຮອຍຊ້ຳທີ່ຈາງຫາຍໄປຈາກຜິວໜັງຊັ້ນນອກ ແຕ່ມັນກໍຍັງຊຸ່ມຊ້ອນຢູ່ໃຕ້ຜິວໜັງຢູ່ດີ." ການປ່ຽນສີຂອງໂຄງສ້າງເນື້ອເຫຍື່ອໄດ້ສະແດງໃຫ້ເຫັນຮ່ອງຮອຍທີ່ຊັດເຈນ ເປັນໄປໄດ້ວ່າ ນັ້ນອາດແມ່ນຮອຍນິ້ວມື. "ຂໍ້ສະຫຼຸບແມ່ນຫຍັງ?"

"ກະຫຼີ່ຜູ້ໜ້າສິງສານຄົນນີ້ຖືກບີບຄໍຕາຍ."

"ຫາ." ນ້ອງກົ່ງຮ້ອງຂຶ້ນ. "ກະຫຼີ່ຜູ້ໜ້າສິງສານ."

"ພໍແລ້ວພວກເຈົ້ານະ ໃຫ້ກຽດຄົນຕາຍແດ່."

"ບັດນີ້ພວກເຮົາຈະເຮັດແນວໃດ?"

"ພວກເຮົາກໍພຽງແຕ່ຂຽນທັງໝົດນີ້ໃຫ້ຈະແຈ້ງຊັດເຈນແມ່ນແຕ່ຜູ້ພິພາກສາກໍຍັງເຂົ້າໃຈໄດ້ ຈາກນັ້ນພວກເຮົາກໍຈະເກັບໄວ້ເປັນຄວາມລັບຫ້າມເປີດປາກເວົ້າຢູ່ໃສອີກ ພ້ອມລໍຖ້າໃຫ້ສາລະວັດໂພສີກັບມາກ່ອນມື້ອື່ນ. ຕຸ້ຍທີ່ຮັກ ເພື່ອຄວາມປອດໄພ ພວກເຮົາຈະຕ້ອງໃຊ້ສຳເນົາກັອບປີທີສາມ ເຈົ້າພໍຈະສອດເຈ້ຍຄາບອນໃສ່ອີກໜຶ່ງຊັ້ນເຂົ້າໃນເຄື່ອງພິມດີດໄດ້ ຫຼືບໍ່?"

"ແຕ່ຂ້ອຍຄິດວ່າໂຕໜັງສືມັນອາດຈະຖືກໜີບເຂົ້າກັນຈົນແປແຊບແລບ."

"ດີແຫຼະ! ພວກເຮົາມາພາກັນຫຍິບສືບຜູ້ຍິງຄົນນີ້ເຂົ້າໃສ່ກັນໃຫ້ຄົບ ແລະສົ່ງໄປໃຫ້ນາງມັນຊ່າງແຕ່ງສົບ. ຂ້ອຍຈະຈັດການເກັບກວາດຫ້ອງເຮັດວຽກ ຕອນແລງນີ້ຈະມີແຂກມາຢາມ."

**********

ເວລາ ໕:໑໕ ໂມງ, ສີຣິນັ່ງເຮັດວຽກຢູ່ໜ້າໂຕະພຽງຄົນດຽວ ເຂົາແວ່ເຂົ້າໄປຢິບເອົາແຟ້ມເອກະສານຂອງຄົນຫວຽດນາມອອກມາຈາກຫ້ອງນ້ອຍໆ ເຊິ່ງກ່ອນໜ້ານີ້ຖືກເອີ້ນວ່າ ຫ້ອງສະໝຸດ ເຊິ່ງຕອນນີ້ມັນຖືກເກັບມ້ຽນໄວ້ຢູ່ໃນກະເປົາພາຍຂອງເຂົາເຊິ່ງວາງໄວ້ຢູ່ເທິງຕູ້ເອກະສານສີຂຽວເກົ່າໆ. ພໍເມື່ອທ້ອງຟ້າຄ່ອຍຄືບຄານເຂົ້າສູ່ຄວາມມືດມິດ ຈິດໃຈຂອງເຂົາກໍປາກົດວ່າອ່ອນແອຂີ້ຢ້ານລົງອີກຄັ້ງ ເພາະອີກບໍ່ດົນເຂົາກໍຈະໄດ້ເດີນທາງກັບບ້ານ ພ້ອມຫູັກຖານແມ່ນແຕ່ໃຜບາງຄົນຍັງໝາຍຕາຢາກໄດ້ມາຄອງແມ່ນແຕ່ຕ້ອງຂ້າຊີວິດຂອງເຂົາເພື່ອຊ່ວງຊີງເອົາມັນໄປກໍຍັງບໍ່ຄິດຈະກະດຽມມື.

ກ່ອນໄປເຮັດໜ້າທີ່ດູແລພືດຜັກແລະໝາກໄມ້, ກົ່ງໄດ້ຂີ່ລົດຖີບໄປຕະ ຫຼາດເພື່ອຊອກຊື້ກະແຈໃຫຍ່ສຸດທີ່ມີຂາຍ ພ້ອມບານພັບສຳລັບຄ້ອງສອງຊຸດ ຄົນຂາຍກະແຈບອກກົ່ງວ່າຜູ້ຄົນເຂົາເຈົ້າເຊົາຊື້ກະແຈແບບນັ້ນແລ້ວ ແຕ່ເຫັນໄດ້ຊັດແຈ້ງ ວ່າຄົນພວກນັ້ນບໍ່ເຄີຍຖືກລອບຍິງມາກ່ອນ.

ຄວາມຄິດຄະນຶງຂອງສີຣິຢຸດຕິລົງເມື່ອໄດ້ຍິນສຽງເກີບແຕະຢາງຍ່າງເປັນບາດ! ເປັນບາດຜ່ານມາເຖິງຂັ້ນໄດຊີເມັນ ແລະແລ້ວເອື້ອຍຜູ້ຖືພາກໍປາກົດຕົວດ້ວຍທ່າທາງ ຕົກປະມ່າ ສີຣິລຸກຂຶ້ນຍ່າງໄປຮັບເອົານາງເຂົ້າມາທາງໃນ.

"ຂອບໃຈທີ່ມາ. ສາມີຂອງເຈົ້າເປັນຫຍັງບໍ່ມານຳກັນ?"

"ລາວກຳລັງຫຼິ້ນໄພ້." ສີຣິສົງໄສວ່າເຫດໃດເຂົາຈິ່ງໃຫ້ຄວາມສຳຄັນກັບໄພ້ຫຼາຍກວ່າ. "ແລະເຂົາກໍບໍ່ແມ່ນຜົວຂອງຂ້ອຍດອກ."

"ນີ້ເປັນລູກຂອງເຂົາບໍ່ແມ່ນຫວາ?" ສີຣິຊີ້ມືໄປໃສ່ທີ່ທ້ອງຂອງນາງ ເຊິ່ງໂຜ່ອອກມາ ຄືກັບປຸ່ມເປືອກໄມ້ຕົ້ນນ້ອຍໆ ແຕ່ສູງຮຽວ. ນາງງຶກຫົວດ້ວຍທ່າທາງເມື່ອຍອ່ອນຫິວໃຈ.

"ນັ່ງລົງກ່ອນ ຢາກດື່ມຫຍັງບໍ?"

"ບໍ່."

ສີຣິດຶງເອົາຕັ່ງອີ້ໄປວາງໄວ້ທີ່ດ້ານຂ້າງຂອງໂຕະເຮັດວຽກ ພ້ອມເວົ້າອອກມາຢ່າງ ງຽບໆ. "ຕອນພວກເຮົາລົມກັນຫວ່າງຕອນບ່າຍມື້ນີ້ ແມ່ນຫຍັງເຮັດໃຫ້ເຈົ້າຄິດວ່າໄໝ ບໍ່ໄດ້ຂ້າໂຕຕາຍ?"

"ຍ້ອນວ່ານາງ ... ນາງບໍ່ໄດ້ສົນໃຈຈັກໜ້ອຍ."

"ບໍ່ສົນໃຈເລື່ອງຫຍັງ?"

"ທຸກໆ ເລື່ອງຫັ້ນແຫຼະ. ນາງບໍ່ເຄີຍຮ້ອນເຄືອງກັບເລື່ອງຫຍັງເລີຍ ທຸກຢ່າງເປັນ ພຽງເກມຫຼິ້ນສຳລັບນາງ."

"ແລ້ວແມ່ນຫຍັງທີ່ນາງເຫັນເປັນພຽງເກມ?"

"ຊີວິດ, ການງານ, ຄວາມຮັກ ທຸກຢ່າງນັ້ນລະ."

"ນາງບໍ່ໄດ້ເດີນທາງມາວຽງຈັນເພື່ອຄວາມຮັກຊັ້ນບໍ?"

"ນາງມາຊອກຫາຮັກຕ່າງຫາກ."

"ເຈົ້າບໍ່ຄິດເລີຍບໍວ່ານາງອາດຕິດຕາມໃຜຈັກຄົນລົງມາທາງພີ້? ເຊັ່ນອາດມີໃຜຈັກ ຄົນທີ່ນາງມີຄວາມສຳພັນໃນຊຳເໜືອ?"

"ບໍ່ດອກ."

"ໝັ້ນໃຈບໍ?"

"ແມ່ນ, ຂ້ອຍໝັ້ນໃຈ. ພວກເຮົາລົມກັນທຸກເລື່ອງ ນາງເດີນທາງມາວຽງຈັນກໍຍ້ອນ ວ່າຂ້ອຍຢູ່ພີ້ ນາງຕັ້ງໃຈມາຊອກຜົວລວຍໆ ດ້ວຍຕົນເອງ. ນາງເປັນຄົນງາມພໍສົມຄວນ." ດວງຕາຂອງນາງແດງກ່ຳ ແລະສີຣິແນມເຫັນຫຼອດໄຟເທິງເພດານສະທ້ອນໃສ່ເມັດໃສໆ ຂ້າງຂອບຕາ ເຊິ່ງມັນກຳລັງລໍຖ້າທີ່ຈະໄຫຼອອກມາຜ່ານສອງພວງແກ້ມໄດ້ຕະຫຼອດເວລາ.

"ນາງມີຜູ້ບ່າວມາຈີບຫຼາຍຄົນ ໜຶ່ງໃນຈຳນວນນີ້ແຫຼະທີ່ເປັນຜູ້ເຊົ່າຫ້ອງໃຫ້ນາງຢູ່

ນ້ອງສາວຂ້ອຍບໍ່ແມ່ນແມ່ຍິງຂາຍຕົວແລກກັບເງິນຢ່າໄດ້ເຂົ້າໃຈຜິດ. ມັນເປັນຄວາມຮັກລ້ວນໆ.”

“ເຈົ້າຮູ້ບໍວ່າຊາຍຄົນນັ້ນເປັນໃຜ?”

“ຜູ້ຢູ່ໃນຫ້ອງຫັ້ນບໍ? ກະບັກຫ່າບ້າການຜູ້ຕາມຈີບນາງຫັ້ນລະຊິແມ່ນໃຜອີກ.”

“ນາງໄດ້ເວົ້າເລື່ອງຊາຍຄົນນັ້ນຢູ່ບໍ?”

“ນາງເວົ້າໃຫ້ຟັງໝົດທຸກຄົນ.”

“ມີໃຜເປັນພິເສດ ຫຼືບໍ່? ເຊັ່ນຊາຍສູງໄວ? ຫຼືຜູ້ທີ່ເປັນບຸກຄົນສຳຄັນປະ ມານນີ້.”

“ກະບໍ່ຢາກເວົ້າແບບດູຖູກດູໝິ່ນດອກເດີ ... ມີອີ່ຕາເຖົ້າເຫງືອກດຳຄົນໜຶ່ງພະຍາຍາມນຳຈີບນ້ອງຂ້ອຍ.”

“ເຈົ້າເຄີຍພົບຊາຍຜູ້ນັ້ນບໍ?”

“ບໍ່! ແຟນຂ້ອຍຫ້າມບໍ່ໃຫ້ຂ້ອຍອອກໄປໃສ ເວັ້ນເສຍແຕ່ຄືນມື້ນີ້ແມ່ນຕ່າງເພາະນີ້ແມ່ນໂຮງໝໍ ຂ້ອຍບອກລາວວ່າຈະມາກວດທ້ອງ ເຂົາກໍເລີຍມາສົ່ງ. ແຕ່ກັບໄໝຫັ້ນ, ຂ້ອຍໄດ້ລົມກັບນາງກໍຕໍ່ເມື່ອນາງໄປຫາຂ້ອຍເທົ່ານັ້ນ ຂ້ອຍຍັງບໍ່ເຄີຍພົບພໍ້ໜ້າຕາຂອງຜູ້ບ່າວນາງຈັກຄົນເລີຍ.”

“ແຟນເຈົ້າຮູ້ບໍວ່າເຈົ້າຊິເອົາສິບນ້ອງສາວກັບຄົນໄປຊຳເໜືອ?”

“ບໍ່ຮູ້.”

“ເຈົ້າຈະກັບມາອີກບໍ່?”

ນາງຍິ້ມ. “ທ່ານຊ່າງຮູ້ຫຼາຍຢ່າງອີ່ຫຼີແມ່ນບໍ່ນີ້? ບໍ່ດອກ ຂ້ອຍຈະບໍ່ກັບມາບ່ອນນີ້ອີກ ເຂົາບໍ່ເໝາະທີ່ຈະເປັນພໍ່ຂອງລູກອີກແລ້ວ.”

“ເຈົ້າຊ່າງເປັນຄົນກ້າຫານອີ່ຫຼີ.”

“ມັນເປັນສາຍເລືອດຕ່າງຫາກ. ຂ້ອຍກັບໄໝເປັນຄົນຫົວດື້ທັງຄູ່ ທ່ານໄດ້ກວດສອບສົບຂອງນາງແລ້ວແມ່ນບໍ່?”

“ແມ່ນ ຂ້ອຍກວດສອບແລ້ວ.”

“ນາງບໍ່ໄດ້ຂ້າໂຕຕາຍແມ່ນບໍ່?”

“ບໍ່.”

ນາງຖອນຫັນໃຈໃຫຍ່ຮູດໜຶ່ງດ້ວຍຄວາມໂລ່ງອົກ ແລະແລ້ວເມັດນ້ຳໃສໆ ກໍພັງຍ່າວລົງມາຈາກຂອບຕາທັງສອງຂ້າງ ພ້ອມໄຫຼຜ່ານສອງພວງແກ້ມ, ໜ້າອົກຂອງນາງສັ່ນໄຫວຕາມແຮງສະອື້ນໄຫ້. ສີຣີປັບເອົາເຈ້ຍທິດຊູທີ່ວາງໄວ້ຢູ່ໜ້າໂຕະ ແລ້ວນາງກໍຈັບເອົາມາອັດໃສ່ຮູດັງທັງທັ່ງສຽງສູບສິດໃສ່ເຈ້ຍແຜ່ນນັ້ນ.

“ຂອບໃຈ. ແລ້ວເກີດຫຍັງຂຶ້ນ?” ນາງຖາມ.

"ມີຄົນບີບຄໍນາງ ຈາກນັ້ນກໍຈັດສາກໃຫ້ຄືກັບວ່າເປັນການຂ້າໂຕຕາຍ."

"ຂ້ອຍຮູ້ວ່ານາງບໍ່ໄດ້ຂ້າໂຕຕາຍ." ແນວໃດກໍຕາມທ່າທາງຂອງນາງເບິ່ງຄືວ່າສະບາຍໃຈຫຼາຍຂຶ້ນ ຄ້າຍກັບວ່ານາງຍອມຮັບເລື່ອງທີ່ນ້ອງສາວຕົນເອງຖືກຂ້າຫຼາຍກວ່າທີ່ຈະຕ້ອງຮັບຮູ້ວ່ານ້ອງສາວຂ້າໂຕຕາຍ.

"ສົບຂອງນາງຢູ່ນຳຊ່າງແຕ່ງສົບຜູ້ຂ້ອຍຮູ້ຈັກ ນາງຈະເຮັດໃຫ້ນ້ອງສາວຂອງເຈົ້າດູດີສຳລັບຄົນໃນຄອບຄົວແລ້ວຂ້ອຍຈະຈັດການສົ່ງສົບໄປທາງພາກເໜືອ." ສີຣິກົ້ມໜ້າລົງເພື່ອກຽມຈະຂຽນບ່ອນຢູ່ຂອງນາງນັ້ນລົງໃສ່ເຈ້ຍແຕ່ແລ້ວກໍຢຸດ. "ເຈົ້າອ່ານໜັງສືອອກບໍ່?"

ນາງແກວ່ງຫົວ. "ອ່ານບໍ່ໄດ້ທ່ານໝໍ."

"ບໍ່ເປັນຫຍັງ ຄັນຊັ້ນຂ້ອຍຈະບອກນາງນັ້ນໄປພົບເຈົ້າຢູ່ຮ້ານກໍໄດ້. ພໍທຸກຢ່າງຮຽບຮ້ອຍ, ນາງກໍແຈ້ງໃຫ້ເຈົ້າຮູ້ນຳບໍ່ທາງໃດກໍທາງໜຶ່ງ."

ນາງຄວ້າຈັບເອົາມືທັງສອງຂ້າງຂອງສີຣິມາກຸມໄວ້ແໜ້ນແທນການກ່າວຄຳຂອບໃຈເປັນຢ່າງຍິ່ງທີ່ນາງສາມາດມອບໃຫ້ແກ່ເຂົາໄດ້ ນາງບໍ່ໄດ້ເວົ້າເຖິງການແກ້ ແຄ້ນ ຫຼືໄຕ່ຖາມເຖິງເລື່ອງຄວາມຍຸຕິທຳ ແນ່ນອນຢູ່ແລ້ວອາດເປັນຍ້ອນທີ່ວ່ານາງເອງກໍຍັງບໍ່ເຄີຍໄດ້ຮັບຄວາມຍຸຕິທຳກ່ຽວກັບຫຍັງເລີຍ, ຄົນທຸກຍາກຍ່ອມໄດ້ຮັບໃນສິ່ງທີ່ໂຊກຊາຕາເປັນຝ່າຍກຳນົດແຕ່ສີຣິກໍຢາກໃຫ້ນາງເຊື່ອວ່າ ຄວາມຍຸຕິທຳມີຢູ່ຈິງ.

"ຂ້ອຍຈະນຳຫາຄົນຮ້າຍທີ່ຂ້ານ້ອງສາວຂອງເຈົ້າມາລົງໂທດໃຫ້ໄດ້ ຂ້ອຍຂໍສັນຍາຕໍ່ໜ້າເຈົ້າລວມທັງຄອບຄົວຂອງເຈົ້າ. ເຈົ້າຈື່ຫຍັງໄດ້ແດ່ກ່ຽວກັບພວກຜູ້ຊາຍທີ່ມາຈີບນາງ ເຊິ່ງພວກເຮົາພໍຈະຊີ້ຕົວໄດ້ຖືກ?"

"ຕອນນີ້ຂ້ອຍຍັງຄິດຫຍັງບໍ່ອອກເລີຍ."

"ຂ້ອຍເຂົ້າໃຈ ຖ້າມີເລື່ອງຫຍັງກໍມາຫາຂ້ອຍໄດ້ເດີ ເຈົ້າກໍຮູ້ແລ້ວວ່າຂ້ອຍຢູ່ໃສ ແຕ່ສັນຍາກ່ອນໄດ້ບໍວ່າ ເຈົ້າຈະບໍ່ເປີດປາກເວົ້າກັບໃຜເລື່ອງການຄາຕະກຳ ຫ້າມບອກໃຜເດັດຂາດ."

"ບໍ່ຕ້ອງຫ່ວງຂ້ອຍບໍ່ບອກໃຜດອກ." ນາງຈົກເອົາເຈ້ຍທິດຊູຫຼາຍແຜ່ນພ້ອມມາກະຊັບໃສ່ກັບໃບໜ້າຂອງຕົນ. "ໜ້າຕາຂ້ອຍເປັນແນວໃດລະ?"

"ງາມຫຼາຍ ງາມອີ່ຫຼີ."

ນາງຍິ້ມ ເຖິງຈະຮູ້ວ່າບໍ່ແມ່ນຄວາມຈິງ ແຕ່ກໍມີຄວາມສຸກ ແລະແລ້ວນາງກໍລຸກຂຶ້ນແລ້ວຍ່າງອອກຈາກຫ້ອງການ. ສີຣິໂຍບຕົວລົງນັ່ງຢູ່ເທິງຕັ່ງອີ້ ການປະເຊີນໜ້າກັບຄົນເປັນທີ່ຍັງມີຊີວິດມັນຊ່າງເຮັດໃຫ້ເຂົາໝົດເຫື່ອແຮງຫຼາຍກວ່າທີ່ໄດ້ປະເຊີນໜ້າກັບຄົນ

ຕາຍຊ້ຳອີກ ໂດຍສະເພາະກໍແມ່ນແມ່ຍິງ ການທີ່ໃຫ້ເຂົາພົບກັບຄົນຕາຍທຸກວັນຍັງດີກວ່າພົບໜ້າກັບແມ່ຍິງຕົວເປັນໆ.

**********

ຕະຫຼອດຊີວິດແຕ່ງດອງ ບໍ່ມີວັນໃດເລີຍທີ່ເຂົາຈະບໍ່ຮັກບົວ ແຕ່ຄວາມຮັກໄດ້ມາຮອດຂີດຈຳກັດໃນຊ່ວງສາມປີສຸດທ້າຍໃນຊີວິດຂອງບົວ. ນາງເຂັ້ມແຂງກວ່າເຂົາໃນຫຼາຍໆເລື່ອງມາໂດຍຕະຫຼອດ ທຸກຄັ້ງທີ່ຜິດຖຽງກັນ ມີສອງສາມຄັ້ງເທົ່ານັ້ນທີ່ເຂົາເປັນຝ່າຍຊະນະ ເຊິ່ງເຂົາກໍສົມຄວນຊະນະແທ້ ທຸກຄັ້ງທີ່ເຂົາເປັນຝ່າຍປະລາໄຊ ກໍເພາະມັນເປັນຄວາມສະຫຼາດຫຼາຍກວ່າທີ່ເລືອກຈະຜ່າຍແພ້ ເມື່ອອາຍຸຂອງນາງຫຼາຍຂຶ້ນ ນາງກໍຍິ່ງລະເບີດອາລົມງ່າຍຂຶ້ນ.

ນາງຫງຸດຫງິດໃຈໃນຄວາມເຊື່ອງຊ້າປານເຕົ່າຄານຂອງການປະຕິວັດຈົນເກືອບຈະລະງັບໂທສະບໍ່ໄດ້ ຄ້າຍກັບວ່ານາງໄດ້ເປີດຫີບບັນຈຸຄວາມຝັນຄັ້ງເຍົາໄວຂອງຕົນອອກມາ ... ຄວາມຝັນທີ່ຢາກຈະເຫັນໂລກໜ່ວຍນີ້ເຕັມໄປດ້ວຍຄວາມຍຸຕິທຳ ແລະຄວາມມີເຫດຜົນລວມທັງຄວາມສຸກ. ແລະແລ້ວສິ່ງທີ່ນາງຄົ້ນພົບທັງໝົດນັ້ນຊ້ຳພັດກາຍເປັນເສດຊາກທີ່ຫ່ຽວແຫ້ງ ນາງປ່ຽນໄປທັນທີເມື່ອເລີ່ມສັງເກດເຫັນວ່າທາງກອງທັບບໍ່ພຽງແຕ່ບໍ່ມີຄວາມມຸ່ງໝັ້ນ ແຖມຍັງບໍ່ໄດ້ປະຖິ້ມຄວາມເຫັນແກ່ຕົວໃນການຈັດຕັ້ງລັດຖະບານເພື່ອບໍລິການປະຊາຊົນໂດຍແທ້ຈິງ.

ເບິ່ງຄືກັບວ່າບົວບໍ່ຮູ້ສຶກຫຍັງກັບສິ່ງທີ່ເກີດຂຶ້ນ ແຕ່ເຂົາໄດ້ນຳເອົາຄວາມຜິດຫວັງທີ່ມີມາລົງໂທດໃສ່ສີຣິ, ເຂົາບໍ່ເຄີຍຂຶ້ນປາກຂຶ້ນສຽງໃສ່ນາງ ຫຼືຖົກຖຽງກັນເພື່ອປົກປ້ອງກຽດຕົນເອງເມື່ອນາງດູຖູກດູໝິ່ນເຂົາຕໍ່ໜ້າຄົນອື່ນ, ເຂົາເປັນທ່ານໝໍ ສ່ວນນາງກໍແມ່ນແມ່ຍິງທີ່ມີອາການປ່ວຍທາງຈິດ ເຊິ່ງບໍ່ມີຢາຊະນິດໃດຈະສາມາດປິ່ນປົວພະຍາດໂມໂຫຮ້າຍຂອງນາງໄດ້ ດັ່ງນັ້ນເຂົາຈິ່ງໃຊ້ວິທີບຳບັດທາງທຳມະຊາດທີ່ດີທີ່ສຸດເທົ່າທີ່ຕົນເຮັດໄດ້ ນັ້ນກໍຄື ຄວາມເຫັນອົກເຫັນໃຈ.

ໃນຊ່ວງສຸດທ້າຍກ່ອນທີ່ບົວຈະເສຍຊີວິດ ເຂົາໄດ້ຮັບເອົາພາລະກິດນອກຄ້າຍຫຼາຍຂຶ້ນ ມັນເປັນພຽງກົນອຸບາຍທີ່ລາວພຽງແຕ່ຢາກຢູ່ຫ່າງໆ ຈາກບົວເທົ່ານັ້ນ ບາງທີການທີ່ເຂົາຢູ່ໃກ້ຊິດກັບນາງອາດເປັນຕົວກະຕຸ້ນເຮັດໃຫ້ຄວາມໂມໂຫຮ້າຍຂອງນາງໂຜ່ພົ້ນຂຶ້ນມາແບບບໍ່ຮູ້ສາເຫດກໍເປັນໄດ້. ສອງວັນກ່ອນທີ່ນາງຈະຖືກຂ້າຕາຍ ສີຣິເດີນທາງໄປຊ່ວຍສ້າງໂຮງໝໍພາກສະໜາມທີ່ນ້ຳຊຳ. ບໍ່ມີການໂອ້ລົມດ້ວຍຖ້ອຍຄຳອັນອ່ອນຫວານລະຫວ່າງທ່ານໝໍກັບຜູ້ເປັນເມຍ ທັງບໍ່ມີການຈູບລາ ຫຼືແມ່ນແຕ່ຈະເອີ່ຍປາກເວົ້າຄຳວ່າ

'ຂ້ອຍຮັກເຈົ້າ' ເຂົາພຽງແຕ່ບອກນາງວ່າຈະໄປເຮັດວຽກນອກ ສ່ວນນາງກໍໄດ້ແຕ່ງຶກຫົວຕອບຮັບ.

ຍິ່ງຄືນໜຶ່ງທີ່ເຂົາຕາມຫາມາຕະຫຼອດໃນຄວາມຝັນຊ້ຳພັດບໍ່ເຄີຍມາປາກົດໃຫ້ເຫັນຈັກເທື່ອ. ບົວຕາຍຈາກໄປພ້ອມກັບຄວາມເຊື່ອທີ່ວ່າເຂົາບໍ່ໄດ້ຮັກນາງ, ນາງກຽດຊັງເຂົາຈົນຮອດມື້ຕາຍ. ເຂົາຕ້ອງການໂອກາດພຽງແຕ່ຈະໄດ້ຕິດຕໍ່ກັບນາງເຖິງມັນຈະເປັນເວລາອັນສັ້ນ ... ເຂົາຢາກຈະປັບຄວາມເຂົ້າໃຈກັບນາງໃນທຸກເລື່ອງ ແຕ່ນາງກໍບໍ່ເຄີຍມາປາກົດຕົວໃຫ້ເຫັນແມ່ນແຕ່ຄັ້ງດຽວ.

ຄວາມຄິດຂອງເຂົາຖືກລົບກວນດ້ວຍສຽງຝົດສະນັ່ນຂອງພວກແມງຈັກຈັ່ນ, ເຂົາຈຶ່ງເອົາເຈ້ຍທິດຊູຂຶ້ນມາເຊັດຕາມໃບໜ້າອັນປຽກຊຸ່ມຂອງຕົນ.

ສີຣິຄວ້າເອົາກະເປົາພາຍເຊິ່ງມີລາຍງານຂອງທ່ານໝໍສຊຸ້ນນະສູດສົບຄົນຫວຽດນາມຢູ່ຂ້າງໃນ ກ່ອນຈະປິດໄຟແລ້ວລັອກປະຕູ ເຂົາກ່າວ "ສະບາຍດີຕອນຄ່ຳ" ແກ່ບັນດາກຸ່ມນາງພະຍາບານທີ່ມາເຂົ້າຍາມ ແລ້ວຍ່າງຜ່ານປະຕູໂຂງຂອງໂຮງໝໍດ້ວຍທ່າທາງສະຫງ່າອົງອາດ ຈົນເຂົາຍ່າງມາຮອດແຄມແມ່ນ້ຳທີ່ມືດສະຫຼົວ ສີຣິຈິ່ງຄິດອອກໄດ້ວ່າອາດມີອັນຕະລາຍເກີດຂຶ້ນກັບຕົນທຸກເມື່ອລະຫວ່າງທາງກັບບ້ານ.

ເຂົາຫັນຫຼັງກັບໂດຍຜ່ານໜ້າໂຮງໝໍອີກຄັ້ງ ແລ້ວຍ່າງກັບບ້ານໄປຕາມຖະໜົນສາມແສນໄທເຊິ່ງມີໄຟສະຫວ່າງແຈ້ງກວ່າທາງເກົ່າ ແຕ່ໂຄມໄຟທີ່ສາດແສງສີ ເຫຼືອງຢູ່ຕາມເສັ້ນທາງສາຍນີ້ກໍຍັງຈິ່ງບ່ອນວ່າງໃຫ້ປະຕູທຸກບານເບິ່ງຄືກັບຖ້ຳທີ່ແຝງຊ້ອນໄປດ້ວຍອັນຕະລາຍ, ສີຣິໝັ່ນຈ້ອງມອງຜ່ານຫາງຕາເພື່ອເບິ່ງທຸກຄົນທີ່ເດີນຜ່ານໜ້າ. ພໍແຕ່ພວກເຂົາກາຍໄປແລ້ວ, ສີຣິກໍງ່ຽງຫູຟັງສຽງບາດຕີນຂອງຜູ້ຄົນເຫຼົ່ານັ້ນທີ່ອາດຈະຢ້ອນກັບມາທາງຫຼັງອີກ.

ສີຣິຍ່າງເຂົ້າໄປຊ່ວງວ່າງຂອງອາຄານ ເຊິ່ງຕັ້ງຢູ່ຝາກກົງກັນຂ້າມກັບເສັ້ນ ທາງທີ່ເຄີຍໃຊ້ເປັນປະຈຳ ເຊິ່ງເປັນເສັ້ນທາງທີ່ຕັດຜ່ານເຂົ້າໄປບໍລິເວນລານວັດ ເຂົາເຫັນພະສົງຫຼາຍອົງຢູ່ໃນກຸຕິ ເຊິ່ງກຳລັງໄຫວ້ພະສູດມົນໃນຊ່ວງສຸດທ້າຍຂອງວັນທ່າມກາງແສງທຽນ. ເຂົາຢືນຢູ່ໃນເງົາມືດກ້ອງຕົ້ນຈຳປານ້ອຍໆ ຕົ້ນໜຶ່ງ ພ້ອມເງີຍໜ້າຂຶ້ນເບິ່ງຜ່ານທາງປະຕູປ່ອງຢ້ຽມຫ້ອງຕົນເອງເຊິ່ງຮອຍອັນມືດມິດຈາກໜ້າປະຕູກໍໄດ້ຈ້ອງຕອບມາທີ່ເຂົາບໍ່ມີວີ່ແວວການເຄື່ອນໄຫວໃດໆ ຢູ່ຂ້າງໃນ ຫຼືບາງທີອາດມີຢູ່? ບໍ່ແມ່ນດອກ ມັນຄົງຈະແມ່ນຜ້າກັ້ງປິວລອຍລ່ອງຕາມແຮງລົມຄ່ອຍໆ ເທົ່ານັ້ນແຫຼະ.

ສີຣິບໍ່ໄດ້ຍິນສຽງໃຜຜູ້ໜຶ່ງກຳລັງຍ່າງເຂົ້າມາໃກ້.

"ມີຫຍັງຜິດປົກກະຕິບໍ່ອ້າຍ?"

ສີຣິສະດຸ້ງຕື່ນບາດໜຶ່ງຈົນຂົນໝາວລຸກເພືອບ ພະພິຊຸອົງໜຶ່ງຈອບມາທາງຫຼັງ

ແບບງຽບໆ ພ້ອມກັບຖືໄມ້ກ້ານຟອຍໄວ້ໃນມືເພື່ອກຽມປ້ອງກັນຕົວ ສິຣິຜ່ອນລົມຫັນໃຈລົງພ້ອມຍິ້ມໃຫ້ກັບຄວາມໂງ່ຈ້າຂອງຕົນເອງ.

"ບໍ່ມີຫຍັງດອກ ພຽງແຕ່ມາດື່ມດຳກັບບັນຍາກາດງຽບໆ ແບບນີ້ຊື່ໆ ຫ້ອງພັກຂ້ານ້ອຍຢູ່ເທິງຫັ້ນເດ."

"ໂອ ຄັນຊັ້ນກໍຂໍໂທດເດີ."

"ລາຕີສະຫວັດ." ເຂົາຍ່າງອອກໄປ.

"ລາຕີສະຫວັດເຢມິງ."

ສິຣິງວາກໜ້າກັບຄືນໄປແຕ່ພະພິຊຸຮູບນັ້ນໄດ້ຍ່າງຕັດຜ່ານເດີ່ນວັດໄປແລ້ວ.

**********

ສິຣິໃຊ້ເວລາເຄິ່ງຊົ່ວໂມງສຳລັບຕິດກອນປະຕູເພື່ອລ້ອງກະແຈດ້ວຍເຄື່ອງມືເກົ່າໆ ເດັກຍິງຕົວນ້ອຍໆ ທີ່ພັກຢູ່ຊັ້ນລຸ່ມໄດ້ຂຶ້ນມາຢືນເບິ່ງເຂົາເຮັດວຽກເພາະຍັງບໍ່ຢາກເຂົ້ານອນ. ເດັກຄົນນັ້ນຫາກໍໄດ້ຫົກປີ ແຕ່ແກ່ແດດເກີນໄວອັນຄວນ.

"ເປັນຫຍັງຕ້ອງຕິດແບບນີ້?"

ສິຣິບໍ່ຢາກເວົ້າເລື່ອງຂີ້ລັກງັດແງະເພື່ອກຽມຈະມາລັກເອົາເຄື່ອງຂອງເພາະຈະເຮັດໃຫ້ນາງຮູ້ສຶກຢ້ານ ເຂົາຈິ່ງອອກອຸບາຍດ້ວຍການເວົ້າເລື່ອງອື່ນເພື່ອສ້າງຄວາມປະທັບໃຈໃຫ້ກັບຜູ້ຟັງ.

"ກະຍ້ອນວ່າລຸງເປັນຄົນຫຼໍ່ຫັ້ນແຫຼະ." ເຂົາບອກນາງວ່າເຫດຜົນທີ່ຕ້ອງໄດ້ປິດປະຕູໄວ້ແໜ້ນກໍຍ້ອນມີແມ່ຍິງຫຼາຍຄົນມາລົບກວນວຸ້ນວາຍເຂົາທັງກາງເວັນ ແລະກາງຄືນ ຍ້ອນພວກແມ່ຍິງເຫຼົ່ານັ້ນຢາກໄດ້ເຂົາເປັນຜົວ.

"ບໍ່ນະ ລຸງບໍ່ໄດ້ຫຼໍ່ ລຸງເຖົ້າແລ້ວ."

"ອະຣາ. ລຸງອາດເບິ່ງຄືເຖົ້າສຳລັບຄົນອາຍຸຫົກປີ ແຕ່ສຳລັບແມ່ຍິງທີ່ເປັນຜູ້ໃຫຍ່ເຊັ່ນຄົນທີ່ມີອາຍຸສິບປີຂຶ້ນໄປກໍຈະເຫັນວ່າລຸງຫຼໍ່ຫຼາຍເດີ."

"ມະໂນລີຢູ່ໃສລູກ?" ສຽງຂ້ອງຜູ້ເປັນແມ່ຮ້ອງຫາເມື່ອເຫັນວ່າລູກສາວຄົນນີ້ບໍ່ຢູ່ຫ້ອງ.

"ຊູ່ ... ຢ່າບອກແມ່ເດີ."

"ມະໂນລີຢູ່ເທິງພີ້ນາງສົມ."

"ໂອ້! ລຸງນີ້ບໍ່ດີເດີ ຂ້ອຍບໍ່ແຕ່ງດອງກັບລຸງດອກ."

ເມື່ອລ໋ອກກະແຈຂັງຕົນເອງໄວ້ໃນຫ້ອງພ້ອມລາກເອົາໂຕະເຮັດວຽກທີ່ຕັ້ງຢູ່ໜ້າປະຕູປ່ອງຢ້ຽມເຊິ່ງກຳລັງເປີດອ້າຢູ່ແລ້ວມາອີງຕ້ານໄວ້ກັບຂ້າງຝາຈົນເຂົາຮູ້ສຶກວ່າ

ປອດໄພ ບໍ່ພຽງແຕ່ປອດໄພຊື່ໆ ຍັງໝັ້ນຄົງນຳອີກ ເຂົາລ້າງມືລ້າງໜ້າທີ່ອ່າງນ້ຳ ແລ້ວລົງມືຊົງກາເຟ ຢູ່ຊັ້ນວາງປຶ້ມມີຖົງເມັດຖົ່ວໃໝ່ອ່ຽມທີ່ຍັງບໍ່ທັນໄດ້ເປີດວາງຢູ່. ການຕິດຕັ້ງກະແຈເກືອບບໍ່ທັນເວລາ ເພາະນາງວົງກຳລັງຍ່າງມາຢ່າງຊ້າໆ.

ສີຣິດຶງເອົາລາຍງານຂອງໝໍຊັນນະສູດສົບຊາວຫວຽດນາມເຊິ່ງຖືກເຊື່ອງໄວ້ຊົ່ວຄາວຢູ່ກ້ອງແຜ່ນກະດານແລ້ວມານັ່ງລົງທີ່ໂຕະເຮັດວຽກ. ລາຍມືຂອງຫງຽນຫົງຊ່າງງົດງາມທັງເປັນລະບຽບ ແຕ່ສີຣິຍັງຈາເປັນຕ້ອງໄດ້ເປີດປຶ້ມວັດຈະນານຸກົມພາສາຫວຽດນາມເບິ່ງຫຼາຍສິບຄັ້ງ. ຄວາມຈິງແລ້ວໃນລາຍງານກໍບໍ່ໄດ້ມີຂໍ້ມູນຫຍັງໃໝ່ໆ ເລີຍຣ໊ອກຖືກທໍລະມານດ້ວຍກະແສໄຟຟ້າຈີ້ບໍລິເວນຫົວນົມ ແລະອະໄວຍະວະເພດດັ່ງດຽວກັບຫຣັນຄົນທຳອິດ.

ແຕ່ໃນບັນທຶກສ່ວນຕົວຕອນສຸດທ້າຍຂອງທ່ານໝໍຊັນນະສູດສົບຄົນຫວຽດນາມໄດ້ເຮັດໃຫ້ຄວາມຄິດຂອງສີຣິປ່ຽນແປງໄປໂດຍສິ້ນເຊີງ.

"ຈາກສິ່ງທີ່ຂ້ອຍສັງເກດເຫັນນັ້ນ ປາກົດວ່າກະແສໄຟຟ້າທີ່ໃຊ້ຊັອດນັ້ນແຮງເກີນໄປເມື່ອທຽບໃສ່ເປົ້າໝາຍສຳລັບການທໍລະມານ ກະແສໄຟຟ້າແຮງຂະໜາດນັ້ນອາດເຮັດໃຫ້ຊາຍທັງສາມໝົດສະຕິກ່ອນທີ່ພວກເຂົາຈະທັນໄດ້ເປີດປາກໄຂຄວາມລັບຫຍັງອອກມາຊ້ຳ ເມື່ອເບິ່ງແລ້ວເຫັນວ່າຂັດກັບເຈຕະນາລົມຂອງຜູ້ກໍ່ການຮ້າຍ ເພາະໄຟຟ້າລະດັບນີ້ມັນຫຼາຍພໍທີ່ຈະຂ້າພວກເຂົາຕາຍແບບງ່າຍໆ ສ່ວນກະແສໄຟຟ້າທີ່ໃຊ້ກັບອີກສອງຄົນນັ້ນກໍຄືກັນ.

"ໃນຈຳນວນຜູ້ຖືກເຄາະຮ້າຍສອງລາຍທັງຫຣັນກັບຣ໊ອກ ເບິ່ງຄືວ່າຈະມີປະຕິກິລິຍາຕອບສະໜອງຂະນະຍັງມີຊີວິດຢູ່ໜ້ອຍຫຼາຍ. ເມື່ອຟັງເບິ່ງແລ້ວເບິ່ງຄືວ່າແປກໆ, ສິ່ງທີ່ຂ້ອຍຢາກບອກນັ້ນກໍຄື ການຊັອດໄຟຟ້າໄດ້ມີຂຶ້ນພາຍຫຼັງເຫຍື່ອເສຍຊີວິດແລ້ວແຕ່ນີ້ກໍເປັນພຽງສ່ວນໜຶ່ງທີ່ຂ້ອຍຄາດເດົາເອົາເທົ່ານັ້ນດອກ."

"ພາຍຫຼັງການເສຍຊີວິດຊັ້ນບໍ?" ສີຣິດື່ມກາເຟຢົດສຸດທ້າຍຈົນໝົດແລ້ວກໍໄປຊົງກາເຟຈອກໃໝ່ຕໍ່ "ປະຕິກິລິຍາຕອບສະໜອງຂະນະຍັງມີຊີວິດຢູ່" ໝາຍເຖິງຈຸດແດງໆຂອງຜິວໜັງຖັດຂ້າງກັບຮອຍໄໝ້ ເຊິ່ງເປັນສັນຍານວ່າຮ່າງກາຍໄດ້ເລີ່ມສ້ອມແຊມສ່ວນທີ່ໄດ້ຮັບຄວາມເສຍຫາຍ. ຖ້າບໍ່ມີຮອຍດັ່ງກ່າວ ກໍສະແດງວ່າຮ່າງ ກາຍໄດ້ຢຸດເຮັດໜ້າທີ່ນີ້ແລ້ວ. "ພາຍຫຼັງການເສຍຊີວິດຊັ້ນບໍ?.. ຖ້າເປັນແບບນັ້ນແທ້ ກໍເລີກຄິດໄດ້ເລີຍວ່າ ຝ່າຍລາວຈັບຄົນຫວຽດນາມມາທໍລະມານ ແຕ່ໜ້າຈະກາຍເປັນວ່າມີຄົນໃດໜຶ່ງຈັດສາກຂຶ້ນໃຫ້ເບິ່ງຄືກັບວ່າ ຝ່າຍລາວເປັນຄົນເຮັດ. ເອົາ ລະບັດນີ້, ຖ້າພວກເຮົາສາມາດພິສູດໄດ້ ແລ້ວຄວາມພະຍາຍາມອັນແສນສາຫັດຂອງເຂົາຄົນນັ້ນກໍຈະສູນເປົ່າແບບບໍ່ມີຄຳບັນຍາຍ ສິ່ງນີ້ເອງເຊິ່ງກໍເປັນເຫດຜົນສຳຄັນພໍທີ່ຈະຄິດກຳຈັດເຮົາ."

ເຂົາຍ່າງກັບໄປທີ່ໂຕະຂຽນໜັງສື ພ້ອມໝອບຕົວລົງໃຫ້ຕໍ່າຂະນະຍ່າງຜ່ານປະຕູປ່ອງຢ້ຽມ ເຂົາຄິດເສຍດາຍສາຍລົມຈາກທຳມະຊາດທີ່ຫອບອູ້ມເອົາກິ່ນຫອມຂອງດອກມະລິພັດຜ່ານເຂົ້າມາ ແຕ່ເຂົາກໍຄິດເສຍດາຍຊີວິດຂອງຕົນເອງຫຼາຍກວ່າ. ເຂົາສືບຕໍ່ອ່ານຫຍໍ້ໜ້າສຸດທ້າຍ.

"ຄິດວ່າຂ້ອຍອາດຈະລະບຸສາເຫດຂອງການເສຍຊີວິດໄດ້ (ເບິ່ງຮູບ A) ມັນຖືກປົກປິດໄດ້ດີຈົນມິດຊິດ ບໍ່ຈຳເປັນທີ່ພວກເຮົາຈະຕ້ອງຮູ້ສຶກຜິດເມື່ອພາດຈຸດນີ້ໄປໃນຕອນຕົ້ນ ແຕ່ຖ້າບໍ່ມີການວິໄຈເພີ່ມຕື່ມຂ້ອຍກໍບໍ່ສາມາດຢືນຢັນຫຍັງໄດ້ອີກ. ມື້ອື່ນຂ້ອຍຈະອອກເດີນທາງກັບປະເທດພ້ອມກັບຄະນະຜູ້ຕິດຕາມຂອງສະຖານທູດ ຂ້ອຍຈະພະຍາຍາມຫາລົດໄປທີ່ໂຮ່ຈີມິນໂດຍໄວທີ່ສຸດ ຂ້ອຍອາດຈະຄົ້ນພົບຄຳຕອບໄດ້ຢູ່ທີ່ນັ້ນ ຂ້ອຍຈະພະຍາຍາມໂທກັບຫາເຈົ້າທີ່ໂຮງໝໍຫຼັງຈາກກັບມາແລ້ວ ຈົ່ງເຊື່ອໃຈຂ້ອຍເພື່ອນຮັກ."

ຮູບໂພລາຣອຍໃບໜຶ່ງຖືກຫຍິບເຫຼັ້ມ ຕິດຢູ່ດ້ານຫຼັງຂອງແຟ້ມເອກະສານ ມັນເປັນຂະໂມມທາງໜ້າຂອງຫຣັນຄົນທີສອງ. ຜິວໜັງຊັ້ນນອກທີ່ຢູ່ຮອບກົກຂາດ້ານໃນຖືກລອກກັບມາ ນອກເໜືອຈາກຮອຍໄໝ້ດຳອັນເປັນຜົນຈາກການຖືກໄຟຟ້າຊັອດ ຍັງເຫັນໄດ້ຊັດແຈ້ງວ່າມີຮອຍໄໝ້ເປັນວົງກົມຂະໜາດເທົ່າກັບຫຼຽນສິບເຊັນຂອງອາເມລິການຳອີກ. ຫຽຣນຫົງໄດ້ເຮັດເຄື່ອງໝາຍດ້ວຍ "A." ພ້ອມບັນລະຍາຍໃສ່ທີ່ດ້ານຫຼັງຂອງພາບວ່າ: "ພໍແຕ່ພວກເຮົາຢືນຢັນວ່າທັງສາມສິບເປັນຄົນຂອງພວກເຮົາ ແລ້ວຄົນຂອງເຈົ້າກໍສົ່ງສິບພວກນັ້ນມາໃຫ້ພວກເຮົາຄຸ້ມຄອງ ນີ້ເປັນພາບອັນເລັ່ງດ່ວນທີ່ດີທີ່ສຸດເຊິ່ງຂ້ອຍໄດ້ຖ່າຍໄວ້ເພື່ອໃຫ້ເຈົ້າໄດ້ຮູ້ວ່າຂ້ອຍໝາຍເຖິງຫຍັງ. ຂ້ອຍຊອກຫາຮູບທີ່ເຈົ້າຖ່າຍຕອນທຳການຊັນນະສູດສົບບໍ່ພົບ ລອງຊອກເບິ່ງດີໆ ອີກຄັ້ງ ເຈົ້າໜ້າຈະເຫັນວ່າມີຮອຍດຽວກັນແບບນີ້ທຸກສົບ ອາດເປັນປະເດັນສຳຄັນກໍເປັນໄດ້."

ສີຣິຫົວຂວັນໃຫ້ຕົນເອງ ບາງທີເຂົາອາດໂທຫາຍ່າຂອງບຸນຫຼານວ່າລາວໄດ້ເຫັນຫຍັງຜິດປົກກະຕິໃນຮູບງານແຕ່ງດອງ ຫຼືບໍ. ເຖິງແມ່ນວ່າ ໃນລາຍງານສະບັບນີ້ຍັງບໍ່ມີສິ່ງໃດທີ່ພໍຈະສາມາດເວົ້າໄດ້ວ່າເປັນຫຼັກຖານຊິ້ນສຳຄັນ ແຕ່ກໍພໍເບິ່ງເຫັນຈຸດປະກາຍແຫ່ງຄວາມຫວັງອັນນ້ອຍໆ ມັນອາດຈະຊ່ວຍຊະລໍໃຫ້ແກ້ຜູ້ກະຫາຍສົງຄາມທັງສອງຝ່າຍທີ່ຍັງຂ້າຊີວິດຜູ້ຄົນບໍ່ທັນຫຼາຍພໍໃຫ້ເລື່ອນເວລາອອກໄປໄດ້.

ເຂົາຢິບເອົາເຈ້ຍຂຶ້ນມາໜຶ່ງແຜ່ນພ້ອມກັບສໍດຳກ້ານໜຶ່ງ ແລ້ວລົງມືວາດພາບເຫດການທີ່ເຫັນວ່າໜ້າຈະເປັນໄປໄດ້ ເທິງພື້ນຖານຂອງການຄາດເດົາກັບຄວາມຈິງແບບເຄິ່ງໆ ກາງໆ. ສອງຊົ່ວໂມງຕໍ່ມາ, ເຂົາຍິ່ງເຊື່ອໝັ້ນວ່າຕົນເອງມາຖືກທາງແລ້ວ ຍັງມີອີກຫຼາຍຊ່ອງວ່າງໃນແງ່ຂອງເຫດຜົນທີ່ເຂົາຈຳເປັນຕ້ອງໄດ້ຕື່ມໃສ່ກ່ອນທີ່ຈະ

ເປີດເຜີຍໃຫ້ຄົນໃດຄົນໜຶ່ງໄດ້ເຫັນ.  ແຕ່ພໍເມື່ອເຂົາເປີດເຜີຍອອກໄປໄດ້ໄວເທົ່າໃດ ໂອກາດເຂົາຈະຖືກຍິງກໍມີແນວໂນ້ມທີ່ຈະຫຼຸດລົງເທົ່ານັ້ນ. ເຂົາຕ້ອງການຄວາມຊ່ວຍເຫຼືອອັນເລັກໜ້ອຍ ຖ້າພວກເຂົາບໍ່ຫຍຸ້ງເຫຍີງຫຼາຍເກີນໄປ ສີຣິກໍຈະບໍ່ວ່າຫຍັງເລີຍຖ້າຫຣັນ, ຫຣັນກັບຣັອກຈະມາຢາມເຂົາໃນຄວາມຝັນໃນຄ່ຳຄືນຂອງມື້ນີ້.

# 15

# ຜີສາດຜູ້ຍົ້ວຍວນແຫ່ງຄວາມຝັນ

ວິນຍານຂອງຊາຍຫວຽດນາມບໍ່ວ່າງທີ່ຈະມາປາກົດຕົວ ແຕ່ແນ່ນອນທີ່ສີຣິກໍບໍ່ໄດ້ຖືກຖິ້ມໃຫ້ຢູ່ໂດດດ່ຽວພຽງຄືນດຽວ. ກ່ອນຫຼັບ, ເຂົານອນຫຼິ້ນຢູ່ເທິງເສື່ອຜືນບາງໆ ພ້ອມຈົກເອົາເຄື່ອງລາງສີຂາວອອກມາຈາກກະເປົາ. ເຂົາພິນິດພິຈາລະນາເບິ່ງຕົວອັກສອນທີ່ຖືກຂັດຖູຈົນສີຂອງມັນຫຼຸ້ຍຫ້ຽນອອກໄປຫຼາຍແລ້ວ ພ້ອມທັງສົງໄສວ່າເຄື່ອງລາງຊິ້ນນີ້ຈະຍັງມີໂຊກລາງຫຼົງເຫຼືອຢູ່ ຫຼືບໍ່.

ເຂົາຍັງສົງໄສຢູ່ວ່າ ຄູບາຢູ່ວັດທີ່ຕັ້ງຢູ່ຫຼັງບ້ານຮູ້ໄດ້ແນວໃດວ່າເຂົາເປັນໃຜ. ເຂົາຍັງສົງໄສອີກວ່າ ຜີປອບ ໃຫ້ອະໄພແກ່ເຂົາແລ້ວຫຼືຍັງ ຫຼືນັບແຕ່ມື້ເຂົາໜີຈາກຄຳມ່ວນມາ ຜີປອບຂຸມນັ້ນຍັງຄິດຮອດເຂົາຢູ່ ຫຼືບໍ່ ແລະແລ້ວເຂົາກໍເຊືອບຫຼັບໄປພ້ອມກັບຄວາມສົງໄສທັງໝົດທີ່ຍັງວົກວົນຢູ່ໃນຫົວ.

ເວລາອາດຜ່ານໄປເປັນຫຼາຍໆ ນາທີ ຫຼືຜ່ານໄປເປັນຫຼາຍຊົ່ວໂມງ ເມື່ອສີຣິມືນຕາຂຶ້ນມາກໍຍັງຄົງເຫັນໄຟຕະກຽງຖືກໃຕ້ຖິ້ມປະໄວ້ຢູ່ທາງຂ້າງ ເຂົາຮູ້ສຶກຫງຸດຫງິດໃຈໃຫ້ຕົນເອງ ທີ່ບໍ່ຍອມມອດໄຟຕະກຽງໃຫ້ຮຽບຮ້ອຍກ່ອນນອນຫຼັບ. ນໍ້າມັນຕະກຽງໃນຄູປ່ອງຍັງໃຊ້ໄດ້ຢູ່ກັບຮ້ານຄ້າສະຫະກອນເຊິ່ງຕັ້ງຢູ່ໃນໂຮງໝໍ ແຕ່ມັນຄົງຈະໃຊ້ໄດ້ອີກບໍ່ດົນ ໃນບໍ່ຊ້າເຂົາອາດຈະໄດ້ໃຊ້ນໍ້າມັນສຳລັບປຸງແຕ່ງອາຫານແທນ ເຊິ່ງມັນຈະສົ່ງກິ່ນເໝັນກຸ້ມໄປທົ່ວຫ້ອງ.

ສີຣິປ່ອນຫົວອອກຈາກມຸ້ງພ້ອມຍົກຖ້ວຍແກ້ວທີ່ບັນຈຸຕະກຽງຂຶ້ນ ແຕ່ກ່ອນທີ່ເຂົາຈະຍັງທັນໄດ້ມອດໄຟ ເຂົາຊໍ້າພັດຮູ້ສຶກແປກໆ ຄ້າຍກັບວ່າພາຍໃນຫ້ອງມີຫຍັງບາງຢ່າງທີ່ປ່ຽນໄປ ເຂົາຄ່ອຍເຫຼືອບຕາໄປຕາມຝາຫ້ອງແຕ່ລະຈຸດຢ່າງຊ້າໆ ເຖິງແມ່ນເຂົາຈະຮູ້ວ່າມີບາງຢ່າງຜິດປົກກະຕິ ແຕ່ກໍບໍ່ສາມາດບອກໄດ້ວ່າມັນແມ່ນຫຍັງກັນແທ້ ເຂົາພົ່ນລົມໃສ່ແປວໄຟທີ່ກຳລັງຮຸ່ງແຈ້ງພໍເປັນຣິບຣີ່ ໃນທີ່ສຸດທົ່ວທັງຫ້ອງກໍຕົກຢູ່ໃນຄວາມມືດມິດແຫ່ງລາຕີການທີ່ປາສະຈາກແສງເດືອນ.

ເຂົາກວດສາຍຕາເບິ່ງຜ່ານຄວາມມືດມິດອີກຄັ້ງໜຶ່ງ ແລ້ວຖອຍຕົວກັບຄືນເຂົ້າໄປໃນມຸ້ງ ກ່ອນລົ້ມຫົວລົງໃສ່ໝອນໜ່ວຍນ້ອຍໆ ຄວາມຮູ້ສຶກກໍຍັງຄ້າງຢູ່ໃນຫົວ ທັນໃດ

ນັ້ນມັນກໍປາກົດຕົວຂຶ້ນມາ ມັນມາໃນຮູບແບບໃໝ່ແທນທີ່ຈະເບິ່ງເຫັນ ແຕ່ມັນມາດ້ວຍກິ່ນເຊິ່ງເປັນກິ່ນຂອງນໍ້າຫອມລາຄາຖືກ ໂດຍແຜ່ກະຈາຍໄປຈົນທົ່ວຫ້ອງ ແລະກິ່ນນັ້ນກໍເລີ່ມແຮງຂຶ້ນ.

ດວງຈັນພະຍາຍາມບິນຕົວອອກຈາກຮອຍບົດບັງຂອງກ້ອນເມກເປັນເວລາໜຶ່ງວິນາທີ ກ່ອນຈະສົ່ງແສງອັນຂາວຜ່ອງສາດສ່ອງຜ່ານໜ້າບານປະຕູປ່ອງຢ້ຽມ. ໃນຈັງຫວະດຽວກັນນັ້ນ, ສຽງຖອນຫັນໃຈອັນແຜ່ວເບົາເໝືອນກັບລົມຫັນໃຈຂອງສັດຕົວນ້ອຍໆ ກໍພຸ່ງຜ່ານເຂົ້າສູ່ໂສດປະສາດຫູຂ້າງຊ້າຍຂອງສິຣິ. ເຂົາຫັນກັບໄປແນມເບິ່ງດ້ວຍຄວາມປະຫຼາດໃຈ ເຊິ່ງກໍຕ້ອງຕົກຕະລຶງຕາຄ້າງເມື່ອປະທະກັບໃບໜ້າທີ່ກໍາລັງນອນຫຼັບຢ່າງງຽບສະຫງົບຂອງໄໝປາກົດຢູ່ເກືອບຈໍາກັບໃບໜ້າຂອງເຂົາເອງ.

ສິຣິຖອຍໄປຈົນຕິດກັບຂອບມຸ້ງທັງກັ້ນຫັນໃຈໄວ້ ໄໝຍັງຄົງນອນຫຼັບນິ້ງພ້ອມຖອນລົມຫັນໃຈເບົາໆ ເປັນບາດສະໝໍ່າສະເໝີ ເຊິ່ງມີຮອຍຍິ້ມປະດັບຢູ່ເທິງໃບໜ້າອັນອ່ອນເຍົາຂອງນາງ. ຮ່າງກາຍອັນແປນເປືອຍທີ່ງົດງາມສົມບູນແບບຂອງນາງນອນຢຽດຊື່ຢູ່ເທິງເສື່ອນອນຂ້າງໆ ສິຣິ. ກ່ອນທີ່ແສງຈັນຈະຫາຍເຂົ້າໄປໃນກີບເມກອີກຄັ້ງ, ສິຣິສັງເກດເຫັນຮອຍບາດເລິກທີ່ຂໍ້ມືຂອງນາງ ສ່ວນເລືອດກໍຈັບຕົວກັນແຂງເປັນປະກາຍແວວວາວສີແດງ.

ຈາກນັ້ນຄວາມມືດມິດໄດ້ຄືບຄານເຂົ້າມາອີກຄັ້ງ. ສິຣິຕັ້ງໃຈຫງ່ຽງຫູຟັງ ສຽງລົມຫັນໃຈຂອງນາງ ເຖິງແມ່ນຈະແນມບໍ່ເຫັນ ແຕ່ເຂົາກໍຮູ້ວ່ານາງຍັງນອນຢູ່ບ່ອນນັ້ນບໍ່ທັນໄປໃສເທື່ອ ທັງຮູ້ສຶກຄືກັບວ່ານາງໄດ້ຍິ້ວຍວນຊວນຫຼົງໄຫຼແກ່ອາລົມໃຫ້ຖືກປຸກລຸກຂຶ້ນມາ. ເຂົາຮູ້ດີວ່າມັນເປັນຄວາມຮູ້ສຶກທີ່ບໍ່ສົມມາພາຄວນທີ່ຈະຕ້ອງຄິດແບບນັ້ນ ພ້ອມທັງຄິດສົງໄສວ່າສິ່ງນີ້ໜ້າຈະເປັນການປົງອາບັດ ຫຼືການທໍລະມານຕົນເອງເພື່ອລ້າງຄວາມຜິດຕໍ່ຄວາມຄິດທີ່ຜິດສິນທໍາຂອງຕົນໃນຕອນເຊົ້າ ຫຼືບໍ່?

ເຂົາບໍ່ຮູ້ຈະເຮັດແນວໃດຕໍ່ ຄວນຈະປຸກນາງໃຫ້ຕື່ນຂຶ້ນຊັ້ນບໍ? ນາງມານອນຢູ່ບ່ອນນີ້ເຮັດຫຍັງ? ຖ້ານາງຕັ້ງໃຈມາຫາເຂົາ ຄົງຈະມີແນວຢາກບອກໃຫ້ເຂົາຮູ້. ແລ້ວເປັນຫຍັງນາງຄືບໍ່ເວົ້າຫຍັງອອກມາເລີຍ? ບາງທີນາງອາດອິດເມື່ອຍຈາກການເດີນທາງກໍເປັນໄດ້. ດັ່ງນັ້ນ, ສິຣິຈິ່ງລົ້ມຕົວລົງນອນດ້ວຍອາການສັ່ນເຊັນເປັນກະສັບກະສ່າຍທົ່ວທັງຮ່າງກາຍຂະນະທີ່ນາງຍັງນອນຫຼັບໄຫຼດ້ວຍຄວາມສະຫງົບ.

ບາງທີການທີ່ນາງເຮັດແບບນີ້ ອາດຈະເປັນການບອກຫຍັງບາງຢ່າງ ນາງກໍາລັງບອກວ່າຕອນນີ້ນາງກໍາລັງສະຫງົບສຸກຢູ່ແລ້ວຊັ້ນບໍ? ຫຼືນາງຕ້ອງການຢາກຈະກ່າວຄໍາຂອບໃຈເຂົາທີ່ ...?

ມີສຽງເຄາະປະຕູດັງຂຶ້ນ ເຊິ່ງເປັນສຽງເຄາະຄ່ອຍໆ ຄ້າຍກັບວ່າບໍ່ຢາກເປັນການ

ລົບກວນເພື່ອນບ້ານໃຫ້ຕື່ນຂຶ້ນມາ. ສີຣິສະດຸ້ງຕື່ນ ບໍ່ຕ່າງຫຍັງກັບຜົວນອກໃຈເມຍທີ່ຖືກຈັບໄດ້ຄາອ້ອມອົກຂອງຊູ້ຮັກໃນຮ່າງກາຍອັນແປນເປືອຍ ... ຮ່າງກາຍອັນແປນເປືອຍຂອງເຂົາກັບຊູ້ຮັກທີ່ຕາຍໄປແລ້ວ ເຂົາຄິດສາບແຊ່ງຄົນທີ່ເຄາະປະຕູຜູ້ນັ້ນ ຄວາມຄິດທີ່ໄຮ້ສາລະທັງປວງຂະນະກຳລັງນອນແບບເຄິ່ງຫຼັບ ເຄິ່ງຕື່ນໄດ້ຜຸດຂຶ້ນມາວຽນວົນຢູ່ໃນຫົວສະໝອງຂອງເຂົາ ເມື່ອກຽມຈະບິນຕົວລຸກຂຶ້ນໄປເປີດປະຕູ. ເຂົາຄວນຈະເອົານາງໄປເຊື່ອງໄວ້ຢູ່ແຈໃດ? ເຂົາຈະຫາຂໍ້ແກ້ຕົວມາອ້າງແນວໃດ?

ຈາກນັ້ນສຽງຂອງຜູ້ຊາຍຄົນໜຶ່ງກໍດັງຂຶ້ນຄ່ອຍໆ ຄືຊິ່ມວ່າ: “ໄໝ, ໄໝ ຂ້ອຍເອງ.”

ບ້າຄັກ ມັນເປັນແບບນີ້ເອງ, ມັນເປັນສ່ວນໜຶ່ງຂອງການສະແດງ ສີຣິສະຫຼຸບເອົາເອງວ່າ ຄົນມີຍານພິເສດແບບເຂົານີ້ຄືງຈະບໍ່ຈຳເປັນທີ່ຈະຊອກຫາຄວາມບັນເທີງແບບອື່ນບໍ່ໄດ້ແລ້ວແຫຼະ. ໄໝເໜັງຕິງຕົນຕົວຢູ່ຂ້າງໆ ເຂົາ ນ້ຳຫອມໃນຮ່າງ ຄົງນາງໄດ້ລອຍລ່ອງເຂົ້າສູ່ດັງຂອງເຂົາເມື່ອນາງຫຍັບຍ້າຍ ຈາກນັ້ນເຂົາກໍໄດ້ຍິນສຽງແບບຄົນເຫງົານອນຕອບອອກໄປວ່າ.

“ຄົນກຳລັງຫຼັບກຳລັງນອນຢູ່ ມັນຈັກໂມງແລ້ວນິຫົ?”

“ສາມໂມງ ຂ້ອຍຫາກໍກັບ.”

ນາງຖອນຫັນໃຈອີກຄັ້ງ ແຕ່ຕອນນີ້ມີສັນຍານແຫ່ງຄວາມເພິ່ງພໍໃຈແຝງຢູ່. “ຊິໄປໃສກະໄປເທາະແມ.”

ສີຣິເອ່ນຕົວລົງນອນຄືກັບຖືກມົນສະກົດຈິດ ເຂົາຮູ້ສຶກຄືກັບກຳລັງຟັງລະຄອນໂສກທາງວິທະຍຸ.

“ບໍ່ເອົານະ ຢ່າເຮັດແບບນີ້ດູ. ຂ້ອຍມີແນວຊິເອົາໃຫ້ເຈົ້າຢູ່ໃດ໋.”

ສີຣິໄດ້ຍິນສຽງນາງຍົກຂ້າງມຸ້ງຂຶ້ນແລ້ວຍ່າງຕີນເປົ່າຜ່ານເທິງພື້ນອອກໄປທາງປະຕູ. “ມີສີ່ລໍ້ບໍ?” ນາງຫົວສະອຶກສະອ້ອຍ.

“ດີກວ່າຫັ້ນອີກ. ຢ່າໃຈດຳໃສ່ກັນເລີຍ ໃຫ້ຂ້ອຍເຂົ້າໄປໃນແດ່ຖ້ອນ ຂ້ອຍຄິດຮອດໃຈຊິຂາດແລ້ວນີ້.”

“ມີຫຍັງດີກວ່າລົດຍົນອີກຊັ້ນບໍ?”

“ແລ້ວເຈົ້າບອກໃຫ້ຂ້ອຍຫາຫຍັງໃນວຽງໄຊມາຝາກລະ?”

ນາງຮ້ອງກິດຂຶ້ນ. “ທັບທິມຫວາ? ບໍ່ເຊື່ອດອກ! ເຈົ້າຊື້ທັບທິມມາຝາກຂ້ອຍແທ້ບໍ?”

ສຽງຖອດກອນປະຕູແບບຮ້ອນຮົນໃຈດັງຂຶ້ນ ແລະແລ້ວປະຕູກໍຖືກເປີດອອກພ້ອມສິ່ງແສງສະຫຼົວເຂົ້າມາອາບເອ້ຈົນທົ່ວຮ່າງຄົງ. ນາງຍັງຢືນຢູ່ໃນສະພາບເປືອຍກາຍຢູ່ໜ້າປະຕູຢ່າງບໍ່ຮູ້ສຶກອາຍຟ້າອາຍດິນ. ຊາຍຊູ້ຂອງນາງຍັງລີ້ຊ້ອນຢູ່ຫ້ອງໂຖງທາງຍ່າງ ໄໝຫົວສະອຶກສະອ້ອຍອີກຄັ້ງ ແລ້ວກໍຍື່ນມືອອກໄປຫາຊາຍຄົນນັ້ນ ແຕ່ມື

ຊ້າຍອັນແຂງແຮງຂອງຊາຍຄົນນັ້ນກໍໄດ້ຄວ້າຈັບທີ່ຂໍ້ມືຂອງໄໝແລ້ວກະ ຊາກນາງອອກໄປຂ້າງນອກ. ເມື່ອປະຕູຖືກປິດລົງຕາມຫຼັງນາງແລ້ວຄວາມມືດກໍກັບຄືນມາຄືເກົ່າ.

ສີຣິຍັງຄົງຫັນໃຈຖີ່ ທັງສັ່ນເຊັ່ນໄປທົ່ວຕົນຕົວ ເຂົາຄ່ອຍປີນຕົວລຸກອອກຈາກບ່ອນນອນທັງຟ້າວເບັດໜ້າໄປຫາປະຕູ. ເຂົາໄດ້ຍິນສຽງອູ້ອີ້ຄືກັບແມ່ຍິງທີ່ຫັນໃຈບໍ່ອອກຢູ່ເບື້ອງຫຼັງປະຕູບານນັ້ນ ເຂົາໃຊ້ມືງົມຫາປະຕູຈົນພົບກ່ອນຈະໃຊ້ມືດຶງອອກຢ່າງແຮງແຕ່ປະຕູນັ້ນກໍເປີດບໍ່ໄດ້ ມັນຖືກລ໋ອກໃຫ້ປິດສະໜິດດ້ວຍແມ່ກະແຈເຫຼັກດອກໃຫຍ່.

**********

ຫົກໂມງເຊົ້າສີຣິຕື່ນຂຶ້ນມາດ້ວຍຄວາມງຸນງົງ ຍັງຄົງນອນນິ້ງຢູ່ດົນເຕີບຈົນກວ່າອາການນ້ຳກ້າມທີ່ຕິດຕາມຫວ່າງຂາຈະນຳເອົາຄວາມຊົງຈຳທັງໝົດໃນຄືນຜ່ານມາກັບເຂົ້າສູ່ສະໝອງ. ເຂົາຍ່າງລົງໄປຫ້ອງນ້ຳແລ້ວໃຊ້ນ້ຳເຢັນທົດຕົນຕົວດ້ວຍຄວາມຮູ້ສຶກລະອາຍໃຈເລັກໜ້ອຍ ອາການແບບນີ້ບໍ່ໄດ້ເກີດຂຶ້ນກັບເຂົາມາດົນເຖິງຫ້າສິບຫົກປີແລ້ວ ແລະຄັ້ງນີ້ມັນກໍບໍ່ໄດ້ເຮັດໃຫ້ເຂົາຮູ້ສຶກຜິດໜ້ອຍລົງແຕ່ຢ່າງໃດ.

# 16

# ຕາຍຍ້ອນສຳພັນສະຫວາດ

"ສະບາຍດີຕອນເຊົ້າສີຣິ." ສາດສະດາຈານມົນເຊິ່ງເປັນຜູ້ອຳນວຍການຂອງໂຮງຮຽນລີເຊ່ວຽງຈັນ ເຂົາຍັງແມ່ນພໍ່ຂອງອາຈານອູ້ມ. ເຂົາຢືນແບບຄົນທີ່ມີຈິດໃຈເປັນຮ້ອນເປັນຮົນຢູ່ໃນຫ້ອງໂຖງໃຫຍ່ ເຂົາບໍ່ຢາກເຂົ້າໄປໃນຫ້ອງເກັບສົບ ສະນັ້ນສີຣິຈິ່ງເປັນຄົນອອກມາພົບເຂົາເອງ.

"ເປັນແນວໃດ ສະບາຍດີບໍ່ມົນ?" ທັງສອງຈັບມືທັກທາຍກັນ.

"ຄິດວ່າຂ້ອນຂ້າງດີຢູ່. ຂ້ອຍໄດ້ຮັບຈົດໝາຍທີ່ສົ່ງເຖິງເຈົ້າແລະອູ້ມ." ເຂົາຍື່ນຊອງຈົດໝາຍສີເທົາໄປທາງສີຣິເຊິ່ງສະແຕມທີ່ຕິດຢູ່ໄດ້ເປັນເຄື່ອງໝາຍບົ່ງຊີ້ວ່າ ຈົດໝາຍສະບັບນີ້ຖືກສົ່ງມາແຕ່ສະຫະພາບໂຊວຽດ. "ຂ້ອຍຄິດວ່າໜ້າຈະເປັນເລື່ອງສານເຄມີທີ່ພວກເຈົ້າຂໍໄປ."

"ມັນຍັງບໍ່ທັນໄດ້ເປີດຊໍ້າ."

"ຍັງບໍ່ມີໃຜເປີດອ່ານດອກ'

"ອູ້ມເດລະ?"

"ເຈົ້າບໍ່ຮູ້ຂ່າວຫຍັງເລີຍຊັ້ນບໍ ພໍແຕ່ເຈົ້າອອກຈາກນີ້ປຸບ ພວກນັ້ນກໍມາຮັບເອົານາງທັນທີ ພວກເຂົາສົ່ງນາງໄປດັດສ້າງຢູ່ວຽງໄຊ."

"ອາຈານອູ້ມຫັ້ນຫວາ? ເປັນຫຍັງຕ້ອງເຮັດແນວນັ້ນ?"

"ພວກເຂົາບອກວ່ານາງຮັບເອົາແນວຄິດຂອງພວກຫົວຮຸນແຮງມາແຕ່ອິດສະຕາລີ ພວກເຂົາເຫັນວ່າທັດສະນະຄະຕິຂອງນາງເປັນພິດໄພຕໍ່ການພະຍາຍາມຕໍ່ຕ້ານຄວາມຄິດແບບປັດເຈກຊົນນິຍົມ."

"ຈັ່ງແມ່ນໄຮ້ສາລະບ້າບໍ. ແລ້ວໃຜເປັນຄົນເບິ່ງລູກຂອງນາງ?"

"ແມ່ຂອງນາງກັບຂ້ອຍນີ້ລະເບິ່ງໃຫ້."

"ຟັງເດີມົນ, ເລື່ອງນີ້ມັນຄືຈັ່ງວ່າຢາກອອກນອກລູ່ນອກທາງແດ່ແລ້ວ ຂ້ອຍຈະລົມກັບບາງຄົນເບິ່ງກ່ອນ. ນາງເປັນຜູ້ຊ່ວຍຄົນດຽວຂອງຂ້ອຍແທ້ ແຖມຍັງເປັນນັກເຄມີ

ພຽງຄົນດຽວທີ່ຂ້ອຍສາມາດຕິດຕໍ່ໄດ້. ຂ້ອຍໝັ້ນໃຈວ່າຍ້ອນເຫດຜົນພຽງອັນດຽວນັ້ນເອງທີ່ ...”

“ຖ້າເຈົ້າຊ່ວຍໄດ້ກະເປັນເລື່ອງດີ. ພວກເຮົາຍິ່ງເປັນຫ່ວງນາງຢູ່.”

“ບໍ່ຕ້ອງຫ່ວງດອກເພື່ອນ ພວກເຮົາຈະຊ່ວຍນາງກັບຄືນມາ.”

ເມື່ອມົນກັບໄປ ສີຣິກໍຍັງຢືນຢູ່ບໍລິເວນຫ້ອງໂຖງດ້ານໃນທັງພະຍາຍາມປະຕິດປະຕໍ່ປິດສະໜາອີກຊິ້ນໜຶ່ງລົງໃນພາບເຫດການອັນສະຫຼັບສັບຊ້ອນ. ສິ່ງທີ່ເກີດຂຶ້ນນີ້ບໍ່ແມ່ນເລື່ອງບັງເອີນ ... ບໍ່ແມ່ນແນ່ນອນ. ເຂົາຫາງຸດຫງິດໃຈໜັກພໍສົມຄວນທີ່ບໍ່ສາມາດຕິດຕໍ່ຫາຫຽງຣູນຫົງໄດ້.

**********

ສຸພາບບຸລຸດຊະຕາຂາດຄົນໜຶ່ງເລືອກທີ່ຈະສິ້ນລົມຫັນໃຈໃນຫ້ອງຜ່າຕັດຂອງໂຮງໝໍໃນຕອນເຊົ້າຂອງມື້ນັ້ນ ແລະສົບຂອງເຂົາຈິ່ງຖືກສົ່ງໄປຫ້ອງເກັບສົບເພື່ອທຳການຊັນນະສູດໃນທັນທີ. ສີຣິມີໜ້າທີ່ເຊິ່ງຈະຕ້ອງໄດ້ຢືນຢັນວ່າ ບໍ່ມີຄວາມຜິດພາດໃນການປິ່ນປົວຮັກສາເກີດຂຶ້ນ ຕອນນັ້ນເວລາກໍພໍດີສິບໂມງຕົງ ແລະສິບສອງໂມງຕອນທ່ຽງເຂົາຕ້ອງໄດ້ໄປພົບສີວິໄລ. ເຂົາບໍ່ມັກຖິ້ມໜ້າວຽກໄວ້ແບບເຄິ່ງໆ ກາງໆ ພໍກະເທີນແນວນີ້ ແລະວຽກນີ້ຊ້ຳພັດຕ້ອງໄດ້ໃຊ້ເວລາອ່າວດົນແດ່. ດັ່ງນັ້ນ, ພວກເຂົາຈິ່ງຕັ້ງຂໍ້ສັງເກດເບື້ອງຕົ້ນພ້ອມຈົດບັນທຶກໄວ້ ແລ້ວເອົາສົບເຂົ້າໄວ້ໃນຕູ້ແຊ່ແຂງກ່ອນຈົນກວ່າຈະກິນເຂົ້າທ່ຽງແລ້ວ ເຮັດໃຫ້ສຸກເຊິ່ງເປັນ ຜູ້ອຳນວຍການໂຮງໝໍບໍ່ພໍໃຈເປັນຢ່າງຍິ່ງແຕ່ສີຣິກໍເຮັດເປັນບໍ່ຮູ້ບໍ່ສົນໃຈພໍເທົ່າໃດ.

ສີຣິນັ່ງຖ້າຢູ່ຂອນໄມ້ແຄມແມ່ນ້ຳປະມານສິບນາທີກ່ອນທີ່ສີວິໄລຈະໄປຮອດ.

“ສະມາຊິກອີກຄົນຂອງພວກເຮົາຢູ່ໃສລະ?” ສີວິໄລຖາມຂຶ້ນ.

“ຄິດວ່າເຂົາຈົມນ້ຳຕາຍຕັ້ງແຕ່ມື້ກ່ອນແລ້ວຕິເບາະ.”

“ຫຼືບໍ່ກໍຖືກພວກຟາຊິດຈັບຕົວໄປລະ ພະນັນໄດ້ເລີຍວ່າ ພວກນັ້ນບໍ່ມີວັນເຮັດໃຫ້ເຂົາເປີດປາກເວົ້າໄດ້ດອກ. ສະຫາຍເຊື່ອພວກທະຫານໄທຫຸ່ນກະບອງຊຸມນັ້ນບໍ່? ພວກເຂົາໃຊ້ກຳລັງເຂົ້າຢຶດຄອງປະເທດ ແລ້ວກໍອອກຖະແຫຼງການວ່າ ລັດຖະບານຂອງພວກເຮົາຂຶ້ນກຳອຳນາດຢ່າງຜິດກົດໝາຍ. ເບິ່ງແມຄວາມໜ້າດ້ານຂອງພວກມັນ.”

“ໄດ້ຂ່າວຫຍັງມາຝາກຂ້ອຍບໍນີ້?”

*“ໂອ! ນັ່ງລົງກ່ອນສີວິໄລ ໃຈເຢັນໆ ສະບາຍດີຢູ່ບໍສີວິໄລ?”* ເພື່ອນຜູ້ປຽບເໝືອນອ້າຍບອກບົດໃຫ້ເຂົາເວົ້າຕາມ.

“ສີວິໄລ.”

“ກໍໄດ້ຊັ້ນນະ. ຊີວິດຂອງສະຫາຍຄືຊິແມ່ນກຳລັງຕົກຢູ່ໃນອັນຕະລາຍແທ້ຕິນີ້.” ສີວິໄລຍອມຮັບ. “ສະຫາຍຄວນຈະພູມໃຈທີ່ເຮົາເປັນສາຍລັບສຸດຍອດ. ແຕ່ເຮົາຕ້ອງໄດ້ບອກໃຫ້ສອງສາມຄົນຮູ້ນຳຈຶ່ງໄດ້ຂໍ້ມູນນີ້ມາ.”

“ນັ້ນບໍ່ແມ່ນປັນຫາ ເຮົາຄິດວ່າມັນເປັນເວລາທີ່ຈະແບ່ງປັນສິ່ງທີ່ເຮົາຮູ້ໃຫ້ກັບຜູ້ທີ່ເຮົາເຊື່ອໃຈທຸກຄົນ. ຍິ່ງມີຄົນຮູ້ຈັກຫຼາຍຂຶ້ນ ...”

“... ຢ່າງໜ້ອຍສະໝອງຂອງສະຫາຍກໍຈະໄດ້ຫຼຸດໂອກາດແຕກກະຈາຍອອກໄປທົ່ວໜ້າປະຕູບ້ານ.”

“ພວກນັ້ນສິ່ງອາຈານອູ້ມໄປວຽງໄຊ.”

“ສາວນັກເຄມີຫັ້ນບໍ? ອືມມ.”

“ມີຄົນກຳລັງປົກປິດຄວາມລັບບາງຢ່າງຢູ່.”

“ເຮົາຈະກວດສອບເບິ່ງວ່າແມ່ນໃຜເປັນຄົນສັ່ງການເລື່ອງນີ້.”

ສີຣິດຶງເອົາເຈ້ຍສີ່ແຜ່ນອອກມາຈາກກະເປົາແລ້ວພົງອອກ ຊາຍທັງສອງບໍ່ມີໃຜຄິດເລື່ອງຈະກິນເຂົ້າທ່ຽງເລີຍ. “ພໍລອງມາປະຕິດປະຕໍ່ເຫດການທັງໝົດເຂົ້າກັນເບິ່ງ ເຮົາຈຶ່ງສະຫຼຸບໄດ້ຂໍ້ສັນນິຖານອັນໜຶ່ງ.”

ສີວິໄລແນມເບິ່ງຂໍ້ຄວາມທີ່ຂຽນດ້ວຍລາຍມືອັນຫຍຸ້ງເຫຍີງນັ້ນ. “ນ້ອງຊາຍ, ເຫັນແລ້ວວ່າເຮົາຕ້ອງເປັນຜູ້ຊ່ຽວຊານດ້ານພາສາບູຮານເອຢິບກ່ອນແຫຼະ ຈຶ່ງຈະເຂົ້າໃຈລາຍມືອັນຫຍຸ້ງເຫຍີງຄືກັບໄກ່ເຂ່ຍແບບນັ້ນໄດ້ ມາລອງຟັງກ່ອນວ່າເຮົາຮູ້ຫຍັງມາແດ່ແລ້ວຈຶ່ງມາສະຫຼຸບກັບຂໍ້ສັນນິຖານຂອງສະຫາຍວ່າມັນຈະຕົງກັນ ຫຼືບໍ່.

“ຄະນະຜູ້ແທນຂອງຫວຽດນາມເດີນທາງມາວຽງຈັນຕາມຄຳເຊີນຂອງທ່ານຫົວໜ້າໜ່ວຍງານຮັກສາຄວາມໝັ້ນຄົງ ພວກເຂົາເດີນທາງມາກໍເພື່ອຈະມາຊີ້ຕົວຜູ້ຕ້ອງສົງໄສວ່າເປັນກະບົດ ມັນຄວນຈະຖືກປິດເປັນຄວາມລັບ ໜຶ່ງໃນຄົນຫວຽດນາມທັງສາມຂອງສະຫາຍໄດ້ມີສ່ວນຮ່ວມໃນການປະຕິບັດລັບທາງພາກໃຕ້ ໃນນັ້ນໄດ້ມີການໂຈມຕີ ຄົນຫວຽດນາມກຸ່ມນີ້ຖືກຂ້າຕາຍໝົດຍົກເວັ້ນເຂົາຄົນດຽວ. ເຂົາຖືກຍິງຈົນອາການສາຫັດ ແລະທຸກຄົນກໍຄິດວ່າເຂົາຕາຍແລ້ວ.”

“ນັ້ນແມ່ນຣັອກ”, ສີຣິເວົ້າ. “ຄົນສຸດທ້າຍທີ່ພວກເຮົາພົບຢູ່ເຂື່ອນ ໃນໂຕເຂົາມີຮູບັກໃຫຍ່ກວ້າງເທົ່າໆ ກັບຖ້ຳຜາບານ.”

“ຫັ້ນແຫຼະ ... ເຂົາເຮັດຕິຕາຍໄດ້ແນບນຽນອີ່ຫຼີ ຕອນທີ່ພວກນາຍທະຫານມົ້ງລົງໄປກວດສອບຄວາມເສຍຫາຍຫັ້ນ ພວກນັ້ນຍັງບໍ່ຮູ້ຊໍ້າວ່າຣັອກຈື່ໜ້າພວກເຂົາໄດ້. ຕາມທີ່ຣັອກຂອງສະຫາຍບອກ, ເຂົາຈື່ໜ້າຜູ້ຊາຍສູງໄວສວມຊຸດພົນລະເຮືອນຄົນໜຶ່ງທ່າທາງຄືງຈະແມ່ນທີ່ປຶກສາ ຫຼືຫຍັງຈັກຢ່າງ ແຕ່ກ່ອນໜ້ານັ້ນປະມານສອງອາທິດ

ຣັອກກໍເຄີຍເຫັນຜູ້ຊາຍຄົນນັ້ນໃສ່ເຄື່ອງແບບກອງທັບປະຊາຊົນລາວ."

"ຣັອກບາດເຈັບໜັກຈົນໃກ້ຕາຍ ເຂົາແນ່ໃຈໄດ້ແນວໃດວ່າເປັນຜູ້ຊາຍຄົນດຽວກັນ?"

"ເຂົາເຊື່ອວ່າແມ່ນແທ້. ເຂົາເຄີຍເຫັນຜູ້ຊາຍຄົນນີ້ຢູ່ສູນປະຕິບັດການປະຈຳຊາຍແດນ ພວກເຂົາຍັງເຄີຍໂອ້ລົມກັນຮອດສອງສາມເທື່ອ ຜູ້ຊາຍຄົນນັ້ນກໍຍັງຢູ່ຫັ້ນໃນວັນທີ່ພວກເຂົາວາງແຜນປະຕິບັດພາລະກິດກ່ອນກາຍເປັນຫາຍະນະຕອນນັ້ນ. ພວກຫວຽດກົງໄດ້ມາພົບເຫດການພາຍຫຼັງທີ່ມີການສັງຫານໝູ່ ແລະເຫັນວ່າຣັອກຍັງມີຊີວິດຢູ່ ພວກເຂົາຈິ່ງນຳຣັອກຂຶ້ນເຄື່ອງບິນແລ້ວກັບໄປທີ່ຮາໂນ່ຍ.

"ທັນທີທີ່ເຂົາຟື້ນຕົວໄດ້ ຍ້ອນຄວາມແຄ້ນໃຈ ຣັອກຈິ່ງບອກທຸກຄົນກ່ຽວກັບທີ່ປຶກສາຄົນນັ້ນ. ເຂົາຄົງສາມາດໂນ້ມນ້າວຈິດໃຈພວກເຈົ້າໜ້າທີ່ລະດັບສູງໃຫ້ເຊື່ອເຂົາໄດ້ ເພາະທາງທ່ານທູດຂອງພວກເຮົາໄດ້ຖືກເຊີນໄປພົບຣັອກກ່ອນແຈ້ງມາໃຫ້ພວກເຮົາຮູ້ ແລ້ວພວກເຮົາຈິ່ງໄດ້ເຊີນຣັອກເຂົ້າມາຊ່ວຍລະບຸຕົວຊາຍຄົນນັ້ນ."

"ພວກເຂົາສົ່ງຮູບຖ່າຍໄປບໍ່ໄດ້ຫວາ?"

"ຮູບຖ່າຍຫຍັງອີກລະ? ຮູບທະຫານກອງຮ້ອຍໃນໜັງສືລາຍປີຫັ້ນຫວາ? ສະຫາຍເຄີຍໄດ້ຖ່າຍຮູບຈັກໂປ້ໃນຊ່ວງຊາວປີຜ່ານມາຫັ້ນນະສີຣິ? ພວກກະບົດທີ່ຕໍ່ຕ້ານລັດຖະບານຄົງບໍ່ເປັນບ້າໃສ່ຊຸດເຄື່ອງແບບ ແລ້ວແອັກທ່າຖ່າຍຮູບໄວ້ເປັນຫຼັກຖານມັດຕົວ ໃນເມື່ອຖືກຈັບຂຶ້ນສານດ້ວຍຂໍ້ກ່າວຫາວ່າເປັນກະບົດຕິເບາະ."

"ເອີາລະ ... ເອີາລະ ... ທັນທີທີ່ຣັອກແຂງແຮງພໍທີ່ຈະອອກເດີນທາງໄດ້ແລ້ວ ພວກເຂົາກໍສົ່ງຕົວເຂົາມານີ້."

"ພ້ອມດ້ວຍນາຍທະຫານຫວຽດນາມຍົດພັນເອກກັບຄົນຂັບລົດ ພວກເຂົາມີໃບອະນຸຍາດເດີນທາງຈາກບຸກຄົນລະດັບສູງ."

"ຄັນຊັ້ນ ກໍເປັນໄປໄດ້ໜ້ອຍຫຼາຍທີ່ຄົນຂອງພວກເຮົາຈັບພວກເຂົາທັງສາມມາທໍລະມານ ແມ່ນບໍ່ລະ?"

"ກໍບໍ່ສະເໝີໄປດອກ. ຢ່າລືມວ່າມີເຈົ້າໜ້າທີ່ລາວຄົນໜຶ່ງເຂົ້າໄປແນະນຳສັ່ງການແກ່ພວກມົ້ງຢູ່ໃດ! ນັ້ນແຫຼະຈິ່ງວ່າບໍ່ແມ່ນເລື່ອງດີສຳລັບພວກເຮົາ ເຊິ່ງພວກຫວຽດນາມກໍສົງໄສພວກເຮົາມາກ່ອນທີ່ເຫດການນີ້ຈະເກີດຂຶ້ນຊ້ຳອີກ. ແລະທາງຝ່າຍເຮົາກໍຍັງພາກັນປິດບັງເລື່ອງນີ້ຢູ່ ມີບໍ່ເທົ່າໃດຄົນດອກທີ່ຮູ້ເລື່ອງນີ້ ມີພຽງໜ່ວຍງານຮັກສາຄວາມໝັ້ນຄົງກັບເຈົ້າໜ້າທີ່ພັກລະດັບສູງເທົ່ານັ້ນທີ່ຮູ້ເລື່ອງ ໃນນີ້ບໍ່ໄດ້ ລວມເຖິງເຮົາກັບທ່ານນາຍົກລັດຖະມົນຕີ ແລະທ່ານປະທານປະເທດ ເຊິ່ງບໍ່ຢາກເຮັດໃຫ້ຄົນຜູ້ນັ້ນຮູ້ຕົວວ່າກຳລັງຖືກໝາຍຕາຢູ່."

"ດັ່ງນັ້ນ ເຂົາອາດຍັງຄົງລອຍນວນຢູ່ບ່ອນໃດບ່ອນໜຶ່ງ ອີກຢ່າງຕອນນີ້ກໍບໍ່ມີໃຜ

ແລ້ວທີ່ຈະເປັນຜູ້ລະບຸຕົວຕົນຂອງເຂົາໄດ້ອີກ. ພວກເຮົາພໍຮູ້ຂໍ້ມູນອື່ນໆ ແດ່ບໍ?"

"ຮູ້ພຽງຕຳແໜ່ງ ເຂົາເປັນນາຍພົນຕີ."

"ລອງສືບເບິ່ງບໍ່ໄດ້ບໍວ່າ ມີນາຍພົນຕີຂອງພວກເຮົາຄົນໃດທີ່ໄປລາດຕາເວນຢູ່ສູນປະຕິບັດການປະຈຳຊາຍແດນໃນຊ່ວງທີ່ຣັອກຢູ່ຫັ້ນ."

"ພວກເຮົາກຳລັງກວດສອບຢູ່ ແຕ່ມັນກໍເປັນສູນປະຕິບັດການຂະໜາດໃຫຍ່ທັງມີຄົນທຽວອອກທຽວເຂົ້າຕະຫຼອດເວລາ ອີກຢ່າງໜຶ່ງພວກເຮົາກໍບໍ່ມີລະບົບບັນທຶກຂໍ້ມູນກ່ຽວກັບການຊຸບຊ້ອນ ຫຼືຍົກຍ້າຍທະຫານທີ່ມີປະສິດທິພາບພໍຈະສາມາດກວດສອບໄດ້."

"ແລ້ວເລື່ອງໝູປ່າດຳເດໄດ້ສອບຖາມໃຜແດ່ບໍ?"

"ໂອຍຟ້າເອີຍ ສະຫາຍນີ້ໄດ້ຄ່າສອກກໍຢາກອອກຄ່າວາແທ້ໃດນິ ຢ່າລືມລົງຊື່ເຮົາໃສ່ໃນພົງສາວະດານກຳຂອງສະຫາຍເພື່ອເປັນລາງວັນຕອບແທນໃນຖານະທີ່ເຮົາເປັນຜູ້ຊ່ວຍສະຫາຍໃນທຸກເລື່ອງແດ່ເດີ."

"ສະຫາຍຄົງຈາກເຮົາໄປກ່ອນແລ້ວແຫຼະເພື່ອນຮັກ."

"ເຮົາບໍ່ເຫັນໃຜຈ້ອງຊິຍິງຫົວເທື່ອນະ."

"ຕໍ່ຈາກນີ້ໄປກະຫາກຊິມີແລ້ວແຫຼະ. ເຮົາກ້າພະນັນໄດ້ເລີຍວ່າມີຄົນກຳລັງເລັງປືນໄຣເຟີລໄລຍະໄກຈ້ອງມາແຕ່ເທິງດາດຟ້າ ແລະຕອນນີ້ຫົວຂອງສະຫາຍກຳລັງຕົກເປັນເປົ້າສາຍຕາຂອງມືປືນຢູ່."

ສຽງຄໍ້ອກແຄໍ້ກຂອງກິ່ງໄມ້ດັງມາແຕ່ເທິງຕົ້ນໄມ້ເໜືອຫົວຂອງທັງສອງ ເຮັດໃຫ້ຕ່າງຝ່າຍຕ່າງພາກັນໂດດສັກລະໂຍງໂລງເລງ ປານມິດສະລອຍຕອດກົ້ນທັງວ່ອງໄວກວ່າຄັ້ງອື່ນໃດໃນຮອບຫຼາຍປີ. ທັງຄູ່ພາກັນແລ່ນຕະເລີດອອກຈາກແຄມຝັ່ງແມ່ນໍ້າປະມານຊາວແມັດ ກ່ອນທີ່ສິຣິຈະງວາກໜ້າກັບຄືນມາ ເຂົາຢຸດສະຫງັກພ້ອມກັບຜ່ອນລົມຫັນໃຈໃຫ້ເປັນປົກກະຕິ.

"ຣາຈິດຂຶ້ນໄປເຮັດບ້າຫຍັງຢູ່ເທິງຫັ້ນນະ?" ສິວິໄລງວາກໜ້າກັບຄືນຈິ່ງເຫັນຊາຍອິນເດຍບໍ່ສົມປະກອບຄົນນັ້ນນັ່ງງອຍຢູ່ປາຍຕົ້ນໄມ້ທັງອ້າປາກງາບໆ ຫົວຢູ່ແຕ່ບໍ່ມີສຽງເປັ່ງອອກມາ ມື້ນີ້ເຂົາຫາເລື່ອງຕື່ນເຕັ້ນເພື່ອສ້າງບັນຍາກາດໃຫ້ຕົນເອງສະໜຸກສະໜານພໍສົມຄວນ.

"ພະນັນໄດ້ເລີຍວ່າເຂົາຕ້ອງແມ່ນສາຍສືບລັບສຸດຍອດ ທີ່ເວົ້າໄດ້ຮອດຫົກພາສາແບບບໍ່ຂ້ອງບໍ່ຄາແທ້ແຫຼະ." ທັງສອງກອດຄໍກັນພ້ອມທັງຫົວຂະນະຍ່າງກັບຄືນໄປຂອນໄມ້ ກ່ອນຈະໄຂຫໍ່ແຊນວິດແລ້ວກໍພາກັນກັດກິນບ້ວຍໆ ຊົ່ວຂະນະໜຶ່ງຈົນກວ່າປະສາດທັງຄູ່ກັບຄືນສູ່ພາວະປົກກະຕິ ສິຣິຈິ່ງເວົ້າຂຶ້ນ.

"ເອີລະບັດນີ ໝູປ່າດຳໝາຍເຖິງຫຍັງກັນແທ້?"

"ຕາມທີ່ແຫຼ່ງຂໍ້ມູນຂອງເຮົາແຈ້ງມາ ໝູປ່າດຳແມ່ນຊື່ລະຫັດໜ່ວຍປະຕິບັດການພິເສດຂອງກອງທັບເຮືອອາເມລິກາ ພວກເຂົາໄດ້ກໍ່ກຳສິ່ງຊົ່ວຊ້າສາມານໄວ້ຫຼາກຫຼາຍໃນຫວຽດນາມຊ່ວງສົງຄາມ. ເຈົ້າໜ້າທີ່ໃນໜ່ວຍງານນີ້ບໍ່ມີການສວມໃສ່ເຄື່ອງແບບ ແລະບໍ່ມີພາກສ່ວນໃດຍອມຮັບເປັນທາງການວ່າພວກນີ້ແມ່ນໜ່ວຍງານຂອງຕົນ ແຕ່ຄົນກໍຊ່າກັນວ່າໜ່ວຍງານນີ້ເປັນໜຶ່ງໃນໜ່ວຍງານຊີໄອເອ."

"ໃຊ້ກັນໝົດທຸກຄົນຫວາ?"

"ພວກນີ້ພາກັນສ້າງຄວາມຫາຍະນະໄວ້ຫຼາຍຈົນນັບບໍ່ຖ້ວນ ເປັນຫຍັງຄືມາຢາກຮູ້ເລື່ອງພວກເຂົາແທ້ນະ?"

"ເປັນໄປໄດ້ບໍວ່າຄົນພວກນີ້ຈະຍ້າຍມາເຄື່ອນໄຫວຢູ່ແຖວນີ້?"

"ເຂົ້າມາເຮັດຫຍັງອີກ?"

"ເຮັດແນວເດີມໆ ເຊັ່ນສ້າງຄວາມປັ່ນປວນປະມານນັ້ນ."

"ສະຫາຍຄິດວ່າເລື່ອງການທໍລະມານທີ່ຍັງເປັນເລື່ອງລຶກລັບແບບໄຂປິດສະໜາບໍ່ໄດ້ນີ້ມີສ່ວນກ່ຽວຂ້ອງກັບຄົນພວກນີ້ແມ່ນບໍ່? ເຮົາລະຄິດບໍ່ອອກວ່າຈະມີຄົນອາເມລິກາທີ່ເຂົ້າມາອາໄສຢູ່ນີ້ຕັ້ງຫຼາຍຄົນຄືງບໍ່ມີໃຜລາຍງານໃຫ້ຮູ້ດອກ."

"ເປັນຫຍັງຊິບໍ່ໄດ້? ໃຜຊິໄປຮູ້ອາດມີໝູ່ບ້ານຊາວມົ້ງຕັ້ງລີ້ຊ່ອນຢູ່ຕັ້ງຫຼາຍແຫ່ງ, ພວກແຢງກີ້ຍິ່ງຢາກເຫັນລະບອບການປົກຄອງຂອງພວກເຮົາຫຼົ້ມສະຫຼາຍຈົນຕົວສັ່ນ."

"ເອີລະຊັ້ນນະ ບອກເຮົາຕິວ່າສະຫາຍຮູ້ຫຍັງແດ່ບັດນີ້ ເຮົາຈິ່ງພໍຈະໄດ້ບອກສະຫາຍວ່າເລື່ອງຊຸມນີ້ຟັງເບິ່ງແລ້ວມັນຊ່າງໄຮ້ສາລະອີ່ຫຼີ ແລ້ວເຮົາຈະບອກຕໍ່ໃຫ້ໜ່ວຍງານຮັກສາຄວາມໝັ້ນຄົງຮັບຮູ້ນຳ." ສີວິໄລເງີຍໜ້າຂຶ້ນແນມເບິ່ງຮາຈິດຜູ້ສະຕິບໍ່ເຕັມເຊິ່ງກຳລັງເກາະຕິດກັບງ່າໄມ້ບໍ່ຕ່າງຫຍັງກັບໂຕເຈຍ. "ຜ່ອນສຽງລົງເບົາໆ ແດ່ຕິລະ."

**********

ການຊັນນະສູດສົບໃນຕອນບ່າຍມື້ນັ້ນໃຊ້ເວລາດົນເກີນກວ່າທີ່ສີຣິຄາດການໄວ້ ເນື່ອງຈາກວ່າເຂົາເມົາແຕ່ພຸ່ງຄວາມສົນໃຈໄປທີ່ເຫຼັກຕະປູທີ່ມີຂະໜາດຍາວເທົ່າສິບຫ້າຊັງຕີແມັດຕິດຄ້າງຢູ່ໃນລຳໄສ້ຂອງສຸພາບບຸລຸດອາຍຸສູງຄົນນັ້ນ ພວກເຂົາໄດ້ທຳການຖ່າຍພາບເຫຼັກຕະປູດອກນັ້ນໄວ້ ແລະສີຣິກໍໃຊ້ເວລາເຖິງສອງສາມຊົ່ວໂມງເພື່ອຊອກຫາຮ່ອງຮອຍວ່າຕະປູດອກນີ້ຂ້າເຂົາໄດ້ແນວໃດ. ສຸດທ້າຍແລ້ວຜົນການຊັນນະສູດຊ້ຳ

ພັດພິກແຜນ ເນື່ອງຈາກຜູ້ຕາຍບໍ່ໄດ້ເສຍຊີວິດຍ້ອນເຫຼັກຕະປູ ອີກຢ່າງໜຶ່ງມັນກໍຢູ່ໃນລຳໄສ້ຂອງເຂົາມາແຕ່ດົນນານແລ້ວ ສ່ວນເລື່ອງທີ່ມັນເຂົ້າໄປຢູ່ໃນລຳໄສ້ໄດ້ແນວໃດນັ້ນຖືວ່າຍັງຄົງເປັນປິດສະໜາຕໍ່ໄປ ມີຄວາມລັບອື່ນຫຼາຍພໍທີ່ເຂົາຈະຕ້ອງໄດ້ຊອກຫາຄວາມກະຈ່າງແຈ້ງ.

ປາກົດວ່າສາເຫດຂອງການເສຍຊີວິດ ແມ່ນເກີດຈາກການມີເພດສຳພັນຕ່າງຫາກ ຜູ້ຕາຍມີກຳນົດເຂົ້າຜ່າຕັດໄສ້ຕິ່ງ ແຕ່ເນື່ອງຈາກມີນາງພະຍາບານບໍ່ພຽງພໍ ທາງໂຮງໝໍຈຶ່ງໄດ້ເຊື້ອເຊີນບັນດາຍາດມິດຂອງຜູ້ປ່ວຍມານອນເຝົ້າຄ້າງຄືນເພື່ອຢູ່ເປັນໝູ່ຄອຍຊ່ວຍເຫຼືອກັນ. ປົກກະຕິແລ້ວຍາດພີ່ນ້ອງຂອງຜູ້ປ່ວຍຈະພາກັນນອນຂົດຢູ່ເທິງພື້ນຫ້ອງເທົ່ານັ້ນ ແຕ່ສຸພາບບຸລຸດຄົນນີ້ຊ້ຳພັດໄດ້ຮັບສິດພິເສດກວ່າຄົນປ່ວຍລາຍອື່ນ ເພາະເຂົາຫາກໍໄດ້ເມຍສາວທີ່ຍັງເອາະໆ ຫວ່າງບໍ່ດົນຜ່ານມານີ້ເອງ. ການໄດ້ຢູ່ໃກ້ຊິດກັບເມຍສາວໃນຄ່ຳຄືນກ່ອນທີ່ເຂົາຈະເຂົ້າຫ້ອງຜ່າຕັດຄັ້ງສຳຄັນໃນຊີວິດ ເຮັດໃຫ້ເກີດມີອາລົມກະຕຸ້ນທາງເພດກ່ອນທີ່ຈະມີກິດຈະກຳເທິງຕຽງອັນຮ້ອນແຮງຕາມທຳມະຊາດ ເຂົາຈົ່ມໃຫ້ຜູ້ເປັນເມຍຟັງວ່າເຈັບຫົວແຮງຄືກັບມັນຈະລະເບີດອອກມາ ແຕ່ເຂົາກໍອົດທົນຈົນເຖິງເວລາເຂົ້າຫ້ອງຜ່າຕັດ ເຂົາບໍ່ສາມາດບອກທ່ານໝໍໃນເລື່ອງຄວາມເຈັບປວດອັນເຫຼືອເຊື່ອຂອງຕົນເອງເນື່ອງຈາກຖືກວາງຢາສະຫຼົບກ່ອນ ຂະນະທີ່ແພດຈະເຈາະເຂົ້າໄປໃນທ້ອງຂອງເຂົາກໍພົບວ່າເຂົາເສຍຊີວິດແລ້ວ ຍ້ອນຫຼອດເລືອດໃນສະໝອງໂປ່ງພອງຈົນເສັ້ນເລືອດໃນສະໝອງແຕກ. ຖ້າສີຣິບໍ່ຍອມເສຍເວລາຫຼາຍພໍກັບລຳໄສ້ ແລ້ວມຸ່ງເປົ້າໄປກວດທີ່ສະໝອງແທນ ເຂົາກໍຈະພົບສາເຫດການຕາຍໄດ້ໃນທັນທີ ແຕ່ພະນັກງານຜູ້ຈົງຮັກພັກດີຂອງເຂົາເບິ່ງອອກວ່າ ທ່ານໝໍສີຣິກຳລັງຄິດເຫັນເລື່ອງອື່ນທີ່ສຳຄັນກວ່ານັ້ນອີກ.

"ແນວໃດກໍຕາມ ຕໍ່ໄປນີ້ໃຫ້ຈື່ໄວ້ເປັນບົດຮຽນເດີຕຸ້ຍ ການມີເພດສຳພັນອາດຂ້າເຈົ້າຕາຍໄດ້."

"ຂ້ອຍໜ້າຈະໂຊກດີຫຼາຍແຫຼະ."

ນ້ອງກຶ່ງພຶມພຳສຽງດັງຜ່ານຮູດັງ.

ໃນຂະນະທີ່ພວກເຂົາກຳລັງເກັບມ້ຽນທຳຄວາມສະອາດຢູ່ນັ້ນ ພໍດີມີຄົນມາສົ່ງຈົດໝາຍ ເຊິ່ງລວມມີພັດສະດຸກ່ອງໜຶ່ງທີ່ຖືກສົ່ງມາແຕ່ໄຊຍະບູລີ ພ້ອມກັບຮູບສອງຊຸດທີ່ໄດ້ຖ່າຍພາບການຊັນນະສູດສົບໄວ້ ໃນລະຫວ່າງໄປພິມບົດລາຍງານ, ຕຸ້ຍໄດ້ນຳເອົາເຄື່ອງຊຸມນັ້ນໄປໄວ້ໃນຊັ້ນປຶ້ມຢູ່ຫ້ອງສະໝຸດກ້ອງຕົວອັກສອນ "P." ພໍຫ້ານາທີຕໍ່ມານາງກໍກັບຄືນມາແບບທັງເຊົ່າທັງຫອບ.

"ທ່ານໝໍ ມີໂທລະສັບດ່ວນຈາກຫວຽດນາມ."

ແມ່ນແຕ່ຄູຝຶກນັກກິລາຜູ້ມີຈິດໃຈງາມທີ່ສຸດກໍຄົງອິດທີ່ຈະເສົ້າໃຈບໍ່ໄດ້ເມື່ອແນມເຫັນສີຣິກັບຕຸ້ຍ 'ແລ່ນ' ຕະເປະຕະປະໄປຍັງຕຶກຫ້ອງການຂອງພະແນກບໍລິຫານສະໝອງຂອງສີຣິເຕັ້ນຕຸບໆ ໃນຂະນະແລ່ນຂຶ້ນເທິງຂັ້ນໄດ ເຮັດໃຫ້ເຂົາຄິດເຫັນພາບຜູ້ຊາຍທີ່ນອນຢູ່ໃນຕູ້ແຊ່ແຂງ ເຂົາສິ່ງສຽງຫັນໃຈແບບຫອບໆ ເມື່ອຄວ້າມືຈັບເອົາໂທລະສັບມາແນບໃສ່ຫູ ໂດຍບໍ່ອາດຄວບຄຸມລົມຫັນໃຈ ຫຼືບັງຄັບຫົວໃຈໃຫ້ເຕັ້ນເປັນປົກກະຕິໄດ້.

"ສີຣິ? ທ່ານໝໍສີຣິ? ແມ່ນທ່ານບໍ່?" ສີຣິງຶກຫົວຂຶ້ນໆ ລົງໆ. "ວ່າແນວໃດສີຣິ?"

"ຫງຽນບໍ່?"

"ໂອຍຟ້າເອີຍ ເຈົ້າເປັນຫຍັງບໍ່ນິ?"

"ອອກ ... ອອກກຳລັງກາຍ ເຈົ້າ ... ເວົ້າໂລດ."

"ວ່າຫຍັງເກາະ? ອໍໄດ້ໆ. ຂ້ອຍເຊື່ອວ່ານີ້ຄືສິ່ງທີ່ເກີດຂຶ້ນ ຂ້ອຍເຊື່ອວ່າສາມຄົນນັ້ນບໍ່ໄດ້ຕາຍຍ້ອນຖືກທໍລະມານດອກ ຂ້ອຍຂ້ອນຂ້າງໝັ້ນໃຈວ່າສອງໃນສາມຄົນທີ່ເສຍຊີວິດເພາະມີຟອງອາກາດໃນເສັ້ນເລືອດແດງ."

"ຕາຍຍ້ອນຫຍັງເກາະ?" ສີຣິບໍ່ເຂົ້າໃຈຄຳສັບນັ້ນໃນພາສາຫວຽດນາມ."

"ມີຄົນສີດອາກາດເຂົ້າໄປໃນເສັ້ນເລືອດຂອງສອງຄົນນັ້ນຫັ້ນນະ."

"ພວກເຮົາຄືບໍ່ເຫັນຫຼັກຖານຫຍັງເລີຍຊັ້ນນະ."

"ນັ້ນແຫຼະປະເດັນ. ພາຍຫຼັງເຈັດສິບສອງຊົ່ວໂມງຜ່ານໄປ ຮ່ອງຮອຍສ່ວນໃຫຍ່ເຫຼົ່ານັ້ນຈະຫາຍໄປ ແຕ່ກໍມີໂອກາດເລັກໜ້ອຍທີ່ພໍຈະສັງເກດເຫັນບາງສິ່ງບາງຢ່າງທີ່ຜິດປົກກະຕິຈາກຟິມເອັກສ໌ເລ ແຕ່ທາງນີ້ບໍ່ມີເຄື່ອງເອັກສ໌ເລຈັກເຄື່ອງ ບວກກັບພວກເຮົາເອງກໍບໍ່ໄດ້ຄິດເຖິງເລື່ອງນີ້ແບບເອົາຈິງເອົາຈັງ ເຊິ່ງກໍຍາກທີ່ພວກເຮົາຈະພິສູດເລື່ອງນີ້ໄດ້. ຂ້ອຍອາດຈະພົບຮອຍເຂັມເທິງເລືອດຢູ່ຈຸດໃດຈຸດໜຶ່ງ ແຕ່ເສັ້ນເລືອດຂຸມນັ້ນຊ້ຳພັດເສຍຫາຍໝົດ.

"ທັງສາມສິບມີຮອຍຊ້ຳເປັນຈ້ຳໆ ໃຕ້ຮອຍໄໝ້ແບບດຽວກັນໝົດ ຂ້ອຍເຊື່ອວ່າມັນຕ້ອງແມ່ນຮອຍຫົວສີດປ້ຳອັນໃດອັນໜຶ່ງ ຫຼືເຂັມສີດຢາທີ່ມີຂະໜາດໃຫຍ່ພໍຄວນ. ຄົນພວກນັ້ນຕ້ອງກົດເລິກເຕີບເພື່ອຈະແທງເຂົ້າໄປຮອດກ້າມຊີ້ນ ແຕ່ເຖິງຢ່າງໃດ ມັນກໍຕ້ອງໄດ້ອາໄສຄວາມຊໍານິຊໍານານຫຼາຍເຕີບ. ຂ້ອຍຄິດວ່າເພື່ອປົກປິດຮອຍຂຸມນັ້ນໄວ້ໄດ້ ພວກນັ້ນຄົງໃຊ້ແຮງເຜົາໄໝ້ຈາກກະແສໄຟຟ້າໜັກສົມຄວນ."

"ຖ້າເປັນແນວນັ້ນແລ້ວເປັນຫຍັງເຈົ້າຈິ່ງເວົ້າວ່າມີແຕ່ສອງຄົນທີ່ຕາຍຍ້ອນຟອງອາກາດໃນເສັ້ນເລືອດ?"

"ຫຣັນຄົນຂັບລົດຫັ້ນຕາມທີ່ພວກເຮົາກວດພົບຮອບໆ ເສັ້ນເລືອດໃຫຍ່ແມ່ນຕາຍ

ຍ້ອນການຕົກເລືອດພາຍໃນ ບາງທີອາດເປັນຍ້ອນເຂົາຕຸ້ຍກວ່າສອງຄົນນັ້ນກໍເລີຍຫາເສັ້ນເລືອດຍາກເຕີບ ແຕ່ຂ້ອຍກໍຍັງບໍ່ທັນຮູ້ຊໍ້າວ່າ ແມ່ນຫຍັງທີ່ເຮັດໃຫ້ເຂົາຕົກເລືອດ."

"ຂ້ອຍພໍຈະຮູ້ຢູ່ ມາເບິ່ງແລ້ວ ເຂົາອາດຕົກລົງມາຈາກບ່ອນສູງ ຫຼືບາງທີອາດຕົກຈາກເຄື່ອງບິນ."

"ເຈົ້າຮູ້ຫຍັງບາງຢ່າງບໍ່?"

"ຕອນນີ້ກໍໄດ້ແຕ່ເດົາໄປກ່ອນ ແຕ່ຂ້ອຍມີເພື່ອນທີ່ກຳລັງກວດສອບລາຍງານການຂຶ້ນເຄື່ອງບິນອ້ອມຮອບບໍເວນອ່າງເກັບນໍ້າ ໂດຍບໍ່ໄດ້ຮັບອະນຸຍາດຫວ່າງສາມ ຫຼືສີ່ອາທິດກ່ອນ. ເອີຟັງກ່ອນ, ເຈົ້າຮູ້ບໍ່ວ່າພໍຈະຊອກຫາເມຍຂອງທຣັນໄດ້ຢູ່ໃສ? ທຣັນຜູ້ເປັນພັນເອກຫັ້ນນະ."

"ເມຍຂອງທຣັນຫວາ? ຫາບໍ່ຍາກດອກ."

"ລອງລົມກັບນາງເບິ່ງ ຖາມເລື່ອງຮອຍສັກຂອງຜົວນາງ."

"ມີຫຍັງເປັນພິເສດອີກບໍ່?"

"ພານາງໄປຊ່ວຍອະທິບາຍເລື່ອງຮອຍສັກ ເຈົ້າອາດເອົາຮູບຖ່າຍໃຫ້ນາງເບິ່ງກໍໄດ້ ຖາມນາງວ່າມີຫຍັງທີ່ປ່ຽນໄປຈາກເດີມ ຫຼືບໍ່ ທັງຖືກປ່ຽນແປງໃນທາງໃດທາງໜຶ່ງ. ຂ້ອຍຄິດວ່າເຂົາ ..."

ສາຍຖືກຕັດແບບບໍ່ມີການບອກລາ ບາງເທື່ອອາດບໍ່ແມ່ນເລື່ອງຜິດປົກກະ ຕິໃນສະໄໝນັ້ນ ແຕ່ຍ້ອນມີຄວາມຂ້ອງໃຈທີ່ສະສົມໄວ້ໃນບັນຍາກາດຕອນນີ້ ສີຣິຈິ່ງສະຫຼຸບໄປໃນທາງຂອງແຜນການຮ້າຍໄວ້ກ່ອນແລ້ວ. ເຂົາລໍຖ້າຈົນຮອດເຄິ່ງຊົ່ວໂມງ ແຕ່ປາກົດວ່າບໍ່ມີວີ່ແວວເລີຍທີ່ຫາງຽນທົ່ງຈະໂທກັບ.

ສີຣິຍ່າງຊ້າໆກັບຄືນຫ້ອງເກັບສົບ ທັງຊັ່ງນໍ້າໜັກຂໍ້ມູນໃໝ່ທີ່ໄດ້ຮັບພ້ອມປຽບທຽບກັບຂໍ້ສົມມຸດຕິຖານຂອງຕົນ. ເຂົາໄດ້ພົບກັບສາລະວັດໂພສີກຳລັງມາລໍຖ້າຢູ່ໃນຫ້ອງເຮັດວຽກ.

"ເບິ່ງຄືເປັນເມື່ອຍໆ ນີ້." ສາລະວັດບອກເຂົາ.

"ສະບາຍດີໂພສີ." ທັງສອງຈັບມືທັກທາຍກັນ. "ຂ້ອຍຢ້ານວ່າສອງສາມມື້ມານີ້ຂ້ອຍພໍ້ແຕ່ເລື່ອງຫຍຸ້ງໆ ກໍເລີຍບໍ່ມີຈິດມີໃຈເຮັດຫຍັງໄດ້ເລີຍ. ເຈົ້າຫາກໍກັບມາບໍ?"

"ບໍ່, ຂ້ອຍມາຮອດແຕ່ເຊົ້າມືດພຸ້ນ ກ່ອນຈະກັບເຮືອນ ພ້ອມນອນພັກຜ່ອນໜ້ອຍໜຶ່ງ."

"ໄປສໍາມະນາບໍ?"

"ພວກເຂົາມັກຈະຢໍ້າເຕືອນຂ້ອຍຕະຫຼອດວ່າ ຂ້ອຍໂຊກດີຊໍ່າໃດທີ່ໄດ້ຢູ່ໃນລະບອບສັງຄົມນິຍົມ ແຕ່ມັນກໍບໍ່ໄດ້ຂີ້ຮ້າຍປານໃດ. ທ່ານໄດ້ຮັບຈົດໝາຍຂ້ອຍແລ້ວບໍ?"

“ຈົດໝາຍຂອງເຈົ້າຫວາ? ໂອຟ້າເອີຍ ແມ່ນຣັບແລ້ວ. ເບິ່ງຄືວ່າແຕ່ດົນແລ້ວແຫຼະ. ພວກເຮົາມີເລື່ອງລົມກັນຫຼາຍແນວຢູ່ໃດນິ.”

“ດີແລ້ວຊັ້ນນະ.”

“ເຈົ້າຢາກດື່ມຫຍັງບໍ່?”

“ຢາກຕະຫຼອດຫັ້ນແຫຼະ.”

17

# ຫ້ອງທີ່ຫາຍໄປ

ໂພສີຊື້ເຫຼົ້າແສງທິບໝົດຂວດຈາກແມ່ຍິງເຈົ້າຂອງຮ້ານບາທີ່ດີໃຈຈົນໜ້າບານ ພ້ອມມອບຖັງນໍ້າກ້ອນວິເສດຂອງຕົນໃຫ້ເຂົາຈົນໝົດ ທັງສອງພາກັນນັ່ງຢູ່ໂຕະໜ່ວຍໜຶ່ງເຊິ່ງຕັ້ງຢູ່ຫ່າງຈາກໂຕະຄົນອື່ນໆ ພໍສົມຄວນ.

"ແມ່ນເຈົ້າຖືກເລກຖືກຫວຍມາບໍ່ນີ້?"

"ຈະໃຊ້ເງິນເດືອນຕໍາຫຼວດກ້ອນໃຫຍ່ໆ ແນວນີ້ໄດ້ຈັ່ງໃດຖ້າບໍ່ຍອມອອກຈາກບ້ານມາຈ່າຍຫຼິ້ນຈ່າຍກິນຄືຈັ່ງຊີ້ລະ?"

"ບໍ່ແມ່ນດອກ ເວົ້າບໍ່ເປັນຕາເຊື່ອຈັກດີ້ ແຕ່ລະພະແນກລ້ວນແຕ່ຕິດປະກາດເງິນເດືອນທຸກຄົນໄວ້ໃຜໆ ກະຮູ້ວ່າເຈົ້າມີລາຍໄດ້ຫຼາຍປານໃດແຕ່ລະເດືອນ."

"ຕາຍແຫຼະ! ເອົາລະຊັ້ນນະ ຖ້າເປັນແນວນີ້ຂ້ອຍກໍຂໍຍອມສາລະພາບດ້ວຍຄວາມຊື່ສາເນາະ ຂ້ອຍເຮັດທຸລະກິດຜິດລະບຽບເລັກໜ້ອຍຢູ່ພາກເໜືອ."

"ເວົ້າແບບນີ້ກໍພໍເປັນຕາເຊື່ອຢູ່ຊັ້ນ."

ແມ່ຍິງເຈົ້າຂອງບາປະສົມເຫຼົ້າປຸກພໍສົມຄວນໃຫ້ຊາຍທັງສອງ ແລະພວກເຂົາກໍບອກນາງວ່າ ພວກຕົນສາມາດຈັດການກັນເອງໄດ້ ແລ້ວນາງກໍປ່ອຍໃຫ້ທັງສອງລົມກັນເລື່ອງຄວາມລັບຕາມສະບາຍ. ຊາຍຫາປາຄົນໜຶ່ງສວມໃສ່ກຸບໄວ້ເທິງຫົວກໍາລັງຢັ່ງນໍ້າເລິກພຽງຫົວເຂົ່າ ຂະນະເລືອກເຟັ້ນຈຸດທີ່ອາດມີປາລອຍລ່ອງຢູ່ກ່ອນຈະຂວ່າງແຫອອກໄປກາງນໍ້າອີກຄັ້ງ. ທັງສອງແນມເບິ່ງຊາຍຄົນນັ້ນກຸມແກະເອົາປານ້ອຍອອກຈາກດາງແຫ ກ່ອນຈະປ່ອນພວກມັນລົງໃສ່ຖົງຢາງທີ່ຫ້ອຍຕ່ອງແຕ່ງຕິດກັບຄໍຂອງຕົນ.

"ຂ່າວໃຫຍ່ທີ່ທ່ານວ່າຈະເວົ້າສູ່ຟັງຫັ້ນແມ່ນຂ່າວຫຍັງກັນແທ້?"

ນັ້ນແມ່ນຄໍາເວົ້າປະໂຫຍກສຸດທ້າຍທີ່ໂພສີເປັ່ງອອກມາຈາກປາກຕະຫຼອດເຄິ່ງຊົ່ວໂມງຕໍ່ມາ. ເຂົາໄດ້ແຕ່ນັ່ງງຽບໆ ພ້ອມຍົກຈອກເຫຼົ້າຂຶ້ນມາຈິບໃສ່ປາກຂະນະຟັງເລື່ອງເລົ່າຂອງສີຣິ. ຂໍ້ທໍາອິດກໍແມ່ນເລື່ອງການພະຍາຍາມລອບຂ້າ ຕໍ່ມາກໍແມ່ນເລື່ອງການເປີດເຜີຍຄວາມຈິງທີ່ໄໝຖືກຄາຕະກໍາ. ພໍເລົ່າຈົບ, ສີຣິກໍໃຊ້ມືຈົກເຂົ້າໄປໃນກະເປົາຂອງ

ຕົນພ້ອມຈັບເອົາລາຍງານການຊັນນະສູດສົບ ທີ່ຕິດແນບກັບຄຳແນະນຳຍື່ນໃສ່ມື
ຕຳຫຼວດທີ່ນັ່ງຢູ່ທາງຂ້າງຕົນ.

ສິຣິນັ່ງເອ່ນຫຼັງອີງພະນັກຕັ່ງອີ້ອັນງ່ອນແງ່ນ ພ້ອມຈິບເຫຼົ້າປະສົມນ້ຳກ້ອນທີ່ເປື່ອຍລະລາຍມາດົນແລ້ວເປັນຄັ້ງທີສອງ ໂພສີກົ້ມໜ້າລົງເບິ່ງແຟ້ມເອກະສານແລ້ວເງີຍໜ້າຂຶ້ນເບິ່ງທ່ານໝໍພ້ອມຮອຍຍິ້ມປາກົດຢູ່ຮິມສົບ.

"ເລື່ອງທີ່ຂ້ອຍເຮັດໄປແລ້ວເດລະ?" ສິຣິຖາມຂຶ້ນ.

"ເປັນເລື່ອງແປກປະຫຼາດອີ່ຫຼີ."

"ຂອບໃຈ."

"ຂ້ອຍຊ່າງບໍ່ຮູ້ແທ້ໆ ແຫຼະວ່າທ່ານເປັນ ..."

"... ນັກສືບທີ່ສະຫຼາດສຸດໆ ແມ່ນບໍ?"

"ແມ່ນອນ. ຂ້ອຍຂໍຄາລະວະໃນຄວາມສາມາດຂອງທ່ານ." ເຂົາເວົ້າແລ້ວກໍທຳທ່າເປີດໝວກສະແດງຄວາມຄາລະວະ. "ເວົ້າແທ້ໃດ ຂ້ອຍປະທັບໃຈຫຼາຍ."

"ແຕ່ເບິ່ງທ່າທາງເຈົ້າແລ້ວ ຄືບໍ່ຍິນດີປານໃດນີ້ແຫຼະ."

"ແມ່ນຊັ້ນເບາະ? ບາງທີອາດກ່ຽວຂ້ອງກັບຄວາມຈິງທີ່ຂ້ອຍຫວັງຢາກໃຫ້ເລື່ອງນີ້ມັນຄວນຈົບລົງບໍ່ແມ່ນຫາກໍເລີ່ມຕົ້ນ ແລ້ວຊິປະເມີນຊ່ວງເວລາການຕາຍຂອງນາງໄດ້ບໍ່?"

"ບໍ່, ເປັນໄປບໍ່ໄດ້ຕິ. ຂ້ອຍບໍ່ໄດ້ພົບພໍ້ນາງຕັ້ງສາມວັນກ່ອນຈະຮູ້ຂ່າວວ່ານາງຕາຍ."

"ຊ່າງມັນເທາະເນາະ." ໂພສີຍົກເຫຼົ້າເຂົ້າປາກພ້ອມດື່ມໝົດກ້ຽງ ກ່ອນຈະເຫຍັ້ນໃສ່ຈອກຮອບໃໝ່. "ຕ້ອງໄດ້ຫຼິ້ນເກມຊອກຈັບຄົນຮ້າຍອີກຄັ້ງ, ທ່ານໝໍໄດ້ສົ່ງຕົ້ນສະບັບໃຫ້ຜູ້ພິພາກສາແຫງແລ້ວບໍ່?"

"ບໍ່ເລີຍ. ຂ້ອຍລໍຖ້າໃຫ້ເຈົ້າກັບມາກ່ອນເພື່ອຈະໄດ້ຟັງເບິ່ງກ່ອນວ່າຄວນຈະເຮັດແນວໃດດີ."

"ດີແລ້ວຊັ້ນ ບໍ່ຟ້າວລົງມືເຮັດຫຍັງເທື່ອ. ຂ້ອຍຈະໄປສອບຖາມພວກສາວໆ ທີ່ພັກຢູ່ຕຶກແຖວດຽວກັນກັບນາງເບິ່ງກ່ອນເພື່ອວ່າອາດຈະມີໃຜປາກົດຢູ່ແຖວນັ້ນແດ່."

"ເຈົ້າຄິດວ່າສະຫາຍຄຳຈ້າງຄົນອື່ນລົງມືກໍ່ເຫດແທນ ແລ້ວເຂົາກໍອອກຈາກວຽງຈັນເພື່ອສ້າງພາບເປັນຂໍ້ແກ້ຕົວ ຫຼືບໍ່?"

"ໜ້າຈະມີສ່ວນຢູ່ໃດ. ແຕ່ວ່າລອງປ່ອຍໃຫ້ເປັນໜ້າທີ່ຂອງຕຳຫຼວດແບບຂ້ອຍດີກວ່າບໍ? ຢ່າລືມວ່າພວກເຮົາຍັງບໍ່ມີຫຼັກຖານແມ່ນແຕ່ຊິ້ນດຽວພໍຊິມາຢັ້ງຢືນວ່າເຂົາມີສ່ວນກ່ຽວຂ້ອງກັບຄະດີຄາຕະກຳນີ້. ວິທີດຽວທີ່ຈະເຮັດໃຫ້ຄະດີສາວໄສ້ໄປຫາເຂົາໄດ້

ກໍຄື ຊອກຫາຄົນຂ້າໄໝໃຫ້ພົບກ່ອນ ແລ້ວບັງຄັບໃຫ້ຄົນຜູ້ນັ້ນເປີດເຜີຍຄວາມຈິງອອກມາ. ມີໃຜແດ່ແລ້ວທີ່ຮູ້ເລື່ອງນີ້?"

"ເທົ່າທີ່ຮູ້ກະມີແຕ່ພະນັກງານຂອງຂ້ອຍ ລວມທັງຂ້ອຍກັບເຈົ້າເທົ່ານັ້ນແຫຼະ."

"ທ່ານໝໍບໍ່ໄດ້ບອກໃຜເລີຍແມ່ນບໍ?"

"ບໍ່ເລີຍ. ໂອ້! ມີເອື້ອຍຂອງນາງທີ່ຮູ້ ຕອນນີ້ນາງກຳລັງນຳສືບໄໝກັບຊຳເໜືອ ແຕ່ນາງພັດດີໃຈຊ້ຳທີ່ຮູ້ວ່າໄໝບໍ່ໄດ້ຂ້າໂຕຕາຍ ນາງຈະບໍ່ເວົ້າເລື່ອງຫຍັງໃຫ້ໃຜຟັງດອກ."

"ຢ່າຟ້າວໝັ້ນອົກໝັ້ນໃຈເທື່ອໃດ ຖ້ານາງຫຼົງອອກປາກບອກຄົນໃດຄົນໜຶ່ງທາງນັ້ນຟັງ ແລ້ວມັນກໍຈະຢ້ອນເຂົ້າຫູຂອງຄຳກໍເປັນໄດ້ ຍາດພີ່ນ້ອງຂອງເຂົາສ່ວນຫຼາຍຍິ່ງມີແຕ່ຄົນຊຳເໜືອ. ເວົ້າຄວາມຊື່ເທາະພວກເຮົາໄວ້ໃຈໃຜບໍ່ໄດ້ທັງນັ້ນ ອີກຢ່າງໜຶ່ງພວກເຮົາກໍຖອຍຕົວກັບຄືນມາເລີ່ມຕົ້ນກັນຄືນໃໝ່. ສິ່ງທີ່ພວກເຮົາຈະເຮັດເປັນອັນດັບທຳອິດກໍແມ່ນ ເອົາລາຍງານການຊັນນະສູດສົບກັບຮູບຖ່າຍໄປເກັບມ້ຽນໄວ້ຢູ່ບ່ອນປອດໄພກ່ອນ. ຫຼັກຖານຊຸມນັ້ນຍັງຢູ່ຫ້ອງການຂອງທ່ານແມ່ນບໍ?"

"ບໍ່ ຢູ່ໃນຫ້ອງສະໝຸດຂອງໂຮງໝໍ."

"ຢູ່ບ່ອນໃດລະ?"

"ບໍ່ມີໃຜເຄີຍໄປບ່ອນຫັ້ນດອກ ນັບແຕ່ພວກເຂົາພາກັນເຜົາປຶ້ມພາສາຕ່າງປະເທດຖິ້ມໝົດ ໃນຫ້ອງສະໝຸດກໍເຫຼືອແຕ່ຂີ້ເຫຍື້ອ ມັນຫາກເປັນຄວາມຄິດຂອງຕຸ້ຍພຸ້ນດອກ."

"ຕອນນີ້ຫ້ອງສະໝຸດເປີດຢູ່ບໍ?"

"ບໍ່ ມັນຍັງປິດຢູ່ ຕຶກຫັ້ນເປີດຕອນແປດໂມງເຊົ້າມື້ອື່ນພຸ້ນແຫຼະ."

"ຄັນຊັ້ນຂ້ອຍຈະໄປຫັ້ນມື້ອື່ນ ເອົາລະບັດນີ້ມາເບິ່ງນຳກັນວ່າ ນັບຈາກນີ້ເປັນຕົ້ນໄປພວກເຮົາຈະຮັກສາຊີວິດຂອງທ່ານໄວ້ແນວໃດ?"

ສິຣິຈົກເອົາລູກປືນອອກມາຈາກກະເປົາຂອງຕົນ ກ່ອນຈະວາງມັນໄວ້ເທິງໜ້າໂຕະ ໂພສີຜິວປາກເຮັດສຽງຄືເປົ່າໝາກຫວິດ.

"ເຈົ້າມີຄວາມຮູ້ເລື່ອງລູກປືນບໍ?" ສິຣິຖາມ.

"ຮູ້ຢູ່ວ່າມັນອອກມາຈາກປືນໄຣເຟິນ ແຕ່ຂ້ອຍບໍ່ແມ່ນຜູ້ຊ່ຽວຊານດ້ານນີ້ດອກ. ມີຄົນຮູ້ຈັກໃນຫ້ອງການແລ້ວຂ້ອຍຈະເອົາໄປໃຫ້ລາວກວດສອບເບິ່ງ. ແລ້ວອີກລູກຢູ່ໃສລະ?"

"ແມ່ນຫຍັງອີກລູກ?"

"ແນວທ່ານບອກວ່າຖືກຍິງສອງນັດບໍ່ແມ່ນຫວາ?"

"ໂອ ອີກລູກຖືກສົ່ງໄປໜ່ວຍງານຮັກສາຄວາມໝັ້ນຄົງແລ້ວ ຂ້ອຍໝາຍເຖິງທາງກອງທັບອາດຈະມີຜູ້ຊ່ຽວຊານເລື່ອງລູກປືນ."

“ວາງແຜນໄດ້ດີເລີດ. ຄັນຊັ້ນຂ້ອຍເອົາລູກປືນລູກນີ້ໄປກ່ອນກະໄດ້ ແລ້ວຖ້າເບິ່ງວ່າຂ້ອຍຈະກວດພົບຫຍັງອີກ.”

**********

ທັງສອງໃຊ້ເວລານັ່ງດື່ມນຳກັນປະມານສອງສາມຊົ່ວໂມງ ພ້ອມໂອ້ລົມກັນກ່ຽວກັບເລື່ອງຕ່າງໆ ຫຼາຍຢ່າງນອກເໜືອຈາກເລື່ອງການເມືອງ ແລະການກໍ່ອາຊະຍາກຳ. ໂພສີຢືນຢັນຈະຂັບລົດຈັກຄູ່ໃຈໄປສົ່ງສີຣິຈົນຮອດເຮືອນ ເມື່ອທັງສອງຫັກເຂົ້າລົດຈັກແລ້ວເຈີດໄປຈົນຮອດໜ້າບ້ານ ນາຍຕຳຫຼວດໜຸ່ມຍັງຄົງເປີດຕາໄຟລົດຄ້າງໄວ້ ເຮັດໃຫ້ທາງທີ່ຢູ່ຂ້າງໜ້າແຈ້ງສະຫວ່າງຈົນປາກົດໃຫ້ເຫັນຫຼຸມດຳຢູ່ຕາມໜ້າດິນ ຕາແມວຫຼາຍຄູ່ສະທ້ອນມິບມັບຢູ່ຕາມກ້ອງພຸ່ມໄມ້ ແຕ່ທັງສອງເບິ່ງບໍ່ເຫັນມີສັງຫານ.

“ໃຫ້ຂ້ອຍເຂົ້າໄປຂ້າງໃນເພື່ອກວດສອບເບິ່ງອາດມີມືສັງຫານດັກຈອບຢູ່ ຫຼືບໍ່?”

“ບໍ່ເປັນຫຍັງດອກ. ຄິດວ່າຂ້ອຍໄດ້ບອກເລື່ອງນີ້ໃຫ້ຫຼາຍຄົນຮູ້ແລ້ວ ເຖິງຈະມີຄົນມາຂ້າປິດປາກຂ້ອຍ ກະບໍ່ມີປະໂຫຍດຫຍັງດອກ ຖ້າພວກເຂົາເຮັດແທ້ກະຕ້ອງໄດ້ກວດລ້າງຮອດໜ່ວຍງານຮັກສາຄວາມໝັ້ນຄົງພຸ້ນແຫຼະ. ຂ້ອຍຄິດວ່າຄົງໝົດໂອກາດທີ່ຈະໄດ້ເປັນຂ່າວໜ້າໜຶ່ງໃນໜັງສືພິມແລ້ວລະ ເວັ້ນແຕ່ວ່າ ...” ສີຣິຜ່ອນສຽງໃຫ້ຄ່ອຍລົງ “... ເວັ້ນແຕ່ວ່າຖ້າມີຜູ້ຊາຍໜ້າໃດຍອມໂງ່ພໍທີ່ຈະໄປລີ້ຊ້ອນຢູ່ຫ້ອງໂຖງທາງຍ່າງຂອງພວກເຮົາ ຂ້ອຍຄິດວ່າທ້າວນັ້ນບໍ່ມີທາງທີ່ຈະລອດພົ້ນສາຍຕາຂອງນາງເປັນແນ່ແທ້.”

ຜ້າກັ້ງຢູ່ຊັ້ນລຸ່ມໄຫວຕິງຍຸດ! ຍຸດ.

“ເອົາລະ ຂ້ອຍຈະມາພົບທ່ານອີກໃນຕອນເຊົ້າ.” ທັງສອງຈັບມືອຳລາກັນ.

“ຂອບໃຈ. ລາຕີສະຫວັດ.”

**********

ລົດຈັກເປັ່ງສຽງຄາງຮື່ມໆ ຫ່າງອອກໄປ ປ່ອຍໃຫ້ສີຣິຢືນຢູ່ທາງຮ່ອມມືດໆ ພຽງຄົນດຽວ ເຖິງແມ່ນຄຳເວົ້າຂອງເຂົາຈະເບິ່ງຄືວ່າອົງອາດກ້າຫານເກີນຕົວ ແຕ່ເລິກໆ ລົງໄປແລ້ວມັນຍັງແຝງຊ້ອນຄວາມສັ່ນສະທ້ານຈົນຂົນໝາວລຸກ. ຮອບໆ ຕົວເຂົາມີໂຄມໄຟສາດແສງສີເຫຼືອງສອງສາມດວງ ລວມທັງແສງທຽນສອງສາມເຫຼັ້ມທີ່ສົ່ງແສງພໍສະຫຼົວຢູ່ຕາມໜ້າປະຕູປ່ອງຢ້ຽມຂອງພວກເພື່ອນບ້ານ ສຽງແມງໄມ້ໃນຍາມຄ່ຳຄືນປາກົດວ່າມິດຊ້ອຍມ້ອຍ ຜູ້ຄົນຕ່າງກໍພາກັນສົງໄສວ່າແມງໄມ້ຊຸມນັ້ນພາ ກັນອົບພະຍົບຂ້າມແມ່ນ້ຳໄປໝົດ ຫຼືແນວໃດ ສຽງຫັນໃຈຫອບຂອງຊາລູບເຮັດໃຫ້ສີຣິຮູ້ສຶກອຸ່ນໃຈຂຶ້ນມາຢ່າງແປກໆ ແບບບອກບໍ່ຖືກ ໝາໂຕນັ້ນແລ່ນວູ່ມາຕາມຮ່ອມທາງເຂົ້າຫາສີຣິ ມັນຢຸດ

ຢືນຫ່າງຈາກເຂົາຫຼາຍແມັດພ້ອມງວາກໜ້າຫຼຽວຄືນໄປທາງຫຼັງ.

ສິຣິຄູ້ເຂົ່າລົງເພື່ອທັກທາຍຊາລູບ ແຕ່ປາກົດວ່າມັນບໍ່ຍອມເຂົ້າໃກ້ເຂົາເລີຍ ພໍເມື່ອໝາໂຕນັ້ນແລ່ນໄປຫາທ່ານໝໍອີກຄັ້ງໜຶ່ງ ແຕ່ແລ້ວມັນກໍຫັນຫຼັງກັບຄືນໄປອີກ ການກະທຳຂອງຊາລູບ ເຮັດໃຫ້ສິຣິຄິດເຖິງພາບລະຄອນຂາວ-ດຳເລື່ອງໜຶ່ງທີ່ເຂົາກັບບົວເຄີຍເບິ່ງນຳກັນທີ່ປາຣີ ເປັນເລື່ອງຂອງໝາພັນຄອລລີ ຫຼືພັນຫຍັງຈັກຢ່າງທີ່ຈັດໃນປະເພດທີ່ໃຊ້ໃນການຊ່ວຍເຫຼືອເດັກນ້ອຍອອກຈາກບ້ານທີ່ກຳລັງຖືກໄຟໄໝ້ ແລະຈັບຄົນຮ້າຍ. ສິຣິເຄີຍເຫັນກິລິຍາແບບນີ້ມາກ່ອນ ເຖິງແມ່ນວ່າມັນຈະເປັນໝາທີ່ງາມກວ່າທັງມີຮູບຮ່າງດູດີກວ່າ ເຂົາຮູ້ວ່າຊາລູບຢາກໃຫ້ເຂົາຕິດຕາມມັນໄປ.

"ເມື່ອຍນະ ບໍ່ມີອາລົມຫຼິ້ນນຳດອກຕອນນີ້."

ແຕ່ໝາໂຕນັ້ນກໍຍັງຄົງແລ່ນວົນໄປວົນມາອ້ອມຮອບເພື່ອໄລ່ໃຫ້ເຂົາຕິດຕາມມັນເມື່ອມັນເລີ່ມເຫົ່າຂຶ້ນ ສິຣິຈິ່ງຍ່າງຕາມຫຼັງມັນໄປ ໃນຊ່ວງປີທີ່ຜ່ານມາເຂົາເປັນຕົວການທຳລາຍຄ່ຳຄືນອັນງຽບສະຫງົບໃຫ້ແກ່ເພື່ອນບ້ານມາຫຼາຍຕໍ່ຫຼາຍຄັ້ງແລ້ວ. "ເອົາລະແຕ່ນີ້ຄົງຈະເປັນເລື່ອງດີຢູ່ເນາະ."

ຊາລູບຟ້າວມາຢຸດຢູ່ຂ້າງສົ້ນເກີບຂອງເຂົາທັນທີ ພ້ອມຍ່າງຄຽງຂ້າງສິຣິດ້ວຍຄວາມພາກພູມໃຈ ທັງຄູ່ພາກັນຍ່າງຂ້າມທາງແຍກແລ້ວມຸ່ງໜ້າລົງໄປທາງແມ່ນ້ຳ.

"ເປັນຈັ່ງໃດລູກໝາເອີຍ ບອກແດ່ແມວ່ານີ້ໝາຍຄວາມວ່າບໍ່ມີວິນຍານຫຍັງມາສິງສູ່ໃນຮ່າງກາຍເຮົາແລ້ວຊັ້ນບໍ ຫຼືໂຕພຽງແຕ່ຢາກເອົາຊະນະໃນຄວາມຂີ້ຢ້ານເລື່ອງຜີສາງຊື່ໆ? ຫຼືມີຫຍັງທີ່ເຮົາຄວນຕ້ອງຮູ້ອີກຊັ້ນບໍ?" ໝາຊາລູບບໍ່ໄດ້ຕອບໂຕ້ສິຣິແມ່ນແຕ່ຄຳດຽວ.

ເມື່ອທັງສອງຍ່າງມາຮອດແຄມແມ່ນ້ຳ ແທນທີ່ຈະລ້ຽວຊ້າຍ ຫຼືຂວາ ແຕ່ຊາລູບກໍເລືອກທີ່ຈະຍ່າງຂ້າມທາງແລ້ວມານັ່ງຢູ່ແຄມຝັ່ງແມ່ນ້ຳ ສິຣິຢຸດຢືນທີ່ຝັ່ງກົງກັນຂ້າມເບື້ອງຖະໜົນ ແລ້ວຊາລູບກໍຫັນກັບມາແນມເບິ່ງເຂົາ.

"ບໍ່ຢາກເຊື່ອ ເລື່ອງນີ້ເອງຫວາທີ່ມາວົນວາຍກັນບໍ່ເລີກບໍ່ແລ້ວຫັ້ນນະ? ທີ່ແທ້ກະແມ່ນຢາກໃຫ້ມາເບິ່ງແມ່ນ້ຳນຳກັນຊື່ໆ ແມ່ນບໍ່?" ຊາລູບແລບລີ້ນທັນໃຈຖີ່ ສ່ວນສິຣິໄດ້ແຕ່ແກວ່ງຫົວ. ເຂົາຫົວຣື! ຣື ໃນຂະນະຍ່າງຂ້າມຖະໜົນອັນເປົ່າປ່ຽວ ພ້ອມເລືອກບ່ອນນັ່ງທີ່ຮາບພຽງໃກ້ໆ ກັບເພື່ອນໃໝ່ຂອງຕົນ. "ເອົາລະ! ຢ່າງໜ້ອຍ ໂຕກະຍັງມີສະຕິດີກວ່າຄົນທີ່ເຮົາມານັ່ງນຳເປັນປົກກະຕິຢູ່ແຄມແມ່ນ້ຳ."

ທ່ານໝໍກັບໝານັ່ງຮຽງຂ້າງກັນພ້ອມທອດສາຍຕາແນມເບິ່ງດອກໄຟທີ່ກຳລັງສົ່ງແສງລະຍິບລະຍັບທາງຝັ່ງແມ່ນ້ຳເບື້ອງປະເທດໄທ ... ແນມເບິ່ງຝູງເຈຍຕົວນ້ອຍໆ ທີ່ກຳລັງບິນກ້ຽວໄປວຽນມາຢູ່ເທິງທ້ອງຟ້າສີຄາມ ບັນຍາກາດບໍ່ແມ່ນວ່າຈະໂຣແມນຕິກ

ຫວານແຫວວ ແຕ່ມັນກໍໜ້າຊື່ນຊົມຍິນດີບໍ່ໜ້ອຍ ມັນເປັນຄວາມສະ ຫງົບສຸກອັນແທ້ຈິງຄັ້ງສຸດທ້າຍທີ່ສີຣີສຳຜັດໄດ້ຊົ່ວຂະນະ.

ສຽງຕູ້ມ! ຈາກລະເບີດດັງສະທ້ານທ່າມກາງຄວາມມິດງຽບ ແຮງສັ່ນສະເທືອນຂອງພື້ນດິນທີ່ຢູ່ກ້ອງຕີນຂອງສີຣີໄຫວຕິງຍຸດໆ ເຂົາຟ້າວຜູດລຸກຂຶ້ນແລ້ວແນມກັບໄປຕາມທາງທີ່ມາ, ກຸ່ມຄວັນສີຂີ້ເຖົ່າເຂັ້ມທີ່ແນມເກືອບຈະບໍ່ເຫັນໄດ້ລອຍພຸ່ງຂຶ້ນໄປເທິງທ້ອງຟ້າໃນຍາມຄ່ຳຄືນທີ່ຕັ້ງຢູ່ຫ່າງອອກໄປເຖິງເຄິ່ງຊ່ວງຂອງຖະໜົນ ເຂົາບໍ່ສົງໄສເລີຍວ່າເຫດການເກີດຂຶ້ນຢູ່ໃສ ເຂົາຮູ້ແລ້ວ.

ສີຣີສາວບາດຕີນໄປຕາມເສັ້ນທາງນ້ອຍໆ ທີ່ທອດຍາວໄປຕາມສາຍນ້ຳດ້ວຍຄວາມຟ້າວຟັ່ງ ກ່ອນຂ້າມຜ່ານທາງສີ່ແຍກນັ້ນ. ບໍລິເວນດັ່ງກ່າວເຕັມແຕ່ເຈົ້າຂອງເຮືອນທີ່ຍັງສວມໃສ່ຊຸດນອນແຕ່ຈຳຕ້ອງຕື່ນຂຶ້ນມາຍ້ອນສຽງລະເບີດ ເບິ່ງຄືວ່າພວກເຂົາຍັງຄົງສັບສົນງຸນງົງຄ້າຍກັບບໍ່ໝັ້ນໃຈວ່າສຽງລະເບີດນັ້ນແມ່ນຄວາມຝັນຫຼືຄວາມຈິງ.

ສີຣີແລ່ນກັບເຂົ້າໄປຕາມຮ່ອມທາງເຂົ້າບ້ານຂອງຕົນເລື້ອຍໆ ຈົນມາເຖິງເຮືອນບໍ່ໜ້າເປັນໄປໄດ້ເລີຍ ເຮືອນຫຼັງນັ້ນຍັງຕັ້ງສະຫງ່າທ່າມກາງຄວາມມືດເປັນພຸມພູ່ທັງມິດງຽບ ໂດຍບໍ່ຖືກລົບກວນຈາກໄພພິບັດອັນໃດ ແຕ່ເຂົາກໍຮູ້ວ່າມັນເປັນພຽງພາບລວງຕາເທົ່ານັ້ນ, ເຂົາຮູ້ວ່າມີເລື່ອງຮ້າຍແຮງເກີດຂຶ້ນຢູ່ເບື້ອງຫຼັງກຳແພງດ້ານໜ້າຂອງບ້ານ. ເຂົາແລ່ນໄປຍູ້ບານປະຕູອັນໜັກຕຶ້ງໃຫ້ເປີດອອກ ປາກົດວ່າມັນຍອມເປີດອອກງ່າຍກວ່າທີ່ເຄີຍເປັນ ເພາະບ້ານທັງຫຼັງຂະຫຍັບຕົວຄອນແຄນ ຕອນນີ້ປະຕູໄດ້ນອນລົງມາຂະໜານກັນກັບຂອບປະຕູແລ້ວ. ຄວາມເສຍຫາຍທີ່ເກີດຂຶ້ນຢູ່ດ້ານຫຼັງຂອງຕົວບ້ານພັງທະລາຍຢ່າງບໍ່ໜ້າເຊື່ອ ແມ່ນແຕ່ຮູບພາບ ແລະເຄື່ອງປະ ດັບທຸກຊິ້ນກໍຊຸຫຼົ່ນລົງມາຕົກກັບພື້ນຍ້ອນແຮງສັ່ນຄອນຈາກຝາຫ້ອງ ແຕ່ມີສອງຫ້ອງດ້ານໜ້າທັງຊັ້ນເທິງ ກັບຊັ້ນລຸ່ມກໍພຽງແຕ່ໄດ້ຮັບແຮງສັ່ນສະເທືອນຈາກລະເບີດເທົ່ານັ້ນ ແຕ່ພໍເມື່ອເງີຍໜ້າຂຶ້ນຜ່ານທາງຂັ້ນໄດ ເຂົາຊ້ຳພັດແນມເຫັນທ້ອງຟ້າໄດ້ຢ່າງຊັດເຈນ ເນື່ອງຈາກຫ້ອງຂອງເຂົາ ລວມທັງຫຼັງຄາເບື້ອງເທິງຫາຍໜົດໝົດແລ້ວ ສ່ວນຫ້ອງທີ່ຢູ່ຊັ້ນລຸ່ມຊື່ກັບຫ້ອງຂອງເຂົາກໍເບິ່ງຄືວ່າຜິດຮູບຜິດຮອຍໄປ. ນາງວົງຢືນຢູ່ໜ້າຫ້ອງດັ່ງກ່າວ ທັງພະຍາຍາມຜັກດັນປະຕູໃຫ້ເປີດອອກ ພ້ອມທັງຮ້ອງຮຽກຫາພວກເດັກນ້ອຍກັບນາງສົມ, ຜົວຂອງນາງສົມບໍ່ຢູ່ເພາະເຂົາອອກໄປຝຶກອົບຮົມຢູ່ເອີຣົບ ຈິ່ງມີແຕ່ນາງກັບລູກສາວສາມຄົນຢູ່ໃນຫ້ອງນັ້ນພຽງລຳພັງ.

ສີຣີຟ້າວເຂົ້າໄປຊ່ວຍນາງວົງເປີດປະຕູ ຄູ່ຜົວເມຍທີ່ຫາກໍເຂົ້າໃໝ່ປາມັນ ເຊິ່ງພັກອາໄສຢູ່ຫ້ອງທາງໜ້າຊັ້ນເທິງໄດ້ແຕ່ພາກັນຢືນແນມເບິ່ງໂດຍບໍ່ສາມາດຊ່ວຍຫຍັງໄດ້ເລີຍ ເນື່ອງຈາກຂະນະນີ້ພວກເຂົາບໍ່ສາມາດປີນລົງທາງໃດໄດ້ ເພາະຂັ້ນໄດເຄິ່ງໜຶ່ງ

ລວມທັງລະບຽງຖືກແຮງລະເບີດພັດກະເດັນໄປຈົນໄຮ້ຮ່ອງຮອຍ ແລະແລ້ວປະຕູກໍ ແຫວກອອກເປັນຊ່ອງພໍຈະບຽດຕົວເຂົ້າໄປໄດ້ ແຕ່ພາຍໃນຫ້ອງຊ້ຳພັດມືດມິດບໍ່ຕ່າງ ຫຍັງກັບຫຼຸມຝັງສົບ ພວກເຂົາໄດ້ຍິນພຽງແຕ່ສຽງໄອຍ້ອນສະມັກຄວັນ ກັບສຽງຄວນ ຄາງຂອງເດັກຜູ້ນ້ອຍສຸດ ນາງວິງຟ້າວແລ່ນກັບໄປທີ່ຫ້ອງພັກຂອງຕົນທັນທີ ເມື່ອສີຣິ ບອກໃຫ້ນາງໄປຊອກໄຟສາຍມາເຍືອງເບິ່ງ.

ສີຣິປ່ອນຫົວເຂົ້າໄປໃນຫ້ອງ ແລະເປັ່ງສຽງຮ້ອງອອກມາ:

"ນາງສົມເປັນແນວໃດ? ມະໂນລີຢູ່ໃສ? ຍັງພາກັນຢູ່ນີ້ບໍ? ໄດ້ຍິນ

ຂ້ອຍບໍ?"

ສຽງມະໂນລີຮ້ອງຕອບກັບມາ. "ແມ່ຍັງນອນຢູ່ ປຸກລາວແນວໃດກະບໍ່ຕື່ນ."

"ພວກນ້ອງສາວຂອງຫຼານເດເປັນແນວໃດ?"

"ພວກເຂົາຢ້ານ."

"ບໍ່ເປັນຫຍັງດອກ ບໍ່ມີຫຍັງໃຫ້ຢ້ານແລ້ວແຫຼະ ບໍ່ມີສຽງລະເບີດດັງໆ ເປັນ ຕາຢ້ານ ອີກແລ້ວເດີ. ລຸງຈະບອກເດີວ່າພວກຫຼານຕ້ອງເຮັດຫຍັງແດ່ ລຸງຢາກໃຫ້ພວກຫຼານທັງ ສາມຄ່ອຍຍ່າງຕາມສຽງລຸງມາ ທັງຄ່ອຍໆ ພາກັນຍ່າງອອກມາທາງພີ້ ພ້ອມຈັບມືກັນ ໄວ້ແໜ້ນໆ ມະໂນລີ, ຫຼານຕ້ອງເປັນຜູ້ພາທາງເດີ."

"ແລ້ວແມ່ຫຼານເດ?"

"ບັດພວກຫຼານອອກມາຮອດນອກແລ້ວລຸງຊິເຂົ້າໄປປຸກລາວເອງດອກ." ສີຣິຮ້ອງ ເພງຂຶ້ນເພື່ອປອບໃຈພວກເດັກນ້ອຍ ແລະບອກໃຫ້ພວກເຂົາຮູ້ຈຸດໝາຍປາຍ ທາງວ່າ ຢູ່ບ່ອນໃດ ເດັກທັງສາມຕ່າງກໍພາກັນໄອຂຶ້ນເມື່ອມາເຖິງປະຕູ ແຕ່ລະຄົນຖືໝອນປິດ ໜ້າມາຄົນລະອັນ ບັນຍາກາດພາຍໃນຫ້ອງມົວກຸ້ມດ້ວຍຝຸ່ນລະອອງ.

"ພວກຫຼານເກັ່ງຫຼາຍ."

ເມື່ອພວກເດັກນ້ອຍໂຜ່ໜ້າອອກມາກໍພໍດີນາງວິງມາຮອດພ້ອມກັບຖືໄຟສາຍໄວ້ ໃນມື.

"ໂອເທວະບຸດເທວະດາຂ້ອຍເອີຍ ຂອບໃຈຟ້າຂອບໃຈແຖນທີ່ທຸກຄົນບໍ່ເປັນຫຍັງ." ນາງສາດໄຟສາຍໄປທີ່ຫ້ອງແຕ່ສີຣິຢືນຂວາງທາງໄວ້.

"ປິດໄຟສາຍກ່ອນຕອນນີ້." ນາງເຮັດຕາມທີ່ເຂົາບອກ. "ພາເດັກນ້ອຍອອກໄປ ນອກທາງກ່ອນ ຄິດວ່າຄົງຈະພາກັນສູບຂີ້ຝຸ່ນເຂົ້າປອດຫຼາຍເຕີບແຫຼະ ຫານ້ຳສະອາດ ໃຫ້ພວກເຂົາດື່ມຫຼາຍໆ ເດີ ແລ້ວຈິ່ງພາໄປໂຮງໝໍດ່ວນທີ່ສຸດເທົ່າທີ່ຈະເຮັດໄດ້."

ຂະນະນີ້ໄດ້ມີຄົນກຸ່ມນ້ອຍໆ ພາກັນມາຢືນຫຸ້ມເບິ່ງທີ່ໜ້າປະຕູບ້ານ ພວກເຂົາເຂົ້າ ໄປຊ່ວຍພະຍຸງເດັກນ້ອຍ ທັງສອບຖາມເຖິງສິ່ງທີ່ພວກຕົນພໍຈະຊ່ວຍຫຍັງໄດ້ແດ່. ສີຣິ

ບອກກັບພວກເຂົາວ່າ ອາຄານຫຼັງນີ້ບໍ່ປອດໄພປານໃດ ແລະສັ່ງໃຫ້ທຸກຄົນຖອຍອອກໄປຫ່າງໆ ກ່ອນ ຖ້າໃຜມີຂັ້ນໄດກໍໃຫ້ເອົາມາພາດໃສ່ດ້ານໜ້າຂອງບ້ານ ເຊິ່ງພໍຈະໃຫ້ຜົວເມຍຄູ່ນັ້ນປີນລົງມາຜ່ານທາງປະຕູປ່ອງຢ້ຽມໄດ້ ສ່ວນທີ່ເຫຼືອຄວນຢູ່ຫ່າງໆ ຈາກອາຄານໄວ້ກ່ອນຈະເປັນການດີ.

ເມື່ອສີຣິມີໂອກາດໄດ້ຢູ່ຄົນດຽວ ເຂົາກໍເປີດໄຟສາຍອີກຄັ້ງ ເຂົາບໍ່ຢາກສ່ອງໄຟສາຍເຂົ້າໄປພາຍໃນຫ້ອງຕອນທີ່ພວກເດັກນ້ອຍຍັງຢູ່ທີ່ນັ້ນ ເພາະຢ້ານເດັກຈະເຫັນກ່ອນຈະກ້າວຂາເຂົ້າໄປທາງໃນ, ສີຣິໄດ້ປົດກະດຸມເສື້ອເຊີດອອກ ພ້ອມດຶງເສື້ອກ້າມຂຶ້ນມາປິດປາກປິດດັງໄວ້.

ພາຍໃນຫ້ອງຖືກທຳລາຍຈົນມຸ່ນອຸ້ຍປຸ້ຍ ດິນຈີ່ກ້ອນໃຫຍ່ໆ ຊຸຫຼັ່ງທັ່ງເຫລົ່ງມາກອງເຕັມພື້ນ ເຖິງແມ່ນວ່າເພດານສ່ວນໃຫຍ່ຍັງເກາະຕິດຢູ່ທີ່ເດີມແຕ່ມັນກໍຫ້ອຍ ອ່ຽງໄປຢູ່ອີກແຈໜຶ່ງຂອງຫ້ອງ ແລະອາດທະຫຼົ່ມລົງມາໄດ້ທຸກເວລາ, ຂີ້ຝຸ່ນໄງ່ກຸ້ມທຶບຈົນເຮັດໃຫ້ແນມບໍ່ເຫັນຫຍັງ.

ຢູ່ຈຸດຂອງກຳແພງດ້ານຫຼັງທີ່ເຄີຍຕັ້ງສະຫງ່າ, ເພດານໄດ້ໂຢດຫ້ອຍລົງມາຫ່າງຈາກພື້ນບໍ່ເກີນໜຶ່ງແມັດ ສີຣິຈຳເປັນຕ້ອງໄດ້ຄານເຂົ້າໄປໃນບໍລິເວນທີ່ຄົນໃນຄອບຄົວນີ້ໃຊ້ເປັນບ່ອນນອນ ແສງໄຟສາຍສາດຕ້ອງກັບລະອອງຝຸ່ນດັ່ງດຽວກັບແສງໄຟໜ້າລົດທ່າມກາງທະເລໝອກ ເຂົາຮູ້ສຶກວ່າປອດຂອງຕົນເອງໜັກຕຶ້ງຂຶ້ນທຸກຂະນະ.

"ທ່ານໝໍສີຣິແມ່ນບໍ?"

ຫົວໃຈຂອງສີຣິເຕັ້ນພຸ່ງຂຶ້ນທັນທີ ເຂົາສາດແສງໄຟສາຍສ່ອງໄປຕາມທີ່ມາຂອງສຽງເຊິ່ງຢູ່ກ້ຳເບື້ອງຊ້າຍ. "ນາງສົມແມ່ນບໍ?" ເຂົາຄານຂ້າມຊາກສະຫຼັກຫັກພັງໄປຈົນແນມເຫັນຮ່າງຄີງຂອງແມ່ພວກເດັກນ້ອຍເຊິ່ງກຳລັງນັ່ງຄູ້ເຂົ່າຫັນໜ້າໄປທາງຕຽງທີ່ພວກເດັກນ້ອຍນອນ ໂດຍຕັ້ງຢູ່ກ້ອງປະຕູປ່ອງຢ້ຽມທີ່ເປີດແງ້ມຢູ່. ເຖິງແມ່ນພາຍໃນຫ້ອງຈະເຕັມໄປດ້ວຍຝຸ່ນໄງ່ກຸ້ມ ແຕ່ນາງກໍເບິ່ງຄືວ່າສະອາດສະອ້ານດູດີ, ນາງນຸ່ງຜ້າສິ້ນຜືນງາມສຸດທີ່ນາງມີ ທັງເກົ້າຜົມເປັນລະບຽບຮຽບຮ້ອຍເຜີຍໃຫ້ເຫັນໃບໜ້າໄດ້ເດັ່ນຊັດ ນາງຫັນໜ້າມາທາງສີຣິແລ້ວຍິ້ມໃສ່ເຂົາ ສ່ວນເຂົາກໍຍິ້ມຕອບແບບໂລ່ງອົກໂລ່ງໃຈ.

"ເຈົ້າຈັ່ງແມ່ນໂຊກດີທີ່ບໍ່ເປັນຫຍັງ. ມາບັດນີ ພວກເຮົາຕ້ອງອອກຈາກບ່ອນນີ້ກ່ອນເພດານຊິໂຢດທັບຫົວ." ນາງບໍ່ເໜັງບໍ່ຕີງ.

"ທ່ານໝໍສີຣິ ຂ້ອຍເປັນຫ່ວງລູກສາວທັງສາມ."

"ບໍ່ຕ້ອງຫ່ວງດອກ ພວກເຂົາປອດໄພແລ້ວ ໄປກັນເທາະໄວໆ." ເຂົາຍື່ນມືມາຫານາງ.

"ຂ້ອຍຢ້ານວ່າຊິບໍ່ມີໃຜເບິ່ງແຍງພວກເຂົາ."

ມືຂອງສີຣິຕົກລົງຂ້າງຕົວຄືເມື່ອຍອ່ອນ ເຂົາຮູ້ທັນທີວ່ານາງໝາຍເຖິງຫຍັງ ເຂົາເຂົ້າໃຈດີ ແລະປາກົດວ່າທ້ອງໄສ້ຂອງເຂົາປັ່ນປວນຂຶ້ນມາທັນທີ.

"ໂອບໍ່ເລີຍ ນາງ ..."

"ຂ້ອຍຮ້າຍພວກເຂົາຕະຫຼອດ ຫຼາຍຄັ້ງທີ່ຂ້ອຍຂຶ້ນສຽງໃສ່ພວກເຂົາແບບແຮງໆ. ບາງທີພວກເຂົາອາດຈະບໍ່ເຂົ້າໃຈວ່ານັ້ນແມ່ນວິທີສະແດງຄວາມຮູ້ສຶກຂອງຜູ້ເປັນແມ່ ຊ່ວຍບອກພວກເຂົາໄດ້ບໍວ່າຂ້ອຍຮັກພວກເຂົາທຸກຄົນ?"

ສີຣິກົ້ມຫົວໃຫ້ຕ່ຳລົງ. "ຂ້ອຍເສຍໃຈອີ່ຫຼີ."

ຄົນຈຳນວນຫຼາຍທີ່ມາລວມຕົວກັນຢູ່ໜ້າບ້ານຕ່າງກໍອ້າປາກຄ້າງ ທັງຈົ່ມພຶມພຳເມື່ອສີຣິປາກົດຕົວຢູ່ໜ້າປະຕູ ເຂົາອູ້ມເອົາຮ່າງຄົງອັນແຫຼວແຫຼກຂອງນາງສົມອອກມາຈົນຮອດຫ້ອງຂອງນາງວົງກ່ອນຈະວາງລົງຢູ່ບ່ອນນັ້ນ ສີຣິບໍ່ຢາກໃຫ້ລູກຂອງນາງເຫັນຫຼືຫວັງວ່ານາງອາດຍັງມີຊີວິດຢູ່. ເຂົາຮ້ອງສັ່ງເພື່ອນບ້ານສອງສາມຄົນ ຈາກນັ້ນກໍຕິດຕາມເບິ່ງຈົນແນ່ໃຈວ່າສອງຜົວເມຍທີ່ຢູ່ຊັ້ນເທິງພາກັນລົງມາຂ້າງລຸ່ມແລ້ວຮຽບຮ້ອຍ ຈາກນັ້ນເຂົາກໍລົ້ມຕົວປວກປຽກແບບບໍ່ເປັນທ່າລົງໃສ່ກາງໝານຜັກ.

# 18

# ໂຮງໝໍບໍ່ມີແພດ

ສີຣິຕື່ນຂຶ້ນມາກໍພົບວ່າຕົນເອງຢູ່ໃນຫ້ອງສ່ວນຕົວທີ່ມີບໍ່ພໍເທົ່າໃດຫ້ອງຂອງໂຮງໝໍ ເຂົາຮູ້ສຶກເຈັບປວດແປັບໆ ທີ່ໜ່ວຍຕາທັງສອງຂ້າງພ້ອມທັງຮູ້ສຶກມົວຟາງບໍ່ຕ່າງຫຍັງກັບແນມເບິ່ງຜ່ານປະຕູປ່ອງຢ້ຽມທີ່ເກາະຕິດໄປດ້ວຍຄາບນ້ຳມັນ. ຜະໜັງກັບເພດານຫ້ອງທາສີຟ້າຄືກັບສະໜາມບິນວັດໄຕ. ເທິງເພດານມີດອກໄຟຍາວທີ່ບໍ່ມີຂອບຕິດຢູ່ພຽງໜຶ່ງດອກ ເຄື່ອງປະດັບຊິ້ນດຽວທີ່ມີຢູ່ພາຍໃນຫ້ອງກໍແມ່ນປະຕິທິນຂອງລະດູການປູກຝັງຂອງໄທ ບໍ່ມີຫຍັງພໍຈະຊ່ວຍບຳບັດຈິດໃຈພາຍໃນຫ້ອງໄດ້ເລີຍ.

"ຍິນດີຕ້ອນຮັບທີ່ທ່ານໝໍຟື້ນຊີບຄືນມາ." ຕຸ້ຍຢືນຢູ່ຂ້າງຕຽງທັງວຸ້ນວາຍນຳບັນດາຖາດໆ ທີ່ເຕັມໄປດ້ວຍຮາກໄມ້ພ້ອມຜົງສະໝຸນໄພຫຼາຍຢ່າງ. ງົບປະມານຂອງໂຮງໝໍມີບໍ່ຫຼາຍພໍທີ່ຈະຈັດຫາຢາທີ່ຜະລິດຢູ່ຕ່າງປະເທດມາຊົມໃຊ້ໄດ້ອີກແລ້ວ ແລະພວກເຂົາຈິ່ງຈຳເປັນກັບມາໃຊ້ວິທີການປິ່ນປົວຮັກສາແບບທຳມະຊາດບຳບັດ ເຊິ່ງຜູ້ປ່ວຍຫຼາຍຄົນກໍຮູ້ສຶກຍິນທີ່ໄດ້ປິ່ນປົວດ້ວຍວິທີນີ້.

"ຂ້ອຍກຳລັງເຮັດຫຍັງຢູ່ນີ້?"

"ສ່ວນໃຫຍ່ແລ້ວກໍແມ່ນນອນຫັ້ນແຫຼະ ມື້ຄືນນີ້ຕອນທ່ານໝໍສວມບົດບາດເປັນພະເອກນັ້ນ ກໍເລີຍວ່າໄດ້ດົມເອົາຂີ້ຝຸ່ນເຂົ້າປອດເປັນກິໂລກ່ອນຈະໝົດສະຕິ ແລ້ວພວກແພດຈິ່ງໄດ້ໃສ່ອົກຊີໃຫ້ທ່ານໝໍພຸ້ນໃດ."

"ມື້ຄືນນີ້ຫວາ? ແມ່ນໃດເນາະ. ຊ່ວງນີ້ຂ້ອຍເກືອບຊິບໍ່ຮູ້ຊ້ຳວ່າອັນໃດຄືຄວາມຈິງຫຼືອັນໃດເປັນຄວາມຝັນ ຂ້ອຍກໍໄດ້ແຕ່ຫວັງວ່າເລື່ອງຮ້າຍໆ ທີ່ເກີດຂຶ້ນຄວນຈະເປັນພຽງພາບຂອງຈິນຕະນາການເທົ່ານັ້ນ."

"ບໍ່ດອກ. ເຮືອນຂອງທ່ານໝໍຖືກລະເບີດແທ້ໃດ ມັນພັງລົງຈົນມຸ່ນອັບຍັບຫຼັງຈາກທ່ານຖືກສົ່ງຕົວມາຮອດໂຮງໝໍ."

"ພວກເດັກນ້ອຍເປັນແນວໃດແລ້ວ?"

"ຂໍໂທດເດີທ່ານໝໍ ຂ້ອຍບໍ່ຮູ້ຫຍັງເລີຍ ຂ້ອຍຫາກໍມາວຽກມື້ເຊົ້ານີ້ ແລ້ວພວກເຂົາ

ບອກວ່າທ່ານໝໍຢູ່ພີ້ ຂ້ອຍຍັງບໍ່ຮູ້ຂໍ້ມູນຫຍັງເລີຍຈາກປາກຜູ້ດູແລຄວາມປອດໄພຂອງທ່ານ.”

“ຂ້ອຍມີຜູ້ດູແລຄວາມປອດໄພຊັ້ນເບາະ?” ສິຣິຄາກຂີ້ກະເທີ່ໃສ່ຜ້າແພທີ່ຕຸ້ຍຖືລໍຖ້າຢູ່.

“ຕອນນີ້ເຫັນມີສອງຄົນໃດລະ ເຊື່ອວ່າພວກເຂົາຄົງແມ່ນຄົນຂອງໜ່ວຍງານຮັກສາຄວາມໝັ້ນຄົງຄົນໜຶ່ງຍິ້ມງາມໆ ເຂົາຢາກໂອ້ລົມກັບທ່ານເມື່ອທ່ານຟື້ນຕົວ. ທ່ານຮູ້ສຶກຕົວດີຂຶ້ນຫຼືຍັງ?”

“ຂ້ອຍຍັງຮູ້ສຶກເພຍໆ ເລັກໜ້ອຍ ແຕ່ໃຫ້ມັນຈົບໆ ໄປເລີຍກໍໜ້າຈະດີຄືກັນ.”

“ຂ້ອຍຈະບອກລາວໃຫ້ເດີ ແລ້ວຈະເອົາເຂົ້າເຊົ້າມາໃຫ້ກິນບັດເຂົາລົມວຽກກັບທ່ານໝໍແລ້ວ ຂ້ອຍຈະຕ້ອງໄດ້ໄປຊື້ຢູ່ນອກພຸ້ນແຫຼະ ມື້ຄືນນີ້ເຮືອນຄົວຖືກໄຟໄໝ້ ແນວກິນກໍບໍ່ແຊບຈັກດີ້ ສົງໄສແມ່ນສີມືຄົນເຈັບເອງນັ້ນແຫຼະທີ່ຈູດໄຟເຜົາເຮືອນຄົວຫັ້ນນະ.” ນາງຍ່າງເບັດໜ້າໄປທາງປະຕູ.

“ເອີຕຸ້ຍ ໂພສີມາຮອດຫ້ອງການແລ້ວບໍ່?”

“ຕຳຫຼວດຫັ້ນບໍ? ຕອນຂ້ອຍຢູ່ຫ້ອງການ ເຂົາຍັງບໍ່ທັນມາເທື່ອ. ເປັນຫຍັງ?”

“ເຂົາຈະມາເອົາລາຍງານຕົ້ນສະບັບກັບຮູບຖ່າຍຕອນຊັນນະສູດສົບ ເຈົ້າຕ້ອງເປັນຄົນບອກເຂົາໃຫ້ຮູ້ວ່າຂອງຊຸມນັ້ນຢູ່ບ່ອນໃດ.”

“ຂ້ອຍຈະຝາກຄວາມໄວ້ນຳກິ່ງ ຮູບຖ່າຍຫັ້ນເຂົາອາດຈະໄດ້ຖ້າຕື່ມໜ້ອຍໜຶ່ງ ຄິດວ່າຈະຕ້ອງໄດ້ຖ້າທາງຮ້ານຖ່າຍຮູບລ້າງຟິມໃໝ່ພຸ້ນແຫຼະ ເພາະທາງໄຊຍະ ບູລີສົ່ງແຕ່ຟິມມາເດລະ.”

“ແລ້ວບອກເຂົາວ່າ ...” ສິຣິເລີ່ມໄອຄ້ອກໆ ຂຶ້ນອີກຄັ້ງໃໝ່. “ບອກເຂົາວ່າຂ້ອຍຢູ່ໂຮງໝໍ.”

“ໂດຍທົວໜ້າ.”

**********

ຊາຍໜຸ່ມຈາກໜ່ວຍງານຮັກສາຄວາມໝັ້ນຄົງ ທັງສຸພາບແລະລະອຽດຮອບຄອບເປັນຢ່າງດີ ເຂົາຮັບຮູ້ຂໍ້ມູນທີ່ສິຣິໄດ້ບອກກັບສີວິໄລແລ້ວ ແຕ່ເຂົາພຽງຕ້ອງການຢາກຮູ້ທຸກເລື່ອງຈາກປາກຂອງສິຣິອີກຄັ້ງ.

ການໂອ້ລົມສົນທະນາກັນແບບຕໍ່ເນື່ອງໄດ້ກາຍເປັນປັນຫາໃຫ້ກັບສິຣິ ແລະເຂົາຈຳເປັນຕ້ອງໄດ້ສູບລົມຫັນໃຈເອົາອົກຊີແຊນເປັນແຕ່ລະໄລຍະ ເຊິ່ງຊ່ວງໜຶ່ງທີ່ສິຣິກຳລັງຕໍ່ລົມຫັນໃຈຢູ່ນັ້ນກໍພໍດີສີວິໄລມາຮອດ.

“ເຮີຍ ຢ່າໃຊ້ມັນດຸຫຼາຍຕິລະມັນແພງໃດ໋ຫັນນະ ຮູ້ຢູ່ເບາະຊິມາຫຽວເອົາມັນຈາກອາກາດງ່າຍໆ ແບບນີ້ບໍ່ໄດ້ຕີ໋.” ຊາຍໜຸ່ມຈາກໜ່ວຍງານຮັກສາຄວາມໝັ້ນຄົງກົ້ມຄຳນັບພ້ອມຖອຍກັບ.

“ສະບາຍດີອ້າຍໃຫຍ່ ໝາຍຄວາມວ່າມື້ຄືນນີ້ສະຫາຍບໍ່ໄດ້ຖືກໃຜຂວ້າງລະເບີດໃສ່ຄືກັບເຮົາຕິ.”

“ນອນຫຼັບປານແອນ້ອຍພຸ້ນລະ ຂໍຖາມແດ່ ຕອນລະເບີດມັນພຸ່ງຂຶ້ນໄປຈົນຮອດດາວພະຫັດພຸ້ນນະ ເປັນຫຍັງສະຫາຍບໍ່ນອນຂົດຢູ່ຕຽງນອນໂຕເອງແບບປອດໄພລະ?”

“ເຮົາລົງໄປແຄມນໍ້າ.”

“ອະຣາ ຄິດວ່າຕ້ອງໄປກັບແມວນ້ອຍ.”

“ໝາຕ່າງຫາກ.”

“ອືມ ບໍ່ເປັນຫຍັງດອກ ອາຍຸແກ່ປານນີ້ລະຊິໄປກັບຫຍັງກໍບໍ່ແປກແລ້ວແຫຼະ.”

“ພວກເດັກນ້ອຍທີ່ຢູ່ຊັ້ນລຸ່ມເປັນແນວໃດແລ້ວ?”

“ຍັງພາກັນສັບສົນງຸນງົງ ມີແຕ່ຜູ້ໃຫຍ່ກວ່າໝູ່ພຸ້ນເບິ່ງຄືຈະເຂົ້າໃຈເລື່ອງລາວຄວາມຈິງໄດ້ແດ່ ນາງຊົງສະຫຼາດ ພວກເຮົາຫາຄອບຄົວໜຶ່ງທີ່ພໍຈະຊ່ວຍດູແລພວກເຂົາຊົ່ວຄາວຊາມຊາພໍ່ພວກເດັກນ້ອຍກັບມາ. ພວກເຮົາພະຍາຍາມສົ່ງຂ່າວໄປໃຫ້ເຂົາຮູ້ແລ້ວທັງຫາຕຳແໜ່ງງານທີ່ເໝາະສົມພໍຈະໃຫ້ເຂົາສາມາດດູແລລູກນ້ອຍທັງສາມຄົນໄດ້.”

“ສະຫາຍຮູ້ແລ້ວບໍວ່າມັນເກີດຫຍັງຂຶ້ນກັນແທ້?”

“ລູກປືນຄົກບັກໃຫຍ່ໆ ຊະນິດພົກພາ ບາງເທື່ອອາດມີສອງລູກພຸ້ນແຫຼະ ພວກເຮົາສັນນິຖານວ່າຄົນຮ້າຍໂຍນລະເບີດຊຸມນັ້ນເຂົ້າທາງໜ້າປະຕູປ່ອງຢ້ຽມ ພວກເຈົ້າໜ້າທີ່ຍັງພາກັນຄົ້ນຫາຕາມຊາກສະຫຼັກຫັກພັງຢູ່ ຫຼັກຖານຊິ້ນດຽວທີ່ພໍຈະເອົາຜິດໄດ້ກໍແມ່ນວິທະຍຸທຣານຊິສເຕີໜຶ່ງເຄື່ອງ. ສະຫາຍຄົງບໍ່ຮູ້ຫຍັງເລີຍກ່ຽວກັບວິທະຍຸເຄື່ອງນັ້ນແມ່ນບໍ?”

ສີຣິໄອຂຶ້ນ. “ພວກຫ່າຊຸມນັ້ນຄືຊິພາກັນຂວ້າງວິທະຍຸເຂົ້າໄປພ້ອມກັບລູກ ປືນຄົກແທ້ແຫຼະ.”

“ພວກເຮົາສົງໄສວ່າຄືຊິແມ່ນແບບນັ້ນແຫຼະ. ເຮົາຢ້ານແຕ່ເຄື່ອງຂອງສະຫາຍຄືຊິບໍ່ເຫຼືອຫຍັງເລີຍ.”

“ບໍ່ແມ່ນປະເດັນທີ່ຊິມາເສຍດາຍເຄື່ອງຂອງ ເພາະເຄື່ອງຊຸມນັ້ນກໍບໍ່ໄດ້ມີຄ່າມີລາຄາຫຍັງດອກ ຫຼາຍປີມານີ້ເຮົາສະສົມແຕ່ເຄື່ອງຂອງທີ່ສາມາດພົກພາໄປມາສະດວກເທົ່ານັ້ນ ຄິດວ່າສິ່ງທີ່ເປັນຕາເສຍດາຍກໍຄົງແມ່ນພວກປຶ້ມນັ້ນລະ ຄືຊິບໍ່ມີໃຜເຫັນຫຍັງເລີຍຕິເບາະເນາະ?”

"ບໍ່ເຫັນແມ່ນແຕ່ເງົາ ຮູ້ສຶກແນວໃດແລ້ວຕອນນີ້?"

"ຮູ້ສຶກໂຊກດີທີ່ລອດຕາຍຫັ້ນລະ."

"ເວົ້າອີກກໍຖືກອີກ ບໍ່ຖາມກໍຄົງຮູ້ແລ້ວວ່າມີຂອງຮັກສາກຳລັງຈັບຕາເບິ່ງສະຫາຍຢູ່ທຸກທີ່ແນ່ນອນ."

ສີວິໄລເດີນທາງໄປປະຊຸມພົບປະຄະນະກຳມາທິການ ປ່ອຍໃຫ້ເຈົ້າໜ້າທີ່ໜຸ່ມຈາກໜ່ວຍງານຮັກສາຄວາມໝັ້ນຄົງສຳພາດເຂົາຈົນແລ້ວ. ການສອບປາກຄຳດຳເນີນໄປແບບສະບາຍທັງເປັນກັນເອງ ສະຫຼັບກັບສຽງໄອຂອງສີຣິເປັນບາງໄລຍະເຊິ່ງພໍຈະຊ່ວຍເຮັດໃຫ້ເຂົາຮູ້ສຶກດີຂຶ້ນເປັນບາງຄັ້ງຄາວ ສ່ວນຕຸ້ຍກໍຄອຍປ້ອນຄາລົມໃຫ້ຊາຍໜຸ່ມທັງພາກັນສົ່ງສຽງຫົວແບບສະໜຸກສະໜານລະຫວ່າງລໍຖ້າໃຫ້ທ່ານໝໍເຊົາໄອ.

ຊາຍໜຸ່ມຄົນນັ້ນຢູ່ໃນໄວຊາວປີຕົ້ນໆ , ເຂົາມີຮູບຮ່າງສູງ, ໃບຫູທັງສອງຂ້າງຂອງເຂົາຄ້າຍຄືກັບໄມ້ຕີປິ່ງປ່ອງ ແຕ່ສີຣິຕ້ອງຍອມຮັບວ່າເຂົາມີຮອຍຍິ້ມທີ່ມີສະເໜພໍສົມຄວນ.

"ຂ້ອຍຄິດວ່າຕອນນີ້ຄົງໝົດແນວຈະຖາມຕໍ່ແລ້ວສະຫາຍທ່ານໝໍ ຂ້ອຍຈະພິມຂໍ້ມູນທັງໝົດໄວ້ ແລ້ວຕອນບ່າຍຈິ່ງຈະກັບມາອີກຄັ້ງພ້ອມກັບຫົວໜ້າຂອງຂ້ອຍ ... ພະຍາບານຕຸ້ຍທີ່ຮັກ [ນາງໜ້າແດງຜ່າວປານໝາກເຜັດສຸກ] ທາງທີ່ດີຄວນເກັບເລື່ອງຊວນຫົວເອົາໄວ້ກ່ອນຕອນຫົວໜ້າຂ້ອຍຢູ່ນີ້ ເພາະລາວບໍ່ຄ່ອຍມັກເລື່ອງຕະຫຼົກຂົບຂັນຍ້ອນເລື່ອງຊຸມນັ້ນຖືກຍິງຖິ້ມໝົດຕອນທີ່ເຂົາຕໍ່ສູ້ກັບພວກຝຣັ່ງເສດ." ຕຸ້ຍຍົກມືຂຶ້ນສະແດງການຄຳນັບ. "ແລ້ວທ່ານໝໍ, ຖ້າທ່ານໝໍຊັ້ນນະ ສູດສືບຄົນຫວຽດນາມຫາກຕິດຕໍ່ຫາທ່ານອີກຄັ້ງ ກະລຸນາແຈ້ງໃຫ້ພວກເຮົາຮູ້ດ່ວນແດ່ເດີ. ພວກເຮົາຈຳເປັນຕ້ອງມີຫຼັກຖານອັນແໜ້ນໜາອີ່ຫຼີ."

"ຄົງຈະຕ້ອງໄດ້ຄິດຄົ້ນໂທລະສັບແບບພົກພາພໍຈະຖືຕິດຕົວໄປມາໄດ້ສະດວກ ຖ້າພວກເຂົາຢາກໃຫ້ຂ້ອຍໂອ້ລົມກັນທາງໂທລະສັບກັບເຂົາຂະນະທີ່ຂ້ອຍຢູ່ໃນສະພາບແບບນີ້ ຢ່າງໜ້ອຍຂ້ອຍອາດຈະໄດ້ພັກເປັນໜຶ່ງອາທິດຈິ່ງຈະໄປຫ້ອງການໄດ້."

"ອືມ. ແລ້ວຂ້ອຍຈະຊອກທາງເບິ່ງກ່ອນວ່າພວກເຮົາຈະແກ້ໄຂປັນຫານີ້ຈັ່ງໃດ ລາກ່ອນທ່ານໝໍ ແລະກໍຂອບໃຈຫຼາຍໆ ເດີ ... ລາກ່ອນນາງສາວ."

"ນາງສາວຫຍັງອີກລະ? ເປັນຫຍັງຄືຄິດວ່າຄົນງາມໆ ຄືຂ້ອຍຍັງເປັນນາງສາວຢູ່? ເປັນຫຍັງເຈົ້າຄືບໍ່ຄິດວ່າຂ້ອຍແຕ່ງດອງກັບນັກເຕະກອງໜ້າປະຈຳທີມຊາດລາວແຫຼະ?"

ຊາຍໜຸ່ມຍິ້ມ. "ແມ່ຍິງທີ່ແຕ່ງດອງແລ້ວຈະບໍ່ເຂີນອາຍຈົນໜ້າແດງຍ້ອນດອກ."

ເວົ້າສຸດເຂົາກໍຍ່າງອອກຈາກຫ້ອງໄປ ສິຣິແນມເບິ່ງຕຸ້ຍແບບຮູ້ທັນ ແຕ່ນາງກໍທຳທ່າເຮັດເປັນບໍ່ຮູ້ບໍ່ເຫັນຫຍັງ.

ສິຣິເຊືອບຫຼັບອີກຄັ້ງເມື່ອແຂກຄົນທີສອງຂອງເຂົາມາຮອດ ເຂົາຄ່ອຍມືນຕາຂຶ້ນຢ່າງຊ້າໆ ພ້ອມຈິດຈໍ່ທີ່ສີຫຍ້າຝັ້ນສີເຫຼືອງອັນເລືອນລາງຢູ່ປາຍຕຽງ ເຂົາຄ່ອຍໆ ຄິດອອກວ່າແມ່ນຄູບາທີ່ຕົນເຄີຍພົບໃນຕອນຄ່ຳຫວ່າງສອງມື້ກ່ອນ.

"ຕື່ນແລ້ວບໍເຢມິງ?" ເມື່ອຄວາມເລືອນລາງຈາງຫາຍໄປຈາກສາຍຕາ ສິຣິຈິ່ງສັງເກດເຫັນທະຫານຜູ້ເຝົ້າຍາມພ້ອມຊັກປືນທັງກຳໄວ້ແໜ້ນຢູ່ໃນມືເຊິ່ງຢືນຢູ່ທາງຫຼັງຄູບາອົງນັ້ນ ສິຣິຈິ່ງລຸກນັ່ງ.

"ບໍ່ເປັນຫຍັງດອກ ຂ້ອຍຮູ້ຈັກກັບເພິ່ນ." ຊາຍຄົນຍາມງຶກຫົວຕອບ ແລ້ວອອກຈາກຫ້ອງໄປ. "ເປັນຫຍັງຄູບາຄືຮ້ອງຊື່ຂ້ານ້ອຍແນວນັ້ນ? ຄູບາເປັນໃຜ?" ຄູ ບາຍິ້ມແຕ່ບໍ່ຕອບຫຍັງຈັກຄຳ. "ເປັນຫຍັງຄູບາຈິ່ງມາຢູ່ບ່ອນນີ້?"

"ລະເບີດຂອງພໍ່ອອກ ເຮັດໃຫ້ບໍລິເວນວັດເປື້ອນເຕັມແຕ່ຂີ້ຝຸ່ນ ອາດຕະມາຕ້ອງໄດ້ຈັດການປັດກວາດຈົນກ້ຽງງາມ. ການທຳຄວາມສະອາດແມ່ນພາລະຂອງອາດຕະມາ."

"ໂອ້! ຂ້ານ້ອຍຂໍໂທດຂໍອະໄພນຳເດີ."

"ເລື່ອງລາວຊຸມນີ້ເກີດຂຶ້ນພຽງເພື່ອເປັນການທົດສອບພວກເຮົາຊື່ໆ ຊີວິດເທິງໜ້າໂລກນີ້ປຽບເໝືອນການສອບເຂົ້າໃນຮົ້ວມະຫາໄລ."

"ຂ້ານ້ອຍເຊື່ອວ່າຄູບາຕ້ອງສອບຜ່ານແນ່ນອນ."

"ຂອບໃຈພໍ່ອອກ. ອາດຕະມາພົບບາງຢ່າງທີ່ເປັນຂອງພໍ່ອອກຕອນປັດ ກວາດວັດຢູ່ນັ້ນ. ພໍ່ອອກຈຳເປັນຕ້ອງໃຊ້ມັນ."

ຄູບາອົງນັ້ນຈົກເອົາເຄື່ອງລາງສີຂາວອອກມາຈາກຖົງພາຍສີເຫຼືອງເຊິ່ງພາດໄວ້ຢູ່ບ່າໄຫຼ່ຂ້າງໜຶ່ງ ແລ້ວຍ່າງມາແຂວນໄວ້ທີ່ປຸ່ມຫົວຕຽງ.

"ຄູບາຮູ້ແນວໃດວ່າມັນແມ່ນຂອງຂ້ານ້ອຍ?"

"ຖົງໃສ່ເຄື່ອງລາງຖືກໄຟໄໝ້ຈົນໝົດແລ້ວ." ຄູບາຫຼັບຕາ ທັງສວດມົນສັ້ນໆ ໃນຂະນະທີ່ຍັງຖືເຄື່ອງລາງຢູ່ ເພິ່ນໃຊ້ພາສາດຽວກັນກັບພາສາທີ່ໃຊ້ໃນພິທີໄລ່ຜີເຊິ່ງສິຣິເຄີຍໄດ້ຍິນຕອນຢູ່ຄຳມ່ວນ ທ່ານໜໍພະນົມມືທັງສອງຂ້າງເຂົ້າຫາກັນພ້ອມກົ້ມຫົວໃຫ້ຕ່ຳລົງ.

ຕຸ້ຍຍ່າງເຂົ້າມາເຫັນພາບນັ້ນພໍດີ ນາງຮູ້ສຶກລະອາຍໃຈທີ່ເຂົ້າມາຂັດຈັງ ຫວະ ນາງຈິ່ງຍົກມືຂຶ້ນນົບພ້ອມຫຼັບຕາ. ເມື່ອຄູບາສູດມົນຈົບແລ້ວກໍວາງມືອອກຈາກເຄື່ອງລາງຊິ້ນນັ້ນ ພ້ອມຫັນຫຼັງກັບເພື່ອຈະຍ່າງອອກຈາກຫ້ອງນັ້ນ ຕຸ້ຍຖອຍຫຼັງອອກໄປກ້າວໜຶ່ງຢ່າງຖ່ອມຕົນເພື່ອສະແດງຄວາມເຄົາລົບ ເມື່ອຍ່າງມາຮອດປະຕູ ຄູບາອົງນັ້ນກໍຈ້ອງ

ມອງມາທີ່ຕຸ້ຍ ທັງແນມເບິ່ງນາງດ້ວຍທ່າທາງແປກໆ ຈົນເຮັດໃຫ້ຕຸ້ຍຮູ້ສຶກຫົນຫວຍ.

"ແມ່ຂອງແມ່ອອກຈະໄຂຂຶ້ນຫຼາຍປີໜ້າ." ຄູບາເປີດປະຕູແລ້ວຍ່າງອອກໄປ ຕຸ້ຍໄດ້ແຕ່ຈ້ອງແນມເບິ່ງສິຣິ.

"ເປັນຫຍັງທ່ານໝໍຄືໄປບອກຄູບາເລື່ອງແມ່ຂອງຂ້ອຍ?"

"ຕຸ້ຍ ... ຂ້ອຍບໍ່ໄດ້ບອກເພິ່ນໃດ."

ຕອນບ່າຍສອງໂມງຕົງ ຊາຍໜຸ່ມສາມຄົນເຊິ່ງມາຈາກຫ້ອງການໂທລະຄົມກໍເດີນທາງມາເຖິງພ້ອມປາຍສັ້ນໆ ຂອງສາຍເຄເບີ້ນກັບໂທລະສັບເກົ່າໆ ໜຶ່ງເຄື່ອງ. ຈົນຮອດຕອນນີ້ເຂົາໄດ້ພົບເຫັນທັງທະຫານ, ພະສົງ, ນັກການເມືອງ ແລະນາຍຊ່າງ ແຕ່ບໍ່ມີວີ່ແວວຂອງທ່ານໝໍແມ່ນແຕ່ຄົນດຽວ. ທາງໂຮງໝໍມີພະນັກງານໜ້ອຍຫຼາຍ ສະນັ້ນພວກເຂົາຈິ່ງໄດ້ແຕ່ຫວັງວ່າສິຣິຈະສາມາດເບິ່ງແຍງຕົນເອງໄດ້.

ຫຼັງຈາກຊ່າງຕິດຕັ້ງໂທລະສັບກັບໄປແລ້ວ, ສິຣິກໍມີໂທລະສັບໃຊ້ໂດຍຜ່ານການຕໍ່ພວງມາແຕ່ຫ້ອງການສະໝຽນຝ່າຍບໍລິຫານ ເຂົາໄດ້ແຕ່ນອນຈ້ອງເບິ່ງມັນ ພາຍຫຼັງສິບນາທີທີ່ແສນງຽບສະຫງົບຜ່ານໄປ ສຽງອັນຄ້າຍຄືກັບລົດດັບເພີງກໍດັງຂຶ້ນ ຕອນນັ້ນເຂົາຢູ່ຄົນດຽວໃນຫ້ອງ.

"ຕຸ້ຍ ... ຕຸ້ຍຢູ່ບໍ?" ບໍ່ມີສຽງຕອບຮັບຈາກຕຸ້ຍ ສະນັ້ນເຂົາຈິ່ງບໍ່ມີທາງເລືອກອື່ນນອກຈາກຈັບເອົາໂທລະສັບຂຶ້ນມາແນບໃສ່ຫູດ້ວຍຕົນເອງ ພ້ອມຟັງສຽງ ... ທັງຕັ້ງໃຈຟັງແບບເຕັມທີ່.

"ທ່ານໝໍສິຣິແມ່ນບໍ່?"

"ແມ່ນແລ້ວ ມີຫຍັງບໍ?"

"ມີຄົນໂທຫາທ່ານ."

"ຢູ່ໃສ?"

"ຢູ່ນີ້ແຫຼະ. ຖືສາຍລໍຖ້າຈັກໜ່ອຍເດີ."

ສຽງສັນຍານໄຟຟ້າດັງໂຄ່ງເຄ່ງໝວກຫູກ່ອນທີ່ສຽງຂອງສີວິໄລຈະລອດມາເຂົ້າຫູຂອງຜູ້ຮັບສາຍ.

"ສິຣິຟັງຢູ່ບໍ່?"

"ອ້າຍຫວາ?"

"ໂທລະສັບໃໝ່ເປັນແນວໃດ?"

"ເປັນຕາຢ້ານແທ້ ສະຫາຍຮູ້ໄດ້ແນວໃດນີ?"

"ເຮົາຮູ້ທຸກເລື່ອງດອກນາ. ຮູ້ສຶກເປັນແນວໃດແລ້ວ?"

"ຮູ້ສຶກຄືກັບວ່າອາກາດໃນປອດຂອງເຮົາມີບໍ່ເຕັມເມັດເຕັມໜ່ວຍ ເຮົາໄອຍາມໃດ

ມັນກໍຂົນເອົາແຕ່ເສດສ່ວນໃນເຮືອນຂອງເຮົາອອກມາຕະຫຼອດ."

"ດີແລ້ວຊັ້ນ ສະຫາຍຈິ່ງຈະໄດ້ຢູ່ຫ່າງໆ ຈາກພວກເຈົ້າປັນຫາຈັກສອງສາມມື້. ຟັງເດີ, ເຮົາບອກເບີໂທທີ່ສະຫາຍຈຳເປັນຕ້ອງຕິດຕໍ່ໃຫ້ກັບສະໜຽນໝົດທຸກເບີແລ້ວ. ເຮົາຢາກຮູ້ທັນທີເມື່ອສະຫາຍຫວຽດນາມໂທກັບ ຢູ່ທາງຊາຍແດນເລີ່ມມີການໃຊ້ຄຳເວົ້າແຮງໆ ໂຕ້ຕອບກັນແລ້ວ ເຮົາບໍ່ຈຳເປັນບອກສະຫາຍກໍໄດ້ວ່າເລື່ອງນີ້ສຳຄັນຫຼາຍພຽງໃດ."

"ສຳຄັນພໍຈົນເຖິງຂັ້ນລະເບີດຮ່າງຄົນໃຫ້ກາຍເປັນເຖົ່າທຸລີຝຸ່ນຕີຫັ້ນ."

"ເຫັນບໍລະ ແນວເຮົາຮູ້ວ່າບໍ່ຄວນເວົ້າຫຍັງໃຫ້ສະຫາຍຟັງຫຼາຍກວ່ານີ້."

ອີກບໍ່ດົນຕໍ່ມາ ຄົນຍາມກໍຍ່າງເຂົ້າໄປໃນຫ້ອງພ້ອມກັບຊອງຈົດໝາຍ ໃຫຍ່ໆອັນໜຶ່ງ ເຂົາວາງມັນລົງໃສ່ເທິງຜ້າປູບ່ອນ ແລ້ວຫັນຫຼັງຍ່າງອອກໄປ.

ສີຣິຫົວ ຮື!ຮືຂຶ້ນ. "ບໍ່ຄິດຈະບອກກັນເລີຍບໍວ່າແມ່ນໃຜເປັນຄົນສົ່ງມາ?"

"ບອກບໍ່ໄດ້ດອກສະຫາຍ. ມີຄົນເອົາມາປະໄວ້ຢູ່ໜ້າໂຕະພະນັກງານຕ້ອນຮັບ. ນາງພະຍາບານເປັນຄົນເອົາຂຶ້ນມາໃຫ້ ບໍ່ເປັນຫຍັງດອກທ່ານໝໍ, ຂ້ອຍໄດ້ກວດຫາລະເບີດແລ້ວ."

ຈົດໝາຍສະບັບນັ້ນຖືກສົ່ງມາຈາກເພື່ອນຂອງສີຣິທີ່ຖານທັບອາກາດ ເຊິ່ງແມ່ນລາຍງານຕາຕະລາງການຂຶ້ນບິນທີ່ບໍ່ໄດ້ຮັບອະນຸຍາດ ໃນເຂດນ່ານຟ້ານະຄອນຫຼວງວຽງຈັນສຳລັບເດືອນຕຸລາຫາພະຈິກ ສີຣິແປກໃຈຫຼາຍກັບລາຍການຂຶ້ນບິນທີ່ມີຈຳນວນຫຼາຍຖ້ຽວ. ລາວມີເຮືອບິນເປັນຂອງຕົນເອງພຽງເຈັດລຳ ແຕ່ຖ້າເຄິ່ງໜຶ່ງຂອງບົດລາຍງານຫາກເຊື່ອຖືໄດ້ ກໍສະແດງວ່າປະເທດລາວເປັນປະເທດທີ່ມີການຈະລາຈອນທາງອາກາດທີ່ຜິດກົດໝາຍຫຼາຍສົມຄວນ.

ຊ່ວງເວລາທີ່ສີຣິສົນໃຈຫຼາຍທີ່ສຸດກໍແມ່ນທ້າຍເດືອນຕຸລາ ແລະກໍແມ່ນວັນທີຊາວເຈັດ ເຊິ່ງເປັນວັນທີ່ຕົງກັບຄວາມສົນໃຈໄຝ່ຮູ້ຂອງເຂົາຢູ່ແລ້ວ ທາງກົມການບິນໄດ້ຮັບການລາຍງານສອງຄັ້ງ ກ່ຽວກັບສຽງຂອງຍົນເຮລີຄອບແຕໃນບໍລິເວນໃກ້ຄຽງອ່າງເກັບນ້ຳງື່ມ ເມື່ອຄຳນຶງເຖິງປະເພດຂອງບຸກຄົນທີ່ມາໃຊ້ບໍລິການສະຖານທີ່ດັດສ້າງຢູ່ດອນທັງສອງແຫ່ງ ສຽງດັ່ງກ່າວຈິ່ງເຮັດໃຫ້ເຈົ້າໜ້າທີ່ຕື່ນຕົກໃຈ.

ສຽງດັງຮື່ມໆ ຢູເທິງນ່ານຟ້າຕອນສິບເອັດໂມງກາງຄືນເນື່ອງຈາກມີກ້ອນເມກໜາຫຼາຍ ຈິ່ງບໍ່ມີໃຜພົບເຫັນຕົວເຄື່ອງບິນລຳນັ້ນ ເມື່ອຮອດເວລາທີ່ໜ່ວຍຕໍ່ສູ້ທາງອາກາດຍານປະຈຳເຂື່ອນໄດ້ນຳເອົາອາວຸດອອກມາປັດຝຸ່ນແລ້ວຮຽບຮ້ອຍ ສຽງນັ້ນກໍຫາຍໄປ. ເຣດາທີ່ສະໜາມບິນວັດໄຕກໍຈັບສັນຍານແປກປອມນັ້ນໄດ້ ແຕ່ພໍເມື່ອພວກເຂົາກຽມສິ່ງເຄື່ອງໄປກວດສອບ ສັນຍານເຫຼົ່ານັ້ນກໍຫາຍໄປຈາກໜ້າຈໍເຣດາ.

"ພະນັນໄດ້ເລີຍວ່າຕ້ອງແມ່ນພວກມຶງໝູປ່າດຳ" ສິຣິພຶມພຳຂະນະອ່ານບົດລາຍງານຊ້ຳຄືນອີກເທື່ອໜຶ່ງ ເຂົາຂີດເສັ້ນຢູ່ກ້ອງວັນທີໄວ້.

ສຽງຄຶກຄັກຈາກເຄື່ອງລາງທີ່ຫ້ອຍລົງມາແຕ່ເສົາຂ້າງຕຽງດັງຂຶ້ນ ສິຣິແນມໄປທີ່ປະຕູປ່ອງຢ້ຽມເພື່ອເບິ່ງວ່າມີລົມພັດມາ ຫຼືບໍ່ ແຕ່ຜ້າກັ້ງກໍຍັງຄົງນິ້ງຢູ່ບໍ່ເໜັງບໍ່ຕີງສ່ວນພັດລົມກໍບໍ່ໄດ້ເປີດ ແຕ່ເຄື່ອງລາງຊິ້ນນັ້ນກໍຍັງຄົງໄກວແກວ່ງສະຫຼັບໄປມາທັງສົ່ງສຽງກ່ອງແກ່ງກະທົບກັບເສົາເຫຼັກກາງທີ່ຫົວຕຽງ ສິຣິໂນ້ມຕົວລົງມາພ້ອມວາງມືກົດທັບເຄື່ອງລາງເອົາໄວ້ເພື່ອບໍ່ໃຫ້ມັນເໜັງຕີງ ແຕ່ທັນທີທີ່ເຂົາສຳຜັດກັບກ້ອນຫີນອັນເຢັນເຜືອບນັ້ນ ພາບໜຶ່ງກໍປາກົດຂຶ້ນມາໃນຫົວບວກກັບຄວາມຮູ້ສຶກອັນໜ້າຫວາດກົວກໍໄຫຼສ່າເຂົ້າຜ່ານຮ່າງກາຍຂອງເຂົາ.

19

# ລົມກັບຄົນຕາຍ

"ທ່ານຄືຊິບໍ່ຖືສາຕິເນາະທີ່ພວກເຮົາເຂົ້າມາຂັດຈັງຫວະແບບນີ້." ນາຍທະຫານໜຸ່ມຈາກໜ່ວຍງານຮັກສາຄວາມໝັ້ນຄົງ ເຊິ່ງຢືນຢູ່ຊື່ກັບຊ່ອງປະຕູທາງເຂົ້າດ້ານຫຼັງຂອງຜູ້ເປັນຫົວໜ້າທີ່ອາວຸໂສກວ່າ ຜູ້ມີທ່າທາງເຄັ່ງຂຶມ ເຂົາບໍ່ສົນໃຈຮອດຈະເຄາະປະຕູຊ້ຳແຕ່ຍ່າງເບັດໜ້າໄປທີ່ຕັ່ງອີ້ສຳລັບຮັບແຂກ ພ້ອມນັ່ງຂາໄຂວ່ຫ້າງແບບສະບາຍ. "ຂ້ອຍແມ່ນພົນຕີງາຄຳວົງ ເຊິ່ງມີໜ້າທີ່ຮັບຜິດຊອບ ... ທ່ານສະບາຍດີບໍ? ເບິ່ງໜ້າທ່ານຂາວຊີດປານເຂົ້າຕົ້ມ."

ສີຣິເອື້ອມມືໄປຈັບເອົາສາຍອົກຊີ ແລ້ວສູບລົມຫັນໃຈເຂົ້າບາດເລິກໆ ຫຼາຍຄັ້ງ ເຊິ່ງກໍເຫັນໄດ້ຊັດເຈນວ່າທ່ານນາຍພົນເປັນຄົນປະເພດທີ່ບໍ່ມັກການລໍຖ້າໃຜແບບດົນໆ.

"ເຫັນບໍລະ, ຄັນຊັ້ນຂ້ອຍຈະກັບມາອີກຄັ້ງໃໝ່ ເມື່ອທ່ານມີສະພາບພ້ອມທີ່ຈະຕອບຄຳຖາມໄດ້." ເຂົາລຸກຢືນຂຶ້ນ ແລະແນມເບິ່ງໃນຂະນະທີ່ສີຣິຖອດໜ້າກາກອົກຊີພ້ອມໄອຄັ່ອກໆ.

"ບໍ່ດອກທ່ານນາຍພົນ. ຂ້ອຍບໍ່ເປັນຫຍັງແລ້ວ."

"ທ່າທາງທ່ານບໍ່ທຳມະດາແລ້ວໃດ໋."

ເຄື່ອງລາງໃນມືຂອງສີຣິສັ່ນກະຕຸກເໝືອນກັບວ່າມັນມີຊີວິດ ທັນທີທີ່ທ່ານນາຍພົນປ້າຍກົ້ນລົງນັ່ງທີ່ຕັ່ງອີກຄັ້ງ ເຂົາກໍສັງເກດເຫັນເສັ້ນຜົມສີຂາວຖືກເປຍເປັນຂອດຢູ່ໃນອຸ້ງມືຂອງສີຣິ. "ອັນນັ້ນແມ່ນຫຍັງຫັ້ນ?"

"ອັນນີ້ບໍ? ເປັນພຽງເຄື່ອງລາງໃຫ້ໂຊກທີ່ມີຄົນເອົາໃຫ້ຊື່ໆ ດອກ."

"ແມ່ນແທ້ຫວາ? ຂ້ອຍຄິດວ່າທ່ານເປັນທ່ານໝໍ ຫວັງວ່າທ່ານຄົງຈະບໍ່ເຊື່ອເລື່ອງໄຮ້ສາລະຊຸມນັ້ນດອກຕິ."

ທ່ານນາຍພົນເວົ້າເກືອບບໍ່ທັນສຸດຄວາມ ທັນໃດນັ້ນ ຕັ່ງສາມຂາທີ່ຕັ້ງຢູ່ສິ້ນຕຽງກໍຕັດສິນໃຈວ່າຂາທັງສາມຂ້າງທີ່ມີຢູ່ບໍ່ພຽງພໍສຳລັບການພະຍຸງຕົວ ມັນລົ້ມຄະໂລ່ງໂຄ່ງເຄ່ງແລ້ວໂຄ່ນລົງມາກະທົບກັບພື້ນຊີເມັນ ສຽງອຶກກະທຶກຄຶກໂຄມດັງກ້ອງໄປທົ່ວຫ້ອງນາຍທະຫານໜຸ່ມກົ້ມລົງຈັບມັນຂຶ້ນຕັ້ງໄວ້ ພ້ອມດຽວກັບເວລາທີ່ຕຸ້ຍແລ່ນເຂົ້າມາເພື່ອ

ເບິ່ງວ່າເກີດຫຍັງຂຶ້ນ ທ່ານນາຍພິນກໍຟ້າວຫັນໜ້າໄປຫານາງທັນທີ.

“ນີ້ເຈົ້າ. ອອກໄປຖ້າຢູ່ນອກກ່ອນແມ.”

“ຂ້ອຍຫວາ?” ນາງແນມເບິ່ງໜ້າທ່ານນາຍພິນດ້ວຍສາຍຕາດູໝິ່ນ.

“ທ່ານພິນຕິງາຄໍາ, ນາງແມ່ນຜູ້ຊ່ວຍໃນຫ້ອງຊັນນະສູດສົບຂອງຂ້ອຍເອງ.” ສີຣິບອກເຂົາ. “ນາງສາມາດເປັນສັກຂີພິຍານໃນໜ້າວຽກການຊັນນະສູດສົບ ເຊິ່ງນາງພໍຈະຊ່ວຍໃຫ້ຂໍ້ມູນບາງຢ່າງທີ່ຂ້ອຍອາດຫຼົງລືມເປັນບາງອັນໄດ້.”

“ເອົາລະຄັນຊັ້ນໄປຢືນຢູ່ພຸ້ນເດີສາວ.” ນາງແລ່ນໄປຢືນເຝົ້າລະວັງດ້ວຍທ່າທາງຂຶງຂັງໃນທ່າຢືນກົງຂ້າງໆ ກັບນາຍທະຫານໜຸ່ມ ເຊິ່ງກໍາລັງມຸ້ມສົບໄວ້ເພື່ອບໍ່ໃຫ້ຕົນເອງຍິ້ມອອກມາ. “ເອົາລະພາກັນເຊົາຫຼິ້ນຫູຫຼິ້ນຕາໃສ່ກັນໄດ້ແລ້ວ ມາລົມກັນເລື່ອງວຽກເລື່ອງງານກ່ອນສາບັດນີ້. ນີ້ເປັນເລື່ອງຄໍຂາດບາດຕາຍເຊິ່ງຂ້ອຍກໍຢາກໃຫ້ມັນຖືກແກ້ໄຂກ່ອນທີ່ມັນຈະກາຍເປັນກໍລະນີຂັດແຍ່ງລະຫວ່າງຊາດ. ທ່ານໝໍ, ຂ້ອຍໄດ້ອ່ານການປະເມີນເຫດການຕາມຄວາມຄິດຂອງທ່ານແລ້ວ. ຂ້ອຍຂໍບອກເລີຍວ່າທ່ານແມ່ນນັກປັ້ນນໍ້າໃຫ້ເປັນຕ່ອນໄດ້ເກັ່ງອີ່ຫຼີ.”

“ທ່ານໝາຍຄວາມວ່າແນວໃດ?”

“ອືມ, ເພາະທຸກຢ່າງທີ່ຂ້ອຍອ່ານຫັ້ນນະມັນບໍ່ຕ່າງຫຍັງກັບການຄາດເດົາແບບມົ້ວໆ ບໍ່ມີອັນໃດພໍໜ້າເຊື່ອຖືໄດ້ເລີຍ. ບໍ່ມີຫຍັງພໍຈະໃຊ້ເປັນຫຼັກຖານເພື່ອໄປຢືນຢັນກັບຝ່າຍຫວຽດນາມວ່າ ຝ່າຍພວກເຮົາບໍ່ໄດ້ທໍລະມານຄົນຂອງພວກເຂົາ.”

“ຂະໜາດຫຼັກຖານໜ້ອຍກວ່ານີ້ ອາດຊະຍາກອນຍັງຖືກເອົາຜິດໄດ້. ພວກເຮົາມີພະຍານຫຼັກຖານຫຼາຍພໍຢູ່ພີ້ນະ ຢ່າງໜ້ອຍກໍ ...”

“ຂໍ້ໜຶ່ງ ພວກເຮົາບໍ່ໄດ້ຕັດສິນເລື່ອງອາດຊະຍາກອນ. ພວກເຮົາກໍາລັງປົກປ້ອງຊື່ສຽງຂອງປະເທດຊາດ. ຂໍ້ສອງ ພະຍານຫຼັກຖານສະພາບແວດລ້ອມແບບທີ່ທ່ານວ່ານັ້ນ ກໍແມ່ນພື້ນຖານຄໍາເວົ້າທີ່ອອກຈາກປາກຂອງທ່ານໝໍຊັນນະສູດສົບມືສະໝັກຫຼິ້ນ ... ທີ່ຜ່ານປະສົບການມາຈັກປີແລ້ວເກາະ?”

“ສິບເດືອນ.”

“ສິບເດືອນ. ແລະດ້ວຍຄວາມໜ້າເຊື່ອຖືຂອງ ... ນິຍາຍເລື່ອງນີ້ ທ່ານຍັງຢາກໃຫ້ຂ້ອຍລົງມືສືບຫາວຫາກຸ່ມທະຫານຮັບຈ້າງອີກຊັ້ນບໍ ແລະຂ້ອຍຍັງບໍ່ຮູ້ຊໍ້າວ່າຂໍ້ມູນຊຸມນັ້ນມາຈາກໃສ ທ່ານຍັງຢາກໃຫ້ຂ້ອຍເຂົ້າໄປຂັດຂວາງການເຈລະຈາທັງສອງຝ່າຍດ້ວຍຄໍາເວົ້າຂອງນາຍແພດພະຍາດວິທະຍາທີ່ມີປະສົບການບໍ່ຊໍ່າຄົນຝຶກງານຊໍ້າ. ອັນນີ້ຂໍເວົ້າແບບສັດຊື່ຫັ້ນນະທ່ານໝໍ.”

“ຂ້ອຍຮູ້ແລ້ວວ່າທ່ານໝາຍເຖິງຫຍັງ.” ສີຣິເວົ້າ.

ຕຸ້ຍເຮັດສຽງຮື່ມໆ ໃນຮູຄໍ ທັງຮູ້ສຶກຄັນແຂ້ວເພາະແປກໃຈທີ່ຜູ້ເປັນຫົວໜ້າບໍ່ຕອບໂຕ້ຫຍັງ.

ສີຣິເວົ້າຕໍ່: "ຂ້ອຍຕ້ອງຍອມຮັບວ່າ ຖ້າຈະເບິ່ງທຸກຢ່າງແບບເປັນຮູບປະທຳແລ້ວ ມັນກໍບໍ່ມີຫຍັງທີ່ພໍເປັນຕາໜ້າເຊື່ອຖືໄດ້ແທ້."

"ກະແມ່ນຫັ້ນແຫຼະ. ສະນັ້ນ, ທ່ານກຳລັງບອກຂ້ອຍວ່າບໍ່ມີຂໍ້ເທັດຈິງຫຍັງທີ່ພໍຈະໃຫ້ຂ້ອຍເຊື່ອຖືໄດ້ແມ່ນບໍນີ."

"ບໍ່ມີເລີຍ. ຂໍໂທດຫຼາຍໆ."

"ອືມ. ຢ່າໄດ້ຄິດວ່າພວກເຮົາບໍ່ເຫັນຄ່າຂອງທຸກສິ່ງຢ່າງໃນຄວາມພະຍາຍາມທີ່ທ່ານໄດ້ເຮັດໄປເລີຍເດີ. ເທວະດາຟ້າແຖນຜຸ້ນລະທີ່ຮູ້ດີວ່າ ພວກເຮົາຈະເຮັດທຸກຢ່າງເພື່ອຫຼີກລ່ຽງການກໍ່ສົງຄາມກັບພວກຫວຽດນາມ ພຽງແຕ່ຄວາມພະຍາຍາມຂອງທ່ານຫັ້ນນະ ຢ່າງໜ້ອຍສຸດກໍເວົ້າໄດ້ວ່າ ເປັນຄວາມພະຍາຍາມທີ່ຍັງອ່ອນປະສົບການຢູ່ດີ."

"ຂ້ອຍເຂົ້າໃຈຢູ່."

ຕຸ້ຍບໍ່ສາມາດຢັບຢັ້ງອາລົມໂມໂຫຂອງຕົນໄດ້ອີກຕໍ່ໄປ. "ທ່ານໝໍບອກວ່າເຂົ້າໃຈຊັ້ນບໍ?"

"ຕຸ້ຍ, ທ່ານນາຍພົນເວົ້າຖືກແລ້ວ."

ງາຄຳຢືນຂຶ້ນ ແລ້ວງວາກໜ້າໄປທາງຕຸ້ຍ. "ເອົາລະຜູ້ສາວ! ເຈົ້າມີຫຍັງຢາກຈະເວົ້າຕື່ມໃສ່ເລື່ອງນີ້ອີກບໍ?"

ສີຣິແກ່ວງຫົວຢູ່ເບື້ອງຫຼັງ.

"ຄິດວ່າບໍ່ມີດອກ." ນາງຍອມຈຳນົນ.

"ຄັນຊັ້ນຂ້ອຍຂໍແນະນຳໃຫ້ເຈົ້າເຮັດໜ້າທີ່ນາງພະຍາບານຂອງຕົນເອງສາເທາະ ແລະກໍຢ່າໄດ້ພະຍາຍາມທີ່ຈະເຮັດວຽກແທນໜ້າທີ່ຂ້ອຍ." ເຂົາຍ່າງເບັດໜ້າໄປທາງປະຕູກ່ອນຈະຢຸດລໍຖ້າໃຫ້ນາຍສິບໂທເປັນຄົນເປີດມັນໃຫ້. "ຂ້ອຍຈະບອກໃຫ້ເດີ ທັງສອງຄົນພວກເຈົ້ານັ້ນແຫຼະ. ໃນສັງຄົມສະໄໝໃໝ່ນີ້, ຍິ່ງມີຄວາມທະເຍີທະຍານກໍຍິ່ງຈະພົບແຕ່ຄວາມເດືອດຮ້ອນ." ແລະແລ້ວເຂົາກໍຍ່າງໜີໄປ. ນາຍທະຫານໜຸ່ມແລ່ນນຳກົ້ນເຂົາຢັ້ອກໆ.

ສີຣິຫັນໃຈບໍ່ອອກ ເຂົາໄດ້ແຕ່ສາວມືຊອກຫາໜ້າກາກອົກຊີ ຕຸ້ຍຈິ່ງຟ້າວມາຊ່ວຍເປີດຝາຫົວປໍ້າຖັງອົກຊີ ໃນຂະນະທີ່ສີຣິກຳລັງດີ້ນຮົນເພື່ອບັງຄັບໃຫ້ອາກາດເຂົ້າໄປໃນປອດນັ້ນ ຕຸ້ຍກໍເປັນຜູ້ຈັບຊີບພະຈອນຂອງເຂົາ ທັງປອບໂຍນດ້ວຍນໍ້າສຽງອັນນິ້ມນວນເພື່ອເຮັດໃຫ້ເຂົາຮູ້ສຶກສະຫງົບລົງ.

"ຄ່ອຍໆ ໃຈເຢັນໆ ທ່ານໝໍ. ທຳຕົວສະບາຍໆ ຫັນໃຈເຂົ້າ-ອອກຊ້າໆ." ສີຣິຢາກ

ເວົ້າແຮງຈົນໃຈຈະຂາດ ແຕ່ຕຸ້ຍກົດໜ້າກາກໄວ້ພ້ອມແກວ່ງຫົວ ໃນບໍ່ຊ້າເປືອກຕາຂອງສິຣິກໍປິດລົງ ປ່ອຍໃຫ້ລະບົບການທຳງານພາຍໃນເຮັດວຽກຊ້າລົງ. ເມື່ອຊີບ ພະຈອນຂອງສິຣິກັບຄືນມາເຕັ້ນເປັນປົກກະຕິ ແລະຈັງຫວະການຫັນໃຈກໍສະໝ່ຳສະ ເໝີແລ້ວ, ຕຸ້ຍຈິ່ງຄ່ອຍໆ ຍົກໜ້າກາກອົກຊີອອກ. "ເອົາລະບັດນີ້ທ່ານໝໍຢາກເວົ້າຫຍັງກໍເວົ້າອອກມາເລີຍ ແຕ່ຖ້າທ່ານໝໍຍັງຈະຕື່ນເຕັ້ນອີກ ຂ້ອຍຈະໂພະໜ້າກາກນີ້ລົງໃສ່ໜ້າທ່ານໝໍທັນທີ."

"ຕຸ້ຍຟັງເດີ ເລື່ອງນີ້ສຳຄັນຫຼາຍ. ຂ້ອຍຢາກໃຫ້ເຈົ້າໄປຫາສີວິໄລຢູ່ຫ້ອງການສະພາ. ກວດສອບໃຫ້ແນ່ໃຈ ... [ເຂົາສູບເອົາອາກາດຈາກໜ້າກາກອົກຊີເພີ່ມຂຶ້ນ], ... ກວດສອບໃຫ້ແນ່ໃຈວ່າບໍ່ມີໃຜຕິດຕາມເຈົ້າ."

"ທ່ານຮູ້ບໍວ່າຢູ່ຫ້ອງນີ້ກໍມີໂທລະສັບ?"

"ບໍ່ໄດ້! ໂທບໍ່ໄດ້ ... ໄປເອົາລົດຖີບສາ ພ້ອມຢືນຢັນຂໍພົບສີວິໄລໃຫ້ໄດ້. ຖ້າຈຳເປັນກໍນອນຂວາງທາງຢູ່ຕໍ່ໜ້າຫ້ອງການຫັ້ນ ແລ້ວສ້າງຄວາມສັບສົນລະມຸນວຸ້ນ ວາຍເລີຍໂລດ. ແຕ່ແນວໃດກໍດີ ບໍ່ວ່າເຂົາກຳລັງເຮັດຫຍັງກໍຕາມ ຈົ່ງລາກເອົາເຂົາອອກມາໃຫ້ໄດ້ ບໍ່ມີຫຍັງໃນນັດໝາຍຂອງເຂົາຈະສຳຄັນໄປກວ່າສິ່ງທີ່ຂ້ອຍຈະບອກໃຫ້ເຂົາຕ້ອງຮູ້ອີກແລ້ວ. ບອກໃຫ້ເຂົາມາໂຮງໝໍພ້ອມກັບເຈົ້າທັນທີ ແລະເຂົາຕ້ອງບໍ່ບອກໃຫ້ໃຜຮູ້ນຳອີກ."

"ວ້າວ, ທ່ານໝໍຈະບອກຂ້ອຍນຳແມ່ນບໍ່?"

"ຮີບໄປດຽວນີ້."

ສິຣິຕ້ອງໄດ້ສູບເອົາອົກຊີເຈນອັນບໍລິສຸດອີກສິບຫ້ານາທີຈົນກວ່າເຂົາຈະຮູ້ ສຶກດີ ແລະສະຫງົບພໍທີ່ຈະຈັບເອົາຫູໂທລະສັບຂຶ້ນມາຟັງ ມີສຽງຂອງຜູ້ຊາຍຄົນໜຶ່ງຕອບຮັບເຊິ່ງເຂົາບໍ່ຈຳເປັນຕ້ອງໝູນເລກໂທໃຫ້ຍາກຊາ.

"ວ່າແນວໃດນໍ?"

"ແມ່ນໃຜເວົ້ານໍ? ສະໝຽນໂຮງໝໍຢູ່ໃສ?"

"ຂ້ອຍແມ່ນຮ້ອຍຕີເດືອນ ເປັນເຈົ້າໜ້າທີ່ປະຈຳໜ່ວຍງານຮັກສາຄວາມໝັ້ນຄົງ. ພວກເຮົາຖືກສັ່ງໃຫ້ມາປະຈຳການຄວບຄຸມໂທລະສັບເຄື່ອງນີ້ຕະຫຼອດຊາວສີ່ຊົ່ວໂມງ. ມີຫຍັງໃຫ້ຊ່ວຍບໍ່ທ່ານໝໍ?"

ສິຣິຄິດຫາອຸບາຍວິທີໃໝ່. "ຊ່ວຍຕໍ່ສາຍໄປຍັງຫ້ອງການໃຫຍ່ເຈົ້າໜ້າທີ່ຕຳຫຼວດໃຫ້ແດ່ໄດ້ບໍ່?"

"ນີ້ກ່ຽວຂ້ອງກັບ ...?"

"ບໍ່ດອກ ມັນແມ່ນຄະດີອື່ນ."

"ດີຫຼາຍຊັ້ນນະທ່ານ."

ສີຣິເດົາອອກວ່າ ເຈົ້າໜ້າທີ່ຮັກສາຄວາມໝັ້ນຄົງຜູ້ນັ້ນຈະຕ້ອງດັກຟັງ ພ້ອມຈົດບັນທຶກສິ່ງທີ່ເຂົາເວົ້າເອົາໄວ້. ແຕ່ເຂົາກໍຮູ້ສຶກວ່າຕົນເອງຕ້ອງການຄວາມຊ່ວຍເຫຼືອຈາກໂພສີແບບຮີບດ່ວນ. ເຂົາຕ້ອງການໃຜຄົນໜຶ່ງພໍຈະສາມາດໄວ້ໃຈໃນທີມຂອງເຂົາໄດ້. ເຂົາຮູ້ດີວ່າຕົນເອງບໍ່ສາມາດຂໍຄວາມຊ່ວຍເຫຼືອແບບຕົງໆ ໄດ້ ເຂົາຈິ່ງຕ້ອງໄດ້ໃຊ້ຂໍ້ອ້າງເພື່ອໃຫ້ໂພສີມາພົບເຂົາທີ່ຫ້ອງພັກຟື້ນໃນໂຮງໝໍ."

ສຽງສັນຍານດັງຂຶ້ນເຖິງໜຶ່ງ ຫຼືສອງຄັ້ງ ກ່ອນທີ່ສຽງແບບຫງຸດຫງິດໃຈຂອງສິບເອກປະຈຳໂຕະຈະດັງມາຕາມຫູ້ງ.

"ກອງບັນຊາການຕຳຫຼວດ."

"ສະບາຍດີ ຂ້ອຍແມ່ນທ່ານໝໍສີຣິ ໄພບູນ ຈາກໂຮງໝໍມະໂຫສົດ ຂໍລົມກັບສາລະວັດໂພສີໄດ້ບໍ່?"

"ລົມກັບໃຜນໍ?"

"ສາລະວັດໂພສີ." ສຽງນັ້ນງຽບໄປຄາວໜຶ່ງ.

"ລໍຖ້າຈັກໜ່ອຍເດີ."

ສີຣິລໍຖ້າປະມານສອງສາມນາທີຈຶ່ງກວ່າຜູ້ຊາຍຄົນໜຶ່ງທີ່ເວົ້າສຽງດັງແບບບໍ່ພໍໃຈຕອບມາແຕ່ປາຍສາຍ.

"ສະບາຍດີທ່ານໝໍຟັງຢູ່ບໍ? ຂ້ອຍຢ້ານວ່າສາລະວັດໂພສີຈະບໍ່ຢູ່ຫ້ອງການຊໍ້າ."

"ໂອເວນກໍາ. ຊ່ວຍຝາກຄວາມເຖິງເຂົາໄດ້ບໍ່?"

"ອືມ ຂ້ອຍກໍບໍ່ແນ່ໃຈວ່າລາວຈະກັບມາຕອນໃດ ຂ້ອຍຈະລອງເບິ່ງເດີ."

"ຊ່ວຍບອກໃຫ້ເຂົາຕິດຕໍ່ຫາທ່ານໝໍສີຣິຢູ່ໂຮງໝໍມະໂຫສົດດ່ວນ. ຫ້ອງ ໔ອີ ເດີ."

"ໄດ້ໆ! ຂ້ອຍຈະຂຽນໄວ້ເທິງກະດານຂ່າວ ແຕ່ຂ້ອຍບໍ່ກ້າຮັບປະກັນວ່າເຂົາຈະເຫັນຫຼືບໍ່."

"ລອງຂຽນໃສ່ເຈ້ຍແລ້ວໄປວາງໄວ້ເທິງໂຕະເຮັດວຽກຂອງເຂົາ ຫຼືອີ່ຫຍັງຈັກຢ່າງໄດ້ບໍ່?"

"ໂຕະເຮັດວຽກຫວາ?" ສຽງຫົວຂອງຜູ້ຊາຍດັງຂຶ້ນມາແຕ່ປາຍສາຍ. "ເຂົາບໍ່ມີໂຕະເຮັດວຽກດອກ. 'ລາກ່ອນ' ທ່ານໝໍ."

ສີຣິຖືຫູໂທລະສັບອັນມິດຈີ່ລີ່ຄ້າງໄວ້ຢູ່ຄືເກົ່າ.

"ບໍ່ມີໂຕະເຮັດວຽກຊັ້ນຫວາ?"

ສີຣິເອ່ນຕົວລົງນອນໃສ່ໝອນທີ່ບໍ່ໄດ້ໃຫ້ຄວາມຮູ້ສຶກສະບາຍຈິດສະບາຍໃຈແຕ່ຢ່າງໃດ ພ້ອມເງີຍໜ້າຂຶ້ນແນມເບິ່ງເພດານສີຟ້າ. ກັບແກ້ສອງໂຕກໍາລັງເຂົ້າເຂັມເຂົ້າດ້າຍ ຫຼືບໍ່ກໍກໍາລັງຕໍ່ສູ້ກັນ ເຂົາຮູ້ສຶກວ່າເຫດການໃນຍາມສະຫງົບເສີກມັນຊ່າງຮຸນແຮງ

ແລະວຸ້ນວາຍກວ່າເຫດການໃນປາງສົງຄາມຊໍ້າອີກ. ເຂົາເລີ່ມເຫງົານອນຈົນພອຍເຊືອບຫຼັບໄປ ແຕ່ກໍຕ້ອງສະເດີດຕື່ນອີກຄັ້ງເມື່ອສີວິໄລພວດພາດເຂົ້າມາທາງປະຕູໂດຍມີຕຸ້ຍຕິດຕາມມານຳຫຼັງ.

"ໃຫ້ເປັນເລື່ອງເປັນລາວແດ່ເດີນ້ອງຫຼ້າ. ຈະຕິດຕັ້ງໂທລະສັບໄວ້ເຮັດຫຍັງຖ້າ ..."

"ມາພີ້ ແລ້ວນັ່ງລົງກ່ອນ. ເຈົ້າຄືກັນຕຸ້ຍ ແລ້ວຊ່ວຍເບົາໆ ສຽງລົງນຳແດ່."

ທັງສອງລາກເອົາຕັ່ງອີ້ມາໃກ້ກັບຂອບຕຽງ ເຊິ່ງພວກເຂົາຕ່າງກໍບໍ່ເຄີຍເຫັນທ່າທາງອັນຈິງຈັງຂອງສິຣິຂະໜາດນີ້ມາກ່ອນ ແລະດວງຕາຂອງເຂົາກໍບໍ່ເຄີຍມີສີ ຂຽວຈາງໆແບບນີ້. ສິຣິບິນຕົວຂຶ້ນແລ້ວນັ່ງອີງເທິ້ງໃສ່ກັບໝອນ.

"ເຮົາຈະເລົ່າບາງຢ່າງທີ່ພວກເຈົ້າສອງຄົນຕ້ອງຄິດວ່າມັນເປັນເລື່ອງເຫຼືອເຊື່ອໃຫ້ຟັງ ແມ່ນແຕ່ຕົວເອງກໍຍັງຄິດວ່າມັນເຫຼືອເຊື່ອພິລຶກ. ພວກເຈົ້າອາດຈະຄິດວ່າຂ້ອຍກິນຢາກະຕຸ້ນປະສາດຫຼອນແທ້ແຫຼະ ຫຼືບໍ່ກໍຄິດວ່າໄວຊະລາກຳລັງມາຢາມ ແຕ່ຄວາມຈິງແລ້ວ, ຕະຫຼອດຊີວິດຜ່ານມາ ສະຕິສຳປະຊັນຍະຂອງຂ້ອຍບໍ່ເຄີຍສົມບູນ ຫຼືແມ່ນແຕ່ສະໝອງປອດໂປ່ງກໍຍັງບໍ່ເຄີຍເປັນແບບນີ້ມາກ່ອນ.

"ເຮົາຈະບໍ່ເລົ່າຈົນໝົດເນື້ອເຊື້ອໄຂເພາະຖ້າຂືນເລົ່າໝົດແລ້ວ ແນ່ນອນພວກເຈົ້າສອງຄົນຈະຕ້ອງຫາທາງສົ່ງເຮົາໄປໂຮງໝໍປິ່ນປົວຄົນໂລກຈິດແທ້ແຫຼະ ແຕ່ຈະບອກສະເພາະລາຍລະອຽດທີ່ກ່ຽວຂ້ອງກັບຄະດີນີ້." ເຂົາສູບເອົາອົກຊີເຈນຈຳນວນໜຶ່ງເຂົ້າປອດ. "ຫຼາຍປີມາແລ້ວທີ່ເຮົາໄດ້ເຫັນຫຼາຍອັນຫຼາຍແນວ."

"ໂອສະຫວັນ. ຄົງບໍ່ແມ່ນເລື່ອງ ..."

"ສີວິໄລບໍ່ຝ້າວເວົ້າຫຍັງເທື່ອ. ຖ້າຫາກມິດຕະພາບຂອງພວກເຮົາມັນຍັງມີຄວາມໝາຍສຳລັບສະຫາຍ ເຮົາຂໍໃຫ້ສະຫາຍຮັບຟັງໃນສິ່ງທີ່ເຮົາຢາກເວົ້າແດ່ເທາະ." ສີວິໄລຍົກບ່າໄຫຼ່ທັງຍົກແຂນຂຶ້ນກອດເອິກ. "ເຮົາເຫັນວິນຍານຂອງຄົນຕາຍ ເຮົາເອງບໍ່ສາມາດຄວບຄຸມໄດ້ວ່າພວກເຂົາຈະມາຕອນໃດ ຫຼືພວກເຂົາຈະມີວິທີສື່ ສານກັບເຮົາແນວໃດ ແຕ່ມັນກໍເປັນຄວາມຈິງ, ໃນຊ່ວງສອງອາທິດຜ່ານມາວິນຍານເຫຼົ່ານີ້ມາຫາເຮົາຖີ່ຂຶ້ນ ແລະກະບໍ່ຮູ້ແຫຼະ ... ຄືກັບວ່າມີພະລັງແຂງແກ່ນຂຶ້ນ, ພວກເຂົາມີວິທີການຕ່າງໆ ໃນການສົ່ງຂ່າວຫາເຮົາ."

"ອ້າຍ, ສະຫາຍເຄີຍຖາມວ່າເຮົາຮູ້ເລື່ອງໝູປ່າດຳແນວໃດຫັ້ນ ຕອນນັ້ນເຮົາບໍ່ຢາກບອກຫຍັງເລີຍ ເພາະເຮົາເຊື່ອວ່າສະຫາຍຈະຕ້ອງຫົວເຍາະເຍີ້ຍເຮົາຄືດັ່ງທີ່ເຄີຍເຮັດເປັນປະຈຳ ແຕ່ທີ່ເຮົາຮູ້ກໍຍ້ອນຄົນຫວຽດນາມເປັນຜູ້ບອກເອງວ່າ ຄົນພວກນັ້ນຍັງຢູ່ບ່ອນນີ້. ເຮົາຄົງເດົາ ຫຼືແຕ່ງເລື່ອງຂຶ້ນມາເອງບໍ່ໄດ້ດອກ ພວກເຂົານັ້ນລະເປັນຄົນບອກເຮົາຈິ່ງຮູ້."

ສີວິໄລເລີ່ມສັ່ນສະທ້ານ. "ສະຫາຍເລີ່ມຊິເຮັດໃຫ້ເຮົາຂົນໝາວລຸກລະໃດ໋ນິ."

"ເຮົາພຽງແຕ່ຮູ້ສຶກຕະຫຼອດ ມີເທື່ອໜຶ່ງທີ່ເຮົາຝັນວ່າຄົນຫວຽດນາມທີ່ຕາຍໄປແລ້ວຄອຍປົກປ້ອງເຮົາ ຂະນະທີ່ເດັກນ້ອຍຄົນໜຶ່ງພະຍາຍາມຜ່າວົງລ້ອມຈາກພວກເຂົາເພື່ອຈະເຂົ້າມາທຳຮ້າຍເຮົາ ແຕ່ກໍຖືກຊາຍຫວຽດນາມທຸບຕີຈົນຕາຍ ແລ້ວໃບໜ້າຂອງເດັກນ້ອຍຄົນນັ້ນກໍຄ່ອຍໆ ປ່ຽນເປັນໃບໜ້າຂອງຊາຍຊະລາຄົນໜຶ່ງ ຈາກນັ້ນເຮົາກໍເຫັນຊາຍຊະລາຄົນນັ້ນໃນຄວາມຝັນອີກຄັ້ງຕອນໄປຄຳມ່ວນ. ເຂົາຮວບຮວມເອົາວິນຍານອັນຊົ່ວຮ້າຍເພື່ອມາທຳລາຍປ່າໄມ້. ແລະແລ້ວເຮົາກໍຕົກໃຈສຸດຂະໜາດເມື່ອໄດ້ເຫັນໃບໜ້າຂອງຜູ້ຊາຍຄົນນີ້ແບບເຕັມຕາໃນມື້ນີ້."

"ເຂົາຍ່າງຢັ້ງໆ ເປັນໂຕເຂົ້າມາໃນຫ້ອງນີ້ແຫຼະ"

ຕຸ້ຍເອີ່ຍຊື່ຂອງຊາຍຄົນນັ້ນທັນທີ. "ພົນຕີງາຄຳ. ຂ້ອຍຮູ້ວ່າມີບາງຢ່າງຜິດປົກກະຕິ."

"ແມ່ນແລ້ວຕຸ້ຍ! ທ່ານພົນຕີນັ້ນແຫຼະ ເຊິ່ງເຮົາເອງກໍບໍ່ຮູ້ວ່າເປັນຫຍັງ ທັງທີ່ເຮົາກໍບໍ່ມີຫຼັກຖານຫຍັງພໍເປັນເຄື່ອງພິສູດ ແຕ່ເຮົາເຊື່ອວ່າ ພົນຕີງາຄຳແມ່ນທີ່ປຶກສາຂອງກອງກຳລັງຕໍ່ຕ້ານລັດຖະບານ. ເຮົາໝັ້ນໃຈວ່າເຂົາຄືຜູ້ບົງການກໍ່ເຫດທັງໝົດທີ່ກ່ຽວຂ້ອງກັບຄົນຫວຽດນາມ. ແລະອາດຈະເປັນຄົນດຽວທີ່ກຳລັງພະຍາຍາມກຳຈັດຊີວິດເຮົານຳອີກ."

ສີວິໄລລຸກຢືນຂຶ້ນພ້ອມຢຽດແຂ່ງຢຽດຂາອັນແກ່ຊະລາຂອງຕົນ. "ເຮົາບໍ່ຮູ້ຊິເວົ້າເລື່ອງຫຍັງ." ເຂົາຍ່າງໄປຈ້ອງເບິ່ງປະຕິທິນທີ່ຕິດຢູ່ເທິງຝາຫ້ອງ ພ້ອມກວດສອບເບິ່ງວັນທີ ມັນເປັນປະຕິທິນເກົ່າແຕ່ປີກາຍ. "ມັນເປັນເລື່ອງແປກປະຫຼາດທີ່ສຸດເທົ່າທີ່ເຄີຍໄດ້ຍິນຈາກປາກສະຫາຍ ເທວະດາເທົ່ານັ້ນທີ່ຮູ້ວ່າສະຫາຍມັກເວົ້າແຕ່ເລື່ອງໄຮ້ສາລະໃນຊ່ວງຫຼາຍປີຜ່ານມາ. ພົນຕີເປັນບຸກຄົນໜຶ່ງທີ່ໄດ້ຕໍ່ສູ້ເພື່ອການປະຕິວັດເກືອບຕະຫຼອດຊີວິດຂອງເຂົາ."

"ອ້າຍ ..."

"ແຕ່ເຮົາຮູ້ວ່າສະຫາຍເຊື່ອເລື່ອງນີ້ ແລະຍ້ອນສະຫາຍເຊື່ອມັນຫັ້ນລະ ແລະສະຫາຍກໍແມ່ນເພື່ອນສະໜິດທີ່ສຸດທີ່ເຮົາມີ ນັ້ນກໍໝາຍຄວາມວ່າເຮົາເຊື່ອໃຈສະຫາຍ ແລະດ້ວຍເຫດຜົນບາງຢ່າງທີ່ບໍ່ອາດຢັ່ງຮູ້ໄດ້ ເຊິ່ງເຮົາກໍເຊື່ອແບບນັ້ນຄືກັນ."

"ຂອບໃຈຫຼາຍໆ ສີວິໄລ."

"ມັນແມ່ນຄວາມຈິງແທ້ໃດ໋." ຕຸ້ຍເວົ້າຂຶ້ນ ນາງນັ່ງຕົວສັ່ນຄືກັບໃບໄມ້ຕັ້ງແຕ່ສີຣິເລີ່ມເລົ່າລາຍລະອຽດໃຫ້ຟັງ. "ຂ້ອຍຮູ້ມາດົນແລ້ວ ແຕ່ບໍ່ກ້າເວົ້າຫຍັງ ຕອນທີ່ທ່ານໝໍໄປຫາຢູ່ເຮືອນ ແມ່ຂ້ອຍສັງເກດໄດ້ເລີຍວ່າທ່ານໝໍມີແວວໃນດ້ານນີ້."

"ມັນອາດຈະເປັນຄຳສາບນະຕຸ້ຍ."

"ເບິ່ງແມ໋ສອງຄົນພວກເຈົ້ານິ." ສີວິໄລຍ່າງກັບຄືນມານັ່ງຂັ້ນລະຫວ່າງກາງຂອງ

ທັງສອງ. "ເຫັນໄດ້ແຈ້ງວ່າ ພວກເຮົາຄົງບໍ່ມີປັນຍາເຮັດຫຍັງໄດ້ພຽງເພາະອາໄສຄຳເວົ້າຈາກປາກຂອງອີ່ຕາເຖົ້າໝັງຍານຜູ້ເຫັນຜີຄົນນີ້. ເຮົາຈະໃຫ້ທະຫານຜູ້ເຮົາໄວ້ໃຈກວດເບິ່ງວັນທີອີກຄັ້ງວ່າຈະເປັນໄປໄດ້ບໍທີ່ພົນຕີງາຄຳຈະໄປຢ້ຽມຢາມສູນປະຕິບັດການໃນຊ່ວງທີ່ຮ້ອກຢູ່ບ່ອນນັ້ນ ແລ້ວກໍເບິ່ງຄືນວ່າຕອນມີການສັງຫານໝູ່ຂອງກອງທະຫານຫວຽດນາມຫັ້ນເຂົາໄປມຸດຫົວຢູ່ໃສ. ພວກເຮົາຈະລອງກວດສອບປະຫວັດຂອງເຂົາຕື່ມວ່າມີຫຍັງພໍເປັນຕາສັງເກດເຫັນໄດ້ແດ່ ຖ້າທຸກຢ່າງສອດຄ່ອງກັນ ພວກເຮົາຈິ່ງຈະສາມາດດຳເນີນການໃນຂັ້ນຕອນທີສອງໄດ້."

"ແບບນັ້ນຈິ່ງຍຸຕິທຳແດ່."

"ແລະເຮົາກໍຢາກໃຫ້ສະຫາຍຄືນເງິນທີ່ເຄີຍຊະນະການພະນັນໃຫ້ເຮົາທຸກກີບ ຖ້າຮູ້ວ່າສະຫາຍມີວິນຍານໃນໂລກອື່ນຄອຍຊ່ວຍເຫຼືອຢູ່ແນວນີ້ນະ ຈ້າງຫົວແຕກເຮົາກະບໍ່ຮັບພະນັນກັບສະຫາຍແນ່ນອນ."

ທຸກຄົນຫົວຂຶ້ນພ້ອມກັນຈົນກວ່າສີຣິເລີ່ມໄອຄັອກໆ ຂຶ້ນອີກຄັ້ງ ເມື່ອເຊົາໄອ ສີຣິແນມເບິ່ງສະຫາຍທັງສອງພ້ອມເຜີຍຮອຍຍິ້ມປາກົດຢູ່ມຸມປາກ.

"ແຕ່ລອງບອກຂ້ອຍແດ່ດູພະຍາບານຕຸ້ຍ." ສີວິໄລຖາມຂຶ້ນ, "ເຈົ້າຄິດວ່າໝໍດູຢີບຊີຄົນເກົ່າຂອງພວກເຮົາຈະປອດໄພຫຼາຍໜ້ອຍພຽງໃດຫາກຮູ້ວ່າຄົນທີ່ພະຍາຍາມຈະຂ້າເຂົານັ້ນເປັນຜູ້ສິ່ງຄົນຍາມມາເຝົ້າຢູ່ໜ້າປະຕູຄືແນວນີ້?"

"ບໍ່ຕ້ອງຫ່ວງດອກເລື່ອງນັ້ນລຸງ. ກີ່ງກັບບ້ານໄປຂົນເອົາເຄື່ອງບ່ອນນອນມາແລ້ວຄືນມື້ນີ້ທ່ານໝໍສີຣິຈະມີບໍດີກາດສ່ວນຕົວ ຂ້ອຍຈະເປັນຄົນປົກປ້ອງທ່ານໝໍເອງດອກ."

ສີວິໄລຫົວຂຶ້ນ. "ເຮົາໂລດບໍ່ເຂົ້າໃຈເລີຍສີຣິ ຂະໜາດອາຍຸເຈັດສິບສອງແລ້ວຍັງມີນາງພະຍາບານສາວມານອນເປັນໝູ່ ສະຫາຍເຮັດໄດ້ແນວໃດຫວາ?"

# 20

# ພາດໂອກາດໃນງານບຸນທາດຫຼວງ

ຄວາມຈິງແລ້ວ, ຄືນມື້ນັ້ນບໍ່ມີໃຜໄດ້ນອນແບບເຕັມອີ່ມພໍເທົ່າໃດ ເຊິ່ງສີຣິເອງກໍນອນບໍ່ຫຼັບຍ້ອນຮູ້ສຶກເປັນກະວົນກະວາຍໃຈ ບວກກັບອາການໄອຂອງເຂົາ ເຮັດໃຫ້ບໍດີກາດທັງສອງຄົນຈຳເປັນຕ້ອງຕື່ນຂຶ້ນຕະຫຼອດຄືນ ແຕ່ກໍຍັງດີທີ່ຢ່າງໜ້ອຍພວກເຂົາກໍລອດຊີວິດມາໄດ້ຈົນເຖິງຕອນເຊົ້າ.

ແຂກຜູ້ມາຢາມຄົນທຳອິດຂອງເຂົາມາພ້ອມກັບເຂົ້າຈີ່ປາເຕສອງກ້ອນ ທີ່ຫໍ່ດ້ວຍເຈ້ຍກະຊັບຄວາມມັນ.

"ຫຼ້າຫວາ?"

"ທ່ານໝໍ. ຫາກໍມີຄົນບອກຂ້ອຍວ່າເກີດຫຍັງຂຶ້ນ. ຂ້ອຍຈິ່ງຟ້າວມາທັນທີ. ເປັນແນວໃດຕອນນີ້?"

"ດີຂຶ້ນຫຼາຍນັບແຕ່ໄດ້ເຫັນໜ້າເຈົ້າ."

"ຈັ່ງແມ່ນເຈົ້າປາກຫວານແທ້ນໍ." ນາງຍື່ນເຂົ້າຈີ່ປາເຕໃຫ້ເຂົາ. "ເດັກນ້ອຍຢູ່ຂ້າງນອກໄດ້ກວດຄົ້ນຫາລະເບີດໝົດແລ້ວແຕ່ບໍ່ພົບ ພວກເຂົາຈິ່ງຄິດວ່າອາດຖືກວາງຢາພິດຈິ່ງລອງຊີມເຂົ້າຈີ່ທັງສອງກ້ອນ ເຫັນບໍຮອຍແຂ້ວທີ່ເຂົາກັດແລ້ວຫັ້ນ." ນາງເວົ້າແລ້ວກໍຍິ້ມ.

"ຈັ່ງແມ່ນເຈົ້າໃຈດີອີ່ຫຼີ." ມີຫຍັງບາງຢ່າງກ່ຽວກັບການມາຢ້ຽມຢາມຂອງປ້າຫຼ້າບວກກັບຄວາມຮູ້ສຶກທີ່ວ່າ ບໍ່ມີຫຍັງແນ່ນອນໃນຊີວິດ ໄດ້ກະຕຸ້ນເຕືອນໃຫ້ເຂົາເກີດຄວາມຊື່ສັດຕໍ່ຕົນເອງຫຼາຍກວ່າຜ່ານມາ. "ເຈົ້າຮູ້ບໍນາງຫຼ້າ, ມື້ຄືນນີ້ຂ້ອຍຄິດວ່າ ຖ້າເຮືອນຫຼັງນັ້ນຖະຫຼົ່ມລົງມາທັບຂ້ອຍແທ້ ຂ້ອຍຈະເສຍໃຈກັບເລື່ອງຫຍັງແດ່ ແຕ່ມັນກໍມີບໍ່ຫຼາຍດອກ ແຕ່ໜຶ່ງໃນນັ້ນກໍລວມມີເຈົ້າຮ່ວມຢູ່ນຳ."

"ຂ້ອຍນີ້ຫວາ?"

"ແມ່ນລະ ຂ້ອຍໄດ້ແຕ່ຜັດວັນປະກັນມື້ມາຫຼາຍຄັ້ງຫຼາຍຫົນດົນເຕີບແລ້ວ ຖ້າອາທິດໜ້າຂ້ອຍຍັງບໍ່ທັນຕາຍເທື່ອ ຂ້ອຍຈະຮູ້ສຶກເປັນກຽດຢ່າງຍິ່ງຖ້າເຈົ້າຍິນດີຈະໄປກິນເຂົ້າແລງກັບຂ້ອຍຈັກມື້."

ຍິງສາວໄວສິບຫົກປີທີ່ຍັງແອບແຝງຢູ່ໃນຕົວຂອງປ້າຫຼ້າໄດ້ເຜີຍຮອຍຍິ້ມກວ້າງພາໃຫ້ສິ່ງແສງສະຫວ່າງສະໄຫວໄປທົ່ວຫ້ອງ. ນາງຍ່າງເຂົ້າມາພ້ອມໂນ້ມຕົວລົງໃສ່ເທິງຫົວຕຽງ ແລ້ວຈູບທີ່ແກ້ມຂ້າງໜຶ່ງຂອງສີຣິຢ່າງອົບອຸ່ນ.

"ເວົ້າແທ້ເດີທ່ານໝໍ." ນາງເກືອບຈະເຕັ້ນຂ້າມປະຕູອອກໄປ ນາງຈັບລູກບິດປະຕູແລ້ວງວາກໜ້າກັບຄືນໄປຫາສີຣິ. "ຖ້າເຈົ້າຕາຍອາທິດໜ້າຂ້ອຍຈະຂ້າເຈົ້າຖິ້ມເດີ."

ສີຣິຍັງບໍ່ຢຸດຍິ້ມເຖິງແມ່ນປ້າຫຼ້າຈະອອກໄປແລ້ວກໍຕາມ ແຕ່ແລ້ວກໍມີສຽງຄວນຄາງມາແຕ່ກ້ອງຕຽງ.

"ຂ້ອຍ ... ຂ້ອຍ ... ຂ້ອຍຈະຮູ້ສຶກເປັນກະ ... ກຽດຢ່າງຍິ່ງຖ້າເຈົ້າ ..."

"ເກັບເປັນຄວາມລັບໄວ້ເດີນ້ອງກິ່ງຢ່າບອກໃຜໃດ໋."

ກິ່ງພົ່ນລົມຫັນໃຈຝືດຝັດທັງຫົວຍິ້ມແບບກວນໆ. ຫົກໂມງແລ້ວ ເຊິ່ງເປັນເວລາທີ່ເຂົາຕ້ອງໄດ້ຕື່ນ ສ່ວນຕຸ້ຍແມ່ນອອກໄປເບິ່ງແມ່ຂອງນາງແຕ່ເຊົ້າໆ.

ຢູ່ຕາມຫ້ອງຖະໜົນ, ຜູ້ຄົນຫ້າງຫາກະກຽມສໍາລັບງານບຸນນະມັດສະການພະທາດຫຼວງວຽງຈັນແລ້ວ ເຊິ່ງເປັນວັນໜຶ່ງໃນບໍ່ເທົ່າໃດວັນສໍາລັບປະຕິທິນຄົນລາວຊາວພຸດທະສານິກະຊົນທີ່ກ້າຮັບປະກັນໄດ້ວ່າ ເປັນວັນບຸນທີ່ໄດ້ຈຸດປະກາຍແຫ່ງຄວາມຕື່ນເຕັ້ນໃຫ້ກັບຄົນທຸກຮຸ່ນທຸກໄວ ແລະທຸກຊາດພັນ. ພະທາດຫຼວງສີເຫຼືອງທອງຕັ້ງເດັ່ນສະຫງ່າເຝົ້າແນມເບິ່ງລູກຫຼານທີ່ປ່ຽມລົ້ນໄປດ້ວຍຄວາມຕື່ນເຕັ້ນ ໃນທຸກໆ ໑ມື້ ຄໍ່າຂອງເດືອນ ໑໘ ລາວສືບທອດມານານແສນນານຕາບເທົ່າທີ່ຄົນຜູ້ຍັງມີຊີວິດຢູ່ໃນປັດຈຸບັນຈະສາມາດຈື່ຈໍາໄດ້.

ນີ້ແມ່ນງານສະເຫຼີມສະຫຼອງງານບຸນຄັ້ງທໍາອິດນັບແຕ່ມື້ຂອງການປະຕິວັດ ແລະແນ່ນອນວ່າຈະຕ້ອງມີຂໍ້ຈໍາກັດຫຼາຍກວ່າປົກກະຕິ. ລະບອບການປົກຄອງແບບໃໝ່ໄດ້ສັ່ງຫ້າມບໍ່ໃຫ້ມີການສະແດງເກີນຂອບເຂດ ເຊັ່ນການສະແດງແນວແປກໆ ທີ່ນິຍົມກັນຢ່າງກວ້າງຂວາງ ໂດຍສະເພາະກໍແມ່ນຫ້າມບໍ່ໃຫ້ສ້າງຄວາມບັນເທີງແກ່ຝູງຊົນດ້ວຍການນໍາສະແດງແບ້ຫ້າຂາ ຫຼືຜູ້ຍິງນົມສາມເຕົ້າ ທັງຫ້າມດື່ມເຫຼົ້າແລະຫຼິ້ນການພະນັນເພື່ອປ້ອງກັນບໍ່ໃຫ້ເກີດມີການຍິງກັນ ເຊິ່ງຈະຕົກເປັນຂ່າວໜ້າໜຶ່ງໃນໜັງສືພິມມື້ຖັດໄປ. ນອກຈາກນີ້, ລັດຖະບານຍັງສັ່ງຫ້າມບໍ່ໃຫ້ມີການສະແດງເຖິງຄວາມມັ່ງຄັ່ງຫຼູຫຼາ. "ການຄັ່ງໄຄ້ໃນທາງສາສະໜາຈົນເກີນຄວາມພໍດີ." ເຊິ່ງຂໍ້ຫ້າມທັງໝົດນີ້ເຮັດໃຫ້ບາງຄົນສົງໄສວ່າຈະເຫຼືອຫຍັງແດ່ໄວ້ສໍາລັບການສະເຫຼີມສະຫຼອງງານຄັ້ງນີ້.

ແຕ່ຄົນລາວຫຼາຍຄົນກໍມີຄວາມສາມາດພິເສດໃນການຫາຄວາມລື່ນເລີງບັນເທີງໃຈໄດ້ດ້ວຍຕົນເອງດ້ວຍການຄົ້ນເອົາເສື້ອຜ້າງາມໆ ອອກຈາກຫີບ ແລ້ວສວມໃສ່ພ້ອມອອກມາຍ່າງປະປົນຮ່ວມກັບຜູ້ຄົນທ່າມກາງບັນຍາກາດທີ່ເຕັມໄປດ້ວຍຄວາມຕື່ນເຕັ້ນ

ເຊິ່ງເທົ່ານີ້ກໍຖືວ່າພຽງພໍທີ່ຈະເຮັດໃຫ້ພວກເຂົາອີ່ມເອີບໃຈໄດ້ຕໍ່ເປັນອາທິດ.

ຝ່າຍແນວລາວຮັກຊາດປະກາດວ່າ ປີນີ້ຈະເປັນໂອກາດໃຫ້ລາວໄດ້ສະແດງຄວາມສຳເລັດທາງດ້ານເສດຖະກິດ ແລະວັດທະນະທຳພາຍໃຕ້ລະບອບການປົກຄອງແບບໃໝ່. ແຕ່ຄົນຊ່າງສັງເກດແບບສີຣິຊ້ຳພັດສົງໄສວ່າຜົນສຳເລັດທີ່ຈະປາກົດເປັນຕົວຕົນອອກມາໜ້ອຍຫຼາຍຊ່ຳໃດ ສ່ວນສີວິໄລຊ້ຳພັດຄິດວ່າຄົງຈະແມ່ນພາວະເງິນເຟີ້ຫຼາຍກວ່າ ບ່ອນທີ່ເດັກນ້ອຍພາກັນເປົ່າປູມເປົ້າເຊິ່ງມີໂຕໜັງສືຕິດໃສ່ວ່າ "ເງິນກີບລາວ". ສີຣິເວົ້າຫຼິ້ນແກມອີ່ຫຼີວ່າ ໜ້າຈະເປັນການໂຊຊູບຫຸ່ນເຊີດແຫ່ງວັດຊຽງທອງຂອງຝ່າຍຂວາ ດ້ວຍການຕິດກາວແທັບປິດປາກເນົ່າໆ ໄວ້ຫຼາຍກວ່າ.

ບໍ່ວ່າຈະເກີດຫຍັງຂຶ້ນກໍຕາມ, ບຸນນະມັດສະການພະທາດຫຼວງວຽງຈັນກໍຍັງແມ່ນເຫດການທາງວັດທະນະທຳປະຈຳປີທີ່ມີຄວາມໝາຍສຳຄັນສຳລັບສີຣິ ແຕ່ດ້ວຍປອດຂອງເຂົາຍັງເຕັມໄປດ້ວຍຝຸ່ນຄວັນ ໝາຍຄວາມວ່າເຂົາຄົງພາດໂອກາດຈະໄປງານບຸນປະຈຳປີນີ້ອີກຄັ້ງ. ໃນຄວາມຈິງແລ້ວ, ກ່ອນໜ້ານີ້ ເຂົາບໍ່ເຄີຍໄດ້ອາໄສຢູ່ວຽງຈັນ ເຂົາຈິ່ງບໍ່ເຄີຍເຫັນງານບຸນນະມັດສະການນີ້ເລີຍ ທັງເຂົາແລະບົວຕ່າງກໍຝັນວ່າຈະໄດ້ໄປງານບຸນນະມັດສະການພະທາດຫຼວງພາຍຫຼັງມີການປະຕິວັດຊາດປະຊາທິປະໄຕ ແຕ່ມັນກໍກາຍເປັນຄວາມຝັນອັນຫ່ຽວແຫ້ງຂອງນາງ.

ເວລາເຈັດໂມງເຊົ້າ, ສີຣິເຫັນພາບທີ່ຫາຍາກກວ່າແບ້ຫ້າຂານັ້ນກໍຄືພາບຂອງທ່ານໝໍໃນຊຸດຄຸມສີຂາວທີ່ຖືຟິມເອັກສ໌ເຣເຂົ້າມາໃຫ້ເຂົາເບິ່ງໃນຫ້ອງ.

"ສະບາຍດີບໍທ່ານໝໍສີຣິ."

"ສະບາຍດີທ່ານໝໍເຫວັຍ ຂ້ອຍກຳລັງຄິດຢູ່ວ່າພວກເຂົາເອົາຂ້ອຍມານອນພັກຢູ່ຫ້ອງຂອງໂຮງແຮມລ້ານຊ້າງຊັ້ນດອກທີ່ແທ້ກໍແມ່ນຄິດຜິດເນາະ."

"ເອົາລະທ່ານໝໍກະຢ່າຟ້າວເວົ້າປະຊົດປະຊັນກັນຫຼາຍ ທ່ານກໍຮູ້ດີວ່າພວກເຮົາກຳລັງ ..."

"ແພດໝໍບໍ່ພຽງພໍ. ແມ່ນແລ້ວຂ້ອຍຮູ້ດີ ແຕ່ທ່ານໝໍຄືຊິດີໃຈທີ່ຂ້ອຍຍັງບໍ່ຕາຍກ່ອນເພາະຖືກໝໍລະເລີຍມົວແຕ່ໄປໃສ່ໃຈຄົນປ່ວຍຕົວຈິງ."

"ພະຍາບານຂອງທ່ານໝໍໄດ້ລາຍງານໃຫ້ພວກເຮົາຮູ້ກ່ຽວກັບຄວາມຄືບໜ້າຂອງອາການຂອງທ່ານເປັນປະຈຳ. ມື້ວານນີ້ພວກເຮົາມີເຫດການສຸກເສີນສອງສາມເລື່ອງຈັ່ງຊັ້ນລະຈິ່ງວ່າພາກັນຫຍຸ້ງເອົາແທ້ເອົາວ່າ. ທ່ານໄດ້ຍິນຂ່າວເລື່ອງໄຟ ໄໝ້ບໍ?"

"ໄດ້ຍິນຢູ່ ໄຟໄໝ້ເຮືອນຄົວຫັ້ນບໍ?"

"ແມ່ນແຫຼະ ໄຟເລີ່ມໄໝ້ຢູ່ບ່ອນນັ້ນ ໂຊກຍັງດີທີ່ມັນບໍ່ລາມໄປໄໝ້ຫ້ອງຢາ. ເທວະດາເທົ່ານັ້ນທີ່ຮູ້ວ່າພວກເຮົາມີຢາເຫຼືອໜ້ອຍພຽງໃດ ແຕ່ພວກປຶ້ມທີ່ສະສົມໄວ້

ຈຳນວນໜ້ອຍໜຶ່ງຖືກໄຟໄໝ້ຈິນໝົດກ້ຽງ ແຕ່ຄິດວ່າມັນກໍເປັນປຶ້ມທຳມະດາບໍ່ມີຄ່າລາຄາຫຍັງດອກ."

"ທ່ານໝາຍເຖິງຫຍັງ?"

"ລອງນຶກເຖິງທີ່ຕັ້ງຂອງໂຮງໝໍເບິ່ງແມສິຣິ. ເຮືອນຄົວຕັ້ງຢູ່ຊີ່ກັບຫ້ອງສະໝຸດເກົ່າມັນກໍເລີຍວ່າໄໝ້ຈິນໝົດ ຈົນບໍ່ມີຫຍັງເຫຼືອເລີຍນອກຈາກຂີ້ເຖົ່າກັບຄວາມຊົງຈຳ."

ຂະນະທີ່ທ່ານໝໍເຫວີຍເລື່ອນຫູຟັງຂອງເຂົາໄປທີ່ໜ້າເອິກ ແລະຫຼັງຂອງສິຣິ, ຄົນເຈັບກໍສູບລົມຫັນໃຈເຂົ້າປອດບາດເລິກໆ ທີ່ສຸດເທົ່າທີ່ຈະເຮັດໄດ້ ແຕ່ຈິດໃຈຂອງເຂົາຊໍ້າພັດຄິດນຳແຕ່ຫ້ອງສະໝຸດພຸ້ນຫຼາຍກວ່າ. ປິດສະໜາຊິ້ນນີ້ຈະຕໍ່ເຂົ້າກັບພາບໃຫຍ່ໄດ້ແນວໃດ?"

ປະມານແປດໂມງ ສິຣິກໍມີການຢ້ຽມຢາມທີ່ໜ້າປະທັບໃຈ. ນາງວິງປ່ອນຄໍເຂົ້າມາທາງຊ່ອງປະຕູ ແລ້ວກໍຍິ້ມ.

"ນາງວິງເປັນຫຍັງບໍ່ເຂົ້າມາໃນພີ້?"

ນາງຍັງບໍ່ເຂົ້າໄປ. "ຍັງແວ່ບໍ່ໄດ້ເທື່ອທ່ານໝໍສິຣິ ເປັນແນວໃດແລ້ວ?"

"ກໍຄ່ອຍດີຂຶ້ນຢູ່."

"ຂ້ອຍຟ້າວໄປວຽກ ປານນີ້ຄົງຢູ່ຫ້ອງການແລ້ວລະ."

"ເຈົ້າບໍ່ຢາກໄປແວ່ຫ້ອງການຂົນຂວາຍກ່ອນບໍ?"

"ຫ້ອງການຂົນຂວາຍຫວາ? ໄປເຮັດຫຍັງລະ?"

"ຂ້ອຍກໍບໍ່ຢາກເວົ້າຫຍັງດອກ ແຕ່ກໍຄິດວ່າມັນຄົງບໍ່ໄດ້ເປັນພິດເປັນໄພຫຍັງ. ມື້ກ່ອນຫັ້ນທ້າວເກດແກ້ວເຫັນເຈົ້າຢູ່ກົມສາມັນສຶກສາ ພໍກັບອອກມາກໍເຕັ້ນຢັອກໆ ຄືກັບໂຕໝູ ທັງໄດ້ເລົ່າເລື່ອງສາວຄົນງາມສະດຸດຕາທີ່ເຂົາໄດ້ເຫັນໃຫ້ພວກເຮົາຟັງກັນທຸກຄົນ. ເຂົາຖາມຂ້ອຍວ່າຮູ້ຈັກເຈົ້າ ຫຼືບໍ່. ຕອນເຂົາຖາມຫັ້ນ ສີໜ້າຂອງເຂົາແຈ້ງສະຫວ່າງເປັນປະກາຍເລີຍແຫຼະ. ຂ້ອຍອາດບໍ່ແມ່ນຊ່ຽວຊານດ້ານນີ້ ແຕ່ກໍພໍບອກໄດ້ວ່າເຂົາຫຼົງສະເໜເຈົ້າແລ້ວ."

"ຫຼົງສະເໜຂ້ອຍຫວາ? ໂອຍຢ່າເວົ້າບ້າຫຼາຍເທາະ." ນາງບໍ່ສາມາດຢຸດຮອຍຍິ້ມທີ່ປາກົດຢູ່ມຸມປາກໄດ້. "ແນວໃດກໍຕາມແຕ່, ຂ້ອຍມານີ້ພ້ອມກັບແຟນໆ ທີ່ຄັ່ງໄຄ້ທ່ານໝໍນຳໃດນິ. ມະໂນລີກັບນ້ອງສອງຄົນຢາກມາເບິ່ງອາການຂອງທ່ານໝໍ."

"ໂອຊ່າງວິເສດແທ້. ພວກເຂົາເປັນແນວໃດລະ?"

"ຂ້ອຍຄິດວ່າເດັກນ້ອຍຍັງທຳໃຈບໍ່ໄດ້ກັບເລື່ອງທີ່ເກີດຂຶ້ນ ພວກເຂົາໄດ້ແຕ່ງຽບບໍ່ເວົ້າບໍ່ຈາຫຍັງ."

"ສົ່ງພວກເຂົາເຂົ້າມາໃນພີ້."

ເມື່ອນາງວິງອອກໄປ ເດັກທັງສາມກໍເກາະກັນເຂົ້າມາເປັນແຖວປານຕ່ອງໂສ້ ໂດຍແມ່ນມະໂນລີເປັນຜູ້ນຳໜ້າຂະບວນ. ຈັງຫວະນັ້ນພໍດີສິຣິກໍໄອໂຂກຂຶ້ນພ້ອມບາດເຮັດໃຫ້ພວກເດັກໆ ພາກັນຖອຍກັບໄປຢືນອີງຂອບຝາຫ້ອງພ້ອມຈ້ອງແນມເບິ່ງເຂົາ. ເມື່ອເຊົາໄອແລ້ວ, ສິຣິກໍຍິ້ມ ແລ້ວເອີ້ນເອົາພວກເຂົາເຂົ້າໄປຫາຕົນ.

"ເປັນແນວໃດສາວໆ ຊ່າງດີອີ່ຫຼີທີ່ມາຢາມລຸງ. ພວກຫຼານພາກັນໄປຢູ່ໃສລະ?"

ມະໂນລີເຮັດໜ້າທີ່ເປັນໂຄສົກ. "ເຮືອນປ້າສຸກ, ລາວດີກັບພວກເຮົາຫຼາຍ ລາວຖ້າຢູ່ນອກ. ລຸງຢາກພົບກັບລາວບໍ?"

"ບໍ່ດອກ. ລຸງຢາກພົບພວກຫຼານຫຼາຍກວ່າ. ລຸງເປັນຫ່ວງພວກຫຼານທຸກຄືນ."

"ປ້າສຸກເວົ້າວ່າ ລຸງກ້າຫານຫຼາຍທີ່ເຂົ້າໄປຄົ້ນຫາແມ່."

"ມະໂນລີ, ຫຼານຮູ້ບໍວ່າຕອນນີ້ແມ່ຂອງຫຼານຢູ່ໃສ?"

"ໂດຍຮູ້."

"ຢູ່ໃສລະ?"

"ຢູ່ວັດ."

"ຄົນນັ້ນບໍ່ແມ່ນແມ່ຫຼານດອກ."

"ແມ່ນແມ່ຫຼານຫັ້ນລະ."

"ບໍ່ແມ່ນດອກ. ສິ່ງທີ່ຢູ່ໃນວັດຫັ້ນເປັນພຽງຮ່າງທີ່ແມ່ຂອງຫຼານອາໄສຢູ່ຊື່ໆ ດອກ." ນ້ອງສາວຜູ້ນ້ອຍສຸດຫົວຄຶກຄັກຂຶ້ນ ສ່ວນມະໂນລີເບິ່ງຄືວ່າກຳລັງໃຈຮ້າຍ.

"ແມ່ນແມ່ຫຼານແທ້."

ສິຣິຍື່ນມືໄປຈັບເອົາມືຂອງມະໂນລີແລ້ວມາແປະໃສ່ກັບໃບໜ້າຂອງຕົນ.

"ນີ້ແມ່ນຜິວໜັງ, ນີ້ແມ່ນເສັ້ນຜົມ ສິ່ງທັງໝົດທີ່ຢູ່ສ່ວນນອກນີ້ບໍ່ແມ່ນລຸງດອກ ມັນເປັນພຽງຮ່າງຊື່ໆ. ມັນຄ້າຍຄືກັບເຈ້ຍຫໍ່ເຂົ້າໜົມຫັ້ນແຫຼະ ເຊິ່ງເຈ້ຍຫໍ່ເຂົ້າໜົມກໍບໍ່ແມ່ນເຂົ້າໜົມເດລະ. ຕົວຕົນທີ່ແທ້ຈິງຂອງພວກເຮົາແມ່ນຢູ່ໃນຮ່າງທີ່ເປັນເປືອກຫຸ້ມຫໍ່ພຽງພາຍນອກ. ທຸກຄວາມຮູ້ສຶກຂອງພວກເຮົາ ບໍ່ວ່າຍາມໃຈດີ ຫຼືຍາມໃຈຮ້າຍ. ທຸກຄວາມນຶກຄິດ ບໍ່ວ່າຈະເປັນຄວາມສະຫຼຽວສະຫຼາດ, ຄວາມຮັກ ... ຊຸມນີ້ຕ່າງຫາກທີ່ເປັນຕົວຕົນຂອງຄົນເຮົາ.

"ມັນຖືກເອີ້ນວ່າວິນຍານ. ວິນຍານຂອງແມ່ຫຼານພຽງແຕ່ຫຼຸດລອຍອອກໄປແລ້ວຖິ້ມຮ່າງປະໄວ້. ລຸງຍັງໄດ້ພົບກັບວິນຍານຂອງແມ່ຫຼານຕອນເຂົ້າໄປໃນຫ້ອງຄືນມື້ນັ້ນ."

"ມັນຄືກັບຜີຫັ້ນບໍ່?"

"ບໍ່ຄືກັນ. ຜີເປັນພຽງເລື່ອງທີ່ຄົນສ້າງຂຶ້ນມາໃຫ້ເຊື່ອກັນເອງຊື່ໆ. ສ່ວນວິນຍານຂອງແມ່ຫຼານແມ່ນຄວາມຈິງ. ບາງຄົນກໍເຫັນວິນຍານ ແຕ່ຄົນສ່ວນໃຫຍ່ກໍບໍ່ເຫັນ."

"ລຸງໄດ້ລົມກັບລາວບໍ່?"

"ໄດ້ລົມ, ລາວເປັນຫ່ວງຫຼາຍ."

"ເປັນຫຍັງ?"

"ລາວເປັນຫ່ວງຢ້ານວ່າພວກຫຼານບໍ່ຮັກລາວ ເພາະບາງເທື່ອລາວກໍຮ້າຍພວກຫຼານ. ແຕ່ສິ່ງທີ່ລາວຢາກໃຫ້ລຸງບອກພວກຫຼານກໍແມ່ນ ການທີ່ລາວຮ້າຍນັ້ນກໍຍ້ອນວ່າຮັກ."

"ລາວເວົ້າແບບນັ້ນຫວາ? ເວົ້າແທ້ຊັ້ນບໍ່?"

"ລາວເວົ້າແທ້ ແລະລາວກໍຍັງບອກວ່າ ລາວຮັກພວກຫຼານທຸກຄົນ ຮັກຫຼາຍອີກລາວຈະຮັກພວກຫຼານຕະຫຼອດໄປ."

ດວງຕາຂອງມະໂນລີອາບຟາຍໄປດ້ວຍນ້ຳຕາ ແລະແລ້ວນາງກໍເຜີຍຮອຍຍິ້ມອອກມາ. ສຳລັບນ້ອງຂອງນາງສອງຄົນນັ້ນຄົງຈະເປັນການຍາກທີ່ຈະເຂົ້າໃຈໄດ້ ສະນັ້ນທັງສອງຈິ່ງໄດ້ແຕ່ພາກັນຢືນເສີຍຢູ່.

ເດັກຜູ້ນ້ອຍກວ່າປ່ຽນຫົວຂໍ້ສົນທະນາ. "ລຸງສີຣິ ຫຼານເກືອບຈະໄປໂຮງຮຽນໄດ້ແລ້ວໃດ໋. ເບິ່ງແມນີ້." ນາງເອື້ອມມືເບື້ອງຂວາຂ້າມມາທາງຫົວທັງພະຍາຍາມໃຫ້ປາຍມືແຕະໃສ່ກັບຫູຂ້າງຊ້າຍ ມັນເປັນວິທີທີ່ພວກເຂົາເຄີຍໃຊ້ໃນຕ່າງແຂວງ. ຖ້າປາຍມືແຕະເຖິງຫູ ສະແດງວ່າສາມາດໄປໂຮງຮຽນໄດ້ແລ້ວ.

"ໂອ, ເກືອບແຕະເຖິງຫູແລ້ວນິກ. ເປັນຕາເສຍດາຍທີ່ຫຼານບໍ່ມີຫູຄືກັບກະຕ່າຍ ຄັນຊັ້ນແມ່ນໄປໂຮງຮຽນໄດ້ລະເດນີ້." ນາງຫົວສະອຶກສະອ້ອຍ ແລ້ວໂດດຂຶ້ນໄປເທິງຕຽງຂອງສີຣິ.

ເມື່ອຕຸ້ຍກັບມາແຕ່ເບິ່ງແມ່ ນາງກໍພົບກັບເດັກນ້ອຍສາມຄົນກຳລັງນອນຟັງສີຣິເລົ່າເລື່ອງກ່ຽວກັບພວກວິນຍານທີ່ສິງຢູ່ຕາມຕົ້ນໄມ້ໃນຄຳມ່ວນ.

"ອະຮາ ພາກັນເຮັດຫຍັງຢູ່ນໍ?"

"ເຈົ້າແມ່ນນາງພະຍາບານແມ່ນບໍ?" ນິກຖາມ.

"ບໍ່ແມ່ນ. ຂ້ອຍແມ່ນໂຕແຂ້ທີ່ນຸ່ງຊຸດນາງພະຍາບານ."

"ເຈົ້າມາຍື່ນໃບສະໝັກແມ່ນບໍ?" ມະໂນລີຖາມ.

"ໃບສະໝັກຫຍັງທີ່ຮັກ?"

"ຈະມາສະໝັກເປັນເມຍອີກຄົນຂອງລຸງສີຣິບໍ?"

ຕຸ້ຍທຳທ່າເຮັດກະອຶກກະອັກ ພ້ອມທຳທ່າຮາກອອກມາສຽງດັງ. ເມື່ອປ້າສຸກກັບຄືນຍາມເຂົ້າມາກໍພໍດີເຫັນຕຸ້ຍກຳລັງກົ້ມໜ້າລົງໃສ່ກັບພື້ນ ພວກເດັກນ້ອຍໄດ້ແຕ່

ພາກັນຫົວຈົນໄສ້ຂົດໄສ້ໂຂຢູ່ເທິງຕຽງ ສ່ວນສີຣິໄດ້ແຕ່ໄອຄໍ່ອກໆ ຈົນຮ່າງກາຍ ເໜັງຕີງເພືອບໆ.

ເມື່ອທຸກຄົນກັບໄປໝົດແລ້ວ, ສີຣິກໍພະຍາຍາມໂທລະສັບອີກຄັ້ງ ແທນທີ່ເຂົາຈະໄດ້ຍິນສຽງຂອງພະນັກງານຈາກໜ່ວຍງານຮັກສາຄວາມໝັ້ນຄົງ ແຕ່ສີຣິຊໍ້າພັດໄດ້ຍິນສຽງພະນັກງານຂອງໂຮງໝໍແທນ.

"ສະບາຍດີ. ທະຫານຜູ້ນັ້ນໄປໃສລະ?"

"ເຂົາໄປແລ້ວເດ. ຂ້ອຍຄິດວ່າຄົງບໍ່ມີເຫດຜົນຫຍັງທີ່ເຂົາຕ້ອງຢູ່ ເພາະເຂົາໄດ້ຮັບສາຍໂທລະສັບທີ່ເຂົາຕັ້ງຕາລໍຖ້າແລ້ວໆ."

"ສາຍມາແຕ່ໃສ?"

"ສາຍມາແຕ່ຫວຽດນາມ. ຕອນມີສາຍໂທເຂົ້າມານັ້ນກໍແມ່ນຕອນແລງມື້ ວານຕອນນັ້ນຂ້ອຍພໍດີກັບບ້ານ ເປັນສາຍໂທເຂົ້າຈາກທ່ານໝໍຫງຽນຫຍັງບຸປະມານນີ້ແຫຼະ. ທ່ານຈື່ບໍ່ໄດ້ບໍ?"

"ຂ້ອຍບໍ່ໄດ້ຮັບສາຍຈາກໃຜເລີຍນະ."

"ແປກແທ້. ທະຫານຄົນນັ້ນບອກວ່າຈະໂອນສາຍໃຫ້."

"ເຂົາບໍ່ໄດ້ໂອນສາຍມາທາງນີ້ໂດຍກົງ. ໜ້າສົນໃຈແທ້ ເອີຟ້າວກ່ອນ, ຊ່ວຍຕໍ່ສາຍໄປທີ່ຫ້ອງການໃຫຍ່ຕຳຫຼວດໃຫ້ຂ້ອຍແດ່ໄດ້ບໍ? ແລະຂ້ອຍຢາກໃຫ້ເຈົ້າຊ່ວຍຫາເລກໂທຕິດຕໍ່ພະແນກຊັນນະສູດສົບຂັ້ນສູນກາງປະຈຳຮາໂນ່ຍໃຫ້ແດ່."

"ອັນນັ້ນຢູ່ຫວຽດນາມພຸ້ນໃດ."

"ເທົ່າທີ່ເຫັນຄັ້ງຫຼ້າສຸດ ມັນຍັງຢູ່ຫັ້ນແນ່ນອນ."

"ທ່ານໝໍຕ້ອງໄດ້ປະກອບຂໍ້ມູນໃຫ້ຄົບສີ່ແຜ່ນກ່ອນ ຂ້ອຍຈິ່ງສາມາດໃຫ້ທ່ານໂທໄປຕ່າງປະເທດໄດ້ ຈາກນັ້ນຜູ້ອຳນວຍການຈິ່ງໄດ້ເຊັນອະນຸມັດ ແລະ ..."

"ທຸກຢ່າງທີ່ຂ້ອຍຢາກໄດ້ຫັ້ນແມ່ນເບີໂທ. ສ່ວນເລື່ອງລາຍເຊັນຫັ້ນຄ່ອຍວ່າກັນຕາມຫຼັງກ່ອນ ແລ້ວຊ່ວຍສົ່ງຄົນໄປນຳເອົານ້ອງກິ່ງ ຊ່າງເຕັກນິກປະຈຳຫ້ອງຊັນນະສູດສົບມາພົບຂ້ອຍດ່ວນໄດ້ບໍ?"

ໃນທີ່ສຸດສີຣິກໍໄດ້ລົມກັບສາລະວັດສຽງແຫບຫ້າວຄົນເດີມເຊິ່ງເຂົາເຄີຍລົມກ່ອນໜ້ານີ້ທີ່ສູນບັນຊາການຕຳຫຼວດ.

"ສະບາຍດີທ່ານໝໍສີຣິ ຂ້ອຍແມ່ນສາລະວັດໄຕ. ພາຍຫຼັງທີ່ພວກເຮົາໄດ້ລົມກັນມື້ວານນີ້ ຂ້ອຍຈິ່ງຫາກໍຮູ້ວ່າທ່ານໝໍເປັນໃຜ ເຊິ່ງທ່ານແມ່ນທ່ານໝໍຊັນນະສູດສົບແມ່ນບໍ? ຂ້ອຍຕັ້ງໃຈວ່າຈະສົ່ງຄົນໄປເບິ່ງວ່າທ່ານໝໍໄປເຮັດຫຍັງຢູ່ຫັ້ນ ຂ້ອຍເກງວ່າຄົນທີ່ທ່ານຢາກພົບຍັງບໍ່ທັນເຂົ້າຫ້ອງການເທື່ອ."

"ບໍ່ເປັນຫຍັງດອກ ຂ້ອຍພຽງສົງໄສໃນສິ່ງທີ່ເຈົ້າເວົ້າມື້ວານນີ້ວ່າໂພສີບໍ່ມີໂຕະເຮັດວຽກແມ່ນບໍ?"

"ແມ່ນແລ້ວ."

"ເປັນໄປໄດ້ແນວໃດທີ່ຕຳຫຼວດສືບສວນຂອງເຈົ້າບໍ່ມີໂຕະເຮັດວຽກປະຈຳ?"

"ອໍ ຄວາມຈິງແລ້ວ ເຂົາບໍ່ແມ່ນເຈົ້າໜ້າທີ່ຂອງພວກເຮົາດອກ."

"ບໍ່ແມ່ນຊັ້ນຫວາ?"

"ບໍ່ແມ່ນ. ຄ້າຍກັບວ່າເຂົາໄດ້ຮັບມອບໝາຍໃຫ້ມາປະຕິບັດພາລະກິດພິເສດບາງຢ່າງ ເຂົາລົງມາແຕ່ເມືອງວຽງໄຊເພື່ອສືບຄະດີບາງຢ່າງ ເຂົາເຂົ້າມາຫ້ອງການເປັນຊ່ວງແຕ່ສ່ວນໃຫຍ່ເຂົາຈະວຸ້ນແຕ່ຢູ່ນອກຫຼາຍກວ່າ."

"ມາແຕ່ວຽງໄຊຫວາ?"

"ມີປັນຫາຫຍັງບໍນໍ?"

"ບໍ່ມີຫຍັງດອກ. ພຽງແຕ່ເຂົາບໍ່ໄດ້ບອກເລີຍວ່າເຂົາມາແຕ່ທາງພາກເໜືອ."

"ທ່ານຈະບໍ່ຮູ້ຂໍ້ມູນຫຍັງຈາກຄົນຜູ້ນັ້ນດອກ ເຂົາເກືອບຈະບໍ່ປາກບໍ່ເວົ້າກັບໃຜເລີຍ. ໝໍຫ່ານັ້ນມັນມັກປະພຶດຕົວລຶກລັບ, ຂໍໂທດເດີທີ່ເວົ້າແບບນີ້."

"ບໍ່ດອກ. ເອີ, ແນວໃດກໍຂອບໃຈເດີ."

"ບໍ່ເປັນຫຍັງ."

ສີຣິວາງຫູໂທລະສັບລົງຄ່ອຍໆ. ກິ່ງມາເຖິງແລ້ວ ເຂົາຢືນໂຍກຕົວໄປມາເລັກໜ້ອຍຢູ່ຂ້າງປະຕູ. ສີຣິເງີຍໜ້າຂຶ້ນເບິ່ງ ແຕ່ຊ້ຳພັດລືມໄປຊົ່ວຂະນະວ່າເປັນຫຍັງ ກິ່ງຈິ່ງຢືນຢູ່ບ່ອນນັ້ນ.

"ນ້ອງກິ່ງບໍ? ໂອ ແມ່ນໃດເນາະ ວ່າຈະໃຫ້ນ້ອງເອົາຈົດໝາຍສະບັບ ນີ້ ..." [ເຂົາກົ້ມຂຽນຈົດໝາຍຂະນະທີ່ກຳລັງເວົ້າຢູ່] "... ແລ້ວເອົາໄປສົ່ງໃຫ້ສະຫາຍສີວິໄລຢູ່ຫ້ອງການສະພາ ນ້ອງເຄີຍໄປບ່ອນນັ້ນມາແລ້ວແຫຼະ."

"ໂດຍເຄີຍໄປແລ້ວ."

"ຢ່າເອົາຈົດໝາຍສະບັບນີ້ໃຫ້ໃຜເດັດຂາດ ແມ່ນແຕ່ຈະຖືກຈັບມາດຶງເລັບມືເລັບຕີນອອກກໍຢ່າໄດ້ຍອມ. ນ້ອງເຂົ້າໃຈບໍ?"

"ເຂົ້າໃຈ." ກິ່ງພິນລົມຫັນໃຈຟືດຟາດ ແລ້ວອອກຈາກຫ້ອງໄປພ້ອມກັບສຽງຫົວອີກໆ.

"ຖາມປະຕິບັດການຢູ່ເມືອງວຽງໄຊຊັ້ນບໍ? ເປັນໄປໄດ້ແນວໃດ?"

ເວລາລ່ວງເລີຍໄປຈົນເຖິງຕອນບ່າຍ ສີວິໄລຈິ່ງມາຮອດພ້ອມກັບຊາຍອາວຸໂສຄົນໜຶ່ງທີ່ມີທ່າທາງແຂງແຮງເຊິ່ງສວມຊຸດອັນຍັບຍູ່ ທ່າທາງຊາຍທັງສອງຄືຮູ້ ສຶກເມື່ອຍອ່ອນຄ້າຍກັບວ່າພວກເຂົາບໍ່ໄດ້ນອນໝົດຄືນ.

“ສິຣິຮູ້ສຶກໄດແດ່ແລ້ວບໍ?”

“ສະຫາຍໄດ້ຮັບຈົດໝາຍຂອງເຮົາ ຫຼືບໍ່?”

“ຍັກກຸມພັນນ້ອຍປະຈຳຫ້ອງເກັບສິບຂອງສະຫາຍເກືອບຖືກຍິງຕາຍເພາະເອົາຈົດໝາຍໄປສົ່ງນີ້ແຫຼະ. ທະຫານຄົນຍາມກັ້ນບໍ່ໃຫ້ເຂົາຜ່ານປະຕູ. ສະນັ້ນ, ເຂົາຈຶ່ງຢືນຈ່ອງຂອບຮົ້ວພ້ອມຮ້ອງຊື່ຂອງເຮົາບັກດັງໆ ຈົນເຮົາຍ່າງອອກມາສ່ອງເບິ່ງທາງໜ້າປະຕູປ່ອງຢ້ຽມ.”

“ເຂົາເຮັດຫຼ້ອນໜ້າທີ່ຕາມມອບໝາຍໄດ້ດີພໍຄວນຊັ້ນນະ.” ສິຣິເລີ່ມໄອຈົນຕົວສັ່ນຖ້າຈະວ່າໄປແລ້ວ ອາການຂອງເຂົາຂີ້ຮ້າຍລົງກວ່າມື້ຜ່ານມາຊ້ຳອີກ.

“ສິຣິ ນີ້ແມ່ນດົງວັນ, ຜູ້ບັນຊາການທະຫານສູງສຸດປະຈຳໜ່ວຍງານຮັກສາຄວາມໝັ້ນຄົງ ເຂົາຢາກພົບສະຫາຍກ່ອນທີ່ສະຫາຍຈະຫັນໃຈບໍ່ອອກແລ້ວຂາດ ໃຈຕາຍກ່ອນ.”

“ເບິ່ງຄືວ່າຈະມາຕົງເວລາເປະເລີຍລະຊັ້ນນະ ສະບາຍດີບໍທ່ານຜູ້ບັນຊາການ?”

“ຂ້ອຍຮູ້ສຶກສັບສົນເລັກໜ້ອຍທ່ານໝໍສິຣິ ທັງເປັນຊ່ວງທີ່ຂ້ອຍຮູ້ສຶກລຳບາກໃຈບໍ່ໜ້ອຍເລີຍລະ. ພົນຕົງາຄຳ ຄືໜຶ່ງໃນເພື່ອນຮ່ວມງານທີ່ຂ້ອຍໄວ້ໃຈໄດ້ໃນຫຼາຍປີມານີ້.”

“ພວກເຮົາຈັບຕົວເຂົາໄດ້ແລ້ວແມ່ນບໍ?” ສິຣິຊີກກຳປັ້ນກາງອາກາດ ຂະນະທີ່ສີວິໄລຊູຫົວໂປ້ມື ແຕ່ດົງວັນເຫັນວ່າມັນຍັງບໍ່ແມ່ນໄຊຊະນະເທື່ອ.

“ຕອນທີ່ເພື່ອນຂອງທ່ານ, ສະຫາຍສີວິໄລໄປພົບຂ້ອຍກ່ຽວກັບເລື່ອງນີ້ ທຳອິດຂ້ອຍຮອດບໍ່ຢາກເຊື່ອໃນສິ່ງທີ່ເຂົາເວົ້າແມ່ນແຕ່ຄຳດຽວ. ແລະຍິ່ງເຂົາບໍ່ຍອມເປີດ ເຜີຍແຫຼ່ງທີ່ມາຂອງຂໍ້ມູນຍິ່ງເຮັດໃຫ້ຂາດຄວາມໜ້າເຊື່ອຖືເພີ່ມຂຶ້ນອີກ ແມ່ນແຕ່ຕອນເຂົາເລີ່ມຈະຫາຫຼັກຖານມາຢືນຢັນຂ້ອຍກໍຍັງບໍ່ຍອມເຊື່ອ ແຕ່ສີວິໄລກໍເປັນຄົນລະອຽດລະອໍເຂົາລົງມືກວດສອບແຟ້ມເອກະສານຕ່າງໆ ເພື່ອຢືນຢັນຄວາມຖືກຕ້ອງ ທັງຍັງທຽວປຸກຄົນຜູ້ນັ້ນຜູ້ນີ້ໃຫ້ຕື່ນຂຶ້ນມາໃຫ້ປາກຄຳຕະຫຼອດຄືນຈົນຊອດແຈ້ງ.”

“ສຸດຍອດຫຼາຍອ້າຍ.”

ສີວິໄລອົດໃຈລໍຖ້າບໍ່ໄຫວທີ່ຈະຊີ້ແຈງເພີ່ມຕື່ມ. “ເຫດການທຸກຢ່າງທີ່ເກີດຂຶ້ນມັນຊ່າງບັງເອີນກ່ຽວຂ້ອງເກາະກ່າຍກັນເກີນໄປ ພົນຕົງາຄຳໄດ້ຮັບຄຳສັ່ງໃຫ້ໄປປະຈຳການຢູ່ຫ້ອງບັນຊາການໃຫຍ່ຕອນທີ່ຣັອກຢູ່ຫັ້ນພໍດີ. ເຂົາຮູ້ລາຍລະອຽດທຸກຢ່າງກ່ຽວກັບປະຕິບັດການລັບຂອງຫວຽດນາມ. ຕອນທີ່ທຣັນ, ທຣັນ ກັບຣັອກເດີນທາງມານີ້ໜ່ວຍງານຂອງເຂົາກໍມີໜ້າທີ່ຮັບຜິດຊອບເລື່ອງການຮັກສາຄວາມປອດໄພ ເຂົາມີສິດໃນການເຂົ້າເຖິງລະບົບການສື່ສານທັງໝົດ.

“ແລະຖ້າຫາກຫຼັກຖານພະຍານແວດລ້ອມຂຸມນັ້ນຍັງບໍ່ມີເຫດຜົນພຽງພໍທີ່ຈະຈັບເຂົາເຂົ້າຄຸກ ແລ້ວໂຍນກະແຈຖິ້ມແລ້ວ ລອງເດົາເບິ່ງດູວ່າແມ່ນໃຜເປັນຄົນສຳຫຼວດ

ເສັ້ນທາງບິນໄປຍັງດອນດັດສ້າງໃນເຂື່ອນນ້ຳງື່ມ? ພະນັນໄດ້ເລີຍວ່າທ່ານເຈົ້າ ເມືອງຢູ່ຫັ້ນສາມາດຊີ້ຕົວໄດ້ແບບບໍ່ມີຜິດພາດແນ່ນອນ."

"ແລະຕອນນີ້ ..." ຜູ້ບັນຊາການກ່າວຕື່ມ. "... ພວກເຮົາກໍມີຫຼັກຖານວ່າ ເຂົາເປັນຄົນສັ່ງໃຫ້ໂອນສາຍທີ່ໂທຈາກຫວຽດນາມໄປຫ້ອງເຮັດວຽກຂອງເຂົາ ແຕ່ພວກເຮົາບໍ່ຮູ້ວ່າຫົວຂໍ້ສົນທະນານັ້ນເວົ້າກັນກ່ຽວກັບຫຍັງ."

"ຈັ່ງຊັ້ນແຫຼວພວກເຮົາຈິ່ງຢາກໃຫ້ສະຫາຍໂທໄປຮາໂນ່ຍ." ສີວິໄລຍົກຫູໂທລະສັບຂຶ້ນ.

"ຄິດວ່າພະນັກງານສາວທີ່ຮັບໂທລະສັບຂອງໂຮງໝໍຈະຮູ້ເບີໂທຂອງສະຖາບັນນິຕິເວດແລ້ວ ແຕ່ເຮົາກໍພໍຮູ້ຢູ່ວ່າຫງຽນຫົງຢາກຈະບອກຫຍັງກັບເຮົາ."

ການໂທຕ້ອງໄດ້ເສຍເວລາດົນເປັນຊາດກວ່າຈະຕໍ່ສາຍໄປຫາເພື່ອນຮ່ວມງານຂອງເຂົາໄດ້ນັ້ນ, ສີຣິຈຳຕ້ອງໄດ້ລົມກັບຄົນຫວຽດນາມຫຼາຍຕໍ່ຫຼາຍຄົນຈົນເກີດຄວາມອິນລະວົນວຸ້ນວາຍຫຼາຍເຕີບ.

"ສະບາຍດີ ແມ່ນຫງຽນຫົງກຳລັງເວົ້າ."

"ທ່ານໝໍຫງຽນຫົງບໍ? ນີ້ແມ່ນສີຣິເດີ້." ມີການຢຸດສະຫງັກຊົ່ວຄາວ. "ຫງຽນຫົງຟັງຢູ່ບໍ?"

"ກະດຽວວ່າມີຄົນບອກວ່າເຈົ້າຕາຍແລ້ວເດນີ!"

"ຂ້ອຍຍັງບໍ່ທັນຕາຍ ແລງວານນີ້ເຈົ້າໄດ້ໂທຫາຂ້ອຍແມ່ນບໍ່?"

"ໂອຍເທວະດາຟ້າແຖນຂ້ອຍເອີຍ, ຂ້ອຍລະຕົກໃຈໝົດ. ແມ່ນແຫຼະຂ້ອຍໂທຫາເຈົ້າແຕ່ສາຍຖືກໂອນໄປທີ່ ... ເອີ້ນວ່າຫຍັງນະ? ເອີໜ່ວຍງານຮັກສາຄວາມໝັ້ນຄົງນີ້ແຫຼະ."

"ໃຜຮັບສາຍ?"

"ເອີ ເຂົາກະບອກຊື່ຢູ່ໃດ໋ ຊື່ຄົນລາວຂອງພວກເຈົ້າລະຟັງຄ້າຍຄືກັນເກືອບໝົດ ແຕ່ເຂົາບອກວ່າເຂົາເປັນຜູ້ບັນຊາການ."

"ພະນັນໄດ້ເລີຍວ່າເຂົາຕ້ອງເວົ້າແນວນັ້ນ ແລະເຂົາກໍບອກເຈົ້າອີກວ່າຂ້ອຍຖືກລະເບີດຂ້າຕາຍແມ່ນຕິ."

"ແມ່ນແຫຼະ ເຂົາບັນທຶກລາຍລະອຽດທຸກຢ່າງທີ່ຂ້ອຍຢາກບອກເຈົ້າ ທັງບອກອີກວ່າຂໍ້ມູນຊຸມນັ້ນເປັນປະໂຫຍດຢ່າງຍິ່ງ ເຂົາຍັງບອກເບີໂທສາຍຕົງໃຫ້ຂ້ອຍອີກ ເພື່ອວ່າມີລາຍລະອຽດເພີ່ມເຕີມກໍພໍຈະໄດ້ໂທຫາເຂົາໂດຍກົງ."

"ດີຫຼາຍ. ນັ້ນຄືເຫຼັກຕະປູດອກສຸດທ້າຍທີ່ຈະຕອກຝາໂລງເຂົາໃຫ້ແໜ້ນ. ຜູ້ຊາຍທີ່ເຈົ້າລົມນຳທາງໂທລະສັບມື້ວານນີ້ຫັ້ນກໍແມ່ນຄົນດຽວກັນກັບຜູ້ທີ່ຮ້ອກເດີນທາງມາຊີ້ຕົວຫັ້ນແຫຼະ."

"ບໍ່ໜ້າເຊື່ອ!"

"ຂ້ອຍຈະຂຽນທຸກຢ່າງແລ້ວສົ່ງໃຫ້ອ່ານດອກ. ແຕ່ກ່ອນຈະວາງສາຍ ຊ່ວຍບອກທຸກຢ່າງທີ່ເຈົ້າພົບກ່ອນໄດ້ບໍລະ."

ສິບນາທີຕໍ່ມາ ສິຣິກໍວາງສາຍ. ເຂົາແນມເບິ່ງຊາຍສອງຄົນຢູ່ຂ້າງຕຽງແລ້ວກໍເຜີຍຮອຍຍິ້ມປາກົດເທິງໃບໜ້າ.

"ຢ້ຽມຫຼາຍ, ຍອດຢ້ຽມອີ່ຫຼີ. ຄົນພວກນັ້ນເກືອບໄຫວຕົວທັນແລ້ວນະ ແຕ່ກໍມາໂຊກຮ້າຍຍ້ອນພໍ້ຄົນແບບເຮົາກັບຫງຽນຫົ່ງ."

"ເອົາເທາະນ້ອງຊາຍ. ເລົ່າໃຫ້ກັນຟັງແດ່ຕີລະ."

"ເຮົາເຫັນວ່າເຫດການໜ້າຈະເປັນແບບນີ້. ພົນຕີງາຄຳໄດ້ຮັບຂ່າວລັບຈາກຮາໂນ່ຍທີ່ໄດ້ລາຍງານວ່າ ຣັອກພ້ອມກັບທີມງານຂອງເຂົາຈະເດີນທາງມາຊີ້ຕົວກະ ບົດທີ່ຣັອກເຫັນໃນມື້ທີ່ເກີດເຫດການສັງຫານໝູ່. ງາຄຳຈຶ່ງຫາທາງສະກັດກັ້ນບໍ່ໃຫ້ພວກເຂົາເດີນທາງໄປຮອດວຽງຈັນ ດັ່ງນັ້ນເຂົາຈຶ່ງສັ່ງໃຫ້ແກ໊ງໝູປ່າດຳດັກໂຈມຕີລົດຈີບຄັນນັ້ນກ່ອນ ເຂົາຮູ້ຈັກເສັ້ນທາງ ແລະຈຸດປະຈຳການຂອງທະຫານຍາມແຖວນັ້ນເປັນຢ່າງດີສະນັ້ນ, ມັນຈຶ່ງບໍ່ແມ່ນເລື່ອງຍາກສຳລັບເຂົາ.

"ພວກນັ້ນພົບຄົນຫວຽດນາມທັງສາມ ເຊິ່ງພວກມັນມີໂອກາດທີ່ຈະເລືອກຂ້າປິດປາກ ແລ້ວຖິ້ມສົບທັງສາມໄວ້ກໍໄດ້ ແຕ່ພັດມີຄົນໃດຄົນໜຶ່ງສະເໜີຄວາມຄິດທີ່ດີກວ່ານັ້ນອີກ."

ຄຳເວົ້າຂອງສິຣິຫຼູ່ຫຼັ່ງອອກມາຈາກປາກໄວເກີນໄປໂດຍບໍ່ທັນໄດ້ຢຸດພັກເລີຍ ເນື່ອງຈາກມີອາການຕື່ນເຕັ້ນແບບບອກບໍ່ຖືກ ຈົນເຂົາເອງກໍເກືອບຫັນໃຈນຳບໍ່ທັນຈຶ່ງສູບເອົາອົກຊີແຊນເຂົ້າປອດສອງສາມຄັ້ງ ພ້ອມຖືໜ້າກາກໄວ້ໃນມືເພື່ອກຽມ ພ້ອມໃຊ້ງານ.

"ຖືວ່າເປັນໂອກາດອັນດີໃນການສ້າງຄວາມປັ່ນປ່ວນເລັກໆ ນ້ອຍໆ ເພື່ອສັ່ນຄອນຄວາມສຳພັນທາງການທູດ ຖ້າຫາກພວກເຂົາສາມາດເຮັດໃຫ້ຝ່າຍຫວຽດນາມເຊື່ອວ່າຄົນຂອງພວກເຂົາຖືກຈັບກຸມ ແລະຖືກທໍລະມານ ມັນກໍບໍ່ໄດ້ເປັນການຍາກທີ່ພວກເຂົາຈະຄິດວ່າຝ່າຍລາວຕ້ອງຮັບຜິດຊອບກັບເຫດການທີ່ເກີດຂຶ້ນ ທັງເລື່ອງການສັງຫານໝູ່ກໍເຊັ່ນກັນ ແລ້ວລອງຄິດເບິ່ງວ່າຈະເກີດຫຍັງຂຶ້ນ.

"ສະນັ້ນພວກໝູປ່າດຳຈຶ່ງລົງມືຂ້າຊາຍທັງສາມດ້ວຍວິທີການທີ່ບໍ່ງ່າຍເກີນໄປເພື່ອໃຫ້ໂລກໄດ້ຈົດຈຳໄປອີກດົນ ດ້ວຍການຈັດສາກໃຫ້ຄ້າຍກັບວ່າຊາຍທັງສາມຖືກທໍລະມານຈົນຕາຍ. ພວກມັນນຳເອົາສົບຂຶ້ນຍົນແລ້ວມຸ່ງໜ້າໄປອ່າງເກັບນ້ຳງື່ມເຊິ່ງໃກ້ບໍລິເວນສະຖານທີ່ດັດສ້າງ ກ່ອນຈະຖິ້ມສົບຂອງພວກເຂົາລົງໄປໃນອ່າງເກັບນ້ຳ. ພວກມັນໃຊ້ເປືອກນອກສະນວນຂອງລູກລະເບີດເປັນຕົວຖ່ວງສົບໃຫ້ຈົມລົງໄປໃນພື້ນນ້ຳ

ແລ້ວໃຊ້ເຊືອກລາຄາຖືກມັດຈ່ອງທັງສອງສົບ ເພາະຕັ້ງໃຈຈະໃຫ້ສອງສົບລອຍຂຶ້ນເທິງໜ້ານໍ້າເມື່ອເວລາຜ່ານໄປ. ທຣັນຄົນທີສອງແມ່ນຖືກຜູກຕິດດ້ວຍສາຍໄຟ ເພື່ອໃຫ້ມີຄົນມຸດນໍ້າລົງໄປແລ້ວພົບເປືອກລະເບີດທີ່ເປັນຂອງຈີນ ເພາະພວກມັນຮູ້ວ່າສິ່ງນີ້ຈະເຮັດໃຫ້ຫວຽດນາມຍິ່ງຮູ້ສຶກແຄ້ນເຄືອງໃຈ.

"ງາຄຳບໍ່ໄດ້ 'ບັງເອີນ' ໄປສຳຫຼວດບໍລິເວນອ່າງເກັບນໍ້າຕາມທີ່ແອບອ້າງໃນຂະນະທີ່ມີຜູ້ພົບເຫັນສອງສົບທຳອິດທີ່ຟູຂຶ້ນເທິງໜ້ານໍ້າ ແລະເຂົານັ້ນແຫຼະທີ່ 'ຈື່ໄດ້' ວ່າຮອຍສັກນັ້ນເປັນຮອຍສັກຂອງຄົນຫວຽດນາມທີ່ນິຍົມກັນ. ເຂົາຄົນໜຶ່ງທີ່ຍອມເຮັດທຸກຢ່າງເພື່ອໃຫ້ແນ່ໃຈວ່າ ທາງສະຖານທູດຫວຽດນາມຈະຕ້ອງຍື່ນມືມາກ່ຽວຂ້ອງ. ແນ່ນອນວ່າລັກສະນະຂອງສົບເຫຼົ່ານີ້ຈະຕ້ອງຖືກຈັດສາກໄວ້ລັກແດ່ເພາະຕອນທີ່ທຣັນເດີນທາງອອກຈາກຮ່າໂນ່ຍນັ້ນ ເຂົາບໍ່ມີຮອຍສັກຫຍັງເລີຍ."

"ບໍ່ມີຮອຍສັກຫວາ?"

"ບໍ່ມີແມ່ນແຕ່ອັນດຽວ. ເມຍຂອງເຂົາບໍ່ຮູ້ຫຍັງເລີຍເລື່ອງຮອຍສັກ ຄົນພວກນັ້ນຈັກສາກສັກລາຍໃສ່ຮ່າງຂອງຊາຍຜູ້ໜ້າສົງສານຄົນນີ້ພາຍຫຼັງທີ່ເຂົາຕາຍໄປແລ້ວ."

ສີວິໄລແກ່ວງຫົວຊ້າໆ. "ທີ່ຈິງແລ້ວຄົນພວກນັ້ນຂ້າຊາຍສາມຄົນດ້ວຍວິທີໃດແທ້ເກາະ?"

"ທຽຣນທົງເຊື່ອວ່າມີສອງຄົນຖືກສີດຟອງອາກາດເຂົ້າເສັ້ນເລືອດ ເຮັດໃຫ້ເກີດເສັ້ນເລືອດອຸດຕັນໃນອາກາດ ເຊິ່ງເປັນຕົວຂັດຂວາງລະບົບການໄຫຼວຽນຂອງເສັ້ນເລືອດຜ່ານສູ່ຫົວໃຈ ຫຼັງຈາກທີ່ສົບຈົມລົງໃນນໍ້າຮອດສອງສາມອາທິດ ຮ່ອງຮອຍທີ່ເຫຼືອຢູ່ກໍມີໜ້ອຍຫຼາຍ ເກືອບບໍ່ເຫຼືອພໍຈະໃຫ້ຮູ້ຊໍ້າວ່າເກີດຫຍັງຂຶ້ນ. ມັນເປັນການເຮັດວຽກແບບມືອາຊີບທີ່ແນບນຽນພໍສົມຄວນ ແຕ່ກໍມີຂໍ້ຜິດພາດບາງຢ່າງເລັກໜ້ອຍ."

"ຜິດພາດແນວໃດ?"

"ປາກົດວ່າທຣັນຄົນຂັບລົດຫັ້ນເສຍຊີວິດເພາະເສັ້ນເລືອດແດງບໍລິເວນໜ້າເອິກມີຮອຍຈີກຂາດຂະໜາດໃຫຍ່ພໍສົມຄວນ ມີຢູ່ວິທີໜຶ່ງທີ່ພໍຈະເຮັດໃຫ້ເກີດເລື່ອງແນວນີ້ໄດ້ ພຽງແຕ່ຈິນຕະນາການຊື່ໆ ມັນກໍຍັງເປັນຕາຢ້ານແລ້ວ. ທຣັນບໍ່ໄດ້ເສຍຊີວິດພ້ອມກັບເພື່ອນຮ່ວມຊາດຂອງເຂົາ, ຮູບຮ່າງຂອງເຂົາຕຸ້ຍພີກວ່າສອງຄົນຫັ້ນອີກ. ສະຫາຍຄິດວ່າແນວໃດ ຖ້າຄົນພວກນັ້ນຫາກສີດຟອງອາກາດເຂົ້າໄປບໍ່ສຳ ເລັດ?"

"ຖ້າເປັນແນວນັ້ນກໍໝາຍຄວາມວ່າຕອນທີ່ຄົນພວກນັ້ນລົງມືຊັອດໄຟຟ້ານັ້ນ ເຂົາຍັງບໍ່ຕາຍແມ່ນບໍ?"

"ເຮົາໄດ້ແຕ່ພາວັນນາວ່າເຂົາພຽງໝົດສະຕິ ຫຼືບໍ່ກໍພຽງເຮັດຕີຕາຍ ແຕ່ເຫັນໄດ້ແຈ່ມແຈ້ງວ່າ ແມ່ນແຕ່ຈະຖືກທໍລະມານພຽງໃດ ເຂົາກໍຍັງບໍ່ຕາຍໃນທັນທີ. ສີວິໄລ,

ຕອນທີ່ສືບຂອງເຂົາມາຮອດຫ້ອງຊັນນະສູດສົບຫັ້ນ ພວກເຮົາຍັງທັນສັງ ເກດເຫັນສີໜ້າຂອງເຂົາທີ່ປາກົດເຖິງຄວາມຫວາດກົວສຸດຂີດ. ມີພຽງເຫດຜົນດຽວທີ່ເຮັດໃຫ້ສີໜ້າຂອງເຂົາປາກົດເປັນແບບນັ້ນໄດ້."

"ເຂົາຕົກລົງມາຈາກເຮລິຄັອບແຕ"

"ໜ້າຈະພໍສະຫຼຸບໄດ້ຊັດເຈນວ່າຕອນທີ່ຄົນພວກນັ້ນຍູ້ເຂົາລົງມາຈາກເຮືອ ບິນຫັ້ນ ເຂົາຍັງບໍ່ທັນຕາຍເທື່ອ."

"ຄືຊິບໍ່ມີຄວາມຕາຍປະເພດໃດເປັນຕາຢ້ານກວ່ານີ້ອີກແລ້ວແຫຼະ." ທ່ານຜູ້ບັນຊາການເວົ້າຂຶ້ນ.

"ເຮົາພຽງແຕ່ສົງໄສວ່າຄົນພວກນັ້ນຈິງໃຈເຮັດ ຫຼືພຽງແຕ່ບໍ່ໄດ້ຕັ້ງໃຈ ຄົນອາເມລິກາຄືຊິບໍ່ມີເປົ້າໝາຍອັນໂຫດຮ້າຍສາມານຄືແນວນັ້ນດອກຕິເນາະ. ເຮົາໝາຍຄວາມວ່າຖ້າພວກເຂົາຢາກໃຫ້ເບິ່ງແບບນຽນແທ້ໆ ຫັ້ນມັນຊິໄປຍາກຊາຫຍັງ ພຽງແຕ່ທໍລະມານຄົນທັງສາມໃຫ້ຕາຍບາດດຽວກໍແລ້ວເລື່ອງ."

ທ່ານຜູ້ບັນຊາການຖອນຫັນໃຈໃຫຍ່ຮູດໜຶ່ງ. "ພວກເຮົາຕ້ອງນຳຈັບກຸ່ມຄົນເຫຼົ່ານີ້ມາລົງໂທດໃຫ້ໄດ້ ຂ້ອຍຈະບໍ່ຍອມປ່ອຍໃຫ້ພວກທະຫານຮັບຈ້າງຊຸມນີ້ອອກອາລະວາດທົ່ວຜືນແຜ່ນດິນເດັດຂາດ. ແຕ່ຕອນນີ້ພວກເຮົາຕ້ອງໄດ້ລົງມືເຮັດໃນເລື່ອງທີ່ຄວນເຮັດເປັນອັນດັບທຳອິດກ່ອນ. ຂ້ອຍຕ້ອງຈັບຕົວບັກທໍລະຍົດນັ້ນໃຫ້ໄດ້ ພວກທ່ານເຮັດໃຫ້ຂ້ອຍໝັ້ນໃຈແລ້ວທ່ານສຸພາບບຸລຸດເອີຍ ເທວະດາເທົ່ານັ້ນທີ່ຮູ້ວ່າ ມີຈັກຊີວິດທີ່ຕ້ອງສູນເສຍຍ້ອນການກະທຳອັນປ່າເຖື່ອນຂອງພວກຜີປ່າຊຸມນີ້. ຂ້ອຍຂໍລາກັບກ່ອນເນີຕ້ອງໄດ້ຮີບໄປເຮັດວຽກອັນແສນເຈັບປວດໃຈນີ້ໃຫ້ຈົບສິ້ນ."

ທ່ານຜູ້ບັນຊາການຈັບມືກັບທັງສອງຢ່າງອົບອຸ່ນກ່ອນຈະເອີ້ນເອົາຄົນຍາມກັບໄປພ້ອມຕົນ. ເພື່ອນເກົ່າທັງສອງຄົນຢູ່ໃນຫ້ອງງຽບໆ ນຳກັນສອງຕໍ່ສອງ. ສີວິໄລນັ່ງເກົາຫົວຍ້ອກໆ ຄືຄົນໝົດເຫື່ອໝົດແຮງ ສ່ວນສີຣິກໍໄດ້ແຕ່ສູບເອົາອົກຊີແຊນຈາກໜ້າກາກທີ່ຖືໄວ້ໃນມື ໂດຍບໍ່ມີການໂອ້ລົມກັນເປັນເວລາຫຼາຍນາທີ. ແຕ່ແລ້ວທັງສອງກໍພາກັນຍິ້ມຄ່ອຍໆ ແລ້ວປ່ຽນເປັນສຽງຫົວ ສີວິໄລຍ່າງມາທີ່ຕຽງພ້ອມຈັບມືເບື້ອງຂວາຂອງສີຣິຂຶ້ນມາກຸມໄວ້ ທັງສອງບີບມືກັນໄວ້ແໜ້ນຈົນຂໍ້ມືກາຍເປັນສີຂາວ ຈາກນັ້ນຕ່າງຝ່າຍຕ່າງກໍລະເບີດສຽງຫົວອອກມາຄ້າຍກັບວ່າຫາກໍໄດ້ພົບພໍ້ກັບເລື່ອງເປັນ ຕາຫົວທີ່ສຸດໃນໂລກ.

"ພວກເຮົາພາກັນຫົວຫຍັງລະບັດນີ?" ສີຣິຖາມທັງນໍ້າຕາຊຶມປີ້.

"ມັນເປັນປະຕິກິລິຍາຢ່າງໜຶ່ງຂອງລະບົບປະສາດດອກ ສະແດງວ່າພວກເຮົາທັງຄູ່ຕ່າງກໍຢ້ານຈົນຕົວສັ່ນ."

"ຊໍ່ານີ້ກໍວ່າເປັນຕາຢ້ານແລ້ວຊັ້ນເບາະ ຄັນຊັ້ນລໍຖ້າເຮົາເລົ່າອີກຄະດີໜຶ່ງໃຫ້ຟັງ."

21

# ອີກໜຶ່ງຄະດີ

ເຄນ ນາລີ ບໍ່ເຄີຍຫຼົ້ມເຫຼວແບບເສຍທ່າແນວນີ້ມາກ່ອນ ເຂົາເຈັບແຄ້ນແໜ້ນໃຈສຸດຂະໜາດກັບຄວາມອັບອາຍຂາຍໜ້າ ເຖິງວ່າການແກ້ແຄ້ນຈະບໍ່ແມ່ນເປົ້າໝາຍຂອງມືອາຊີບ ແຕ່ກໍບໍ່ມີຫຍັງອີກແລ້ວທີ່ເຂົາຈະຕ້ອງການຫຼາຍກວ່ານັ້ນ.

ເຂົາອາດມີໂອກາດໄດ້ແກ້ມືອີກຄັ້ງໜຶ່ງເນື່ອງຈາກຄວາມຜິດພາດໃນຄັ້ງທຳອິດທີ່ເຫັນໄດ້ຊັດເຈນວ່າມັນມືດຫຼາຍ, ຮ່າງຂອງສີຣິປາກິດເຫັນເປັນພຽງເງົາພຸມພູ່ຢູ່ປະຕູໜ້າບ້ານ ເຂົາຄວນເຂົ້າໄປເບິ່ງຮ່າງອັນໄຮ້ວິນຍານຂອງສີຣິຕັ້ງແຕ່ຕອນນັ້ນພຸ້ນແຫຼະ ແຕ່ກໍມີນາງໜຶ່ງຫັ້ນຄອຍຢືນຢູ່ເບື້ອງຫຼັງຂອງຜ້າກັ້ງຕະຫຼອດເວລາ ຈົນຮອດຕອນເຊົ້າຂອງມື້ຕໍ່ມາ ເຂົາຈິ່ງໄດ້ຍິນຂ່າວວ່າທ່ານໝໍຄົນນັ້ນຍັງບໍ່ຕາຍ.

ເມື່ອຮອດຕອນທີ່ສີຣິເດີນທາງອອກຈາກນະຄອນຫຼວງໄປແລ້ວ ສະນັ້ນເຂົາຈິ່ງຕ້ອງຈັບປັນຫານີ້ດ້ວຍວິທີອື່ນ. ເຂົາຄົບຫາເບິ່ງໃຈກັບສາວທີ່ເປັນຊ່າງເຮັດຜົມ ແຕ່ກໍບໍ່ເຖິງຂັ້ນຈະຈິງຈັງຫຍັງໃນຄວາມສຳພັນຊ້ຳດອກ ເຂົາອາໄສສວຍໃຊ້ສັງຄົມປາກປາແດກໃນເມືອງວຽງຈັນເພື່ອປ່ອຍຂ່າວລືວ່ານາງສາວຜູ້ນັ້ນເປັນເມຍນ້ອຍຂອງສະຫາຍຄຳ ຂ່າວລືນັ້ນໄດ້ແຜ່ກະຈາຍຢ່າງວ່ອງໄວ ແລະມັນໄດ້ຍ້ອນກັບມາເຂົ້າຫູເຂົາໃນທັນທີພຽງເວລາອັນສັ້ນ. ໄໝບໍ່ເຄີຍຮູ້ຈັກ ແລະຍັງບໍ່ເຄີຍພົບໜ້າພໍ້ຕາຂອງສະຫາຍຄຳແມ່ນແຕ່ຄັ້ງດຽວ ແຕ່ເລື່ອງນັ້ນກໍບໍ່ໄດ້ສຳຄັນຫຍັງພິລຶກ ເພາະນາງມີຊາຍຮຸ່ນພໍ່ລຸມຈີບບໍ່ເວັ້ນວັນ ຈິ່ງບໍ່ໜ້າແປກໃຈເລີຍທີ່ຄົນອື່ນຈະຕ້ອງລະແວງສົງໄສຫຍັງອີກ.

ວິທີທີ່ເຂົາເລືອກເພື່ອເປັນສາກບັງໜ້າໃຫ້ຄ້າຍກັບວ່າເປັນການຂ້າຕົວຕາຍນັ້ນກໍແມ່ນວິທີດຽວທີ່ເຂົາເຄີຍເຫັນໃນຊ່ວງຫຼາຍປີກ່ອນ. ເມຍຂອງຊາຍຜູ້ທີ່ເຄນ ນາລີ ເຄີຍຂ້າຕາຍນັ້ນ ນາງໄດ້ໃຊ້ມີດປາດຂໍ້ມືຕົນເອງ ແລ້ວເນັ້ນຈຸ່ມລົງໃນນ້ຳທີ່ຍັງຮ້ອນໆ ມັນຊ່າງເປັນເລື່ອງໜ້າຕື່ນເຕັ້ນພິລຶກ ເຊິ່ງເໝາະສົມສຳລັບຍິງສາວທີ່ພາຍໃນຈິດໃຈເຕັມໄປດ້ວຍຄວາມຜິດຫວັງເສຍໃຈທັງໝົດອາໄລຕາຍຢາກໃນຄວາມຮັກ. ເຂົາຈິ່ງຈັດສາກໃນການກະທຳຜິດດ້ວຍວິທີທີ່ເຂົາຈື່ຈົນຕິດສະໝອງທຸກຢ່າງ ... ທຸກໆ ຢ່າງເລີຍແຫຼະ. ເຈົ້າໜ້າທີ່ຕຳຫຼວດໃນເມືອງວຽງຈັນໄດ້ເຂົ້າໄປກວດສອບເຫດການ ທັງຖ່າຍຮູບທັງ

ສອບປາກຄຳ ເມື່ອພວກເຂົາພົບຈົດໝາຍລາຕາຍ ທຸກຄົນຈຶ່ງປັກໃຈເຊື່ອວ່າ ນາງເປັນຄົນລົງມືຂ້າເມຍໃຫຍ່ຂອງຜູ້ເປັນສາມີກ່ອນຈະປິດຊີບຕົນເອງຕາມໄປ.

ມັນເປັນໄປຕາມແຜນການທີ່ສົມບູນຄົບຖ້ວນທຸກຢ່າງ ບໍ່ມີໃຜລະແວງສົງ ໄສອັນໃດຈົນກວ່າເຂົາຄົນນັ້ນກັບມາ ... ເຊິ່ງກໍແມ່ນອີ່ຕານັກສືບຫຼັງກະສຽນບໍານານ ... ອີ່ຕາເຖົ້າຜູ້ສະຫຼອກກອກສອດຮູ້ສອດເຫັນ ... ເຊິ່ງເປັນຜູ້ທີ່ບໍ່ຍອມໃຫ້ເລື່ອງອີ່ຫຍັງກໍຕາມຜ່ານໄປໄດ້ແບບງ່າຍໆ ... ເຂົາເປັນຜູ້ເດ່ຮູດັງເຂົ້າມາ ... ຄ່ອຍໆ ຖອດຊັ້ນນອກຂອງໜ້າກາກແຫ່ງຄວາມຫຼອກລວງອອກເທື່ອລະໜ້ອຍຈົນເຫັນຄວາມຈິງ ແລ້ວກໍໄປນັ່ງຄຸຍໂມ້ໂອ້ອວດຢ່າງພາກພູມຢູ່ແຄມແມ່ນ້ຳພຸ້ນ.

ເຄນ ນາລີ ຄິດວ່າບໍ່ມີຄັ້ງໃດທີ່ເຂົາຈະຄິດກຽດຊັງສີຣິເທົ່າກັບຄືນມື້ນັ້ນອີກແລ້ວເຂົາຈຶ່ງລົງມືເກີນຄຳສັ່ງຂອງເຈົ້ານາຍ ມັນກາຍເປັນເລື່ອງສ່ວນຕົວໄປແລ້ວ ເພາະຄົງບໍ່ມີບັກເຖົ້າໜັງຍານປາກບອນຄົນໃດທີ່ກ້າປະພຶດຕົວເຍີ້ຍຫຍັນເຂົາໄດ້.

ກ່ອນໜ້ານັ້ນເຂົາໄດ້ກັບຄືນໄປທີ່ຄັງອາວຸດຂອງຕົນ ແລະພົບກັບຢາຂະໜານເອກຊັ້ນດີສຳລັບການປິ່ນປົວພະຍາດສອດຮູ້ສອດເຫັນຂອງທ່ານໝໍຄົນນັ້ນໄດ້ ເຂົາຈຶ່ງຕັ້ງຕາລໍຖ້າຢ່າງໃຈຈົດຈໍ່ ເຂົາຮູ້ຮອດໂມງເວລາທີ່ສີຣິກັບບ້ານ, ສະນັ້ນເຂົາຈຶ່ງໃຫ້ເວລາສີຣິໄດ້ມີໂອກາດເຂົ້າໄປໃນຫ້ອງໃຫ້ຮຽບຮ້ອຍເສຍກ່ອນ. ຕາເຖົ້າຜູ້ນີ້ດື່ມເຫຼົ້າມາແດ່ແລ້ວສະນັ້ນມັນຄົງຈະເຂົ້ານອນໄວເຕີບ. ເຄນ ນາລີ ຍ່າງຜ່ານເດີ່ນວັດທີ່ງຽບສະຫງັດ ແລ້ວແນມຂຶ້ນໄປເທິງປະຕູປ່ອງຢ້ຽມທີ່ເປີດອ້າຢູ່ ແສງໄຟດັບສະໜິດ ໝາຍຄວາມວ່າຕາເຖົ້ານັ້ນຄົງນອນຫຼັບໄຫຼໄປແລ້ວ. ໜ້າເສຍດາຍທີ່ມັນຄົງບໍ່ມີໂອ ກາດໄດ້ຕື່ນຕົກໃຈພຽງແຕ່ສອງສາມວິນາທີເມື່ອຮູ້ຕົວວ່າເຮືອນຂອງຕົນຖືກລະເບີດ.

ເຂົາດຶງເຂັມລູກລະເບີດມືອອກ ແລ້ວໂຍນຄຳອຳລາຂອງຕົນເຂົ້າທາງໜ້າປະຕູປ່ອງຢ້ຽມ. ເຂົາບໍ່ຈຳເປັນຕ້ອງລໍຖ້າເບິ່ງຜົນງານໃດໆ ເພາະເຂົາຮູ້ດີວ່າມັນຈະສ້າງຄວາມຫາຍະນະໄດ້ໜ້ອຍຫຼາຍພຽງໃດ ລະເບີດເຮັດວຽກເມື່ອເຂົາຍ່າງເກືອບຈະຮອດປະຕູໂຂງວັດ ແຕ່ເຂົາກໍບໍ່ຄິດຮອດຈະງວາກໜ້າກັບຄືນມາເບິ່ງອີກຊ້ຳ.

ເຂົາຄິດວ່າງານຄັ້ງນີ້ຄົງບໍ່ພາດທີ່ຈະພາກຊີວິດຍິງສາວຄົນນັ້ນ ພ້ອມກັບຜີ ບ້າຜູ້ບໍ່ຮູ້ອີ່ໂໜ່ອີ່ເໜ່ຫຍັງເຊິ່ງເຮັດວຽກຢູ່ຫ້ອງຊັນນະສູດສືບຕາມທີ່ເຈົ້ານາຍຂອງເຂົາແນະນຳແຕ່ແມ່ນໃຜລະຈະໄປຟັງຄຳເວົ້າຂອງສອງຄົນນັ້ນ? ບໍ່ມີຈັກຄົນເລີຍ. ທີ່ເຫຼືອກໍແມ່ນກຳຈັດຫຼັກຖານໃຫ້ໝົດກ້ຽງ. ເຮືອນຄົວຂອງໂຮງໝໍບໍ່ໄດ້ລັອກກະແຈໄວ້ ແລະນ້ຳມັນສຳລັບປຸງແຕ່ງອາຫານລາຄາຖືກກໍຊ້ຳພັດຕິດໄຟແບບງ່າຍໆ ແປວໄຟລາມໄໝ້ໄປຈົນຮອດຫ້ອງສະໝຸດຊັ້ນເທິງ ແລະໃນບໍ່ຊ້າແປວໄຟຂຸມນັ້ນກໍໄດ້ກືນກິນບັນດາປຶ້ມເກົ່າໆທີ່ແຫ້ງກະແດ້ງ. ເຂົາໄດ້ແຕ່ຢືນເບິ່ງ ເພາະມັນເປັນການຈົບສິ້ນທີ່ໜ້າເພິ່ງພໍໃຈສຳລັບ

ໜ້າທີ່ຂອງຄໍ່າຄືນອັນສະຫງ່າລາສີນີ້. ໃນທີ່ສຸດທຸກຢ່າງກໍຈົບລົງ.

ເຂົາຍັງໄດ້ໄປລາຍງານໃຫ້ຜູ້ເປັນເຈົ້ານາຍຮູ້. ສະຫາຍຄໍາໄປພົບກັບເຂົາຢູ່ຕູບນ້ອຍຫຼັງບ້ານຂອງຕົນເອງ ເຊິ່ງແມ່ນໜຶ່ງໂມງເຊົ້າພໍດີ ແຕ່ຕອນນີ້ສະຫາຍອາວຸໂສກໍເກືອບຈະບໍ່ໄດ້ຫຼັບໄດ້ນອນຄືແຕ່ກ່ອນ ຊາຍສອງຄົນເຄີຍຖ່າຍທອດຂໍ້ມູນໃຫ້ກັນຟັງໃນຕອນເຊົ້າຕູ່ຄືແນວນີ້ມາຫຼາຍຕໍ່ຫຼາຍຄັ້ງ ແຕ່ກໍບໍ່ມີຄັ້ງໃດຖືເປັນເລື່ອງສ່ວນຕົວຄືແນວນີ້.

**********

ສະຫາຍຄໍາໄດ້ສ້າງຕັ້ງໜ່ວຍປະຕິບັດການລັບສະເພາະເມື່ອຊາວປີກ່ອນ ສະໄໝທີ່ເຂົາຍັງເຮັດວຽກໃນເຄື່ອງແບບ. ເບື້ອງຕົ້ນ, ໜ່ວຍງານນີ້ເປັນພຽງພະແນກນ້ອຍໆ ເຊິ່ງເຮັດໜ້າທີ່ໃນການຮວບຮວມ ແລະວິເຄາະຂໍ້ມູນຄ້າຍຄືໜ່ວຍງານຊີໄອເອທີ່ບໍ່ມີຄວາມສໍາຄັນຫຍັງສໍາລັບກອງທັບປົດປ່ອຍປະຊາຊົນລາວ. ເຖິງແມ່ນໜ້ອຍຄົນຈະຮູ້ວ່າຍັງມີໜ່ວຍງານນີ້ເຄື່ອນໄຫວຢູ່ ແຕ່ກໍມີການຮວບຮວມແຟ້ມປະຫວັດຂອງການນໍາຂັ້ນສູງຈໍານວນໜຶ່ງ ແລະກຸ່ມຄົນທີ່ສະແດງຕົນແບບ "ບໍ່ໃຫ້ຄວາມຮ່ວມມື" ຫຼືມີພຶດຕິກໍາ "ທີ່ໜ້າສົງໄສ".

ມີບາງຄັ້ງຄາວທີ່ເຫັນວ່າໝາກມ່ວງໝົດພົ້ວເນົ່າເສຍຈົນຈໍາຕ້ອງນໍາໃຊ້ມາດຕະການເດັດຂາດ. ເບື້ອງຕົ້ນ, ພວກເຂົາພຽງລະມັດລະວັງທັງກໍາຈັດສະເພາະອົງປະກອບທີ່ອາດເປັນພິດເປັນໄພຕໍ່ການເຄື່ອນໄຫວ ແຕ່ອໍານາດຍ່ອມນໍາຄວາມແປດເປື້ອນມາສູ່ກຽດຊື່ສຽງໄດ້ສະເໝີ ຫຼັງຈາກນັ້ນອີກບໍ່ດົນກໍມີສຽງເລົ່າລືກັນຈົນໝາຫູວ່າ ເຫດຜົນທີ່ຄໍາໄດ້ເລື່ອນຕໍາແໜ່ງຂຶ້ນແບບວ່ອງໄວນັ້ນກໍຍ້ອນຄູ່ແຂ່ງທາງການເມືອງຂອງເຂົາຈໍານວນໜຶ່ງ ຫຼືສອງຄົນ "ຫາຍຕົວໄປ".

ຂະນະທີ່ກຸມແນວລາວຮັກຊາດໄດ້ເຕີບໃຫຍ່ຂະຫຍາຍຕົວຈົນກາຍເປັນຜູ້ທີ່ມີອິດທິພົນທາງການເມືອງ ການເຮັດວຽກຂອງໜ່ວຍປະຕິບັດການລັບກໍຍິ່ງເຄັ່ງຄັດເພີ່ມຂຶ້ນ. ມີພະແນກໜຶ່ງໄດ້ແຍກຕົວອອກມາເປັນທີມສັງຫານລະບອບເຄິ່ງການປົກຄອງຢ່າງເປັນອິດສະຫຼະ ແລະເຄນ ນາລີ ກໍຖືກແຕ່ງຕັ້ງໃຫ້ເປັນຫົວໜ້າພະແນກໃນປີ ໑໙໗໐. ເຂົາມີຄຸນສົມບັດເໝາະສົມສໍາລັບໜ້າວຽກນີ້ແບບບໍ່ມີບ່ອນຮີບ່ອນຕິເລີຍຈັກໜ້ອຍ ... ເຂົາເປັນຄົນສະຫຼຽວສະຫຼາດທັງອຸທິດຕົນຮັບໃຊ້ໃຫ້ກັບກຸ່ມແນວໂຮມ, ເຂົາເຄີຍສັງຫານຜູ້ຄົນຕັ້ງແຕ່ຕອນເປັນໄວໜຸ່ມຕາມຄໍາສັ່ງຂອງເຈົ້ານາຍ. ທີ່ສໍາຄັນສຸດ, ເຂົາແມ່ນສຸດຍອດນັກປະຕິບັດພາລະກິດລັບ. ຕະຫຼອດຫຼາຍປີຜ່ານມາ, ເຂົາເຄີຍຜ່ານການຕັ້ງຊື່ໃນຫຼາຍນາມ ລວມທັງປ່ຽນແປງບຸກຄະລິກຕະຫຼອດ ແມ່ນແຕ່ລູກນ້ອງຂອງເຂົາກໍຍັງບໍ່ສາມາດບອກໄດ້ວ່າ ຮູ້ຈັກກັບເຂົາຄົນນີ້.

ເຄນ ນາລີ ອຸທິດຕົນທັງຈິງຮັກພັກດີຕໍ່ຜູ້ກໍ່ຕັ້ງກຸ່ມແລະເຮັດຕາມຄຳສັ່ງຂອງຄຳທຸກຢ່າງໂດຍປັດສະຈາກຂໍ້ອ້າງໃດໆ, ເຂົາຮູ້ດີວ່າວຽກທຸກຢ່າງທີ່ເຂົາເຮັດນັ້ນກໍເພື່ອເຮັດໃຫ້ຂະບວນການເຄື່ອນໄຫວກ້າວໜ້າ.  ແຕ່ເມື່ອຄຳບອກຄວາມລັບຂອງຕົນໃຫ້ເຂົາຮູ້ທ່າມກາງບັນຍາກາດອັນໜາວເຢັນຈົນເຂົ້າກະດູກຢູ່ບໍລິເວນເດີ່ນບິນຊຽງຂວາງ, ຄວາມສຳພັນລະຫວ່າງຄົນທັງສອງຈຶ່ງມີການປ່ຽນແປງ ເນື່ອງຈາກສະຫາຍຄຳຂ້າເມຍຕົນເອງແລະເຂົາຕ້ອງການໃຫ້ເຄນຊ່ວຍຈັດການໃຫ້ເຂົາຫຼຸດພົ້ນຈາກຄວາມຜິດ.

ບໍ່ມີເຫດຈູງໃຈດັ່ງທີ່ເຄີຍພົບເຫັນເປັນປະຈຳ, ມັນບໍ່ແມ່ນເລື່ອງຂອງຄວາມຫຶງຫວງທາງຊູ້ສາວ, ບໍ່ມີການຮຽກຮ້ອງຄ່າປະກັນຈາກພາກສ່ວນໃດໆ. ຄຳພຽງຮູ້ສຶກກຽດຊັງເມຍຂອງຕົນຂຶ້ນມາເອງ, ເຂົາກຽດຊັງໃນສິ່ງທີ່ນາງເປັນນັບແຕ່ມື້ທີ່ພວກເຂົາຍ້າຍມາຢູ່ນະຄອນຫຼວງ.  ເມື່ອບ້ານເມືອງມີຄວາມສະຫງົບສຸກ,  ສະຫະພັນແມ່ຍິງລາວກໍໄດ້ກັບມາມີບົດບາດທາງການເມືອງອີກຄັ້ງ.  ນາງນິດນ້ອຍເປັນບຸກຄົນສຳຄັນທີ່ທາງສຳນັກຂ່າວສານປະເທດລາວນັດສຳພາດ. ນາງເປັນຄົນໜຶ່ງທີ່ມີໂອກາດເວົ້າຜ່ານວິທະຍຸ ແລະນາງກໍເປັນບຸກຄົນທີ່ທາງວິທະຍາໄລຄູດຶງໂດກເຊີນໄປປາໄສໃຫ້ນັກຮຽນຟັງ ແລ້ວເຂົາເດ, ເຂົາເປັນໃຜ? ເຂົາເປັນສາມີຂອງສະຫາຍນາງນິດນ້ອຍ. ບໍ່ມີໃຜຈື່ຊື່ຂອງເຂົາໄດ້ເລີຍ.

ສະນັ້ນ, ເຂົາຈຶ່ງຂ້ານາງ. ຢາໄຊຢາໄນດ໌ຊະນິດເມັດທີ່ຕົກມາຢູ່ໃນຄອບຄອງຈຶ່ງເປັນສິ່ງລໍ້ລວງໃຈ. ມັນເປັນໂຊກຊາຕາຟ້າລິຂິດທີ່ສອງຜົວເມຍຜູ້ບໍ່ລົງລອຍກັນກັບມາຈາກງານລ້ຽງຂອງພັກໃນສະພາບເມົາຈົນເງີຍຫົວບໍ່ຂຶ້ນເຊິ່ງເຂົາມີຕຳແໜ່ງເປັນສະຫາຍອາວຸໂສ ແຕ່ນາງຊໍ້າພັດເປັນດາວເດັ່ນໃນງານລ້ຽງ, ເຂົາເປັນຄົນຊ່ວຍພະຍຸງນາງກັບມາແລະນາງກໍເມົາໝົດສະຕິຢູ່ເທິງຕຽງ  ແລ້ວເຂົາກໍເຂົ້າໄປໃນຫ້ອງເຮັດວຽກ  ພ້ອມເອົາຢາເມັດປອມເຂົ້າໃສ່ໃນຂວດຢາຂອງນາງ.

ແຕ່ວ່າມັນຍັງບໍ່ໄດ້ຈົບພຽງເທົ່ານັ້ນ, ຈົນຮຸ່ງເຊົ້າຂອງມື້ຕໍ່ມາ ເມື່ອນາງນິດນ້ອຍອອກຈາກເຮືອນພ້ອມຢາເມັດໃນກະເປົາຂອງຕົນ  ແລະເຂົາຈຶ່ງເລີ່ມໃຊ້ຄວາມຄິດຢ່າງຮອບຄອບ ເພາະຈະເຮັດໃຫ້ນາງຕາຍຢ່າງດຽວຍັງບໍ່ພໍ ເຂົາຈະຕ້ອງສ້າງສະຖານະການເພື່ອໃຫ້ຕົນເອງພົ້ນຄວາມຜິດນຳອີກ. ຄຳຈຶ່ງເດີນທາງໄປຊຽງຂວາງໜຶ່ງອາທິດ ທີ່ນັ້ນເຂົາໄດ້ພົບກັບເຄນ  ນາລີ  ແລະຊີ້ແຈງສິ່ງທີ່ຕົນໄດ້ລົງມືກະທຳ.  ລູກນ້ອງຜູ້ບອກໄດ້ໃຊ້ຟັງຂອງເຂົາກໍໄດ້ໃຫ້ຄຳໝັ້ນສັນຍາວ່າຈະຈັດການທຸກຢ່າງໃຫ້ສຳເລັດຮຽບຮ້ອຍດັ່ງທີ່ເຄີຍເຮັດມາ. ເຄນຈຶ່ງເດີນທາງເຂົ້າມາ ແລ້ວລໍຖ້າຢູ່ນະຄອນຫຼວງ. ສາມວັນຕໍ່ມາ, ຂ່າວການຕາຍຂອງທ່ານນາງນິດນ້ອຍກໍໄປຮອດຫູຂອງຄຳ  ສິ່ງທີ່ເຄນ  ນາລີຕ້ອງເຮັດກໍຄືສວມຊຸດເຄື່ອງແບບ ແລ້ວເຂົ້າໄປເກັບເອົາຫຼັກຖານອອກມາຈາກສູນກາງສະຫະພັນແມ່ຍິງລາວ.

ແຕ່ເຫດການກໍບໍ່ໄດ້ລາບລື່ນເໝືອນກັບທີ່ສະຫາຍຄຳຄາດຫວັງ ຢາຂວດນັ້ນຊ້ຳພັດບໍ່ໄດ້ຢູ່ໃນກະເປົາຂອງນາງ ແລະເຄນກໍບໍ່ກ້າຢ້ອນກັບຄືນເຂົ້າໄປສູນກາງສະຫະພັນແມ່ຍິງເປັນຄັ້ງທີສອງເພາະຢ້ານຈະເສຍລັບ. ຄຳຈຶ່ງໄດ້ແຕ່ຫວັງເລິກໆ ວ່າປັນຫາຈະຄ່ອຍຜ່ອນຄາຍລົງເມື່ອເວລາຜ່ານໄປ. ແຕ່ເຂົາກໍເບິ່ງຂ້າມເຖິງຄວາມສາ ມາດຂອງສິຣິເກີນໄປ, ເຂົາຄິດພຽງຄືນດຽວວ່າ ທ່ານໝໍຊຸ້ນນະສູດສືບຜູ້ຝືນໃຈເຮັດໜ້າທີ່ຄືນນີ້ຍັງຂາດຄວາມຊຳນານງານທັງອ່ອນປະສົບການ ແຕ່ສິ່ງທີ່ເຂົາຄິດນັ້ນຊ້ຳພັດບໍ່ແມ່ນຄວາມຈິງອີກຕໍ່ໄປ. ຖ້າເຂົາທັນໄດ້ສັງເກດເບິ່ງຄວາມມຸ່ງໝັ້ນຂອງສິຣິກ່ອນໜ້ານີ້ ເຂົາຄົງບໍ່ປະເມີນຄວາມສາມາດຂອງທ່ານໝໍເຖົ້າຄືນນີ້ຕ່ຳເກີນໄປ.

ເຂົາຮູ້ວ່າທ່ານໝໍຊຸ້ນນະສູດສືບຜູ້ນັ້ນຮູ້ຄວາມຈິງແລ້ວສ່ວນໜຶ່ງ ແລະຄຳກໍຢ້ານວ່າຕົນເອງບໍ່ສາມາດເຮັດໃຫ້ທ່ານໝໍນັ້ນປິດປາກງຽບໄດ້ ເມື່ອພົບກັບທາງເລືອກອັນເລັກໜ້ອຍຄືແນວນັ້ນ ເຂົາຈຶ່ງສັ່ງໃຫ້ເຄນ ນາລີຂ້າປິດປາກທ່ານໝໍຊຸ້ນນະສູດສືບກ່ອນສິ່ງທີ່ມັນໄດ້ພົບນັ້ນຈະຖືກເປີດເຜີຍ.

ສະຫາຍຄຳເປັນຄົນເຊື່ອໃນເລື່ອງໂຊກຊາຕາມາໂດຍຕະຫຼອດ, ເຂົາຈະເລີ່ມປະຕິບັດງານໃນທຸກໆ ໂຄງການສະເພາະໃນວັນທີ່ເປັນສີລິມຸງຄຸນ ແລະດູນໍເບິ່ງດວງຊາຕາກ່ອນສະເໝີ. ໂຊກຊາຕາໄດ້ເປັນຜູ້ກຳນົດໃຫ້ຢາໄຊຢາໄນດ໌ຕົກມາຢູ່ໃນມືເຂົາ ແລະກໍຍ້ອນໂຊກຊາຕາອີກເຊັ່ນເຄີຍທີ່ດົນບັນດານໃຫ້ນາງນິດນ້ອຍກິນຢານັ້ນເຂົ້າໄປໃນບໍ່ຊ້າ ເມື່ອເຖິງຈຸດນັ້ນ ດວງຊາຕາກໍຍັງຢູ່ຂ້າງເຂົາສະເໝີ. ມືສັງຫານຜູ້ທີ່ບໍ່ເຄີຍເຮັດວຽກຜິດພາດຈັກຄັ້ງ...ເມື່ອລູກປືນແລ່ນຜ່ານຫົວຂອງສິຣິໃນຄືນມື້ນັ້ນ ມັນໄດ້ເປັນສັນຍານເບື້ອງຕົ້ນທີ່ບົ່ງບອກວ່າ ໂຊກຊາຕາບໍ່ໄດ້ເຂົ້າຂ້າງເຂົາອີກຕໍ່ໄປ. ສິຣິມີໂອກາດລອດຊີວິດເປັນຄັ້ງທີສອງ ຄຳຈຶ່ງຊອກຫາວິທີອື່ນ.

ເຂົາສັ່ງໃຫ້ເຄນ ນາລີເປັນຄົນຈັດສາກເລື່ອງການຂ້າຕົວຕາຍຂຶ້ນ. ສັງ ຫານຊີວິດຍິງສາວຄົນໜຶ່ງທີ່ບໍ່ມີຄວາມສຳຄັນຫຍັງ ແລະມັນອາດຈະເປັນວິທີທີ່ເຮັດໃຫ້ເລື່ອງທຸກຢ່າງຈົບສິ້ນລົງ. ມັນບໍ່ແມ່ນເລື່ອງໜ້າອັບອາຍທີ່ຍິງສາວຄົນໜຶ່ງຈະເທີດທູນບູຊາຊາຍຜູ້ມີອຳນາດເຊິ່ງເປັນສາມີລັບຂອງຕົນ ແລະມັນກໍຍັງບໍ່ແມ່ນເລື່ອງແປກໃຈທີ່ນາງຈະລົງມືຂ້າຄູ່ແຂ່ງຂອງຕົນ ກ່ອນຈະຂ້າໂຕຕາຍຕາມໄປເພື່ອໜີຄວາມຜິດ. ທາງເຈົ້າໜ້າທີ່ຕຳຫຼວດກໍຈະບໍ່ໄດ້ລະແວງສົງໄສຫຍັງ ສ່ວນເຂົາກໍພຽງແຕ່ໃຫ້ສຳພາດຕໍ່ສື່ມວນຊົນພ້ອມເຮັດນ້ຳຕາຫຼັ່ງເປົ້າ ແລ້ວທຸກຢ່າງມັນກໍຈົບ.

ແຕ່ແລ້ວ, ສິຣິກໍກັບມາພ້ອມເຮັດໃຫ້ແຜນການທຸກຢ່າງພັງບໍ່ເປັນທ່າອີກຄັ້ງ. ເບິ່ງຄືວ່າມີວິທີດຽວເທົ່ານັ້ນທີ່ຈະເອົາຊະນະໂຊກຊາຕາໄດ້ແທ້. ເຫດຜົນທັງໝົດໃນໂລກນີ້

ໄດ້ຊີ້ວ່າ ສິຣິບໍ່ສາມາດລອດພົ້ນຈາກມືສັງຫານຮອບທີສອງນີ້ໄດ້, ບໍ່ມີມະນຸດໜ້າໃດທີ່ຈະເຮັດໃຫ້ເຂົາມີຊີວິດຢູ່ຕໍ່ໄດ້ອີກ.

ແຕ່ຂະນະນີ້ເຊິ່ງເປັນເວລາຊ່ວງຕອນບ່າຍ ສະຫາຍອາວຸໂສນັ່ງຊຶງຢູ່ໃນເຮືອນອັນເປົ່າປ່ຽວ ເຂົາຍ່າງອອກຈາກງານລ້ຽງສະຫຼອງວິລະບຸລຸດແຫ່ງການປະຕິ ວັດທີ່ສະພາແຫ່ງຊາດ ໂດຍບໍ່ສົນໃຈຕອບຄຳຖາມໃດໆ ຈາກນັ້ນເຂົາກໍໄລ່ຄົນຂັບລົດໜີ ແລ້ວກໍຂັບລົດລີມູຊີນກັບບ້ານເອງ. ເຂົາບໍ່ໄດ້ຫຼັບໄດ້ນອນເປັນເວລາສີ່ຄືນລຽນຕິດ ການເດີນທາງກັບບ້ານຈິ່ງເປັນແບບສະລຶມສະລື.

ເຂົາບໍ່ເຄີຍຫວັ່ນໄຫວທີ່ຈະແຂ່ງກັບມະນຸດດ້ວຍກັນ ເຊິ່ງເຂົາກໍໄດ້ພິສູດໃຫ້ເຫັນມາແລ້ວຫຼາຍຄັ້ງ ແຕ່ທີ່ນີ້, ເຂົາກຳລັງປະເຊີນໜ້າກັບຫຍັງບາງຢ່າງທີ່ມີພະລັງອຳນາດເຊິ່ງເຂົາເອງກໍຍັງບໍ່ຮູ້ຈັກ. ສັດຕູຂອງເຂົາແມ່ນວິນຍານ ແລະທ່ານນາງນິດນ້ອຍກໍບໍ່ຍອມປ່ອຍໃຫ້ເຂົາລືມໃນສິ່ງທີ່ເຂົາປະພຶດຕໍ່ນາງ. ນາງຍັງມາປາກົດຕົວໃນຝັນຮ້າຍຂອງເຂົາຕະຫຼອດ ທັງຢູ່ຂ້າງຫຼັງເພື່ອຄອຍປົກປ້ອງສິຣິ. ມີບາງສິ່ງຢ່າງບອກເຂົາໃຫ້ຮູ້ວ່າເຂົາອາດຈະບໍ່ໄດ້ຫຼັບນອນແບບມີຄວາມສຸກອີກເລີຍ ແລະພໍເມື່ອຄິດເຊັ່ນນັ້ນຂຶ້ນມາ ເຂົາກໍບໍ່ອາດອົດທົນໄດ້ອີກຕໍ່ໄປ.

ສະຫາຍຄຳໝູນປຸ່ມປັບສຽງວິທະຍຸໃຫ້ດັງຂຶ້ນຈົນເຖິງຂີດສູງສຸດ ພ້ອມໝູນຫາຄື້ນວິທະຍຸແຫ່ງປະເທດໄທ. ຜູ້ຊ່ຽວຊານດ້ານວົງຕະກຸນກຳລັງໂອ້ລົມກັນເຖິງເຫດ ຜົນທີ່ເຮັດໃຫ້ລັກສະນະໂຄງສ້າງຄອມມູຍນິດລາວຊ່າງໜ້າອັບປະລັກ. ເຂົາຈິ່ງຕັ້ງໃຈຟັງເພື່ອຈະໄດ້ຮູ້ວ່າເຫດໃດຮູບຮ່າງໜ້າຕາຂອງຕົນຈິ່ງເຮິະຮ້າຍ ພໍເມື່ອສຽງເພງປິດລາຍການດັງຂຶ້ນແລ້ວເຂົາກໍລັ່ນໄກປືນເຂົ້າໃສ່ຫົວຕົນເອງ.

22

# ຕາຍຄັ້ງທີສາມ

ເຄນ ນາລີ ຍັງບໍ່ທັນຫຼົ້ມເຫຼວ ... ຍັງເທື່ອ. ເຖິງແມ່ນວ່າຜູ້ທີ່ເຂົາໝາຍປອງຈະເອົາຊີວິດຍັງມີໂຊກຊາຕາຊ່ວຍປົກປ້ອງເອົາໄວ້ໃນເຫດການຄັ້ງກ່ອນໆ ແຕ່ກໍບໍ່ໄດ້ແປວ່າເຂົາຈະຫຼົ້ມເຫຼວ. ຫົວໜ້າຂອງເຂົາບອກໃຫ້ເຂົາເດີນທາງກັບຄືນໄປພາກເໜືອ ແລະຍອມປະລາໄຊໃນງານນີ້ ແຕ່ພາລະກິດຂອງເຂົາຍັງບໍ່ສິ້ນສຸດພຽງເທົ່ານີ້ ມັນຍັງບໍ່ທັນເຖິງຂັ້ນຫຼົ້ມເຫຼວ ພຽງແຕ່ມັນຫຼ້າຊ້າເລັກໜ້ອຍເທົ່ານັ້ນ.

ເຂົານັ່ງເຊັດປືນດ້ວຍນ້ຳມັນ ແລະທຳຄວາມສະອາດເຄື່ອງອຸປະກອນເກັບສຽງຢ່າງພິຖີພິຖັນຢູ່ໃນຫ້ອງທີ່ມີແຕ່ຄວາມເປົ່າວ່າງ ພ້ອມຄິດທົບທວນເຖິງແຜນການໃໝ່ອີກຄັ້ງ. ເວລານີ້ກໍແມ່ນຊ່ວງຕອນຄ່ຳຂອງງານບຸນນະມັດສະການພະທາດຫຼວງວຽງຈັນທາງໂຮງໝໍໜ້າຈະມີພວກແພດໝໍເຝົ້າຍາມເຫຼືອຢູ່ບໍ່ພໍເທົ່າໃດຄົນ ຫາກພວກເຂົາສາມາດເກ້ຍກ່ອມໃຫ້ຄົນໃດຄົນໜຶ່ງຢູ່ຕໍ່ຈົນໝົດຄືນ ພວກນາງພະຍາບານຄົງພາກັນແຕ່ງໜ້າທາປາກແດງແຈ່ວແວ່ວຄືກັບຕຸກກະຕາເຄືອບເຫຼື້ອມ ແລ້ວກໍພາກັນອອກໄປຢ່າງເປັນຂະບວນເພື່ອອວດໂສມຕໍ່ໜ້າບ່າວໆ ໃນງານບຸນ. ບາງທີກະໂຕ ເຄນ ນາລີເອງກໍອາດຈະໄປຊອກໝ່າຍສາວຈັກຄົນຢູ່ຫັ້ນເມື່ອພາລະກິດຂອງເຂົາສຳເລັດ.

ໜ່ວຍງານຮັກສາຄວາມໝັ້ນຄົງໄດ້ຮຽກເອົາພວກທະຫານຍາມກັບໄປໝົດແລ້ວສະນັ້ນ, ສີຣິຈະຕ້ອງຢູ່ຄົນດຽວໃນຫ້ອງຂອງໂຮງໝໍ. ບໍ່ມີໂຊກວາສະໜາທັງບໍ່ມີຄວາມບັງເອີນໃດໆ ອີກແລ້ວທີ່ຈະຊ່ວຍໃຫ້ເຂົາລອດຊີວິດຢູ່ໄດ້ເປັນຄັ້ງທີສາມ.

ເມື່ອລົດຈັກຄັນເກົ່າໝອງຂອງເຂົາແລ່ນລົງມາແຕ່ທາງຄ້ອຍເນີນທີ່ຫ່າງຈາກອົງພະທາດອັນຍິ່ງໃຫຍ່ຄ້າຍກັບວ່າເຂົາກຳລັງສວນທາງກັນກັບຄື້ນມະນຸດ. ຜູ້ຄົນພາກັນມຸ່ງໜ້າແຫ່ແໜໄປຕາມເສັ້ນທາງທີ່ບໍ່ມີເລນຊ້າຍແລະຂວາ ເຊິ່ງບາງຄົນກໍຍ່າງ, ບາງຄົນກໍຂີ່ລົດຖີບ ແລະບາງຄົນກໍຈູງລົດຈັກປະປົນກັນທ່າມກາງຝູງຊົນເປັນກຸ່ມໃຫຍ່ທີ່ມີຫຼາຍສີສັນ. ເຄນ ນາລີ ໃຊ້ຜ້າພັນຄໍປິດປາກປິດດັງ ພ້ອມບີບແກໄລ່ຝູງຊົນຕະຫຼອດທາງຈົນຮອດປະຕູໄຊ. ຜູ້ຄົນຕ່າງກໍພາກັນຫົວເຍີ້ຍທັງຮ້ອງດ່າຄົນແປກໜ້າສາລະພັດນາມຜູ້ທີ່ກຳລັງຂັບລົດສວນທາງຕ່າງໝູ່.

ການເດີນທາງເປັນໄປຢ່າງເຊື່ອງຊ້າຈົນມາເຖິງຖະໜົນລ້ານຊ້າງ ບ່ອນທີ່ເຈົ້າໜ້າທີ່ຕຳຫຼວດເປີດຊ່ອງທາງໄວ້ໜຶ່ງເລນ  ເພື່ອອຳນວຍຄວາມສະດວກໃຫ້ບັນດາສະມາຊິກພັກທີ່ເດີນທາງກັບມາຈາກພິທີລະນຶກ.  ພໍແຕ່ຫວິດພົ້ນຈາກຖະໜົນໃຫຍ່ເຂົາກໍບໍ່ເຫັນໃຜຈັກຄົນອີກ. ເຂົາເອົາລົດຈັກໄປຈອດໄວ້ຢູ່ໃກ້ໆ ກັບກົມສາມັນສຶກສາ ແລ້ວກໍຍ່າງລົງໄປທີ່ເສົາປະຕູຄອນກຣີດຕໍ່ໜ້າໂຮງໝໍມະໂຫສົດ ແມ່ນແຕ່ທະຫານກໍຍັງບໍ່ຢູ່ເຝົ້າຍາມແມ່ນແຕ່ຄົນດຽວ.

ດວງຕາເວັນລາລັບສູ່ຂອບຟ້າຫວ່າງບໍ່ດົນມານີ້,  ອາຄານບ້ານເຮືອນຫຼາຍຫຼັງຈຶ່ງຖືກຄວາມມືດມິດກືນກິນເທື່ອລະໜ້ອຍ ແສງໄຟຈາກຕຶກຄົນເຈັບທົ່ວໄປໄດ້ຕັ້ງລຽນລາຍເປັນຈຸດຫ່າງອອກໄປ ຂະນະທີ່ຫ້ອງເຄົາເຕີຂອງນາງພະຍາບານກໍມີຫຼອດໄຟພຽງໜຶ່ງດວງ. ເຄນ ນາລີ ກ້າວເຂົ້າໄປໃນຕຶກຫ້ອງພັກສ່ວນຕົວ ກ່ອນຈະປົດເກີບອອກແລ້ວຜ່ານປະຕູເຂົ້າໄປທາງໃນ.  ຊ່ອງທາງຍ່າງປາກົດເປັນສາຍຍາວຢູ່ທາງກາງລະຫວ່າງຫ້ອງພັກຂອງຄົນເຈັບທັງສອງຟາກຂ້າງ, ບໍລິເວນໂຖງທາງຍ່າງແມ່ນມືດສະໜິດ ອາໄສພຽງແສງໄຟສາດສ່ອງມາຈາກປ່ອງປະຕູແກ້ວເທິງປະຕູສອງບານເທົ່ານັ້ນ ສ່ວນຫ້ອງອື່ນໆນັ້ນເຫັນໄດ້ວ່າເປົ່າວ່າງບໍ່ມີໃຜຢູ່ຈັກຄົນ.

ຫ້ອງ ໔ອີ ຢູ່ເຄິ່ງກາງຂອງທາງຍ່າງ. ເຄນ ນາລີຢຸດຢູ່ທາງນອກຂ້າງປະຕູ ພ້ອມດັກຟັງສຽງໃດໜຶ່ງທີ່ອາດເລັດລອດອອກມາ ປາກົດວ່າມັນມິດອິ່ມສິ້ມຢູ່. ເຂົາໃຊ້ມືໝູນລູກບິດປະຕູດ້ວຍແຮງເບົາໆ ກ່ອນຈະເປີດມັນອອກໂດຍປັດສະຈາກສຽງລັ່ນອອດແອດເຂົາຄ່ອຍຢອງບາດຕີນເຂົ້າໄປຂ້າງໃນຈຶ່ງເຫັນສີຣິນອນຫຼັບຢູ່ເທິງຕຽງໃຕ້ຜ້າຫົ່ມສີຂາວປົກຢູ່ ໂດຍມີໜ້າກາກອົກຊີຄຸມໄວ້ເທິງປາກ ມີແສງສາດສ່ອງມາຈາກໂຄມໄຟທີ່ຖືກປົກຄຸມດ້ວຍຜ້າແພສີແດງ.

ເຄນ ນາລີຫັນໜ້າສອດສ່ອງເບິ່ງເສັ້ນໂຖງທາງຍ່າງທີ່ໄຮ້ຜູ້ຄົນອີກຄັ້ງກ່ອນຈະກ້າວຂາເຂົ້າໄປໃນຫ້ອງ  ໂດຍປິດປະຕູຂ້າງຫຼັງໄວ້ພ້ອມຊັກປືນອອກຈາກຊອງໜັງທີ່ຢູ່ດ້ານໜ້າຂອງຊຸດຫຸ້ມເກາະກັນກະສຸນແລ້ວໝູນອຸປະກອນເກັບສຽງເຂົ້າໃສ່ ແຕ່ໃນຍາມອຶນລະວົນຂອງຄໍ່າຄືນເຊັ່ນນີ້ ແມ່ນແຕ່ເຂົາຈະໃຊ້ປືນໃຫຍ່ລັ່ນໄກກໍຄືງບໍ່ມີໃຜໄດ້ຍິນ.

ເຂົາຄ່ອຍສາວບາດຕີນໄປທີ່ປາຍຕຽງ ພ້ອມເລັງປືນໄປທີ່ຫົວໃຈຂອງທ່ານໝໍຊັນນະສູດສິບ ແລ້ວລັ່ນໄກ ເຂົາລັ່ນກະສຸນລູກປືນອອກໄປເຖິງຫົກນັດຊ້ອນແບບລະດັບມືອາຊີບ ໂດຍບໍ່ມີການສົນທະນາໃດໆ ທັງບໍ່ມີຄໍາສາລະພາບ ຫຼືອະທິບາຍຫຍັງເລີຍໃນນາທີສຸດທ້າຍ. ເຂົາຖອນຫັນໃຈຢ່າງໂລ່ງອົກ ເມື່ອລູກປືນພຸ່ງອອກໄປຈົນໝົດໃນລໍາກ້ອງໃນທີ່ສຸດໂຊກກໍບໍ່ໄດ້ເຂົ້າຂ້າງຊາຍຄົນນີ້ອີກຕໍ່ໄປ.

ເຂົາລໍຖ້າເບິ່ງເລືອດສີແດງທີ່ຈະໄຫຼຜ່ານແຜ່ນແພສີຂາວຢ່າງຊ້າໆ  ດ້ວຍຄວາມ

ເພິ່ງພໍໃຈ ແຕ່ມັນກໍບໍ່ເກີດຂຶ້ນ. ທັນໃດນັ້ນ, ເຂົາກໍສະເດືອກຮູ້ວ່າມີຫຍັງບາງຢ່າງຜິດປົກກະຕິ. ເຂົາສາວບາດຕີນໄປຂ້າງໜ້າ ທັງໃຊ້ມືກະຊາກເອົາສົ້ນຜ້າຫົ່ມອອກຈາກຕຽງ.

ໝອນສາມໜ່ວຍນອນລຽນລາຍຢູ່ກາງເສື່ອ ... ໜ່ວຍໜຶ່ງຖືກຍິງຈົນມຸ່ນອຸ້ຍປຸ້ຍ ... ສ່ວນທີ່ຢູ່ກ້ອງໜ້າກາກອີກຊີແມ່ນໜ້າກາກຊະນິດໜຶ່ງທີ່ແຕກຕ່າງອອກໄປ ເນື່ອງຈາກເປັນເຄື່ອງບັນນາການພິເສດທີ່ມອບໃຫ້ກັບລະບອບການປົກຄອງແບບໃໝ່ ຈຶ່ງມີການຜະລິດໜ້າກາກເຈ້ຍອັດຮູບໃບໜ້າທ່ານນາຍົກລັດຖະມົນຕີອອກມາຈຳໜ່າຍໃນງານບຸນນະມັດສະການພະທາດຫຼວງ ແລະເມື່ອນຳຂົນໄກ່ສີ ຂາວມາແຕ່ງແຕ້ມຕື່ມເລັກໜ້ອຍກໍຍິ່ງເຮັດໃຫ້ເບິ່ງຄືກັບວ່າແມ່ນທ່ານໝໍສີຣິອ້ອຍຕ້ອຍ.

ເຄນ ນາລີ ຮູ້ສຶກປຸ້ນທ້ອງປວດຮາກຂຶ້ນມາທັນທີ ເຂົາລ້ວງມືເຂົ້າກະເປົາເພື່ອຈະຢິບເອົາລູກປືນນັດໃໝ່ອອກມາ ແຕ່ເຂົາກໍຮູ້ວ່າບໍ່ມີເວລາເຫຼືອພໍທີ່ຈະໃຊ້ມັນອີກແລ້ວ. ປະຕູຖືກກະຊາກໃຫ້ເປີດອອກ ແລະແລ້ວໂພສີພ້ອມກັບເຈົ້າໜ້າທີ່ຕຳຫຼວດອີກສອງຄົນຜູ້ຮ່າງໃຫຍ່ຈົກຄົກ ກໍພາກັນພຸ່ງພວດພາດເຂົ້າມາໃນຫ້ອງພ້ອມປືນພົກຂອງໃຜລາວທີ່ກຳລັງຢູ່ໃນທ່າກຽມພ້ອມ ທັງສາມຄາດວ່າຈະມີການຍິງຕໍ່ສູ້ກັນ ແຕ່ເຫດການບໍ່ເປັນເຊັ່ນນັ້ນ. ເຄນ ນາລີ ວາງປືນຂອງເຂົາລົງ ພ້ອມເງີຍໜ້າຂຶ້ນເບິ່ງເທິງເພດານທັງຫົວກາກໆ ອອກມາ ມັນບໍ່ແມ່ນສຽງຫົວທີ່ເກີດຈາກເລື່ອງຕະຫຼົກຂົບຂັນ ແຕ່ມັນເປັນສຽງຫົວແຫ່ງຄວາມປະລາໄຊຢ່າງຄົນອັບອາຍຂາຍຂີ້ໜ້າ.

ຕຳຫຼວດໃສ່ກະແຈມືເຄນ ນາລີ ໄວ້ພ້ອມກວດຄົ້ນກະເປົາຂອງເຂົາ ທັງບອກເຂົາປິດປາກງຽບຈົນກວ່າຈະຖືກສອບສວນ. ໃນເມື່ອລັດຖະທຳມະນູນຖືກຍົກ ເລີກໄປແລ້ວຈຶ່ງບໍ່ມີການອ່ານຄຳປະກາດກ່ຽວກັບສິດຂອງຜູ້ຕ້ອງຫາ ເຊິ່ງກໍຖືວ່າເປັນເລື່ອງດີຢູ່ແລ້ວເພາະພວກເຂົາກໍບໍ່ມີຫຍັງຈະໃຫ້ສິດແກ່ເຄນ ນາລີຈັກຢ່າງເຊັ່ນກັນ.

ໂພສີສະໂງກໜ້າເຂົ້າໄປຈົນເກືອບຈຳກັບຮູດັງຂອງຜູ້ຕ້ອງຫາ. “ຮູ້ບໍວ່າເຮົານຳຫາໂຕຕັ້ງດົນແລ້ວ ເຮົາລະຄິດວ່າຜ່ານມາຍ້ອນເຮົາໃຫ້ຄວາມເຄົາລົບໂຕຫຼາຍເກີນໄປ ແຕ່ຖ້າເຮົາຮູ້ວ່າໂຕເຮັດວຽກສົກກະປົກແນວນີ້ ເຮົາລາກຄໍໂຕເຂົ້າຄຸກແຕ່ດົນແລ້ວແຫຼະ.” ເຄນ ນາລີ ມົນຕາເມົ້າໆ ແນມເບິ່ງໜ້າຜາກຂອງໂພສີ ເຂົາບໍ່ແມ່ນຄົນຈະສະເທືອນຈິດສະເທືອນໃຈກັບຄຳເວົ້າຂອງໃຜງ່າຍໆ. “ກ່ອນພາສະຫາຍໄປຢູ່ເຮືອນຫຼັງໃໝ່ ພວກເຮົາພາກັນໄປທັກທາຍທ່ານໝໍສີຣິກ່ອນດີບໍ?”

ຕຳຫຼວດທັງສາມພາເຂົາໄປທີ່ຫ້ອງໜຶ່ງຂ້າງໂຖງທາງຍ່າງ ທ່ານໝໍສີຣິຕົວຈິງກຳລັງນັ່ງອິມຍິ້ມອີງໝອນຢູ່ເທິງຕຽງແບບເຄິ່ງນັ່ງເຄິ່ງນອນ ທ່າມກາງການຫຸ້ມລ້ອມຂອງຄົນມາກໜ້າຫຼາຍຕາທີ່ມາຢ້ຽມຢາມເຂົາ. ເຈົ້າໜ້າທີ່ຕຳຫຼວດຄຸມຕົວເຄນ ນາລີ ມາຢືນຢູ່

ປາຍຕຽງ, ເຂົາແນມເບິ່ງສີຣິທັງແກວ່ງຫົວໄປມາຢ່າງຊ້າໆ.

"ອືມ ສະຫາຍເກດແກ້ວ. ດີໃຈທີ່ໄດ້ພົບສະຫາຍອີກຄັ້ງ ມັນຊ່າງໜ້າຜິດຫວັງອີ່ຫຼີ ຂ້ອຍເກືອບຈະຍົກນາງວົງໃຫ້ສະຫາຍແລ້ວໃດ໋ ບັດນີ້ຂ້ອຍເອງຄືຊິໜີບໍ່ມື້ມນາງແລ້ວຕິ ຊັ້ນ." ເຄນ ນາລີ ຍິ້ມ. "ໂອ, ແຕ່ຊື່ຂອງສະຫາຍບໍ່ແມ່ນເກດແກ້ວຕິເນາະ? ຕ້ອງຂໍ ຍົກຍ້ອງຈາກໃຈວ່າສະຫາຍຕົບຕາຄົນໄດ້ເກັ່ງອີ່ຫຼີ ໃຜໆ ກໍເຊື່ອວ່າສະຫາຍແມ່ນຄົນນັບ ໄກ່ຜູ້ໜ້າເຊື່ອຖືຄົນໜຶ່ງ. ຂໍໂທດເດີທີ່ເຮັດໃຫ້ແຜນການທຸກຢ່າງຂອງສະຫາຍພັງບໍ່ເປັນ ທ່າຈົນໝົດ ແຕ່ສະຫາຍກຳລັງຕໍ່ຕ້ານກັບພະລັງອຳນາດທີ່ບໍ່ມີຕົວຕົນເທິງໂລກໜ່ວຍນີ້ ຢ່າໄດ້ໂທດໂຕເອງເລີຍ."

ເຄນ ນາລີ ບໍ່ມີຫຍັງຈະເວົ້າຕໍ່ອີກ. ເຂົາບໍ່ຄິດຮອດຈະຖາມ ທັງບໍ່ມີຄວາມຈຳເປັນ ຫຍັງທີ່ຈະມາເຮັດເປັນຕີສະໝິດອີກແລ້ວ ເຂົາໄດ້ແຕ່ກວາດສາຍຕາແນມເບິ່ງຜູ້ຄົນ ຮອບໆ ຕົວ ເຊິ່ງມີທັງຕຸ້ຍ, ນ້ອງກິ່ງ, ຜູ້ພິພາກສາແຫງ, ສີວິໄລ, ທ່ານໝໍພອນສະຫວັນ, ລວມທັງເອື້ອຍຂອງໄໝ. ເຂົາມາຢູ່ທ່າມກາງວົງລ້ອມຂອງກຸ່ມຄົນທີ່ແຕກຕ່າງທາງ ຊົນຊັ້ນເຫຼົ່ານີ້ແນວໃດ? ເຂົາຫັນໜ້າໄປທາງໂພສີພ້ອມສະແດງໃຫ້ໂພສີຮູ້ວ່າຕົນເອງ ຕ້ອງການອອກຈາກບ່ອນນີ້ໄປ.

"ຖ້າເປັນເຮົານີ້ ເຮົາຄືຊິບໍ່ຟ້າວຢາກໄປບ່ອນທີ່ສະຫາຍຢາກໄປດອກ." ໂພສີບອກ ເຂົາ.

ເຈົ້າໜ້າທີ່ຕຳຫຼວດອີກສອງຄົນຍ່າງເຂົ້າມາ ພ້ອມຊວ້ານເອົາແຂນທັງສອງຂ້າງ ຂອງເຄນ ນາລີ ແລ້ວພາເຂົາຍ່າງອອກໄປທີ່ລົດຕູ້ ຮັບຮອງວ່າອະນາຄົດຂອງເຂົາຕ້ອງ ສັ້ນແນ່ນອນ.

23

# ອາຫານທ່ຽງສະດຸດີທ່ານໝໍຊັນນະສູດສົບຜູ້ລອດຕາຍ

ໜຶ່ງອາທິດຜ່ານໄປພາຍຫຼັງທີ່ສີຣີລອດຕາຍເປັນຄັ້ງທີສາມ. ສີວິໄລເລີ່ມເຊື່ອວ່າເພື່ອນຂອງເຂົາເປັນອໍາມະຕະແບບຂ້າບໍ່ຕາຍຢ່າງແທ້ຈິງ. ສະນັ້ນ, ໃນເມື່ອສີຣີເອງກໍບໍ່ຢາກຖືກຕັດສິດອອກຈາກຄວາມສຸກ ເຂົາຈຶ່ງປະກາດວ່າອາຫານທ່ຽງໃນມື້ວັນສຸກນັ້ນຈະເປັນການໄຫວ້ອາໄລຄົນຕາຍ ເຂົາຍັງຈະຫາເຫຼົ້າໄວອັດລົມໜຶ່ງຂວດມາລ່ອງຄໍພໍສ້າງບັນຍາກາດໃຫ້ອາຫານທ່ຽງຄັ້ງນີ້ມີຊີວິດຊີວາ. ເນື່ອງຈາກວ່າເປັນມື້ສົມວັນດີ, ເຂົາຈຶ່ງເຊີນສາລະວັດໂພສີມາຮ່ວມວົງນໍາ ເພາະເຫດການອັນເຫຼືອເຊື່ອທີ່ເກີດຂຶ້ນໃນອາທິດຜ່ານມານັ້ນ ຍັງມີເລື່ອງລາວທີ່ຍັງຄາລັງຄາຊັງເປັນໜຶ່ງ ຫຼືສອງຢ່າງທີ່ຕ້ອງການຄວາມກະຈ່າງແຈ້ງ.

ສີວິໄລ ແລະໂພສີພາກັນມາທັນເວລາພໍດີ ທັງສອງຍົກເລີກນັດໝາຍຂອງໃຜລາວຕະຫຼອດຊ່ວງຕອນບ່າຍວັນນັ້ນ ພ້ອມນັ່ງລົງທີ່ຂອນໄມ້ທ່ອນເດີມ ເພື່ອລໍຖ້າດື່ມດໍາກັບອາຫານທ່ຽງອັນແສນຍາວນານແບບສະບາຍເປັນກັນເອງ. ສີວິໄລກໍາລັງກຸມປ້ຳໄຂຝາຂວດເຫຼົ້າວາຍແບບທຸລັກທຸເລ.

“ຄືຊິບໍ່ໃຫ້ຖ້າຄົນຕາຍມາດື່ມນໍາກັນກ່ອນຕິເບາະ?”

“ໂອຍ ບໍ່ຖ້າດອກ.”

“ຄັນຊັ້ນມາພີ້ຂ້ອຍຊິຊ່ວຍ.” ໂພສີຄວ້າຈັບເອົາຂວດເຫຼົ້າມາເປີດເອງ.

“ເອີໂພສີ, ສີຣີຄືຊິບໍ່ຮູ້ຊໍ້າຕິວ່າທີ່ຈິງແລ້ວສະຫາຍມາເຮັດຫຍັງຢູ່ບອນນີ້?”

“ເຂົາຮູ້ພຽງແຕ່ວ່າຂ້ອຍເຮັດວຽກກັບຕໍາຫຼວດ ເຂົາບໍ່ໄດ້ລະແວງສົງໄສຫຍັງເລີຍວ່າຂ້ອຍຕັ້ງໃຈມາສືບເລື່ອງຂອງຄໍາກັບພັກພວກຂອງເຂົາ. ພໍແຕ່ຂ້ອຍຮູ້ວ່າເຂົາຫາກໍເລີ່ມທໍາການຊັນນະສູດສົບຂອງທ່ານນາງນິດນ້ອຍ ແລ້ວຂ້ອຍກໍຄິດວ່າຄົງຈະຮູ້ຂໍ້ມູນບາງຢ່າງຈາກປາກເຂົາ ຖ້າລອງໄດ້ດື່ມເຫຼົ້ານໍາກັນຈັກເລັກຈັກໜ້ອຍ. ຍ້ອນຈັ່ງຊັ້ນແຫຼະ, ຜູ້ພິພາກສາຈຶ່ງໄດ້ແນະນໍາວ່າຂ້ອຍເປັນເຈົ້າໜ້າທີ່ຕໍາຫຼວດທີ່ມາປະ ສານງານກັບເຈົ້າໜ້າທີ່ຊັນນະສູດສົບ ບໍ່ຄິດບໍ່ຝັນວ່າຂ້ອຍຊິໂຊກດີປານນັ້ນ.”

“ເປັນຫຍັງຄືປ່ອຍໃຫ້ຄົນແທ້ກວ່າຊິເອົາຫຼັກຖານຂຸມນັ້ນອອກມາໃຊ້?”

"ອືມ! ທຳອິດກໍຄືວ່າ ຍັງບໍ່ມີຂໍ້ສະຫຼຸບຫຍັງເທື່ອ. ອັນທີສອງກໍແມ່ນ ຂ້ອຍຕັ້ງໃຈຢາກຈັບເຄນ ນາລີ ນຳ ຂ້ອຍນຳໄລ່ລ່າເຂົາມາຫຼາຍປີ ແຕ່ເຂົາປ່ຽນເອກະລັກ ແລະລັກສະນະທ່າທາງດຸໂພດ ຂ້ອຍໂລດນຳເຂົາບໍ່ທັນຈັກເທື່ອ. ຂ້ອຍໝັ້ນໃຈວ່າ ຖ້າຜູ້ເປັນເຈົ້ານາຍຫາກລົງມືຂ້າເມຍຂອງຕົນເອງ ເຂົາກໍຕ້ອງໃຊ້ລູກນ້ອງຜູ້ບອກໄດ້ໃຊ້ຟັງເປັນຄົນຈັດການທຸກຢ່າງໃຫ້ກ້ຽງເອີດເຕີດບໍ່ເຫຼືອແມ່ນແຕ່ຮອຍ ຂ້ອຍພຽງຕ້ອງ ການຫາເວລາສືບໃຫ້ຮູ້ຄັກແນ່ວ່າເຂົາແມ່ນໃຜກັນແທ້ ເຂົາເຮັດໃຫ້ຂ້ອຍຕົກໂງ່ມາຕັ້ງດົນ." ສີວິໄລເຫຍັນເຫຼົ້າວາຍໃສ່ຈອກແກ້ວສີ່ໜ່ວຍ. "ແມ່ນໃຜຄົນທີ່ສີ່?"

"ແລ້ວຈະຮູ້ດອກ. ສະຫາຍເລີ່ມສົງໄສວ່າຊາຍຄົນນັ້ນແມ່ນເກດແກ້ວຕັ້ງ ແຕ່ຕອນໃດ?"

"ກໍຍ້ອນມີຫຍັງຫຼາຍຢ່າງທີ່ມັນບໍ່ລົງຕົວຈົນກວ່າສີຣິບອກວ່າຄົນພວກນັ້ນສິ່ງອາຈານອູ້ມຈາກລີເຊໄປເມືອງວຽງໄຊ."

"ບ້າຄັກແທ້. ຂ້ອຍຄວນຈະນຳສືບເລື່ອງນັ້ນ."

"ບໍ່ເປັນຫຍັງດອກ ຂ້ອຍຈັດການແລ້ວແຫຼະ. ຫ້ອງການຂອງສະຫາຍຄຳເປັນຝ່າຍເຊັນໜັງສືນຳສິ່ງ ແຕ່ກໍມີອີກເລື່ອງໜຶ່ງກໍຄື ພວກເຂົາມີໜ້າທີ່ອອກເອກະສານເປັນສ່ວນໃຫຍ່. ແຕ່ເກດແກ້ວເປັນຄົນສົ່ງລາຍງານສະບັບນັ້ນມາ ຈັ່ງຊັ້ນລະຈິ່ງເປັນຈຸດທຳອິດທີ່ພວກເຮົາຄິດວ່າສອງຄົນນັ້ນອາດຈະມີຄວາມກ່ຽວຂ້ອງກັນບໍ່ທາງໃດກໍທາງໜຶ່ງແຕ່ມັນກໍບໍ່ມີຫຍັງສຳຄັນພິລຶກ ເພາະເອກະສານທີ່ເຂົາລາຍງານກ່ຽວກັບທຸກຄົນນັ້ນລ້ວນແຕ່ໄຮ້ສາລະບ້າບໍ ຍິ່ງໄປກວ່ານັ້ນເຂົາຍັງປະພຶດຕົນຄືຄົນໂງ່ງ່າວເປັນປະຈຳ ຂ້ອຍເລີຍບໍ່ຄິດຈະສົງໄສຫຍັງເຂົາແມ່ນແຕ່ໜ້ອຍດຽວ.

"ແຕ່ຈາກນັ້ນຂ້ອຍກໍພົບສັນຍານເຊື່ອມໂຍງກັນເປັນເທື່ອທີສອງ ໃນລັກສະ ນະວິກວິນສຳພັນກັນ. ຂ້ອຍມີຮູບຖ່າຍຂອງທ່ານນາງມິດນ້ອຍ ເຊິ່ງມີບາງອັນກໍເປັນຮູບເກົ່າໆທີ່ຕັດມາຈາກໜັງສືພິມ ແຕ່ພໍມາສັງເກດເບິ່ງຄັກໆ ແລ້ວຂ້ອຍກໍພໍສະດຸ້ງອອກວ່າ ນາງບໍ່ແມ່ນແມ່ຍິງປະເພດທີ່ມັກແຕ່ງຕົວເອ້ເຜດເກີນໜ້າເກີນຕາໃນລະດັບປະເທດຈັກດີ້."

"ເຈົ້າຊ່າງໃຊ້ຄຳເວົ້າໄດ້ສຸພາບຫຼາຍ. ຂ້ອຍເຄີຍໄດ້ຍິນຄົນປຽບທຽບນາງໃສ່ກັບກົ້ນແບ້ຂົນຍາວພຸ້ນຕະວາ." ທັງສອງຍົກຈອກວາຍຂຶ້ນມາຕຸບບາດໜຶ່ງ ພ້ອມດື່ມອວຍພອນໃຫ້ກັນແລະກັນ ມັນເປັນການຮ່ວມສັງສັນທີ່ຫາໄດ້ຍາກ.

"ເອົາລະ ເຖິງແມ່ນນາງຈະເປັນສ່ວນໃດຂອງແບ້ກໍຕາມແຕ່ ຂ້ອຍກໍບໍ່ເຫັນວ່ານາງຈະແມ່ນແມ່ຍິງປະເພດທີ່ພໍຈະມັກແວ່ເຂົ້າຮ້ານເສີມສວຍປານໃດດອກ."

"ມີແຕ່ເທວະດາຟ້າແຖນພຸ້ນແຫຼະຮູ້ນະ."

"ແຕ່ໃນລາຍງານການຄາຕະກຳຂຽນໄວ້ແບບນັ້ນ ຂ້ອຍກໍເລີຍຕິດຕາມນຳຫາຄົນ

ຜູ້ທີ່ຂຽນມັນອອກມາແນວນັ້ນ. ພໍຈັບໄດ້ໄລ່ທັນເຂົາກໍບອກວ່າມີພະຍານຄົນໜຶ່ງທີ່ຮູ້ເຫັນເຫດການເປັນຄົນບອກເຂົາວ່າເຫັນທ່ານນາງນິດນ້ອຍໄປຮ້ານເສີມສວຍບ່ອນໄໝເຮັດວຽກອາທິດລະຄັ້ງ."

"ນາງຄວນຈະໄດ້ຮັບເງິນຄ່າເສີມສວຍຄືນໝົດແຫຼະແນວນີ້."

"ຂ້ອຍກັບໄປສອບຖາມກັບຄົນຢູ່ໃນຮ້ານຈຶ່ງຮູ້ວ່າມັນບໍ່ແມ່ນຄວາມຈິງ. ບໍ່ມີໃຜໃນຮ້ານເຄີຍເຫັນນາງໄປຫັ້ນຈັກເທື່ອ. ເຈົ້າກໍຮູ້ຢູ່ຕີ້ວ່າ ການທີ່ເຮົາຄິດຈະຕິດຕາມຄົ້ນຫາຄວາມຈິງຈາກຂ່າວລືໃນເມືອງໃຫຍ່ຫັ້ນ ມັນກໍບໍ່ຕ່າງຫຍັງກັບການໄລ່ຈັບຫາງກະປອມທີ່ກຳລັງປຽກນ້ຳໝາດໆ ນັ້ນແຫຼະ. ເຈົ້າໜ້າທີ່ຕຳຫຼວດຄົນນີ້ພຽງແຕ່ໄດ້ຟັງເລື່ອງເລົ່າຈາກປາກເພື່ອນບ້ານຂອງໄໝ ແລະນາງເພື່ອນບ້ານຫັ້ນກໍຮູ້ມາຈາກເພື່ອນຊາຍຂອງໄໝອີກຕໍ່ໜຶ່ງ. ຂ້ອຍແປກໃຈບ່ອນທີ່ວ່າເປັນຫຍັງໝໍນັ້ນຈຶ່ງເລືອກຈະບອກຂໍ້ມູນສ່ວນຕົວຕົນເອງໃຫ້ຄົນແປກໜ້າຮູ້ນຳແບບລະອຽດລະອໍ ແລ້ວຂ້ອຍຈຶ່ງສົນໃຈເພື່ອນຊາຍຂອງໄໝຄົນນັ້ນເປັນພິເສດ.

"ໂຊກຍັງດີທີ່ຢູ່ຫໍພັກຫັ້ນມີແຕ່ສາວໂສດ ເຊິ່ງກໍຈະມີຜູ້ສອດຮູ້ສອດເຫັນເມື່ອມີແຂກມາຢາມສາວຫ້ອງອື່ນໂດຍສະເພາະໃນຍາມກາງຄ່ຳກາງຄືນ ຂ້ອຍເອີ້ນເອົາຍິງເຫຼົ່ານັ້ນມາລວມຕົວກັນທັງພະຍາຍາມຮວບຮວມລາຍລະອຽດເບົ້າໜ້າຂອງຜູ້ທີ່ເຮົາກຳລັງຕິດຕາມຕົວ. ແລະແລ້ວກໍມີໜຶ່ງໃນຄົນກຸ່ມນັ້ນເປັນຜູ້ໃຫ້ຂໍ້ມູນສຳຄັນ ເຊິ່ງນາງເອງກໍບັງເອີນວ່າທຽວໄປໂຮງໝໍມະໂຫສົດຕະຫຼອດເພື່ອປິ່ນປົວພະຍາດບາງຢ່າງທີ່ນາງບໍ່ປະສົງຢາກຈະບອກໃຫ້ຮູ້.

"ນາງບອກວ່າ ຖ້າຄົນຜູ້ນີ້ແມ່ນຄົນດຽວກັບຜູ້ທີ່ຄົນອື່ນໆ ເວົ້າເຖິງແລ້ວ ນາງກໍເຫັນເຂົາຢູ່ແຖວໂຮງໝໍປະມານສອງສາມຄັ້ງ. ທ່າທາງເຂົາບໍ່ຄືກັບທ່ານໝໍ ແຕ່ແນ່ນອນເຂົາເອງກໍບໍ່ແມ່ນຄົນປ່ວຍເຊັ່ນກັນ. 'ຄືກັບເຈົ້າໜ້າທີ່ອີ່ຫຍັງຈັກຢ່າງທຳນອງນີ້' ນາງບອກຈັ່ງຊັ້ນ ຂ້ອຍກໍເລີຍບອກທີ່ຢູ່ຂອງຕົນໃຫ້ນາງຮູ້ເພື່ອວ່າຈະໄດ້ຕິດຕໍ່ຫາຂ້ອຍຕະຫຼອດເວລາຖ້ານາງເຫັນຜູ້ຊາຍຄົນນັ້ນອີກຄັ້ງ. ຄວາມຈິງແລ້ວ, ຂ້ອຍກໍບອກທີ່ຢູ່ໃຫ້ສາວໆທຸກຄົນຮູ້ນັ້ນແຫຼະ."

"ພະນັນໄດ້ເລີຍວ່າສະຫາຍຕ້ອງເຮັດແບບນັ້ນຢູ່ແລ້ວ."

"ກະຈັ່ງຊັ້ນແຫຼະ, ຄືນມື້ທີ່ສີຣິຖືກລະເບີດຂວ້າງໃສ່ ພໍແຕ່ຂ້ອຍກັບບ້ານກໍເຫັນຈົດໝາຍຈາກເພື່ອນບ້ານຄົ້ນນີ້. ມື້ນັ້ນນາງໄປໂຮງໝໍ ແລະກໍພົບຊາຍຜູ້ທີ່ພວກເຮົາຕ້ອງການຕົວຢູ່ຫັ້ນອີກຄັ້ງ. ນາງສອບຖາມນາງພະຍາບານວ່າເຂົາເປັນໃຜ ແລະກໍໄດ້ຄຳຕອບວ່າ ເຂົາເປັນສາຍລັບຂອງລັດຖະບານ ຫຼືອີ່ຫຍັງຈັກຢ່າງເຊິ່ງເຮັດວຽກຢູ່ຂ້າງຫຼັງຫ້ອງເກັບສົບ.

"ຄຳຕອບນັ້ນໄດ້ເປັນຕົວກະຕຸ້ນຈຸດສົນໃຈຂອງຂ້ອຍຂຶ້ນມາທັນທີ ສີຣິເຄີຍບອກກ່ຽວກັບຄົນນັບໄກ່ຜູ້ນີ້ ແຕ່ຂ້ອຍກໍບໍ່ເຄີຍພົບໜ້າເຂົາ. ຂ້ອຍບໍ່ຮູ້ຊໍ້າວ່າໜ້າຕາທ່າທາງຂອງເຂົາເປັນແນວໃດ ກໍເລີຍຄິດວ່າຈະຈອບເຂົ້າໄປໃນຫ້ອງເຮັດວຽກຂອງເຂົາ ບາງທີພໍຈະໄດ້ເຫັນຮູບຕິດບັດເກົ່າໆ ຫຼືຮູບຖ່າຍຈັກໃບຢູ່ໃນຫ້ອງ ແລ້ວຈະເກັບເອົາໄປໃຫ້ເພື່ອນບ້ານຄົນນັ້ນເບິ່ງ.

"ແຕ່ພໍເມື່ອຂ້ອຍໄປຮອດໂຮງໝໍປຸບ ກໍມີເລື່ອງອຶນລະວົນເກີດຂຶ້ນ ແພດໝໍທີ່ເຂົ້າເວນຕອນກາງຄືນເຄິ່ງໜຶ່ງພາກັນຖືຄຸນໍ້າເກົ່າໆ ກັບອີ່ງ້ຽງອອກມາ ທັງພະຍາຍາມມອດໄຟຢູ່ເຮືອນຄົວ. ຂ້ອຍກໍເລີຍຊ່ວຍພວກເຂົາເປັນຊົ່ວໂມງຈົນສາມາດຄວບຄຸມໄຟໄດ້ ໃນເວລານັ້ນເອງທີ່ຂ້ອຍຮູ້ວ່າຫ້ອງຄົວນັ້ນຕັ້ງຢູ່ໃຕ້ຫ້ອງສະໝຸດພໍດີ ຈິ່ງສະເດືອກຮູ້ທັນທີວ່າມັນບໍ່ແມ່ນເລື່ອງບັງເອີນຫຍັງອີກແລ້ວ.

"ດັ່ງນັ້ນ ຂ້ອຍຈິ່ງຟ້າວໄປຫ້ອງການຂົນຂວາຍທີ່ຢູ່ເບື້ອງຫຼັງຫ້ອງເກັບສິບທັນທີ. ມັນເປັນອາຄານທີ່ສ້າງແບບງ່າຍໆ ຫາຄວາມປອດໄພບໍ່ມີເລີຍເທົ່າທີ່ຂ້ອຍເຄີຍເຫັນມາ ເພາະບໍ່ມີຫຍັງຫຼາຍກວ່າໄມ້ໄຜ່ກັບໃບຕອງ ເຊິ່ງມັນກໍງ່າຍທີ່ຈະເຂົ້າໄປຂ້າງໃນໄດ້ແບບສະບາຍ. ຂ້ອຍບໍ່ແປກໃຈຫຍັງດອກທີ່ບໍ່ພົບເຫັນຫຼັກຖານບາງຢ່າງແມ່ນແຕ່ຊິ້ນດຽວໃນຫັ້ນ ແຕ່ຂ້ອຍກໍພໍຮູ້ສຶກໄດ້ວ່າມີຫຍັງບາງຢ່າງຜິດປົກກະຕິ. ຂ້ອຍນັ່ງທີ່ໂຕະເຮັດວຽກແລ້ວກວດສາຍຕາເບິ່ງລັກສະນະການຈັດຫ້ອງ.

"ແລະແລ້ວຂ້ອຍກະສະເດືອກຮູ້ທັນທີ. ພາຍໃນຫ້ອງມີປະຕູປ່ອງຢ້ຽມທັງດ້ານໜ້າແລະດ້ານຫຼັງ ແຕ່ໂຕະເຮັດວຽກຊໍ້າພັດບໍ່ຕັ້ງຢູ່ຊື່ໜ້າປະຕູປ່ອງຢ້ຽມປ່ອງໃດເລີຍ ຫ້ອງນັ້ນບໍ່ມີຮອດພັດລົມ ແລ້ວເປັນຫຍັງເຂົາຈິ່ງບໍ່ນັ່ງຢູ່ຊື່ປະຕູປ່ອງຢ້ຽມບ່ອນທີ່ພໍຈະໄດ້ຮັບລົມຈາກທຳມະຊາດແດ່ແຫຼະ? ໂຕະເຮັດວຽກຕັ້ງແບບແນບຕິດກັບຝາຂ້າງໜຶ່ງ ຂ້ອຍລອງຍ້າຍມັນອອກ ແຕ່ຂາຂ້າງໜຶ່ງພັດຕິດຄາຢູ່ ຂະນະນັ້ນເອງທີ່ຂ້ອຍເຫັນລວດສາຍໄຟມັດຕິດກັບຂາໂຕະດ້ານຫຼັງ ເຊິ່ງມັນຖືກຕໍ່ສາຍມາຈາກພື້ນດິນທີ່ເຊື່ອມຈອດກັບສ່ວນໜຶ່ງຂອງອຸປະກອນຂະໜາດສິບຊັງຕີແມັດ, ແລະຂ້າງເທິງເປັນປັກເຊື່ອມຕໍ່ຄ້າຍຄືກັບປັກລວດສາຍໄຟ."

"ເຂົາດັກຟັງທຸກເລື່ອງໃນຫ້ອງຊັນນະສູດສິບ." ສີວິໄລເວົ້າ.

"ເຫັນໄດ້ຊັດເຈນວ່າ ເຂົາຖອດອຸປະກອນຫຼັກກັບເມືອບ້ານນຳ, ແຕ່ຂ້ອຍໄດ້ຂຸດເບິ່ງວ່າເສັ້ນລວດນັ້ນຢູ່ໃສກັນແທ້ ຈິ່ງເຫັນວ່າສາຍເສັ້ນນັ້ນຖືກສົ່ງຜ່ານໄປທາງພື້ນດິນຈົນເຖິງທາງອອກຂອງທໍ່ລະບາຍນໍ້າເບື້ອງຫຼັງຫ້ອງເກັບສິບ."

"ສະນັ້ນເຂົາກໍເລີຍຮູ້ທຸກຢ່າງທີ່ເກີດຂຶ້ນໃນຫ້ອງນັ້ນ."

"ທຸກຄຳເວົ້າທີ່ສີຣິບອກໃຫ້ຜູ້ຊ່ວຍຂອງເຂົາຈົດໄວ້ ລວມທັງການທີ່ຜູ້ຊ່ວຍຊັນນະສູດ

ສິບສອງຄົນລົມກັນ ຂ້ອຍຮູ້ວ່າມັນຕ້ອງເສັດໃຫ້ຂ້ອຍແທ້ຄາວນີ້ ແຕ່ຂ້ອຍບໍ່ຮູ້ວ່າເຂົາພັກຢູ່ໃສ. ຈຸດດຽວທີ່ຂ້ອຍສາມາດຈັບກຸມເຂົາໄດ້ກໍຄື ບ່ອນເຮັດວຽກ. ຂ້ອຍຈຶ່ງປຸກລູກນ້ອງສອງສາມຄົນໃຫ້ຕື່ນຂຶ້ນມາເຝົ້າຍາມ ຈາກນັ້ນກໍໄປປຸກຜູ້ພິພາກສາຂຶ້ນມາຈາກບ່ອນນອນເພື່ອອອກໝາຍຈັບ ແລະວາງກັບດັກໄວ້ທົ່ວທຸກແຫ່ງຄືກັບດັກໜູ ເພື່ອວ່າເຂົາຈະໂຜ່ໜ້າມາ ແຕ່ໝໍທ່ານັ້ນຊໍ້າພັດບໍ່ມາອີກເລີຍ. ພວກເຮົາໄດ້ແຕ່ລໍຖ້າຢູ່ຫັ້ນໝົດມື້ໝົດເວັນ, ແມ່ນແຕ່ຍາມປວດຍ່ຽວ ຫຼືຍາມຈະອອກໄປກິນເຂົ້າກໍຍັງບໍ່ກ້າໄປເພາະຢ້ານຈະພາດທ່າບໍ່ທັນໝໍນັ້ນ ແຕ່ກໍບໍ່ເຫັນວີ່ແວວຂອງເຂົາອີກ.”

ສິວິໄລສັງເກດເຫັນວ່າວາຍໃນຈອກຂອງເຂົາທັງສອງໝົດແລ້ວ ຈຶ່ງຈັບເອົາອີກສອງຈອກທີ່ເຫຼືອຂຶ້ນມາແລ້ວຍື່ນໃຫ້ຕຳຫຼວດຈອກໜຶ່ງ.

“ມັນຊິເສຍລົດຊາດໝົດ.” ເຂົາຍົກຈອກຂຶ້ນ. “ໂຊກດີ.”

“ໂຊກດີ.”

“ແລ້ວສະຫາຍພົບຕົວເຂົາແນວໃດ?”

“ສຸດທ້າຍແລ້ວເຂົາກໍມາຫາພວກເຮົາເອງ ພວກເຮົາພາກັນເຝົ້າຍາມຫ້ອງການເຂົາໝົດມື້ໝົດຄືນ ຂ້ອຍຢ້ານວ່າເຂົາຈະໂຜ່ມາຕອນພວກເຮົາພາກັນຫຼັບຢູ່ ກໍເລີຍແບ່ງທີມເວນຍາມອອກເປັນສອງກະ ຂ້ອຍຢູ່ທີມທີໜຶ່ງທີ່ໄດ້ພັກຜ່ອນງີບຫຼັບເລັກໜ້ອຍ. ຈາກນັ້ນຂ້ອຍກໍໄດ້ຕິດຕໍ່ຫາຜູ້ພິພາກສາແຫ່ງເພື່ອລາຍງານໃຫ້ເຂົາຮູ້ວ່າເກີດຫຍັງຂຶ້ນ ຕອນນັ້ນເອງທີ່ຂ້ອຍຮູ້ຂ່າວເລື່ອງອີ້ສາວພາຍໃນໜ່ວຍງານຮັກສາຄວາມໝັ້ນຄົງ ແລະການຈັບກຸມພິນຕີງາຄຳ ລວມທັງຂ່າວທີ່ເຮັດໃຫ້ຂ້ອຍຕົກໃຈເກືອບ ຊັ໋ອກກໍຄື ເຮືອນພັກຂອງສີຣິຖືກລະເບີດຈີນມຸ່ນອຸ້ຍປຸ້ຍ.

“ຂ້ອຍພົບສະຫາຍຮ່າງນ້ອຍຄັ້ງສຸດທ້າຍຕອນເຂົາກຳລັງຍ່າງເຂົ້າໄປໃນບ້ານ. ເທວະດາເທົ່ານັ້ນທີ່ຮູ້ວ່າ ເຂົາລອດພົ້ນຈາກການຖືກລະເບີດໄດ້ແນວໃດ. ເບື້ອງຕົ້ນໃຈຂ້ອຍກໍສັ່ງໃຫ້ໄປຈອບເບິ່ງເຂົາຕັ້ງແຕ່ທຳອິດທີ່ໄດ້ຍິນຂ່າວ ແຕ່ຂ້ອຍກໍຈຳເປັນຕ້ອງໄດ້ຄຳນຶງເຖິງສິ່ງຕ່າງໆ ເຊິ່ງຂ້ອຍເອງກໍບໍ່ຕ່າງຫຍັງກັບສີຣິທີ່ຄິດວ່າ ການທີ່ມີຄົນພະຍາຍາມຂ້າເຂົານັ້ນກໍລ້ວນແຕ່ກ່ຽວຂ້ອງກັບຄະດີຂອງຄົນຫວຽດນາມ. ຂ້ອຍຮູ້ວ່າເຄນ ນາລີບໍ່ເຄີຍເຮັດວຽກພາດແມ່ນແຕ່ຄັ້ງດຽວ.

“ແຕ່ພໍຮອດມື້ວັນຄານ ສີຣິກໍໄດ້ບອກຂໍ້ມູນກ່ຽວກັບຄະດີຂອງຄົນຫວຽດນາມໃຫ້ຫຼາຍຕໍ່ຫຼາຍຄົນຮູ້ນຳ ຈຶ່ງບໍ່ມີຄວາມຈຳເປັນອັນໃດເລີຍທີ່ຄົນພວກນັ້ນຈະມຸ່ງຂ້າເຂົາພຽງຜູ້ດຽວ. ມີພຽງຄະດີດຽວເທົ່ານັ້ນແຫຼະທີ່ສີຣິກຳຫຼັກຖານໄວ້ໃນມື. ເຄນ ນາລີ ຍັງບໍ່ຮູ້ວ່າຂ້ອຍແມ່ນໃຜ ທັງກ່ຽວຂ້ອງແນວໃດກັບຄະດີນີ້ ເນື່ອງຈາກຂ້ອຍລະມັດລະວັງຕົວເປັນຢ່າງດີ ທັງບໍ່ໄດ້ປ່າວປະກາດໃຫ້ໃຜຮູ້ ສະນັ້ນເຂົາຈຶ່ງຄິດແຕ່ວ່າ ມີພຽງສີຣິຄົນດຽວ

ເທົ່ານັ້ນສາມາດຫາຫຼັກຖານເພື່ອເອົາຜິດຄໍາໄດ້. ດັ່ງນັ້ນ, ຂ້ອຍຈໍາຕ້ອງຄາດເດົາເອົາເອງວ່າ ເລື່ອງທີ່ບໍ່ໜ້າເປັນໄປໄດ້ຫັ້ນມັນເກີດຂຶ້ນແລ້ວ. ນັກຂ້າມືອາຊີບເຮັດວຽກພາດມັນບໍ່ແມ່ນພຽງຄັ້ງດຽວ ແຕ່ເປັນສອງຄັ້ງຊ້ອນ.

"ຂ້ອຍຕິດຕາມຕົວເຂົາມາຕັ້ງດົນ, ເຄີຍເຫັນຜົນງານຈາກຄວາມສາມາດຂອງເຂົາມາແລ້ວຫຼາຍຄັ້ງ, ຂ້ອຍເລີ່ມຈະຄິດຄືກັບເຂົາ. ຂ້ອຍຮູ້ວ່າການທີ່ເຂົາເຮັດວຽກພາດສອງຄັ້ງລຽນຕິດແບບນີ້ມັນຕ້ອງທໍາລາຍຄວາມພາກພູມໃຈໃນຕົນເອງ. ຂ້ອຍເລີຍໝັ້ນໃຈກວ່າສິ່ງໃດໃນຊີວິດທີ່ວ່າເຂົາຈະຕ້ອງກັບມາແກ້ມືໃໝ່ອີກຄັ້ງ."

"ແລະຄືນງານບຸນນະມັດສະການພະທາດຫຼວງກໍເປັນເວລາອັນເໝາະເຈາະພໍດີ." ສີວິໄລເວົ້າ.

"ທະຫານຍາມຈາກໜ່ວຍງານຮັກສາຄວາມໝັ້ນຄົງຖືກເອີ້ນກັບຄືນກົມກອງ ແລະຍິ່ງມີຄົນຢູ່ໜ້ອຍດຽວຊໍ້າອີກ ຂ້ອຍຈຶ່ງຄ່ອຍນໍາເອົາອ້າຍນ້ອງເຂົ້າໄປໃນຫັ້ນເທື່ອລະຄົນເພາະຢ້ານວ່າເຂົາຈະທັນສັງເກດເຫັນ...ຕໍ່ຈາກນັ້ນກໍເປັນຄືສິ່ງທີ່ເຈົ້າຮູ້ນັ້ນແຫຼະ."

"ແມງວັນບິນເຂົ້າມາຕິດກັບໃຍແມງມຸມແລ້ວຮຽບຮ້ອຍ. ຕອນນີ້ເຂົາຢູ່ໃສລະ?"

"ຂ້ອຍຢ້ານວ່າຕົນເອງຄົງບໍ່ມີສິດຈະເວົ້າຫຍັງໄດ້ແລ້ວລະ ແຕ່ເມື່ອບໍ່ມີຄໍາຢູ່ໝູນຫຼັງເຂົາ ແລະເຄນ ນາລີເອງກໍບໍ່ສາມາດເຮັດຫຍັງໄດ້ອີກແລ້ວ ມັນກໍບໍ່ແມ່ນເລື່ອງຍາກທີ່ຈະຍຸບທີມລ່າສັງຫານ ຂ້ອຍຄິດວ່າມັນເປັນສັນຍານບໍ່ດີພໍເທົ່າໃດດອກ."

"ເປັນຫຍັງຄືວ່າແນວນັ້ນ?"

"ຂ້ອຍເຮັດວຽກມີປະສິດທິພາບຫຼາຍໂພດຈົນເຮັດໃຫ້ຕົນເອງຕ້ອງຕົກງານ. ຂ້ອຍບໍ່ມີວຽກເຮັດແລ້ວຕອນນີ້."

"ບໍ່ເວົ້າແນວນັ້ນນະ. ຄິດເສຍວ່າຕົນເອງໄດ້ວຽກໃໝ່ກະແລ້ວກັນ. ເຮົາມີວຽກຮ້ອຍແປດໃຫ້ຄົນໜຸ່ມຜູ້ມີໄຫວພິບຄືສະຫາຍເຮັດຢູ່ ເອົາລະພາກັນດື່ມຂວດນີ້ໃຫ້ໝົດແລ້ວເອົາຂວດເປົ່າໄປເຊື່ອງໄວ້ ກ່ອນທີ່ສືບຍ່າງໄດ້ຂອງພວກເຮົາຈະມາຮອດ ພວກເຮົາຈະເຮັດເປັນວ່າມັນຖືກຂີ້ລັກຫຼອຍໄປແລ້ວ."

ທັງສອງຫາກໍຈັດການກັບຫຼັກຖານຊິ້ນສຸດທ້າຍສໍາເລັດກໍພໍດີສີຣິ ກັບຊາຍແປກໜ້າທີ່ທັງສອງບໍ່ເຄີຍເຫັນຍ່າງຂ້າມຖະໜົນມານໍາກັນ. ທ່ານໝໍຫິ້ວຖົງຢາງ ພລາສຕິກເຊິ່ງສິ່ງສຽງຄ້ອກແຄ້ກອອກມາແຕ່ຂ້າງໃນຍາມທີ່ເຂົາຍ້າຍບາດຕີນ.

"ສະບາຍດີຕອນບ່າຍທ່ານສຸພາບບຸລຸດ."

"ໜ້າຈະເວົ້າວ່າຕອນຄໍ່າຫຼາຍກວ່າ."

"ຂໍໂທດທີ່ມາຊ້າ ຍ້ອນເສຍເວລານໍາຂັດຂີ້ໄຄເພື່ອປ່ຽນຮູບໂສມທ້າວໜຸ່ມຄົນຜູ້ນີ້ບໍ່ຄິດວ່າມັນຊິດົນປານນັ້ນ." ຊາຍໜຸ່ມທີ່ຢືນທາງຂ້າງສີຣິໃສ່ເສື້ອແຂນຍາວສີບົວ, ໂສ້ງ

ສະແລັກແບບຂາໃຫຍ່, ແລະເກີບກິລາເກືອບຢາກວ່າຍັງໃໝ່ອ່ຽມ. ຜົມຂອງເຂົາຜ່ານການສະ, ຕັດເລັມ ທັງແບ່ງເປັນຊົງຮຽບຮ້ອຍ ມີບາງສິ່ງຢ່າງເທິງໃບໜ້າສີນ້ຳຕານຂອງເຂົາໄດ້ເປັນສິ່ງສະດຸດຕາ.

"ສະບາຍດີຕອນບ່າຍທ່ານເອກອັກຄະລັດຖະທູດຣາຈິດ. ມັກບຸກຄະລິກໃໝ່ຂອງທ່ານຢູ່ບໍ?" ຣາຈິດຜູ້ບໍ່ເຕັມບາດສະແດງທ່າທາງແບບງຸນງົງ ແຕ່ກໍຕື່ນເຕັ້ນພໍສົມຄວນ. ສິຣິຈັບມືກັບສະຫາຍທັງສອງຂອງຕົນ.

"ຜົນການກວດສຸຂະພາບປາກົດວ່າຜ່ານທຸກຢ່າງ ຂ້ອຍລະຄິດວ່າເຂົາຊິມີພະຍາດຮ້ອຍແປດລຸມກິນຢູ່ຊັ້ນດອກ  ແຕ່ນອກຈາກພວກເຫົາກັບຮອຍບາດແຜສຽດສີເລັກໜ້ອຍສອງສາມຈຸດແລ້ວ  ຖືໄດ້ວ່າເຂົາເປັນນາຍແບບໂຄສະນາຜູ້ໂດ່ງດັງໄດ້ເລີຍແຫຼະສຳລັບຄົນທີ່ຊອກຫາກິນຕາມຖັງຂີ້ເຫຍື້ອ ແລະຫຼັບນອນໃນທໍ່ລະບາຍນ້ຳແນວນີ້."

"ບາງເທື່ອພວກເຮົາກໍຄວນລອງເຮັດເບິ່ງໃດລະ." ໂພສີກ່າວ. ຣາຈິດກຽມຈະຍ່າງອອກໄປເມື່ອທຸກຄົນປ້າຍກົ້ນລົງນັ່ງເອົາຂາໄຂ່ວຫ້າງອ້ອມຂອນໄມ້ຄ້າຍກັບວ່າມັນເປັນໂຕະສູງ.

"ຈະໄປໃສຫັ້ນນະທ່ານເອກອັກຄະລັດຖະທູດ? ມາໆ ເຂົ້າມາຮ່ວມວົງກັບພວກເຮົານີ້ກ່ອນ." ຊາຍອິນເດຍງວາກໜ້າຄົນຫຼັງຊົງຄິດຢູ່ຄາວໜຶ່ງ ຈາກນັ້ນກໍຍ່າງມານັ່ງຮ່ວມກັບທຸກຄົນ. ເຂົາອ້າປາກຫົວຂຶ້ນງາບໆ ແບບບໍ່ມີສຽງເພື່ອສະແດງໃຫ້ທຸກຄົນເຫັນວ່າເຂົາມີຄວາມສຸກ. ສີວິໄລກວດສາຍຕາເພື່ອສັງເກດເບິ່ງເສື້ອໄໝພົມງາມໂຕນັ້ນ.

"ສະຫາຍໄປຫາເສື້ອຜ້າແບບພໍເໝາະພໍດີກັບໂຕເຂົາແນວໃດ?"

"ເຮົາເຮັດວຽກຢູ່ຫ້ອງຊັນນະສູດສົບເດອ້າຍ.  ຍັງຊິຖາມອີກຢູ່ຫວາ?  ຈະຖິ້ມໃຫ້ເສຍຂອງ ..."

"ປອດຂອງທ່ານໝໍເປັນແນວໃດລະ?" ໂພສີຖາມ.

"ຂ້ອຍຫາກໍກວດຮ່າງກາຍແລ້ວແບບທີ່ວ່າຂ້ອຍເປັນຄົນຈັດການເອງ."

"ກໍດີແລ້ວເດ ທ່ານໝໍໂຊກດີຫຼາຍໃດ."

"ໂຊກດີແມ່ນຊື່ກາງຂອງຂ້ອຍດອກ.  ເອີເກືອບລືມລະເດ  ຂ້ອຍໄປຫາແມ່ໝໍເຖົ້າຄົນໜຶ່ງທີ່ຮູ້ຈັກ ..."

"ແມ່ໝໍທີ່ວ່ານີ້ຍັງມີຊີວິດຢູ່ຕິ?"

"ແນ່ນອນທີ່ສຸດ. ນາງດີໃຈຂະໜາດທີ່ເຫັນຂ້ອຍ ທັງຍັງຫຼຸດລາຄາເປັນພິເສດຂອງຊຸມນີ້ໃຫ້ນຳອີກ."  ສິຣິຈັບເອົາຂວດທີ່ມີຮູບຊົງປະຫຼາດທີ່ຍັງຕິດຂີ້ເຜີ້ງສາມຂວດອອກມາຈາກຖົງຢາງພລາສຕິກ  ພາຍໃນຂວດບັນຈຸຂອງແຫຼວສີແດງຄືໝາກເຊີຣີ.  "ກະຄື

ວ່ານັ້ນແຫຼະ ແນວສອງຄົນພວກເຈົ້າລະພາກັນດື່ມຂອງດີຈົນໝົດບໍ່ຈົ່ງໄວ້ໃຫ້ເຮົາຊີມນຳຈັກດີ້ ນີ້ແມ່ນເຫຼົ້າສາໂທປະສົມໝາກເໝົ້າ."

ສີວິໄລຈັບຂວດແກ້ວໜຶ່ງແລ້ວຂວ້າມປາກລົງ ກ່ອນທັນສັງເກດເຫັນຕະ ກອນລອຍຟູຂຶ້ນໄປເບື້ອງເທິງ. "ໂພສີ ຖ້າແມ່ນສະຖານະການປົກກະຕິນີ້ຂ້ອຍຈະບອກເຈົ້າວ່າຢ່າໄດ້ຮັບເຄື່ອງດື່ມສີແດງເລືອດທີ່ບໍ່ມີເຄື່ອງໝາຍການຄ້າຈາກເຈົ້າໜ້າທີ່ຊັນນະສູດສົບແຕ່ໃນເມື່ອບໍ່ມີທາງເລືອກຄືຈັ່ງຊີ້ພວກເຮົາກໍເຮັດຫຍັງບໍ່ໄດ້ນອກຈາກໄວ້ວາງໃຈເຂົາກ່ອນ. ຫຼືສະຫາຍຄິດວ່າແນວໃດ?"

"ຂ້ອຍວ່າໃຫ້ລາວລອງດື່ມຂວດທຳອິດກ່ອນ ແລ້ວລໍຖ້າເບິ່ງປະຕິກິລິຍາຈັກສິບນາທີ."

ສີຣິເປີດຂວດແກ້ວໜຶ່ງ ໂພສີທຳການຈັດຢາຍກ້ອນເຂົ້າຈີ່ປາເຕຂະໜາດພໍ ດີຄຳວາງລົງເທິງຂອນໄມ້ ສ່ວນຣາຈິດຜູ້ບໍ່ສົນປະກອບໄດ້ແຕ່ດົມ ທັງຊີມເບິ່ງເກັບກີລາຂອງຕົນເອງ ຂະນະທີ່ຍັງຫັ່ນເຂົ້າຈີ່ປາເຕຢູ່ນັ້ນ ສີວິໄລກໍຄິດພໍ້ຂ່າວສັ້ນທີ່ຖືກວາງໄວ້ຢູ່ໜ້າໂຕະເຮັດວຽກຂອງຕົນໃນມື້ນັ້ນ.

"ມື້ນີ້ເຮົາໄດ້ອ່ານເລື່ອງຕະຫຼົກສຸດໆ ຂ່າວໜຶ່ງ. ໄຕ້ຫວັນຈະຍົກເລີກສັນຍາຮັບຊື້ໄມ້ທ່ອນນຳຄະນະກອງທະຫານລາວ."

"ບໍ່ດອກ!" ສີຣິໜ້າແດງກ່ຳ.

"ສະຫາຍຄືຊິບໍ່ຮູ້ບໍ່ເຫັນກ່ຽວກັບເລື່ອງນັ້ນແມ່ນບໍ?"

"ເຮົານີ້ຫວາ? ບໍ່ຮູ້ແທ້ແຫຼະ. ເຮົາບໍ່ເຄີຍໄດ້ຍິນຂ່າວຫຍັງກ່ອນສະຫາຍເລີຍນາ. ແຕ່ວ່າ..."

"ເຫັນບໍ ວ່າລະນາ."

"ບໍ່ນາ ເຮົາພຽງແຕ່ໄດ້ຍິນມາວ່າ ຈີນເປັນຄົນທີ່ເຊື່ອເລື່ອງໂຊກລາງແບບພິຖີພິຖັນເລີຍແຫຼະ. ຄິດວ່າຖ້າພວກເຂົາຫາກຮູ້ເລື່ອງທີ່ວິນຍານຖືກຂັບໄລ່ໄສໜີຈາກຕົ້ນໄມ້ບ່ອນທີ່ຕົນສິງຢູ່ໃນຄຳມ່ວນແລ້ວ, ພວກເຂົາຕ້ອງກັງວົນຢູ່ແລ້ວວ່າໄມ້ຊຸມນັ້ນອາດເປັນ...ອືມ, ພວກເຈົ້າກຳນາຍເວນບໍ່ທາງໃດກໍທາງໜຶ່ງ."

"ໂດຍສະເພາະເມື່ອພວກວິນຍານເຫຼົ່ານັ້ນຫາກສະແດງອິດທິພົນເລັກໜ້ອຍພໍສຳຜັດໄດ້ ສະຫາຍຄິດວ່າພວກໄຕ້ຫວັນໄດ້ຍິນຂ່າວເລື່ອງວິນຍານຖືກຂັບໄລ່ໃນຄຳມ່ວນໄດ້ແນວໃດ ທັງທີ່ກໍຢູ່ໄກຄົນລະຟາກຟ້າ?" ໂພສີຖາມ.

ສີຣິແກວ່ງຫົວ. "ເຮົາເອງກໍຄິດບໍ່ອອກຄືກັນ."

"ອືມ. ພະນັນໄດ້ເລີຍວ່າມີບໍ່ມີຫຍັງດອກທີ່ເຈົ້າຈະຄິດບໍ່ອອກ." ໂພສີຫົວຂຶ້ນ.

ໃນທີ່ສຸດແຂກທີ່ມາຮ່ວມງານກໍພ້ອມທີ່ຈະກິນດື່ມໃຫ້ກັບຄົນຕາຍ. ເປັນພິທີທີ່ສັ້ນກະທັດຮັດ ທຸກຄົນພາກັນຢືນ ແລ້ວຍົກຈອກແກ້ວໃຫ້ສູງຂຶ້ນ. ສີວິໄລໄອອະແຮັມຂຶ້ນ

ບາດໜຶ່ງ ກ່ອນຈະເປັ່ງຄຳເວົ້າດ້ວຍນ້ຳສຽງອັນມ່ວນຫູທີ່ສຸດຕາມແບບຂອງພັກ.

"ທ່ານສຸພາບບຸລຸດທີ່ມາຮ່ວມອາຫານທ່ຽງຕໍ່ໜ້າສິບຂອງທ່ານໝໍຊັ້ນນະສູດສິບ ພວກເຮົາທຸກຄົນມາຮ່ວມຕົວກັນຢູ່ບ່ອນນີ້ໃນມື້ນີ້ ກໍເພື່ອເປັນກຽດແດ່ບຸກຄົນຜູ້ຊື່ສັດ ແລະເປັນທີ່ຮັກຂອງພວກເຮົາເຊິ່ງເຂົາໄດ້ຈາກໄປຢ່າງໜ້າເສົ້າໃຈທີ່ສຸດ."

"ເອີ ແມ່ນໆ."

"ງຽບເທາະແມສີຣີ. ເຖິງແມ່ນວ່າເຂົາຈະໃຊ້ຊີວິດແບບໂງ່ໆ ແຕ່ເຂົາກໍຕາຍແບບ ຮີໂຣຢ່າງບໍ່ຕ້ອງສົງໄສ."

"ຕາຍສາມເທື່ອນຳອີກ." ໂພສີເວົ້າຕື່ມ.

"ຕາຍເຖິງສາມຄັ້ງ ... ທ່ານໝໍສີຣິ ໄພບູນ ຜູ້ເຊິ່ງເປັນທັງທ່ານໝໍຊັ້ນນະສູດສິບ, ຜູ້ປ່ຽມລົ້ນໄປດ້ວຍຄວາມຮູ້, ເປັນທັງໝໍຜີ. ພວກເຮົາຂໍສະດຸດີແດ່ທ່ານ. ຂໍໃຫ້ທ່ານ ໂຊກດີ."

"ໂຊກດີ."

"ໂຊກດີ."

"... ໂຊກດີ."

ທັງສາມຫັນໄປເບິ່ງຣາຈິດດ້ວຍຄວາມປະຫຼາດໃຈ.

"ໂຕເວົ້າໄດ້ແມ່ນບໍນິ?"

"ໄດ້ບາງຄັ້ງ."

ອາຫານທ່ຽງຍືດຍາວໄປຈົນຮອດຫ້າໂມງແລງ. ເຄື່ອງນຸ່ງຊຸດໃໝ່ຂອງຣາຈິດກອງ ປະໄວ້ຢ່າງເປັນລະບຽບຢູ່ແຄມຝັ່ງແມ່ນ້ຳ, ແຕ່ບໍ່ເຫັນເຂົາປາກົດຕົວຢູ່ໃກ້ໆ ແຖວນັ້ນ. ໃນທີ່ສຸດຜູ້ອື່ນໆ ທີ່ເຫຼືອຢູ່ໃນງານກໍລຸກຂຶ້ນກ່າວຄຳອຳລາ. ສີວິໄລຕ້ອງກັບໄປຮ່ວມຊຸມນຸມ ກັບສະມາຊິກຄອບຄົວຢູ່ບ້ານເຮືອນຂອງຕົນ ສ່ວນອີກສອງສະຫາຍຕ່າງຄົນຕ່າງກໍບໍ່ມີ ຄອບຄົວໃຫ້ກັບໄປພົບປະ, ສະນັ້ນໂພສີຈິ່ງຖາມສີຣິວ່າຢາກໄປຊອກດື່ມສັງສັນກັນຕໍ່ຢູ່ ບ່ອນໃໝ່ ຫຼືບໍ່?

"ອືມ ຢ້ານວ່າຄືຊິໄປນຳບໍ່ໄດ້ດອກ."

"ໄປບໍ່ໄດ້ຊັ້ນຫວາ?"

"ຂ້ອຍມີ ... ມີນັດຕອນແລງມື້ນີ້."

ສີວິໄລອຸທານສຽງຫຼົງ ທັງເຕັ້ນຂຶ້ນເຕັ້ນລົງຈົນພວກກະປອມພາກັນແລ່ນປົບໄປລີ້ ຫາທີ່ກຳບັງ.

"ການທີ່ວ່າ 'ນັດ' ນີ້ບໍ່ແມ່ນໄປກັບສາວຂາຍເຂົ້າຈີ່ປາເຕຜູ້ງາມຄົນນັ້ນແມ່ນບໍ່ນິ?"

"ໂອຍໄປກິນເຂົ້ານຳກັນຊື່ໆ."

“ຄືກັນກັບເສິກໂຈມຕີໃນສົງຄາມຫວຽດນາມ ພຽງແຕ່ຕີກັນຊື່ໆ ຫັ້ນຕີ. ຫວັງວ່າຄື ຊິຍັງບໍ່ລືມຕິເນາະວ່າອັນໃດຢູ່ບ່ອນໃດແດ່.”

“ຢ່າສູ່ລາມົກຫຼາຍເທາະ. ຊໍ່າກິນເຂົ້າຊື່ໆ ແຕ່ຄວາມຈິງເຮົາກະຮູ້ສຶກປະມ່າໜ້ອຍໜຶ່ງ.”

“ບໍ່ຕ້ອງຫ່ວງດອກ ເຮົາໝັ້ນໃຈວ່ານາງຈະເປັນຝ່າຍບຸກກ່ອນແນ່ນອນ.”

ໂພສີເບັດໜ້າໄປຫາກະເປົາເອກະສານທີ່ວາງຢູ່ຂ້າງຕົວຕະຫຼອດເວລາຕອນກິນເຂົ້າທ່ຽງ ແລະດຶງເອົາແຟ້ມເອກະສານອັນໜາຕຶບອອກມາຈາກຂ້າງໃນ.

“ຄັນຊັ້ນຂ້ອຍກໍຄວນເອົາແຟ້ມນີ້ໃຫ້ທ່ານໝໍຕອນນີ້ເລີຍ.”

“ແມ່ນຫຍັງນີ້?”

“ຊີວະປະຫວັດຂອງທ່ານໝໍ.”

“ຊີວະປະຫວັດຂ້ອຍນີ້ຫວາ?”

“ພວກເຮົາພົບແຟ້ມປະຫວັດຫຼາຍສະບັບທີ່ສະຫາຍຄໍາ ແລະພັກພວກຂອງເຂົາເກັບຂໍ້ມູນກ່ຽວກັບສະມາຊິກອາວຸໂສ ພວກເຮົາກໍບໍ່ແນ່ໃຈວ່າພວກນັ້ນເຮັດຫຍັງແດ່ກັບສະມາຊິກອາວຸໂສເຫຼົ່ານີ້. ຜູ້ພິພາກສາຂອງທ່ານແນະນໍາໃຫ້ພວກເຮົາເອົາມາສິ່ງເຈົ້າຂອງແຟ້ມໃຫ້ໝົດ ແລ້ວໃຫ້ທ່ານເປັນຄົນຕັດສິນໃຈເອງ. ຜູ້ພິພາກສາບອກວ່າ ‘ລະບອບສັງຄົມນິຍົມນັ້ນປຽບເໝືອນລະບົບຈັກກະວານອັນຍິ່ງໃຫຍ່ ແລະຄວາມໄວ້ວາງໃຈກໍຄືບັນຍາກາດທີ່ໂອບອ້ອມໝູ່ດວງດາວເຂົ້າຮ່ວມກັນ.’”.

“ເຖິງຈະເປັນຄໍາຂວັນທີ່ບໍ່ເຂົ້າທ່າປານໃດ ແຕ່ກໍເຫັນໄດ້ຊັດເຈນວ່າ ຜູ້ພິພາກສາແຫງເລີ່ມມີສາມັນສໍານຶກຂຶ້ນມາແດ່ແລ້ວ.” ສີຣິເວົ້າ.

“ຂ້ອຍລະບໍ່ເຂົ້າໃຈເລີຍ.” ໂພສີກ່າວ.

“ບໍ່ເຄີຍມີໃຜເຂົ້າໃຈດອກ. ໃຫ້ຂ້ອຍຢືມກະເປົາເອກະສານຂອງເຈົ້າໄດ້ບໍ? ຂ້ອຍຢ້ານເຈົ້າຈະເປັນໄສ້ລິງທໍາສາກ່ອນ.”

24

# ເມື່ອຄິດວ່າມັນຈົບແລ້ວ ...

ສິຣິອາໄສຢູ່ເຮືອນພັກຊົ່ວຄາວທີ່ຕັ້ງຢູ່ໃກ້ກັບອານຸສາວະລີ. ເຮືອນຫຼັງນັ້ນອ້ອມຮອບໄປດ້ວຍທິວທັດອັນງົດງາມ ທັງເປັນມິດກັບສິ່ງແວດລ້ອມ ເຂົາຈຶ່ງບໍ່ຄິດລັງກຽດຫຍັງເລີຍ ຖ້າຈະຢູ່ເຮືອນຫຼັງນັ້ນໄປຕະຫຼອດ ແຕ່ຊື່ຂອງເຂົາກໍຫຍັບຂຶ້ນມາຢູ່ອັນດັບຕົ້ນໆ ໃນບັນຊີລາຍຊື່ຜູ້ມີສິດຄອບຄອງເຮືອນຫຼັງນັ້ນ ເຊິ່ງແມ່ນລາງວັນຕອບແທນແຫ່ງຄວາມກ້າຫານຂອງເຂົາເອງ ພາຍໃນໜຶ່ງເດືອນເຂົາກໍຈະມີເຮືອນຢູ່ເປັນຂອງຕົນເອງແລ້ວ ເຂົາຈະບໍ່ໄດ້ໃຊ້ປະຕູຫ້ອງໂຖງ ຫຼືຫ້ອງນ້ຳຮ່ວມກັບຄົນອື່ນອີກ ຟັງເບິ່ງແລ້ວຄົງຈະໂດດດ່ຽວປ່ຽວພອຍບໍ່ໜ້ອຍ.

ຍັງຕັ້ງສອງສາມຊົ່ວໂມງກ່ອນຈະເຖິງເວລານັດໝາຍ ເຂົາຈຶ່ງພໍມີເວລາພັກຜ່ອນ ແລະອາບນ້ຳທຳຄວາມສະອາດຮ່າງກາຍ ໃນເມື່ອສິຣິມີເສື້ອຜ້າຜັດປ່ຽນພຽງຊຸດດຽວ ເຂົາຈຶ່ງບໍ່ຈຳເປັນຕ້ອງມາເສຍເວລາທີ່ຈະຕ້ອງຕັດສິນໃຈວ່າຈະນຸ່ງຫຍັງດີ. ເຂົາລົ້ມຕົວລົງນອນເທິງຕຽງ ທັງເຜີຍຮອຍຍິ້ມຈົນແກ້ມທັງສອງຂ້າງຍ້ອຍອອກມາ. ກະເປົາເອກະສານວາງແນບຢູ່ຂ້າງຕົວ ເຂົາຈຶ່ງປົດລັອກອອກກ່ອນດຶງເອົາແຟ້ມເອກະສານລັບສຸດຍອດອອກມາ ເລື່ອງລາວຊີວິດຂອງເຂົາທີ່ກັ່ນກອງພາຍໃນເອກະສານສະບັບນັ້ນມີຄວາມໜາກວ່າເຈັດຊັງຕີແມັດ.

ມັນຄົງເຮັດໃຫ້ເຂົາເພີດເພີນກັບການອ່ານຈົນຮອດເດືອນໜ້າ, ເຂົາເປີດເບິ່ງເອກະສານພາຍໃນແຟ້ມ ມີທັງໜ້າພິມທີ່ເປັນລະບົບລະບຽບ, ບັນທຶກທີ່ຂຽນດ້ວຍລາຍມືແບບຟ້າວຟັ່ງ ('ທ່ານໝໍສິຣິຫາກໍຮ້ອງຮອງຜູ້ບັນຊາການວ່າບັກພາກ.'), ລວມທັງຮູບຖ່າຍ, ລາຍງານໃໝ່ ແລະຂ່າວຫຼ້າສຸດ. ຈາກນັ້ນເຂົາກໍພົບຈົດໝາຍສະບັບໜຶ່ງເຊິ່ງສອດໄວ້ຢູ່ທາງກາງຂອງແຟ້ມຫົວນັ້ນ ເຊິ່ງລົງວັນທີ ຓ.ຜ.໑໙໖໕ ມັນເປັນແຜ່ນເຈ້ຍທີ່ຈີກອອກຈາກປຶ້ມບັນທຶກແບບຝຶກຫັດເກົ່າໆ. ລາຍມືນັ້ນຊ່າງຄຸ້ນຕາປຽບສະເໝືອນຂອງເຂົາເອງ ເຊິ່ງມີຕົວອັກສອນຂະໜາດໃຫຍ່ ແລະສະຫຼະກໍຂົດມ້ວນຕົວເຂົ້າຄືກັບປູມເປົ້າ ນີ້ຄືແບບລາຍມືຂອງບົວ.

ຫົວໃຈຂອງເຂົາຄ້າຍຄືຈະຢຸດເຕັ້ນ ຂະນະກຳລັງອ່ານຂໍ້ຄວາມເຫຼົ່ານັ້ນ:

ສິຣິຍອດຮັກ,

ເກີດຫຍັງຂຶ້ນກັບຂ້ອຍແລ້ວນີ້? ຂ້ອຍເອງກໍຍັງອະທິບາຍບໍ່ໄດ້ ເປັນຫຍັງຂ້ອຍຈິ່ງທຳລາຍທຸກສິ່ງຢ່າງທີ່ຍິ່ງໃຫຍ່ເຊິ່ງພວກເຮົາມີຮ່ວມກັນ? ເປັນຫຍັງຂ້ອຍຈິ່ງຕອບແທນຄວາມຮັກ ແລະຄວາມອິດທົນຂອງເຈົ້າດ້ວຍຄວາມໂກດເຄືອງຂອງຕົນເອງ? ເປັນຫຍັງພວກເຮົາຈິ່ງບໍ່ສາມາດໂອ້ລົມກັນໃຫ້ເປັນທຳມະຊາດຄືກັບຕອນພວກເຮົາເຄີຍລົມກັນໄດ້ຄືເກົ່າ?

ຂ້ອຍບໍ່ສາມາດຄວບຄຸມຄວາມຮູ້ສຶກອັນທຶດຊູ່ແບບນີ້ໄດ້, ມັນຄ້າຍຄືກັບເຄືອໄມ້ກ້ຽວກອດອ້ອມຮ່າງຄິງເພື່ອເຮັດໃຫ້ຂ້ອຍຂາດໃຈຕາຍ, ມັນຄືພະຍາດຮ້າຍທີ່ປິດກັ້ນບັງຕາບໍ່ໃຫ້ຂ້ອຍແນມເຫັນສິ່ງດີງາມຢູ່ຕໍ່ໜ້າ. ສິ່ງທີ່ຂ້ອຍແນມເຫັນໄດ້ກໍມີແຕ່ຄວາມຫຼົ້ມເຫຼວຂອງການຕໍ່ສູ້ທາງການເມືອງເທົ່ານັ້ນ, ເຖິງແມ່ນຂ້ອຍຍັງເຊື່ອວ່າອາດມີບາງຢ່າງຈະປະສົບຜົນສຳເລັດ. ຂ້ອຍແນມເຫັນແຕ່ສະມາຊິກພັກທີ່ມາກລົ້ນໄປດ້ວຍຄວາມເຫັນແກ່ຕົວ ແລະຄວາມທຸດຈະລິດອ້ອມຮອບຕົວ ແຕ່ຂ້ອຍກໍຍັງເຊື່ອວ່າຈະຕ້ອງມີຄົນດີໆ ຢູ່ບ່ອນໃດຈັກແຫ່ງ.

ແຕ່ສິ່ງສຳຄັນທີ່ສຸດທີ່ຂ້ອຍເຫັນນັ້ນກໍຄືສາມີຜູ້ໜ້າລຳຄານຄົນໜຶ່ງທີ່ຄອຍກ່າວເຕືອນໃຫ້ຂ້ອຍລະນຶກເຖິງຍິງສາວຄົນງາມຜູ້ເຕັມໄປດ້ວຍຄວາມຫວັງອັນເຕັມປ່ຽມທີ່ກຳລັງຫຼົງທາງຢູ່ໃນປ່າອັນໄຮ້ຈຸດໝາຍຢ່າງບໍ່ມີມື້ຈົບສິ້ນ. ແຕ່ຂ້ອຍກໍຮູ້ວ່າເຈົ້າຄືສິ່ງມີຄ່າທີ່ດີທີ່ສຸດໃນຊີວິດຂອງຂ້ອຍ.

ເຈົ້າພໍຈະຍົກໂທດໃນສິ່ງທີ່ຂ້ອຍປະພຶດຕໍ່ເຈົ້າໃຫ້ຂ້ອຍແດ່ໄດ້ບໍ ແລະສຳລັບສິ່ງທີ່ຂ້ອຍຈຳເປັນຕ້ອງເຮັດໃນຄືນມື້ນີ້? ມັນຄືທາງອອກວິທີດຽວສຳລັບພວກເຮົາສອງຄົນ.

ແດ່ສາມີຜູ້ເປັນທີ່ຮັກ ແລະຮັກດຽວຂອງຂ້ອຍ,

ບົວ

**********

ດ້ານຫຼັງຂອງເອກະສານສະບັບນີ້ມີລາຍມືຂອງໃຜບາງຄົນຂຽນໄວ້ວ່າ "**ເອກະສານອາຍັດ–ຫ້າມເປີດເຜີຍ**."

ຄືນພວກນັ້ນພົບຈົດໝາຍລາຕາຍຂອງນາງ. ພວກເຂົາພົບກຸນແຈດອກສຳຄັນທີ່ອາດກຳຈັດຄວາມຮູ້ສຶກຜິດ ລວມທັງຂໍ້ສົງໄສບາງຢ່າງທີ່ຈະເປັນຕົວຜູກມັດສິຣິໃຫ້ຈົມກັບຄວາມທຸກໂສກຕະຫຼອດສິບເອັດປີຜ່ານມາ ແລະຄົນພວກນັ້ນກໍປົກປິດບໍ່ໃຫ້ເຂົາໄດ້ອ່ານມັນເພາະເປັນເອກະສານ "ຫ້າມເປີດເຜີຍ."

ຄົນພວກນັ້ນບໍ່ຮູ້ດອກວ່າຊີວິດຂອງເຂົາຈະຖືກອາຍັດຫຼາຍໜ້ອຍຊ່ຳໃດທີ່ບໍ່ໄດ້ອ່ານຈົດໝາຍສະບັບນັ້ນ.

ນ້ຳຕາທັງສອງຂ້າງຂອງສີຣິຊຸຍ່າວລົງມາອາບສອງພວງແກ້ມໂດຍບໍ່ມີສິ່ງໃດຢຸດຢັ້ງມັນໄວ້ ເຊິ່ງບາງສ່ວນກໍແມ່ນນ້ຳຕາແຫ່ງຄວາມເສົ້າໂສກ ເຂົາເສຍໃຈທີ່ບໍ່ສາມາດຢຸດຢັ້ງຄວາມທຸກຂອງນາງໄດ້ດ້ວຍວິທີອື່ນ...ເສຍໃຈທີ່ບໍ່ສາມາດນຳພານາງກ້າວອອກມາຈາກຂອບແຫ່ງຄວາມທຸກນັ້ນໄດ້.

ແຕ່ອີກສ່ວນໜຶ່ງກໍແມ່ນນ້ຳຕາແຫ່ງຄວາມປີ້ມປິຕິຍິນດີ. ນາງຮັກເຂົາ ແມ່ນແຕ່ລົມຫັນໃຈສຸດທ້າຍນາງກໍຍັງຮັກເຂົາ ແລະນາງເອງກໍຮູ້ວ່າເຂົາຮັກນາງ ພຽງເທົ່ານີ້ເອງທີ່ເຂົາຕ້ອງການຢາກຮູ້.

**********

ເຂົາຮ້ອງໄຫ້ເປັນເວລາໜຶ່ງຊົ່ວໂມງເຄິ່ງພຽງເພາະມີສາຍລົມພັດຜ່ານໃບໜ້າຈຶ່ງເຮັດໃຫ້ນ້ຳຕາຂອງເຂົາເຫືອດແຫ້ງໄປໃນທີ່ສຸດ. ທາງພະແນກຍຸຕິທຳໄດ້ທຳການສ້ອມແປງຄາບູເຣເຕີໃຫ້ເຂົາຮຽບຮ້ອຍແລ້ວ ເຂົາຈຶ່ງພາລົດຈັກຄູ່ໃຈແລ່ນມຸ່ງໜ້າໄປຕາມເສັ້ນທາງດົງໂດກ ຜ່ານທົ່ງນາທີ່ຍັງຄົງສະພາບເດີມ ມັນຄືພາບຂອງຄວາມແຕກຕ່າງພຽງຄືບດຽວທີ່ຫ່າງໄກຄວາມຈະເລີນເມື່ອທຽບກັບໃນຕົວເມືອງ. ເຂົາຮ້ອງຂຶ້ນຈົນສຸດສຽງເພື່ອໃຫ້ປະສານກັນກັບສຽງລົດຈັກຂອງຕົນວ່າ ເຂົາເປັນອິດສະຫຼະແລ້ວ.

ເມື່ອເຂົາລ້ຽວກັບເຂົ້າໄປທາງໃນເມືອງ ທຸກຢ່າງກໍຢູ່ໃນຄວາມສະຫງົບອີກຄັ້ງ. ບໍ່ມີຄວາມບັງເອີນຫຍັງໃນຊີວິດຂອງເຂົາອີກຕໍ່ໄປ. ແຟ້ມເອກະສານສະບັບນັ້ນໄດ້ເຮັດໃຫ້ເຂົາກັບມາເປັນຕົວຂອງຕົນເອງ ... ຈົດໝາຍຂອງບົວໄດ້ປ່ຽນແປງໃຫ້ເຂົາກາຍເປັນຄົນໃໝ່ໃນມື້ນີ້, ຂະນະທີ່ນີ້. ບົວກຳລັງບອກໃຫ້ເຂົາຮູ້ວ່າ ສິ່ງທີ່ເຂົາເຮັດໄປນັ້ນຖືກຕ້ອງແລ້ວ. ເຂົາບໍ່ຈຳເປັນທີ່ຈະຮູ້ສຶກຜິດທີ່ມີແມ່ຍິງຄົນອື່ນເຂົ້າມາຢູ່ໃນຫົວໃຈອີກຕໍ່ໄປ.

ສີຣິອວ່າຍລົດລ້ຽວກັບໄປຕາມຖະໜົນສາມແສນໄທ ຈຶ່ງເຫັນຫຼ້າຢືນຢູ່ທ້າຍເສັ້ນທາງຊອຍ ທັນທີທີ່ແນມເຫັນສີຣິເຊິ່ງນັ່ງຄ້ອມກັບລົດຈັກຄັນເກົ່າອັນທົນທານຂອງເຂົາດ້ວຍທ່າທາງຄ້າຍຄືກັບອັດສະວິນຜົມຂາວ ນາງຈຶ່ງສົ່ງຍິ້ມອັນສະຫວ່າງສົດໃສກວ່າດອກໄຟເຍືອງທາງຊ້ຳອີກ. ນາງນຸ່ງສິ້ນສີມ່ວງປະສົມສີທອງ ແລະເສື້ອສີຂາວຮັດຮູບຮອບຊວງອົກ. ສະຫວັນເທົ່ານັ້ນທີ່ຮູ້ວ່ານາງເສຍເວລາຈັກຊົ່ວໂມງກັບການຫວີຜົມຊົງໝວກທະຫານໄທປະຈຳພະລາຊະວັງ ປະດັບເອ້ດ້ວຍດອກລີນລີ້ ເບິ່ງທ່າທາງຂອງນາງຊ່າງງົດງາມປານຮູບແຕ້ມ.

ເຂົາຢຸດລົດຈັກທີ່ຂອບແຄມທາງຕໍ່ໜ້ານາງ ພ້ອມເຜີຍຮອຍຍິ້ມອັນລະມຸນອອກ

ມາ. ນາງຍ່າງຕົງເຂົ້າມາຫາເຂົາແບບບໍ່ຄຸ້ນເຄີຍກັບເກີບສົ້ນສູງ ແລະປະທັບຮອຍຈູບໃສ່ທີ່ແກ້ມຂ້າງໜຶ່ງຂອງເຂົາ. ມືຊ້າຍຂອງນາງມີກະເປົາງານປະດັບອັນຍະມະນີທຽມອັນປານິດ ສ່ວນມືເບື້ອງຂວາຖືກ່ອງນ້ອຍໆ ທີ່ຫໍ່ດ້ວຍເຈ້ຍສີຂຽວເຊິ່ງເຂົ້າກັບສີດວງຕາຂອງສີຣິ ແລະຜູກດ້ວຍໂບສີຂຽວແກ່.

"ເຈົ້າເອົາແຊນວິດມານຳແມ່ນບໍ?"

"ຂອງຂວັນ."

"ໃຫ້ຂ້ອຍບໍ? ຂໍເປີດເບິ່ງໄດ້ບໍ?"

"ໄດ້ແນ່ນອນ ຂ້ອຍຈະບໍ່ຂຶ້ນໄປນັ່ງລົດເດັດຂາດຈົນກວ່າເຈົ້າຈະເປີດເບິ່ງກ່ອນ."

ເຂົາບໍ່ສາມາດຢຸດຍິ້ມໄດ້ຂະນະທີ່ກຸມແກະໂບ ແລະຈີກເຈ້ຍອອກ. ຂ້າງໃນມີກ່ອງເຈ້ຍແຂງເຊິ່ງມີຝາປິດ ເຂົາເງີຍໜ້າຂຶ້ນແນມເບິ່ງນາງດ້ວຍຄວາມຕື່ນເຕັ້ນບໍ່ຕ່າງຫຍັງກັບເດັກນ້ອຍໃນງານວັນເກີດ. ນາງຈັ່ງແມ່ນງົດງາມອີ່ຫຼີ. ນາງແນມເບິ່ງເຂົາແລ້ວເຫຼືອບຕາໄປທີ່ກ່ອງຂອງຂວັນ. "ໄວໆ ແດ່ຂ້ອຍຢາກກິນເຂົ້າລະ ນິ."

ພໍແຕ່ຝາກ່ອງຖືກເປີດອອກ ຮອຍຍິ້ມຂອງເຂົາກໍຈາງຫາຍໄປຈາກໃບໜ້າໃນທັນທີ. ຄວາມສຸກທີ່ຫຸ້ມລ້ອມວ່າງກີ້ນີ້ກໍພອຍວ່າມະຫັບມະຫາຍໄປຄືກັບຄວັນທູບ. ສິ່ງທີ່ນອນຢູ່ໃນກ່ອງຄ້າຍຄືກັບສົບຄົນຕາຍທີ່ໄໝ້ແຫ້ມນອນຢູ່ໃນໂລງ ເຊິ່ງກໍແມ່ນເຄື່ອງລາງສີດຳທີ່ຮ້ອຍຕິດກັບເຊືອກໜັງ. ບໍ່ແມ່ນເຄື່ອງລາງສີດຳແຫ່ງອື່ນໃດ ແຕ່ເປັນເຄື່ອງລາງທີ່ເຄີຍຜ່ານມືຜູ້ສວມໃສ່ມາເປັນເວລາຫຼາຍປີ ... ເປັນເຄື່ອງລາງຊິ້ນດຽວກັບໂຕທີ່ເຄີຍຖືກທຳລາຍ ແລະກຳຈັດຈົນບໍ່ເຫຼືອຊາກພ້ອມຖືກຫວ່ານລົງເທິງພື້ນດິນໃນຄຳມ່ວນ.

"ຂ້ອຍຄິດວ່າຊ່ວງຜ່ານມານີ້ເຈົ້າພົບແຕ່ໂຊກຮ້າຍຕະຫຼອດ ຂ້ອຍເລີຍຄິດວ່າເຈົ້າຄວນຈະໃສ່ເຄື່ອງລາງຊິ້ນນີ້ພໍຈະມີໂຊກມີລາບນຳເພິ່ນແດ່. ຖືກໃຈຢູ່ບໍລະ?"

# Message from the Author:
# ຈັກກະວານແຫ່ງຄວາມຢາກຮູ້ຢາກເຫັນ

ຍິນດີຕ້ອນຮັບແດ່ບັນດາອ້າຍເອື້ອຍນ້ອງທຸກຄົນເພື່ອເຂົ້າສູ່ການອ່ານປຶ້ມຂອງຂ້າພະເຈົ້າທີ່ໄດ້ມີການແປເປັນພາສາລາວເຫຼັ້ມນີ້, ໝໍຊັນນະສູດສົບ (The Coroner's Lunch) ແມ່ນໜັງສືເຫຼັ້ມທຳອິດທີ່ນອນໃນນະວະນິຍາຍຍາວຈຳນວນ ໑໕ ເຫຼັ້ມ ເຊິ່ງໄດ້ເວົ້າເຖິງເລື່ອງລາວທີ່ກ່ຽວຂ້ອງກັບຕົວລະຄອນເອກຢ່າງທ່ານໝໍຊັນນະສູດສົບຂອງລາວໃນນາມທ່ານໝໍ ສີຣິ ໄພບູນ. ປຶ້ມດັ່ງກ່າວກໍໄດ້ຮັບຄວາມນິຍົມຊົມຊອບຈາກບັນດານັກອ່ານທົ່ວທຸກມູມໂລກ ມາເປັນເວລາດົນນານແລ້ວ. ສ່ວນໜັງສືທີ່ເປັນສະບັບພາສາອັງກິດກໍໄດ້ຮັບລາງວັນ Dylis ໃນສະຫະລັດອາເມລິກາ ໃນປີ ໒໐໐໖ ແລະລາງວັນກຽດຕິຄຸນແຫ່ງ “CWA Dagger in the Library Award” ສຳລັບຊຸດປຶ້ມນະວະນິຍາຍທີ່ໄດ້ຮັບຄວາມນິຍົມສູງສຸດຂອງກຸ່ມຜູ້ໃຊ້ບໍລິການຫ້ອງສະໝຸດ ໃນສະຫະຣາຊະອານາຈັກອັງກິດ ປີ ໒໐໐໙ ແລະຍັງຖືກຄັດເລືອກເຂົ້າໃນລາຍຊື່ກຸ່ມຜູ້ຮັບລາງວັນໜັງສືລຶກລັບອື່ນໆ ນຳອີກ. ນອກຈາກນີ້ກໍຍັງມີການແປເປັນຫຼາຍພາສາເຊັ່ນເຢຍລະມັນ, ຝຣັ່ງເສດ, ສະວີເດັນ, ຍີ່ປຸ່ນ, ໄທ ແລະອີຕາລີ ແລະເລື່ອງດັ່ງກ່າວຍັງໄດ້ຮັບການທາບທາມເພື່ອອອກອາກາດທາງໂທລະພາບ ແລະໃນຂະນະນີ້ກໍໄດ້ມີການແປເປັນພາສາລາວຮຽບຮ້ອຍແລ້ວ.

ເລື່ອງລາວທີ່ເກີດຂຶ້ນຈາກການເຮັດວຽກ ຮ່ວມກັບຜູ້ລີ້ໄພຊາວລາວໃນປະເທດອົດສະຕາລີໃນຊ່ວງສະຕະວັດທີ ໑໙ ແລະຊ່ວງປີຫຼັງໆ ມານີ້, ຂ້າພະເຈົ້າກໍໄດ້ເຮັດວຽກໃນໂຄງການການສຶກສາສາຂາຕ່າງໆ ໃນລາວ. ຍິ່ງເຮັດໃຫ້ຂ້າພະເຈົ້າແປກໃຈທີ່ບໍ່ມີນັກຊ່ຽວຊານຊາວຕາເວັນຕົກຄົນໃດລົງມືຂຽນນະວະນິຍາຍ ທີ່ກ່ຽວຂ້ອງກັບປະເທດທີ່ສວຍງາມ ເຊັ່ນສີສັນແຫ່ງປະຫວັດສາດ ແລະຄວາມໜ້າອັດສະຈັນແຫ່ງນີ້ເປັນພາສາອັງກິດເລີຍ. ຂ້າພະເຈົ້າຊື່ນຊົມຍິນດີກັບຜູ້ຄົນທີ່ຕົນໄດ້ພົບເຫັນ ແລະເຮັດວຽກຮ່ວມກັນໃນທີ່ນີ້ ແລະຂ້າພະເຈົ້າກໍຢາກແບ່ງປັນປະສົບການທີ່ເຫຼືອຂອງຕົນດ້ວຍຄວາມສັດຊື່ຕໍ່ວັດທະນະທຳເທົ່າທີ່ສາມາດເຮັດໄດ້. ຜົນທີ່ປາກົດນັ້ນກໍຄືການເດີນທາງຢ່າງມີຄວາມສຸກດ້ວຍໄວອາຍຸເຈັດສິບສອງປີຂອງສີຣິ ແລະເພື່ອນຮ່ວມງານລວມທັງມິດສະຫາຍ

ຂອງເຂົາ ເຊິ່ງພວກເຮົາຈະເຫັນປະເທດຊາດໜຶ່ງທີ່ກ້າວອອກມາຈາກເຮືອນຮັງແຫ່ງຄວາມມືດມົນ ແລ້ວຄ່ອຍໆ ເປີດປະຕູກ້າວສູ່ວັດທະນະທຳແຫ່ງໂລກຕາເວັນຕົກ. ຂ້າພະເຈົ້າຢາກສະແດງໃຫ້ໂລກເຫັນວ່າຄົນລາວມີສັກກາຍະພາບພິເສດຫຼາຍກວ່າສິ່ງທີ່ຊາວໂລກໄດ້ເຫັນ ຜ່ານສາກລະຄອນທີ່ກ່ຽວຂ້ອງກັບສົງຄາມຫວຽດນາມ. ຂ້າພະເຈົ້າຕ້ອງການໃຫ້ຕົວລະຄອນໃນປຶ້ມເຫຼັ້ມນີ້ ເປັນສຽງສະທ້ອນແຫ່ງຄວາມສົມຈິງ, ແຕ່ຂ້າພະເຈົ້າກໍຕ້ອງໄດ້ຕຶກຕວງຊັ່ງຊາເພື່ອໃຫ້ມີຄວາມດຸ່ນດ່ຽງກັບຄວາມຄິດເຫັນ ແລະຄວາມຮູ້ສຶກເພື່ອໃຫ້ເກີດມູມມອງທີ່ຫຼາກຫຼາຍ. ເພື່ອເຮັດໃຫ້ບັນລຸເປົ້າໝາຍນີ້ໄດ້, ຕົວລະຄອນຫຼັກສອງຄົນໃນລາວຕ້ອງໃຊ້ເວລາຫຼາຍປີໃນປະເທດຝຣັ່ງເສດ ເຊິ່ງເປັນບ່ອນທີ່ທັງສອງໄດ້ເຂົ້າຮ່ວມເຄື່ອນໄຫວໃນພັກຄອມມູຍນິດ ກ່ອນທີ່ຈະກັບຄືນບ້ານເກີດເມືອງນອນເພື່ອທຳການຕໍ່ສູ້ກອບກູ້ເອົາເອກະລາດຈາກການຄອບຄອງຂອງພວກລ່າເມືອງຂຶ້ນຝຣັ່ງ. ຜ່ານຕົວລະຄອນສີຣິແລະສີວິໄລແລ້ວ ພວກເຮົາໄດ້ຮຽນຮູ້ກ່ຽວກັບປັນຫາສັຽນໜາມ ທີ່ປິ່ງຊ້ອນຂຶ້ນມານຳລະບອບການປົກ ຄອງແບບໃໝ່ ແລະຄວາມຫຍຸ້ງຍາກລຳບາກຂອງປະຊາຊົນບໍ່ເວັ້ນໃນແຕ່ລະວັນ ໃນຊ່ວງທີ່ປະເທດຊາດໄດ້ຮັບການປົດປ່ອຍຕອນຕົ້ນ. ແຕ່ບໍ່ວ່າເຫດການຈະຂີ້ຮ້າຍປານໃດ, ຄົນລາວກໍຍັງຄົງເດັດດ່ຽວດ້ວຍການສ້າງຮອຍຍິ້ມ ແລະຢຶດໝັ້ນໃນປັດຊະຍາຂອງຕົນກັບຄຳທີ່ວ່າ ‘ບໍ່ເປັນຫຍັງ’.

ຂ້າພະເຈົ້າໄດ້ລອງວາດພາບກ່ຽວກັບປະເທດລາວໃນປີ ໑໙໗໘ ເຊິ່ງທ່ານຜູ້ອ່ານທີ່ອາວຸໂສແດ່ອາດຈະຍັງຈື່ຈຳໄດ້ດີ. ພໍແຕ່ອາເມລິກາຍ້າຍໜີອອກຈາກປະເທດ, ບັນດາຮ້ານຄ້າກໍວ່າງເປົ່າ ລວມທັງຖະໜົນຫົນທາງກໍງຽບເຫງົາທັງແປດເປື້ອນໄປດ້ວຍຂີ້ຝຸ່ນ. ບາດກ້າວຍ່າງແຫ່ງຊີວິດເລີ່ມເຄື່ອນທີ່ຊ້າລົງ ແລະສາກເບື້ອງຫຼັງທີ່ສວນກະແສກັນນີ້ໄດ້ເຮັດໃຫ້ຂ້າພະເຈົ້າເລີ່ມຂຽນນະວະນິຍາຍຂອງຕົນ. ຄວາມລຶກລັບທີ່ເຊື່ອງຊ້ອນເລີ່ມເຜີຍແບທາດແທ້ອອກເທື່ອລະໜ້ອຍ ແລະທ່ານໝໍສີຣິກໍໄດ້ຄົ້ນພົບຄວາມສາມາດທີ່ເກີດຂຶ້ນເອງໂດຍທຳມະຊາດໃນຖານະນັກສືບ. ແຕ່ກໍມີສິ່ງອື່ນອີກທີ່ເຂົາຕ້ອງໄດ້ຮຽນຮູ້. ຖ້າຈະວ່າໄປແລ້ວ, ການຂຽນນະວະນິຍາຍກ່ຽວກັບປະເທດລາວ ແມ່ນຂາດບໍ່ໄດ້ທີ່ຈະບໍ່ມີອົງປະກອບທາງຈິດວິນຍານທີ່ມີຕໍ່ເລື່ອງລາວ. ບ້ານເຮືອນສ່ວນໃຫຍ່ລ້ວນແຕ່ມີການຕັ້ງສານພະພູມ ແລະຫຼາຍຄອບຄົວກໍມີຮ້ານບູຊາພະພາຍໃນເຮືອນ ແລະຄົນລາວສ່ວນໃຫຍ່ກໍມີເລື່ອງລາວກ່ຽວກັບຜີປະຈຳຕົວຂອງໃຜລາວ ແມ່ນແຕ່ທ່ານໝໍສີຣິເອງກໍຍັງບໍ່ເວັ້ນ ເຂົາເປັນຮ່າງຊົງແຫ່ງວິນຍານຂອງໝໍຜີຊາວມົ້ງອາຍຸໜຶ່ງພັນປີ ແລະຍັງຕໍ່ສູ້ກັບໂລກແຫ່ງວິນຍານຢ່າງຕໍ່ເນື່ອງ. ດັ່ງນັ້ນ, ພວກເຮົາຈະມີຂໍ້ຂັດແຍ່ງສ່ວນຕົວລະຫວ່າງວິທະຍາສາດກັບສິ່ງທີ່ຢູ່ເໜືອທຳມະຊາດ ເຊິ່ງສີຣິຈະຕ້ອງໄດ້ປະເຊີນໜ້າກັບສອງສິ່ງນີ້.

ຜີຂອງເຂົາອາດຈະມາບອກເປັນລາງທີ່ກ່ຽວ ຂ້ອງກັບການກໍ່ອາຊະຍາກຳ ທີ່ສີຣິເອງກໍ ລ້ວນແຕ່ມີສ່ວນກ່ຽວຂ້ອງກັບເລື່ອງດັ່ງກ່າວ ແຕ່ກໍມັກຈະລົງເອີ່ຍກັບທ່ານໝໍເພື່ອແກ້ໄຂ ປິດສະໜາເຫຼົ່ານັ້ນ.

ນະວະນິຍາຍ ເປັນຜູ້ໃຫ້ສິດແກ່ນັກຂຽນໃນການຫຼິ້ນກັບຄວາມຈິງ ແລະເຖິງແມ່ນວ່າ ເຫດການໃນປະຫວັດສາດຂອງຊ່ວງເວລານັ້ນຈະຖືກຕ້ອງ ລວມທັງຕົວລະຄອນ ແລະ ສະຖານະການທີ່ພວກເຂົາພົບວ່າຕົນເອງເປັນຈິນຕະນາການຂອງຂ້າພະເຈົ້າ. ບໍ່ມີຄວາມ ຄ້າຍຄຽງກັນໂດຍເຈຕະນາກັບບຸກຄົນທີ່ມີຊີວິດຢູ່ ຫຼືຕາຍໄປແລ້ວ ຫຼືເຫດການທີ່ອາດ ເກີດຂຶ້ນໃນຊີວິດຈິງໃນຊ່ວງເວລານັ້ນໆ.

ບໍ່ແມ່ນວ່າທຸກຄົນຈະເຫັນດີກັບຄວາມຮູ້ສຶກທີ່ສະແດງອອກໃນປຶ້ມເຫຼັ້ມນີ້. ບາງຄົນ ອາດພົບວ່າສິ່ງທີ່ຂ້າພະເຈົ້າຂຽນນັ້ນຈະເຮັດໃຫ້ຮູ້ສຶກບໍ່ສະບາຍໃຈ ຫຼືມີຄວາມຜິດຢ່າງ ສິ້ນເຊີງ. ແຕ່ນັ້ນກໍເປັນພຽງສິ່ງມະຫັດສະຈັນໃນນະວະນິຍາຍ ... ມັນເປັນທັງແຮງ ບັນດານໃຈ ແລະຂໍ້ຂັດແຍ່ງ ... ບໍ່ແມ່ນການຕີຄວາມໄປໃນທາງດີ ຫຼືຮ້າຍ ... ບໍ່ມີການ ຂຽນນະວະນິຍາຍໃນປະເທດໃດໆ ທີ່ໄດ້ຮັບການຍົກຍ້ອງສັນລະເສີນໃນລະດັບສາກົນ. ຂ້າພະເຈົ້າຫວັງວ່າ ມື້ໃດມື້ໜຶ່ງ ພາກວິຊາວັນນະຄະດີຂອງມະຫາວິທະຍາໄລແຫ່ງຊາດ ຈະຮວບຮວມເລື່ອງ ໝໍຊັນນະສູດສົບ (The Coroner's Lunch) ເຂົ້າໃນຫຼັກສູດ ການຮຽນ-ການສອນດັ່ງທີ່ຂ້າພະເຈົ້າຫວັງໄວ້ ແລະຍິນດີຕ້ອນຮັບທຸກຄຳຕຳນິຕິຊົມ. ຂ້າພະເຈົ້າຫວັງວ່າປຶ້ມເຫຼັ້ມນີ້ຈະຊ່ວຍໃຫ້ທ່ານຜູ້ອ່ານເກີດຄວາມເພີດເພີນ ແລະເປັນ ແຮງບັນດານໃຈໃຫ້ບັນດານັກຂຽນໜຸ່ມນ້ອຍຂອງລາວໄດ້ສຳຜັດແລະສາມາດສ້າງ ຕົວລະຄອນຂອງພວກເຂົາເອງດ້ວຍຄວາມໝັ້ນໃຈ ແລະກຽມຄວາມພ້ອມທີ່ຈະຂ້າມ ໄປສູ່ແນວທາງຮູບການປະດິດແຕ່ງໃນແບບຂອງຕົນເອງ. ຈິນຕະນາການເປັນຂອງຂວັນ ອັນໜ້າອາເຫຍືອງ ແລະມີຄວາມສຸກຢ່າງລົ້ນເຫຼືອທີ່ໄດ້ມີສ່ວນຮ່ວມໃນໂລກແຫ່ງ ຈິນຕະນາການ ທີ່ຖືກຖ່າຍທອດອອກມາຈາກຈິດວິນຍານຂອງຜູ້ອ່ານເອງ.

ຂ້າພະເຈົ້າຂໍຂອບໃຈບັນດາເພື່ອນມິດສະຫາຍຄົນລາວທຸກຄົນ ທີ່ໄດ້ຊ່ວຍເຮັດໃຫ້ ປຶ້ມເຫຼັ້ມນີ້ຍືນຍົງຄົງຢູ່ຈົນທຸກວັນນີ້. ຂ້າພະເຈົ້າຢາກຂອບໃຈຜູ້ຄົນທີ່ຕົນພົບຕອນ ເດີນທາງດ້ວຍລົດຖີບ ທີ່ໄດ້ໃຫ້ຄວາມມ່ວນຊື່ນລ່າເລີງເລັກໆ ນ້ອຍໆ. ແລະຂ້າພະເຈົ້າ ກໍຂໍຂອບໃຈບັນດາທ່ານຜູ້ອ່ານແລະດັດແປງຮ່າງຕົ້ນສະບັບ. ແຕ່ໂດຍສະເພາະຢ່າງຍິ່ງ ຂ້າພະເຈົ້າຂໍຂອບໃຈມາຍັງນາງ ໄພບູນ ທະນະບົວສີ ນາຍແປພາສາລາວຂອງຂ້າພະເຈົ້າ ຖ້າບໍ່ມີເຂົາແລ້ວປຶ້ມອ່ານສະບັບທີ່ຖອດກ່າຍເປັນພາສາລາວຄົງບໍ່ເກີດຂຶ້ນ. ເປັນເວລາ ເນີນນານຫຼາຍປີມາແລ້ວ ທີ່ຂ້າພະເຈົ້າໄຝ່ຝັນທີ່ຈະຫາຄົນທີ່ສາມາດເຂົ້າໃຈພາສາອັງກິດ ອັນແປກປະຫຼາດ ທັງຫຍຸ້ງເຫຍີງຂອງຂ້າພະເຈົ້າແລະສາມາດເຮັດໃຫ້ມັນເຂົ້າເຖິງ

ອາລົມຄວາມຮູ້ສຶກ ຂອງຜູ້ອ່ານທີ່ເປັນຄົນລາວໄດ້ແບບເຕັມອາລົມ. ເບິ່ງຄືວ່າຍິ່ງພະຍາຍາມຊອກຫາກໍຍິ່ງພົບແຕ່ຄວາມຜິດຫວັງຫຼາຍຄັ້ງຫຼາຍຫົນ. ໃນຄວາມຈິງແລ້ວ, ຂ້າພະເຈົ້າພ້ອມທຸກຢ່າງ ແຕ່ກໍຍອມປະລາໄຊໃນການຊອກຫາບຸກຄົນຜູ້ທີ່ມີຄວາມສາມາດເຂົ້າໃຈທັງພາສາອັງກິດ ແລະພາສາລາວ ແລະມີຄວາມສາມາດໃນການປັບແປຄວາມສົມດູນທັງສອງຢ່າງໃຫ້ກໍ້າເກິ່ງກັນ ແລະຍັງຄາດຫວັງຢ່າງຈິງຈັງຈາກອາລົມຕະຫຼົກແບບສຽດສີ. ແລະແລ້ວນາງໄພບູນ ກໍປາກົດຕົວຄືກັບຜີສາດທີ່ໂຜ່ອອກມາຈາກປ່າ. ນາງລອງແປຕົວຢ່າງຜົນງານຂອງຕົນແລ້ວສົ່ງມາໃຫ້ຂ້າພະເຈົ້າອ່ານ ແລະໃນບໍ່ຊ້າກໍເຫັນແຈ້ງຊັດເຈນວ່າ ນາງເປັນນັກຂຽນສີມືດີໃນການນໍາໃຊ້ພາສາທີ່ເປັນເອກະລັກຂອງຕົນເອງ ເຊິ່ງຜົນໄດ້ຮັບກໍຄືບົດແປອັນໜ້າອັດສະຈັນທີ່ຢູ່ໃນປຶ້ມເຫຼັ້ມນີ້.

ໃນປະເທດລາວ ມີການແປປຶ້ມພາສາຕ່າງປະເທດຈໍານວນໜຶ່ງ ແຕ່ຂ້າພະເຈົ້າເຊື່ອວ່ານີ້ເປັນນະວະນິຍາຍຍາວຊຸດທໍາອິດຂອງປະເທດທີ່ຂຽນໂດຍນັກປະພັນຊາວຕາເວັນຕົກທີ່ໄດ້ມີການແປພາສາອັງກິດເປັນພາສາລາວ. ຂ້າພະເຈົ້າຮູ້ສຶກພູມໃຈເປັນຢ່າງຍິ່ງທີ່ໄດ້ເປັນບຸກຄົນນັ້ນ, ແຕ່ຈະເຮັດໃຫ້ຂ້າພະເຈົ້າພູມໃຈຫຼາຍຍິ່ງຂຶ້ນຖ້າໃນອີກສິບປີຂ້າງໜ້າຫາກມີປຶ້ມອ່ານທີ່ສວຍງາມຫຼາຍເຫຼັ້ມ ເຊິ່ງຂຽນໂດຍນັກຂຽນຄົນລາວແລ້ວແປເປັນພາສາຕ່າງປະເທດ. ຂ້າພະເຈົ້າຫວັງວ່າທ່ານຜູ້ອ່ານບາງຄົນທີ່ອ່ານບົດແນະນໍານີ້ຈະມ່ວນຊື່ນ ແລະເພີດເພີນໄປກັບເນື້ອເລື່ອງຂອງປຶ້ມເຫຼັ້ມນີ້ ແລະເກີດມີແຮງກະຕຸ້ນຢາກເຂົ້າໄປນັ່ງຢູ່ໜ້າຈໍຄອມພິວເຕີ ເພື່ອຕື່ມເຕັມຊ່ອງອັນເປົ່າວ່າງໃຫ້ເກີດເປັນເລື່ອງເປັນລາວໜ້າທໍາອິດ ກ່ອນຈະຄ່ອຍໆ ສືບຕໍ່ໃຫ້ມັນກາຍເປັນຈັກກະວານແຫ່ງຄວາມປະຫຼາດໃຈຢູ່ຕໍ່ໜ້າຂອງທ່ານເອງ.

ເພື່ອເຮັດໃຫ້ທຸກຄົນໃນລາວມີໂອກາດໄດ້ອ່ານປຶ້ມເຫຼັ້ມນີ້, ພວກເຮົາຈະທໍາການແຈກຢາຍພາຍໃນປະເທດ ໂດຍບໍ່ມີການເສຍຄ່າໃຊ້ຈ່າຍໃດໆ. ພ້ອມຍັງຈະມີໃຫ້ດາວໂຫຼດແບບບໍ່ເສຍຄ່າທາງອິນເຕີເນັດນໍາອີກ ເນື່ອງຈາກຂ້າພະເຈົ້າຢາກຈະມອບຂອງຂວັນໃຫ້ກັບຄົນລາວທຸກຄົນ ໂດຍສະເພາະກໍແມ່ນຜູ້ທີ່ເຮັດໃຫ້ຂ້າພະເຈົ້າໄດ້ພົບພໍ້ກັບປະສົບການດີໆ ທີ່ໜ້າປະທັບໃຈ.

ຂໍຂອບໃຈທຸກທ່ານທີ່ກໍາລັງອ່ານປຶ້ມເຫຼັ້ມນີ້ ແລະຍອມຮັບໃນຖານະຜູ້ເລົ່າເລື່ອງຂອງທ່ານ.

# ປະຫວັດຂອງ ຄໍລິນ ຄັອດເທີຣິນ



ຄໍລິນ ຄັອດເທີຣິນ (Colin Cotterill) ເກີດປີ ໑໙໕໔ ທີ່ລອນດອນ. ເຂົາໄດ້ຮັບການຝຶກຝົນຮຽນຮູ້ຈົນໄດ້ກາຍເປັນອາຈານສອນ ແລະເຮັດວຽກໃນອິສຣາແອວ, ອິດສະຕາລີ, ສະຫະລັດອາເມລິກາ ແລະຍີ່ປຸ່ນ ກ່ອນຈະກາຍເປັນຄູຝຶກໃນປະເທດໄທ ແລະເຂດຊາຍແດນປະເທດມຽນມາ. ເຂົາໄດ້ຂຽນແລະຜະລິດຊຸດການສອນພາສາເຖິງ ໔໐ ລາຍງານ, ພາສາອັງກິດເພື່ອອຸບັດຕິເຫດສຳລັບໂທລະພາບແຫ່ງຊາດໄທ ແລະໃຊ້ເວລາຫຼາຍປີອາໄສຢູ່ປະເທດລາວ ເຊິ່ງເບື້ອງຕົ້ນກໍແມ່ນເຮັດວຽກຮ່ວມກັບອຸຍເນັສໂກ. ຄໍລິນເລີ່ມມີສ່ວນຮ່ວມໃນວຽກງານປົກປ້ອງເດັກໃນເຂດພູມິພາກ ແລະຍັງຄົງມີສ່ວນຮ່ວມໃນໜ້າວຽກທີ່ກ່ຽວຂ້ອງກັບການຊ່ວຍເຫຼືອສັງຄົມ. ເຂົາລິງມືຂຽນປຶ້ມເຫຼັ້ມໜຶ່ງ ພ້ອມກັບໂຄງການສະໜອງທຶນການສຶກສາສຳລັບປະເທດລາວອັນເປັນທີ່ຮັກ ພ້ອມຍັງດຳເນີນການສະໜັບສະໜູນໂຮງຮຽນຂະໜາດນ້ອຍສອງແຫ່ງສຳລັບເດັກນ້ອຍຊາວມຽນມາທີ່ອົບພະຍົບໃນເຂດໃກ້ຄຽງກັບທີ່ພັກອາໄສຂອງເຂົາ.

ຕະຫຼອດເວລາທີ່ຄໍລິນຍັງຄົງສືບຕໍ່ໝົກໝົ້ນກັບສິ່ງທີ່ຕົນຮັກໃນສອງຢ່າງບໍ່ວ່າຈະເປັນ ການຂຽນ ແລະການແຕ້ມພາບກາຕູນ. ຜ່ານການເຮັດວຽກກ່ຽວກັບການຄ້າມະນຸດສຳລັບເດັກນ້ອຍ ໄດ້ກະຕຸ້ນໃຫ້ເຂົາສາມາດຮວບຮວມນະວະນິຍາຍເຫຼັ້ມທຳອິດຊື່ວ່າ Night Bastard (Suk's Editions. ໒໐໐໐). ນັບແຕ່ເດືອນຕຸລາ ໒໐໐໑ ເຂົາໄດ້ຂຽນປຶ້ມເພີ່ມອີກຫຼາຍກວ່າ ໑໔ ເຫຼັ້ມ ສິ່ງທີ່ໄດ້ຮັບຄວາມນິຍົມຫຼາຍທີ່ສຸດກໍຄືງ

ແມ່ນຊຸດອາຊະນາກຳທີ່ກ່ຽວຂ້ອງກັບທ່ານໝໍສີຣິໃນລາວ ທີ່ໄດ້ຮັບການແປເຖິງ ໑໘ ພາສາ ພ້ອມກັບປິດສະໜາລັບຂອງ Jimm Juree ໃນໄທ.

ນັບແຕ່ປີ ໑໙໙໐, ຄໍລິນໄດ້ກາຍເປັນນັກຂຽນກາຕູນປະຈຳໃຫ້ກັບໜັງສືພິມລະດັບຊາດ ແລະຍັງຜະລິດປຶ້ມກາຕູນທີ່ໄດ້ຮັບການແປເປັນພາສາໄທສອງເລື່ອງ. ເຂົາຍັງເປັນຜູ້ອອກແບບໜ້າປົກ ແລະແຕ້ມພາບປະກອບໃຫ້ກັບເພື່ອນນັກຂຽນຈຳນວນໜຶ່ງ. ຄໍລິນອາໄສຢູ່ຊຸມພອນ ເຊິ່ງຕັ້ງຢູ່ທາງພາກໃຕ້ຂອງປະເທດໄທ ກັບພັນລະຍາຊື່ ກຽວໂກະ. ເຂົາມັກຂີ່ລົດຖີບເລາະລຽບຕາມຊາຍຝັ່ງທະເລ, ມີຄວາມສຸກໄປກັບການໂຄ່ນໝາກພ້າວ, ກິນປາມຶກເປັນຈຳນວນຫຼາຍ, ບາງຄັ້ງກໍຫຼິ້ນກັບໝາທັງແປດໂຕ ແລ້ວກໍນັ່ງຂຽນໜັງສືເມື່ອຍາມຈຳເປັນ.

# ຫນັງສືເຫລັ້ມອື່ນໆ ໂດຍ ຄໍລິນ ຄ໊ອດເທີຣິນ

**Dr. Siri Paiboun series (ເລື່ອງລາວກ່ຽວກັບທ່ານໝໍສີຣິ ໄພບູນ)**

*The Coroner's Lunch* (2004)

*Thirty-Three Teeth* (August 2005)

*Disco For the Departed* (August 2006)

*Anarchy and Old Dogs* (August 2007)

*Curse of the Pogo Stick* (August 2008)

*The Merry Misogynist* (August 2009)

*Love Songs from a Shallow Grave* (August 2010)

*Slash and Burn* (October 2011)

*The Woman Who Wouldn't Die* (January 2013)

*Six and a Half Deadly Sins* (May 2015)

*I Shot the Buddha* (July 2016)

*The Rat Catcher's Olympics* (2017)

*Don't Eat Me* (2018)

*The Second Biggest Nothing* (2019)

*The Delightful Life of a Suicide Pilot* (July 2020)

**The Jimm Juree series (ເລື່ອງລາວກ່ຽວກັບຈິມ ຈູຣີ)**

*Killed at the Whim of a Hat* (July 2011)

*Grandad, There's a Head on the Beach* (June 2012)

*The Axe Factor* (April 2014)

*The Amok Runners* (2016)

**Other publications (ເລື່ອງອື່ນໆ ທີ່ໄດ້ຮັບການຈັດພິມ)**

*Ageing Disgracefully* (October 2009)

*Cyclelogical* (2006) (*ຂັບຊ້າຊິດຊ້າຍ*)

*Pool and its Role in Asian Communism* (2005)

*Ethel and Joan Go to Phuket* (2004) (*ພູເກັຕພັງແນ່ ແມ່ແມ່ກຳລັງມາ*)

*Evil in the Land Without* (2003)

*Bleeding in Black and White* (2015)

*Famous Last Selfies* (2018)